ມູນເຊື້ອວິລະກຳໃນພາລະກິດປະຕິວັດ

# ກອງສ່ຳລອງ ແບກທາບ 368 ກອງກຳລັງໄຟເພດຍິງ 769



20 ມັງກອນ 2015

ສຳນັກພິມ ນັກປະພັນລາວ

# ປະຫວັດມູນເຊື້ອ

# ກອງລຳລຽງແບກຫາບ 368
# ແລະ
# ກອງກຳລັງໄຟເພດຍິງ 769

ກົມວິທະຍາສາດ ປະຫວັດສາດ ກອງທັບ
ສຳນັກພິມ ນັກປະພັນລາວ

2015

ຂໍ້ມູນທາງບັນນານຸກົມ ຂອງຫໍສະໝຸດແຫ່ງຊາດລາວ
ກົມວິທະຍາສາດ-ປະຫວັດສາດກອງທັບ
ປະຫວັດມູນເຊື້ອກອງລຳລຽງແບກຫາບ 368 ແລະກອງກຳລັງໄຟເພດຍິງ 769 / ກົມວິທະຍາສາດ ປະຫວັດສາດ ກອງທັບ. --ວຽງຈັນ: ສຳນັກພິມນັກປະພັນລາວ, 2014
352. : ພາບປະກອບສີ; 148x210 ມມ
ບັນນານຸກົມ ໜ້າ : 352
1. ລາວ --ປະຫວັດສາດ. 2. ແມ່ຍິງລາວ. 3. ຊຽງຂວາງ. I. ຊື່ເລື່ອງ
959.4 -- dc21
ISBN 978-9932-405-20-6
ເລກທະບຽນພິມຈຳໜ່າຍ : 317/ພຈ09072014

- ພິມຄັ້ງທີໜຶ່ງ ຈຳນວນ 3.000 ເຫຼັ້ມ

ພິມທີ່: ໂຮງພິມພະໄຊກຣາຟິກ ນະຄອນຫຼວງວຽງຈັນ
ວັນທີພິມ: 20.11.2014

# ปะຫວັດມູນເຊື້ອກອງກຳລັງໄຟເພດຍິງ 368, 769

• ຄະນະຊີ້ນຳ ແລະທີ່ປຶກສາ :
ພົນໂທ ຈັນສະໝອນ ຈັນຍາລາດ
ພັນຕີ ຄຳເມິງ ວໍລະຈິດ

• ຄະນະຄົ້ນຄວ້າ ຮຽບຮຽງ:
ພົນຈັດຕະວາ ວິໄສ ຈັນທະມາດ
ພັນເອກ ສຸລິວັນ ແສງຈັນ
ພັນເອກ ວຽງໄຊ ສົມວິຈິດ

• ຄະນະເກັບກຳຂໍ້ມູນ
ຄຳອອນ ເພັດດາວເຮືອງ
ພັນໂທ ບົວໃສ ແພງສົມບັດ
ພັນໂທ ນາງອົມມະລີ ອຸດທະວົງ
ຫົງເຫີນ ຂຸນພິທັກ
ດວງມາລາ ລາດຊະວົງໄຊ
ຮ້ອຍເອກ ພັນທະນິດ ທອງສະໜວນ
ຮ້ອຍເອກ ນາງ ຂັນມີໄຊ ຈັນທະມາດ

• ຂຽນໂດຍ:
ພັນໂທ ບົວໃສ ແພງສົມບັດ
ພັນໂທ ນາງ ອົມມະລີ ອຸດທະວົງ
ຮ້ອຍເອກ ພັນທະນິດ ທອງສະໜວນ
ຮ້ອຍເອກ ນາງ ຂັນມີໄຊ ຈັນທະມາດ
ຫົງເຫີນ ຂຸນພິທັກ

• ບັນນາທິການ ປັບປຸງກວດແກ້:
ພັນເອກ ສຸລິວັນ ແສງຈັນ
ຄຳອອນ ເພັດດາວເຮືອງ
ຫົງເຫີນ ຂຸນພິທັກ

• ອອກແບບ-ຈັດໜ້າ
ດວງມາລາ ລາດຊະວົງໄຊ

• ອອກແບບປົກ
ຄຳອອນ ເພັດດາວເຮືອງ
ຫົງເຫີນ ຂຸນພິທັກ

• ບໍລິຫານ-ການເງິນ
ພັນໂທ ຄອນສະຫວັນ ອິນຖາ
ພັນຕີ ວັນທາ ບໍໃບຄຳ
ວາທິຮ້ອຍຕີ ສົມຕຸ້ຍ

| ຊື່ເລື່ອງ | ໜ້າ |
|---|---|
| ຄຳຊົມເຊີຍ ຂອງທ່ານໄກສອນ ພົມວິຫານ | 10 |
| ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງປ້ອງກັນປະເທດ | 12 |
| ຄຳເຫັນຂອງ ທ່ານພົນໂທ ຈັນສະໝອນ ຈັນຍາລາດ | 15 |
| ຄຳເຫັນຂອງກົມວິທະຍາສາດ-ປະຫວັດສາດການທະຫານ | 19 |
| ຄຳເຫັນຂອງພັນຕີ ນາງ ຄຳເມິງ ວໍລະຈິດ | 23 |
| ບົດບັນນາທິການ | 25 |
| ຄຳນຳ ຂອງສຳນັກພິມນັກປະພັນລາວ | 29 |
| ຕອນທີ I | |
| ແມ່ຍິງລາວບັນດາເຜົ່າ ໃນພາລະກິດຕໍ່ສູ້ກູ້ຊາດ ຕ້ານຈັກກະພັດຝຣັ່ງ ແລະການແຊກແຊງຂອງອາເມຣິກາ | 31 |
| ຮູບພາບປະກອບ | 60 |
| ຕອນທີ II ມູນເຊື້ອກອງລຳລຽງແບກຫາບ 368 | |
| I.ສະພາບແວດລ້ອມ ແລະເງື່ອນໄຂທີ່ພາໃຫ້ເກີດກອງ ລຳລຽງແບກຫາບ 368 ແລະກອງກຳລັງໄຟເພດຍິງ 769 | 81 |
| ຮູບພາບປະກອບ | 126 |
| II. ການກຳເນີດ ແລະໂຄງປະກອບການຈັດຕັ້ງ ກອງລຳລຽງແບກຫາບ 368 | 143 |
| III. ທີ່ຕັ້ງ ຂອບເຂດການເຄື່ອນໄຫວຂອງກອງ 368, 769 | 157 |
| ຮູບພາບປະກອບ | 167 |

IV. ການເຄື່ອນໄຫວປະຕິບັດໜ້າທີ່ ຂອງກອງລຳລຽງ 368 185
V. ການຄຸ້ມຄອງລ້ຽງດູທັບ 217
VI. ຜົນງານຕ່າງໆທີ່ກອງ 368 ສ້າງໄດ້ 223
VII. ກອງ 37 231
ຮູບພາບປະກອບ 237

ຕອນທີ III ມູນເຊື້ອກອງກຳລັງໄຟເພດຍິງ 769
I. ການປະຕິບັດໜ້າທີ່ລຳລຽງ ແລະເຄື່ອນໄຫວສູ້ຮົບ 243
II. ຜົນງານຕ່າງໆ ທີ່ກອງກຳລັງໄຟເພດຍິງ 769 ສ້າງໄດ້ 279
ສະຫຼຸບ 287
ລາຍຊື່ ວິລະຊົນແຫ່ງຊາດ ແລະນັກຮົບແຂ່ງຂັນ(ເພດຍິງ) 301
ຮູບພາບປະກອບ 303

ຕອນທີ IV ບົດກະວີ ແລະບົດເພງກ່ຽວກັບຊຽງຂວາງວິລະຊົນ
ໂຮມກັນກຳລັງເຂົ້າເປັນ ກອງ 368 334
ກຳລັງໄຟ ກຳລັງໃຈ 336
ນ້ຳໃຈກຳລັງໄຟເພດຍິງ 337
ເພງ: ທຳມະຊາດຊຽງຂວາງ 339
ເພງ: ທຳມະຊາດເມືອງສູຍ 340
ເພງ: ມູນເຊື້ອເມືອງພວນ 341
ເພງ: ກັບຄືນເມືອງຊຽງ 342
ເພງ: ສາວຊຽງຂວາງ ທັ້ງງາມທັ້ງເກັ່ງ 343
ຂໍຂອບໃຈ 344
ພຶດຕິກຳ ຄ້ຳປະກັນຄວາມສະເໝີພາບ 348
ບັນນານຸກົມ 350





ບໍລິສຸດຕໍ່ຊາດ
ຮັບໃຊ້ປະຊາຊົນຢ່າງສຸດໃຈ
ເສີມຂະຫຍາຍຫາດແຫ້
ມູນເຊື້ອປະຕິວັດ
ສຳເລັດທຸກໜ້າທີ່







*"...ຊົມເຊີຍນ້ຳໃຈພິລະອາດຫານ ຂອງເອື້ອຍນ້ອງ*
*ແມ່ຍິງລາວພວກເຮົາ, ໂດຍສະເພາະພວກລູກຫຼານ ພະນັກງານ*
*ນັກຮົບ ໃນກອງກຳລັງໄຟເພດຍິງ ຊຶ່ງໄດ້ຮັກສາ ແລະເສີມຂະຫຍາຍ*
*ມູນເຊື້ອຕໍ່ສູ້ພິລະອາດຫານ, ມູນເຊື້ອບໍ່ຍອມຈຳນົນ,*
*ຈົ່ງຮັກສາມູນເຊື້ອອັນດີງາມນີ້ ໃຫ້ຍືນຍົງຕະຫຼອດໄປ..."*



*ສະຫາຍ ໄກສອນ ພົມວິຫານ ຄະນະກຳມະການສູນກາງແນວລາວຮັກຊາດ*
*ໃນໂອກາດຢ້ຽມຢາມກອງກຳລັງໄຟເພດຍິງ*
*ທີ່ບ້ານຊຽງຊື່ ເມືອງວຽງໄຊ ແຂວງຫົວພັນ ວັນທີ 14/5/1973*

ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

.....

ກະຊວງປ້ອງກັນປະເທດ ເລກທີ 2953/ກປທ
ວັນທີ 30/9/2013

# ຂໍ້ຕົກລົງຂອງກະຊວງປ້ອງກັນປະເທດ
## ວ່າດ້ວຍການແຕ່ງຕັ້ງຜູ້ຊີ້ນຳລວມ ແລະອະນຸກຳມະການຂຽນປຶ້ມປະຫວັດ ມູນເຊື້ອ ຂອງກອງກຳລັງໄຟເພດຍິງ (ກອງ 368 ແລະກອງ 769)

ອີງຕາມຂໍ້ຕົກລົງ ຂອງກະຊວງປ້ອງກັນປະເທດ ວ່າດ້ວຍການແຕ່ງຕັ້ງ ຄະນະຮັບຜິດຊອບການຈັດຕັ້ງສະເຫຼີມສະຫຼອງ ວັນສ້າງຕັ້ງກອງທັບປະຊາຊົນ ລາວຄົບຮອບ 65 ປີ (20/1/1949-20/1/2014) ສະບັບເລກທີ 2490/ກປທ, ລົງວັນທີ 30/7/2013

ອີງຕາມແຜນການ ຂອງກະຊວງປ້ອງກັນປະເທດ ວ່າດ້ວຍການກະກຽມ ແລະຈັດຕັ້ງສະເຫຼີມສະຫຼອງ ວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 65 ປີ (20/1/1949-20/1/2014) ສະບັບເລກທີ 3807/ກປທ, ວັນທີ 15/12/2012

ອີງຕາມທິດຊີ້ນຳ ຂອງທ່ານລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນ ປະເທດ, ປະທານສະພາວິທະຍາສາດ-ປະຫວັດສາດການທະຫານ ຄັ້ງວັນທີ 27/ 8/2013

ກະຊວງປ້ອງກັນປະເທດຕົກລົງ:

ມາດຕາ 1. ແຕ່ງຕັ້ງຜູ້ຊີ້ນຳໂຄງການດັ່ງລຸ່ມນີ້:

1. ພົນຕີ ຈັນສະໝອນ ຈັນຍາລາດ ລັດຖະມົນຕີຊ່ວຍວ່າການກະຊວງ ປ້ອງກັນປະເທດ, ເປັນຫົວໜ້າ ໂຄງການເຊີນທ່ານ ປ້າຄຳເມິງ ວໍລະຈິດ ເຂົ້າຮ່ວມເປັນທີ່ປຶກສາໂຄງການ

ມາດຕາ 2. ແຕ່ງຕັ້ງອະນຸກຳມະການຊີ້ນຳເນື້ອໃນ:

1. ພົນຈັດຕະວາ ວິໄສ ຈັນທະມາດ
   ຫົວໜ້າກົມວິທະຍາສາດ-ປະຫວັດສາດການທະຫານ ເປັນຫົວໜ້າ
2. ພັນເອກ ສຸລິວັນ ແສງຈັນ
   ຮອງຫົວໜ້າກົມວິທະຍາສາດ-ປະຫວັດສາດການທະຫານ ເປັນຮອງ
3. ທ່ານ ນາງຄຳອອນ ເພັດດາວເຮືອງ
   ພະນັກງານບຳນານ, ອະດີດຮອງຫົວໜ້າກົມໂຄສະນາ-ວັດທະນະທຳ
   ແລະໜັງສືພິມແມ່ຍິງລາວ ເປັນຮອງ
4. ພັນເອກວຽງໄຊ ສົມວິຈິດ
   ຮອງຫົວໜ້າກົມວິທະຍາສາດ-ປະຫວັດສາດການທະຫານ ຄະນະ
5. ທ່ານ ທິງເຫີນ ຂຸນພິທັກ
   ຜູ້ອຳນວຍການສຳນັກພິມ ນັກປະພັນລາວ ຄະນະ

ມາດຕາ 3. ແຕ່ງຕັ້ງອະນຸກຳມະການຂຽນເນື້ອໃນ ດັ່ງມີລາຍຊື່ລຸ່ມນີ້:

1. ທ່ານ ນາງຄຳອອນ ເພັດດາວເຮືອງ ພະນັກງານບຳນານ,
   ອະດີດຮອງຫົວໜ້າ ກົມໂຄສະນາ-ວັດທະນະທຳ
   ແລະໜັງສືພິມແມ່ຍິງລາວ ເປັນຫົວໜ້າ
2. ພັນໂທ ບົວໃສ ແພງສົມບັດ ຮອງຫົວໜ້າພະແນກປະຫວັດສາດ
   ກົມວິທະຍາສາດ - ປະຫວັດສາດການທະຫານ ເປັນຮອງ
3. ພັນໂທ ນາງອົມມະລີ ອຸດທະວົງ ຫົວຂະແໜງປະຫວັດມູນເຊື້ອ
4. ນາງ ດວງມາລາ ລາດຊະວົງໄຊ ວິຊາການສຳນັກພິມ ນັກປະພັນລາວ
5. ຮ້ອຍເອກພັນທະນິດທອງສະຫງວນວິຊາການພະແນກປະຫວັດສາດ
6. ຮ້ອຍເອກນາງຂັນມີໄຊ ຈັນທະມາດວິຊາການພະແນກປະຫວັດສາດ

ມາດຕາ 4 ໜ້າທີ່ຂອງແຕ່ລະຄະນະມີດັ່ງນີ້:

ຜູ້ຊີ້ນຳມີໜ້າທີ່ຊີ້ນຳ ກວດກາທັງໝົດໂຄງການ ເລີ່ມແຕ່ການສ້າງແຜນຄົ້ນຄວ້າຮຽບຮຽງເນື້ອໃນ ປະເມີນຜົນຮັບຮອງໂຄງການໃຫ້ໄດ້ຮັບຜົນຕາມແຜນການວາງອອກ.

ຄະນະອະນຸກຳມະການຊີ້ນຳເນື້ອໃນ ມີໜ້າທີ່ກວດແກ້ແຜນການເນື້ອໃນ ແລະປະສານງານກັບພາກສ່ວນຕ່າງໆ.

ຄະນະຮັບຜິດຊອບຂຽນເນື້ອໃນ: ມີໜ້າທີ່ສ້າງແຜນການ, ສ້າງເອກະສານທີ່ກ່ຽວຂ້ອງ ຜ່ານຜູ້ຊີ້ນຳເຫັນດີແລ້ວ ສົ່ງໃຫ້ກະຊວງປ້ອງກັນປະເທດເຊັນອະນຸມັດ, ຈັດຕັ້ງຜັນຂະຫຍາຍດຳເນີນໂຄງການຕາມຂັ້ນຕອນ ແລະເນື້ອໃນ ແລະຕາມທິດຊີ້ນຳຂອງຜູ້ຮັບຜິດຊອບໂຄງການ.

ມາດຕາ 5. ກຳນົດເວລາດຳເນີນໂຄງການ 4 ເດືອນ (ເລີ່ມແຕ່ເດືອນ 9-12/2013) , ນຳໃຊ້ງົບປະມານຂອງກະຊວງປ້ອງກັນປະເທດ.

ມາດຕາ 6. ມອບໃຫ້ບັນດາສະຫາຍທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ຕັ້ງໜ້ານຳໄປຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະເຂັ້ມງວດ.

ມາດຕາ 7. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ

ດວງໃຈ ພິຈິດ



ຄຳເຫັນຂອງທ່ານ

## ພົນໂທ ຈັນສະໝອນ ຈັນຍາລາດ

ລັດຖະມົນຕີຊ່ວຍວ່າການ
ກະຊວງປ້ອງກັນປະເທດ,
ປະທານສະພາວິທະຍາສາດ-
ປະຫວັດສາດການທະຫານ

.....

ການຕໍ່ສູ້ປົດປ່ອຍປະຊາຊົນລາວບັນດາເຜົ່າ ເພື່ອປົດປ່ອຍປະເທດຊາດ ອອກຈາກການເປັນຫົວເມືອງຂຶ້ນຂອງຕ່າງຊາດ ເພື່ອຄວາມເປັນເອກະລາດຈາກ ອຳນາດອະທິປະໄຕ ໃນໄລຍະກວ່າເຄິ່ງສັດຕະວັດຜ່ານມາ ພາຍໃຕ້ການນຳພາ ຂອງພັກປະຊາຊົນປະຕິວັດລາວ, ແມ່ນການຕໍ່ສູ້ທີ່ເຕັມໄປດ້ວຍຄວາມຫຍຸ້ງຍາກ ລຳບາກ ແລະ ການເສຍສະຫຼະອັນໃຫຍ່ຫຼວງໃນຂະບວນການຕໍ່ສູ້ນີ້, ເວົ້າສະ ເພາະ ໃນຖັ່ນແຖວກຳລັງປະກອບອາວຸດ ໄດ້ເກີດມີຫຼາຍບຸກຄົນ ຫຼາຍກົ່ມກອງທີ່ ສ້າງໄດ້ມີຜົນງານໂດດເດັ່ນ, ວິລະກຳອັນລ້ຳເລີດເປັນທີ່ເອກອ້າງທະນົງໃຈ, ຊຶ່ງ ສະແດງ ໃຫ້ເຫັນທາດແທ້ມູນເຊື້ອຮັກຊາດ ຮັກບ້ານເກີດເມືອງນອນ, ຕໍ່ສູ້ບໍ່ຍອມ ຈຳນົນ ສະແດງໃຫ້ເຫັນຄວາມອົງອາດກ້າຫານ, ຄວາມເສຍສະຫຼະ ຄວາມມານະ ອົດທົນ ຂອງພະນັກງານ ນັກຮົບ, ກອງທັບປະຊາຊົນລາວພວກເຮົາ, ໃນນັ້ນກໍ່ມີ ກອງລຳລຽງແບກຫາບ 368, ກອງກຳລັງໄຟເພດຍິງ 769 ວິລະຊົນ.

ກອງລຳລຽງແບກຫາບ 368 ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 6 ເດືອນ 3 ປີ 1968 ຈຶ່ງເອີ້ນວ່າກອງລຳລຽງແບກຫາບ 368 ແລະຕໍ່ມາວັນທີ 14 ເດືອນ 7 ປີ 1969 ກອງກຳໄຟເພດຍິງ 769 ກໍໄດ້ຮັບການສ້າງຕັ້ງຂຶ້ນ. ພະນັກງານ-ນັກຮົບທັງສອງກອງນີ້ ລ້ວນແຕ່ແມ່ນຍິງສາວຜູ້ໜຸ່ມນ້ອຍ ຊຶ່ງແມ່ນລູກຮັກຫຼານ ແພງຂອງຊາວຊຽງຂວາງ. ທັງສອງກົ່ມກອງເກີດຂຶ້ນ ໃນເວລາທີ່ພວກຈັກພັດຜູ້ ຮຸກຮານ ພວກປະຕິການຂາຍຊາດ ລັດຖະບານຫຸ່ນອຽງຈັນ ຜູ້ເປັນລູກແຫ້ງຕີນມື

ຂົນກຳລັງບຸກເຂົ້າບຸດຢຶດທົ່ງໄຫຫີນ-ຊຸງຂວາງ ແລະ ຖົ່ມລະເບີດທຳລາຍດ້ວຍ ຍຸດທະການ 3 ກ້ຽງ. ຕໍ່ໜ້າສະພາບການດັ່ງກ່າວ ສູນກາງແນວລາວຮັກຊາດ, ກອງບັນຊາການສູງສຸດ ຈຶ່ງປຸກລະດົມຂະບວນການຕໍ່ຕ້ານ "ສົງຄາມພິເສດເພີ່ມ ທະວີຂອງນິກເຊີນ". ປະທານາທິບໍດີຂອງອາເມລິກາ ແລະ ພວກລູກແຫ້ງຕີນມືຂາຍຊາດ. ທັງສອງກົມກອງເພດຍິງເບື້ອງຕົ້ນ ມີໜ້າທີ່ລຳລຽງແບກຫາບເຄື່ອງ ຂອງນັບທັງເຂົ້າປາອາຫານ, ພາຫະນະອາວຸດ ແລະ ລູກກະສຸນລົງຈາກລົດເອົາ ເຂົ້າມ້ຽນສາງ ແລະ ທັງຂົນສົ່ງລຳລຽງໄປສູ່ສະໜາມຮົບ ຮັບໃຊ້ແນວໜ້າທັງເວັນ ແລະຄືນ, ຂົ້ນພູລົງຫ້ວຍ, ຜ່ານຫ່າລູກປືນ ລູກແຕກ ລູກບິ່ນ ຂອງໂຈນອາກາດອາ ເມລິກາ ບໍ່ຈັກວ່າເທົ່າໃດ ແລະ ຕໍ່ມາກໍໄດ້ຈັບປືນຕໍ່ສູ້ກັບສັດຕູໂດຍກົ້ງ.

ກອງລຳລຽງແບກຫາບ 368, ກອງກຳລັງໄຟເພດຍິງ 769 ໄດ້ປະກອບ ສ່ວນສຳຄັນໃນການຕໍ່ສູ້ປົກປັກຮັກສາເຂດທີ່ໝັ້ນຂອງການປະຕິວັດ ກໍ່ຄືບ້ານ ເກີດເມືອງນອນ, ເຄື່ອນໄຫວສູ້ຮົບຍາດເອົາໄຊຊະນະຈາກຈັກກະພັດອາເມລິກາ ແລະ ລູກແຫ້ງຕີນມືຂາຍຊາດ, ປະກອບສ່ວນກ້າວໄປເຖິງປົດປ່ອຍປະເທດຊາດ ຍາດເອົາເອກະລາດຄືນມາໄດ້ຢ່າງສົມບູນ ແລະ ໃນປັດຈຸບັນນີ້ພວມເຮັດໜ້າທີ່ ປົກປັກຮັກສາ ເອກະລາດ ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະ ເທດຊາດໄວ້ໃຫ້ໝັ້ນຄົງ. ກຳລັງກອງລຳລຽງແບກຫາບ ໄດ້ຢືນຢູ່ຄຽງບ່າ-ຄຽງໄຫຼ່ ກັບກຳລັງເພດຊາຍໃນການປະຕິບັດໜ້າທີ່ ທີ່ພັກ-ລັດ ແລະປະຊາຊົນມອບໝາຍ ໃຫ້, ຜ່ານຜ່າທຸກຂໍ້ຫຍຸ້ງຍາກ ຕີເອົາຊະນະສັດຕູຜູ້ຮຸກຮານ. ເຮັດສຳເລັດໜ້າທີ່ ອັນມີກຽດສະຫງ່າຂອງຕົນ, ກາຍເປັນກຳລັງໜຶ່ງທີ່ຈົ່ງຮັກພັກດີຂອງພັກ, ຂອງ ກອງທັບ ແລະຂອງປະຊາຊົນ.

ເຄິ່ງສະຕະວັດແຫ່ງການຕໍ່ສູ້ ແລະ ກໍ່ສ້າງກຳລັງປະກອບອາວຸດປະຊາ ຊົນລາວ, ເອື້ອຍນ້ອງແມ່ຍິງໄດ້ປະກອບສ່ວນ ເປັນທັງແມ່ຜູ້ບັງເກີດໃຫ້ມີບຸກຄົນ ທີ່ເປັນພະນັກງານ, ນັກຮົບຜູ້ດີເດັ່ນໃນອາດີດ ແລະປັດຈຸບັນ, ເປັນຜູ້ຊຸກເຊື່ອງ ເຂົ້າ-ປາອາຫານໃຫ້ແກ່ພະນັກງານ-ນັກຮົບເຮົາທີ່ພວມເຮັດໜ້າທີ່ຕໍ່ສູ້ກູ້ຊາດ.

ຈາກການຕໍ່ສູ້ດັ່ງກ່າວ ໄດ້ສະສົມບົດຮຽນອັນອຸດົມສົມບູນຢ່າງຫຼວງຫຼາຍ ໄວ້ໃຫ້ພວກເຮົາ ແລະ ຄົນຮຸ່ນຫຼັງ. ບັນດາບົດຮຽນເຫຼົ່ານັ້ນ ພວມໄດ້ຮັບການ

ຄົ້ນຄວ້າ, ນຳໃຊ້ເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ ໃນປັດຈຸບັນ. ບັນດາຜົນງານ, ການປະກອບສ່ວນວຽກງານເຫຼົ່ານີ້ ໄດ້ກາຍເປັນ ບົດຮຽນທາງດ້ານປະຫວັດສາດທີ່ສຳຄັນ ປະກອບສ່ວນໃນການສຶກສາອົບຮົມ ທາດແທ້ມູນເຊື້ອຮັກຊາດ, ນ້ຳໃຈຕໍ່ສູ້ອັນພິລະອາດຫານ ເພື່ອຍາດເອົາເອກະ ລາດ, ອິດສະພາບ, ປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າ, ເປັນການ ປຸກລະດົມກຳລັງໃຈອັນເລີກເຊິ່ງ ແລະ ຍົກສູງຄວາມຮັບຜິດຊອບຂອງ ພະນັກ ງານ-ນັກຮົບ ຕໍ່ພາລະກິດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນສະພາບ ການ ແລະ ເງື່ອນໄຂໃໝ່.

ດັ່ງນັ້ນ ໃນໂອກາດຄົບຮອບ 65 ປີແຫ່ງການສ້າງຕັ້ງກອງທັບປະຊາຊົນ ລາວ (20/1/1949-20/1/2014), ໂດຍໄດ້ຮັບການຕົກລົງເຫັນດີ ຈາກລັດຖະ ມົນຕີກະຊວງປ້ອງກັນປະເທດ, ໂດຍມີທ່ານພັນຕີ ນາງ ຄຳເມິງ ວໍລະຈິດ ເປັນທີ່ ປຶກສາ, ກະຊວງປ້ອງກັນປະເທດ ຈຶ່ງໄດ້ຕົກລົງໃຫ້ ກົມວິທະຍາສາດ-ປະຫວັດ ສາດການທະຫານໄດ້ຮ່ວມກັບສະມາຄົມນັກປະພັນລາວ ເປັນເຈົ້າການປະສານ ສົມທົບ ຄົ້ນຄວ້າເກັບກຳຂໍ້ມູນ, ຮຽບຮຽງ, ຂຽນ ແລະ ຈັດພິມປຶ້ມ **ປະຫວັດມູນ ເຊື້ອ ກອງລຳລຽງແບກຫາບເພດຍິງ 368 ກອງກຳລັງໄຟເພດຍິງ 769** ເຫຼັ້ມນີ້ ຂຶ້ນມາ ເພື່ອບັນທຶກຈົດຈຳເຫດການຜົນງານ ນ້ຳໃຈອັນອົງອາດກ້າແກ່ນ ແລະ ການເສຍສະຫຼະຂອງເອື້ອຍນ້ອງແມ່ຍິງລາວ ພິເສດແມ່ນແມ່ຍິງຊຽງຂວາງ ວີລະ ຊົນ ເອົາໄວ້ເປັນແບບຢ່າງ ເປັນແວ່ນແຍງ ເປັນທີ່ເອກອ້າງທະນົງໃຈ ເປັນສິ່ງ ຢັ້ງຢືນ ແລະ ເພື່ອໃຊ້ເປັນສື່ສຳລັບການສຶກສາຮ່ຳຮຽນເອົາແບບຢ່າງຄຸນສົມບັດ ປະຕິວັດຂອງກອງທັບ, ຂອງແມ່ຍິງລາວ ເວົ້າລວມ, ເວົ້າສະເພາະ ແມ່ນແມ່ຍິງ ຊຽງຂວາງທີ່ອົງອາດກ້າຫານ.

ລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນປະເທດ,
ປະທານສະພາວິທະຍາສາດ-ປະຫວັດສາດການທະຫານ
**ພົນໂທ ຈັນສະໝອນ ຈັນຍາລາດ**

24/VII



ຄຳເຫັນຂອງ

## ພັນເອກ ສຸລິວັນ ແສງຈັນ

ຮອງຫົວໜ້າກົມວິທະຍາສາດ-ປະຫວັດສາດການທະຫານ

.....

ໂດຍໄດ້ຮັບການຊີ້ນຳ ແລະ ເຫັນດີຈາກທ່ານລັດຖະມົນຕີກະຊວງປ້ອງກັນປະເທດ, ການຊີ້ນຳໂດຍກົງຈາກ ທ່ານພົນໂທ ຈັນສະໝອນ ຈັນຍາລາດ ລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນປະເທດ, ປະທານສະພາວິທະຍາສາດ -ປະຫວັດສາດການທະຫານ, ກົມວິທະຍາສາດ - ປະຫວັດສາດການທະຫານ ຮ່ວມກັບສະມາຄົມນັກປະພັນລາວ ໄດ້ດຳເນີນໂຄງການຈັດພິມປຶ້ມນີ້ມາແຕ່ທ້າຍ ປີ 2013. ບັດນີ້ ປຶ້ມປະຫວັດມູນເຊື້ອ ກອງກຳລັງໄຟເພດຍິງ 368, 769 ໄດ້ສຳເລັດຕາມຄວາມມຸ່ງຫວັງຕັ້ງໃຈແລ້ວ.

ປຶ້ມເຫຼັ້ມນີ້ ເປັນໜຶ່ງໃນບັນດາປຶ້ມບັນທຶກປະຫວັດມູນເຊື້ອຂອງກົມກອງທີ່ມີຜົນງານໂດດເດັ່ນປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ກູ້ຊາດ ຕ້ານຈັກກະພັດຜູ້ຮຸກຮານ ຊຶ່ງທາງກົມພວກເຮົາມີແນວຄວາມຄິດ ແລະ ເປົ້າໝາຍການຈັດພິມ. ແນ່ນອນວ່າ ໃນໄລຍະຜ່ານມາຖັນແຖວກຳລັງປະກອບອາວຸດເວົ້າລວມ, ເວົ້າສະເພາະ ໃນກອງທັບປະຊາຊົນລາວຍັງມີຫຼາຍບຸກຄົນ, ມີຫຼາຍກົມກອງທີ່ຍັງບໍ່ທັນໄດ້ມີການພິມຜົນງານມູນເຊື້ອອັນດີງາມຂອງຕົນ ເຜີຍແຜ່ອອກສູ່ສັງຄົມ. ດັ່ງນັ້ນ ພວກເຮົາຍັງຈະສືບຕໍ່ດຳເນີນການເກັບກຳຂໍ້ມູນ ແລະ ຈັດພິມບັນດາຜົນງານມູນເຊື້ອຂອງບັນດາບຸກຄົນ ແລະ ກົມກອງຕ່າງໆເຫຼົ່ານັ້ນໃນຂັ້ນຕໍ່ໄປ.

ສຳລັບປຶ້ມນີ້ ປະກອບມີ 4 ຕອນ, ແຕ່ລະຕອນປະກອບມີ ຫົວຂໍ້ທີ່ມີເນື້ອໃນ ບັນທຶກການເຄື່ອນໄຫວ ແລະວິລະກຳຂອງກອງລຳລຽງແບກຫາບ 368, ກອງ ກຳລັງໄຟເພດຍິງ 769 ທີ່ໄດ້ກຳເນີດເກີດຂຶ້ນຈາກກົມກອງທີ່ເຮັດໜ້າທີ່ລຳລຽງ ແບກຫາບໄດ້ກາຍມາເປັນກອງກຳລັງໄຟເພດຍິງຄຽງບ່າ-ຄຽງໄຫຼ່ກັບກົມກອງ ສູ້ຮົບຂອງກຳລັງປະກອບອາວຸດປະຕິວັດໃນຊຸມປີ 1968-1984.

ການເຄື່ອນໄຫວຂອງກອງກຳລັງເພດຍິງ ໃນແປວໄຟສົງຄາມ ທີ່ເຕັມໄປ ດ້ວຍຄວາມໂຫດຮ້າຍອັນຕະລາຍຂອງທ່າລະເບີດແລະລູກປືນ, ຄວາມທຸກຍາກ ລຳບາກທີ່ບໍ່ມີຫຍັງປຽບປານໄດ້ນັ້ນ ມັນສະແດງເຖິງນ້ຳໃຈພິລະອາດຫານ, ການ ເສຍສະຫຼະອັນສູງສົ່ງ ແລະ ຄວາມເອກອ້າງທະນົງໃຈ ຂອງເອື້ອຍນ້ອງແມ່ຍິງ ລາວຂອງພວກເຮົາ ເຊິ່ງຢູ່ພາຍໃຕ້ການນຳພາອັນປີຊາສາມາດຂອງພັກ, ການ ອຸ້ມຊູລ້ຽງດູ ຢ່າງສຸດອົກສຸດໃຈຂອງປະຊາຊົນບັນດາເຜົ່າ ແລະ ຜ່ານຜ່າການ ທົດສອບທີ່ເຕັມໄປດ້ວຍອັນຕະລາຍນານາປະການ.

ໃນການຄົ້ນຄວ້າຮຽບຮຽງ, ຂຽນປຶ້ມນີ້ ພວກເຮົາທັງຄະນະຂໍຂອບໃຈ ຢ່າງສູງມາຍັງທ່ານປ້າ, ແມ່ອາ, ນ້າສາວ ແລະ ທຸກໆທ່ານທີ່ໃຫ້ຂໍ້ມູນ, ປະກອບ ຄຳຄິດ-ຄຳເຫັນ ແລະບົດຮຽນການເຄື່ອນໄຫວຢ່າງຕັ້ງໜ້າ ແລະ ໄດ້ອຳນວຍ ຄວາມສະດວກ,ໃຫ້ການຮ່ວມໄມ້-ຮ່ວມມືແກ່ຄະນະພວກເຮົາໄດ້ເຮັດສຳເລັດ ໜ້າທີ່ຢ່າງສຸດອົກສຸດໃຈ. ພ້ອມນີ້ ພວກເຮົາທັງຄະນະກໍ່ຂໍອະໄພນຳບັນດາທ່ານ -ບັນດາສະຫາຍແລະທ່ານຜູ້ອ່ານມາໃນນະທີ່ນີ້ດ້ວຍ, ພວກເຮົາບໍ່ອາດປາສະຈາກ ໄດ້ຂໍ້ຂາດຕົກບົກຜ່ອງ ທັງນີ້ເພາະເຫດການຜ່ານມາດົນນານ ເວລາເກັບກຳຂໍ້ ມູນການຂີດຂຽນມີຈຳກັດ, ສະນັ້ນ ອາດມີອັນບໍ່ຄົບຖ້ວນ, ມີຫຼາຍບັນຫາ, ຫຼາຍ ເຫດການ ຍັງບໍ່ທັນໄດ້ຄົບ ຫຼືມີຂໍ້ຜິດພາດຄາດເຄື່ອນ ບໍ່ທັນຄົບຖ້ວນພຽງພໍ ໃນເລື່ອງວັນເດືອນປີ ຫຼື ຊື່ບຸກຄົນ ຊື່ສະເພາະທ້ອງຖິ່ນ.

ທັງໝົດນັ້ນ ນະທີ່ນີ້ຄະນະພວກເຮົາຈຶ່ງສະເໜີມາຍັງບັນດາທ່ານຜູ້ອ່ານ, ຜູ້ໄດ້ເຂົ້າຮ່ວມຂະບວນການຕົວຈິງ ຫຼື ທ່ານຜູ້ຮູ້ ຈົ່ງໃຫ້ຄຳຕຳນິຕິຊົມສົ່ງຂ່າວມາຍັງກົມພວກເຮົາ ເພື່ອພວກເຮົາຈະໄດ້ປັບປຸງອີກໃນຄັ້ງຕໍ່ໄປ, ຫວັງຢ່າງຍິ່ງວ່າ ບັນດາຜູ້ອ່ານທັງຫຼາຍຈະໃຫ້ການຮ່ວມໄມ້ຮ່ວມມື ແລະ ໃຫ້ຄຳຕຳນິຕິຊົມມາຫາພວກເຮົາ ເພື່ອໃຫ້ພວກເຮົາໄດ້ນຳເອົາບັນດາເຫດການການເຄື່ອນໄຫວຂອງຮຸ່ນປ້າ, ຮຸ່ນອາເຫຼົ່ານັ້ນ ມາເພີ່ມເຕີມ ແລະບັນທຶກຈົດຈຳໄວ້ໃນໜ້າປຶ້ມຄຳປະຫວັດສາດຂອງຊາດ,ໄວ້ເປັນບົດຮຽນ ເປັນມໍລະດົກອັນລ້ຳຄ່າ ສຳລັບຄົນຮຸ່ນເກີດໃໝ່ໃຫຍ່ລຸນໄດ້ສຶກສາ ຮ່ຳຮຽນ ແລະເສີມຂະຫຍາຍມູນເຊື້ອອັນດີງາມ ສືບເນື່ອງຕໍ່ໆໄປ.

## ຮອງຫົວໜ້າກົມວິທະຍາສາດ-ປະຫວັດສາດການທະຫານ

## ພັນເອກ ສຸລິວັນ ແສງຈັນ







ຄຳຊົມເຊີຍຂອງທ່ານ

# ພັນຕີ ນາງ ຄຳເມິງ ວໍລະຈິດ

ທີ່ປຶກສາໂຄງການ

.....

ສົງຄາມບົນແຜ່ນດິນຊຽງຂວາງວິລະຊົນ ໃນລະຫວ່າງປີ 1967-70 ນັບວ່າ ດຸເດືອດ ຮຸນແຮງ ແລະ ຂັ້ງວຂາດທີ່ສຸດແຫ່ງໜຶ່ງໃນລາວ ໂດຍສະເພາະແມ່ນໃນບັ້ນຮົບໂອເດແອນ ແລະ ບັ້ນຮົບກູ້ກຸງດທີ່ຈັກກະພັດອາເມຣິກາ ແລະລູກມືໄດ້ກໍ່ຂຶ້ນ ໃນປີ 1968-69. ພວກ ສັດຕູຂົ່ມກຳລັງອັນມືດຟ້າມົວດິນເຂົ້າຍຶດເອົາເກືອບໝົດທຸກປ້ອມພູ ແລະ ພື້ນທີ່ ຍຸດທະສາດທາງການທະຫານ ພ້ອມທັງກໍ່ກຳທຳເຂັນອັນ ລົ້ນຟ້າເຫຼືອແຜ່ນດິນ ດ້ວຍຍຸດທະສາດ 3 ກ້ຽງ: ຈູດກ້ຽງ ທຳລາຍກ້ຽງ ແລະຂ້າກ້ຽງ, ແຕ່ລະມື້ແຕ່ລະຄືນ ໄດ້ຍິນແຕ່ສຽງປືນນ້ອຍ ປືນໃຫຍ່ ສຽງຍົນແຫກຜ່ານທ້ອງຟ້າ, ສຽງລະເບີດກ້ອງຟ້າ ສະເທືອນດິນ, ແລ້ວກໍ່ຕາມມາດ້ວຍແປວໄຟລຸກວືບໄໝ້ ລວກລົ້ນເຜົາຜານ ເຮືອນ ຊານບ້ານຊ່ອງ ວັດວາ ອາຮາມ ໂຮງໝໍ ໂຮງຮຽນ ໄຮ່ນາ ເລົ້າເຂົ້າ ສັດສາວາສິ່ງ... ລວມທັງປ່າແປກ ພູພຽງ ທີ່ສວຍສົດງົດງາມ, ແລະກໍ່ຕາມມາດ້ວຍສຽງຮ້ອງໄຫ້ ຄວນຄາງຂອງຜູ້ບາດເຈັບ ລົ້ມຕາຍ, ຜູ້ພັດພາກຈາກຫຼົ່ງ... ຄືກັບວ່າທຸກຊີວິດ ແລະ ຜືນແຜ່ນດິນແຫ່ງນີ້ ຈະແປນເປື່ອຍສູນສະຫຼາຍໄປສົມກັບຄວາມອັບປີຈັ່ງໄຮ ແລະ ໂຫດທ້ຽມອຳມະຫິດຂອງພວກຮຸກຮານ.

ຂ້າພະເຈົ້າເປັນຜູ້ໜຶ່ງທີ່ໄດ້ຮ່ວມ ໄດ້ຮັບໃຊ້ໃນຂະບວນບັ້ນຮົບຕ່າງໆເຫຼົ່ານີ້ ໃນຊາຕະກຳອັນດຽວກັນກັບພໍ່ແມ່ພີ່ນ້ອງຊາວຊຽງຂວາງ ໄດ້ເຫັນແຈ້ງວ່າ ໃນແປວ ໄຟແຫ່ງສົງຄາມຜູ້ທີ່ໄດ້ຮັບເຄາະຮ້າຍທີ່ສຸດ ໜ້າສົມເພດເວທະນາທີ່ສຸດ ກໍ່ແມ່ນເດັກ ນ້ອຍແລະແມ່ຍິງ, ມີເດັກນ້ອຍຫຼາຍຄົນ ພໍແຕ່ລອດທ້ອງແມ່ອອກມາກໍ່ສູນເສຍໄປ ແລ້ວ, ຫຼາຍຄົນກໍ່ກາຍເປັນກຳພ້າກຳພອຍ, ມີແມ່ຍິງຫຼາຍຄົນ ໄດ້ສູນເສຍຄົນຮັກ ຫຼື ສູນເສຍລູກຜົວທີ່ແສນແພງ ກາຍເປັນແມ່ຮ້າງນາງໝ້າຍ. ໃນຈຳນວນຜູ້ທີ່ຖືກ ລະເບີດເຜົາຜານຕາຍພາບດຽວ 374 ຄົນຢູ່ຖ້ຳປ໋ອ ເມືອງຄຳ ໃນວັນທີ 24/11/1968

ນັ້ນ ສ່ວນຫຼາຍກໍ່ແມ່ນເດັກນ້ອຍ ແມ່ຍິງ ແລະ ຜູ້ເຖົ້າ... ເລືອດ ແລະ ນ້ຳຕາຂອງ ປະຊາຊົນຊາວຊຽງຂວາງ ລິນນອງຖ້ວມແຜ່ນດິນ, ຄວາມຄຽດແຄ້ນແໜ້ນໃຈພຸ່ງ ພົ້ນ ແຫບລະເບີດອອກເປັນແປວໄຟ.

ເພື່ອຕ້ານກັບຄວາມຫິວກະຫາຍບຽດຍຶດເອົາຊຽງຂວາງ, ຕ້ານກັບທ່າລູກ ປືນ, ທ່າລູກລະເບີດ, ຕ້ານຄວາມໂຫດຮ້າຍປ່າເຖື່ອນ ຂອງຈັກກະພັດ ແລະລູກມື ຂາງຊາດນັ້ນ ກອງທັບ ແລະປະຊາຊົນຊຽງຂວາງ ໄດ້ພ້ອມກັນປະຕິບັດຄຳຂວັນ ***"ທຸກສິ່ງທຸກຢ່າງເພື່ອແນວໜ້າ ທຸກສິ່ງທຸກຢ່າງເພື່ອຕີເອົາຊະນະຈັກກະພັດອາເມ ຣິກາ ແລະລູກມື"***. ພ້ອມກັບເພດຊາຍ ພ້ອມກັບຮຸ່ນເອື້ອຍຮຸ່ນອ້າຍນັ້ນ ບັນດາສາວ ນ້ອຍເມືອງພວນ ຫຼາຍຮ້ອຍຄົນໄດ້ສະໝັກໃຈ ເອົາຮ່າງກາຍ ເຫື່ອແຮງ ແລະຊີວິດ ອິນຊີຂອງຕົນປະກອບສ່ວນຕາມຄວາມຮູ້ຄວາມສາມາດ ແລະສະຕິປັນຍາເຂົ້າເປັນ ກຳລັງຕ່າງໆເຊັ່ນ: ກອງຫຼວນ, ກອງລຳລຽງ, ທະຫານຫຼວງ, ເອື້ອຍລ້ຽງ, ແພດໝໍ, ນັກສະແດງສິລະປະວັນນະຄະດີ... ພິເສດເປັນກຳລັງລຳລຽງແບກຫາບກອງ 368, ກອງກຳລັງໄຟເພດຍິງ 769 ກອງ 37 ກອງ 875 ແລະ ກອງ 369.

ເອື້ອຍນ້ອງໃນກອງດັ່ງກ່າວນັ້ນ ໄດ້ເປ້ເຂົ້າປາອາຫານ ເປ້ລູກປືນ ແລະ ອາວຸດຍຸດທະພັນລຳລຽງໄປສູ່ແນວໜ້າ ບໍ່ຈັກວ່າມີນ້ຳໜັກທໍ່ໃດໂຕນ, ຍ່າງທໍ່ໃດ ກິໂລແມັດ, ຂຶ້ນພູລົງຫ້ວຍຜ່ານຜ່າຄວາມຫຍຸ້ງຍາກອັນຕະລາຍ ທຸລະກັນດານ ບໍ່ຈັກວ່າທໍ່ໃດ, ແລະສູ້ຮົບດັບສູນສັດຕູທໍ່ໃດ... ອັນນີ້ ສະແດງໃຫ້ເຫັນຈະແຈ້ງວ່າ: ປະຊາຊົນລາວ, ປະຊາຊົນຊຽງຂວາງ, ແມ່ຍິງລາວເວົ້າລວມ ພິເສດແມ່ນແມ່ຍິງ ຊຽງຂວາງ ມີນ້ຳໃຈຮັກເຊື້ອແພງຊາດ ຮັກບ້ານເກີດເມືອງນອນ ກ້າຫານ ຊານໄຊ ອົດທົນ ເສຍສະຫຼະ ບໍ່ຍອມຈຳນົນ. ຮູບພາບຂອງເຂົາເຈົ້າ, ວິລະກຳຂອງເຂົາເຈົ້າ, ບົດຮຽນ, ຈິດໃຈຂອງເຂົາເຈົ້າເປັນຕົວແທນໜຶ່ງທີ່ໃສແຈ້ງໃຫ້ແກ່ແມ່ຍິງຊຽງຂວາງ, ຊາວຊຽງຂວາງ ແລະ ຊາວລາວທັງປະເທດ. ແນ່ນອນວ່າ ມູນເຊື້ອແມ່ຍິງລາວ, ແມ່ຍິງຊຽງຂວາງ, ກອງກຳລັງໄຟເພດຍິງ ຈະຖືກຈາລຶກຈົດຈຳໄວ້ໃນຈິດໃຈຂອງ ກອງທັບ ແລະປະຊາຊົນລາວ ແລະເປັນທີ່ຍົກຍ້ອງຊົມເຊີຍ ພ້ອມກັບການສືບທອດ ເສີມຂະຫຍາຍໃຫ້ຍືນຍົງຕະຫຼອດໄປ.

**ຄຳເມິງ ວໍລະຈິດ**

# ບົດບັນນາທິການ



ດ້ວຍຄວາມພາກພູມໃຈ ແລະ ເປັນກຽດອັນສູງສົ່ງ ທີ່ໄດ້ຮັບມອບໝາຍໜ້າທີ່ ຈາກສະມາຄົມນັກປະພັນລາວໃຫ້ພວກຂ້າພະເຈົ້າໄດ້ມີໂອກາດຮ່ວມກັບຄະນະນຳ ກົມວິທະຍາສາດ - ປະຫວັດສາດການທະຫານ ກະຊວງປ້ອງກັນປະເທດ ປະຕິບັດຕາມຂໍ້ຕົກລົງສະບັບເລກທີ 2953 ລົງວັນທີ 30/9/2013 ຂອງກະຊວງປ້ອງກັນປະເທດ ໃຫ້ດຳເນີນການຈັດພິມປຶ້ມປະຫວັດມູນເຊື້ອຂອງກອງກຳລັງໄຟເພດຍິງກອງ 368, 769 ເຫຼັ້ມນີ້.

ຂ້າພະເຈົ້າເຊື່ອໝັ້ນວ່າ ເມື່ອກ່າວເຖິງກອງກຳລັງປະກອບອາວຸດຂອງຊາດ ໂດຍສະເພາະກ່າວເຖິງຄວາມອົງອາດກ້າຫານ ການເສຍສະຫຼະ ແລະ ຄວາມອົດທົນຂອງເອື້ອຍນ້ອງແມ່ຍິງລາວພວກເຮົາ ທີ່ປະກອບສ່ວນເຂົ້າໃນພາລະກິດຕໍ່ສູ້ກູ້ເອກະລາດປົດປ່ອຍປະເທດຊາດຕະຫຼອດໄລຍະທີ່ຜ່ານມາກ່ອນປີ 1975 ນັ້ນ ຄົນລາວເຮົາໃຜໆກໍ່ຄົງຮັບຮູ້ເຖິງກຽດຕິຍົດ ຊື່ສຽງ ແລະ ຍັງຈົດຈຳ **"ກອງກຳລັງໄຟເພດຍິງ"** ຈາກແຂວງຊຽງຂວາງວິລະຊົນ ໄດ້ເປັນຢ່າງດີ.

ສ່ວນຜູ້ເກີດໃໝ່ໃຫຍ່ລຸນ ເຖິງວ່າບາງຄົນ ຈະບໍ່ຮູ້ກອງກຳລັງໄຟເພດຍິງ ແຕ່ເຂົາເຈົ້າກໍ່ຮູ້ດີວ່າ **ສາວຊຽງຂວາງທັງງາມທັງເກັ່ງ** ເພາະ ເປັນຊື່ເພງຍອດນິຍົມທີ່ໃຜໆກໍໄດ້ຍິນໃນທຸກໆງານມ່ວນຊື່ນຕ່າງໆ ແລະເມື່ອໄດ້ຍິນເພງນີ້ ເອື້ອຍນ້ອງແມ່ຍິງເຮົາ ກໍ່ຈະພາກັນລຸກຂຶ້ນເຕັ້ນຕາມຈັ່ງຫວະອັນຄຶກຄັກ ແລະ ມີຄວາມໝາຍນັ້ນ ຢ່າງມ່ວນຊື່ນເອກອ້າງພາກພູມໃຈ ໃນກຽດສັກສີຂອງຕົນ.

ເຖິງວ່າ ພວກເຮົາມີຄວາມຈົດຈຳເປັນຢ່າງດີ, ມີສຽງເພງຮ້ອງກ້ອງສົ່ງຢູ່ເລື້ອຍໆ ແຕ່ການເກັບກຳຂໍ້ມູນຕົວຈິງ ເພື່ອຂຽນມາເປັນປຶ້ມປະຫວັດມູນເຊື້ອເຫຼັ້ມນີ້ກໍ່ບໍ່ງ່າຍ ຄືກັບການເຕັ້ນລຳປະກອບສຽງເພງ ຍ້ອນວ່າ:

1. ກອງກຳລັງໄຟເພດຍິງ ມີການສ້າງຕັ້ງຂຶ້ນໃນໄລຍະທີ່ສົງຄາມກຳລັງດຸເດືອດບົນແຜ່ນດິນຊຽງຂວາງ ແລະກອງກຳລັງນີ້ ກໍ່ໄດ້ເຕີບໃຫຍ່ຂະຫຍາຍຕົວເປັນຫຼາຍກອງຮ້ອຍ, ເຄື່ອນໄຫວຫຼາຍບັ້ນຫຼາຍຕອນ... ກອງກຳລັງເພດຍິງ ກອງທຳອິດ ຄື ກອງຮ້ອຍລຳລຽງແບກຫາບ 368 ໄດ້ຮັບການຈັດຕັ້ງຂຶ້ນ ກໍ່ຕ້ອງຢ້ອນກັບໄປເຖິງເດືອນ 3 ປີ 1968 ພຸ້ນ ຊຶ່ງໄລ່ມາເຖິງປີ 2014 ນີ້ ກໍ່ເປັນ 46 ປີແລ້ວ.

ປີ 1968-69 ເປັນເວລາທີ່ຈັກກະພັດອາເມຣິກາ ແລະລູກມືພວມປ່ວງບ້າ ກະຫາຍສົງຄາມ, ບຸກບຸງດຍຶດເຂົ້າສູ່ແຂວງຊຽງຂວາງຂະໜານໃຫຍ່ ດ້ວຍການປະຕິບັດຍຸດທະສາດ 3 ກ້ຽງ. ເພື່ອຕອບສະໜອງຕາມຄຳຮຽກຮ້ອງຕ້ອງການຂອງຕໍ່ສູ້ກູ້ເອກະລາດ ປົກປັກຮັກສາເຂດປົດປ່ອຍ ກໍ່ຄືບ້ານເກີດເມືອງນອນ ເພື່ອຕ້ານການບຸດຍຶດຂອງສັດຕູນັ້ນ, ຍິງສາວຊາວຊຽງຂວາງທີ່ໜຸ່ມນ້ອຍໄດ້ຕື່ນຕົວສະໝັກໃຈ ເຂົ້າປະກອບສ່ວນ, ກອງບັນຊາການທະຫານເຂດຊຽງຂວາງ ຈຶ່ງໄດ້ເຕົ້າໂຮມກຳລັງ ຈັດຕັ້ງເປັນກອງຮ້ອຍ 368 ເພື່ອແບກຫາບລຳລຽງເຂົ້າປາອາຫານ ອາວຸດຍຸດທະພັນໄປສູ່ແນວໜ້າ.

ຕໍ່ໜ້າທ່າລະເບີດ ແລະລູກປືນຂອງພວກສັດຕູນັ້ນ ຄວາມຮັກຊາດ ຄຽດແຄ້ນສັດຕູຂອງຊາວຊຽງຂວາງໄດ້ພຸ່ງພົ້ນຂຶ້ນຢ່າງສູງສົ່ງ ສາວນ້ອຍເມືອງພວນຈຶ່ງສະໝັກໃຈເຂົ້າຮ່ວມ **ກອງກຳລັງເພດຍິງ** ເກີນກຳນົດທີ່ຄະນະພັກຄະນະບັນຊາເຂດຊຽງຂວາງຄາດໝາຍໄວ້, ດັ່ງນັ້ນ ອີກໜຶ່ງປີຕໍ່ມາຄືເດືອນ 7 ປີ 1969 ກອງກຳລັງເພດຍິງກອງທີ 2 ຈຶ່ງໄດ້ຮັບການຈັດຕັ້ງຂຶ້ນ ແລະໄດ້ຊື່ວ່າກອງຮ້ອຍ 769.

ໃນປີຕໍ່ມາ ໂດຍເຫັນໄດ້ບົດຮຽນອັນລ້ຳຄ່າຈາກກອງ 368 ແລະ 769 ສູນກາງຈຶ່ງໄດ້ແບ່ງເອົາຄະນະນຳຈຳນວນ 4 ສະຫາຍຈາກສອງກອງດັ່ງກ່າວໄປສ້າງຕັ້ງກອງລຳລຽງເພດຍິງກອງໜຶ່ງຂຶ້ນ ທີ່ເມືອງວຽງໄຊ ແຂວງຫົວພັນ ໂດຍໃຫ້ຊື່ວ່າກອງ 37 ເພື່ອລຳລຽງສະບຽງອາຫານ ແລະອາວຸດຍຸດທະພັນຢູ່ແນວຫຼັງ. ເມື່ອການຕໍ່ສູ້ຂອງປວງຊົນລາວໄດ້ກ້າວກະໂດດຂັ້ນ ເພື່ອເຂົ້າຮ່ວມການຍຶດອຳນາດທົ່ວປະເທດໃນເດືອນ8/1975ທີ່ນະຄອນຫຼວງວຽງຈັນຂັ້ນເທິງກໍ່ໄດ້ສ້າງຕັ້ງກອງກຳລັງເພດຍິງຂຶ້ນອີກ 1 ກອງຮ້ອຍຢູ່ແຂວງຊຽງຂວາງເອີ້ນວ່າກອງ 875.

ພາຍຫຼັງສຳເລັດພາລະກິດຕໍ່ສູ້ປົດປ່ອຍປະເທດຊາດ ກ້າວສູ່ການສ້າງ ສາພັດທະນາ ແລະປົກປັກຮັກສາປະເທດຊາດແລ້ວ ບັນດາພະນັກງານ ນັກຮົບ ເພດຍິງຢູ່ໃນແຕ່ລະກົມກອງທີ່ກ່າວມານັ້ນ ກໍ່ໄດ້ມີການປ່ຽນແປງໄປຢູ່ ແຕ່ລະ ຂົງເຂດ ຕາມຄວາມຮຽກຮ້ອງຕ້ອງການໃນໄລຍະໃໝ່, ແລະຂັ້ນເທິງກໍ່ໄດ້ເຕົ້າ ໂຮມເອົາກຳລັງທັງໝົດ ທີ່ຍັງສັງກັດໃນແຕ່ລະກອງມາໂຮມກັນເປັນກອງ 369 ຊຶ່ງເປັນກອງສຸດທ້າຍແຫ່ງການເຕົ້າໂຮມກຳລັງຂອງແມ່ຍິງທັງໝົດ ໂດຍໄດ້ຮັກ ສາທຸງໄຊມູນເຊື້ອວິລະຊົນຂອງກອງກຳລັງໄຟເພດຍິງໄວ້ ຈົນເຖິງວັນປະກາດຍຸບ ໃນວັນທີ 27/11/1987 ແລະທັງໝົດນັ້ນ ແມ່ນກອງກຳລັງເພດຍິງ ຊຶ່ງໄດ້ຮັບ ການເຊີດຊູກຽດວ່າ **"ກອງກຳລັງໄຟເພດຍິງ"**.

2. ມາເຖິງປັດຈຸບັນນີ້ ກົມກອງທີ່ກ່າວມານັ້ນໄດ້ຖືກຍຸບໄປໝົດແລ້ວ. ຄະນະຜູ້ຈັດຕັ້ງ ຊີ້ນຳ ກົມກອງເຫຼົ່ານີ້ ຈຳນວນໜຶ່ງກໍ່ໄດ້ໝົດບຸນຈາກໄປແລ້ວ. ພະນັກງານ ນັກຮົບ ໃນກົມກອງດັ່ງກ່າວ ກໍ່ໄດ້ແຍກຍ້າຍກັນໄປປະຕິບັດໜ້າທີ່ ວຽກງານອື່ນໆຢູ່ແຕ່ລະເຂດແຂວງແຫ່ງອື່ນໆທີ່ຫ່າງໄກກັນ.

3. ບັນດາເຫດການ ສະຖານທີ່, ຊື່ບ້ານນາມເມືອງ ໂຕເລກຈຳນວນ ບໍລິມາດວຽກທີ່ມີການກ່າວເຖິງຂອງບັນດາພະນັກງານນັກຮົບ ໃນເວລາປະຕິບັດ ໜ້າທີ່ກໍ່ເປັນເຫດການສະຖານທີ່ໃນອະດີດຊຶ່ງໃນເວລານັ້ນບໍ່ໄດ້ມີການວັດແທກ ໄລຍະທາງ ເວລາເດີນທາງ ລວມທັງບໍລິມາດ ແລະນ້ຳໜັກຂອງວັດຖຸເຂົ້າຂອງ ທີ່ເປັຫາບແບກຂົນລຳລຽງແຕ່ປະການໃດ.

ດັ່ງນັ້ນ ການເກັບກຳຂໍ້ມູນ ແລະການຂຽນຈຶ່ງມີຄວາມຫຍຸ້ງຍາກຫຼາຍ. ພວກເຮົາບໍ່ສາມາດຊອກເຫັນເອກະສານ ທີ່ເປັນນິຕິກຳອັນໃດເລີຍ ( ຄຳສັ່ງ / ມະຕິຕົກລົງແຕ່ງຕັ້ງ / ຍຸບເລີກ / ມະຕິຍ້ອງຍໍສັນລະເສີນ...) ຈຶ່ງໄດ້ອາໄສແຕ່ບົດ ບັນທຶກເລົ່າຄືນມູນເຊື້ອຂອງບາງຄົນ, ຄຳໃຫ້ສຳພາດ, ການຈົດຈຳຂອງບຸກຄົນ, ສ່ວນຮູບພາບ ທີ່ຈະນຳມາປະກອບ ຢັ້ງຢືນກໍຫາຍາກເຕັມທີ, ມີພຽງຈຳນວນໜຶ່ງ ເທົ່ານັ້ນ. ສະນັ້ນປຶ້ມເຫຼັ້ມນີ້ ຈຶ່ງເປັນການບັນທຶກແບບສັງລວມໃຫ້ເຫັນສະພາບ ການ, ການຈັດຕັ້ງ, ຜົນງານການເຄື່ອນໄຫວຂອງແຕ່ລະກອງ ແລະມູນເຊື້ອ ພຽງແຕ່ເປັນພື້ນຖານ ແລະເປັນຕົວແທນໃຫ້ແກ່ກົມກອງຕ່າງໆ. ທັງນີ້ກໍ່ເພື່ອ

ໃຫ້ສັງຄົມໄດ້ຈົດຈຳລຳ້ລຶກແບບຢ່າງ ແລະ ເປັນແວ່ນແຍງອັນເຫຼື້ອມໃສຂອງ ພະນັກງານ-ນັກຮົບທັງ 5 ກອງ ຄື: ກອງ 368, ກອງ 769, ກອງ 37, ກອງ 875 ແລະກອງ 369 ໃຫ້ຍືນຍົງໃນດວງໃຈຂອງຄົນຮຸ່ນໃໝ່ຕະຫຼອດໄປ.

ຍ້ອນແນວນັ້ນ ຈຶ່ງອາດຍັງມີຂໍ້ຂາດຕົກບົກພ່ອງຂໍ້ຄາດເຄື່ອນ, ຂໍ້ລະແວງ ສົງໄສ ຂໍ້ໂຕ້ແຍ້ງຊັກຖາມ... ຖ້າຫາກມີອັນຂາດຕົກບົກພ່ອງທາງດ້ານເນື້ອໃນ ໄວຍາກອນ ແລະຂັ້ນຕອນຕ່າງໆບໍ່ທັນຄົບຖ້ວນພຽງພໍ ຄະນະຈັດທຳຂອງພວກ ເຮົາຈຶ່ງຂໍອະໄພມາ ນະທີ່ນີ້ດ້ວຍ.

ພວກເຮົາສຸດແສນເອກອ້າງທະນົງໃຈຕໍ່ນ້ຳຈິດ ນ້ຳໃຈ ຜົນງານ ແລະໄຊ ຊະນະຂອງເອື້ອຍນ້ອງແມ່ຍິງລາວ, ເວົ້າສະເພາະເອື້ອຍນ້ອງແມ່ຍິງໃນກອງກຳ ລັງ ໄຟເພດຍິງ; ແຕ່ຂະນະດຽວກໍ່ເສົ້າສະຫຼົດໃຈຕໍ່ການສູນເສຍບາງສະຫາຍໄປ ໃນ ແປວໄຟແຫ່ງການຕໍ່ສູ້. ນະໂອກາດນີ້ ພວກເຮົາຂໍໄວ້ອາໄລເຖິງດວງວິນຍານ ຂອງພະນັກງານນັກຮົບເພດຍິງ ຜູ້ທີ່ໄດ້ເສຍສະຫຼະຊີວິດອຸທິດເລືອດເນື້ອ ເຫື່ອ ແຮງເພື່ອພາລະກິດປະຕິວັດຢ່າງສຸດຊຶ້ງ, ແລະ ຂໍຈົດຈຳລຳ້ລຶກຜົນງານ ຂອງ ພວກທ່ານ, ຊື່ສຽງ ແລະ ຜົນງານຂອງພວກທ່ານຈະຖືກບັນທຶກ ແລະ ຍືນຍົງຄົງ ຕົວຄຽງຄູ່ຢູ່ກັບປະເທດຊາດ ແລະ ປະຊາຊົນລາວຕະຫຼອດການ.

ຂ້າພະເຈົ້າຂໍຂອບໃຈເປັນຢ່າງສູງມາຍັງທ່ານພັນໂທນາງອັນດີ ທຳມະສິດ, ພັນໂທນາງຄຳພາ ອິນທະມາລີ, ຮ້ອຍເອກນາງສີສຸກ ແກ້ວບຸນລ້ອມ, ຮ້ອຍເອກ ນາງບົວຄຳ ພົມມະຈັນ, ທ່ານຮ້ອຍໂທນາງຄຳໝັ້ນ ທາວົງລາດ, ທ່ານຮ້ອຍເອກ ນາງອອນສ ມະນີວົງ, ທ່ານພັນເອກນາງວັນຄາ ທິບພະວົງ ແລະ ບັນດາຜູ້ອົ່ນໆ... ທີ່ໄດ້ໃຫ້ການຮ່ວມມື, ປຶກສາຫາລື, ຄົ້ນຄວ້າໃຫ້ຂໍ້ມູນ, ພິເສດ ຂໍສະແດງຄວາມ ຮູ້ບຸນຄຸນ ຕໍ່ທ່ານພົນໂທ ຈັນສະໝອນ ຈັນຍາລາດ, ທ່ານພົນຈັດຕະວາ ວິໄສ ຈັນທະມາດ ພ້ອມຄະນະ ແລະ ວິຊາການ, ພິເສດຂໍຂອບໃຈ ທ່ານພັນຕີ ນາງ ຄຳເມິງ ວໍລະຈິດ ທີ່ປຶກສາໂຄງການທີ່ໄດ້ໃຫ້ຄວາມເຊື່ອໝັ້ນ ແລະ ອຳນວຍຄວາມ ສະດວກໃຫ້ພວກເຮົາປະຕິບັດວຽກງານຈົນສຳເລັດຜົນຕາມລະດັບຄາດໝາຍ.

**ຄຳອອນ ເພັດດາວເຮືອງ**



# ຄຳນຳຂອງສຳນັກພິມ

.....

ຊົນຊາດລາວ ມີມູນເຊື້ອຕໍ່ສູ້ ພິລະອາດຫານ ເພື່ອປົກປັກຮັກສາເຊື້ອຊາດ ເຜົ່າພັນ ແລະຜືນແຜ່ນ ດິນບ້ານເກີດເມືອງນອນ ທີ່ປູ່ຍ່າ ຕາທວດໄດ້ສ້າງສັນ ແລະມອບໝາຍໃຫ້ມາແຕ່ບູຮານນະການເວົ້າສະເພາະ ແມ່ນໃນໄລຍະຕໍ່ສູ້ກູ້ຊາດຕ້ານການຮຸກຮານຂອງຈັກກະພັດຝຣັ່ງ ແລະ ອາເມຣິກາ (1945-1975) ປົດປ່ອຍປະເທດຊາດນັ້ນ ປະຊາຊົນລາວຍິ່ງສະແດງໃຫ້ເຫັນ ທາດແທ້ມູນເຊື້ອຊາດລາວວິລະຊົນ ຄົນລາວອາດຫານ.

ໃນຂະບວນການຕໍ່ສູ້ນັ້ນ ແມ່ຍິງລາວເປັນກຸ່ມຄົນໜຶ່ງ ທີ່ມີບົດບາດສຳຄັນ. ພິເສດໃນໄລຍະທີ່ຈັກກະພັດອາເມຣິກາ ແລະ ພວກກຳອຳນາດຫຸ່ນອຸງຈັນ ໄດ້ເພີ່ມທະວີສົງຄາມບຸງດຍຶດ ແລະທຳລາຍເຂດປົດປ່ອຍເວົ້າລວມ ໂດຍສະເພາະ ແມ່ນແຂວງຊຽງຂວາງໃນລະຫວ່າງປີ 1964-72 ນັ້ນ, ຍິງສາວຊາວພວນແຂວງ ຊຽງຂວາງ ໄດ້ສະໝັກໃຈເຂົ້າປະກອບສ່ວນໃນພາລະກິດຕໍ່ສູ້ ໃນຫຼາຍວຸງການ ເຊັ່ນ: ເປັນກອງລຳລຸງ ເປັນກອງຫຼອນ ແລະ ເປັນທະຫານຫຼວງ ຈັບປືນຕໍ່ສູ້ໃນ ສະໜາມຮົບຄຽງບ່າຄຽງໄຫຼ່ກັບເພດຊາຍ ຢ່າງບໍ່ເຄີຍມີມາກ່ອນ ຊຶ່ງທາງກອງ ບັນຊາການທະຫານເຂດຊຽງຂວາງໄດ້ຈັດຕັ້ງເປັນກອງລຳລຸງ ແບກຫາບ 368 ໃນປີ 1968 ແລະ ເຕີບໃຫຍ່ຂະຫຍາຍຕົວອອກເປັນກອງ ກຳລັງໄຟເພດຍິງ 769 ໃນປີຕໍ່ມາ.

ບັນດາສາວນ້ອຍເມືອງພວນໃນສອງກົມກອງນີ້ ໄດ້ລຳລຸງແບກຫາບ ເຂົ້າປາອາຫານ ອາວຸດຍຸດໂທປະກອນ ຍ່າງລອດປ່າແປກ ເລາะลุบไปตาม ร่อมห้อยตีนเขาขึ้นพูลุงห้อยไปสุ่งแมอหน้า ในขะนะที่สัดตูหลายกอง พัน ได้ทิหาทับบุกเข้ายึดเอาทุกป้อมพู, ห่าลูกปืนน้อยปืนใหย่พอมสาด

ສຸມເຂົ້າໃສ່ ແລະ ລູກລະເບີດນານາຊະນິດ ກໍ່ຖືກຖອກເທລົງມາຈາກຍົນ ຂອງ ພວກໂຈນອາກາດອາເມຣິກາ ເພື່ອດັບສູນທຳລາຍຊຸງຂວາງໃຫ້ຮາບກ້ຽງ. ສຽງ ລະເບີດດັງກຶກກ້ອງກຳປະນາດທັງເວັນ ແລະ ຄືນ... ແຕ່ພວກນາງກໍ່ບໍ່ຫວາດ ຫວັ່ນຢ້ານກົວ ສາມາດເຮັດຫຼ້ອນທຸກໜ້າທີ່ ປະກອບສ່ວນອັນໃຫຍ່ຫຼວງ ເຂົ້າໃນ ພາລະກິດຂັບໄລ່ຜູ້ບຸກລຸກຮຸກຮານ ປົກປັກຮັກສາຜືນແຜ່ນດິນບ້ານເກີດເມືອງ ນອນ ກໍ່ຄືປະເທດຊາດອັນແສນຮັກ. ບົດບາດຊື່ສຽງຂອງກອງກຳລັງໄຟເພດຍິງ ວິລະຊົນ ໂດດເດັ່ນໃສແຈ້ງ ແລະ ຈາລຶກໝັ້ນ ໃນຄວາມຊົງຈຳຂອງປະຊາຊົນ ລາວຕະຫຼອດໄປ ທັງເປັນທີ່ສະທ້ານຢ້ານກົວຂອງເຫຼົ່າສັດຕູໝູ່ມານ.


ດ້ວຍຄວາມເອກອ້າງທະນົງໃຈຕໍ່ຜົນງານ ແລະໄຊຊະນະອັນໃຫຍ່ຫຼວງ ຂອງເອື້ອຍນ້ອງແມ່ຍິງລາວເວົ້າລວມ ໂດຍສະເພາະ ແມ່ນກອງລຳລຽງແບກ ຫາບ 368, ກອງກຳລັງໄຟເພດຍິງ 769 ສຳນັກພິມນັກປະພັນລາວ ເປັນກຽດ ແລະ ພູມໃຈທີ່ໄດ້ຮັບຄວາມໄວ້ວາງໃຈຈາກກົມວິທະຍາສາດ ປະຫວັດສາດ ການທະຫານ ກໍ່ຄືກະຊວງປ້ອງກັນປະເທດ ໃຫ້ຈັດພິມປຶ້ມປະຫວັດມູນເຊື້ອກອງ ລຳລຽງແບກຫາບ 368 ແລະ ກອງກຳລັງໄຟເພດຍິງ 769 ວິລະຊົນ ເຫຼັ້ມນີ້ ຂຶ້ນມາ ໃນໂອກາດສະເຫຼີມສະຫຼອງ 65 ປີວັນສ້າງຕັ້ງກອງ ທັບປະຊາຊົນລາວ 20/1/1949-20/1/2014

ເມື່ອອ່ານປຶ້ມເຫຼັ້ມນີ້ແລ້ວ ເຮົາເຊື່ອວ່າທ່ານຜູ້ອ່ານຈະໄດ້ຮູ້ແຈ້ງຕື່ມອີກ ໃນຄຳວ່າ ***"ຊາດລາວວິລະຊົນ ຄົນລາວພິລະອາດຫານ"*** ແລະ ຄຳວ່າ ***"ສາວ ຊຸງຂວາງທັ່ງງາມທັ່ງເກັ່ງ"*** ນັ້ນບໍ່ແມ່ນຄຳເວົ້າທີ່ເສກສັນປັ້ນແຕ່ງ ແຕ່ມັນແມ່ນ ຄວາມຈິງ ຊຶ່ງໄດ້ພິສູດມາແລ້ວ ແລະບໍ່ມີຂໍ້ໂຕ້ແຍ້ງສົງໄສໃດໆອີກເລີຍ.

ຜູ້ອຳນວຍການ
ຫົວໜ້າບັນນາທິການ ສຳນັກພິມນັກປະພັນລາວ
**ທົງເທີນ ຊຸນພິທັກ**

# ตอนที I

# แม่ยิงลาว บันดาเผ่า ในพาละกิดต่ำสู้ กู้ชาด ต้านจักกะพัดล่าเมืองขึ้นฝรั่ง และกามแซกแซงของจักกะพัด อาเมธิกา





ລາວເປັນຊົນຊາດໜຶ່ງ ທີ່ມີອະລິຍະທຳເກົ່າແກ່ ແລະມີປະຫວັດສາດຍາວນານມາຫຼາຍພັນປີ. ຊົນຊາດລາວໄດ້ດຳລົງຊີວິດ ແລະສ້າງບ້ານແປງເມືອງຢູ່ຮ່ວມກັບຊົນຊາດອື່ນໆ ຢູ່ບົນດິນແດນສຸວັນນະພູມ ຫຼື ແຫຼມອິນດູຈີນນີ້ ມາເປັນເວລາດົນນານ ຊຶ່ງມີບາງໄລຍະກໍ່ເປັນຫົວເມືອງເອກະລາດພໍໃຜພໍມັນ, ບາງໄລຍະ ກໍ່ລວມຕົວກັນເປັນອານາຈັກ.

ເຖິງປີ ຄ.ສ. 1353 ສົມເດັດພະເຈົ້າຟ້າງຸ່ມມະຫາລາດໄດ້ທ້ອນໂຮມຫົວເມືອງລາວນ້ອຍ-ໃຫຍ່ເຂົ້າກັນ ແລ້ວສະຖາປະນາເປັນ **ອານາຈັກລາວລ້ານຊ້າງ** ເອກະພາບ, ມີດິນແດນທີ່ກວ້າງໃຫຍ່ໄພສານກວມທັງສອງຟາກຝັ່ງແມ່ນ້ຳຂອງ ໂດຍມີເມືອງຊວາ ຫຼື ຊຽງດົງ ຊຽງທອງ (ຫຼວງພະບາງ) ເປັນເມືອງຫຼວງ. ຕໍ່ມາ ເຖິງປີ 1560 ພະເຈົ້າໄຊຍະເຊດຖາທິຣາດ ຈຶ່ງໄດ້ສະຖາປະນາ **ວຽງຈັນຂຶ້ນເປັນນະຄອນຫຼວງ** ແທນນະຄອນຊຽງທອງ.

ອານາຈັກລາວລ້ານຊ້າງມີຄວາມສະຫງົບຮົ່ມເຢັນເລື້ອຍໆມາ ໂດຍສະເພາະໃນສະໄໝເຈົ້າສຸຣິຍະວົງສາ (1638-1695) ເປັນກະສັດປົກຄອງ. ອານາຈັກລາວລ້ານຊ້າງ ມີຄວາມຈະເລີນຮຸ່ງເຮືອງຫຼາຍທັງທາງດ້ານການເມືອງ ເສດຖະກິດ ສັງຄົມ ແລະວັດທະນະທຳ ປະຊາຊົນກໍ່ຢູ່ເຢັນເປັນສຸກ. ຊາວເອີຣົບກໍ່ມາຢ້ຽມຢາມ ແລະຕິດຕໍ່ທຳມາຄ້າຂາຍ. ອົງກະສັດ ແລະເຈົ້າຂຸນມຸນນາຍ ຜູ້ປົກຄອງບ້ານເມືອງທັ້ງເກົ່ງກ້າສາມາດສະຫຼາດສ່ອງໃສ ແລະໃຈບຸນ. ຫໍຜາສາດຣາຊະວັງໃນເມືອງຫຼວງວຽງຈັນສວຍສົດງົດງາມຮຸ່ງເຮືອງເຫຼືອງເຫຼື້ອມເປັ່ງປະກາຍ ແວວວາວ ພໍປານວ່າແທ່ງຄຳຕັ້ງຢູ່ເທິງຝັ່ງແມ່ນ້ຳຂອງ.

ແຕ່ແລ້ວເມື່ອສິ້ນຣາຊະການເຈົ້າສຸລິຍະວົງສາ,ຍ້ອນຂາດຄວາມສາມັກຄີພາຍໃນ ເກີດການຂັດແຍ່ງຍາດຊິງກັນຂຶ້ນກຳອຳນາດ ຂອງບັນດາຜູ້ປົກຄອງບ້ານເມືອງຈົນເຖິງຂັ້ນແຍກເປັນ 3 ອານາຈັກໃນປີ 1707 (ຫຼວງພະບາງ, ວຽງຈັນ, ຈຳປາສັກ) ແລະກໍ່ອ່ອນແອລົງເລື້ອຍໆ ເປັນໂອກາດໃຫ້ສັກດິນາສະຫຍາມເຂົ້າມາຮຸກຮານ. ຜົນສຸດທ້າຍທັງ 3 ອານາຈັກກໍ່ວິນາດຫຼົ້ມຈົມສູນເສຍ **ເອກະລາດ ຕົກໄປເປັນປະເທສະລາດ** [1] **ຂອງສະຫຍາມ** (ໄທ) ປີ 1779.

ປະຊາຊົນລາວສູນສິ້ນສິດເສລີພາບ ແລະ ຖືກກົດຂີ່ຂົ່ມເຫັງ ກຳຮາບປາບປາມ ມີແຕ່ຄວາມທຸກລະທົນຂົ່ມຂື່ນ ໂສກເສົ້າໝົ່ນໝອງ. ໃນປີ 1826-29 ເຈົ້າອະນຸວົງ ກະສັດຂອງລາຊະວົງວຽງຈັນ ໄດ້ນຳພາປະຊາຊົນລາວລຸກຂຶ້ນຕໍ່ສູ້ເພື່ອກອບກູ້ເອກະລາດ ອິດສະລະພາບ ປົດປ່ອຍປະເທດອອກຈາກສະຫຍາມ. ແຕ່ກໍ່ຖືກປາບປາມຢ່າງໜັກໜ່ວງໂຫດຮ້າຍທາລຸນ ແລະປ່າເຖື່ອນ ບໍ່ພຽງແຕ່ການຕໍ່ສູ້ນັ້ນບໍ່ສຳເລັດຜົນ ແມ່ນແຕ່ວຽງຈັນຊຶ່ງເປັນເມືອງຫຼວງຂອງອານາຈັກ ກໍ່ຖືກທຳລາຍເຜົາຜານຈົນຣາບກ້ຽງ. ບ້ານເມືອງຖືກປຸ້ນສະດົມ ເຄື່ອງຄ້ຳ ຂອງຄູນຖືກຂົນໜີ ສິລະປະວັດທະທຳຖືກທຳລາຍ ປະຊາຊົນລາວທີ່ຢູ່ທາງຝັ່ງຊ້າຍແມ່ນ້ຳຂອງ ໂດຍສະເພາະແມ່ນຊາວວຽງຈັນ ຊາວພວນຊຽງຂວາງ ຊາວຜູ້ໄທໃນພາກກາງ ຖືກໄລ່ລ່າ ບັງຄັບກວາດຕ້ອນຕີຄ໊ວໜີຈາກບ້ານເກີດເມືອງນອນໃຫ້ໄປອອກແຮງງານສັບພະທຸກ ສ້າງເມືອງບາງກອກ (ກຸງເທບ) ແລະເປັນຂ້ອຍຂ້ານ້ຳໃຊ້ຂອງເຈົ້ານາຍສະຫຍາມ ຢູ່ຝັ່ງຂວາແມ່ນ້ຳຂອງ ພາຍໃຕ້ຄຳເວົ້າຕົວະຍົວະຫຼອກລວງຂອງສະຫຍາມທີ່ວ່າ: **ເຂົ້າໄປເພິ່ງພະບໍລົມມະໂພທິສົມພານ** [2]

.....

*1. ອານາຈັກ ທີ່ຍັງມີກະສັດປົກຄອງ ມີຜືນແຜ່ນດິນ ພ້ອມລະບຽບບໍລິຫານບ້ານເມືອງເປັນຂອງຕົນເອງ ແຕ່ຫາກຢູ່ພາຍໃຕ້ການດູແລຂອງສະຫຍາມ ແຕ່ລະປີຕ້ອງໄດ້ສົ່ງສ່ວຍ ເງິນຄຳ ວັດຖຸເຂົ້າປາ ຊ້າງມ້າ ສາດຕາອາວຸດ ຄົນອອກແຮງງານ ທະຫານໄປຮົບເສິກ ແລ້ວແຕ່ສະຫຍາມຕ້ອງການ. ສະຫຍາມປ່ຽນຊື່ເປັນໄທ ໃນປີ 1939 ຍ້ອນເຫດຜົນທາງການເມືອງ. (ທີ່ຂຽນ "ໄທຍ໌" ແນວນີ້ ກໍເພື່ອໃຫ້ຈຳແນກອອກຈາກຄຳວ່າ "ໄທ" ທີ່ແປວ່າ ຄົນ ໝູ່ຄົນ ພວກຄົນ ຫຼື ກຸ່ມ ຄົນເຊັ່ນ: ໄທເໜືອ ໄທໃຕ້ ໄທບ້ານ ໄທເຮືອນ ໄທແຂກ ໄທວັ້ງວຽງ ໄທຊຽງຂວາງ... ເປັນຕົ້ນ.)*

*2. ກາບເມືອງພວນ ພາກວິຊາພາສາລາວ-ວັນນະຄະດີ ມະຫາວິທະຍາໄລແຫ່ງຊາດ 2001*

ໃນຂະນະທີ່ປະຊາຊົນລາວພວມຕົກຢູ່ໃນສະພາບບ້ານແຕກ ແຊກຂາດ ບ້ານຮ້າງ ເມືອງເພ, ຖືກກົດຂີ່ຂົ່ມເຫັງທາລຸນ ຢ່າງໄຮ້ຄວາມເປັນທຳ ແລະ ຖືກ ກຳຮາບປາບປາມຈາກສະຫຍາມຢູ່ນັ້ນ, ພາຍຫຼັງທີ່ໄດ້ຍຶດເອົາກຳປູເຈຍ ເປັນ ຫົວເມືອງຂຶ້ນຢ່າງເປັນທາງການດ້ວຍ "ສົນທິສັນຍາອາລັກຂາ" (11/8/1863 ) ແລະຫວຽດນາມຢ່າງເປັນທາງການ(6/6/1884)ແລ້ວ ຈັກກະພັດຝຣັ່ງ ນັກລ່າ ອານານິຄົມ(ເມືອງຂຶ້ນ)ຈາກເອີຣົບ ກໍ່ໄດ້ລ່ວງລ້ຳເຂົ້າມາຍຶດເອົາດິນແດນລາວ ທາງຝັ່ງຊ້າຍແມ່ນ້ຳຂອງເລີ່ມດ້ວຍການຍຶດ 12 ຈຸໄຕ(1/1888) ແລະຕໍ່ມາຝຣັ່ງ ກໍ່ໄດ້ບັງຄັບໃຫ້ສະຫຍາມເຊັນສັນຍາໃນວັນທີ 3/10/1893 ໂດຍມີອັງກິດ ເປັນ ຜູ້ຮັບຮູ້ ຕັດແບ່ງດິນແດນ ແລະປະຊາຊົນລາວອອກເປັນສອງສ່ວນຄື: ດິນແດນ ຝັ່ງຂວາແມ່ນ້ຳຂອງ(ພາກອີສານຂອງໄທຍ໌) ຊຶ່ງມີເນື້ອທີ່ປະມານ 2/3 (ຂອງ ອານາຈັກລາວລ້ານຊ້າງ) ເປັນພື້ນທີ່ກ້ຽງພຽງ ແລະມີປະຊາກອນໜາແໜ້ນ ໃຫ້ ເປັນຂອງສະຫຍາມ(6 ປີ ຕໍ່ມາຄົນລາວກໍ່ກາຍເປັນສະຫຍາມ) ສ່ວນດິນແດນ ທາງຝັ່ງຊ້າຍແມ່ນ້ຳຂອງທີ່ເປັນພູຜາປ່າດົງ ພ້ອມດ້ວຍເກາະດອນຕ່າງໆ ຕາມ ລຳແມ່ນ້ຳຂອງຊຶ່ງມີເນື້ອທີ່ປະມານ 1/3 ແລະ ມີປະຊາກອນບໍ່ຫຼາຍນັ້ນ ແມ່ນຂຶ້ນ ກັບອຳນາດການປົກຄອງຂອງຝຣັ່ງເສດ. ປີ 1897 ຝຣັ່ງເສດໄດ້ສ້າງຕັ້ງ **ສະຫະ ພັນອິນດູຈີນ** ທຳອິດມີພຽງຫວຽດນາມ ແລະ ກຳປູເຈຍ ຕໍ່ມາເຖິງ ປີ 1889 ຈຶ່ງ ລວມເອົາລາວ ແລະ ສ່ວນໜຶ່ງຂອງອານາເຂດກວາງເຈົາ ເຊິ່ງຈີນອະນຸຍາດໃຫ້ ຝຣັ່ງເຊົ່າ[3].

ນັບແຕ່ນັ້ນມາຝຣັ່ງເສດກໍ່ຖືວ່າ ອິນດູຈີນເປັນຂອງຝຣັ່ງ, ເປັນສ່ວນໜຶ່ງ ຂອງດິນແດນນອກອານາຈັກຂອງຕົນ. ຝຣັ່ງໄດ້ຈັດຕັ້ງອຳນາດການປົກຄອງໂດຍ **ຄົນຝຣັ່ງມີອຳນາດເຕັມ** ເປັນຜູ້ປົກຄອງສູງສຸດ. ຝຣັ່ງໄດ້ດຳເນີນນະໂຍບາຍ ແບ່ງແຍກເພື່ອປົກຄອງ ໂດຍແບ່ງອິນດູຈີນອອກເປັນ 5 ແຄວ້ນ ຄື: ອານາມ, ຕົງແກ້ງ, ໂກແຊງຊີນ(ຫວຽດນາມ), ລາວ ແລະກຳປູເຈຍ ຊຶ່ງມີຮູບແບບການ ປົກຄອງແຕກຕ່າງກັນ ແນໃສ່ສ້າງຄວາມຂັດແຍ່ງບາດໝາງ ແບ່ງແຍກຄົນຫວຽດ ນາມດ້ວຍກັນ ແລະລະຫວ່າງລາວ-ຫວຽດນາມ-ກຳປູເຈຍ.

.....

*3. ປະຫວັດສາດ ການຮ່ວມສຳພັນສາມັກຄີສູ້ຮົບພິເສດ ລະຫວ່າງກອງທັບປະຊາຊົນລາວ ແລະ ກອງທັບປະຊາຊົນຫວຽດນາມ (1945-1975 ) ສະພາວິທະຍາສາດການທະຫານ ກະຊວງປ້ອງ ກັນປະເທດ ສປປ.ລາວ, ໜ້າ 9. ພິມປີ 2011*

ສະເພາະຢູ່ລາວ ຝຣັ່ງກໍ່ປະຕິບັດການແບ່ງແຍກຄື: ຍົກດິນແດນເຂດ ສິບສອງພັນນາລີ້ຊຶ່ງມີເມືອງໃຫຍ່ຊຽງຮຸ່ງ ຊຽງລາບ ເມືອງຢອງ ຊຽງຕຸງ ໃຫ້ແກ່ ຈີນ ຕາມສັນຍາຝຣັ່ງ-ຈີນ 20/6/1895, ເອົາສິບໂມ້, ເມືອງແສນ ເມືອງກະຢາ, ເມືອງກອນກວາງ, ເມືອງໄລ່, ເມືອງຫຼ້າ, ເມືອງແຖນ(ແຖງ/ດຽນບຽນຟູ) ໄປຂຶ້ນ ກັບແຄວ້ນຕົ໋ງແກງ, ອັນທີ 3/10/1904 ຝຣັ່ງກໍ່ໄດ້ຕັດແບ່ງດິນລາວສ່ວນໜຶ່ງຄື: ເມືອງຊຽງແຕງ ລົມພັດ ເວີນໄຊ ແສນປາງ ໄປຂຶ້ນກັບກຳປູເຈຍ, ແລະອີກສ່ວນ ໜຶ່ງຄື: ບ້ານແມ່ທອດ ຢາລາຍ ກອນຕູມ ໄປຂຶ້ນກັບແຄວ້ນອານາມ(ຫວຽດນາມ) ຕາມລຳພັງໃຈໂດຍບໍ່ໄດ້ຫ້ວຊາຕໍ່ປະຫວັດສາດເຊື້ອຊາດເຜົ່າພັນ ແລະ ແນວຄິດ ຈິດໃຈຂອງປະຊາຊົນລາວແຕ່ປະການໃດໆເລີຍ[4] ນັບແຕ່ແຂວງວຽງຈັນລົງໃຕ້ ແມ່ນຂຶ້ນກັບຝຣັ່ງໂດຍກົງ ສ່ວນແຂວງຫຼວງພະບາງໄດ້ຮັບອະພິສິດ ເປັນລັດ **ອາລັກຂາ** ຍັງຄົງໃຫ້ມີກະສັດປົກຄອງເໝືອນເດີມເພື່ອເອົາໃຈເຈົ້າຊີວິດລາວ ຫຼວງພະບາງ.

ເຖິງວ່າຈະຖືກກຳຮາບປາບປາມຢ່າງໜັກໜ່ວງໂຫດຮ້າຍທາລຸນປານໃດ ກໍ່ຕາມ ປະຊາຊົນລາວຜູ້ຮັກຊາດກໍ່ບໍ່ອ່ອນຍອມ ໄດ້ພະຍາຍາມປຸກລະດົມກັນ ປະສານສາມັກຄີກັນລຸກຂຶ້ນ ດຳເນີນການຕໍ່ສູ້ຕ້ານການຮຸກຮານຂອງຕ່າງຊາດ ເລື້ອຍໆມາເພື່ອຄວາມເປັນເອກະລາດ ພາຍໃຕ້ຂະບວນການຕ່າງໆຊຶ່ງເກີດຂຶ້ນ ໃນທ້ອງຖິ່ນຕ່າງໆເຊັ່ນ: ທີ່ເມືອງສອງຄອນ ແລະ ເຂັມມະລາດ (ສະຫວັນນະເຂດ) ຈຳປາສັກ ແລະ ໃນຫຼາຍເມືອງທາງຝັ່ງຂວາແມ່ນ້ຳຂອງ (ຢູ່ພາກອີສານຂອງໄທ) ນັບແຕ່ ປີ 1900 ເປັນຕົ້ນມາ. ຂະບວນການຕໍ່ສູ້ກູ້ຊາດຂອງປະຊາຊົນລາວນີ້ ໄດ້ຮັບການຍ້ອງຍໍວ່າ **"ຂະບວນຜູ້ມີບຸນ"**

ປະຊາຊົນລາວພາຍໃຕ້ການນຳພາຂອງພັກຄອມມູນິດອິນດູຈີນ ນັບແຕ່ປີ (1930) ຕໍ່ມາແມ່ນຄະນະພັກແຄວ້ນລາວ ແລະ ພັກປະຊາຊົນລາວ (1955) ພັກ ປະຊາຊົນປະຕິວັດລາວ(ໃນປັດຈຸບັນ) ໄດ້ດຳເນີນການຕໍ່ຕ້ານຢ່າງອົງອາດກ້າ ຫານພາຍໃຕ້ທິດຊີ້ນຳ **ຕໍ່ຕ້ານຍຶດເຍື້ອຍາວນານແບບປວງຊົນແລະຮອບດ້ານ**[5]

.....

*4. ປະຫວັດສາດລາວ ກະຊວງຖະແຫຼງຂ່າວ ແລະວັດທະນະທຳ 2000 ໜ້າ 514-515*

ສົງຄາມໂລກຄັ້ງທີສອງລະເບີດຂຶ້ນ (1939-45) ພວກຟາດຊິດຍີ່ປຸ່ນ ໄດ້ເຂົ້າມາຂັບໄລ່ ແລະໂຄ່ນລົ້ມອຳນາດການປົກຄອງຂອງຝຣັ່ງ ທົ່ວອິນດູຈີນ (3/1945). ແຕ່ວ່າຟາດຊິດຍີ່ປຸ່ນຊ້ຳພັດປະລາໄຊໃຫ້ແກ່ຝ່າຍສຳພັນທະມິດໃນ ເວລາຕໍ່ມາ ສວຍເອົາໂອກາດນັ້ນ ປະຊາຊົນລາວຜູ້ຮັກຊາດໄດ້ເຂົ້າຮ່ວມຂະບວນ ການ **"ລປລ"** (ລາວເປັນລາວ)ຢ່າງຟົດຟື້ນ, ຄະນະກຳມະການລາສະດອນ (ປະຊາຊົນ) ໄດ້**ປະກາດເອກະລາດແຫ່ງຊາດ**ໃນວັນທີ 12 ຕຸລາ 1945 ລວມ ດິນແດນລາວທີ່ເຄີຍແຕກແຍກເຂົ້າເປັນອັນໜຶ່ງອັນດຽວ, ຈັດຕັ້ງ **ລັດຖະບານ ລາວອິດສະລະ** ໂດຍມີ ພະຍາຄຳມ້າວ ວິໄລ ເປັນນາຍົກລັດຖະມົນຕີ ໃນນີ້ມີ ສະເດັດເຈົ້າສຸພານຸວົງ ເປັນລັດຖະມົນຕີ ກະຊວງການຕ່າງປະເທດ, ຈັດຕັ້ງ ສະພາປະຊາຊົນ ແລະປະກາດໃຊ້ລັດຖະທຳມະນູນປົກຄອງປະເທດ.

ປະຊາຊົນລາວຫາກໍ່ໄດ້ຊື່ນຊົມກັບຄຳວ່າ **"ເອກະລາດ"** ບໍ່ພໍທໍ່ໃດເດືອນ ພວກຝຣັ່ງໃຈດຳອຳມະຫິດ ໂດຍການສະໜັບສະໜູນ ຂອງ**ອາເມຣິກາ** ຊ້ຳພັດ ກັບຄືນມາເພື່ອຢຶດຄອງລາວອີກເທື່ອໃໝ່ນັບແຕ່ເດືອນທັນວາ 1945. ພວກເຂົາ ດຳເນີນການບຸກລຸກຮຸກຮານ ແລະກຳຮາບປາບປາມຂະບວນການຕໍ່ສູ້ຕ້ານຢັນ ຂອງປະຊາຊົນລາວຢ່າງໂຫດຮ້າຍປ່າເຖື່ອນທີ່ສຸດ ໂດຍສະເພາະເຫດການຕໍ່ສູ້ ປ້ອງກັນເມືອງທ່າແຂກ ແຂວງຄຳມ່ວນໃນວັນທີ 21 ມີນາ 1946 ເຮັດໃຫ້ປະຊາ ຊົນລາວລົ້ມຫາຍຕາຍຈາກຈຳນວນມາກມາຍ ປວງຊົນລາວຈຶ່ງໄດ້ຖືເອົາມື້ນັ້ນ ເປັນ ***"ວັນຄຽດແຄ້ນຝຣັ່ງ"*** ຝຣັ່ງໄດ້ເຂົ້າຢຶດເອົາເມືອງວຽງຈັນ ຄະນະລັດຖະບານ ລາວອິດສະລະຈຶ່ງໄດ້ໄປລີ້ໄພຢູ່ໄທ ແລະ ສືບຕໍ່ສ້າງກຳລັງມະຫາຊົນຕໍ່ຕ້ານ ຝຣັ່ງ.

25/10/1946 ພະຍາຄຳມ້າວ ວິໄລ ປະກາດຍຸບຕໍ່ລັດຖະບານລາວ ອິດສະລະ ແລ້ວຈຳນວນສ່ວນຫຼາຍໃນສະມາຊິກລັດຖະບານ ກັບຄືນມາຍອມ ຮັບໃຊ້ຝຣັ່ງ. ສ່ວນສະເດັດເຈົ້າສຸພານຸວົງ ປະກາດສືບຕໍ່ດຳເນີນການຕໍ່ຕ້ານຝຣັ່ງ ປົດປ່ອຍປະເທດຊາດ ຈົນກວ່າຈະໄດ້ຮັບໄຊຊະນະ.

.....

*5. ໄກສອນ ພົມວິຫານ 25 ປີແຫ່ງການຕໍ່ສູ້ ແລະໄຊຊະນະຂອງພັກ ປະຊາຊົນປະຕິວັດລາວ ສຳນັກພິມຈຳໜ່າຍ ສປປ.ລາວ 1980 ໜ້າ 14*

ເຖິງວ່າບໍ່ສາມາດຟື້ນຟູກົງຈັກ ອຳນາດການປົກຄອງແບບເກົ່າຂຶ້ນມາ ໄດ້, ຍ້ອນວ່າປະຊາຊົນລາວໄດ້ປະກາດເອກະລາດ ຈັດຕັ້ງລັດຖະບານຂອງຕົນ ແລະ ມີລັດຖະທຳມະນູນປົກຄອງປະເທດ ຊຶ່ງຈະແຈ້ງຕໍ່ສາຍຕາຊາວໂລກແລ້ວ, ແຕ່ພວກເຂົາກໍ່ໄດ້ອອກເລ່ກົນອຸບາຍ ຕົວະຍົວະຫຼອກລວງປະຊາຊົນລາວ ແລະ ຊາວໂລກດ້ວຍສັນຍາ " ໂມດຸດວິວັງດີ " ກັບເຈົ້າຊີວິດສີສະຫວ່າງວົງ ຄືການ **ສ້າງຕັ້ງປະເທດລາວເອກະລາດໃນເຄືອສະຫະພັນອິນດູຈີນ**[6] ແລ້ວຊິ້ຈ້າງຈອບ ອອຍ ແລະຈັດຕັ້ງຜູ້ທີ່ນິຍົມຝຣັ່ງຂຶ້ນເປັນ**ລັດຖະບານຫຸ່ນ**ໃນວັນທີ 10 ກໍລະກົດ 1947 ມີເຈົ້າສຸວັນນະລາດເປັນນາຍົກລັດຖະມົນຕີແລ້ວສ້າງ*"ລະບຽບການໃໝ່"* ໂດຍມີຝຣັ່ງເປັນທີ່ປຶກສາບັນຊາການ ອັນໄດ້ເຮັດໃຫ້ຝຣັ່ງສາມາດສືບຕໍ່ປົກຄອງ ລາວໃນຮູບເມືອງຂຶ້ນແບບໃໝ່ ແລະຕໍ່ມາຝຣັ່ງກໍ່ໄດ້ເຊັນສັນຍາ " **ມິດຕະພາບ ແລະ ຮ່ວມສຳພັນ** " ກັບລັດຖະບານຫຸ່ນລາວຈຳນວນ 23 ສະບັບ.[7]

ຂະບວນການລາວຮັກຊາດຕໍ່ຕ້ານຝຣັ່ງ ແລະ ພວກກຳອຳນາດການ ປົກຄອງຫຸ່ນຂາຍຊາດ ນັບມື້ນັບແຜ່ຂະຫຍາຍອອກຢ່າງແຂງແຮງໄປທົ່ວປະເທດ. ສະເດັດເຈົ້າສຸພານຸວົງ ແລະ ຄະນະນຳຜູ້ຮັກຊາດທີ່ໄປລີ້ໄພຢູ່ປະເທດໄທ ໄດ້ກັບ ຄືນມາລາວແບບປິດລັບ 18/5/1947 ມີການຈັດຕັ້ງກຳລັງປະກອບອາວຸດຂຶ້ນ ໃນຫຼາຍທ້ອງຖິ່ນ ແລະ ສ້າງຕັ້ງກອງທັບປົດປ່ອຍປະຊາຊົນລາວຂຶ້ນ ໃນວັນທີ 20 ມັງກອນ 1949 ແລະ ສາມາດສ້າງເຂດທີ່ໝັ້ນຕໍ່ຕ້ານໃນສອງແຂວງ ຄື: ຊຳເໜືອ ແລະຜົ້ງສາລີ. ເຖິງວັນທີ 13 ສິງຫາ 1950 ກອງປະຊຸມໃຫຍ່ຜູ້ແທນ ແນວລາວຕໍ່ຕ້ານທົ່ວປະເທດ ໄດ້ຈັດຕັ້ງອົງການແນວໂຮມແຫ່ງຊາດທີ່ຊື່ " **ແນວ ລາວອິດສະລະ** " ແລະ " **ລັດຖະບານລາວຕໍ່ຕ້ານ** "[8] ພ້ອມທັງປະກາດດຳເນີນ ໂຄງການການເມືອງ 12 ຂໍ້.

.....

*6. ປະຫວັດສາດລາວ ກະຊວງຖະແຫຼງຂ່າວ ແລະວັດທະນະທຳ 2000 ໜ້າ 737*
*7. ປະຫວັດສາດການພົວພັນການທູດລາວ ສະຖາບັນການຕ່າງປະເທດ 2009 ໜ້າ 24.*
*8. ລັດຖະບານລາວຕໍ່ຕ້ານມີ: ສະເດັດເຈົ້າ ສຸພານຸວົງ, ທ່ານພູມີ ວົງວິຈິດ, ທ່ານໄກສອນ ພົມວິຫານ, ທ່ານໜູຮັກ ພູມສະຫວັນ, ທ່ານເຈົ້າສຸກ ວົງສັກ, ທ່ານສີທົນ ກົມມະດຳ ແລະ ທ່ານໄຟດ່າງ ລໍເບຼຢາວ.*

ການຕໍ່ສູ້ຕ້ານຝຣັ່ງໂດຍມີການປະສານສົມທົບກັບການຕໍ່ສູ້ຂອງປະຊາຊົນ ຫວຽດນາມ ແລະ ກຳປູເຈຍອ້າຍນ້ອງພາຍໃຕ້ **ພັນທະພາບລາວ-ຫວຽດນາມ-ຂະແມ** ທີ່ສ້າງຂຶ້ນໃນ 11/3/1951 ຍິ່ງຮຸນແຮງດຸເດືອດຂັ້ງວຂາດ. ສຸດທ້າຍຝຣັ່ງ ປະລາໄຊຢ່າງໜັກຢູ່ສະໜາມຮົບດຽນບຽນຟູ 7/5/1954. ຝຣັ່ງຍອມເຊັນສັນຍາ ຢູ່ເຊີແນວ 20/7/1954 **ຮັບຮູ້ເອກະລາດ ອຳນາດອະທິປະໄຕ ແລະ ແຜ່ນດິນ ອັນຄົບຖ້ວນຂອງ 3 ປະເທດລາວ ຫວຽດນາມ ກຳປູເຈຍ, ຮັບຮູ້ຝ່າຍປະເທດ ລາວ ເປັນກຳລັງການເມືອງຖືກຕ້ອງຕາມກົດໝາຍ ແລະ ມີເຂດທີ່ໝັ້ນຂອງຕົນ ສອງແຂວງຄື: ຊຳເໜືອ ຜົ້ງສາລີ. ຝຣັ່ງຍິນດີຖອນກຳລັງຂອງຕົນອອກຈາກ ອິນດູຈີນຢ່າງບໍ່ມີເງື່ອນໄຂ ເພື່ອປ່ອຍໃຫ້ປະຊາຊົນອິນດູຈີນແກ້ໄຂບັນຫາພາຍ ໃນ ແລະສ້າງຄວາມຖືກຕ້ອງປອງດອງຊາດ.**

ແຕ່ແລ້ວ ຈັກກະພັດອາເມຣິກາຊ້ຳພັດກະໂດດເຂົ້າມາແທນຝຣັ່ງ ໂດຍ ໄດ້ບັງຄັບໃຫ້ຝຣັ່ງເຊັນ**ແຈ້ງການຮ່ວມອາເມຣິກາ-ຝຣັ່ງ** ທີ່ວໍຊິງຕັນວັນທີ 29/ 9/1954 ເພື່ອມອບໝາຍໃຫ້ອາເມຣິກາເປັນຜູ້ສືບຕໍ່ເຝິກແອບ ແລະ ຊ່ວຍເຫຼືອ ໂດຍກົງ ແກ່ກອງທັບຣາຊະນາຈັກລາວຢ່າງຖືກຕ້ອງຕາມກົດໝາຍ. ຈາກນັ້ນ ອາເມຣິກາກໍ່ດຳເນີນກົນອຸບາຍຕ່າງໆເພື່ອໃຫ້ພວກລູກແຫ້ງຕົນມືຂອງຝຣັ່ງ ທີ່ ທັນມານິຍົມອາເມຣິກາຂຶ້ນກຳອຳນາດການປົກຄອງ, ແລ້ວຄວບຄຸມບັນຊາພວກ ຫຸ່ນທີ່ເປັນລູກແຫ້ງຕົນມືເຫຼົ່ານັ້ນໃນຖານະ **ທີ່ປຶກສາ** ແຊກແຊງ ຮຸກຮານລາວ ແລະ ເພີ່ມທະວີສົງຄາມໃນລາວ ກໍ່ກຳທຳເຂັນລົ້ນຟ້າເຫຼືອແຜ່ນດິນຕໍ່ປະຊາຊົນ ລາວ ພາຍໃຕ້ຄຳເວົ້າຫຼອກລວງບ້າອຳນາດກະຫາຍສົງຄາມທີ່ວ່າ ***"ຕ້ານການ ແຜ່ຂະຫຍາຍຂອງລັດທິກອມມູຍນິດ ຢູ່ອາຊີອາຄະເນ"***

ແຕ່ໃດໆມາຄົນລາວ ວັດທະນະທຳລາວ ລ້ວນແຕ່ຖືກຍົກຍ້ອງໃຫ້ກຽດ ແມ່ຍິງ ຍ້ອນແມ່ຍິງເປັນຜູ້ມີບົດບາດສຳຄັນຕໍ່ຄອບຄົວ ຕໍ່ຊຸມຊົນ ແລະ ຕໍ່ບ້ານ ເມືອງ. ການຍອມຮັບນັບຖືໃຫ້ກຽດ ແລະ ຍ້ອງຍໍສັນລະເສີນແມ່ຍິງນັ້ນ ສະແດງ ອອກໃຫ້ເຫັນຢ່າງຈະແຈ້ງໃນການໃຊ້ຄຳວ່າ **"ແມ່"** ນຳໜ້າຫຼາຍສິ່ງຫຼາຍຢ່າງ ທັງ ທີ່ເປັນອັນໃຫຍ່ ແລະເລັກໆນ້ອຍໆເຊັ່ນ: ແມ່ທໍລະນີ (ຜືນແຜ່ນດິນ) ແມ່ນ້ຳ ແມ່ ທັບ (ຜູ້ບັນຊາທະຫານຂັ້ນສູງ) ແມ່ເຮືອນ ແມ່ເຜົ້າ ແມ່ຕໍ່ ແມ່ເປ້ົາ (ມົດທີ່ເປັນຫົວ

ໜ້າຝູງ) ແມ່ຂັ້ນໄດ ແມ່ຄີໄຟ (ໄມ້ຂອບເຕົາໄຟ)... ເປັນຕົ້ນ. ແມ່ຍິງເປັນຜູ້ນຳພາ ໃນການປະຕິບັດຮີດຄອງປະເພນີຫຼາຍຢ່າງທີ່ກ່ຽວກັບຄວາມເຊື່ອຄື ເປັນຜູ້ຕິດຕໍ່ ພົວພັນກັບຜີ ຫຼື ຈິດວິນຍານຂອງປູ່ຍ່າຕາຍາຍເຊັ່ນ: ນາງທຸງມ, ຜີໄທ້. ໃນການ ສືບເຊື້ອສາຍວົງຕະກຸນ ຜູ້ຊາຍຕ້ອງໄດ້ແຕ່ງຂັນໝາກ(ແນວຂົບຄ້ຽວຂອງແມ່ຍິງ) ໄປ "ສູ່ຂໍ ແລະ ແຕ່ງເອົາແມ່ຍິງ" ມາເປັນເມຍ ເພື່ອໃຫ້ກຳເນີດລູກຫຼານ. ຖ້າ ເປັນເຂີຍສູ່ຄ່າດອງກໍ່ບໍ່ສູງ ແຕ່ຖ້າເອົາໃພ້ເມືອເຮືອນລ້ຽງປູ່ຍ່າຄ່າດອງກໍ່ແຮ່ງສູງ ຂຶ້ນຫຼາຍທົບ. ຊາຍໜຸ່ມທີ່ມັກສາວແຕ່ຍັງບໍ່ທັນມີຄວາມສາມາດແຕ່ງຜູ້ສາວ ມາ ເປັນເມຍໄດ້ກໍ່ຈຳຕ້ອງໄປເປັນ " ບ່າວ " (ເປັນຜູ້ຮັບໃຊ້ເຮັດໄຮ່ ທຳນາ ເພື່ອໃຫ້ ພໍ່ແມ່ຜູ້ສາວຍິນຍອມພ້ອມໃຈຍົກລູກສາວໃຫ້) ແລະອື່ນໆ...

ແຕ່ວ່າ ນັບແຕ່ປະເທດສູນເສຍເອກະລາດ ຕົກເປັນເມືອງຂຶ້ນຂອງສະ ຫຍາມ ແລະ ພາຍໃຕ້ແອກປົກຄອງທີ່ໂຫດຮ້າຍປ່າເຖື່ອນຂອງພວກລ່າເມືອງຂຶ້ນ ຝຣັ່ງ-ອາເມຣິການັ້ນ ບໍ່ພຽງແຕ່ຊັບໃນດິນສິນໃນນ້ຳເຄື່ອງຄ້ຳຂອງຄູນ ຖືກພວກ ເຂົາຂຸດຄົ້ນປຸ້ນສະດົມ ແລະເກັບກວາດເອົາໄປ, ປະຊາຊົນລາວຍັງຂາດສິດທິ ເສລີພາບ ແລະ ອິດສະລະພາບ, ຮີດຄອງປະເພນີວັດທະນະທຳຖືກທຳລາຍ, ກຽດສັກສີຖືກຢຽບຢ່ຳ, ຖືກກົດຂີ່ຂົ່ມເຫັງຊູດຮີດ ແລະ ຖືກປາບປາມ ແລະເຂັ່ນ ຂ້າຮາວີຢ່າງຫາລຸນໂຫດຮ້າຍປ່າເຖື່ອນ.

ຜູ້ທີ່ໄດ້ຮັບເຄາະຮ້າຍທີ່ສຸດຖືກຢຽບຢ່ຳທຳລາຍທີ່ສຸດເຈັບແສບທໍລະມານ ທີ່ສຸດກໍ່ແມ່ນແມ່ຍິງ. ຜູ້ຮຸກຮານໄດ້ກໍ່ກຳທຳເຂັນອັນລົ້ນຟ້າເຫຼືອແຜ່ນດິນ ຫຼາຍ ຮູບແບບຕໍ່ແມ່ຍິງລາວເຊັ່ນ: ບັງຄັບຂົ່ມເຫັງກວາດຕ້ອນໃຫ້ຍ້າຍຖິ່ນຖານບ້ານຊ່ອງ, ຍ້າຍຖິ່ນທຳມາຫາກິນ, ຖືກຂົ່ມຂືນທຳຊຳເລົາ, ບັງຄັບຂົ່ມເຫັງໃຫ້ເປັນນາງບຳເລີ, ໃຫ້ຮັບໃຊ້, ເກັບເກນ, ບັງຄັບເອົາຜູ້ຊາຍທີ່ເປັນລູກ-ຜົວໄປເປັນກຸລີ ອອກແຮງ ງານສັບພະທຸກ,ໄປເປັນທະຫານເຮັດໃຫ້ພາລະວຽກງານທັງໝົດໃນຄອບຄົວ ເຊັ່ນ: ລ້ຽງລູກເບິ່ງແຍງພໍ່ແມ່ຍາດພີ່ນ້ອງ, ການຜະລິດ, ວຽກເຮືອນການຊານ, ວຽກ ຂອງຊຸມຊົນ ແລະຂອງບ້ານເມືອງ ຕົກຢູ່ເທິງບ່າເທິງຫຼັງຂອງແມ່ຍິງຜູ້ຢູ່ ທາງບ້ານທັງໝົດ. ເມື່ອລູກຜົວລົ້ມຫາຍຕາຍຈາກ ແມ່ຍິງກໍ່ກາຍເປັນແມ່ຮ້າງນາງ ໝ້າຍ, ລ້ຽງລູກກຳພ້າ.

ໃນເວລາຝຣັ່ງຕີຍຶດເອົາເມືອງທ່າແຂກໃນວັນທີ 21/3/1946 ພວກເຂົາ ໄດ້ເຂັ່ນຂ້າຊາວທ່າແຂກປະມານສອງພັນກວ່າຄົນ ໃນນັ້ນຫຼາຍກວ່າໝູ່ກໍ່ແມ່ນ ແມ່ຍິງ ຊຶ່ງບາງຄົນກໍ່ພວມຖືພາ ແລະ ເດັກນ້ອຍ. ພວກເຂົາເຂັ່ນຂ້າຢ່າງໂຫດຫ້ຽມ ອຳມະຫິດ ດ້ວຍການເອົາກະບີ້ແທງທ້ອງແມ່ມານ ຈັບເດັກນ້ອຍຍັດໃສ່ຄົກເຂົ້າ ແລ້ວຕຳ, ຈັບຍັດໃສ່ໄຫ່ປ່ານມັດປາກແລ້ວຖິ້ມລົງນ້ຳສ້າງ, ໃຊ້ປືນຍິງກວາດໃສ່ ປະຊາຊົນຜູ້ບໍລິສຸດແລ້ວຖິ້ມຊາກສົບລົງນ້ຳຂອງ ຈົນນ້ຳຂອງກາຍເປັນສີເລືອດ.

ແມ່ຍິງຫຼາຍຄົນ ໄດ້ພົບເຫັນສັດຕູກົດຂີ່ຂົ່ມເຫັງ ທຸບຕີທໍລະມານ ແລະ ຂ້າລູກຂ້າຜົວ ຫຼື ຍາດພີ່ນ້ອງຂອງຕົນ ຫຼື ພະນັກງານປະຕິວັດພື້ນຖານ ຊຶ່ງໃນນັ້ນ ກໍ່ມີທັງແມ່ຍິງຢ່າງໂຫດຫ້ຽມອຳມະຫິດ ສະຫຍົດສະຫຍອງຕໍ່ໜ້າຕໍ່ຕາ ຕົວຢ່າງ ສະເພາະຢູ່ແຂວງວຽງຈັນ ລະຫວ່າງປີ 1964-74 ມີຫຼາຍຄົນຖືກສັດຕູເຂັ່ນຂ້າ ຢ່າງໂຫດຫ້ຽມອຳມະຫິດເຊັ່ນ: ເຂດເມືອງເຟືອງ 79 ຄົນ ຖືກຂ້າຕາຍມື້ດຽວ ຢູ່ ບ້ານນາຖໍ່ 52 ຄົນຖືກຂ້າມື້ດຽວ ຢູ່ບ້ານນາຕາດ, ບ້ານນາອ່າງ 26 ຄົນ ຖືກຂ້າ ມື້ດຽວ, ໃນນັ້ນຄອບຄົວນາງອຳຄາ 6 ຄົນ ທັງພໍ່ແມ່ ແລະລູກຕາຍໝົດ; ນາງ ອຳຄາ ສັດຕູມັດແຂວນຄໍໃສ່ງ່ຳໄມ້ ແລ້ວໃຊ້ກະບີ້ແທງທ້ອງ, ເອົາສາກຕຳໜາກ ພິກແດງທັ່ງເຂົ້າຮູອະໄວຍະວະເພດ, ນາງພວມຖືພາ 7 ເດືອນ ລູກທັ່ງອອກມາ ຕາຍພ້ອມແມ່, ຈາກນັ້ນພວກເຂົາກໍ່ຂ້າພໍ່ ແມ່ ຜົວ ແລະລູກນ້ອຍຂອງນາງອີກ ຜູ້ໜຶ່ງຕື່ມ.

ຢູ່ເຂດເມືອງແມດກາສີ ເຂດນ້ຳຮອງ 10 ກວ່າຄົນກໍ່ຖືກຂ້າ; ເຂດເມືອງ ທຸລະຄົມບ້ານຖືກຈູດໝົດ 8 ບ້ານ, 3 ຄອບຄົວຖືກຂ້າກ້ຽງ ລວມຄົນຕາຍເປັນ 100; ເຂດເມືອງໄຊທານີບ້ານດົງບັງ 9 ຄົນຖືກຂ້າມື້ດຽວ, ໃນນັ້ນມີແມ່ຍິງ 1 ຄົນ ( ນາງທອງສາ/ແມ່ຕູ້ມູນ ຖືກຂ້າຕາຍກາງເວັນເວລາໄປລ້ຽງຄວາຍຢູ່ຕີນບ້ານ ) ບ້ານນາພອກ 17 ຄົນຖືກຂ້າລ້ຽງຂຸມດຽວ, ບ້ານທ່າດິນແດງ 4 ຄົນ ອ້າຍເອື້ອຍ ນ້ອງ (ແມ່ຍິງ 1 ຄົນ) ກໍ່ຖືກຂ້າລ້ຽງຂຸມດຽວ, ບ້ານນາຫອຍ 7 ຄົນ ແມ່ຍິງ 1 ຄົນ, ນາງໂຍດ ບ້ານນາພົງ ເຂດລ້ອງສັງ ຖືກຍິງຕາຍຢູ່ເທິງເຮືອນ, ແມ່ເຖົ້າປຸ່ນບ້ານນາ ຫອຍປັງ ເຂດລ້ອງສັງ ສັດຕູແຂວນຄໍໃສ່ຂື່ເຮືອນແລ້ວເອົາກະບີ້ແທງ ເຜົາໜາກ ພິກແຫ້ງອູດຈົນຕາຍ, ສ່ວນຜູ້ຊາຍອີກ 7 ຄົນ ບໍ່ຖືກຍິງດ້ວຍປືນ, ບໍ່ຖືກແທງດ້ວຍ

ກະບີ່ແຕ່ຖືກເລື່ອຍຕັດຄໍຈົນຕາຍ, ນາງບັງອອນ ບ້ານນ້ຳປ້ງ ເມືອງຮົ່ມ ເຂົາຂ້າ ຜົວລາວແລ້ວ ເຂົາກໍ່ເອົາທະຫານເປັນຮ້ອຍມາຂົ່ມຂືນນາງ 7 ມື້ 7 ຄືນ ຈົນນາງ ຕາຍກັບບ່ອນນອນ, ນາງບຸນ ບ້ານວັງຫຼວງ ເຂດລ້ອງຊານ ກໍ່ຄືກັນທະຫານສັດຕູ 20 ກວ່າຄົນຂົ່ມຂືນນາງຈົນຕາຍກັບທີ່ ແລ້ວເຂົາກໍ່ບັງຄັບ ໃຫ້ຜົວລາວຮ່ວມເພດ ກັບຊາກສົບ. ຜົວລາວບໍ່ຍອມກໍ່ຖືກຂ້າຕາຍລົງຄຽງຂ້າງກັນ. ນາງສີ ພ້ອມຜົວ (ອ້າຍດາ)ບ້ານນາພົ້ງເຂດລ້ອງຊານຖືກຂ້າຕາຍ ລູກຫຼ້າຂອງນາງບໍ່ຮູ້ວ່າແມ່ຕາຍ ຄາມມາກິນນົມແມ່ ທີ່ນອນຈົມຢູ່ກອງເລືອດ; ແມ່ພອນ ບ້ານນາຍາງ ເມືອງ ນາຊາຍທອງ ຖືກສັດຕູບັງຄັບເອົາເປັນເມຍ ລາວບໍ່ຍອມຍ້ອນຊື່ສັດຕໍ່ຜົວຜູ້ຢູ່ປ່າ ສັດຕູເອົາຈັກສັບຫົວຈົນຕາຍ[9]... **ພິເສດໃນຈຳນວນຜູ້ທີ່ຖືກລະເບີດເຜົາຜານ ຕາຍພາບດຽວ 374 ຄົນ ຢູ່ຖ້ຳປີວ ເມືອງຄຳ ແຂວງຊຽງຂວາງ ໃນວັນທີ 24/11/ 1968 ນັ້ນ ສ່ວນຫຼາຍກໍ່ແມ່ນເດັກນ້ອຍ ແມ່ຍິງ ແລະ ຜູ້ເຖົ້າ.**

ໃນເວລາສັດຕູຕີບຸກເຂົ້າບຸ່ງດຍຶດຊຽງຂວາງປີ 1968-69 ຊາວຊຽງຂວາງ ຫຼາຍພັນຄອບຄົວຈຳເປັນຕ້ອງອົບພະຍົບຫຼົບໜີຈາກເຮືອນຊານບ້ານຊ່ອງ ດ້ວຍ ການຍ່າງຍາມກາງຄືນ ຂຶ້ນພູລົງຫ້ວຍ ບຸປ່າຜ່າດົ່ງ ໄລຍະທາງຫຼາຍສິບກິໂລແມັດ ຂະນະທີ່ຝົນຕົກລົມເພື່ອໄປລີ້ໄພຢູ່ຫວຽດນາມໃນເວລານັ້ນ ແມ່ຍິງຫຼາຍຄົນເກີດ ລູກກາງທາງ ບາງຄົນກໍ່ເຈັບໄຂ້ໄດ້ປ່ວຍ ບາງຄົນກໍ່ພັດພາກຈາກຫຼົງກັບລູກເຕົ້າ, ແມ່ບາງຄົນກໍ່ໂສສຸດບໍ່ຢາກເປັນພາລະ ເຖິງຂັ້ນຂໍໃຫ້ລູກຂ້າຕົນເອງຖິ້ມ [10] ແລະ ຫຼາຍຄົນກໍ່ລົ້ມຫາຍຕາຍຈາກ. ຊາວຊຽງຂວາງອີກສ່ວນໜຶ່ງກໍ່ຖືກກວາດຕ້ອນໄປ ຢູ່ເຂດຄວບຄຸມຂອງຝ່າຍວຽງຈັນ. ການດຳລົງຊີວິດໃນຖານະຊາວອົບ ພະຍົບນັ້ນ ບໍ່ວ່າຢູ່ແຫ່ງໃດກໍ່ເປັນຄວາມທຸກທໍລະມານ ຊຶ່ງແມ່ຍິງ, ເດັກນ້ອຍຊາວຊຽງຂວາງ ທຸກຄົນທີ່ປະສົບພົບພໍ້ ບໍ່ມີວັນຫຼົງລືມໄດ້. ຮູບພາບ ແລະ ສຽງຮ້ອງໄຫ້ລະທົມທຸກ ຂອງແມ່ຍິງຊາວອົບພະຍົບ ທີ່ກອງກັນຢູ່ສາລາພັນທ້ອງຂ້າງພະທາດຫຼວງວຽງ ຈັນໃນປີນັ້ນ ກໍ່ເຮັດໃຫ້ຜູ້ທີ່ໄດ້ພົບເຫັນຈົດຈຳບໍ່ມີວັນລືມເຊັ່ນກັນ.

.....

*9. ບົດເລົ່າມູນເຊື້ອ "ການເຄື່ອນໄຫວປິດລັບ ທີ່ເຂດລ້ອງສັນ ລ້ອງຕອນ" ປ້າອີ ກຸນລະວົງ , ກອງປະຊຸມສຳມະນາ 60 ປີ ສູ້ຮົບມີໄຊ ໃຕ້ຮົ່ມທຸ່ງຂອງພັກ ໂອກາດຄົບຮອບ 60 ປີ ກອງທັບປະຊາຊົນລາວ 8-9 ມັງກອນ 2009 ໜ້າ 117-126*

ທັງໝົດເຫຼົ່ານັ້ນ ມັນໄດ້ເຮັດໃຫ້ແມ່ຍິງຕົກລະກຳລຳບາກ ທຸກທໍລະມານ ແສນສາຫັດທັງທາງດ້ານຮ່າງກາຍ ແລະ ຈິດໃຈ ເຮັດໃຫ້ມີຄວາມເຈັບປວດ ຂົມຂື່ນ ເຈັບແຄ້ນແໜ້ນໃຈຢ່າງໃຫຍ່ຫຼວງ ຊຶ່ງບໍ່ສາມາດຈະພັນລະນານັບໄດ້. ສຽງຮ້ອງໄຫ້ຂອງແມ່ຍິງດັງກ້ອງລະງົມຢູ່ທຸກແຫ່ງໃນແຜ່ນດິນລາວ, ນ້ຳຕາຂອງແມ່ຍິງລາວໄຫຼລິນນອງບໍ່ເຫືອດແຫ້ງ... ດ້ວຍເຫດນັ້ນ ເມື່ອເກີດມີຂະບວນການຕໍ່ສູ້ກູ້ເອກະລາດປົກປັກຮັກສາເຊື້ອຊາດເຜົ່າພັນເຂດນ້ຳແດນດິນ ແລະ ປະເທດຊາດບ້ານເມືອງ ຕ້ານການຮຸກຮານການກົດຂີ່ຂູດຮີດຂອງສັດຕູ. ປະຊາຊົນລາວບັນດາເຜົ່າ ພິເສດແມ່ຍິງລາວບໍ່ວ່າຢູ່ແຫ່ງຫົນໃດ ກໍ່ໄດ້ພ້ອມພາກັນເຂົ້າຮ່ວມຂະບວນການລຸກຂຶ້ນຕໍ່ສູ້ຢ່າງໝົດຈິດໝົດໃຈ ອົງອາດ ກ້າຫານ ເສຍສະຫຼະ ແລະ ເນື່ອງນິດລຸງນຕິດ ແລະໃນຂະບວນການເຫຼົ່ານັ້ນແມ່ຍິງກໍ່ເປັນຜູ້ມີບົດບາດສຳຄັນປະກອບສ່ວນຢ່າງຍິ່ງໃຫຍ່ສົມກຽດຄຽງຄູ່ກັບເພດຊາຍ.

ເວົ້າໃນດ້ານການນຳພາ ນັບແຕ່ປີ 1934 ພາຍຫຼັງທີ່ພັກແຄວ້ນລາວໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອນຳພາຂະບວນການຕໍ່ສູ້ປົດປ່ອຍຊາດ ຍາດເອົາໄຊຊະນະມາໃຫ້ປະຊາຊົນລາວ ບັນດາເຜົ່າພາຍໃຕ້ການນຳພາຂອງພັກແລ້ວ. ພັກກໍ່ຫຼຽງເຫັນວ່າ **ແມ່ຍິງລາວ ຊຶ່ງມີຈຳນວນເຄິ່ງໜຶ່ງ ຂອງພົນລະເມືອງລາວນັ້ນມີບົດບາດສຳຄັນຍິ່ງຢູ່ໃນຄອບຄົວ ເປັນປັດໄຈຕັດສິນຕໍ່ພາລະກິດຂອງລູກຜົວ ໃນການປະຕິບັດໜ້າທີ່ປົດປ່ອຍຊາດ, ປົດປ່ອຍປະຊາຊົນ. ດັ່ງນັ້ນເພື່ອຢາກປົດປ່ອຍປະເທດຊາດໃຫ້ຫຼຸດພົ້ນອອກຈາກແອກປົກຄອງຂອງຕ່າງຊາດ ກ່ອນອື່ນໝົດຕ້ອງໄດ້ປົດປ່ອຍແມ່ຍິງ.** ພ້ອມກັນນັ້ນ ກໍ່ຕ້ອງປຸກລະດົມທຸກຊັ້ນຄົນໃຫ້ເຂົ້າຮ່ວມເປັນຂະບວນຟົດຟື້ນ ແລະ ກວ້າງຂວາງ, ປຸກລະດົມແມ່ຍິງບັນດາເຜົ່ານັບທັງຕົວເມືອງ ແລະ ເຂດຊົນນະບົດໃຫ້ເຂົ້າຮ່ວມເຄື່ອນໄຫວຂະບວນການຕໍ່ສູ້ຕ້ານຝຣັ່ງຢ່າງຕັ້ງໜ້າ ເຂົ້າຮ່ວມເຮັດການປະຕິວັດດ້ວຍຄວາມຕື່ນຕົວ ເພື່ອໃຫ້ຄອບຄົວລູກຫຼານ ແລະ ຕົນເອງຫຼຸດພົ້ນອອກຈາກການຫົນທຸກທໍລະມານ.

.....

*10. ແມ່ອ້າຍເພັງ ຢູ່ຫ້ອງພະລາທິການແຂວງຊຽງຂວາງ - ແມ່ທັງເຖົ້າທັງຕາບອດບໍ່ຢາກອົບພະຍົບໄປຫວຽດນາມ ຢ້ານເປັນພາລະຫຍຸ້ງຍາກແກ່ລູກຫຼານ ເລີຍຂໍໃຫ້ລູກຂ້າຕົນເອງ. ບັນທຶກຄວາມຊົງຈຳ ຂອງທ່ານພັນໂທ ນາງສົມຈັນ ຜຸຍຍະພອນ ໃນປຶ້ມນາງແພດປະຕິວັດຊີວິດຕິດ ພັນກັບໂຮງໝໍ 101 ວີລະຊົນ, ຄຳເມິງ ວໍລະຈິດ 27/7/2012, ໜ້າ 99*

ນັບແຕ່ນັ້ນມາ ແມ່ຍິງສ່ວນຫຼວງຫຼາຍໄດ້ຮັບການປຸກລະດົມ ຂົນຂວາຍ ໃຫ້ເຂົ້າຮ່ວມເປັນພະນັກງານພື້ນຖານ ຢູ່ຕາມບ້ານ, ເປັນກອງຫຼອນ, ເຂົ້າຮ່ວມ ຂະບວນປິດລັບ ເປັນຕົ້ນໄດ້ຜະລິດອາວຸດແລ້ວຊຸກເຊື່ອງ, ລຳລຽງອາວຸດ, ລຳ ລຽງສະບຽງອາຫານ, ນຳຄວາມລັບໄປໃຫ້ລູກຜົວ ແລະໃຫ້ພະນັກງານທະຫານ ອິດສະລະທີ່ເຄື່ອນໄຫວຕໍ່ສູ້ຢູ່ແຕ່ລະແຫ່ງໃນທົ່ວປະເທດ.

ໃນໄລຍະກະກຽມປະກາດເອກະລາດແຫ່ງຊາດ 1945 ບັນດາແມ່ຍິງ ລາວ ກໍ່ໄດ້ເຂົ້າຮ່ວມການເຄື່ອນໄຫວຢ່າງຕັ້ງໜ້າ, ສ້າງໄດ້ຜົນງານອັນໃຫຍ່ຫຼວງ ແກ່ຂະບວນການຕໍ່ສູ້ກໍ່ຄືປະເທດຊາດ ນີ້ແມ່ນສ່ວນໜຶ່ງຂອງຜົນງານ ແລະ ການ ຕື່ນຕົວຂອງແມ່ຍິງລາວບັນດາເຜົ່າປະກອບສ່ວນເຂົ້າເຮັດການປະຕິວັດຄຽງບ່າ ຄຽງໄຫຼ່ກັບເພດຊາຍດ້ວຍຄວາມອົງອາດກ້າຫານ, ທົນທານໝຸ່ງແໜ້ນ.

ໃນໄລຍະນີ້ເອງ ໜ່ວຍຍຸວະນາລີ(ໜ່ວຍສິລະປະກອນຍິງໜຸ່ມ) ໄດ້ຮັບ ການສ້າງຕັ້ງຂຶ້ນຢູ່ຕາມບ້ານຫຼາຍແຫ່ງໃນເຂດຊົນນະບົດ, ເຂດພື້ນຖານປະຕິວັດ ໃນທົ່ວປະເທດ, ເພື່ອປະກອບສ່ວນປະຕິບັດໜ້າທີ່ຂອງແມ່ຍິງລາວ ໂດຍຜ່ານ ທາງບົດເພງ, ແບບຟ້ອນທີ່ມີເນື້ອໃນປຸກຈິດໃຈຮັກຊາດ, ປຸກລະດົມປະຊາຊົນ ພົນລະເມືອງລາວບໍ່ວ່າເພດໃດ, ຊົນຊັ້ນໃດ ໃຫ້ຕື່ນຕົວເຂົ້າຮ່ວມຂະບວນການ ຕໍ່ສູ້ໃຫ້ຫຼາຍຂຶ້ນ. ບັນດາບົດເພງເຊັ່ນ: **ແມ່ຍິງລາວກ້າວຂຶ້ນ, ຕໍ່ຕ້ານ, ປະເທດລາວ ຕ້ອງແມ່ນລາວເປັນເຈົ້າຂອງ** ແລະອື່ນໆໄດ້ຖືກແຕ່ງຂຶ້ນ ບັນດາໜ່ວຍຍຸວະນາລີ ໄດ້ເຝິກແອບຮຳຮຽນແລ້ວນຳໄປສະແດງຢູ່ທ້ອງຖິ່ນ ສ່ອງແສງໃຫ້ເຫັນເຖິງບົດ ບາດຂອງແມ່ຍິງ, ສ່ອງແສງເຖິງທາດແທ້ຂອງການປະຕິວັດ ແລະກ່າວປະນາມ ໂທດກຳຂອງສັດຕູຜູ້ຮຸກຮານ ສາມາດດຶງດູດເອົາມະຫາຊົນທຸກເພດໄວໃຫ້ເຂົ້າ ຮ່ວມການປະຕິວັດຫຼາຍຂຶ້ນ.

ປີ1946 ລ່າເມືອງຂຶ້ນຝຣັ່ງ ໄດ້ກັບມາຍຶດເອົາລາວເປັນຄັ້ງທີ 2, ອີງຕາມ ຄຳສັ່ງແນະນຳຂອງພັກຄອມມູນິດອິນດູຈີນຕໍ່ກັບການປະຕິວັດຢູ່ລາວທີ່ວ່າ ກ່ອນ ອື່ນໝົດຕ້ອງເອົາໃຈໃສ່ກໍ່ສ້າງກຳລັງຢູ່ເຂດຊົນນະບົດ, ພູດອຍເປັນບັນຫາສຳຄັນ ເພື່ອດຳເນີນການຕໍ່ຕ້ານແບບຍາວນານ ສ້າງກຳລັງກອງຫຼອນ ແລະຊຸກຍູ້ກຳລັງ

ກອງຫຼອນໃຫ້ແຕກໜ່ໍອອກຈາວຢູ່ຕາມບ້ານຊ່ອງ ພ້ອມກັນປິດລ້ອມທະຫານ ລ່າເມືອງຂຶ້ນຝຣັ່ງ ຢູ່ເຂດບໍລິເວນທີ່ພວກເຂົາເຄື່ອນໄຫວ ແລະປັດເຊ່ຍພວກເຂົາ ອອກໃຫ້ພົ້ນຈາກແຜ່ນດິນລາວ.

ຫຼັງຈາກນັ້ນ ລັດຖະບານລາວຕ່ໍຕ້ານ (ແນວລາວອິດສະລະ) ໄດ້ຈັດຕັ້ງ ບັນດາກອງກຳລັງປະກອບອາວຸດແລ້ວສົ່ງໄປເຄື່ອນໄຫວຢູ່ຊົນນະບົດ, ພູດອຍ ເພື່ອດຳເນີນວຽກງານໂຄສະນາຂົນຂວາຍ, ກໍ່ສ້າງພື້ນຖານການເມືອງ, ປຸກລະດົມ ຂະບວນການດຳເນີນສົງຄາມກອງຫຼອນ, ສ້າງຕັ້ງບັນດາເຂດທີ່ໝັ້ນ, ກະກຽມ ທຸກເງື່ອນໄຂເພື່ອດຳເນີນການຕ່ໍຕ້ານແບບຍາວນານ.

ໄປຄຽງຄູ່ກັບວຽກງານດັ່ງກ່າວ ຂະບວນຂອງໜ່ວຍແມ່ຍິງລາວ ກໍ່ໄດ້ ຂະຫຍາຍຕົວຢ່າງກ້ວາງຂວາງຢູ່ໃນທຸກແຫ່ງຫົນໃນທົ່ວປະເທດ, ໄລຍະນີ້ໜ່ວຍ ສ ະມາຄົມແມ່ຍິງລາວອິດສະລະ, ໜ່ວຍແມ່ນັກຮົບກໍ່ໄດ້ຮັບການສ້າງຕັ້ງຂຶ້ນຕາມ ບ້ານຕ່າງໆ ເພື່ອເຮັດໜ້າທີ່ເບິ່ງແຍງດູແລ, ລ້ຽງດູບັນດາພະນັກງານປະຕິວັດ, ພະນັກງານເຄື່ອນໄຫວໃຕ້ດິນ ພ້ອມນັ້ນແມ່ຍິງຈຳນວນຫຼວງຫຼາຍກໍ່ໄດ້ຕື່ນຕົວ ສະໝັກໃຈເຂົ້າເປັນກອງຫຼອນ, ປ້ອງກັນເວນຍາມ, ປ້ອງກັນບ້ານຊ່ອງ, ມີບາງ ຄັ້ງ ທັງເຮັດໜ້າທີ່ສືບຂ່າວການເຄື່ອນໄຫວຂອງສັດຕູ ບາງຄັ້ງກໍ່ເຂົ້າຮ່ວມສູ້ຮົບ ບຸກຕີສະກັດຕີກອງທະຫານຝຣັ່ງ ຮ່ວມກັບອ້າຍນ້ອງເພດຊາຍ. ນອກນີ້ ແມ່ຍິງ ຈຳນວນໜຶ່ງທີ່ເປັນຊາວໜຸ່ມ, ເປັນປ້າ, ເປັນແມ່, ເປັນນ້າ, ເປັນອາ, ເມື່ອມີຄຳສັ່ງ ຈາກຂັ້ນເທິງມາກໍ່ໄດ້ພ້ອມກັນຕື່ນຕົວ, ຫ້າວຫັນເຂົ້າຮ່ວມຂະບວນການລຳລຽງ ຂົນສົ່ງອາວຸດສະບຽງອາຫານໄປສູ່ແນວໜ້າ. ພາກສ່ວນແມ່ຍິງຢູ່ແນວຫຼັງແມ່ນ ເຮັດໜ້າທີ່ເພີ່ມພູນຜະລິດຜົນ, ຮ່ຳຮຽນໜັງສື, ເປັນນັກຮົບອະນາໄມປະຈຳບ້ານ.

ມີຍິງລາວບັນດາເຜົ່າເປັນພັນໆຄົນໃນທົ່ວປະເທດບໍ່ວ່າຢູ່ໃນເຂດແຂວງ ໃດ ຕ່າງກໍ່ໄດ້ພ້ອມກັບແມ່ປ້ານ້າອາ, ຜູ້ສູງອາຍຸ ມີບາງຄົນໄດ້ສະຫຼະຄອບຄົວ ໄປຮ່ວມເຄື່ອນໄຫວປະຕິວັດ, ໄປເປັນທະຫານ, ໄປເປັນພະນັກງານການເມືອງ, ເປັນຄູສອນ, ເປັນພະນັກງານເຄື່ອນໄຫວຢູ່ເຂດແນວຫຼັງສັດຕູ, ເປັນແພດໝໍ, ເຖິງແມ່ນວ່າ ມີບາງຄັ້ງຈະພົບກັບອຸປະສັກທີ່ຫຍຸ້ງຍາກ, ລຳບາກ, ສັດຕູສືບຮູ້

ສົ່ງໄສ ແລະ ນາບຂູ່ທຸບຕີທໍລະມານ, ປາບປາມ, ຈັບກຸມຄຸມຂັງ, ເຂັ່ນຂ້າ, ລວມ ທັງແມ່ມານ, ແມ່ລູກອ່ອນ, ແຕ່ແມ່ຍິງເຫຼົ່ານີ້ກໍ່ບໍ່ໄດ້ທໍ້ຖອຍ, ບໍ່ຢ້ານກົວ, ບໍ່ຍອມ ຈຳນົນ, ບໍ່ໄຂຄວາມລັບ ຍອມເສຍສະຫຼະຊີວິດ, ເສຍສະຫຼະຄອບຄົວ ເດັດດ່ຽວ ກ້າຫານ ເຮັດທຸກສິ່ງທຸກຢ່າງໃຫ້ສຳເລັດຜົນ, ໃຊ້ຫົວຄິດປະດິດສ້າງສະຫຼຽວສະ ຫຼາດ, ໃຊ້ຍຸດທະວິທີລໍ້ລວງສັດຕູຫຼາຍຮູບແບບເພື່ອເຂົ້າໄປສືບຂ່າວຢູ່ໃນປ້ອມ ຄ້າຍສັດຕູສືບຮູ້ການເຄື່ອນໄຫວຂອງພວກມັນ ແລ້ວມາລາຍງານເພື່ອໃຫ້ກຳລັງ ຮັກຊາດໄປບຸກຕີ, ມີບາງຄັ້ງເອື້ອຍນ້ອງແມ່ຍິງຫຼາຍຄົນໄດ້ໃຊ້ໄຫວພິບ ສະຕິ ປັນຍາຂອງຕົນເອງລໍ້ລວງທະຫານສັດຕູ ເພື່ອໃຫ້ເຂົາເຈົ້າມາຖືກວົງສະກັດຂອງ ກຳລັງຮັກຊາດເພື່ອດັບສູນ, ມີບາງຄັ້ງກໍ່ເຂົ້າຮ່ວມສູ້ຮົບປະຈັນບານຕີສັດຕູຢ່າງ ພິລະອາດຫານ, ທົນທານໝໍ່ແໜ້ນ.

ໃນຂະບວນຕໍ່ສູ້ອັນລະອິດລະອ້ຽວຫຍຸ້ງຍາກລຳບາກ ແຕ່ມີກຽດສະຫງ່າ ທີ່ພັກ-ລັດໄດ້ມອບໃຫ້ນັ້ນ ມີແມ່ຍິງຫຼາຍຄົນໄດ້ມີຜົນງານທີ່ພົ້ນເດັ່ນ, ມີຄວາມ ອົງອາດກ້າຫານ, ມີບາງຄົນໄດ້ກາຍເປັນນັກຮົບວິລະຊົນ, ເປັນນັກຮົບແຂ່ງຂັນ ຕັ້ງແຕ່ສະໄໝຕໍ່ສູ້ຕ້ານລ່າເມືອງຂຶ້ນຝຣັ່ງເປັນຕົ້ນມາເຊັ່ນ: ນາງປານ ໄດ້ເຂົ້າຮ່ວມ ເຄື່ອນໄຫວປະຕິວັດແຕ່ປີ 1946 ໄດ້ລະດົມປະຊາຊົນໃນບ້ານ ເມືອງເລົ່າງາມ ແຂວງສາລະວັນ ຕີມິດ, ຕີພ້າ, ແລ້ວລໍ້ລວງເອົາທະຫານສັດຕູມາເຮືອນລ້ຽງ ເຂົ້າປາອາຫານ, ລ້ຽງເຫຼົ້າຢາປາແປ້ງ ເຮັດໃຫ້ພວກເຂົາເມົາແລ້ວຈັບພວກເຂົາ ໄດ້ຈຳນວນໜຶ່ງ. ນອກນັ້ນຍັງມີແມ່ຍິງຂົນຂວາຍສັດຕູໄດ້ຈຳນວນໜຶ່ງ ໃຫ້ອອກ ຈາກຖັນແຖວມາຮ່ວມກັບແນວລາວອິດສະລະ.

ໃນແຕ່ລະບັ້ນຮົບ ໃນແຕ່ລະເຫດການຕໍ່ສູ້ ແລະ ໃນແຕ່ລະບາດລ້ຽວ ປະຫວັດສາດຂອງຊາດ ລ້ວນແຕ່ມີແມ່ຍິງເຂົ້າຮ່ວມເຮັດໜ້າທີ່ຕ່າງໆບໍ່ທາງກົງ ກໍ່ແມ່ນທາງອ້ອມເຊັ່ນ: ປິດລັບສືບຂ່າວ ແລະຕິດຕໍ່ສົ່ງຂ່າວ, ປິດລັບສົ່ງເຂົ້າປາ ອາຫານໃຫ້ພະນັກງານ-ນັກຮົບທີ່ຢູ່ປ່າ ຈົນສາມາດເວົ້າໄດ້ວ່າ: ***ບໍ່ມີພະນັກງານ ນັກຮົບອິດສະລະຜູ້ໃດທີ່ເຄື່ອນໄຫວຢູ່ປ່າ ບໍ່ໄດ້ກິນເຂົ້າຈາກພົ້ກສົ້ນ ຈາກທ້ອງ ຈາກນົມ ຈາກຫວ່າງຂາ ຂອງແມ່ຍິງລາວຜູ້ຮັກຊາດ***[11] ຊຸກຍູ້ລູກຜົວໄປຮ່ວມ ການເຄື່ອນໄຫວໃນຂະບວນການຕໍ່ສູ້. ລ້ຽງດູພະນັກງານພົ້ນຖານ, ເຖິງວ່າການ

ປະກອບສ່ວນນັ້ນຈະເຕັມໄປດ້ວຍອັນຕະລາຍ ແລະ ມີອຸປະສັກຄວາມຫຍຸ້ງຍາກ ນານາປະການ, ຖ້າສັດຕູຮູ້ກໍ່ຖືກຈັບ ຂົ່ມຂູ່ທຸບຕີທໍລະມານ ຖືກຂັງຄຸກ ແລະ ຖືກ ຂ້າຕາຍ ແຕ່ແມ່ຍິງລາວກໍ່ບໍ່ຫວາດຫວັ່ນຢ້ານກົວ ໄດ້ທຸ່ມເທເຫື່ອແຮງສະຕິປັນຍາ ຂອງຕົນເຂົ້າຮ່ວມຂະບວນການຕໍ່ສູ້ເພື່ອກອບກູ້ເອົາເອກະລາດ ມາໃຫ້ປະເທດ ຊາດ ແລະອິດສະລະພາບມາໃຫ້ປະຊາຊົນ.

ປີ 1950 ທ່າມກາງທີ່ທົ່ວປວງຊົນລາວຜູ້ຮັກຊາດ ໃນທົ່ວປະເທດພວມ ຕໍ່ສູ້ປົດປ່ອຍຊາດ ຂັບໄລ່ສັດຕູອອກຈາກແຜ່ນດິນລາວ ໄປພ້ອມກັບການຂະ ຫຍາຍຕົວທາງດ້ານການທະຫານ, ການເມືອງ ແລະ ການກໍ່ສ້າງຮາກຖານຂອງ ການປະຕິວັດຂຶ້ນຢູ່ຫຼາຍບ່ອນ. ໃນເວລານີ້ ກອງປະຊຸມໃຫຍ່ຜູ້ແທນແນວລາວ ຕໍ່ຕ້ານທົ່ວປະເທດໄດ້ໄຂຂຶ້ນ ແລະ ໄດ້ມີການສ້າງຕັ້ງ **ແນວລາວອິດສະລະ ແລະ ລັດຖະບານລາວຕໍ່ຕ້ານ** ໃນກອງປະຊຸມດັ່ງກ່າວ ໄດ້ຜ່ານ ແລະ ຮັບຮອງເອົາ ໂຄງການການເມືອງ 12 ຂໍ້ ຊຶ່ງໃນນັ້ນ ໄດ້ເວົ້າເຖິງການປະຕິບັດສິດເສລີ ປະຊາ ທິປະໄຕຂອງປະຊາຊົນ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ເສລີພາບໃນ ການເຊື່ອຖື.

ພາຍຫຼັງທີ່ພັກປະຊາຊົນລາວໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 22 ມີນາ 1955 ພັກໄດ້ຖືເອົາບັນຫາແມ່ຍິງເປັນບັນຫາສຳຄັນ ດັ່ງນັ້ນຈຶ່ງເອົາໃຈໃສ່ຢ່າງ ຈົດຈໍ່ຕໍ່ແມ່ຍິງ ແລະ ຖືແມ່ຍິງເປັນກຳລັງແຮງໜຶ່ງທີ່ສຳຄັນຂອງພັກ, ໄດ້ປຸກລະດົມ ຈັດຕັ້ງກໍ່ສ້າງ ແລະ ນຳພາແມ່ຍິງໃຫ້ມີຄວາມຕື່ນຕົວ ເສີມຂະຫຍາຍມູນເຊື້ອອັນ ດີງາມຂອງຕົນເຂົ້າໃນພາລະກິດປະຕິວັດ ດັ່ງນັ້ນ ມາຮອດວັນທີ 20/7/1955 ໂດຍອີງໃສ່ ການຂະຫຍາຍຕົວຂອງໜ່ວຍແມ່ຍິງນັກຮົບ, ໜ່ວຍຍຸວະນາລີໃນ ໄລຍະຜ່ານມາ, ສູນກາງແນວລາວອິດສະລະກໍ່ໄດ້ສ້າງຕັ້ງ **ໜ່ວຍຄົ້ນຄວ້າວຽກ ງານແມ່ຍິງ** ຂຶ້ນໃນສຳນັກງານສູນກາງແນວລາວອິດສະລະ ຊຶ່ງຕັ້ງຢູ່ບ້ານດ່ານ ແຄມຫ້ວຍນ້ຳໂສຍ ເມືອງວຽງໄຊ ແຂວງຫົວພັນ ໂດຍມີນາງ **ຄຳຫຼ້າ ວົງສັກ**

*11. ປຶ້ມຄວາມສາມັກຄີພິເສດ ລາວ-ຫວຽດນາມ ບັນທຶກຄວາມຊົງຈຳລາງວັນທີ 1 ຂອງທ່ານ ພົນຕີ ຊຽງສົມ ກຸນລະວົງ ວີລະຊົນແຫ່ງຊາດ ອະດີດລັດຖະມົນຕີຊ່ວຍວ່າການກະຊວງປ້ອງກັນ ຄວາມສະຫງົບ, ຄະນະໂຄສະນາອົບຮົມສູນກາງພັກ, ສຳນັກພິມນັກປະພັນລາວ 2012 ໜ້າ 20-21*

**ເປັນຫົວໜ້າ, ນາງຄຳສຸກ ວົງວິຈິດ ແລະ ນາງຄຳແພງ ບຸບຜາ ເປັນຄະນະ**, ນອກນັ້ນຍັງມີພະນັກງານ ຊ່ວຍວຽກຈຳນວນໜຶ່ງ ເຊັ່ນ: ນາງຈັນເພັງ ພິມມະວັນ, ນາງສາຍແກ້ວ, ນາງຈັນສີ ກົມມະດຳ, ນາງເພັດສະໝອນ ຣາຊະສີມາ, ນາງສອນ ແລະຜູ້ ອື່ນໆອີກ..

ວັນທີ 6/1/1956 ກອງປະຊຸມໃຫຍ່ແນວລາວອິດສະລະທົ່ວປະເທດໄດ້ ໄຂຂຶ້ນ ແລະ ໄດ້ປ່ຽນຊື່ຈາກແນວລາວອິດສະລະເປັນ **ແນວລາວຮັກຊາດ** ໃນ ກອງປະຊຸມນີ້ໄດ້ມີຜູ້ແທນແມ່ຍິງຈຳນວນໜຶ່ງເຂົ້າຮ່ວມ ໃນນັ້ນ ນາງຄຳຫຼ້າ ວົງສັກ ແລະ ນາງຄຳສຸກ ວົງວິຈິດ ໄດ້ຮັບເລືອກຕັ້ງເປັນກຳມະການສູນກາງແນວລາວ ຮັກຊາດ ຊຶ່ງເປັນອົງການສູງສຸດຂອງຂະບວນການປະຕິວັດ ແລະ ໃນເດືອນ 1/1956 ນີ້ເອງ **ສະມາຄົມແມ່ຍິງລາວຮັກຊາດ** ກໍ່ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍມີ ຄະນະໜ່ວຍຄົ້ນຄວ້າແມ່ຍິງຢູ່ສູນກາງເປັນຄະນະນຳພາຄື: ນາງ ຄຳຫຼ້າ ວົງສັກ ເປັນຫົວໜ້າ, ນາງ ຄຳສຸກ ວົງວິຈິດ, ນາງ ຄຳແພງ ບຸບຜາ ເປັນຮອງ. ພາຍຫຼັງ ສ້າງຕັ້ງເປັນສະມາຄົມແລ້ວ ອົງການນີ້ກໍ່ໄດ້ຂະຫຍາຍຕາໜ່າງລົງໄປຮາກຖານ ເພື່ອປ່ຽນແທນໜ່ວຍຍຸວະນາລີ, ໜ່ວຍເອື້ອຍນ້ອງນັກຮົບ, ໜ່ວຍສະມາຄົມແມ່ ນັກຮົບ. ໜ່ວຍສະມາຄົມແມ່ຍິງລາວຮັກຊາດ ເຄື່ອນໄຫວປະຕິບັດໜ້າທີ່ຕາມ ແນວທາງນະໂຍບາຍຂອງພັກ ເຮັດໃຫ້ອົງການຈັດຕັ້ງແມ່ຍິງມີຄວາມໜັກແໜ້ນ ເຂັ້ມແຂງ, ແມ່ຍິງນັບມື້ນັບມີໂອກາດ ເງື່ອນໄຂ ແລະມີບົດບາດໃນຂະບວນການ ປະຕິວັດຕໍ່ສູ້ກູ້ຊາດ.

ห้ามจำหน่าย

ພາຍຫຼັງທີ່ໄດ້ມີການແກ້ໄຂກົດໝາຍ ໃຫ້ແມ່ຍິງມີສິດໃນການເລືອກຕັ້ງ ແລະສະໝັກຮັບເລືອກຕັ້ງແລ້ວ ໃນການເລືອກຕັ້ງສະມາຊິກສະພາຜູ້ແທນລາສະ ດອນເພີ່ມເຕີມ ເມື່ອວັນທີ 4/5/1958 ທີ່ມີຝ່າຍແນວລາວຮັກຊາດເຂົ້າຮ່ວມນັ້ນ **ນາງ ຄຳແພງ ບຸບຜາ ກໍ່ໄດ້ເປັນຜູ້ແທນເພດຍິງຜູ້ທຳອິດຂອງຊາດລາວ** ທັງຍັງ ເປັນຜູ້ໄດ້ຄະແນນສູງສຸດ ຢູ່ແຂວງຫຼວງພະບາງອີກດ້ວຍ. ຄຽງຄູ່ກັນນີ້ ສະເດັດ ເຈົ້າ ສຸພານຸວົງ ຜູ້ສະໝັກຢູ່ແຂວງວຽງຈັນ ທີ່ໄດ້ຄະແນນສຽງຫຼາຍທີ່ສຸດເປັນ ປະຫວັດການຄື 37.389 ຄະແນນ.

ເຖິງແມ່ນວ່າ ພວກລ່າເມືອງຂຶ້ນຝຣັ່ງຈະປະລາໄຊຢ່າງໜັກໜ່ວງທາງດ້ານການທະຫານ ແລະ ຖືກໂດດດ່ຽວທາງດ້ານການເມືອງ ແຕ່ອິດທິກຳລັງປະຕິການຝ່າຍຂວາໃນຄະນະລັດຖະບານລາຊະອານາຈັກລາວ ກໍ່ຍັງບໍ່ຍອມຈຳນົນ ຍັງບໍ່ປະລະກົນອຸບາຍ ຍ້ອນວ່າພວກເຂົາມີອາເມຣິກາໜູນຫຼັງ. ພວກເຂົາໄດ້ດຳເນີນນະໂຍບາຍລ່າເມືອງຂຶ້ນແບບໃໝ່, ຂະຫຍາຍການບຸກຕີເຂົ້າສອງແຂວງເຕົ້າໂຮມຂອງຝ່າຍປະເທດລາວ, ຈັບກຸມທໍລະມານນັກປະຕິວັດຕໍ່ຕ້ານຢູ່ 10 ແຂວງທີ່ຢູ່ໃນເຂດອຳນາດການປົກຄອງຂອງຝ່າຍລາຊະອານາຈັກ. ພວກເຂົາໄດ້ເພີ່ມທະວີທາງດ້ານກຳລັງອາວຸດຢ່າງຫຼວງຫຼາຍ ບຸກຕີເຂົ້າໃສ່ເຂດທີ່ໝັ້ນການປະຕິວັດຂອງຝ່າຍປະເທດລາວຢ່າງຮ້າຍແຮງ.

ເມື່ອສະພາບການຢູ່ລາວ ໄດ້ມີການຜັນແປໄປຢ່າງສັບສົນ ສູນກາງພັກ, ແນວລາວອິດສະລະໄດ້ອອກມະຕິ **ທັນທິດຕໍ່ສູ້** ໂດຍສົມທົບລະຫວ່າງການຕໍ່ສູ້ທາງດ້ານການເມືອງກັບການຕໍ່ສູ້ທາງດ້ານການທະຫານ ເພື່ອສືບຕໍ່ຍົກສູງຄັນທຸງສັນຕິພາບ ເປັນກາງ, ປອງດອງຊາດ, ປະສານສົມທົບຢ່າງແໜ້ນແຟ້ນລະຫວ່າງການຕໍ່ສູ້ທາງດ້ານການເມືອງໃນທົ່ວປະເທດ, ກະຕຸກຊຸກຍູ້ປະຊາຊົນບັນດາເຜົ່າລຸກຂຶ້ນຕໍ່ສູ້ດ້ວຍກຳລັງປະກອບອາວຸດ ຊ່ວຍໜູນການຕໍ່ສູ້ທາງດ້ານການເມືອງ, ໂດຍຖືເອົາການຕໍ່ສູ້ທາງດ້ານການທະຫານເປັນພື້ນຖານ.

ພາຍໃຕ້ການນຳພາຂອງພັກ ໜ່ວຍສະມາຄົມແມ່ຍິງລາວຮັກຊາດຢູ່ສູນກາງ ແລະຢູ່ແຕ່ລະພື້ນຖານການປະຕິວັດໃນທົ່ວປະເທດ ກໍ່ໄດ້ເຄື່ອນໄຫວປຸກລະດົມເອົາເອື້ອຍນ້ອງຜູ້ທີ່ມີເງື່ອນໄຂອອກສູ່ສະໜາມຮົບເພື່ອຕໍ່ສູ້ປະຈັນບານກັບສັດຕູໂດຍກົງ, ສ່ວນຜູ້ທີ່ຢູ່ພື້ນຖານກໍ່ໄດ້ສາມັກຄີກັນເຮັດວຽກງານຢູ່ແນວຫຼັງ ພາຍໃຕ້ຄຳຂວັນ: ***"ທຸກສິ່ງ ທຸກຢ່າງເພື່ອແນວໜ້າ, ທຸກສິ່ງ ທຸກຢ່າງເພື່ອຕີເອົາຊະນະຈັກກະພັດອາເມຣິກາ"*** ຊຸກຍູ້ ແລະ ຂົນຂວາຍເອົາເອື້ອຍນ້ອງຢູ່ໃນເຂດປົດປ່ອຍສາມັກຄີປຸ້ມລຸມກັນຢ່າງແໜ້ນແຟ້ນ, ຕື່ນຕົວ, ຫ້າວຫັນເພີ່ມພູນຜະລິດຜົນເພື່ອຮັບປະກັນສະບຽງອາຫານແທນຜູ້ຊາຍຜູ້ທີ່ໄປແນວໜ້າ ເຊັ່ນ: ໄຖນາ, ຄາດນາ, ຂຸດເໝືອງ, ປ້ານຝາຍ, ເຮັດສວນຄົວ, ສ້າງບ້ານແປງເຮືອນທີ່ຖືກລະເບີດທຳລາຍ ເຊິ່ງແຕ່ກ່ອນວຽກເຫຼົ່ານີ້ແມ່ນວຽກສະເພາະຜູ້ຊາຍ, ເອົາຄອບຄົວ

ຍົກຍ້າຍຫຼົບໄພໄປຢູ່ຕາມປ່າຕາມຖ້ຳ, ທັງເຮັດໜ້າທີ່ເບິ່ງແຍງລ້ຽງດູພະນັກງານ ທະຫານປະຕິວັດທີ່ມາເຄື່ອນໄຫວຢູ່ເຂດທ້ອງຖິ່ນຂອງຕົນ.

ເຖິງແມ່ນວ່າ ບາງຄັ້ງສັດຕູຈະອອກແຮງກວາດລ້າງ ປາບປາມ, ຈັບກຸມ ຄຸມຂັງ, ເຂັ່ນຂ້າ, ທຸບຕີທໍລະມານ, ຂົ່ມຂືນແມ່ຍິງ, ຈຳກັດຮັດແຄບການເຄື່ອນ ໄຫວ ການທຳມາຫາກິນ ແຕ່ແມ່ຍິງທ້ອງຖິ່ນຕ່າງໆບໍ່ໄດ້ຢ້ານກົວ, ບໍ່ທໍ້ຖອຍ ຕໍ່ ການກະທຳອັນໂຫດຮ້າຍສາມານຂອງພວກເຂົາ, ກົງກັນຂ້າມ ແມ່ຍິງເຫຼົ່ານັ້ນ ຍິ່ງເພີ່ມທະວີຄວາມຄຽດແຄ້ນ ເພີ່ມທະວີຄວາມສາມັກຄີໃນໝູ່ເພື່ອນ ຕັ້ງໜ້າ ປະຕິບັດໜ້າທີ່ຂົນຂວາຍເອົາສະມາຊິກໃຫ້ຫຼາຍຂຶ້ນກວ່າເກົ່າ.

ແມ່ຍິງທຸກຄົນທີ່ເຮັດໜ້າທີ່ດັ່ງກ່າວ ເຖິງແມ່ນວ່າເສັ້ນທາງເດີນຂອງເຂົາ ເຈົ້າຈະເຕັມໄປດ້ວຍອັນຕະລາຍຈາກສັດຕູ ເຖິງແມ່ນວ່າ ເອື້ອຍນ້ອງແມ່ຍິງ ຈະມີແຕ່ສອງມືເປົ່າກ່ຳຕາມ ແຕ່ດ້ວຍຈິດໃຈຕໍ່ສູ້ອັນອົງອາດກ້າຫານ, ເດັດດ່ຽວ ໜຽວແໜ້ນ ຕໍ່ສູ້ປະເຊີນໜ້າກັບສັດຕູທີ່ມີອາວຸດທັນສະໄໝ ແລະ ມີກຳລັງພົນ ຫຼາຍ ແຕ່ດ້ວຍສະຕິປັນຍາອັນຍອດຍິ່ງຂອງແມ່ຍິງລາວ ມີຫົວຄິດປະດິດສ້າງ ເພື່ອຕີສັດຕູໃຫ້ໄດ້ຫຼາຍວິທີ.

ສ່ວນຢູ່ພື້ນຖານແນວຫຼັງ ເຖິງວ່າສັດຕູຈະເປີດບັ້ນຮົບກວາດລ້າງໃຊ້ຍົນ ຍິງທຳລາຍເຂດປົດປ່ອຍຢ່າງຮ້າຍກາດກ່ຳຕາມ, ແຕ່ດ້ວຍຈິດໃຈຮັກຊາດ, ຮັກ ບ້ານເກີດເມືອງນອນ, ຮັກຫອມສັນຕິພາບ, ບັນດາໜ່ວຍແມ່ຍິງຕ່າງໆໄດ້ເຮັດ ໜ້າທີ່ເຄື່ອນໄຫວຂົນຂວາຍປຸກລະດົມມະຫາຊົນເຂົ້າຮ່ວມການຕໍ່ສູ້ປະຈັນບານ. ແມ່ຍິງລາວຮັກຊາດ ຍັງໄດ້ເປີດບັ້ນເຝິກອົບຮົບບຳລຸງພະນັກງານໃຫ້ເຂົາເຈົ້າ ຮັບຮູ້ຊາບຊຶມ ແລະ ຮູ້ແຈ້ງພັນທະໜ້າທີ່ຂອງຕົນຕໍ່ປະເທດຊາດ ແລ້ວນຳໄປ ໂຄສະນາໃຫ້ມະຫາຊົນແມ່ຍິງມີຄວາມຕື່ນຕົວປຸກລະດົມຊຸກຍູ້ຊາວໜຸ່ມ ລູກຮັກ ຜົວແພງຂອງຕົນເຂົ້າເປັນທະຫານຢູ່ໃນກຳລັງຫຼວງ ກຳລັງທ້ອງຖິ່ນ, ເປັນກອງ ຫຼອນ ແລະ ໄດ້ປຸກລະດົມຂົນຂວາຍປະຊາຊົນບັນດາເຜົ່າ ໃຫ້ເຂົ້າຮ່ວມຂະບວນ ການຕໍ່ສູ້ກູ້ເອກະລາດ.

ພ້ອມກັນນັ້ນ ແມ່ຍິງຢູ່ໃນເຂດປົດປ່ອຍ ຍັງໄດ້ເຮັດວຽກງານຮັບປະກັນແນວຫຼັງແທນຜູ້ຊາຍທີ່ໄປແນວໜ້າເປັນຕົ້ນ ເພີ່ມພູນຜະລິດຜົນ, ຂຸດຂຸມຫຼົບໄພ, ເອົາເດັກນ້ອຍ, ຜູ້ເຖົ້າ ຄົນເຈັບໄປຢູ່ບ່ອນຫຼົບໄພ ເພື່ອຫຼີກເວັ້ນການຍິງທຳລາຍຂອງສັດຕູ. ນອກຈາກນັ້ນ ໜ່ວຍສະມາຄົມແມ່ຍິງແຕ່ລະບ້ານໄດ້ຈັດຕັ້ງກັນເກັບເອົາເຂົ້າປາອາຫານການກິນນຳແຕ່ລະຄອບຄົວມາໂຮມກັນ ຈັດຕັ້ງກັນຕຳເຂົ້າ, ຫໍ່ເຂົ້າຕົ້ມ, ຕຳແຈ່ວບ່ອງ, ແຈ່ວປາແດກ, ແລ້ວລຳລຽງໄປໃຫ້ທະຫານທີ່ພວມສູ້ຮົບຢູ່ແນວໜ້າ.

ສ່ວນຍິງໜຸ່ມໜ່ວຍຍຸວະນາລີ ຢູ່ແຕ່ລະບ້ານ ຍັງພາກັນແສ່ວແພມົນ, ຫຍິບຕາບເຄື່ອງນຸ່ງໃຫ້ທະຫານ, ຂຽນສານອວຍພອນເພື່ອເປັນກຳລັງໃຈໄປເຖິງທະຫານແຕ່ລະກອງຢູ່ແນວໜ້າ ແລະມອບໃຫ້ທະຫານຢູ່ແນວໜ້າ, ສ່ວນໜ່ວຍສິລະປະກອນຂອງແຂວງ, ຂອງເມືອງ, ຂອງຕາແສງໄດ້ເຄື່ອນໄຫວສະແດງຮັບໃຊ້ກອງທະຫານຢູ່ບັນດາເຂດທີ່ໝັ້ນໃນເວລາກັບມາຈາກການສູ້ຮົບ. ນອກນີ້ ສະມາຊິກສະມາຄົມແມ່ຍິງ ຍັງໄດ້ແຈກຢາຍຢູ່ຕາມກົມກອງທະຫານຫຼວງ, ທະຫານທ້ອງຖິ່ນ, ໂຮງໝໍ, ໂຮງຮຽນ ນັບຕັ້ງແຕ່ຍິງໜຸ່ມຈົນຮອດແມ່ຢ້າວແມ່ເຮືອນ ໄດ້ຄຽງບ່າຄຽງໄຫຼ່ກັບເພດຊາຍເຂົ້າຮ່ວມຂະບວນການລຳລຽງ, ແຂ່ງຂັນກັນແບກຫາບສະບຽງອາຫານ, ອາວຸດຂຶ້ນພູສູງເທວຊັນ, ຜ່ານຮ່ອມຫ້ວຍພູເຂົາ, ຜ່ານລະເບີດລູກປືນເພື່ອໃຫ້ໄປເຖິງເຂດທະຫານທີ່ພວມສູ້ຮົບ, ມີບາງຄັ້ງການລຳລຽງຂົນສົ່ງກໍ່ພົບຄວາມຫຍຸ້ງຍາກ, ຖືກສັດຕູປິດລ້ອມຢູ່ໃນປ່າດົງເປັນເວລາຫຼາຍວັນ ແຕ່ເອື້ອຍນ້ອງທຸກຄົນກໍ່ເດັດດ່ຽວໜຽວແໜ້ນ ຕໍ່ສູ້ປະຈັນບານຕີສັດຕູຢ່າງພິລະອາດຫານທັງເພື່ອຮັກສາສະບຽງອາຫານ, ອາວຸດຍຸດທະພັນ ທີ່ແນວໜ້າລໍຄອຍ, ມີຫຼາຍຄັ້ງຫຼາຍສະໜາຍແມ່ຍິງໄດ້ຮັບບາດເຈັບ ແລະ ສະຫຼະຊີວິດຂອງຕົນ ເພື່ອພາລະກິດປົດປ່ອຍຊາດ,ປົດປ່ອຍປະຊາຊົນ ໃຫ້ຫຼຸດພົ້ນອອກຈາກແອກປົກຄອງອັນຊົ່ວຊ້າຂອງສັດຕູ.

ທ່ານໄກສອນ ພົມວິຫານ ໄດ້ກ່າວຕໍ່ພະນັກງານນັກຮົບທີ່ເຂົ້າຮ່ວມກອງປະຊຸມຄົ້ນຄວ້າວິທີການຝຶກອົບຮົມທະຫານ ແລະ ຍຸດທະວິທີການສູ້ຮົບໃນໄລຍະໃໝ່ ຊຶ່ງໄຂຂຶ້ນທີ່ເມືອງວຽງໄຊວ່າ: *"...ນັບແຕ່ເດືອນ 11/1968 ເຖິງເດືອນ*

*3/1969 ທະຫານທ້ອງຖິ່ນ ແລະ ກອງຫຼອນໄດ້ສູ້ຮົບກັບສັດຕູ 306 ເທື່ອ, ປັດເຂ່ຍສັດຕູອອກຈາກວົງສູ້ຮົບໄດ້ 985 ຄົນ, ຍຶດປືນທຸກຊະນິດໄດ້ 257 ກະບອກ, ຍິງເຮືອບິນສູ້ຮົບຂອງສັດຕູຕົກ 19 ລຳ, ໃນລະດູແລ້ງນີ້ ກຳລັງກອງຫຼອນໄດ້ເພີ່ມຂຶ້ນ 2.267 ຄົນ ໃນນັ້ນມີແມ່ຍິງ 629 ຄົນ ແລະຜູ້ເຖົ້າ 237 ຄົນ "*

ພິເສດ ອັນທີ່ພົ້ນເດັ່ນທີ່ສຸດ ແມ່ນບົນຜືນແຜ່ນດິນຊຽງຂວາງບ່ອນຊຶ່ງສົງຄາມດຸເດືອດຂ້ຽວຂາດທີ່ສຸດແຫ່ງໜຶ່ງໃນລາວ, ຂະນະທີ່ຈັກກະພັດອາເມຣິກາ ແລະ ລູກມືພວມເພີ່ມທະວີສົງຄາມທຳລາຍປະເທດລາວໃນຊຸມປີ 1968-1972 ດ້ວຍການປະຕິບັດຍຸດທະສາດ 3 ກ້ຽງ: **ຈູດກ້ຽງ ຂ້າກ້ຽງ ທຳລາຍກ້ຽງ** ເຊິ່ງສ້າງຄວາມເສຍຫາຍແກ່ຊີວິດ ແລະຊັບສິນຂອງປະຊາຊົນຊາວເມືອງພວນຢ່າງໃຫຍ່ຫຼວງນັ້ນ, ເພື່ອຕໍ່ຕ້ານກັບການຮຸກຮານບຸດຢຶດເອົາພູພຽງຊຽງຂວາງ, ປະຕິບັດຕາມຄຳຂວັນທີ່ວ່າ "**ທຸກສິ່ງທຸກຢ່າງ ເພື່ອແນວໜ້າ ທຸກສິ່ງທຸກຢ່າງ ເພື່ອຕີເອົາຊະນະສັດຕູ**" ກອງທັບ ແລະປະຊາຊົນ, ກໍ່ຄືແມ່ຍິງບັນດາເຜົ່າແຂວງຊຽງຂວາງ ໄດ້ຮ່ວມແຮງຮ່ວມໃຈຕີຕ້ານການບຸດຢຶດຂອງສັດຕູ. ເຂົາເຈົ້າສະໝັກໃຈປະກອບສ່ວນເຂົ້າໃນໜ່ວຍງານຕ່າງໆເຊັ່ນ: ເປັນທະຫານຫຼວງ, ທະຫານທ້ອງຖິ່ນ, ທະຫານກອງຫຼອນ ແລະເປັນໜ່ວຍລຳລຽງຂົນສົ່ງທີ່ໂຮງຮຽນ, ສຳນັກງານອົງການ, ເມືອງ, ແຂວງ ແລະເຂດທະຫານຊຽງຂວາງ ຈັດຕັ້ງຂຶ້ນເພື່ອຮັບໃຊ້ສະໜາມຮົບ. ໃນປີ 1969 ຢູ່ແຂວງຊຽງຂວາງມີກອງຫຼອນເພີ່ມຂຶ້ນເຖິງ 7.267 ຄົນ **ໃນນັ້ນມີແມ່ຍິງ 1.760 ຄົນ**, ຜູ້ເຖົ້າ 119 ຄົນ, ຊາວໜຸ່ມ 276 ຄົນ.[12]

ໃນຕົ້ນປີ 1968 ທາງແຂວງໄດ້ຈັດຕັ້ງເອື້ອຍນ້ອງແມ່ຍິງ ທີ່ໄດ້ສະໝັກເຂົ້າເປັນກອງຫຼອນຈຳນວນ 22 ສະຫາຍ ຂຶ້ນເປັນກອງຮ້ອຍ ໂດຍມີການປະກອບປືນ 12.8 ມມ ໃຫ້ເປັນອາວຸດ ດັ່ງນັ້ນກອງນີ້ຈຶ່ງມີຊື່ເອີ້ນວ່າ **"ກອງຮ້ອຍສິບສອງມິນລີແປດ"**.ບັນດາເອື້ອຍນ້ອງແມ່ຍິງຊຽງຂວາງສາມາດສ້າງໄດ້ຜົນງານອັນສຸດແສນມະຫັດສະຈັນເຊັ່ນ: **ນາງບົວສີ** ກອງຫຼອນບ້ານສ້ອນ ຕາແສງຍອດງື່ມ ເມືອງແປກພ້ອມກັບໝູ່ໄດ້ຍິງເຮືອບິນ T28 ຂອງສັດຕູຕົກ 1 ລຳ, ນາງເຂັມຄຳ

---

*12. ປະຫວັດການຕໍ່ສູ້ຂອງບັນດາກຳລັງປະກອບອາວຸດ ແລະ ປະຊາຊົນ ເຂດທົ່ງໄຫຫີນ ຊຽງຂວາງ 1945-1975 ໜ້າ 334*

ນາງຄຳອອນບ້ານເພຍວັດແລະນາງຫຼ້າບຸນມີບ້ານນາໄຊກອງຫຼອນຕາແສງຊຽງເມືອງຄູນ ໃຊ້ປືນ 12.8 ມມ ຍິງຍົນ T28 ຕົກ 1 ລຳ (ນາງເຂັມຄຳ ເປັນຜູ້ສັງເກດທິດບິນ ແລະບັນຊາຍິງ ນາງຄຳອອນ ເປັນຜູ້ຍັດລູກປືນ ນາງຫຼ້າບຸນມີ ເປັນຜູ້ຍິງ, **ແມ່ເຖົ້າຍິງກາຍ** ກອງຫຼອນ ເມືອງໜອງແຮດ ໃຊ້ປືນເຫຼັກຍາວຍິງຍົນຕົກ 1 ລຳ ຄືກັນ. ພ້ອມນັ້ນກໍ່ຍັງມີແມ່ຍິງທີ່ສາມາດແບກຫາບເຄື່ອງຂອງເຂົ້າປາອາຫານ, ອາວຸດ ແລະລູກກະສຸນທີ່ມີນ້ຳໜັກເກີນໂຕເອງ ໃນນັ້ນເດັ່ນກວ່າໝູ່ແມ່ນ **ສະຫາຍ ນາງລິລາ ອຸດທະພອນ** ກອງຮ້ອຍທີ 1 ກອງລຳລຽງຂອງພະແນກສຶກສາແຂວງຊຽງຂວາງ, ສາມາດ ແບກຫາບສົ່ງໄປແນວໜ້າໄດ້ເຖິງ 80 ກິໂລ ດ້ວຍໄລຍະທາງ 8 ເຖິງ 10 ກິໂລແມັດເຊັ່ນ: ແຕ່ຖ້ຳເງືອກເຖິງໜອງແຮດ, ນາງພົມມາ ຄົນຕາແສງປຽງຝາດເປ້ໄດ້ 75 ກິໂລ, ນາງທອງສີ, ນາງດວງຈັນ ນາງຄຳສາຍ... ເປ້ໄດ້50 ກິໂລ [13] ຂຶ້ນໄປ.

ເມື່ອເຫັນວ່າເອື້ອຍນ້ອງແມ່ຍິງ ມີຄວາມສາມາດເຮັດໄດ້ທຽບທັນກັບເພດຊາຍ ມາເຖິງເດືອນ 3/1968 ກອງບັນຊາການທະຫານເຂດຊຽງຂວາງ ໄດ້ເຕົ້າໂຮມເອົາເອື້ອຍນ້ອງແມ່ຍິງຂອງກອງລຳລຽງເຂດ ແລະຂອງແຂວງມາເຕົ້າໂຮມກັນສ້າງເປັນກອງລຳລຽງແບກຫາບຂຶ້ນໃສ່ຊື່ວ່າ **"ກອງຮ້ອຍລຳລຽງແບກຫາບ 368"** ມີໜ້າທີ່ຕົ້ນຕໍໃນການຂົນເຄື່ອງຂອງ ແບກຫາບສຳພາລະຕ່າງໆ ຂຶ້ນ-ລົງລົດ ປຸກສ້າງສາງເກັບມ້ຽນເຄື່ອງອຸປະໂພກ-ບໍລິໂພກ ແລະ ອາວຸດຍຸດໂທປະກອນພ້ອມທັງລຳລຽງໄປສູ່ແນວໜ້າ. ບັນດາພະນັກງານນັກຮົບໃນກອງນີ້ລ້ວນແຕ່ຍິງສາວຜູ້ໜຸ່ມນ້ອຍ.

ກອງດັ່ງກ່າວກໍ່ມີການເຕີບໃຫຍ່ຂະຫຍາຍຕົວຈຳນວນພົນເພີ່ມຂຶ້ນເຖິງ 200 ຄົນ ເຖິງເດືອນ 7/1969 ກໍ່ມີການສ້າງຕັ້ງກອງຮ້ອຍທີສອງຂຶ້ນ ໂດຍໃສ່ຊື່ວ່າ **" ກອງຮ້ອຍ 769 "** ກອງຮ້ອຍນີ້ ບໍ່ພຽງແຕ່ມີໜ້າທີ່ຄືກັບກອງ 368 ທໍ່ນັ້ນ ແຕ່ຕໍ່ມາກໍ່ຍັງມີໜ້າທີ່ສູ້ຮົບໂດຍກົງອີກດ້ວຍ ດັ່ງນັ້ນ ຈຶ່ງໄດ້ຮັບການກ່າວຂານຍົກຍ້ອງວ່າ **"ກອງກຳລັງໄຟເພດຍິງ"** .

---

*13. ຕາມການເລົ່າຂອງ ນາງລິລາ ອຸດທະພອນ, ບົດບັນທຶກເວທີເລື່ອງຈິງຄົນແທ້ "ມີມື້ນັ້ນຈຶ່ງມີມື້ນີ້ " ໂດຍ ກົງເພັດ ດາວເຮືອງ, ໃນໜັງສືພິມແມ່ຍິງລາວ ສະບັບທີ 35 ປະຈຳເດືອນມັງກອນ 1983*

ທັງສອງກອງຮ້ອຍນີ້ ເກີດຂຶ້ນໃນຂະນະທີ່ແຜ່ນດິນຊຽງຂວາງພວມລຸກເປັນໄຟຊຶ່ງນອງໄປດ້ວຍເລືອດ ແລະນ້ຳຕາຂອງປະຊາຊົນຊາວຊຽງຂວາງ ຍ້ອນປະເຊີນກັບສົງຄາມຂະໜານໃຫຍ່ໃນບັ້ນຮົບໂອເດແອນ, ກູ້ກຽດ ແລະ ບັ້ນຮົບອື່ນໆທີ່ຜູ້ຮຸກຮານບຸດຍຶດເຂົ້າຊຽງຂວາງດ້ວຍຍຸດທະການ **3 ກ້ຽງ (ຂ້າກ້ຽງ ຈູດກ້ຽງ ທຳລາຍກ້ຽງ)**. ແມ່ຍິງບັນດາເຜົ່າສອງກອງຮອ້ຍດັ່ງກ່າວໄດ້ປະກອບສ່ວນໃນການປົກປັກຮັກສາຊຽງຂວາງຢ່າງອົງອາດກ້າຫານ, ໃນນັ້ນລວມທັງການຮັກສາພູກຸດຈອມເຫຼັກທີ່ລືຊື່ ແລະ ບັ້ນຮົບປົດປ່ອຍສາລາພູຄູນ. ຜ່ານການເຄື່ອນໄຫວສູ້ຮົບຫຼາຍຄັ້ງ ກອງກຳລັງດັ່ງກ່າວໄດ້ເຮັດຫຼ້ອນທຸກໜ້າທີ່ ມີຜົນງານປະກອບສ່ວນອັນໃຫຍ່ຫຼວງ ມີຊື່ສຽງກ້ອງດັງກັງວານເປັນທີ່ສະທ້ານຢ້ານກົວຂອງສັດຕູ.

ຕະຫຼອດໄລຍະການຕໍ່ສູ້ກູ້ຊາດນັບແຕ່ 1930-2012 ແມ່ຍິງລາວສ້າງຜົນງານໄດ້ຢ່າງຫຼວງຫຼາຍພົ້ນເດັ່ນປະດັບປະເທດຊາດ, ໃນນັ້ນໄດ້ຮັບການຍົກຍ້ອງເຊີດຊູກຽດເປັນ **ວິລະຊົນແຫ່ງຊາດ 23 ຄົນ ເປັນນັກຮົບແຂ່ງຂັນ 25 ຄົນ**[14] ເຊັ່ນ: ຢູ່ແຂວງວຽງຈັນ ນາງຈຳປາ (ວິລະຊົນແຫ່ງຊາດ), ເຂົ້າເຮັດການປະຕິວັດແຕ່ປີ 1953 ເຮັດໜ້າທີ່ເຄື່ອນໄຫວຊົນຂວາຍແມ່ຍິງເຂົ້າຮ່ວມເຮັດການປະຕິວັດໄດ້ 40 ກວ່າຄົນ, ຊົນຂວາຍທະຫານສັດຕູອອກມາເຂົ້າຮ່ວມຝ່າຍປະຕິວັດໄດ້ 1 ກອງຮ້ອຍ, ຊຸກເຊື່ອງພະນັກງານ, ພາທາງທະຫານອາສາສະໝັກໃຫ້ປອດໄພ ລອດພົ້ນການປະທະກັບສັດຕູໄດ້ຫຼາຍຄັ້ງ. ນອກນັ້ນຍັງມີ ນາງພວງ (ແມ່ຫອມ) ບ້ານທ່າດິນແດງ (ວິລະຊົນ), ເສຍສະຫຼະຕົນໃນເວລາປະຕິບັດໜ້າທີ່, ນາງບົວຄຳ ພະນັກງານພື້ນຖານ ບ້ານນ້ຳປົດ (ເສຍສະຫຼະຊີວິດ) ຢູ່ ແຂວງຫຼວງນ້ຳທາ ກໍ່ມີ ນາງຫຼ້າແຫຼວ ພະນັກງານພື້ນຖານ, ນາງຈັນ (ແມ່ທິດແພງ) ພະນັກງານພື້ນຖານບ້ານນາຕຸງ ແຂວງໄຊຍະບູລີ, ນາງມະນີວັນ ສະມາຄົມແມ່ຍິງເມືອງສອງຄອນແຂວງສະຫວັນນະເຂດ, ນາງບຸນຕາ ສີແສງຫອມ ສະມາຄົມແມ່ຍິງບ້ານດອນຂຽວເມືອງໜອງບົກແຂວງຄຳມ່ວນ, ຫຼາຍສະຫາຍໃນແຂວງຈຳປາສັກ ຄື: ນາງຂຽວ (ແມ່ຂຽວ) ພະນັກງານພື້ນຖານ ບ້ານເວີນ ເມືອງມູນລະປະໂມກ,

14. *ເບິ່ງບັນຊີ ຢູ່ໜ້າ 310*

ນາງທຸມມາ ພະນັກງານພື້ນຖານ ບ້ານດອນນາງລອຍ ເມືອງມູນລະປະໂມກ, ນາງແດງ ທອງໄຊ ພະນັກງານພື້ນຖານບ້ານພະລານບົກ ເມືອງປະທຸມພອນ, ນາງຈັນ ພະນັກງານພື້ນຖານບ້ານເດື່ອ ເມືອງຊະນະສົມບູນ, ນາງ ແຫ່ວ ອາຍຸ 15 ປີ ກອງຫຼອນບ້ານລົມລາຍແຂວງອັດຕະປື ເປັນຕົ້ນ.

ໃນຈຳນວນເພດຍິງ 48 ຄົນ ທີ່ໄດ້ຮັບນາມະຍົດວິລະຊົນແຫ່ງຊາດ ແລະ ນັກຮົບແຂ່ງຂັນທົ່ວປະເທດນັ້ນ ມີແມ່ຍິງແຂວງຊຽງຂວາງລວມ 12 ຄົນ (ເທົ່າ ກັບ 25% ຂອງຈຳນວນທັງໝົດ) ແລະໃນ 12 ຄົນນັ້ນ ເປັນກອງກຳລັງໄຟເພດຍິງ ເຖິງ 7 ຄົນຄື: ວິລະຊົນແຫ່ງຊາດ 3 ຄົນ: **ແມ່ຍິງກາຍ** ກອງຫຼອນເມືອງໜອງແຮດ, **ນາງໄມວົງ ເທບທິລາດ** ແພດສະໜາມໂຮງໝໍ 101 ວິລະຊົນ, **ນາງບົວຄຳ ພົມມະຈັນ** ຄະນະກອງກຳລັງໄຟເພດຍິງ, ແລະນັກຮົບແຂ່ງຂັນທົ່ວປະເທດ 9 ຄົນຄື: **ນາງບົວສີ** ກອງຫຼອນ ບ້ານສ້ອນ, **ນາງເຂັມຄຳ** ກອງຫຼອນ ເມືອງຄູນ, ແລະ **ນາງລີລາ ອຸດທະພອນ** ນັກຮຽນສ້າງຄູຊັ້ນຕົ້ນ, **ນາງສີສຸກ** ຫົວໜ້າການ ທະຫານກອງກຳລັງໄຟເພດຍິງ 769, **ນາງວັນຄຳ, ນາງພາສີ, ນາງບົວທອງ, ນາງໂສພາ** ທັງ 4 ເປັນນັກຮົບກອງກຳລັງໄຟເພດຍິງ 769 ແລະ **ນາງບົວສີ ແກ້ວມະນີ** ແພດປະຈຳກອງ 769.

ສຳລັບກອງກຳລັງໄຟເພດຍິງ ກໍ່ໄດ້ຮັບການຍ້ອງຍໍຊົມເຊີຍເຊີດຊູກຽດ ເປັນ **"ກອງກຳລັງໄຟເພດຍິງວິລະຊົນ"** ແລະໂດຍເສີມຂະຫຍາຍມູນເຊື້ອອັນດີ ງາມຂອງກອງ 368 ແລະ 769 ນີ້ ຕໍ່ມາກໍ່ເກີດມີກອງກຳລັງເພດຍິງຂຶ້ນຕື່ມອີກ ຄື: ກອງ 37, ກອງ 875 ແລະກອງ 369. ອັນໄດ້ເຊີດຊູບົດບາດຂອງແມ່ຍິງລາວ ໃຫ້ສູງເດັ່ນຂຶ້ນ ໂດຍສະເພາະແມ່ນແມ່ຍິງຊຽງຂວາງ ສົມກັບທີ່ໄດ້ຮັບການກ່າວ ຂານວ່າ **"ສາວຊຽງຂວາງ ທັ້ງງາມ ທັ້ງເກັ່ງ"**

ນອກຈາກນີ້ແລ້ວ ຕົ້ນປີ 1975 ກ່ອນປະເທດຊາດຈະໄດ້ຮັບການປົດ ປ່ອຍແມ່ຍິງລາວບໍ່ວ່າຢູ່ເໜືອ, ໃຕ້, ຢູ່ທ້ອງຖິ່ນໃດກໍ່ຕາມ ເອື້ອຍນ້ອງເຫຼົ່ານັ້ນ ໄດ້ ເສີມຂະຫຍາຍທາດແທ້ມູນເຊື້ອຮັກຊາດ ພ້ອມພຽງຮຽງໜ້າກັນຮ່ວມກັບຂະບວນ ການຊາວໜຸ່ມ, ນັກສຶກສາ ພໍ່ຄ້າຊາວຂາຍ ແລະຜູ້ຊົງຄຸນວຸດທິຕ່າງໆ ໄດ້ເຂົ້າ

ຮ່ວມເດີນຂະບວນປະທ້ວງ, ຍຶດອຳນາດການປົກຄອງຈາກລູກແຫ້ງຕີນມືຂອງ ອາເມຣິກາ, ຢູ່ຕົວເມືອງປາກເຊ, ສະຫວັນນະເຂດ, ຢູ່ທ່າແຂກ, ທ້ອຍຊາຍ, ຫຼວງພະບາງ ແລະ ຕົວເມືອງຕ່າງໆໃນທົ່ວປະເທດ, ພິເສດແມ່ນຂະບວນເດີນ ປະທ້ວງຢູ່ນະຄອນຫຼວງວຽງຈັນໃນທ້າຍເດືອນ 8/1975, ບັງຄັບໃຫ້ຜູ້ກຳອຳນາດ ການປົກຄອງທຸ່ນ ມອບສິດອຳນາດການປົກຄອງບ້ານເມືອງມາໃຫ້ປະຊາຊົນ ເພື່ອ ສ້າງຕັ້ງອຳນາດການປົກຄອງປະຕິວັດຂອງປະຊາຊົນຂຶ້ນແທນ.

ຕະຫຼອດໄລຍະເວລາອັນຍາວນານ ແຫ່ງການຕໍ່ສູ້ກູ້ເອກະລາດ ປົດປ່ອຍ ປະເທດຊາດອອກຈາກເປັນຫົວເມືອງຂຶ້ນ ແລະການແຊກແຊງຂອງຕ່າງຊາດນັ້ນ ແມ່ຍິງລາວໄດ້ປະກອບສ່ວນຢ່າງສົມກຽດ ແລະ ໃຫຍ່ຫຼວງ ແມ່ຍິງໄດ້ໃຊ້ໝົດກຳລັງ ແຮງຂອງຕົນ ທັງທາງດ້ານຈຸດພິເສດຂອງຮ່າງກາຍ ແລະ ສະຕິປັນຍາ ເຊັ່ນ: ໃຊ້ສຽງລຳ ສຽງເພງ ສຽງດົນຕີ ວາດຟ້ອນ ຄວາມງົດງາມທາງດ້ານສະລີລະ ຮ່າງກາຍໃຫ້ຄວາມບັນເທີງແກ່ພະນັກງານນັກຮົບ ແລະ ພໍ່ແມ່ພີ່ນ້ອງປະຊາຊົນ ຂະນະດຽວກັນກໍ່ໄດ້ເຊີດຊູອຸດົມການ ຄວາມມຸ່ງມາດປາດຖະໜາ ແນວທາງການ ຕໍ່ສູ້ປຸກລະດົມນ້ຳໃຈຮັກຊາດຮັກບ້ານເກີດເມືອງນອນ, ປຸກລະດົມນ້ຳໃຈສາມັກຄີ ຊ່ວຍເຫຼືອກັນ ແລະນ້ຳໃຈພິລະອາດຫານຕໍ່ສູ້ບໍ່ຍອມຈຳນົນ. ຕໍ່ພວກສັດຕູບາງ ເທື່ອແມ່ຍິງກໍ່ໃຊ້ຮອຍຍິ້ມ ສຽງຫວານໆ ແລະ ທ່າທີຂໍຄວາມເຫັນໃຈໃຫ້ໂຍະຍານ ການກຳຮາບປາບປາມ, ຫຼື ຫຼອກລວງສັດຕູໃຫ້ຫຼົງເຊື່ອຕາມກົນອຸບາຍ, ໃຊ້ມວຍ ຜົມ, ເສື້ອຊ້ອນ ຊຸກເຊື່ອງຈົດໝາຍ/ຄຳສັ່ງຂອງຂັ້ນເທິງ, ໃຊ້ຫາບນ້ຳ, ຄຸຂີ້ຍາງ, ໃຊ້ຫົວສິ້ນ, ໃຊ້ຜ້າອ້ອມລູກ ຊຸກເຊື່ອງເຂົ້າປາອາຫານໄປໃຫ້ພະນັກງານພື້ນຖານ, ໃຊ້ຜ້ຶນສິ້ນ, ສ້ອມນອນ ແລະອ້ອມແຂນຂອງຕົນເປັນທີ່ປົກປິດ ຊຸກເຊື່ອງພະນັກ ງານພື້ນຖານ, ທະຫານຮັກຊາດ ແລະເຖິງຂັ້ນໃຊ້ຮ່າງຄ້ຶງຕົນເອງໃຫ້ສັດຕູເຊີຍຊົມ, ຫຼື ກັ້ງບັ້ງລູກປືນເພື່ອແລກ ກັບຄວາມປອດໄພຂອງລູກຜົວ/ພະນັກງານ ແລະ ພໍ່ແມ່ພີ່ນ້ອງ. ໃຊ້ຄວາມເດັດດ່ຽວກ້າຫານ ໃຊ້ວາຈາປ້ອຍດ່າ ສາບແສ່ງ ກ່າວ ປະນາມໃຫ້ສັດຕູຕົກສະທ້ານຢ້ານກົວ, ແລະ ກໍ່ໃຊ້ນິ້ວມືອັນນຸ້ມນອນສ້ອຍເຫຼົ່າ ກ້ຽງງາມເກາະໄກປືນສັງຫານສັດຕູ ແລະ ຍິງຍົນຂອງໂຈນອາກາດອາເມຣິກາ ໃຫ້ອອດວາຍຫຼາຍລຳ.

ເວົ້າລວມແລ້ວປົດບາດ ແລະຜົນງານຂອງແມ່ຍິງທີ່ປະກອບສ່ວນເຂົ້າ ໃນການຕໍ່ສູ້ກູ້ເອກະລາດ ປົດປ່ອຍປະເທດຊາດນັ້ນ ມີຫຼາຍແງ່ຫຼາຍມູມ ຫຼາຍ ໂອກາດ ຫຼາຍສະຖານະທີ່ແຕກຕ່າງກັນຈົນບໍ່ອາດພັນລະນາໄດ້ໝົດ ຈົດແຕ້ມ ໃຫ້ຄົບຖ້ວນໃນປຶ້ມປະຫວັດມູນເຊື້ອເຫຼັ້ມນີ້.

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນ ແລະ ສະຖາປະ ນາເປັນ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໃນວັນທີ 2 ທັນວາ 1975 ພາຍໃຕ້ການນຳພາຈາກພັກ-ລັດຢ່າງໃກ້ຊິດຕິດແທດ, ບັນດາແມ່ຍິງລາວ ຮັກຊາດໄດ້ປະກອບສ່ວນຮັບໃຊ້ໜ້າທີ່ອັນມີກຽດຂອງຕົນເຂົ້າໃນການສ້າງສາ ພັດທະນາປະເທດຊາດຢ່າງຕັ້ງໜ້າ: ປະຕິບັດໜ້າທີ່ປ້ອງກັນຊາດ ຮັກສາຄວາມ ສະຫງົບ ຮັກສາໝາກຜົນຂອງການປະຕິວັດໄວ້ໃຫ້ໝັ້ນຄົງ, ເອົາໃຈໃສ່ຕັ້ງໜ້າ ສຶກສາອົບຮົບເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ຮູ້ຈຳແນກມິດ-ສັດຕູ ຢ່າງຈະແຈ້ງ, ຊາບຊຶມພາລະບົດບາດໜ້າທີ່, ຄຸນສົມບັດຂອງແມ່ຍິງ ໃນແຕ່ລະ ໄລຍະຂອງການປະຕິວັດ, ສຶກສາອົບຮົບມູນເຊື້ອ, ວັດທະນະທຳ, ຮີດຄອງ ປະເພນີອັນດີງາມຂອງຊາດ, ເຮັດໃຫ້ແມ່ຍິງມີຄວາມກະຕືລືລົ້ນ ຕັ້ງໜ້າປະຕິບັດ ໜ້າທີ່ ແລະພັນທະຂອງແມ່ຍິງທີ່ມີຕໍ່ປະເທດຊາດ ແລະສັງຄົມ, ພາຍໃຕ້ການ ຊີ້ນຳ ຂອງພັກປະຊາຊົນປະຕິວັດລາວ, ສະມາຄົມແມ່ຍິງໄດ້ເອົາໃຈໃສ່ປົກປ້ອງ ສິດຜົນປະໂຫຍດຂອງແມ່ຍິງ ເພື່ອສ້າງເງື່ອນໄຂໃຫ້ຜູ້ເປັນແມ່ເຮັດຫຼ້ອນໜ້າທີ່ ຂອງຕົນ, ເຮັດໃຫ້ອົງການຈັດຕັ້ງແມ່ຍິງເຕີບໃຫຍ່ຂະຫຍາຍຕົວຢ່າງແຂງແຮງ, ໜັກແໜ້ນທາງດ້ານການເມືອງທາງດ້ານການຈັດຕັ້ງ, ສ້າງທ່າແຮງ ໃຫ້ແມ່ຍິງມີ ບົດບາດ ແລະ ປະກອບສ່ວນເຂົ້າໃນທຸກຂົງເຂດວຽກງານທຸກດ້ານຢູ່ໃນສັງຄົມ ເພື່ອພາລະກິດປ່ຽນແປງໃໝ່, ກໍ່ສ້າງ ແລະສ້າງສາເສດຖະກິດ, ວັດທະນະທຳ ໃຫ້ມີຄວາມຈະເລີນຮຸ່ງເຮືອງຕາມທິດຊີ້ນຳຂອງພັກຢ່າງກວ້າງຂວາງຮອບດ້ານ.

ດ້ວຍທ່າແຮງການຂະຫຍາຍຕົວຂອງແມ່ຍິງ ໄດ້ເຮັດຫຼ້ອນໜ້າທີ່ໃນໄລຍະ ຜ່ານມາຮອດປີ 1984 ພາຍຫຼັງກອງປະຊຸມໃຫຍ່ຜູ້ແທນແມ່ຍິງລາວທົ່ວປະເທດ ຄັ້ງທີ 1 ໄດ້ສຳເລັດລົງ...ກອງປະຊຸມຄັ້ງນີ້ ໄດ້ຕົກລົງປ່ຽນຊື່ຈາກ**ສະມາຄົມແມ່ຍິງ**

**ລາວຮັກຊາດ** ເປັນ **ສະຫະພັນແມ່ຍິງລາວ** ເພື່ອໃຫ້ແທດເໝາະ ແລະສອດຄ່ອງກັບສະພາບເງື່ອນໄຂໃໝ່ໃນການສ້າງສາພັດທະນາປະເທດຊາດ.(15)

ພາຍຫຼັງໄດ້ປະກາດປ່ຽນຊື່ໃໝ່ແລ້ວ, ສະຫະພັນແມ່ຍິງລາວກໍ່ໄດ້ຕັ້ງໜ້າປະຕິບັດໜ້າທີ່ຕາມການມອບໝາຍຈາກ ພັກ - ລັດ, ສືບຕໍ່ນຳພາແມ່ຍິງລາວບັນດາເຜົ່າໃນທົ່ວປະເທດ ແລະຮ່ວມມືກັບບັນດາອົງການຈັດຕັ້ງແມ່ຍິງໃນປະເທດເພື່ອນມິດແລະອົງການຈັດຕັ້ງທັງພາຍໃນແລະຕ່າງປະເທດ, ສືບຕໍ່ປຸກລະດົມແມ່ຍິງ ໃຫ້ເຂົ້າຮ່ວມປະຕິບັດໜ້າທີ່ຕາມພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານຂອງພັກ, ແຜນພັດທະນາເສດຖະກິດ-ວັດທະນະທຳ, ຕັ້ງໜ້າປັບປຸງອົງການຈັດຕັ້ງແມ່ຍິງໃຫ້ໜັກແໜ້ນ, ເຂັ້ມແຂງທາງດ້ານການເມືອງແນວຄິດ, ດຶງດູດເອົາແມ່ຍິງບັນດາເຜົ່າ, ຊັ້ນຄົນຕ່າງໆໃນສັງຄົມ ໃຫ້ເຂົ້າຮ່ວມຢ່າງກວ້າງຂວາງ. ພ້ອມນັ້ນ ຍັງສຶກສາອົບຮົມຍົກລະດັບທາງດ້ານການເມືອງແນວຄິດ, ວິຊາການໃຫ້ແມ່ຍິງ, ເສີມຂະຫຍາຍນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕ, ມູນເຊື້ອພິລະອາດຫານ, ດຸໝັ່ນ, ກ້າແກ່ນ, ຍົກສູງສະຕິເປັນເຈົ້າປະເທດຊາດ, ຕັ້ງໜ້າກໍ່ສ້າງການຈັດຕັ້ງສະຫະພັນແມ່ຍິງຢູ່ຂັ້ນທ້ອງຖິ່ນ, ເພື່ອໃຫ້ແມ່ຍິງເປັນເຈົ້າການເຂົ້າຮ່ວມສ້າງສາພັດທະນາເສດຖະກິດ-ສັງຄົມ, ປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ໃຫ້ເຂົາເຈົ້າຮັກສາໄດ້ມູນເຊື້ອອັນດີງາມຂອງແມ່ຍິງໃນພາລະກິດຕໍ່ສູ້ກູ້ຊາດ ແລະ ພາລະກິດຕໍ່ສູ້ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ແຂງແຮງ.

ຜ່ານການຕໍ່ສູ້ອັນລະອຽດລະອໍ້ງ ໃນພາລະກິດຕໍ່ສູ້ກູ້ຊາດ ແລະໄລຍະປົກປັກຮັກສາແລະສ້າງສາພັດທະນາປະເທດຊາດ, ຜ່ານການທົດສອບ, ເຝິກຝົນຫຼໍ່ຫຼອມໃນແປວໄຟສົງຄາມເປັນເວລາຫຼາຍທົດສະວັດແມ່ຍິງລາວບັນດາເຜົ່າໃນທົ່ວປະເທດໄດ້ຕໍ່ສູ້ຢ່າງອາດຫານ ກ້າແກ່ນຄຽງບ່າຄຽງໄຫຼ່ກັບລູກຜົວ, ຍາດຕິພີ່ນ້ອງ, ພີ່ປ້ານ້າອາ, ແມ່ຍິງຫຼາຍຮ້ອຍຫຼາຍພັນຄົນໄດ້ປະກອບສ່ວນສ້າງປະຫວັດ

15. *ປຶ້ມ ປະຫວັດ ມູນເຊື້ອສະຫະພັນແມ່ຍິງລາວ 2010 ແລະປຶ້ມປະຫວັດກອງທັບປະຊາຊົນລາວ 1945-2009*

ສາດອັນສະຫວ່າງສະໄຫວຂອງປະເທດຊາດ, ສ້າງໄດ້ຜົນງານ ແລະ ຄວາມ ກ້າວໜ້າ, ສະແດງໃຫ້ເຫັນເຖິງທາດແທ້ຄຸນສົມບັດ ອັນເປັນມູນເຊື້ອຂອງແມ່ຍິງ ລາວເຜົ່າຕ່າງໆ.

ຜ່ານການປະກອບສ່ວນເຮັດໜ້າທີ່ຕໍ່ສູ້ປະຕິວັດຊາດ ປະຊາທິປະໄຕ ຕ້ານສັກດິນາແລະຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະແບບໃໝ່ ແມ່ຍິງລາວ ບັນດາເຜົ່າໄດ້ສະແດງໃຫ້ເຫັນທາດແທ້ ແລະ ພຶດຕິກຳທີ່ມີຕໍ່ປະເທດຊາດຢ່າງ ໃຫຍ່ຫຼວງ, ນອກນີ້ແລ້ວ ແມ່ຍິງລາວບັນດາເຜົ່າຍາມໃດ ກໍ່ມີຄວາມເຄົາລົບ ນັບຖື, ຮັກແພງ ແລະປົກປັກຮັກສາຊີວິດ ແລະ ຊັບສິນຂອງປະຊາຊົນ ເຄົາລົບ ນັບຖື ຮັກສາ ແລະ ສືບທອດເສີມຂະຫຍາຍຮີດຄອງປະເພນີ ວັດທະນະທຳ ຂອງປະຊາຊົນລາວບັນດາເຜົ່າ, ຮັກແພງ ແລະຊ່ວຍເຫຼືອເຊິ່ງກັນ ແລະກັນ, ແມ່ ຍິງລາວໃນສະໄໝຕໍ່ສູ້ກູ້ຊາດ ໄດ້ຢູ່ຮ່ວມສຸກຮ່ວມທຸກອັນສະໜິດແໜ້ນກັບເພດ ຊາຍ, ເຄົາລົບນັບຖືຊຶ່ງກັນ ແລະ ກັນ ຖືເປັນອ້າຍ, ເປັນເອື້ອຍ ເປັນນ້ອງ ເໝືອນ ຄົນຄອບຄົວດຽວກັນ ມີຈິດໃຈຮັກແພງເອື້ອເຟື້ອ ເພື່ອແຜ່ເຊິ່ງກັນແລະກັນ, ມີນ້ຳ ໃຈບໍລິສຸດສັດຊື່ຕໍ່ລູກຕໍ່ຜົວ. ຕໍ່ກັບປະເທດຊາດ ເວລາໃດແມ່ຍິງລາວບັນດາເຜົ່າ ກໍ່ມີຈິດໃຈຮັກຊາດອັນສູງສົ່ງ, ມີນ້ຳໃຈເສຍສະຫຼະອັນອົງອາດກ້າຫານ, ມີຄວາມ ຈົງຮັກພັກດີຕໍ່ປະເທດຊາດ,ຕໍ່ປະຊາຊົນ ແລະເຊື່ອໝັ້ນຕໍ່ການນຳພາອັນສະຫຼາດ ສ່ອງໃສຂອງພັກຢ່າງສູງສົ່ງ.









*ນາງຄຳຫຼ້າ ແກ້ວບຸນພັນ ຢືນຢູ່ກາງ ໂອ້ລົມກັບບັນດາ ແມ່ຍິງໃນເຂດເມືອງຊຽງຄໍ້ ແຂວງຫົວພັນ ເພື່ອໃຫ້ເຂົ້າຮ່ວມຂະບວນການກູ້ຊາດ*



*ຜູ້ແທນແມ່ຍິງຈຳນວນໜຶ່ງທີ່ມາຮ່ວມກອງປະຊຸມ ຄັ້ງທີ I ສຍລ 1984 ຖ່າຍຮູບທີ່ລະນຶກທີ່ສຳນັກງານສູນກາງສະຫະພັນແມ່ຍິງລາວ ( ໃນວົງມົນ ຈັນເພັງ ພິມມະວັນ, ລີລາ ອຸດທະພອນ, ຄຳຫຼ້າ ແກ້ວບຸນພັນ)*



*ສະຫາຍໄກສອນ ພົມວິຫານ ລົງຢ້ຽມຢາມ ນາຍແລະພົນທະຫານ ຢູ່ສະໜາມຮົບ ນຳພາໂດຍ ພົນຈັດຕະວາ ເຂັ້ມພອນ ຜູຍປະເສີດ*



*ຄະນະພັກ ຄະນະບັນຊາການທະຫານເຂດ ພ້ອມດ້ວຍຄະນະພັກ ຄະນະປົກຄອງ ແຂວງຊຽງຂວາງ (ໃນວົງມົນ ນາງທອງຈັນ ປະທານສະຫະພັນແມ່ຍິງ, ທ່ານ ຍົງເຢຍ, ທ່ານ ພົນຈັດຕະວາ ເຂັ້ມພອນ ຜູຍປະເສີດ)*



*ຝູງໂຈມອາກາດອາເມຣິກາ ບິນມາຖິ້ມລະເບີດລົງໃສ່ດິນລາວ.*



*ຜົນຮ້າຍທີ່ຕາມມາຈາກການຖິ້ມລະເບີດ ຂອງໂຈມອາກາດອາເມຣິກາ ຕໍ່ປະຊາຊົນລາວ*



*ກອງຫຼອນແມ່ຍິງ ໃນແຂວງຫົວພັນ ຝຶກແອບນຳໃຊ້ອາວຸດປືນເພື່ອຕໍ່ສູ້ 1959*



*ຂະບວນການຝຶກແອບ ແລະຮ່ຳຮຽນໃຊ້ອາວຸດປືນເພື່ອຕໍ່ສູ້ຂອງກອງຫຼອນແມ່ຍິງ.*

*ນາງເຄນ ຫົວໜ້າສະມາຄົມແມ່ຍິງ ບ້ານເພຍວັດ ນາງຄຳປ້ອງ, ປ້າສາຍ ບ້ານນາໄຊ*
*ແລະ ສະມາຊິກສະມາຄົມແມ່ຍິງ ຕາແສງຊຽງ ເມືອງຄູນ ແຂວງຊຽງຂວາງ*
*ມອບຂອງຂວັນໃຫ້ອ້າຍນ້ອງທະຫານທີ່ກຽມອອກສູ່ສະໜາມຮົບ 1965*







*ກອງຫຼອນແມ່ຍິງ ໃນແຂວງຫຼວງນ້ຳທາ ຕ້ອນຮັບ ທ່ານໄກສອນ ທີ່ມາຢ້ຽມຢາມ*



*ເດັກນ້ອຍກັບແມ່ລ້ຽງ ໃນເວລາພໍ່ແມ່ໄປເຮັດວຽກ*
*ຢູ່ປາກຖ້ຳແຫ່ງໜຶ່ງ ໃນເຂດປົດປ່ອຍ*




*ທ່ານໄກສອນ ພົມວິຫານ ກັບແມ່ເຖົ້າເສົ*
*ວິລະຊົນແຫ່ງຊາດ ພະນັກງານພື້ນຖານເຜົ່າມົ້ງ ແຂວງຫົວງນ້ຳທາ*



*ແມ່ເຖົ້າ ຢົ້ງກາຍ ວິລະຊົນແຫ່ງຊາດ*
*ກອງຫຼອນເມືອງໜອງແຮດ*
*ໃຊ້ປືນເຫຼັກຍາວ*
*ຍິງຍົນອາເມຣິກາຕົກ 1ລຳ*



*ນາງໄມວົ໋ງ ເທບທິລາດ*
*ວິລະຊົນແຫ່ງຊາດ*
*ແພດປະຈຳສະໜາມ*
*ໂຮງໝໍ 101*



*ນາງບົວສີ ກອງຫຼອນ ຕາແສງຍອດງື່ມ*
*ເມືອງແປກ ນັກຮົບແຂ່ງຂັນ*
*ຍິງຍົນອາເມຣິກາ T28 ຕົກ 1ລຳ*




*ນາງເຂັມຄຳ ກອງຫຼອນຕາແສງຊຽງ*
*ເມືອງຄູນ ນັກຮົບແຂ່ງຂັນ*
*ຍິງຍົນ T28 ຕົກ 1 ລຳ*



*ນາງບົວສີ ນຳພາກອງຫຼອນແມ່ຍິງ ບ້ານສ້ອມ ເມືອງແປກ ແຂວງຊຽງຂວາງ*
*ຝຶກແອບໃຊ້ປືນ 12.8 ມມ ຍິງຍົນອາເມຣິກາ 1968*



*ນາງລີລາ ອຸດທະພອນ ນັກຮົບແຂ່ງຂັນ (ຜູ້ທຳອິດຈາກຊ້າຍ, ຮູບເທິງ ແລະລຸ່ມ)*
*ກອງລຳລຽງຂອງຫ້ອງການສຶກສາແຂວງຊຽງຂວາງ ປີ 1968-69*





*ແມ່ຍິງໃນເຂດປົດປ່ອຍ ປະກອບສ່ວນລຳລຽງເຄື່ອງຂອງຮັບໃຊ້ການຕໍ່ສູ້ກູ້ຊາດ*





*ແມ່ຍິງກອງຫຼອນ ໃນເຂດປົດປ່ອຍ*



*ແມ່ຍິງ ໃນສະຫະກອນກະເສດ ບ້ານລາດງ່ອນ ແຂວງຊຽງຂວາງ ໃນປີ 1981*



*ແມ່ຍິງ ໃນສະຫະກອນກະເສດ ບ້ານລາດແສນ ແຂວງຊຽງຂວາງ ໃນປີ 1981*



*ທ່ານປະທານສຸພານຸວົງ ໂອ້ລົມກັບຄະນະຜູ້ແທນເຂົ້າຮ່ວມ*
*ກອງປະຊຸມແນວລາວຮັກຊາດ ຄັ້ງທີ 2 ຢູ່ແຂວງຫົວພັນ 1964*



*ທ່ານປະທານສຸພານຸວົງ ພ້ອມຄະນະນຳສູນກາງແນວລາວຮັກຊາດ*
*ຢ້ຽມຢາມແມ່ຍິງ ຢູ່ແຂວງຫົວພັນ*



*ກອງຫຼອນແມ່ຍິງ ໃນແຂວງຫຼວງນ້ຳທາ ຕ້ອນຮັບ ທ່ານໄກສອນ ທີ່ມາຢ້ຽມຢາມ*



ข้าราชการสตรีกรมราชทัณฑ์ (ชุดที่ 4 จากซ้ายแถวหน้า) ในการอบรมหลักสูตรการปฏิบัติงานสังคมสงเคราะห์ ณ ศูนย์ฝึกอบรมข้าราชการกรมราชทัณฑ์ 2 ระหว่างวันที่ 5/4/1979



ຄູ່ແມ່ນຊ່ວຍກັນຫາປາ ແລະກວ່ານ ຫຼັງຈາກທີ່ໄດ້ປາ ແລ້ວ






# ตอนที่ II

# ມູນເຊື້ອຂອງກອງ
# ລຳລຶງແບກຫາບ 368



*ມອບຊີວິດ ເລືອດເນື້ອ ເຫື່ອແຮງ ຂອງໄວໜຸ່ມຊອນສາວ*
*ເພື່ອຊາດລາວ ອັດທະນາຖາວອນ ແລະ ປະຊາກອນລາວ*
*ມີຄວາມສະເໝີພາບ ແລະ ກ້າວໜ້າ ຜາສຸກ...*



# I. ສະພາບແວດລ້ອມ ເງື່ອນໄຂພາໃຫ້ເກີດ ກອງລຳລ່ຽງແບກຫາບ 368 ແລະ ກອງກຳລັງໄຟເພດຍິງ 769

.....

ພາຍຫຼັງຝ່າຍຊີ່ດຍີ່ປຸ່ນປະລາໄຊໃນສົງຄາມໂລກຄັ້ງທີ 2 ແລ້ວ **ຈັກກະພັດອາເມຣິກາ** ກໍ່ໄດ້ສະໜັບສະໜູນໃຫ້ຝຣັ່ງກັບຄືນມາຍຶດຄອງລາວ ອີກເທື່ອໃໝ່ ນັບແຕ່ເດືອນທັນວາ 1945.

ແຕ່ຕົ້ນປີ 1950 ເປັນຕົ້ນມາ ຈັກກະພັດອາເມຣິກາ ໄດ້ເຂົ້າມາມີບົດບາດໃນຂົງເຂດອາຊີຕາເວັນອອກສ່ຽງໃຕ້ໂດຍສະເພາະແມ່ນໃນແຫຼມອິນດູຈີນ ເພື່ອຕ້ານອັນທີ່ເຂົາເອີ້ນວ່າ ***" ລັດທິຄອມມູນິດ "*** ໂດຍມີການທຸ່ມເທງົບປະມານເຖິງ 80% ຂອງລາຍຈ່າຍການທະຫານທັງໝົດ. ທຳອິດກໍ່ຢູ່ເບື້ອງຫຼັງຝຣັ່ງ ຕໍ່ມາກໍ່ກະໂດດເຂົ້າມາແທນຝຣັ່ງ ອອກໜ້າອອກຕາດຳເນີນການຮຸກຮານ ລາວ-ຫວຽດນາມ-ກຳປູເຈຍ ຢ່າງບັງອາດເປີດແປນດ້ວຍການຊັກໃຫຍ້ບັນຊາ **ລັດຖະບານຫຸ່ນ** ແລະ ລູກແຫ້ງຕີນມືທີ່ພວກເຂົາຈັດຕັ້ງຂຶ້ນກຳອຳນາດໃນແຕ່ລະປະເທດ.

12/12/1950 ອາເມຣິກາ ຝຣັ່ງ ແລະ ລັດຖະບານຫຸ່ນ 3 ປະເທດ ອິນດູຈີນ ໄດ້ເຊັນສັນຍາ *"ການຊ່ວຍເຫຼືອເພື່ອປ້ອງກັນ ຊຶ່ງກັນ ແລະກັນໃນອິນດູຈີນ"*

9/1951 ອາເມຣິກາໄດ້ເຊັນສັນຍາ ກັບລັດຖະບານຫຸ່ນວຽງຈັນ ກ່ຽວກັບອັນທີ່ເອີ້ນວ່າ ***"ການຮ່ວມມືດ້ານເສດຖະກິດ"*** ເພື່ອປູພື້ນຖານໃນການປະຕິບັດເຈດຈຳນົງແຊກແຊງ ແລະຮຸກຮານລາວຢ່າງຍາວນານ.[16]

.....

*16. ສັນຍາເຫຼົ່ານີ້ ບໍ່ຖືກລົບລ້າງໃນສັນຍາເຊີແນວ 1954 ອາເມຣິກາຈຶ່ງຖືເປັນຊ່ອງທາງ ໃນການໃຫ້ການຊ່ວຍເຫຼືອລັດຖະບານຫຸ່ນວຽງຈັນ ແລະ ດຳເນີນສົງຄາມຮຸກຮານລາວໃນເວລາຕໍ່ມາ.*

ອາເມຣິກາໃຫ້ງົບປະມານແກ່ຝຣັ່ງ ເພື່ອເຮັດສົງຄາມຢູ່ອິນດູຈີນ ໃນປີ 1950 ປະມານ 40% ປີ 1953 ເພີ່ມເປັນ 70% ຂອງງົບປະມານທັງໝົດ. ບົດລາຍງານຂອງກະຊວງການຕ່າງປະເທດອາເມຣິກາ 8/1953 ໃຫ້ຮູ້ວ່າ: ອາເມຣິກາໃຫ້ການຊ່ວຍເຫຼືອຝຣັ່ງໃນອິນດູຈີນ 170 ລ້ານໂດລາ, ລົດບັນທຸກທະຫານ 16 ພັນຄັນ, ລົດເກາະ ລົດຖັງ 850 ຄັນ, ຍົນທະຫານ 350 ລຳ, ເຮືອລົບ ແລະກຳປັ່ນ 250 ລຳ, ວິທະຍຸສື່ສານ 10.500 ໜ່ວຍ ແລະອາວຸດເບົາ 90.000 ກະບອກ.

ສະເພາະລັດຖະບານຫຸ່ນລາວ ອາເມຣິກາໄດ້ໃຫ້ການຊ່ວຍເຫຼືອໃນຫຼາຍດ້ານ ເປັນຕົ້ນ ດ້ານການເງິນ, ກຳລັງພົນ, ພາຫະນະ ແລະ ອາວຸດຍຸດໂທປະກອນ ເຊັ່ນ:

ປີ 1953 ໃຫ້ເງິນ 320 ຕື້ຝຣັ່ງ (ສະກຸນເງິນຝຣັ່ງ) ປີ 1954 ເພີ່ມຂຶ້ນເປັນ 784 ຕື້ຝຣັ່ງ. ດ້ານຈຳນວນພົນປີ 1953 ມີພຽງແຕ່ 1 ກອງພັນນ້ອຍ, 25 ກອງຮ້ອຍ, ມີຈຳນວນພົນທັງໝົດ 3.300 ຄົນ. ປີ 1954 ມີ 7 ກອງພັນນ້ອຍ, 14 ກອງຮ້ອຍ, 13 ໝວດ ຈຳນວນພົນທັງໝົດ 7.680 ຄົນ ບວກໃສ່ 8 ກອງພັນນ້ອຍ ທະຫານເຄື່ອນທີ່ຢູ່ສະໜາມຮົບພາກເໜືອ, ພາກກາງ ແລະພາກໃຕ້ຂອງລາວ.

ອາເມຣິກາສະໜັບສະໜູນຝຣັ່ງ ທີ່ແຕ່ງນາຍພົນ **ອັງຣີ ນາວາ** (Henri Navarre) ເປັນຜູ້ບັນຊາການທະຫານສູງສຸດຂອງຝຣັ່ງໃນອິນດູຈີນ 5/1953, ແລະ ເຊື່ອໝັ້ນວ່າ ປະຕິບັດຕາມແຜນການ **"ນາວາ"** ພາຍໃນ 18 ເດືອນ ກໍ່ຈະເປັນເຈົ້າການໃນສະໜາມຮົບ. ອາເມຣິກາເຫັນດີທີ່ຝຣັ່ງເລືອກເອົາ **ດຽນບຽນຟູ** ເປັນຖານທັບໃຫຍ່ຍຸດທະສາດ ເພາະສາມາດຄວບຄຸມທັງຈີນ ລາວ ແລະຫວຽດນາມ ເພື່ອດຳເນີນການປາບປາມລັດທິຄອມມູນິດ. **ນິກສັນ ຮອງປະທານາທິບໍດີອາເມຣິກາ** ໄດ້ມາຢ້ຽມຢາມ ແລະຕີລາຄາວ່າ ***"ດຽນບຽນຟູແມ່ນຖານທັບ ທີ່ບໍ່ມີໃຜຈະເອົາຊະນະໄດ້"*** (17)

.....

*17. ປະຫວັດສາດການພົວພັນການທູດລາວ ສະຖາບັນການຕ່າງປະເທດ 2009 ໜ້າ 34*

ແຕ່ແລ້ວ 7/5/1954 ຝຣັ່ງປະລາໄຊເຈັບແສບ ແລະຢ່າງໜັກ ຢູ່ສະໜາມ ຮົບດຽນບຽນຟູ ຈຶ່ງຍອມເຊັນສັນຍາຢູ່ເຊີແນວ 20/7/1954 **ຮັບຮູ້ ເອກະລາດ ອຳນາດອະທິປະໄຕ ແລະແຜ່ນດິນອັນຄົບຖ້ວນຂອງ 3 ປະເທດລາວ ຫວຽດນາມ ກຳປູເຈຍ**. ຝຣັ່ງຍິນດີຖອນກຳລັງຂອງຕົນອອກຈາກອິນດູຈີນ ຢ່າງບໍ່ມີເງື່ອນໄຂ ເພື່ອປ່ອຍໃຫ້ 3 ຊາດອິນດູຈີນແກ້ໄຂບັນຫາພາຍໃນ ແລະ ສ້າງຄວາມຖືກຕ້ອງ ປອງດອງຊາດ, ທຸກຝ່າຍທີ່ກ່ຽວຂ້ອງຮັບຮູ້ **ຝ່າຍປະເທດລາວ**[18] **ໃນຖານະກຳລັງ ການເມືອງຖືກຕ້ອງຕາມກົດໝາຍ ແລະ ມີເຂດທີ່ໝັ້ນ ຂອງຕົນສອງແຂວງຄື: ຊຳເໜືອ ຜົ້ງສາລີ**, ຈະຈັດການເລືອກຕັ້ງຢ່າງເສລີໃຫ້ສຳເລັດພາຍໃນປີ 1955. ສະເພາະຢູ່ລາວ ສັນຍາບົ່ງໄວ້ວ່າໃຫ້ປະທະຫານຝຣັ່ງໄວ້ 1.500 ຄົນ ເພື່ອສືບຕໍ່ ເຝິກແອບທະຫານຣາຊະອານາຈັກລາວ.

ໃນໄລຍະລໍຖ້າການ ແກ້ໄຂ ບັນຫາພາຍໃນ ເພື່ອການປອງດອງຊາດນັ້ນ ກຳລັງຂອງຝ່າຍປະເທດລາວ ໃຫ້ໄປເຕົ້າໂຮມຢູ່ສອງແຂວງຄື: ຊຳເໜືອ ແລະ ຜົ້ງສາລີ ແລະ ມີສິດກວດກາໃນພື້ນທີ່ດັ່ງກ່າວ. ປະຕິບັດຕາມສັນຍານີ້ ຝ່າຍ ປະເທດລາວ ໄດ້ຂຶ້ນເຕົ້າໂຮມສອງແຂວງສຳເລັດ 11/1954 ລວມມີກຳລັງພົນ 9.138 ຄົນ.

ເມື່ອເຫັນວ່າຝຣັ່ງໝົດຄວາມສາມາດແລ້ວ ຈັກກະພັດອາເມຣິກາ ກໍ່ກະ ໂດດເຂົ້າມາແທນຝຣັ່ງ ໂດຍມີການເຊັນ **ແຈ້ງການຮ່ວມອາເມຣິກາ-ຝຣັ່ງ**[19] ທີ່ ວໍຊິງຕັນ 29/9/1954 ເພື່ອມອບໝາຍໃຫ້ອາເມຣິກາເປັນຜູ້ສືບຕໍ່ເຝິກແອບ ແລະ ຊ່ວຍເຫຼືອໂດຍກົງແກ່ກອງທັບຣາຊະອານາຈັກລາວ ຢ່າງຖືກຕ້ອງຕາມກົດໝາຍ. ຈາກນັ້ນ ອາເມຣິກາກໍ່ດຳເນີນກົນອຸບາຍຕ່າງໆເພື່ອໃຫ້ພວກລູກແຫ້ງຕົນມືຂອງ ຝຣັ່ງໃນເມື່ອກ່ອນ ທີ່ຫັນມານິຍົມອາເມຣິກາ ຂຶ້ນກຳອຳນາດການປົກຄອງ ແລະ ເປັນຜູ້ບັນຊາການທະຫານ.

.....

*18. ຊື່ໃໝ່ຢ່າງເປັນທາງການ ຂອງບັນດາກຳລັງປະຕິວັດ ແລະກອງທັບລາວອິດສະລະ ທີ່ລະບຸໃນສັນຍາເຊີແນວ 1954*

*19. ປະຫວັດສາດ ກອງທັບປະຊາຊົນລາວ 1949-1975 ໜ້າ 184-187*

ອາເມຣິກາໄດ້ຊີ້ຈ້ຳຈອບອອຍ **ຫຸຍ ຊະນະນິກອນ** ລັດຖະມົນຕີກະຊວງ ການຕ່າງປະເທດ ບໍ່ໃຫ້ລົງນາມໃນສັນຍາເຊັແນວ, ແຕ່ເມື່ອທ່ານ **ກຸ ວໍຣະວົງ** ລັດ ຖະມົນຕີກະຊວງປ້ອງກັນປະເທດ ຊຶ່ງເປັນຮອງຫົວໜ້າຄະນະຜູ້ແທນ ເປັນຜູ້ມີ ແນວຄິດຮັກຊາດ ສັນຕິພາບ ເປັນກາງ ເປັນຜູ້ເຊັນສັນຍາເຊັແນວ ທັງໄດ້ອຳນວຍ ຄວາມສະດວກໃຫ້ **ສະເດັດເຈົ້າສຸພານຸວົງ** ໄດ້ພົບກັບ **ສະເດັດເຈົ້າສຸວັນນະພູມາ**[20] ນາຍົກລັດຖະມົນຕີ ເພື່ອເວົ້າເຖິງການເລືອກຕັ້ງຕາມທີ່ໄດ້ກຳນົດໄວ້ໃນສັນຍາ ເຊັແນວນັ້ນ ພວກອາເມຣິກາ ແລະລູກມື ກໍ່ລອບຄາຕະກຳເພີ່ນເສຍ ໃນເວລາ ຮ່ວມງານລ້ຽງຢູ່ເຮືອນຂອງ ຫຸຍ ຊະນະນິກອນ 18/9/54.

ຕໍ່ຈາກນັ້ນ ພວກເຂົາໄດ້ບີບບັງຄັບໃຫ້ ສະເດັດເຈົ້າສຸວັນນະພູມາ ລາ ອອກຈາກນາຍົກລັດຖະມົນຕີ ແລ້ວກໍ່ໃຫ້ເຈົ້າຊີວິດສີສະຫວ່າງວົງ ບົ່ງຕົວເອົາ **ກະຕ່າຍ ໂດນສະໂສລິດ** ຂຶ້ນເປັນນາຍົກລັດຖະມົນຕີແທນ 27/11/1954, ແລ້ວ ອາເມຣິກາ ກໍ່ຄວບຄຸມບັນຊາໃນຖານະ **ທີ່ປຶກສາ** ແຊກແຊງຮຸກຮານລາວ ແລະ ເພີ່ມທະວີສົງຄາມ ໃນລາວຂຶ້ນເລື້ອຍໆ ພາຍໃຕ້ຄຳເວົ້າຫຼອກລວງທີ່ວ່າ ***"ຕ້ານການແພ່ຂະຫຍາຍ ຂອງລັດທິຄອມມູນິດ ຢູ່ອາຊີອາຄະເນ"***

8/9/1954 ເພື່ອສະກັດກັ້ນ **"ຄອມມູນິດ"** ຕາມທິດສະດີ **"ໂດມິໂນ"** ອາ ເມຣິກາ ແລະພັນທະມິດຄື: ອັງກິດ ຝຣັ່ງ ອົດສະຕາລີ ນິວຊີແລນ ໄທ ຟີລິບປິນ ແລະ ປາກິສະຖານ ໄດ້ຈັດຕັ້ງ **ອົງການປ້ອງກັນອາຊີອາຄະເນ** ຫຼື **ຊີອາໂຕ** (Southeast Asia Treaty Organization/ SEATO) ຂຶ້ນທີ່ຟີລິບປິນ ຊຶ່ງ ເປັນການຮ່ວມມືທາງການທະຫານລ້ວນໆ ແລ້ວກໍ່ກຳນົດເອົາວ່າ ລາວ ຫວຽດ ນາມ ແລະ ກຳປູເຈຍ ເປັນເຂດຕ້ອງອາລັກຂາ, ຊຶ່ງພວກເຂົາເຫັນວ່າຫາກ 3 ປະເທດນີ້ກາຍເປັນຄອມມູນິດແລ້ວ ກໍ່ຈະເປັນອັນຕະລາຍຕໍ່ສັນຕິພາບ ແລະ ຄວາມໝັ້ນຄົງຂອງບັນດາປະເທດພາຄີ.

.....

*20. ສະເດັດເຈົ້າສຸວັນນະພູມາ ເປັນນ້ອງຊາຍຂອງ ສະເດັດເຈົ້າເພັດຊະຣາດ ແລະເປັນອ້າຍ (ຕ່າງແມ່) ຂອງສະເດັດເຈົ້າສຸພານຸວົງ, ເປັນທູດ, ເປັນລັດຖະມົນຕີຫຼາຍກະຊວງ, ເປັນນາຍົກ ລັດຖະມົນຕີຂອງຣາຊະອານາຈັກລາວ13 ສະໄໝ ນັບແຕ່ 23/12/1951 ເຖິງ 2 ທັນວາ 1975 ໃນນີ້ສະໄໝລັດຖະບານປະສົມ 3 ເທື່ອ. (ປຶ້ມເຈົ້ານະຫາອຸປະຣາດ ເພັດຊະຣາດ ມະຫາສິລາ ວິຣະວົງສ໌, ຄະນະກຳມະການວິທະຍາສາດສັງຄົມ 1996)*

10/1954 ລັດຖະບານໄທຍ໌ ໄດ້ປະກາດໃຫ້ການຊ່ວຍເຫຼືອ ລັດຖະບານ ຣາຊະອານາຈັກລາວຈັດຕັ້ງ **"ແນວຕໍ່ຕ້ານຄອມມຸຍນິດ"** ຈາກນັ້ນ **ພົນໂທເດດ ປະຕິຍຸດ** ໃນນາມຄະນະໄມຕີຈິດມິດຕະພາບ ໄດ້ເຂົ້າມາລາວເພື່ອສັງເກດການ ດ້ານການທະຫານ. 2/1955 ສອງຝ່າຍກໍ່ເຊັນສັນຍາປ້ອງກັນຊາຍແດນຮ່ວມກັນ ໂດຍລາວເຫັນດີໃຫ້ທະຫານໄທເຂົ້າຊາຍແດນລາວໄດ້ເຖິງ 20 ກິໂລແມັດ.

ວັນທີ 1/2/1955 ອາເມຣິກາໄດ້ສ້າງຕັ້ງ **ອົງການສືບລາຊະການລັບ** (CIA ເຊອີອາ) ຂອງຕົນຂຶ້ນມາທັນທີທີ່ວຽງຈັນ. ພາຍຫຼັງກອງປະຊຸມກຸ່ມຊີອາໂຕ ຄັ້ງທຳອິດທີ່ບາງກອກ (23-25/2/1955) 28/2/1955 ຈອນ ຟອສເຕີ ດັນເລດ (Jonh Foster Dulles) ລັດຖະມົນຕີການຕ່າງປະເທດອາເມຣິກາໄດ້ມາລາວ, ພົບກັບກະຕ່າຍ ໂດນສະໂສລິດ, ຜຸຍ ຊະນະນິກອນ, **ເຈົ້າຊີວິດ ສີສະຫວ່າງວົງ**[21] ແລະປະກາດແຜນການຊ່ວຍເຫຼືອງົບປະມານດ້ານການທະຫານ ຕຳຫຼວດ ແລະ ກຳລັງໃຕ້ດິນແກ່ຝ່າຍວຽງຈັນ.

ອາເມຣິກາ ໄດ້ໃຫ້ການຊ່ວຍເຫຼືອການເງິນແກ່ພວກຫຸ່ນວຽງຈັນຂຶ້ນເຖິງ 100 ລ້ານໂດລາສະຫະລັດ ເຮັດໃຫ້ຝ່າຍວຽງຈັນ ຂະຫຍາຍກຳລັງທະຫານຈາກ 20.000 ຄົນໃນທ້າຍປີ 1954 ຂຶ້ນເປັນ 25.000 ຄົນໃນທ້າຍປີ 1956. ລັດຖະບານ ກະຕ່າຍ ໂດນສະໂສລິດ ຈັດການປ່ຽນເຄື່ອງແບບ ເຄື່ອງໝາຍໃຫ້ ຂ້າຣາຊະການພົນລະເຮືອນຂັ້ນສູງທະຫານຕຳຫຼວດ, ໂດຍປະຖົ້ມແບບຂອງຝຣັ່ງ ປ່ຽນມາໃຊ້ຂອງອາເມຣິກາ ພ້ອມທັງສັບປ່ຽນຂ້າຣາຊະການ ນາຍທະຫານ ນາຍ ຕຳຫຼວດໂດຍເອົາລູກແຫ້ງຕົນມືທີ່ນິຍົມອາເມລິກາຂຶ້ນກຳຕຳແໜ່ງສຳຄັນໆ.

ນັບແຕ່ເຊັນສັນຍາເຊີແນວ 1954 ເປັນຕົ້ນມາ ຝ່າຍປະເທດລາວໄດ້ ສະເໜີໃຫ້ຈັດຕັ້ງການເຈລະຈາສອງຝ່າຍ ເພື່ອສ້າງຄວາມຖືກຕ້ອງປອງດອງ ຊາດ, ເຖິງ 1/1955 ຂະບວນການນີ້ ຈຶ່ງໄດ້ເລີ່ມຕົ້ນທີ່ຄັ້ງໝາແລ່ນ[22] ທົ່ງໄຫຫີນ

.....

*21. ເຈົ້າຊີວິດ ຣາຊະອານາຈັກຫຼວງພະບາງ 1904-1946*
*ແລະ ເຈົ້າຊີວິດພຣະຣາຊະອານາຈັກລາວ 1946-1959*
*22. ຄຳນີ້ ບໍ່ແນ່ໃຈວ່າອັນໃດຖືກແທ້ ເພາະບາງເອກະສານວ່າ "ຄັ້ງມ້າແລ່ນ"*

ຊຸງຂວາງ (ຕະຫຼອດໄລຍະ 3 ປີ, ການເຈລະຈາຂາດບັ້ນ 7 ເທື່ອ ) ໂດຍມີທ່ານ **ພູມີ ວົງວິຈິດ** ເປັນຫົວໜ້າຄະນະຝ່າຍປະເທດລາວ ແລະທ່ານໝໍ ດຣ.**ທອງດີ ສູນທອນວິຈິດ**[23] ເປັນຫົວໜ້າຝ່າຍຣາຊະອານາຈັກລາວ ແລະໄດ້ມີຖະແຫຼງການຮ່ວມ 19/1/1955 ວ່າ: **ຈະຮ່ວມມືກັນປະຕິບັດຕາມສັນຍາເຊີແນວ ແລະຈັດໃຫ້ມີການເລືອກຕັ້ງທົ່ວໄປ.** ແຕ່ວ່າພວກລັດຖະບານຫຸ່ນວຽງຈັນ ຊ້ຳພັດບໍ່ເຫັນດີນຳ ຖະແຫຼງການນັ້ນໂດຍສະເພາະຕໍ່ຄຳຂວັນທີ່ວ່າ: **ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ** ໂດຍເຂົາເຫັນວ່າ ເປັນຄຳເວົ້າຂອງ ຄອມມູນິດ ທ່ານໝໍ ທອງດີ ຖືກຕຳນິຢ່າງໜັກ, ຖືກຮຽກກັບຄືນວຽງຈັນ ແລະ ຖືກ ປົດອອກຈາກຫົວໜ້າຄະນະເຈລະຈາທັນທີ.

ສາມວັນ ຫຼັງຈາກຖະແຫຼງການຮ່ວມນັ້ນ 21/1/1955 ຝ່າຍວຽງຈັນກໍ່ ສວຍໂອກາດ ໃນສະພາບການໂຍະຍານນີ້ ບຸກຕີເຂົ້າສອງແຂວງເຕົ້າໂຮມ ແລະ ເຖິງ 5/1955 ກະຕ່າຍ ໄດ້ສົ່ງກອງທະຫານຂອງຕົນ 11 ກອງພັນ ທີ່ມີຈຳນວນ ພົນກວມເຖິງ 2/3 ຂອງທັງໝົດຂອງກອງທັບຣາຊະອານາຈັກ ບຸກຕີເຂົ້າເຂດປົດ ປ່ອຍຫວັງດັບສູນກຳລັງຂອງຝ່າຍປະເທດລາວ ແລະ ນາບຂູ່ປາບປາມຄົນຂອງ ຝ່າຍປະເທດລາວ (ຜູ້ທີ່ເຄີຍເຂົ້າຮ່ວມເຮັດການຕໍ່ຕ້ານໃນເມື່ອກ່ອນ ແລ້ວກັບ ຄືນເມືອຢູ່ໃນ 10 ແຂວງ). ເຖິງວ່າ ຈະມີສັນຍາຢຸດຮົບແຕ່ 6/8/54 ໄລ່ມາເຖິງ 7/2/1955 ທະຫານຝ່າຍວຽງຈັນ ກໍ່ໄດ້ບຸກຕີເຂົ້າເຂດເຕົ້າໂຮມສອງແຂວງຂອງ ຝ່າຍປະເທດລາວ ລວມ 72 ເທື່ອ, ສ້າງຄວາມເສຍຫາຍທັງແກ່ຊີວິດ ແລະຊັບ ສິນຂອງປະຊາຊົນຢ່າງມາກມາຍ.

22/3/1955 ພັກປະຊາຊົນລາວ (ພັກປະຊາຊົນປະຕິວັດລາວ) ໄດ້ຮັບ ການສ້າງຕັ້ງຂຶ້ນ. ພັກໄດ້ວາງແນວທາງການເມືອງ ແລະໜ້າທີ່ສະເພາະໜ້າຂອງ ການປະຕິວັດຄື: **ສາມັກຄີທົ່ວປວງຊົນ, ຕໍ່ສູ້ເພື່ອເຮັດສຳເລັດພາລະກິດປົດປ່ອຍ**

.....

*23. ດຣ. ທອງດີ ສູນທອນວິຈິດ ຜູ້ແທນລາສະດອນແຂວງສາລະວັນ 2 ສະໄໝ, ເປັນລັດຖະ ມົນຕີກະຊວງວັດທະນະທຳ, ກະຊວງກະສິກຳ, ກະຊວງຍຸຕິທຳ, ຜູ້ແຕ່ງທຳນອງເພງຊາດລາວ, ເພງລາວຮ່ວມສຳພັນ, ເພງເຕືອນໃຈລາວ ແລະເພງອື່ນໆ... ໄດ້ຮັບນາມະຍົດສິລະປິນແຫ່ງຊາດ*

**ຊາດ, ກໍ່ສ້າງປະເທດລາວ ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ, ມີ 5 ສະຫາຍຄື: ໄກສອນ ພົມວິຫານ (ເລຂາທິການ), ໜູຮັກ ພູມສະຫວັນ, ສີສະຫວາດ ແກ້ວບຸນພັນ ແລະ ບຸນພົມມະຫາໄຊ ໄດ້ຮັບເລືອກຕັ້ງເປັນຄະນະບໍລິຫານງານສູນກາງພັກ.**

25/5/1955 ຝ່າຍອຸງຈັນ ດຳເນີນການເລືອກຕັ້ງຜູ້ແທນຣາສະດອນແຕ່ຝ່າຍດຸງອ ໂດຍບໍ່ໃຫ້ຝ່າຍປະເທດລາວເຂົ້າຮ່ວມນຳ ອັນເປັນການລະເມີດສັນຍາເຊີແນວຢ່າງໂຈ່ງແຈ້ງ, ແຕ່ວ່າ ຜົນການເລືອກຕັ້ງທີ່ປາກົດອອກ 25/12/1955 ກໍ່ບໍ່ເປັນໄປຕາມທີ່ນາຍົກກະຕ່າຍຕ້ອງການ.

ການກະທຳຂອງກະຕ່າຍ ແລະພັກພວກຂອງເຂົາເຊັ່ນ: ການປາບປາມຜູ້ຮັກຊາດ, ການບໍ່ປະຕິບັດຕາມສັນຍາເຊີແນວ, ບໍ່ສືບຕໍ່ການເຈລະຈາ, ການຈັດການເລືອກຕັ້ງແຕ່ຝ່າຍດຸງອ ແລະການບຸກຍຶດເຂດປົດປ່ອຍ ແລະອື່ນໆລ້ວນແຕ່ຖືກມະຫາຊົນໂຮມຊຸມນຸມຄັດຄ້ານກ່າວປະນາມ. ສຸດທ້າຍ ກະຕ່າຍຈຳຕ້ອງຍອມລາອອກຈາກຕຳແໜ່ງນາຍົກລັດຖະມົນຕີ 2/1956. ເຈົ້າສຸວັນນະພູມາໄດ້ຂຶ້ນເປັນນາຍົກລັດຖະມົນຕີແທນ 21/3/1956 ແລະ ເຫັນດີດຳເນີນການເຈລະຈາກັບຝ່າຍປະເທດລາວເພື່ອສ້າງຄວາມປອງດອງຊາດ.

6/1/1956 ຕໍ່ໜ້າສະພາບການທີ່ປ່ຽນແປງນີ້ ແນວລາວອິດສະລະໄດ້ໄຂກອງປະຊຸມໃຫຍ່ຂອງຕົນຂຶ້ນເປັນເທື່ອທີ2ແລະໄດ້ວາງແນວທາງເປີດກວ້າງແນວໂຮມແຫ່ງຊາດໂດຍມີການປ່ຽນຊື່ຈາກ ແນວລາວອິດສະລະ ເປັນ**ແນວລາວຮັກຊາດ** ເພີ່ມທະວີການຕໍ່ສູ້ທາງດ້ານການເມືອງຢູ່ພາຍໃນ ແລະຕ່າງປະເທດຢ່າງແຂງແຮງແລະກວ້າງຂວາງ.

1/8/1956 ສະເດັດ ເຈົ້າສຸວັນນະພູມາ ແລະ ສະເດັດເຈົ້າສຸພານຸວົງ ໄດ້ພົບກັນ, ສາມາດຕົກລົງບັນຫາພື້ນຖານດ້ານການເມືອງ, 5/8/1956 ທັງສອງຝ່າຍໄດ້ອອກຖະແຫຼງການຮ່ວມກຳນົດເສັ້ນທາງເດີນຂອງປະເທດລາວ ຄື: **ສັນຕິພາບ ເປັນກາງ, ຮັບປະກັນສິດເສລີພາບ ປະຊາທິປະໄຕ ຂອງປະຊາຊົນ**.

ເຫັນແນວນັ້ນ, ອາເມຣິກາກໍ່ດຳເນີນການຂັດຂວາງການລວມລາວທັນທີ ດ້ວຍການບີບນາຍົກເຈົ້າສຸວັນນະພູມາ, ຫາກຍັງດຳເນີນການລວມລາວຢູ່, 1/1957 ອາເມຣິກາຈະໃຫ້ກະຕ່າຍ ຈັດຕັ້ງລັດຖະບານຕ່າງຫາກຢູ່ພາກໃຕ້ໂດຍຈະເອົາ **ບຸນອຸ້ມ ນະຈຳປາສັກ**[24] ເປັນນາຍົກ, ລັດຖະບານໄທຍ໌ກໍ່ຢຸດຂາຍເຂົ້າ ແລະ ສິນຄ້າຕ່າງໆໃຫ້ລາວ, 3/1957 ອາເມຣິກາໄຂກອງປະຊຸມຊີອາໂຕຢູ່ອົດສຕາລີ.ເມື່ອຖືກບີບໜັກ ເຈົ້າສຸວັນນະພູມາກໍ່ຈຳເປັນໄດ້ລາອອກຈາກຕຳແໜ່ງ 30/5 /1957. ສະພາຜູ້ແທນລາສະດອນໃຫ້ກະຕ່າຍຈັດຕັ້ງລັດຖະບານ ແຕ່ເວລາຜ່ານໄປ 3 ເດືອນ ກະຕ່າຍກໍ່ບໍ່ສາມາດຈັດຕັ້ງໄດ້ ເພາະບໍ່ມີຜູ້ຮ່ວມມື ດັ່ງນັ້ນ 9/8/1957 ເຈົ້າສຸວັນນະພູມາ ຈຶ່ງຖືກບົ່ງຕົວໃຫ້ກັບມາເປັນນາຍົກລັດຖະມົນຕີອີກ. ເຈົ້າສຸວັນນະພູມາໄດ້ສືບຕໍ່ເຈລະຈາລວມລາວ ກັບຝ່າຍແນວລາວຮັກຊາດ, ເຖິງວັນທີ 2/11/1957 ສອງຝ່າຍໄດ້ເຊັນສັນຍາທີ່ວຽງຈັນ.

ປະຕິບັດຕາມສັນຍາທີ່ເຊັນກັນ 18/11/1957 ຝ່າຍແນວລາວຮັກຊາດ ໄດ້ມອບ**ສອງແຂວງ ຊຳເໜືອ ຜົ້ງສາລີ ເຂົ້າຮ່ວມກັບຝ່າຍຣາຊະອານາຈັກລາວ** ແລະມອບ**ກຳລັງຂອງຝ່າຍຕົນຈຳນວນ 1.500 ຄົນ ເຂົ້າຮ່ວມໃນກອງທັບແຫ່ງຊາດ ໂດຍໃຫ້ກຳລັງດັ່ງກ່າວໄປລໍຖ້າ ຢູ່ຄັງໄຂ ຊຽງຂວາງ,** ສ່ວນທີ່ເຫຼືອໄດ້ມອບອາວຸດໃຫ້ແກ່ຝ່າຍຣາຊະອານາຈັກລາວ ແລ້ວກັບເມືອທ້ອງຖິ່ນຂອງໃຜລາວໃນຖານະເປັນກຳລັງກອງໜູນແຫ່ງຊາດ. ໃນພິທີຕ້ອນຮັບກຳລັງຝ່າຍແນວລາວຮັກຊາດ ທີ່ຝ່າຍວຽງຈັນຊຶ່ງຈັດຂຶ້ນຢູ່ທົ່ງໄຫຫີນນັ້ນ ຝ່າຍວຽງຈັນໄດ້ໃຫ້ພະນັກງານ-ນັກຮົບແນວລາວຮັກຊາດ ກິນນ້ຳສາບານ ກ່າວປະຕິຍານຕົນ ແລະ ຮົດນ້ຳມົນ.

19/11/1957 ສະພາຜູ້ແທນລາສະດອນຮັບຮອງເອົາ**ລັດຖະບານປະສົມ** (ຄັ້ງທີ 1) ໂດຍມີການປັບປຸງຈາກລັດຖະບານຊຸດ 9/8/1957 ທີ່ມີລັດຖະມົນຕີ

.....

*24. ອະດີດເຈົ້າຜູ້ຄອງນະຄອນຈຳປາສັກ ກ່ອນຝຣັ່ງເຂົ້າມາລາວ, ເມື່ອປະກາດເອກະລາດລວມລາວ ເປັນແຜ່ນດິນດຽວເຈົ້າບຸນອຸ້ມໄດ້ເປັນຜູ້ກວດກາລາຊະການແຜ່ນດິນ ຕາງເຈົ້າຊີວິດຫຼວງພະບາງ, ເປັນໜຶ່ງໃນຈຳນວນຜູ້ນິຍົມຝຣັ່ງ ແລະອາເມຣິກາ.*

6 ຄົນ ແລ້ວເພີ່ມເປັນ 12 ຄົນ ແລະ ລັດຖະມົນຕີຊ່ວຍ 4 ຄົນ ໃນນີ້ມີຕົວແທນ ຂອງຝ່າຍແນວລາວຮັກຊາດ ເຂົ້າຮ່ວມເປັນລັດຖະມົນຕີ 2 ຄົນຄື: **ສະເດັດເຈົ້າ ສຸພານຸວົງ** ລັດຖະມົນຕີກະຊວງແຜນຜັງ ກໍ່ສ້າງ ແລະເຄຫະສະຖານ, ແລະ **ທ່ານ ພູມີ ວົງວິຈິດ** ລັດຖະມົນຕີກະຊວງທຳມະການ ແລະ ສິລະປາກອນ.

20/11/1957 (ວັນດຽວຫຼັງຈາກສະພາຮັບຮອງລັດຖະບານປະສົມ) ໂຄສົກ ກະຊວງການຕ່າງປະເທດອາເມຣິກາຖະແຫຼງວ່າ: ***...ການຮ່ວມປະສົມກັບຄອມ ມູນິດ ແມ່ນເສັ້ນທາງທີ່ອັນຕະລາຍ... ດ້ວຍເຫດນີ້ທ່າຂະຫຍາຍຕົວຂອງສະພາບ ການຢູ່ລາວໄດ້ເຮັດໃຫ້ອາເມຣິກາວິຕົກກັງວົນຫຼາຍ ແລະ ສະຫະຣັດອາເມຣິກາ ຈະເອົາໃຈໃສ່ປະເທດລາວນີ້ຢ່າງໃກ້ຊິດ.”*** ຈາກນັ້ນອາເມຣິກາກໍ່ດຳເນີນມາດ ຕະການຕ່າງໆເພື່ອບີບລັດຖະບານປະສົມເຊັ່ນ: ຊູ່ຈະຕັດການຊ່ວຍເຫຼືອດ້ານ ເສດຖະກິດ, ລົດຄ່າເງິນກີບລົງຈາກ 35 ກີບ ຕໍ່ໂດລາ ເປັນ 80 ກີບ ຕໍ່ໂດລາ. ລວມທັງເຮັດໃຫ້ຄະນະກຳມະການສາກົນກວດກາການປະຕິບັດສັນຍາເຊີແນວ ຍຸຕິການປະຕິບັດໜ້າທີ່.

ຝ່າຍແນວລາວຮັກຊາດຮູ້ດີວ່າ ການເຊັນສັນຍາລວມລາວເທື່ອນີ້ ຈັກ ກະພັດອາເມຣິກາ ແລະ ລັດຖະບານຫຸ່ນວຽງຈັນບໍ່ມີຄວາມຈິງໃຈ, ພຽງແຕ່ຢາກ ປະຕິບັດກົນອຸບາຍ **“ຫອກເສືອອອກຈາກຖ້ຳ ແລ້ວຂ້າຖິ້ມ”** ດັ່ງນັ້ນ ແນວລາວ ຮັກຊາດຈຶ່ງມີຍຸດໂທບາຍ**“ຫວ່ານກ້າເພື່ອເອົາແນວ”** ໂດຍຍອມມອບສອງແຂວງ ເຂດທີ່ໝັ້ນຂອງຕົນ, ເອົາກຳລັງຂອງຕົນພຽງແຕ່ 1.500 ຄົນເຂົ້າຮ່ວມໃນກອງ ທັບແຫ່ງຊາດ, ຍອມຮັບໃຫ້ມີພຽງການເລືອກຕັ້ງຜູ້ແທນລາສະດອນແບບເພີ່ມ ເຕີມ. (ແທນທີ່ຈະມີການເລືອກຕັ້ງແບບທົ່ວໄປ)

3/1958 ຝ່າຍວຽງຈັນໄດ້ສັ່ງໃຫ້**ຝ່າຍແນວລາວຮັກຊາດ ແຍກກຳລັງ ອອກເປັນ 2 ກອງພັນຄື: ກອງພັນທີ 1 ໃຫ້ໄປຕັ້ງຢູ່ຊຽງເງິນ ແຂວງຫຼວງພະບາງ ສ່ວນກອງພັນທີ 2 ໃຫ້ຍ້າຍມາຢູ່ຄັງໝາແລ່ນທົ່ງໄຫຫີນ** ທັງນີ້ເພື່ອຕັດຂາດ ສອງກອງພັນນີ້ອອກຈາກກັນ ແລະ ຈະສະດວກໃນການດັບສູນ. ຫຼັງຈາກນັ້ນ ຝ່າຍວຽງຈັນໄດ້ເອົາກຳລັງຂອງຕົນປິດລ້ອມທີ່ຕັ້ງຂອງສອງກອງພັນດັ່ງກ່າວ

ຢ່າງແໜ້ນໜາ. ສະເພາະຢູ່ທົ່ງໄຫຫີນຝ່າຍວຽງຈັນໃຊ້ 3 ກອງພັນລົດຫຸ້ມເກາະ ປືນໃຫຍ່ ແລະອາວຸດຕ່າງໆທີ່ທັນສະໄໝ ປິດລ້ອມກອງພັນທີສອງໄວ້ທຸກດ້ານ. ຈາກນັ້ນກໍ່ດຳເນີນການໂຄສະນາໃສ່ຮ້າຍປ້າຍສີແນວລາວຮັກຊາດ ເພື່ອຊື້ຈ້າງ ຈອບອອຍ ດ້ວຍວັດຖຸ ເງິນຄຳ ຍົດຖາບັນດາສັກ, ຫຼິ້ນລະຄອນ "**ປະດັບຍົດຊັ້ນ**" ແລະ "**ປ່ຽນອາວຸດເກົ່າ**" ເພື່ອປົດອາວຸດ ແລະໃຫ້ພະນັກງານ-ນັກຮົບ ແນວລາວ ຮັກຊາດຫຼົງເຊື່ອ ແລ້ວອອກມາຍອມຈຳນົນຕໍ່ພວກເຂົາ.

ພາຍຫຼັງ ທີ່ເລື່ອນມາຈາກຕົ້ນປີ, ຍ້ອນການຂັດຂວາງຂອງພວກກະຕ່າຍ ເຖິງ 4/5/1958 ໄດ້ມີການເລືອກຕັ້ງສະມາຊິກຜູ້ແທນລາສະດອນ ເພີ່ມເຕີມ ເອົາ 21 ທ່ານ(ຈາກເດີມມີ 38 ເພີ່ມເປັນ 59) ຝ່າຍແນວລາວຮັກຊາດມີຜູ້ສະໝັກ 13 ຄົນ, ໄດ້ 9 ຄົນ ພິເສດໃນນັ້ນ ສະເດັດເຈົ້າສຸພານຸວົງ ສະໝັກຢູ່ແຂວງວຽງຈັນ ໄດ້ຄະແນນສຽງຫຼາຍທີ່ສຸດເປັນປະຫວັດສາດ 37.389 ສຽງ **ແລະ ນາງຄຳແພງ ບຸບຜາ ໄດ້ເປັນຜູ້ແທນເພດຍິງຜູ້ທຳອິດຂອງລາວ** ທັງຍັງໄດ້ຄະແນນສູງສຸດຢູ່ ແຂວງຫຼວງພະບາງ. ພັກສັນຕິພາບເປັນກາງຂອງທ່ານ **ກິນິມ ພົນເສນາ**ຊຶ່ງຫາກໍ່ ສ້າງຕັ້ງໄດ້ 10 ເດືອນ ແລະເອົາແນວທາງສັນຕິພາບ ເປັນກາງ ແລະ ປ້ອງດ້ອງ ຊາດເປັນນະໂຍບາຍ ມີຜູ້ສະໝັກ 4 ຄົນ ໄດ້ໝົດທັງ 4 ຄົນ, ສ່ວນພັກທີ່ຕ້ານ ແນວທາງສັນຕິພາບຂອງກະຕ່າຍ ບວກກັບພັກຂອງຜຸຍ ຊະນະນິກອນ ໄດ້ພຽງ 5 ຄົນ, ພັກອື່ນໆ ແລະຜູ້ບໍ່ສັງກັດພັກໃດໄດ້ 3 ຄົນ.

ເມື່ອຕົກຢູ່ໃນທ່າເສຍປຽບທາງດ້ານການເມືອງແນວນັ້ນ 17/6/1958 ພາຍໃຕ້ການບັນຊາລັບຂອງເຊອີອາ **ຄະນະກຳມະການປ້ອງກັນຜົນປະໂຫຍດ ຂອງຊາດ** ຫຼື **ເຊດິນ**[25] ໄດ້ຮັບການສ້າງຕັ້ງຂຶ້ນ ໂດຍມີບັນດາບຸກຄົນທີ່ນິຍົມ ອາເມຣິກາ ເປັນສະມາຊິກເຊັ່ນ: ພູມີ ໜໍ່ສະຫວັນ ສີສຸກ ນະຈຳປາສັກ... ກຸ່ມນີ້ ມີໜ້າທີ່ຕ້ານແນວທາງສັນຕິພາບ ແລະການປ້ອງດ້ອງຊາດ. ຕໍ່ມາພັກລາວກ້າວ ໜ້າຂອງກະຕ່າຍ ໂດນສະໂສລິດ ແລະ ພັກເສລີຂອງ ຜຸຍ ຊະນະນິກອນ ໄດ້ ລວມເຂົ້າກັນເປັນ**ພັກລາວລວມລາວ**

.....

*25. ວັນທີ 12/4/1959 ເຊດິນ ໄດ້ປ່ຽນເປັນ ພັກປະຊາສັງຄົມ, ມີ ພູມີ ໜໍ່ສະຫວັນ ເປັນປະທານ*

ຕໍ່ມາ ເຈົ້າສຸວັນນະພູມມາ ໄດ້ລາອອກຈາກຕຳແໜ່ງນາຍົກລັດຖະມົນຕີ ຍ້ອນກຸ່ມນິຍົມອາເມຣິກາບີບບັງຄັບ, ເປັນອັນວ່າລັດຖະບານປະສົມທີ່ດຳເນີນງານມາພຽງ 8 ເດືອນກໍ່ສິ້ນສະພາບລົງ. ເຖິງຢ່າງໃດກໍ່ຕາມໃນອາຍຸລັດຖະບານປະສົມນີ້ ໄດ້ມີການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍສຳຄັນຫຼາຍສະບັບເຊັ່ນ: ກົດໝາຍວ່າດ້ວຍສິດເສລີພາບ ປະຊາທິປະໄຕ ສິດສະເໝີພາບລະຫວ່າງຍິງ-ຊາຍ, ລະຫວ່າງຊົນເຜົ່າ, ກົດໝາຍລົບລ້າງລະບອບ "ກວງ, ລ່ານ" ກຳນົດຖານະຕົວໜັງສືລາວ ແລະ ພາສາລາວ ເປັນພາສາ ແລະ ອັກສອນທາງການ.

18/8/1958 ຜຸຍ ຊະນະນິກອນ ໄດ້ຂຶ້ນເປັນນາຍົກລັດຖະມົນຕີ ໂດຍບໍ່ໃຫ້ຄົນຂອງຝ່າຍແນວລາວຮັກຊາດເຂົ້າຮ່ວມ ໃນຄະນະລັດຖະບານ. 11/2/ 59 ຜຸຍ ຊະນະນິກອນ ໄດ້ຈັດຖະແຫຼງຂ່າວ ຕໍ່ສື່ມວນຊົນປະກາດວ່າ ***"ລັດຖະບານຣາຊະອານາຈັກລາວ ຖືວ່າການປະຕິບັດສັນຍາເຊີແນວ 1954 ສຳເລັດແລ້ວ"*** ອັນເປັນການສ້າງເງື່ອນໄຂສະດວກໃຫ້ອາເມຣິກາຮຸກຮານລາວ. ຈາກນັ້ນເຂົາກໍ່ຂັບໄລ່ຄະນະກຳມະການກວດກາສາກົນອອກຈາກລາວ, ແລະ ແຕ່ງບົດລາຍງານເຖິງສະຫະປະຊາຊາດວ່າ ***"ຫວຽດນາມເໜືອເຂົ້າຮຸກຮານລາວ"*** ຜຸຍ ຂໍສິດພິເສດຈາກສະພາ ໂດຍອ້າງວ່າເພື່ອເອົາໄປໃຊ້ເຮັດໃຫ້ບ້ານເມືອງ ມີຄວາມສະຫງົບຮຽບຮ້ອຍ. ໂດຍມີການຊີ້ຈ້ຳຄະແນນສຽງ, ຜຸຍໄດ້ຮັບການສະໜັບສະໜູນພຽງ 26 ສຽງ, ຂະນະທີ່ມີຜູ້ຄັດຄ້ານ 25 ສຽງ.

ເມື່ອໄດ້ສິດພິເສດແລ້ວ 1/5/1959 ຜຸຍ ແລະ ກະຕ່າຍ ກໍ່ສັບຊ້ອນກຳລັງຂອງຕົນໃຫ້ເຂົ້າກຳຕຳແໜ່ງສຳຄັນ, ສັ່ງໃຫ້ທະຫານຝ່າຍວຽງຈັນປິດລ້ອມ ແລະ ຂົ່ມຂູ່ກຳລັງຂອງແນວລາວຮັກຊາດ ເມື່ອເຫັນວ່າກຳລັງຝ່າຍແນວລາວບໍ່ຍອມກົ້ມຫົວໃຫ້ແລ້ວ ຜຸຍກໍ່ຕັດເງິນເບ້ຍລ້ຽງບັນດາລູກເມຍພະນັກງານ, ຮັດວົງລ້ອມເຂົ້າເຫຼືອພຽງ 300 ແມັດ ແລະສຸມປາຍປືນປືນເຂົ້າໃສ່ທີ່ຕັ້ງກອງພັນທີສອງ.

18/5/1959 ຝ່າຍວຽງຈັນມີຄຳສັ່ງເດັດຂາດ **"ໃຫ້ກຳລັງຂອງຝ່າຍປະເທດລາວຍອມຈຳນົນ, ຫາກຂັດຂືນກໍ່ຈະຖືກດັບສູນ"** ຍ້ອນທາດແທ້ມູນເຊື້ອຕໍ່ສູ້

ບໍ່ຍອມຈຳນົນ, ຄວາມສະຫຼາດສ່ອງໃສຂອງພັກ, ຄວາມຈົງຮັກພັກດີຕໍ່ປະເທດ ຊາດ-ຕໍ່ປະຊາຊົນ, ຍ້ອນກຳໄດ້ພູມີປະເທດ, ຄວາມສະໜຸງສະຫຼາດ ແລະ ມີ ໄຫວພິບຂອງຄະນະນຳ, ຄະນະພັກ ຄະນະບັນຊາກອງພັນທີ 2 ພ້ອມກັບ ພະນັກງານ- ນັກຮົບ ໄດ້ພ້ອມກັນຕັດສິນໃຈເອກະພາບ ແຫກຜ່າວົງປິດລ້ອມອັນ ແໜ້ນແກ່ນຂອງຝ່າຍວຽງຈັນ ອອກໄປສູ່ຖານທີ່ໝັ້ນຂອງການປະຕິວັດໃນຄືນ ວັນທີ 18/5/1958 ນັ້ນໂລດ. ຕະຫຼອດໄລຍະທາງການແຫກຜ່າວົງປິດລ້ອມນັ້ນ ຝ່າຍວຽງຈັນໄດ້ສົ່ງກຳລັງໄລ່ລ່າຕິດຕາມທັງທາງໜ້າດິນ ແລະ ອາກາດ ເຖິງ ວັນທີ 1/6/1959 ກອງພັນທີສອງ ຈຶ່ງເຖິງເຂດທີ່ໝັ້ນຢ່າງປອດໄພ ແລະເລີ່ມ ປະຕິບັດນະໂຍບາຍ **ຫັນທິດຕໍ່ສ້** ທັນທີ.

ຂະນະທີ່ກອງພັນທີ 1 ເຖິງແມ່ນວ່າອອກມາບໍ່ຄົບໜ້າຄົບຕາ ແຕ່ກໍ່ໄດ້ ຢັ້ງຢືນໃຫ້ເຫັນນ້ຳໃຈປະຕິວັດບຸກ, ຄວາມຈົງຮັກພັກດີຕໍ່ຊາດ-ຕໍ່ປະຊາຊົນ, ເຮັດ ໃຫ້ກົນອຸບາຍຫຼອກເສືອອອກຈາກຖ້ຳ ຂອງຝ່າຍວຽງຈັນປະລາໄຊລົ້ງ, ກົ້ງກັນ ຂ້າມ ຍິ່ງເຮັດໃຫ້ບົດບາດ ແລະອິດທິພົນ ຂອງຝ່າຍແນວລາວຮັກຊາດ ມີຊື່ສຽງ ດັງກ້ອງກັງວານໄປທົ່ວປະເທດ ແລະທົ່ວໂລກ.

ເມື່ອບໍ່ສາມາດດັບສູນສອງກອງພັນ ຂອງຝ່າຍແນວລາວຮັກຊາດໄດ້ ແລ້ວ ຜູຍ ແລະກະຕ່າຍ ກໍ່ຈົ່ງຫັນເຂົ້າສູ່ຕົວເມືອງດຳເນີນການປິດລ້ອມ, ນາບຂູ່, ປາບປາມ ແລະ ຈັບກຸມຜູ້ນຳຂອງຝ່າຍແນວລາວຮັກຊາດທີ່ຢູ່ວຽງຈັນ ຈຳນວນ 16 ຄົນ[26] ໄປຂັງຄຸກທີ່ໂພນເຄັງ 28/7/1959 ແລະປັ້ນແຕ່ງຄະດີຟ້ອງຂຶ້ນສານ ວ່າເປັນ **"ກະບົດຊາດ"** (ທັງໆທີ່ບາງທ່ານເປັນສະມາຊິກສະພາຜູ້ແທນລາສະດອນ ຊຶ່ງລັດຖະທຳມະນູນໃຫ້ສິດພິເສດຄຸ້ມຄອງ) ອັນເປັນຂໍ້ກ່າວຫາທີ່ມີບົດລົງໂທດ ໜັກເຖິງຂັ້ນປະຫານຊີວິດ. ຕູ່ຫາວ່າແນວລາວເອົາທະຫານຫວຽດນາມ ເຂົ້າມາ ຮຸກຮານລາວ ແລະ ຮຽກຮ້ອງໃຫ້ສະຫະປະຊາຊາດມາກວດກາ.

.....

*26. ໃນຈຳນວນ 16 ຄົນມີ: ສະເດັດເຈົ້າ ສຸພານຸວົງ, ໜູຮັກ ພູມສະຫວັນ, ພູມີ ວົງວິຈິດ, ພູນ ສີປະເສີດ, ສີທົນ ກົມມະດຳ, ສົງກະໂປ ສີໂຄດຈຸນນະມາລີ, ມາ ໄຂຄຳພິທູນ, ໝື່ນ ສົມວິຈິດ ມະຫາສົມບູນ ວົງໜໍ່ບຸນທຳ, ຄຳເພັດ ພົມມະວັນ, ສີຊະນະ ສີສານ, ຄຳຜາຍ ບຸບຜາ, ເພົ້າ ພົມພະຈັນ, ພູເຂົາ, ບົວສີ ຈະເລີນສຸກ ແລະ ມານະ.*

ສຳລັບນາງ ຄຳແພງ ບຸບຜາ ຜູ້ແທນເພດຍິງແນວລາວຮັກຊາດນັ້ນ ເນື່ອງຈາກນາງພວມຖືພາ ພວກເຂົາຈຶ່ງພຽງກັກບໍລິເວນ, ຄວບຄຸມຢ່າງເຂັ້ມງວດ.

ຝ່າຍວຽງຈັນເຮັດທຸກວິຖີທາງ ເພື່ອເລັ່ງລັດໃຫ້ສານຕັດສິນລົງໂທດຜູ້ນຳ ແນວລາວຮັກຊາດທີ່ຖືກຈັບກຸມແຕ່ເຮັດບໍ່ໄດ້. ການກະທຳຂອງພວກຫຸ່ນວຽງຈັນ ໄດ້ສ້າງຄວາມເຈັບແຄ້ນແໜ້ນໃຈແກ່ຝ່າຍແນວລາວຮັກຊາດທີ່ສຸດ. ມວນຊົນຜູ້ ຮັກຊາດ, ຜູ້ຮັກຄວາມເປັນທຳ ແລະຜູ້ເຫັນເລ່ກົນອຸບາຍອັນຊົ່ວຮ້າຍ ທັງພາຍໃນ ແລະຕ່າງປະເທດ ລວມທັງພະສົງສາມະເນນ ໄດ້ວິພາກວິຈານຄັດຄ້ານ ກ່າວ ປະນາມ ແລະທວງໃຫ້ປ່ອຍຕົວຜູ້ນຳແນວລາວຮັກຊາດຢ່າງບໍ່ມີເງື່ອນໄຂ.

11/8/1959 ຜຍ ປະກາດພາວະສຸກເສີນໃນ ບັນດາແຂວງພາກເໜືອ ເປີດບັ້ນເຂົ້າກວາດລ້າງກຳລັງແນວລາວຮັກຊາດໃນແຂວງຫົວພັນ ຊຽງຂວາງ ຫຼວງພະບາງ ແລະ ຜົ້ງສາລີ. ອາເມຣິກາເພີ່ມທະວີການຊ່ວຍເຫຼືອດ້ານການ ທະຫານໃຫ້ແກ່ຝ່າຍວຽງຈັນ ເຮັດໃຫ້ພວກເຂົາສາມາດຂະຫຍາຍກຳລັງທະຫານ ບ້ານ, ເສີມກຳລັງຫຼວງຂຶ້ນເຖິງ 32.000 ຄົນ ຈັດຕັ້ງເປັນ 65 ກອງຮ້ອຍ, ສ້າງ ພື້ນຖານດ້ານການທະຫານເຊັ່ນ: ສ້າງຖະໜົນຕິດຕໍ່ກັບພາກໃຕ້ຫວຽດນາມ, ສະໜາມບິນ 30 ແຫ່ງ, ສະຖານີຣາດາ, ສູນຝຶກດ້ານການທະຫານ, ສ້າງນັກສືບ ສອດແນມ, ນຳເອົາສາສະໜາພຸດນິກາຍທຳມະຍຸດເຂົ້າມາລາວ, ຂະຫຍາຍ ສາສະໜາເຍຊູ... ເປັນຕົ້ນ.

14/12/1959 ຍ້ອນຂັດແຍ່ງດ້ານຜົນປະໂຫຍດ ແລະສິດອຳນາດ ຜຸຍ ຊະນະນິກອນ ໄດ້ປົດ ພູມີ ໜໍ່ສະຫວັນ ແລະ ສູນທອນ ປະຖຳມະວົງ ອອກຈາກ ຄະນະລັດຖະບານ. ພູມີ ໜໍ່ສະຫວັນ ຕອບໂຕ້ດ້ວຍການເຮັດລັດຖະປະຫານ ໂຄ່ນລົ້ມ ຜຸຍ ຊະນະນິກອນ ລົງຈາກອຳນາດທັນທີ. 8/1/1960 ລັດຖະບານ ໃໝ່ຖືກຈັດຕັ້ງຂຶ້ນ ໂດຍມີ **ກຸ ອະໄພ** ເປັນນາຍົກ, ຫຍຸຍ ອະໄພ ແລະ ພູມີ ໜໍ່ສະຫວັນ ເປັນຮອງນາຍົກ ທັງເປັນລັດຖະມົນຕີກະຊວງປ້ອງກັນປະເທດ ແຕ່ ຄຸມອຳນາດທັງໝົດ ແລະນະໂຍບາຍ ກໍ່ບໍ່ມີຫຍັງປ່ຽນແປງ.

24/4/1960 ຝ່າຍອຽງຈັນດຳເນີນການເລືອກຕັ້ງ ຜູ້ແທນລາສະດອນ ແຕ່ຝ່າຍດຽວ ໂດຍບໍ່ໃຫ້ແນວລາວຮັກຊາດເຂົ້າຮ່ວມນຳ. ເຖິງວ່າສາມາດຈັດຕັ້ງ ສະພາໄດ້ ແຕ່ລັດຖະບານ ກຸ ອະໄພ ກໍ່ບໍ່ສາມາດດຳເນີນງານ, ຈຳຕ້ອງລາອອກ ຈາກຕຳແໜ່ງໃນ 30/5/1960. ເຈົ້າຊີວິດໄດ້ບົ່ງຕົວເອົາ **ເຈົ້າສົມສະໜິດ** ຂຶ້ນເປັນ ນາຍົກ, ສ່ວນພູມີ ໜໍ່ສະຫວັນ ເປັນຮອງນາຍົກ ທັງເປັນລັດຖະມົນຕີກະຊວງ ປ້ອງກັນປະເທດ ແຕ່ຄຸມອຳນາດທັງໝົດຄືເກົ່າ.

24/5/1960 ຍ້ອນກຳລັງແຮງຂອງມະຫາຊົນ, ເຫັນໄດ້ທາດແທ້ປະຕິການ ຂອງຝ່າຍລັດຖະບານຫຸ່ນອຽງຈັນ, ສົມທົບໃສ່ການປຸກລະດົມ ຂົນຂວາຍ ຂອງ ພະນັກງານ, ລູກເມຍ ແລະ ບັນດາທ່ານຜູ້ນຳເຮົາ ທີ່ຢູ່ໃນຄຸກກໍ່ໄດ້ອອກແຮງ ໂຄສະນາຂົນຂວາຍ ສຶກສາອົບຮົມເຮັດໃຫ້ນາຍ ແລະພົນທະຫານຝ່າຍອຽງຈັນ ຫັນມາໃຫ້ການຮ່ວມມື ແລະຈັດຕັ້ງອຳນວຍຄວາມສະດວກ, ນຳພາບັນດາທ່ານ ຜູ້ນຳແນວລາວຮັກຊາດ ແຫກຄຸກໂພນເຄັງ ເຊິ່ງເປັນບ່ອນທີ່ພວກເຂົາມີການ ປ້ອງກັນໜາແໜ້ນ, ແມ່ນແຕ່ເຂັມໜຶ່ງດອງຕົກລົງດິນກໍ່ສາມາດແນມເຫັນໄດ້, ແມ່ນ ແຕ່ນົກໂຕນ້ອຍກໍ່ບໍ່ສາມາດບິນອອກຈາກຄ້າຍຄຸມຂັງໂພນເຄັງ, ແຕ່ຜູ້ນຳຂອງ ແນວລາວຮັກຊາດ ພັດສາມາດອອກໄດ້ຢ່າງປອດໄພ ນີ້ແມ່ນສິ່ງມະຫັດສະຈັນ ດ້ານການເມືອງຂອງໂລກ ທີ່ຜູ້ນຳການປະຕິວັດລາວສ້າງຂຶ້ນ.

ຍ້ອນເຫັນໄດ້ກຳລັງແຮງ ແລະທາດແທ້ຂອງກຳລັງປະຕິວັດ (ແນວລາວ ຮັກຊາດ), ເຫັນການດູຖູກ ໝິ່ນປະໝາດຄົນລາວຂອງອາເມຣິກາ, ເຈັບແຄ້ນ ແລະ ເບື່ອໜ່າຍອາດຍາເຈົ້ານາຍຝ່າຍອຽງຈັນ ທີ່ຍອມກົ້ມຫົວຟັງຄຳສັ່ງຂອງ ອາເມຣິກາ, ປ່ອຍໃຫ້ອາເມຣິກາມາແຊກແຊງ ແລະເຂັ່ນຂ້າຄົນລາວ, ດັ່ງນັ້ນ ນາຍ ແລະພົນທະຫານ **ກອງພັນທະຫານຮາບອາກາດທີ 2**[27] ຂອງຝ່າຍອຽງຈັນ ນຳໂດຍ **ຮ້ອຍເອກກອງແລ**[28], **ຮ້ອຍເອກຄຳລ້ອມ, ຮ້ອຍໂທເດືອນ ສູນນະລາດ, ຮ້ອຍໂທ ກອງສີ ຂັດຕິຍະລາດ, ຮ້ອຍໂທ ທັນ, ຮ້ອຍໂທ ແຈ້ງ ໄຊຍະວົງ, ຮ້ອຍຕີ ທຽບ ລິດທິເດດ ແລະຜູ້ອື່ນໆ** ຈຶ່ງໄດ້ແຍກຕົວອອກຈາກຜູ້ບັງຄັບບັນຊາຂອງ ພວກເຂົາ ແລ້ວໄດ້ເຮັດລັດຖະປະຫານໃນວັນທີ 9/8/1960 ໂຄ່ນລົ້ມລັດຖະບານ ທີ່ມີເຈົ້າສົມສະໜິດ ເປັນນາຍົກລັດຖະມົນຕີ. ຄະນະລັດຖະປະຫານໄດ້ຮັບການ

ສະໜັບສະໜູນຈາກຫຼາຍພາກສ່ວນເຊັ່ນ: ນັກຮຽນຮູ້, ນັກສຶກສາ, ກຳມະກອນ ຊາວນາ ປະຊາຊົນຊາວນະຄອນຫຼວງວຽງຈັນເປັນຢ່າງດີຍິ່ງ. ຄະນະລັດຖະປະຫານໄດ້ຈັດຕັ້ງລັດຖະບານໃໝ່ໂດຍມີ ເຈົ້າສຸວັນນະພູມາ ເປັນນາຍົກ ລັດຖະມົນຕີ ແລະ ມີບຸກຄົນຜູ້ຮັກຊາດ ຮັກສັນຕິພາບ ເປັນກາງຫຼາຍຄົນຮ່ວມເປັນຄະນະລັດຖະມົນຕີ ເຊັ່ນ: ທ່ານກິນິມ ພົນເສນາ ເປັນລັດຖະມົນຕີກະຊວງການຕ່າງປະເທດ.

ລັດຖະບານໃໝ່ນີ້ມີແນວທາງ **ສັນຕິພາບ ເອກະລາດ ເປັນກາງ ແລະ ເຫັນດີຮ່ວມມືກັບແນວລາວຮັກຊາດ ເພື່ອສ້າງຄວາມຖືກຕ້ອງປອງດອງຊາດ ແລະ ຕໍ່ຕ້ານອາເມຣິກາ** ຈຶ່ງໄດ້ເຊີນໃຫ້ແນວລາວຮັກຊາດເຂົ້າຮ່ວມມື. ເພື່ອປະຕິບັດຕາມຄວາມຮຽກຮ້ອງດັ່ງກ່າວນີ້ ທ່ານ ໜູຮັກ ພູມສະຫວັນ ພ້ອມຄະນະ 5 ຄົນ ທີ່ຫ້ຳໂຕນອອກຈາກຄຸກໂພນເຄັງ ແລະກຳລັງເດີນທາງມຸ່ງໜ້າສູ່ເຂດປົດປ່ອຍ ແລະອ້າຍນ້ອງຈຳນວນໜຶ່ງຈຶ່ງໄດ້ກັບຄືນມາວຽງຈັນ ເພື່ອຮ່ວມມືກັບລັດຖະບານ ແລະສົມທົບດ້ານການທະຫານກັບກຳລັງກອງແລ ຮັກສາອຳນາດການປົກຄອງ ແລະລັດຖະບານໃໝ່ທີ່ຕັ້ງຂຶ້ນ.

.....

*27. ທະຫານຮາບອາກາດທີ 2 (ກອງພັນໂດດຈ້ອງ) ເປັນກອງໜຶ່ງໃນກອງທັບແຫ່ງຊາດ ຣາຊະນາຈັກລາວ ທີ່ອາເມຣິກາຈັດຕັ້ງຂຶ້ນ 7/1959 ມີຈຳນວນພົນ 800 ຄົນ ແບ່ງເປັນ 5 ກອງຮ້ອຍ ກອງພັນນີ້ເຄີຍສົມທົບກັບກອງອື່ນໆ ບຸກຕີກວາດລ້າງກຳລັງຂອງແນວລາວຮັກຊາດໃນແຂວງຈຳປາສັກ ອັດຕະປື ຊຳເໜືອ ແລະຊຽງຂວາງ (ໜອງແຮດ) ແລ້ວກັບຄືນມາຕັ້ງທັບ ຢູ່ເຂດບ້ານດົງບັງ ເມືອງໄຊທານີ ຊານເມືອງວຽງຈັນ ຈຶ່ງຖືກພະນັກງານພົ້ນຖານ ແລະປະຊາຊົນປຸກລະດົມຂົນຂວາຍ ໃຫ້ເຫັນແຈ້ງກົນອຸບາຍຂອງອາເມຣິກາ ແລະພວກຫຸ່ນວຽງຈັນ ລຸກຂຶ້ນເຮັດລັດຖະປະຫານແຍກຕົວອອກຈາກຝ່າຍວຽງຈັນ ປະກາດໂຕເປັນກາງ ຮ່ວມມືກັບແນວລາວຮັກຊາດ.*

.....

*28. ກອງແລ ເກີດ16/3/1933 ຮຽນຈົບຈາກໂຮງຮຽນນາຍຮ້ອຍດົງເຫັນ (ສະຫວັນນະເຂດ) ຕິດຍົດຮ້ອຍຕີ ໃນປີ 1954 ໄຕ່ເຕົ້າຂຶ້ນຊັ້ນຮ້ອຍເອກ ແລະເປັນຜູ້ບັນຊາກອງພັນທະຫານຮາບອາກາດ (ທະຫານໂດດຈ້ອງ) ທີສອງດັ່ງກ່າວ. ພາຍຫຼັງເຮັດລັດຖະປະຫານສຳເລັດແລ້ວ ໄດ້ຮ່ວມມືກັບແນວລາວຮັກຊາດ ແລະໄດ້ຮັບການຂຶ້ນຊັ້ນເປັນພົນຕີ ເພື່ອໃຫ້ສົມກຽດໃນການເດີນທາງໄປຢາມ ແລະພົບປະກັບນາຍທະຫານໃນປະເທດເພື່ອນມິດ. ແຕ່ໜ້າເສຍດາຍ ໃນເວລາຕໍ່ມາເຂົາໄດ້ກັບຄືນໄປເປັນລູກນ້ອງຂອງ ພູມີ ໜໍ່ສະຫວັນ ຈາກນັ້ນສອງເດືອນກໍຖືກປົດອອກຈາກທະຫານ ແລະຖືກຂັບໄລ່ໄປຢູ່ອິນໂດເນເຊຍ, ໄປຢູ່ຮົ່ງກົ່ງ-ຝຣັ່ງເສດ ແລະກັບມາເປັນລູກມືປະຕິການຈີນ. ກອງແລເສຍຊີວິດ ໃນວັນທີ 18/1/2014*

ຂະນະດຽວກັນນີ້ **ນາຍພົນ ຄຳອ້ອນ ບຸບຜາ** ຜູ້ບັນຊາການທະຫານ 2 ກອງພັນ ຢູ່ຜົ້ງສາລີ ພ້ອມດ້ວຍຂ້າຣາຊະການຝ່າຍພົນລະເຮືອນ ກໍ່ປະກາດສະໜັບສະໜູນຝ່າຍເປັນກາງທັນທີ.[29]

ໂດຍຈັບເອົາໂອກາດສະພາບການມີການຫັນປ່ຽນອັນມີຜົນດີໃຫ້ແກ່ກຳລັງປະຕິວັດ, ສູນກາງແນວລາວຮັກຊາດ ໄດ້ວ່ອງໄວນຳໃຊ້ກຳລັງຫຼວງ ແລະກຳລັງທ້ອງຖິ່ນ ປົດປ່ອຍຫຼາຍຂົງເຂດໃນແຂວງຫົວພັນ (5/9/1960), ປົດປ່ອຍເນື້ອທີ່ໄດ້ 6.000 ກວ່າຕາແມັດ, ພົນລະເມືອງ 11.000 ຄົນ. ເປີດບັ້ນບຸກໂຈມຕີສັດຕູຕາມສາຍທາງເລກທີ 13 ເໜືອ, ທິດໃຕ້ເມືອງວັງວຽງ, ເຂດກາສີ, ສາຍທາງເລກ 7, ສາລາພູຄູນ, ເມືອງສູຍ, ທິດຕາເວັນອອກເຂດໜອງແຮດ.

10/9/1969 ອາເມຣິກາປະກາດຢຸດໃຫ້ການຊ່ວຍເຫຼືອລັດຖະບານເຈົ້າສຸວັນນະພູມາ ແຕ່ຫັນໄປໃຫ້ການຊ່ວຍເຫຼືອ **ຄະນະກຳມະການປະຕິວັດ** ທີ່ນຳໂດຍ ພູມີ ໜໍ່ສະຫວັນ ໄດ້ສົມຄົບຄິດກັບເຈົ້າ **ບຸນອຸ້ມ ນະ ຈຳປາສັກ** ທີ່ໄດ້ເຕົ້າໂຮມກຳລັງຢູ່ປາກເຊ ສະຫວັນນະເຂດ ເພື່ອບຸກຕີເຂົ້າຍຶດບັນດາຕົວເມືອງໃຫຍ່ເຊັ່ນ: ທ່າແຂກ, ປາກຊັນ, ແລະສືບຕໍ່ບຸກຂຶ້ນຕາມສາຍທາງເລກທີ 13 ເພື່ອຍຶດນະຄອນຫຼວງວຽງຈັນ ໂດຍມີການຊ່ວຍໜູນຈາກຝັ່ງໄທຍ໌.

ວັນທີ11/11/1960 ພັນຕີ ບຸນແຕ່ງ ອິນສີຊຽງໃໝ່ ຜູ້ບັນຊາການທະຫານພາກ 3 ຢູ່ຫຼວງພະບາງ ປະກາດໂຕສະໜັບສະໜູນພູມີ -ບຸນອຸ້ມ.

6/12/1960 ພັນເອກ **ກຸປະສິດ ອະໄພ ຜູ້ບັນຊາການທະຫານພາກ 5, ອ້ອນ ຣາຕິກຸນ ຜູ້ບັນຊາການທະຫານສູງສຸດ**.[30] ໄດ້ນຳກຳລັງຂອງພວກເຂົາຊຶ່ງໄດ້ປະຕິຍານຕົນກັບຄະນະລັດຖະປະຫານ ແລະລັດຖະບານໃໝ່ວ່າຈະຮ່ວມມືຢ່າງບໍລິສຸດໃຈກັບຄະນະລັດຖະປະຫານນັ້ນ ປັ້ນໄປຮ່ວມມືກັບ ພູມີ ໜໍ່ສະຫວັນ.

.....

*29. ການຮ່ວມສຳພັນສູ້ຮົບ ລະຫວ່າງກຳລັງເປັນກາງຮັກຊາດ ໃນການຕໍ່ສູ້ຕ້ານ ຈັກກະພັດອາເມຣິກາ ຂຽນໂດຍ: ຄຳອ້ອນ ບຸບຜາ*

13/12/1960 ທະຫານ ກຸປະສິດ- ພູມີ ທີ່ມີທະຫານໄທ, ທະຫານຈາກ ຫວຽດນາມໃຕ້, ທະຫານຮັບຈ້າງຟີລິປິນ ພາຍໃຕ້ການບັນຊາການຂອງທີ່ປຶກສາ ອາເມຣິກາ ໄດ້ບຸກຍຶດນະຄອນຫຼວງວຽງຈັນ ແລ້ວພວກເຂົາກໍ່ປະກາດຈັດຕັ້ງ ລັດຖະບານໃໝ່ຂຶ້ນໂດຍມີ ບຸນອູ້ມ ນະ ຈຳປາສັກ ເປັນນາຍົກລັດຖະມົນຕີ ແລະ ພູມີ ໜໍ່ສະຫວັນ ເປັນຮອງນາຍົກ ແຕ່ມີອຳນາດຄຸມວຽກງານທຸກດ້ານ.

ການສູ້ຮົບປ້ອງກັນເມືອງວຽງຈັນຜ່ານໄປຫຼາຍວັນ ກອງກຳລັງຂອງຝ່າຍ ພູມີ ໜໍ່ສະຫວັນ ແຂງແຮງກວ່າ ຝ່າຍລັດຖະບານເຈົ້າສຸວັນນະພູມມາ ແລະ ແນວ ລາວຮັກຊາດ ພິຈາລະນາເຫັນວ່າ ຖ້າຈະຕໍ່ສູ້ປ້ອງກັນຢູ່ໃນໂຕເມືອງວຽງຈັນ ກໍ່ຈະ ເກີດຄວາມເສຍຫາຍຫຼາຍ ສະນັ້ນໂດຍປະຕິບັດຕາມແຜນນະໂຍບາຍຮັກສາ ກຳລັງ ແລະຮັກສາໂຕເມືອງ, ສູນກາງພັກ ຈຶ່ງອອກຄຳສັ່ງໃຫ້ກຳລັງຝ່າຍແນວ ລາວຮັກຊາດ ແລະກຳລັງເປັນກາງກອງແລ ພ້ອມທຸກການຈັດຕັ້ງ ນັກຮຽນ ນັກ ສຶກສາ ປັນຍາຊົນ ແລະມວນຊົນຈຳນວນຫຼວງຫຼາຍທີ່ເຫັນດີເຫັນພ້ອມໃນແນວ ທາງສັນຕິພາບ ເອກະລາດ ເປັນກາງ ໄດ້ຖອນອອກຈາກໂຕເມືອງວຽງຈັນ ໃນ 16/12/1960 ທັງເຄື່ອນທັບທັງຕີສັດຕູຕາມເສັ້ນທາງເລກທີ 13 ແລະ ທາງເລກ 7 ມຸ່ງໜ້າສູ່ຊຽງຂວາງ. ເຖິງວັນທີ 1/1/1961 ກອງກຳລັງແນວລາວຮັກຊາດ ແລະ ກຳລັງເປັນກາງ ກໍ່ສາມາດປົດປ່ອຍເຂດຍຸດທະສາດຄັງໝາແລ່ນ (ທົ່ງໄຫ ຫີນ) ຊຽງຂວາງສຳເລັດ.

ສຳນັກງານລັດຖະບານທີ່ຖືກກົດໝາຍ ອັນມີເຈົ້າສຸວັນນະພູມາ ເປັນ ນາຍົກລັດຖະມົນຕີ ໄດ້ຕັ້ງຂຶ້ນຢູ່ຄັງໄຂ ແລະສຳນັກງານຂອງເຈົ້າສຸພານຸວົງ ກໍ່ ມາຕັ້ງຢູ່ໃກ້ກັນ. ບັນດາປະເທດສັງຄົມນິຍົມເຊັ່ນ: ຫວຽດນາມ ຈີນ ສະຫະພາບ

.....

*30. ໃນປີປະກາດເອກະລາດ 1945 ອ້ວນ ຣາຕີກຸນ ມີຍົດຮ້ອຍເອກ ແລະໄດ້ຮັບການແຕ່ງຕັ້ງ ເປັນຄະນະກອງບັນຊາການທະຫານແຂວງຫຼວງພະບາງ ຮອງທ່ານ ພັນຕີ ຄຳຜາຍ ບຸບຜາ, ເມື່ອລັດຖະບານລາວເອກະລາດໄປລີ້ໄພຢູ່ໄທຍ໌, ຜູ້ກ່ຽວໄດ້ໄປຮ່ວມສ້າງເຂດຕໍ່ຕ້ານຢູ່ ໄຊຍະບູລີ ກັບທ່ານ ພູມີ ວົງວິຈິດ ແລ້ວຕໍ່ມາກໍໄປຍອມຝຣັ່ງໃນປີ 1949. (ປຶ້ມຄວາມຊົງຈຳຂອງຊີວິດເຮົາ ໃນຂະບວນວິວັດແຫ່ງປະຫວັດສາດ ຂອງປະເທດລາວ ພູມີ ວົງວິຈິດ 1987 ໜ້າ 73 ແລະ 153-154)*

ໂຊຽດ ແລະ ເພື່ອນມິດຜູ້ຮັກຫອມສັນຕິພາບ ແລະຄວາມຖືກຕ້ອງປອງດອງ ຊາດ ຕ່າງກໍ່ຮັບຮູ້ແຕ່ລັດຖະບານນີ້ຖືກກົດໝາຍ ແລະໄດ້ໃຫ້ການຊ່ວຍເຫຼືອຢ່າງ ໃຫຍ່ຫຼວງທັງເຂົ້າປາອາຫານອາວຸດຍຸດທະພັນ. ເຮັດໃຫ້ຝ່າຍປະເທດລາວແລະ ກຳລັງເປັນກາງມີ ກອງຮ້ອຍລົດລຳລຽງ ພ້ອມອຸ່ສ້ອມແປງ, ມີປືນໃຫຍ່ໜ້າດິນ, ປືນປ້ອງກັນອາກາດ, ລົດຫຸ້ມເກາະ, ໂຮງໝໍ ໂຮງຮຽນ ແລະສາດຕາອາວຸດຊະນິດ ຕ່າງໆຢ່າງຄົບຖ້ວນ.

ກຳລັງເປັນກາງກອງແລ ຕັ້ງຄ້າຍຄູຢູ່ທົ່ງໄຫຫີນ, ສ່ວນກຳລັງຝ່າຍ ປະເທດລາວແມ່ນເຄື່ອນໄຫວຢູ່ເຂດນອກ, ທັງເຄື່ອນໄຫວຕີສັດຕູ, ທັງປຸກລະດົມ ກໍ່ສ້າງຮາກຖານ ຈັດຕັ້ງໜ່ວຍກອງຫຼອນ, ໜ່ວຍຍຸວະນາລີ, ກອງປ້ອງກັນຕົວ, ປຸກລະດົມປະຊາຊົນເກັບເຂົ້າຊ່ວຍຊາດ, ຮີບໂຮມເຂົ້າປາອາຫານ, ເຄື່ອງນຸ່ງຫົ່ມ ເພື່ອສົ່ງໃຫ້ອ້າຍນ້ອງທະຫານຢູ່ແນວໜ້າ. ໃນນັ້ນເດັ່ນກວ່າໝູ່ແມ່ນໜ່ວຍຊາວ ໜຸ່ມເມືອງແປກ ໂດຍມີທ່ານ ຈານອຸດ ວິໄລແສງ ເປັນຜູ້ຮັບຜິດຊອບ, ໄດ້ຈັດຕັ້ງ ເຄື່ອນໄຫວປະກອບມີອົງການຈັດຕັ້ງແມ່ຍິງ, ຊາວໜຸ່ມ, ຈັດຕັ້ງເປັນໜ່ວຍຂົນ ຂວາຍຊາວໜຸ່ມເຂົ້າເປັນທະຫານ, ເປັນໜ່ວຍລຳລຽງຂົນສົ່ງສະບຽງອາຫານໃຫ້ ອ້າຍນ້ອງທະຫານຢູ່ແນວໜ້າ, ຄຳຂັວນຂອງອຳນາດການປົກຄອງທ້ອງຖິ່ນເວລາ ນັ້ນ ***"ທຸກສິ່ງທຸກຢ່າງເພື່ອແນວໜ້າ"***. ເຖິງຕົ້ນປີ 1961 ເຮັດໃຫ້ຝ່າຍປະເທດລາວ ມີ 4 ກອງພັນນ້ອຍລວມໝູ່ 40 ກອງຮ້ອຍທ້ອງຖິ່ນ.

ພວກພູມີ ໜໍ່ສະຫວັນ ໄດ້ສຸມກຳລັງເປີດປັ້ນບຸກໂຈມຕີຫຼາຍເທື່ອ ດ້ວຍ ຫຼາຍຮູບແບບ ແລະດ້ວຍກຳລັງພົນອັນຫຼວງຫຼາຍ ເພື່ອຍາດເອົາທົ່ງໄຫຫີນຄືນ ແຕ່ກໍ່ຖືກກຳລັງຂອງຝ່າຍປະເທດລາວກັບກຳລັງເປັນກາງ ແລະກຳລັງປະຊາຊົນ ທ້ອງຖິ່ນຕີຕ້ານຄືນ ເຮັດໃຫ້ພວກເຂົາເສຍຫາຍຢ່າງໜັກ ບໍ່ພຽງແຕ່ທໍ່ນັ້ນ ກອງ ກຳລັງຝ່າຍແນວລາວຮັກຊາດ, ກຳລັງເປັນກາງຮັກຊາດ ໄດ້ເປີດປັ້ນຮົບຈັ້ງທ່າບຸກ ປົດປ່ອຍສາມແຍກສາລາພູຄູນ, ກາສີ, ວັງວຽງ, ຫີນເຫີບ ແລະປັກທຸງແບ່ງເຂດ ຄວບຄຸມຢູ່ຂ້ອນຳ້ລີກ ຫີນເຫີບເໜືອເມືອງວຽງຈັນ.

ສົມທົບກັບການປະລາໄຊໃນດ້ານຮົບອື່ນໆ ອາເມຣິກາ ແລະລູກມືຈີ່ງ ທັນມາໃຊ້ເລ່ກົນໃໝ່ທີ່ເອີ້ນວ່າ ***"ການແກ້ໄຂແບບສັນຕິ"*** ຄືເປີດການເຈລະຈາ ແລະຢຸດຍິງ 3/1961 ທີ່ຫີນເຫີບ, ກ້າວໄປເຖິງການພົບປະສາມຝ່າຍທີ່ນາມອນ ແຂວງວຽງຈັນ, **11/5/1961 ໄຂກອງປະຊຸມກ່ຽວກັບລາວໂດຍມີ 14 ປະເທດ ແລະລາວ 3 ຝ່າຍ (ຝ່າຍເປັນກາງ, ຝ່າຍແນວລາວຮັກຊາດ ແລະຝ່າຍຂວາ ວຽງຈັນ) ເຂົ້າຮ່ວມທີ່ເຊີແນວ 14/5/1961 (ປະເທດສະວິດ) ເຊັນສັນຍາຮັບຮູ້ ຄວາມເປັນເອກະລາດ ອຳນາດອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງ ລາວ, ສາມສະເດັດເຈົ້າ: ສຸວັນນະພູມາ, ສຸພານຸວົງ, ບຸນອຸ້ມ ນະ ຈຳປາສັກ ຕາງໜ້າ ແຕ່ລະຝ່າຍ ໄດ້ເຊັນຖະແຫຼງການຮ່ວມຢູ່ຊູລິກ (ປະເທດສະວິດ) 22/6/1961 ເພື່ອກຽມຈັດຕັ້ງລັດຖະບານປະສົມ 3 ຝ່າຍ.**

ຂະນະທີ່ດຳເນີນການເພື່ອຈັດຕັ້ງລັດຖະບານປະສົມຢູ່ນັ້ນ 2/1962 ບຸນອຸ້ມ-ພູມີ ກໍ່ໄດ້ສົ່ງກຳລັງຂອງເຂົ້າບຸກເຂົ້າຫຼວງນ້ຳທາ ເພື່ອສ້າງແປ້ນຢັນຍຶດເອົາ ເຂດພາກເໜືອ,ແຕ່ກໍ່ຖືກກຳລັງຝ່າຍແນວລາວຮັກຊາດຕີຕ້ານຄືນໃຫ້ປະລາໄຊ, ສາມາດປົດປ່ອຍຫຼວງນ້ຳທາ 18/5/1962 ພາຍຫຼັງຖືກປະລາໄຊໜັກໜ່ວງຢູ່ ບັ້ນຮົບຫຼວງນ້ຳທາ ແລ້ວກຳລັງຂອງຝ່າຍຂວາວຽງຈັນ (ບຸນອຸ້ມ-ພູມີ) ກໍ່ອ່ອນເພຍ ຈຳຕ້ອງຍອມພົບປະເຈລະຈາ ເຊັນສັນຍາທີ່ຄັ້ງໄຂ ຊຽງຂວາງ 7/6/1962 ແລະ ຈັດຕັ້ງລັດຖະບານປະສົມ 3 ຝ່າຍ ໂດຍມີເຈົ້າສຸວັນນະພູມາ ເປັນນາຍົກລັດຖະ ມົນຕີ 23/6/1962 ສະເດັດເຈົ້າສຸພານຸວົງ ເປັນຮອງນາຍົກ ແລະ ພູມີ ໜໍ່ສະຫວັນ ເປັນຮອງນາຍົກ. ສຳລັບດ້ານການທະຫານໄດ້ມີການແຕ່ງຕັ້ງຄົນ ຂອງແຕ່ລະ ຝ່າຍເປັນຄະນະເຈລະຈາຄື: ທ່ານພູນ ສີປະເສີດ (ແນວລາວ) ທ່ານ ຄຳອ້ວນ ບຸບຜາ (ເປັນກາງ) ແລະ ທ່ານ ກຸປະສິດ ອະໄພ (ຝ່າຍຂວາວຽງຈັນ).

ຈາກນັ້ນ ກໍ່ແຕ່ງຕັ້ງຕົວແທນລັດຖະບານປະສົມ ຊຶ່ງມີຄົນແຕ່ລະຝ່າຍ ປະກອບເປັນຄະນະຄື: ທ່ານ ກິນິມ ພົນເສນາ ລັດຖະມົນຕີການຕ່າງປະເທດເປັນ ຫົວໜ້າຄະນະ(ເປັນກາງ), ທ່ານ ພູມີ ວົງວິຈິດ ລັດຖະມົນຕີຖະແຫຼງຂ່າວ ແລະ ໂຄສະນາການ(ແນວລາວຮັກຊາດ) ແລະ ທ່ານ ໂງ່ນ ຊະນະນິກອນ (ຝ່າຍຂວາ

ວຽງຈັນ) ໃນນາມຂອງລັດຖະບານປະສົມ ໄປເຊັນສັນຍາເຊີແນວ ໃນວັນທີ 23/7/1962 ແລະ ຕໍ່ມາກໍ່ມີການເຊັນອະນຸສັນຍາ 7 ກັນຍາ 1962.

ຕະຫຼອດໄລຍະແຫ່ງການສູ້ຍັນກັນແຕ່ປີ 1960-1962, ເຖິງວ່າກຳລັງ ຂອງຝ່າຍວຽງຈັນ ຈະຫຼາຍລົ້ນກຳລັງຂອງຝ່າຍແນວລາວຮັກຊາດຕັ້ງຫຼາຍເທົ່າ ຄື : ຕົ້ນປີ 1962 ມີທະຫານຣາບ 31 ກອງພັນນ້ອຍເຄື່ອນທີ່, ມີ 35 ກອງ ພັນນ້ອຍ ປ້ອງກັນທີ່ຕັ້ງ, ມີ 201 ກອງຮ້ອຍທະຫານທ້ອງຖິ່ນ, ມີ 11 ກອງຮ້ອຍປືນໃຫຍ່, ມີເຮືອບິນຂົນສົ່ງ ແລະ ມີລົດຫຸ້ມເກາະ, ລົດຕັງຈຳນວນໜຶ່ງ ແຕ່ກຳລັງຝ່າຍແນວ ລາວຮັກຊາດກໍ່ສາມາດຍາດໄດ້ໄຊຊະນະ ແລະ ເປັນເຈົ້າການສະໜາມຮົບ ເລື້ອຍໆມາ, ສາມາດດັບສູນກຳລັງດິບຂອງສັດຕູໄດ້ຫຼາຍພັນຄົນ, ຍຶດພາຫະນະ ອາວຸດໄດ້ຫຼາຍພັນໂຕນ, ສາມາດປົດປ່ອຍພື້ນທີ່ໄດ້ 1/3 ຂອງປະເທດ, ພົນລະ ເມືອງໄດ້ຫຼາຍແສນຄົນ.

ຂະນະທີ່ ປວງຊົນລາວ ແລະຊາວໂລກຜູ້ຮັກໜອມສັນຕິພາບ ກຳລັງຊື່ນ ຊົມນຳ **ສັນຕິພາບ ເອກະລາດ ເປັນກາງ ແລະການປອງດອງຊາດ**ຂອງລາວນັ້ນ ຈັກກະພັດອາເມຣິກາ ແລະລູກແຫ້ງຕີນມື ກໍ່ສວຍໂອກາດນັ້ນ ອອກແຮງທຳ ລາຍສັນຍາສັນຕິພາບດ້ວຍອຸບາຍ **ໃຊ້ 2 ຕີ 1** ຄື ດຶງດູດເອົາກຳລັງເປັນກາງ ໄປ ເຂົ້າກັບຝ່າຍຂວາວຽງຈັນ ແລ້ວຕີຝ່າຍແນວລາວຮັກຊາດ.

21-31/7/1962 ເຈົ້າສຸວັນນະພູມາ ນາຍົກລັດຖະມົນຕີ ໄປຢ້ຽມຢາມ ອາເມຣິກາ ຕາມຄຳເຊີນ ຂອງປະທານາທິບໍດີ ແກນເນີດີ, ມີການພົບປະພິເສດ ກັບ ແກນເນີດີ ແລະດີນລັດ (ລັດຖະມົນຕີຕ່າງປະເທດ) ຈາກນັ້ນມາເຈົ້າສຸວັນນະ ພູມາ ແລະກອງແລ ກໍ່ອ້ຽງໄປເຂົ້າກັບຝ່າຍຂວາວຽງຈັນ. ພ້ອມທັ້ງປ່ຽນແປງການ ພົວພັນລະຫວ່າງ 3 ຝ່າຍໂດຍສະເພາະແມ່ນບໍ່ໃຫ້ຝ່າຍແນວລາວຮັກຊາດ ໄດ້ ນຳໃຊ້ເຄື່ອງຊ່ວຍເຫຼືອຂອງອາເມຣິກາ.

ຕົ້ນເດືອນ 8/1962 ອາເມຣິກາໄດ້ເລີ່ມປະກອບກຳລັງທັບອາກາດໃຫ້ ແກ່ຝ່າຍຂວາວຽງຈັນ ໂດຍຈັດສົ່ງຍົນຖິ້ມລະເບີດ T 28 (ເຕຊາວແປດ) ມາໃຫ້

ແບບປິດລັບ, ຈັດສົ່ງຄົນໄປຮຽນຂັບ ແລະສ້ອມແປງຍົນສູ້ຮົບທີ່ອຸດອນ ປະເທດໄທ ແລະເອົາກຳລັງທັບອາກາດ ກອງທະຫານເຮືອ ໄປຂຶ້ນໂດຍກົງກັບກອງເສນາທິການກາງ ຊຶ່ງມີອາເມຣິກາເປັນຜູ້ບັງຄັບບັນຊາໂດຍກົງ. 27/8/1962 ລັດຖະມົນຕີ 4 ທ່ານຂອງຝ່າຍແນວລາວຮັກຊາດ ໃນລັດຖະບານປະສົມ ໄດ້ເຂົ້າມາວຽງຈັນ ແຕ່ບໍ່ໄດ້ຮັບຄວາມສະດວກ ແລະຄວາມຮ່ວມມືຈາກຝ່າຍວຽງຈັນ ໃນການປະຕິບັດໜ້າທີ່, ຍ້ອນຖືກຂັດຂວາງ ແລະຖືກຕິດຕາມຄວບຄຸມ ໂດຍຝ່າຍຂວາວຽງຈັນ.

ທ້າຍປີ 1962 **ຜູ້ຕາງໜ້າ ປະທານາທິບໍດີອາເມຣິກາ** ແລະບັນດານາຍທະຫານຂັ້ນສູງຂອງ ເຊອີອາໄດ້ພົບປະກັບກອງແລ ໂດຍກົງຢູ່ທົ່ງໄຫຫີນ, ຈາກນັ້ນກໍ່ໄດ້ຊຸ້ນຊ້ຽວຊ່ວຍເຫຼືອດ້ານການເງິນ ແລະປະກອບອາວຸດໃຫ້ແກ່ກອງແລ ຢ່າງໄວວາເພື່ອຊ້ຳຈ້ຳຈອບອອຍ ແກ່ດຶງເອົາເຈົ້າສຸວັນນະພູມາ, ກອງແລອອກຈາກຝ່າຍແນວລາວຮັກຊາດ. ຂະນະດຽວກັນ ຝ່າຍຂວາວຽງຈັນກໍ່ຫຼີ້ນລະຄອນສົ່ງທະຫານຂອງຕົນ ທຳທ່າໂຕນເຂົ້າມາຮ່ວມມືກັບກຳລັງເປັນກາງ ຈາກນັ້ນ ກອງແລ ກໍ່ສັບຊ້ອນກຳລັງເອົາຜູ້ທີ່ເປັນໃຈຂຶ້ນບັງຄັບບັນຊາ ທັງສັ່ງໃຫ້ກຳລັງເປັນກາງຮັກຊາດຖອນອອກຈາກທີ່ຕັ້ງສຳຄັນ ແລ້ວສົ່ງກຳລັງເປັນກາງ (ທີ່ຖືກຊ້ຳຈ້ຳ) ແລະທະຫານ ພູມີ ໜໍ່ສະຫວັນ ຂຶ້ນໄປແທນທີ່ ແລະໄດ້ແຍກກອງບັນຊາການອອກຕ່າງຫາກ ຍ້າຍຈາກຄັງໄຂໄປຕັ້ງຢູ່ເມືອງພັນ ໃກ້ສູນບັນຊາການເຢແອັມ 23 ທີ່ຂຶ້ນກັບພັນເອກ ແອຕ່ຳ ຂອງຝ່າຍຂວາວຽງຈັນ.

ການກະທຳຂອງກອງແລ ໄດ້ສ້າງຄວາມແຕກແຍກໃນກອງກຳລັງເປັນກາງດ້ວຍກັນ. ວັນທີ 27/ 11/1962 ເຮືອບິນຂົນສົ່ງເຊ C.123 ຂອງອາເມຣິກາ 4 ລຳ ທີ່ບໍ່ໄດ້ຮັບຄວາມເຫັນດີຈາກລັດຖະບານປະສົມ ໄດ້ໄປເຖິງທ້ອງຟ້າທົ່ງໄຫຫີນ ເພື່ອສົ່ງຍຸດທະປັດໄຈໃຫ້ກອງແລ, ແຕ່ຖືກກອງຮ້ອຍທີ 1 ກອງພັນປືນໃຫຍ່ເຈົ້າອະນຸ ກຳລັງເປັນກາງຮັກຊາດ ບັນຊາໂດຍ ສະຫາຍ ຄຳສິງ ເພັດດາວເຮືອງ ຫົວໜ້າກອງຮ້ອຍໃຊ້ປືນ ປ.ຕ.ອ. 37 ມມ. ຍິງຍົນດັ່ງກ່າວຕົກ 1 ລຳ ຢູ່ບ້ານໜາມ (ຫົວເດີ່ນບິນທົ່ງໄຫຫີນ). ຈາກນັ້ນມາ ການຜັນແຍກກຳລັງເປັນກາງນັບມື້ນັບ

ເລີກເຊິ່ງເຖິງຂັ້ນສະກັດລັດຕີຂ້າຟັນກັນເອງ ໃນນັ້ນມີຊາວໜຸ່ມທີ່ຮັກຊາດ 26 ຄົນ[31] ໃນກອງພັນປືນໃຫຍ່ເຈົ້າອະນຸ ຖືກຂ້າຕາຍພ້ອມກັນຢ່າງປ່າເຖື່ອນໃນວັນທີ 12/3/1963 ທີ່ຫ້ວຍໜອງບ່ານ (ໜອງນ້ຳນິຄົມຄັງເພາະ) ບ້ານນາອູ່ ເມືອງຄູນແຂວງຊຽງຂວາງ. ນັບແຕ່ນັ້ນມາບັນດາທະຫານຝ່າຍເປັນກາງທີ່ມີນ້ຳໃຈຮັກຊາດອັນແທ້ຈິງ ເຫັນແຈ້ງກົນອຸບາຍຂອງຝ່າຍວຽງຈັນ ແລະ ອາເມຣິກາ ກໍ່ໄດ້ອອກຈາກທົ່ງໄຫຫີນໄປສືບຕໍ່ຮ່ວມມືກັບແນວລາວຮັກຊາດທີ່ຄັງໄຂ ແລ້ວສ້າງຕັ້ງເປັນກອງພັນທີ 15 ໂດຍແມ່ນ **ຮ້ອຍເອກ ບຸນຊູ ສີສານ** ເປັນຜູ້ບັນຊາ. ສະເພາະກອງພັນທີ 1 ຂອງພັນຕີທຽບ ລິດທິເດດ ຢູ່ແຂວງຊຽງຂວາງ ເຖິງວ່າໄດ້ຖືກປິດລ້ອມ ແຕ່ກໍ່ໄດ້ຕັດສິນໃຈເຂົ້າຮ່ວມກັບຝ່າຍແນວລາວຮັກຊາດ ພ້ອມນີ້ກອງພັນ ຊາວໜຸ່ມເຈົ້າອະນຸ ເຊິ່ງມີປືນໃຫຍ່ໜ້າດິນ 85 ມມ ໜຶ່ງກອງຮ້ອຍ, ປືນປ້ອງກັນອາກາດ 37 ມມ ໜຶ່ງກອງຮ້ອຍ, ກອງລົດຫຸ້ມເກາະ ລົດAM ໄດ້ຕັດສິນໃຈເຂົ້າ ຮ່ວມກັບກຳລັງແນວລາວຮັກຊາດອີກ ນຳໂດຍ: **ພັນເອກ ເດືອນ ສຸນນະລາດ, ພັນເອກ ບຸນທັນ ສະຫວັນວິໄລ, ພັນໂທ ກອງສີ ຂັດຕິຍະລາດ, ພັນໂທ ແຈ້ງ ໄຊຍະວົງ, ພັນຕີທຽບ ລິດທິເດດ ແລະຜູ້ອື່ນໆ** ກໍ່ແຍກຕົວໄປຫາແນວລາວຮັກຊາດຢ່າງຂາດຂັ້ນ, ສຸດທ້າຍກຳລັງເປັນກາງສ່ວນໜຶ່ງກໍ່ໄປນຳ **ສຸວັນນະພູມາ** ແລະ **ກອງແລ**.

ເມື່ອເຫັນກຳລັງເປັນກາງ ທີ່ຊຽງຂວາງເປັນຕັດສິນໃຈເຂົ້າຮ່ວມກັບແນວລາວຮັກຊາດແນວນັ້ນ **ທ່ານ ຄຳອ້ວນ ບຸບຜາ** ຜູ້ບັນຊາກຳລັງເປັນກາງທີ່ຢູ່ຜົ້ງສາລີ ກໍ່ໄດ້ແຍກຕົວອອກຈາກ ສຸວັນນະພູມາ ແລະ ກອງແລ ມາຮ່ວມມືກັບຝ່າຍແນວລາວຮັກຊາດຄືກັນ.

.....

*31. ພາຍຫຼັງຍຶນ C.123 ຂອງອາເມຣິກາຖືກຍິງຕົກ ໂດຍທະຫານກອງພັນເຈົ້າອະນຸ ປືນໃຫຍ່ຕ໋ານອາກາດແລ້ວ ກອງແລ ມີຄວາມຄຽດແຄ້ນແຮງ ຈຶ່ງອອກອຸບາຍວາງແຜນເຊີນເອົາທະຫານກອງພັນປືນໃຫຍ່ເຈົ້າອະນຸໄປເຈລະຈາທີ່ເມືອງຄູນ. ທະຫານກອງພັນເຈົ້າອະນຸຜູ້ຈິງໃຈ ນຳໂດຍຮ້ອຍເອກເລື່ອນ ພະຈະເລີນ, ຮ້ອຍໂທອິນ, ຮ້ອຍຕີສີງແກ້ວ ພ້ອມພົນທະຫານ ລວມ 31 ຄົນກໍໄດ້ອອກຈາກຄ້າຍລາດຮ້ອງ ໄປຕາມຄຳເຊີນ ພໍຂີ່ລົດໄປເຖິງບ້ານກໍສີກໍ່ຖືກ ທະຫານກອງແລ ຊຶ່ງບັນຊາໂດຍຮ້ອຍໂທດໍ ລັດທາງ, ຈັບກຸມ ແລະປົດອາວຸດ. ບັນດານາຍ ທະຫານຖືກພວກທະຫານກອງແລນຳໄປຂ້າເທື່ອລະຄົນ. ສ່ວນທະຫານຊັ້ນຜູ້ນ້ອຍຖືກມັດເປັນພວງດ້ວຍເຊືອກສາຍຈ້ອງລວມກັນແລ້ວ ໄປຂ້າຢູ່ຫ້ວຍໜອງບ່ານ ທະຫານກອງແລ ກໍຍິງປືນກວາດໃສ່, ມີຜູ້ໂຊກດີ ລອດຕາຍພຽງ 5 ຄົນຄື: ຄຳນາຍ, ທອງໃສ, ອຸ່ນ, ຂັນທອງ ແລະເຟືອງ ໄດ້ແລ່ນກັບຄືນເມືອລາຍງານກົມກອງທີ່ລາດຮ້ອງ.*

ວັນທີ 21/1/1963 ພາຍໃຕ້ການບັນຊາຂອງ ນາຍພົນ ຄຳລ້ອມ ທະຫານເປັນກາງປະຕິການ(ເສນາທິການຂອງກຳລັງເປັນກາງ) ໄດ້ປິດລ້ອມຄັງໄຂ ແລະ ຍຶດເອົາບາງຈຸດອ້ອມຂ້າງຕົວເມືອງຊຽງຂວາງ, ແຕ່ຖືກກຳລັງເປັນກາງຮັກຊາດ ຮ່ວມກັບທະຫານແນວລາວຮັກຊາດຕ້ານຄືນ, ເຮັດໃຫ້ພວກເຂົາລ່າຖອຍໄປ.

ພາຍໃຕ້ການຊີ້ນຳໂດຍກົງຂອງຄະນະປະຈຳສູນກາງພັກ ແລະ ກອງ ບັນຊາການທະຫານສູງສຸດກອງທັບປົດປ່ອຍປະຊາຊົນລາວ, ກອງບັນຊາການ ທະຫານເຂດຊຽງຂວາງ ໄດ້ອອກແຮງຊ່ວຍເຫຼືອທະຫານເປັນກາງຮັກຊາດ ໃນ ການປັບປຸງກຳລັງ ເພື່ອກຽມພ້ອມສົມທົບກັບກຳລັງແນວລາວຮັກຊາດ ຕີຕ້ານ ການບຸກໂຈມຕີ ທຸກກົນອຸບາຍອັນເລິກແລບຂອງກຳລັງປະຕິການກອງແລ ແລະ ພວກຝ່າຍຂວາອ່ຽງຈັນ. ກົນອຸບາຍອັນເລິກແລບ ຂອງຈັກກະພັດອາເມຣິກາ ແລະພວກລູກແຫ້ງຕົນມືໃນໄລຍະນີ້ແມ່ນພະຍາຍາມຈັບກຸມ ແລະລອບຄາຕະກຳ ບັນດານາຍທະຫານ-ຂ້າລາຊະການຜູ້ຮັກຊາດມີຄວາມກ້າວໜ້າຊຶ່ງໄດ້ແຍກຕົວ ອອກຈາກກຳລັງເປັນກາງກອງແລຫັນມາຮ່ວມມືກັບແນວລາວຮັກຊາດ.

ວັນທີ 17/3/1963 ສູນກາງພັກ ໄດ້ເປີດກອງປະຊຸມຄັ້ງທີ 12 ຂຶ້ນ, ທ່ານ ໄກສອນ ພົມວິຫານ ເລຂາທິການໃຫຍ່ສູນກາງພັກໄດ້ເວົ້າແຈ້ງວ່າ ***"ຕ້ອງອອກ ແຮງ ຊຸກຍູ້ການຕໍ່ສູ້ດ້ານການເມືອງ ແລະ ຕັ້ງໜ້າເຄື່ອນໄຫວທາງດ້ານການ ທະຫານ ເພື່ອເຮັດໃຫ້ກົນອຸບາຍຕ່າງໆຂອງສັດຕູຖືກພັງທະລາຍ ເຮັດໃຫ້ ສະຖານະການມີການຜັນແປ ທີ່ມີຜົນໃຫ້ແກ່ພວກເຮົາ ແລະ ເພື່ອຮັກສາ ລັດຖະບານປະສົມ 3 ຝ່າຍ..***

.....

*32. ທ່ານ ກິນິມ ພົນເສນາ ເປັນຜູ້ນຳໜ້າໃນກຳລັງເປັນກາງຮັກຊາດ ໄດ້ຊີ້ນຳ ແລະ ສະໜັບສະໜູນ ຄະນະລັດຖະປະຫານ 9/8/1960 ແລະຮ່ວມມືກັບແນວລາວຮັກຊາດ ປະຕິບັດ ແນວທາງ ສັນຕິພາບ ປອງດອງຊາດ, ໃນວັນທີ 17/12/1960 ຂະນະທີ່ກຳລັງເປັນກາງ ຖອນອອກຈາກວຽງຈັນ, ທ່ານພົນເອກຫວໍຫງຽນຢາບ ຜູ້ບັນຊາການສູງສຸດກອງທັບປະຊາຊົນ ຫວຽດນາມ ໄດ້ສົ່ງຍົນປິດລັບພິເສດມາຮັບເອົາເພິ່ນໄປຮ່າໂນ້ຍ...*
*ເພິ່ນເປັນຜູ້ຊ່ວຍດຳເນີນການລົບລ້າງຄະດີກະບົດຊາດ ອັນບໍ່ມີມູນຄວາມຈິງທີ່ ຜຸຍ ຂະນະນິກອນ ກ່າວຟ້ອງບັນດາຜູ້ນຳແນວລາວຮັກຊາດ.*

ວັນທີ 1/4/1963 ພວກຝ່າຍຂວາວຽງຈັນໄດ້ລອບຄາຕະກຳ **ທ່ານກີນິມ ພົນເສນາ**[32] ລັດຖະມົນຕີກະຊວງການຕ່າງປະເທດ ຂອງລັດຖະບານປະສົມຢູ່ເຮືອນພັກສ່ວນຕົວຂອງເພິ່ນທີ່ວຽງຈັນ ໃນເວລາກັບຈາກງານລ້ຽງ ທີ່ຫໍຄຳໃນໂອກາດຕ້ອນຮັບ**ເຈົ້າຊີວິດ ສີສະຫວ່າງວັດທະນາ**[33] ກັບຈາກຢ້ຽມຢາມຕ່າງປະເທດ. ຕໍ່ຈາກນັ້ນພວກເຂົາກໍ່ໃຫ້ທະຫານ ແລະ ສາລະວັດທະຫານປິດລ້ອມກອງຮ້ອຍປ້ອງກັນສຳນັກຜູ້ຕາງໜ້າແນວລາວຮັກຊາດ (ແນວລາວສ້າງຊາດໃນປັດຈຸບັນ) ທີ່ຢູ່ໃກ້ກັບຕະຫຼາດເຊົ້າວຽງຈັນ ເພື່ອສ້າງຄວາມຫຍຸ້ງຍາກ ແລະປາບປາມນາບຂູ່ຕໍ່ກອງຮ້ອຍດັ່ງກ່າວ ທັງປິດລ້ອມບັນດາເຮືອນພັກຂອງສະມາຊິກລັດຖະບານປະສົມ ທີ່ເປັນຄົນຝ່າຍແນວລາວຮັກຊາດ ແລະກຳລັງເປັນກາງຮັກຊາດ. ພວກເຂົາຍັງມີແຜນລອບຄາຕະກຳ ສະເດັດເຈົ້າສຸພານຸວົງ ແລະທ່ານພູມີ ວົງວິຈິດ ອີກດ້ວຍ, ແຕ່ພວກເຂົາ ກໍ່ບໍ່ສາມາດເຮັດຫຍັງໄດ້ຕາມໃຈ.

ວັນທີ 17/4/1963 ເມື່ອບໍ່ມີຄວາມປອດໄພ ແລະບໍ່ສາມາດປະຕິບັດໜ້າທີ່ໃນຄະນະລັດຖະບານປະສົມໄດ້, ບັນດາຕົວແທນຂອງຝ່າຍແນວລາວຮັກຊາດ ແລະບຸກຄົນສຳຄັນຂອງຝ່າຍເປັນກາງຮັກຊາດເຊັ່ນ: ທ່ານ ຄຳສຸກ ແກ້ວລາ ລັດຖະມົນຕີກະຊວງສາທາລະນະສຸກ, ທ່ານນາຍພົນເຮືອນ ມົ່ງຄົນວິໄລ ລັດຖະມົນຕີຊ່ວຍວ່າການກະຊວງນັກຮົບເກົ່າ ກໍ່ໄດ້ອອກຈາກວຽງຈັນໄປຄັ້ງໄຂຢ່າງປອດໄພ ແລະສືບຕໍ່ຮ່ວມສຳພັນສູ້ຮົບກັບແນວລາວຮັກຊາດຕ້ານກັບຈັກກະພັດອາເມຣິກາ ແລະລູກມື.

ນັບແຕ່ທ້າຍເດືອນ 4 ເປັນຕົ້ນມາ ພູມີ ໜໍ່ສະຫວັນ ໄດ້ສົ່ງທະຫານເຂົ້າທົ່ງໄຫຫີນ ແລະ ອ້ອມແອ້ມຕົວເມືອງຊຽງຂວາງ ເພື່ອຊ່ວຍທະຫານກອງແລ, ສ່ວນທະຫານພິເສດຂອງ**ວ່າງປາວ**[34] ຕີເຂົ້າຕົວເມືອງຊຽງຂວາງ, ລາດຮ້ວ, ດົງດ່ານ, ຕາມສາຍທາງເລກທີ 7 ແລະເຂດສາມແຍກສາລາພູຄູນ ແຕ່ຖືກກຳລັງ

.....

*33. ເຈົ້າຊີວິດ ສີສະຫວ່າງວັດທະນາ ຂຶ້ນເປັນເຈົ້າຊີວິດ ຣາຊະອານາຈັກລາວໃນປີ 1959 ( ແທນເຈົ້າຊີວິດ ສີສະຫວ່າງວົງ ) ທີ່ສິ້ນພະຊົນ ຕໍ່ມາພະອົງປະກາດສະຫຼະຣາຊະບັນລັງ ໃນວັນທີ 1/12/1975*

ຂອງຝ່າຍແນວລາວຮັກຊາດ ສົມທົບກັບກຳລັງເປັນກາງຮັກຊາດຕີຕ້ານຄືນຢ່າງ ດຸເດືອດໃນທຸກໆຄັ້ງ. ສະພາບການຢູ່ທົ່ງໄຫຫີນ-ຊຽງຂວາງ ນັບມື້ຮ້າຍແຮງ, ກອງບັນຊາການສູງສຸດກອງທັບປົດປ່ອຍປະຊາຊົນລາວ ໄດ້ຈັດສົ່ງກອງພັນ 701 ຊຶ່ງມີກຳລັງພົນ 500 ຄົນ ບັນຊາໂດຍທ່ານ ບຸນຈັນ ແສງສະຫວ່າງ ແລະ ທ່ານ ບຸນທອນ ຈິດວິລະພົນ ຈາກສົບຮຸນ ແຂວງຜົ້ງສາລີ 7/5/1963 ມາເຖິງ ທົ່ງໄຫຫີນ 23/5/1963 ເພື່ອກຽມພ້ອມສະກັດການບຸກໂຈມຕີຂອງຝ່າຍວຽງຈັນ. ພາຍຫຼັງໄດ້ກະກຽມທຸກເງື່ອນໄຂ ໃຫ້ແກ່ການຕ່າວໂຈມຕີສັດຕູແລ້ວ ນັບແຕ່ ເດືອນ 12/1963 ເຖິງເດືອນ 2/1964 ກອງພັນ 701 ກອງພັນ 24 ແລະ ກອງ ພັນທີ 1 ຂອງແນວລາວຮັກຊາດ ສົມທົບກອງພັນທີ 1 ກຳລັງເປັນກາງຮັກຊາດ ໄດ້ຕີມ້າງວົງປິດລ້ອມຂອງເຢແອັມ 13 ແລະ 17 ຢູ່ເມືອງຊຽງຂວາງ ເຮັດໃຫ້ ພວກເຂົາແຕກຖອຍໜີ ແລະ ດັບສູນເຢແອັມ 17 ຢູ່ບ້ານຕັນ. ຝ່າຍແນວລາວ ຮັກຊາດຍຶດໄດ້ພູຫີນ, ຜາແດງ, ບ້ານເມືອງຕັນ, ພູພັກເຫຼົ້ງ, ພູຫວດ, ພູກະບໍ້, ພູແຄ, ບ້ານລັນ ແລະບ້ານພາ.

.....

*34. ກອງກຳລັງພິເສດ ທີ່ຝຣັ່ງສ້າງຂຶ້ນ ມີລັກສະນະທັງເປັນກອງປຸ້ນ-ກອງປາບ.ອາເມຣິກາໄດ້ ກຳເອົາກຳລັງນີ້ຕັ້ງແຕ່ປີ 1954 ເປັນຕົ້ນມາ ທຳອິດມີກຳລັງ ປະມານ 3.000 ຄົນ ແລະເພີ່ມຂຶ້ນ ເຖິງ 15.000 ຄົນໃນກາງປີ 1967.ແບ່ງເປັນ 5 ເຂດ (48ເຂດຍ່ອຍ)ຮັບຜິດຊອບພື້ນທີ່ໃນ ພາກ ເໜືອມີ 3 ເຂດຄື: ເຂດ 1 ທິດຕາເວັນຕົກນ້ຳອູ (ຫຼວງພະບາງ) ເຂດ 2 ຊຳເໜືອ-ຊຽງຂວາງ (ໃນນີ້ 70 ກອງຮ້ອຍ ຢູ່ຊຽງຂວາງ-ທົ່ງໄຫຫີນ, 18 ກອງຮ້ອຍຢູ່ຊຳເໜືອ ), ເຂດ 5 ວຽງຈັນ-ບໍລິຄຳໄຊ ທັງສາມເຂດນີ້ມີ **ນາຍພົນ ວ່າງປາວ** ຄົນເຜົ່າມົ້ງເປັນຜູ້ບັນຊາການ ໂດຍມີ ສູນບັນຊາການສຳຄັນຢູ່ຊຳຫອງ-ລ້ອງແຈ້ງ. ສ່ວນເຂດ 3 ຄຳມ່ວນ-ສະຫວັນນະເຂດ ແລະ ເຂດ 4 ໝົດພາກໃຕ້ລາວມີ ບຸນປອນ ມາກເຫພາລັກ ເປັນຜູ້ບັນຊາການ. ກອງກຳລັງນີ້ບໍ່ຂຶ້ນກັບ ກອງທັບແຫ່ງຊາດ ຂອງ ຣາຊະອານາຈັກລາວ ແຕ່ໄດ້ຮັບການຈັດຕັ້ງ ລ້ຽງດູ ແລະບັນຊາ ໂດຍກົງຈາກສູນບັນຊາກຳລັງພິເສດຂອງອາເມຣິກາ Head-Quarters 333 (HQ 333) ທີ່ຕັ້ງຢູ່ອຸດອນ ປະເທດໄທ.*

*ວ່າງປາວ ນາຍທະຫານເຜົ່າມົ້ງ ເກີດວັນທີ 8/12/1929 ທີ່ໜອງແຮດ, ແຂວງຊຽງ ຂວາງ, ເປັນທະຫານຮັບໃຊ້ຝຣັ່ງ, ຕໍ່ມາກໍຮັບໃຊ້ອາເມຣິກາ, ມີຍົດເຖິງພົນໂທ ຂອງກອງທັບ ຣາຊະອານາຈັກລາວ. ກ່ອນປົດປ່ອຍວ່າງປາວ ໜີໄປຢູ່ອາເມຣິກາ ແລະເປັນຜູ້ນຳ ຂອງຄົນເຜົ່າມົ້ງ ໃນອາເມຣິກາ ແລະເສຍຊີວິດໃນວັນທີ 6/1/2011 ທີ່ອາເມຣິກາ*

ບັນດາກ້ຳລັງຫຼວງ, ກ້ຳລັງທ້ອງຖິ່ນແຂວງຊຽງຂວາງ ພ້ອມກັບບັນດາ ກອງທະຫານກ້ຳລັງເປັນກາງຮັກຊາດໄດ້ຮັບການປັບປຸງ ແລະ ເຝິກແອບຢ່າງ ທ້າວຫັນເພື່ອກຽມພ້ອມສູ້ຮົບ, ປ້ອງກັນເສັ້ນທາງເລກທີ 7, ອອກແຮງກໍ່ສ້າງ ຮາກຖານການເມືອງ ແລະ ໄດ້ປັບປຸງຄືນບັນດາການຈັດຕັ້ງ, ອຳນາດການປົກ ຄອງ ແລະ ກ້ຳລັງກອງຫຼອນຢ່າງແຂງແຮງ ຢູ່ເຂດເມືອງຄຳ, ເມືອງແປກ, ເມືອງ ຄູນ.

ວັນທີ 30/9/1963 ຄະນະພັກການທະຫານສູນກາງ ໄດ້ເປີດກອງປະຊຸມ ສະຫຼຸບວຽກງານທິດທາງ-ໜ້າທີ່ 6 ເດືອນທ້າຍປີ 1963 ແລະວາງແຜນການ ທິດທາງ 6 ເດືອນຕົ້ນປີ 1964 ອອກ. ເພື່ອປະຕິບັດທິດທາງດັ່ງກ່າວນັ້ນ, ບັນດາ ກ້ຳລັງປະກອບອາວຸດແນວລາວຮັກຊາດ ໄດ້ຕີຕ້ານການບຸກໂຈມຕີຂອງສັດຕູ ຢ່າງອາດຫານສາມາດຮັກສາບັນດາເຂດປົດປ່ອຍໄວ້ໄດ້ຢ່າງໝັ້ນຄົງພ້ອມທັງ ຮັກສາບາງເຂດຮາກຖານການປະຕິວັດຢູ່ແນວຫຼັງຂອງສັດຕູອີກດ້ວຍ.

ພ້ອມດຽວກັນນັ້ນ ໄດ້ປັບປຸງກ້ຳລັງໃນທຸກດ້ານ ໂດຍສະເພາະແມ່ນດ້ານ ການເມືອງແນວຄິດ, ຍົກສູງສະຕິລະວັງຕົວ, ກຽມພ້ອມສູ້ຮົບດຳເນີນການເຝິກ ແອບສິລະປະຍຸດ, ຍຸດທະວິທີ ແລະວິຊາສະເພາະຕ່າງໆ ຊຸກຍູ້ການປັບປຸງ ແລະ ກໍ່ສ້າງທະຫານທ້ອງຖິ່ນ ແລະກອງຫຼອນ, ເອົາໃຈໃສ່ຂະຫຍາຍກ້ຳລັງປ້ອງກັນ ອາກາດສົມຄູ່ກັບກ້ຳລັງຫຼວງ ແລະ ທະຫານທ້ອງຖິ່ນ. ຄະນະພັກການທະຫານ ສູນກາງໄດ້ດຳເນີນການສະຫຼຸບ ແລະ ຖອດຖອນບົດຮຽນໃນການສູ້ຮົບ, ວຽກ ງານກໍ່ສ້າງຮາກຖານ ແລະ ວຽກງານກວາດລ້າງພວກປຸ້ນ, ພິເສດແມ່ນບົດຮຽນ ການຮ່ວມສຳພັນສູ້ຮົບ, ຊ່ວຍເຫຼືອກ້ຳລັງເປັນກາງຮັກຊາດ ຜ່ານຜ່າທຸກຂໍ້ຫຍຸ້ງ ຍາກ ແລະເຊື່ອໝັ້ນຕໍ່ໄຊຊະນະຂອງການປະຕິວັດຢ່າງໜັກແໜ້ນ.

ເພື່ອປະຕິບັດຕາມທິດຊີ້ນຳຂອງສູນກາງພັກ ຢູ່ແຂວງວຽງຈັນຕາເວັນ ອອກ, ວຽງຈັນຕາເວັນຕົກ, ນັບທັງແຂວງຕ່າງໆທາງພາກກາງ ແລະ ພາກໃຕ້ໄດ້ ເພີ່ມທະວີ ພະນັກງານສ້າງຕັ້ງໜ່ວຍປະຕິບັດງານຕ່າງໆຂຶ້ນຕື່ມ; ສ້າງກ້ຳລັງຕີ ພິເສດເຂົ້າໄປເຄື່ອນໄຫວຢູ່ທາງແນວຫຼັງຂອງສັດຕູ, ພື້ນຖານກອງຫຼອນໄດ້ຮັບ ການປັບປຸງ, ສາຍທາງຕ່າງໆຢູ່ເຂດປົດປ່ອຍໄດ້ມີການປັບປຸງ ແລະ ສ້າງໃໝ່

ເຊັ່ນ: ທາງຊຽງຂວາງ-ທ່າວຽງ, ທາງຜາລະແວກ ແລະ ທາງໄປຫາເມືອງຕ່າງໆ ຢູ່ທິດຕາເວັນຕົກ ພ້ອມກັນນັ້ນຍັງໄດ້ຕີຊະນະກຳລັງທີ່ສຳຄັນຂອງຝ່າຍວຽງຈັນ ຢູ່ຫຼາຍເຂດເຊັ່ນ: ທາງເລກ 9, ສາລະວັນ, ເຂດຫົວເມືອງ, ອ້ອມແອ້ມເມືອງເປີນ (ຊຳເໜືອ) ອອກແຮງກວາດລ້າງພວກກອງປຸ້ນ ແລະ ພວກປະຕິການທີ່ຍັງເສດເຫຼືອຢູ່ເຂດປົດປ່ອຍໃຫ້ໝົດເພື່ອສ້າງເປັນເຂດທີ່ປອດໄພ ເຊັ່ນ: ເຂດເມືອງວຽງໄຊ ແລະ ບ້ານຕ່າງໆອ້ອມແອ້ມເມືອງວຽງໄຊ ໃຫ້ກາຍເປັນຖານທີ່ໝັ້ນຍາວນານ ແລະ ແໜ້ນແກ່ນຂອງການປະຕິວັດ.

ພາຍຫຼັງທີ່ **ໂຢນເຊີນ** ຂຶ້ນເປັນປະທານາທິບໍດີອາເມຣິກາແທນແກເນີດີ ໃນເດືອນ 11/1963 ນັ້ນແລ້ວ ໂຢນເຊີນ ກໍ່ໄດ້ສືບຕໍ່ຂະຫຍາຍສົງຄາມພິເສດ ໃນລາວ, ເພີ່ມທະວີການຊ່ວຍເຫຼືອດ້ານເສດຖະກິດ ການເງິນ ໂດຍສະເພາະ ດ້ານການທະຫານ ໃນນັ້ນມີ 50 ລ້ານໂດລາແມ່ນເພື່ອດ້ານພົນລະເຮືອນ, 18 ລ້ານໂດລາເພື່ອຄ້ຳປະກັນຄ່າເງິນກີບ, 300ລ້ານໂດລາເພື່ອດ້ານການທະຫານ. ນອກນັ້ນຍັງມີການຊ່ວຍເຫຼືອທາງລັບໃນບັນຊີ **"ຈັບຈ່າຍພິເສດ"** ລວມແລ້ວເງິນຊ່ວຍເຫຼືອຂອງອາເມຣິການຄອມເຖິງ 95-97% ຂອງງົບປະມານປະຈຳປີຂອງຝ່າຍວຽງຈັນ.

ທ້າຍປີ 1963 ຈັກກະພັດອາເມຣິກາ ແລະ ລູກມືໄດ້ດຳເນີນແຜນການ **" 34 ອາ "**(35) ພ້ອມກັນນັ້ນ ກໍ່ນຳເອົາເຮືອບິນຂັບໄລ່ເຂົ້າມາທາງທະເລ ພາກເໜືອຫວຽດນາມເພື່ອເກັບກຳຂ່າວລັບຕ່າງໆ ແລະເຄື່ອນໄຫວກໍ່ຄວາມວຸ້ນວາຍ; ພ້ອມກັນນັ້ນ ກໍ່ໄດ້ເປີດປັ້ນໂຈມຕີເຂົ້າເຂດປົດປ່ອຍ ຂອງຝ່າຍປະເທດລາວ ເພື່ອກະກຽມໃຫ້ແກ່ການໂຈມຕີເຂົ້າພາກເໜືອຫວຽດນາມ.

.....

*35. ແຜນການ " 34 ອາ" ແມ່ນການເຄື່ອນໄຫວສອດແນມ ດ້ວຍເຮືອບິນຍຸດທະສາດ ຢູ 2 ຈັບຜູ້ຄົນເພື່ອຊອກຮູ້ຂ່າວ, ນຳໃຊ້ໜ່ວຍໂຢດພົນລົ່ມທຳລາຍ ແລະການເຄື່ອນໄຫວໂຈມຕີທາງອາກາດ ແລະທາງໜ້າດິນ*

ວັນທີ 27/12/1963 ກອງບັນຊາການທະຫານສູງສຸດກອງທັບປົດປ່ອຍປະຊາຊົນລາວໄດ້ເປີດກອງປະຊຸມ ແຂ່ງຂັນສ້າງຜົນງານທົ່ວປະເທດຄັ້ງທີ II ຂຶ້ນທີ່ບ້ານຊຸງຊີ ເມືອງວຽງໄຊ ແຂວງຫົວພັນ, ເຂົ້າຮ່ວມໃນກອງປະຊຸມຄັ້ງນີ້ ມີບັນດາສະຫາຍຜູ້ຕາງໜ້າຂອງກົມກອງ ແລະ ທ້ອງຖິ່ນຕ່າງໆໃນທົ່ວປະເທດ, ກອງປະຊຸມໄດ້ຖອດຖອນບົດຮຽນກ່ຽວກັບການສູ້ຮົບ, ສ້າງຜົນງານດ້ານຕ່າງໆ ພ້ອມທັງວາງທິດທາງ ແລະ ໜ້າທີ່ແຂ່ງຂັນໃນໄລຍະໃໝ່. ໃນກອງປະຊຸມຄັ້ງນີ້ ທ່ານ ໄກສອນ ພົມວິຫານ ໄດ້ເນັ້ນໜັກບາງຕອນວ່າ *"ສະພາບການຕ່າງໆຂອງສະໜາມຮົບພວມຜັນແປໄປຢ່າງສັບສົນ, ພວກເຮົາປະຕິບັດນະໂຍບາຍທັງຕີ, ທັງເຈລະຈາ..."*. ຈາກນັ້ນທ່ານໄດ້ສະເໜີ *"ໃຫ້ພະຍາຍາມປົກປັກຮັກສາລັດຖະບານປະສົມ, ປະຕິບັດນະໂຍບາຍປອງດອງຊາດ, ສັນຕິພາບ, ເປັນກາງ..."*.

ວັນທີ 23/1/1964 ສະພາສູງຂອງອາເມຣິກາ ໄດ້ຕົກລົງໃຫ້ການຊ່ວຍເຫຼືອແກ່ລັດຖະບານຫຸ່ນວຽງຈັນ ໃນຈຳນວນເງິນ 150 ລ້ານໂດລາສະຫະລັດ, ດ້ານກຳລັງພົນເພີ່ມຂຶ້ນເຖິງ 62.000 ຄົນ, ອາວຸດ ແລະອຸປະກອນສົງຄາມ ທີ່ທັນສະໄໝເຊັ່ນ: ເຮືອບິນສູ້ຮົບ, ລົດຕັງ, ປືນໃຫຍ່ 155 ມມ.

ວັນທີ 27/1/1964 ກຳລັງແນວລາວຮັກຊາດໄດ້ເປີດ *"ບັ້ນຮົບ 128"* ແນໃສ່ດັບສູນກຳລັງດີບຂອງສັດຕູ, ປົດປ່ອຍເຂດຕ່າງໆຕາມພູພຽງນາກາຍ ແລະ ຟື້ນຟູເສັ້ນທາງລຳລຽງຄືນໃໝ່. ທ່ານ ຄຳໄຕ ສີພັນດອນ ຜູ້ບັນຊາການທະຫານສູງສຸດກຳລັງປະກອບອາວຸດແນວລາວຮັກຊາດ ຕາງໜ້າຄະນະພັກການທະຫານສູນກາງ ລົງໄປໂອ້ລົມຕໍ່ກອງປະຊຸມພະນັກງານກ່ອນຈະເປີດບັ້ນຮົບຄັ້ງນີ້. ຮອດວັນທີ 12/2/1964 ການສູ້ຮົບຈຶ່ງໄດ້ຍຸຕິລົງດ້ວຍໄຊຊະນະ ຢ່າງສະຫງ່າງາມ ສາມາດປັດເຂ່ຍສັດຕູອອກຈາກວົງສູ້ຮົບ 900 ຄົນ, ຍຶດປືນຊະນິດຕ່າງໆໄດ້ 300 ກະບອກ, ປົດປ່ອຍພູພຽງນາກາຍໄດ້ທັງໝົດ ແລະ ພື້ນທີ່ເຂດຕາແສງຕ່າງໆ ແຕ່ນ້ຳທອນໄປເຖິງປາກນ້ຳຫີນບູນ.

ວັນທີ 17/3/1964 ຢູ່ທີ່ບາງກອກ ຄະນະປະຈຳຂອງກຸ່ມຊີອາໂຕ ໄດ້ໄຂກອງປະຊຸມ ເພື່ອຄົ້ນຄວ້າສະພາບການຕ່າງໆຢູ່ລາວ ແລະ ວາງແຜນການ

ແຊກແຊງເຂົ້າລາວ ເພື່ອຕ້ານກັບອັນທີ່ເຂົາເອີ້ນວ່າ *"ສະກັດກັ້ນການແຜ່ຂະຫຍາຍ ຂອງລັດທິຄອມມູນິດ ໃນອາຊີຕາເວັນອອກສ່ຽງໃຕ້ "*.

ອັນດຽວກັນນີ້ລັດຖະບານຫຸ່ນວຽງຈັນ ໄດ້ສັ່ງໃຫ້ເຢແອັມ 13 ໂຈມຕີຍຶດ ເອົາຈຸດສູງພູໜອງ ພູຂຽວ ແນໃສ່ນາບຂູ່ ແລະຕັດເສັ້ນທາງເລກທີ 7 ທີ່ຕິດຕໍ່ ກັບຫວຽດນາມ. ຈາກນັ້ນໄດ້ສົ່ງທະຫານໄປບຸກໂຈມຕີເຂດນ້ຳຕຽນ, ນ້ຳມັດ, ແຕ່ ຖືກກອງພັນ 500, ກອງພັນ 701, ກອງພັນທີ 1 ແລະ ກອງພັນທີ 2 ພ້ອມ ທະຫານທ້ອງຖິ່ນເມືອງຄຳ ແລະ ໜອງແຮດ ສົມທົບກັບທະຫານອາສາສະໝັກ ຫວຽດນາມຕີຕ້ານຢ່າງແຂງແຮງ. ພ້ອມກັນນັ້ນ ກຳລັງຝ່າຍແນວລາວຮັກຊາດ ຍັງໄດ້ຕີທັ່ງເລັກເຂົ້າໄປຈົນເຖິງເມືອງພ່າງ, ເມືອງງາມ ເຮັດໃຫ້ທະຫານຝ່າຍ ວຽງຈັນເສຍຫາຍໜັກ, ສາມາດຮັກສາເສັ້ນທາງເລກທີ 7 ໄວ້ໄດ້ຢ່າງສົມບູນ.

ມາເຖິງຕອນນີ້ ຝ່າຍຂວາວຽງຈັນເຮັດທຸກວິທີທາງ ບໍ່ໃຫ້ຝ່າຍແນວລາວ ຮັກຊາດສາມາດເຮັດວຽກນຳ ໃນຖານະລັດຖະບານປະສົມໄດ້ 4/1964 ສະເດັດ ເຈົ້າສຸພານຸວົງ ຮອງນາຍົກລັດຖະມົນຕີ ໄດ້ຖະແຫຼງວ່າ: ***ລັດຖະບານປະສົມ ທີ່ມີ ເຈົ້າສຸວັນນະພູມາ ເປັນນາຍົກເປັນພຽງເປືອກຫຸ້ມ "ເອກະລາດ" "ເປັນກາງ" ແລະ "ປະສົມ" ແລະໃຊ້ຫູຍກລວງສາຍຕາປະຊາຊົນລາວ ແລະຊາວໂລກ.*** ດັ່ງນັ້ນວັນທີ 17/4/1964 ກອງປະຊຸມ 3 ຝ່າຍ ໄດ້ເປີດຂຶ້ນຢູ່ຄັ້ງໄຂ, ໂດຍຝ່າຍ ແນວລາວຮັກຊາດ ສະເໜີໃຫ້ຝ່າຍວຽງຈັນຈິງໃຈປະຕິບັດສັນຍາເຊີແນວ, ແຕ່ ກອງປະຊຸມບໍ່ສາມາດແກ້ໄຂບັນຫາໃດໄດ້.

ປະຕິບັດຕາມສາກລະຄອນ ທີ່ອາເມຣິກາບັນຊາເພື່ອໂຄ່ນລົ້ມ **"ລັດຖະ ບານປະສົມ"** 19/4/1964 ພວກຫຸ່ນວຽງຈັນ ໂດຍການອອກໜ້າຂອງ **ກຸປະສິດ ອະໄພ** ຜູ້ບັນຊາການທະຫານພາກ 5 ໄດ້ເຮັດລັດຖະປະຫານ ຈັບຕົວນາຍົກ ລັດຖະມົນຕີ ສຸວັນນະພູມາ ແລະ ລັດຖະມົນຕີຈຳນວນໜຶ່ງໄປຂັງ ຈາກນັ້ນທູດ ພິເສດອາເມຣິກາ ກໍ່ມາວຽງຈັນ 21/4/ 1964 ເພື່ອແກ້ໄຂບັນຫານີ້. ພວກເຂົາໄດ້ ປ່ອຍຕົວເຈົ້າສຸວັນນະພູມາ ແລະມອບໃຫ້ປັບຄະນະລັດຖະມົນຕີໃໝ່ ໂດຍເອົາ ຄົນຂອງພວກເຂົາເຂົ້າກຳອຳນາດ, ຈັດການເລືອກຕັ້ງຜູ້ແທນລາສະດອນຕ່າງ ຫາກໂດຍບໍ່ມີຝ່າຍແນວລາວຮັກຊາດເຂົ້າຮ່ວມ.

ຝ່າຍແນວລາວຮັກຊາດ, ຝ່າຍເປັນກາງຮັກຊາດ ຜູ້ຮັກຊາດທັງພາຍໃນ ແລະ ຕ່າງປະເທດ ລວມທັງເຈົ້າຊີວິດສີສະຫວ່າງວັດທະນາ ໄດ້ກ່າວປະນາມ ການເຮັດລັດຖະປະຫານຂອງ ກຸປະສິດ ອະໄພ ແລະການເຄື່ອນໄຫວຍຶດຄອງ ເຂດປົດປ່ອຍຂອງທະຫານ ພູມີ ໜໍ່ສະຫວັນ ຢ່າງແຂງແຮງ. ໂດຍບໍ່ຫົວຊາຕໍ່ ສຽງຄັດຄ້ານກ່າວປະນາມ, ຈັກກະພັດອາເມຣິກາ ຍິ່ງເພີ່ມທະວີການຊ່ວຍເຫຼືອ ໃຫ້ແກ່ກຸ່ມ ພູມີ ໜໍ່ສະຫວັນ ແລະ ພວກປະຕິການລາວເພື່ອດຳເນີນເລ່ກົນ **"ບຸງດຍຶດ"** ເຂດຍຸດທະສາດທົ່ງໄຫຫີນ-ຊຽງຂວາງ.

ວັນທີ 27/4/1964 ກອງບັນຊາການທະຫານສູງສຸດກອງທັບປົດປ່ອຍ ປະຊາຊົນລາວໄດ້ເປີດບັ້ນຮົບບຸກໂຈມຕີທະຫານ ພູມີ ໜໍ່ສະຫວັນ ຢູ່ທົ່ງໄຫຫີນ. ໂດຍຕີເຂົ້າພູເຕີ້ງ, ພູພະນຸງ ແລະຂະຫຍາຍແນວຮົບໄປທາງບ້ານແຫ້ວ, ເຂົ້າ ຮ່ວມໃນບັ້ນຮົບນີ້ ປະກອບມີກອງພັນ 13, ກອງພັນທີ 1 ແລະກອງພັນທີ 2 ຂອງ ແນວລາວຮັກຊາດປະສານສົມທົບກັບກອງພັນ 15 ຂອງກຳລັງເປັນກາງຮັກຊາດ ບຸກຕີເຂົ້າເຂດພູສັນ ແລະເຂດອ້ອມຂ້າງສາມາດຍຶດເອົາຈຸດຕ່າງໆຂອງເຢແອັມ 17 ໄດ້, ປັດເຂ່ຍສັດຕູໄດ້ 21 ຄົນ[36] ຖືກບາດເຈັບ 69 ຄົນ, ຈັບເປັນຊະເລີຍ ເສິກໄດ້ 18 ຄົນ, ຍຶດອາວຸດຊະນິດຕ່າງໆໄດ້ຢ່າງຫຼວງຫຼາຍ.

ເມື່ອປະລາໄຊຢ່າງໜັກແນວນັ້ນ ວັນທີ 29/4/1964 ພູມີ ໜໍ່ສະຫວັນ ສັ່ງເຢແອມ 13 ທີ່ຍັງເຫຼືອນັ້ນກັບຄືນໄປຈຸ່ງຈັນດ່ວນ ແລະ ມອບພື້ນທີ່ນັ້ນໃຫ້ ທະຫານກອງແລຮັບຜິດຊອບ. ດັ່ງນັ້ນຈຶ່ງເວົ້າໄດ້ວ່າ: ຄວາມຫວັງຢາກຍຶດຄອງ

---

*36. ໃນການສູ້ຮົບຕ້ານຈັກກະພັດຝຣັ່ງ 1945-54 ກອງທັບ ແລະປະຊາຊົນລາວ ໄດ້ປັດເຂ່ຍ ສັດຕູອອກຈາກວົງສູ້ຮົບ 35. 071 ຄົນ, ແບ່ງເປັນທະຫານຫຸ່ນລາວ 31.264 ຄົນ, ທະຫານຝຣັ່ງ 3.807 ຄົນ, ໃນນັ້ນ ຂ້າຕາຍ 20.761 ຄົນ, ບາດເຈັບ 6.865 ຄົນ, ຈັບໄດ້ແລະອອກມາຍອມ 7445 ຄົນ.*

*ສ່ວນໃນບັ້ນຮົບຕ້ານຈັກກະພັດອາເມຣິກາ 1955-75 ກອງທັບ ແລະປະຊາຊົນລາວ ໄດ້ປັດເຂ່ຍສັດຕູອອກຈາກວົງສູ້ຮົບໄດ້ 231.359 ຄົນ ແບ່ງເປັນທະຫານຫຸ່ນລາວ 204.010 ຄົນ, ທະຫານເລວຮັບຈ້າງໄທ 11.119 ຄົນ, ທະຫານຫຸ່ນໄຊ່ງ່ອນ 15.961 ຄົນ, ທະຫານ ອາເມຣິກາ 369 ຄົນ ໃນນັ້ນ ຂ້າຕາຍ 138.182 ຄົນ, ບາດເຈັບ 39.943 ຄົນ, ຈັບໄດ້ ແລະ ອອກມາຍອມ 48.875 ຄົນ, ລຸກຮື້ຂຶ້ນມາຫາປະຊາຊົນ 4.359 ຄົນ. (ປະຫວັດສາດກອງທັບ 1945-1995 ໜ້າ 642-643)*

ທາງເລກ 7, ອ້ອມແອ້ມຊຽງຂວາງ ແລະທົ່ງໄຫຫີນຂອງ ພູມີ ໜໍ່ສະຫວັນ ໄດ້ຖືກ ທັບມ້າງໃຫ້ແຕກທະລາຍ ແລະ ເຮັດໃຫ້ກຳລັງທະຫານຂອງກອງແລ ຢູ່ທົ່ງໄຫຫີນ ຖືກໂດດດ່ຽວ.

ໂດຍເຫັນແຈ້ງຕໍ່ເລກົນຂອງກຸ່ມ ພູມີ ໜໍ່ສະຫວັນ ແລະເບື່ອໜ່າຍຕໍ່ການ ທໍລະຍົດຂອງກອງແລ, ດັ່ງນັ້ນ ພັນໂທແຈ້ງ ໄຊຍະວົງ ຜູ້ບັນຊາການເຂດຍ່ອຍ ທິດໃຕ້ແຂວງຊຽງຂວາງ, ທັງເປັນຜູ້ບັນຊາກອງພັນໂດດຈ້ອງທີ 6 ແລະ ຮ້ອຍເອກ ຂາວ ຜູ້ບັນຊາກອງພັນໂດດຈ້ອງທີ 4 ໄດ້ພົບປະກັບ ພັນເອກ ເດືອນ ສູນນະລາດ ຜູ້ບັນຊາການກຳລັງເປັນກາງຮັກຊາດ ແລະ ຜູ້ຕາງໜ້າຝ່າຍແນວລາວຮັກຊາດ ຢູ່ຄັງໄຂ, ທົ່ງໄຫຫີນ(ຊຽງຂວາງ) ສະເໜີຜ່ານແຜນການປະສານສົມທົບຕີປັດເຂ່ຍ ພວກປະຕິການໃນກຳລັງຂອງກອງແລ ປົດປ່ອຍທົ່ງໄຫຫີນ ແລະ ເມືອງເຄິງ. ແຜນການດັ່ງກ່າວ ໄດ້ຮັບການສະໜັບສະໜູນຈາກຝ່າຍແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດກໍ່ໄດ້ຜັນຂະຫຍາຍຢ່າງວ່ອງໄວ.

ທ່ານ ຄຳໄຕ ສີພັນດອນ ຜູ້ບັນຊາການທະຫານສູງສຸດກຳລັງປະກອບ ອາວຸດປະເທດລາວໄດ້ລົງຊີ້ນຳໂດຍກົງການເຄື່ອນໄຫວຄັ້ງນີ້: ທ່ານສົງກະໂປ ສີໂຄດຈຸມມະມາລີ ຜູ້ບັນຊາການທະຫານເຂດທົ່ງໄຫຫີນ ໄດ້ພົວພັນໃກ້ຊິດກັບ ພັນໂທ ແຈ້ງ ໄຊຍະວົງ, ຮ້ອຍເອກຂາວ ທາງໂທລະສັບປິດລັບເພື່ອກຳແໜ້ນ ສະພາບການຜັນປ່ຽນຂອງກຳລັງກອງແລ.

ປະຕິບັດຕາມແຜນການທີ່ວາງໄວ້ ຄືນວັນທີ 16/5/1964 ກອງພັນທີ 2 ຂອງແນວລາວຮັກຊາດ ໂດຍແມ່ນທ່ານ ບຸນເກີນ ສີສົມບັດ ເປັນຜູ້ບັນຊາ ສົມທົບ ກັບກອງພັນ 15 ກຳລັງເປັນກາງຮັກຊາດ ບັນຊາໂດຍ ຮ້ອຍເອກ ບຸນຊູ ສີສານ ແລະໂດຍການປະສານງານ ຂອງພັນໂທ ແຈ້ງ ໄຊຍະວົງ ຮ້ອຍເອກຂາວໄດ້ ບຸກຕີເຂົ້າຍຶດເອົາເຂດພູເກົ້າ ແລະເຂດຕາເວັນຕົກສ່ຽງເໜືອຂອງບ້ານສູດ, ເຂດ ເມືອງພັ້ນ(ສູນບັນຊາການຂອງກອງແລ) ເຮັດໃຫ້ທະຫານກອງແລແຕກທະລາຍ ໄປຢ່າງໄວວາ. ເຖິງວັນທີ 19/5/1964 ກຳລັງຮັກຊາດຍຶດໄດ້ໝົດເຂດທົ່ງໄຫຫີນ ແລະ ໄລ່ຕີທະຫານກອງແລໃນທຸກທິດ.

ວັນທີ 17/5/1964 ຍ້ອນຖືກປະລາໄຊຢ່າງເຈັບແສບ, **ຈັກກະພັດອາເມຣິກາໄດ້ໃຊ້ເຮືອບິນສູ້ຮົບຂອງພວກເຂົາ ທີ່ຕິດຫຸ້ງຊ້າງສາມຫົວ ຂັບໂດຍນັກບິນອາເມຣິກາ ບິນຂຶ້ນຈາກຖານທັບເຮືອທີ 7** ທີ່ລອຍຢູ່ນ້ຳທະເລ ເຂົ້າມາຍິງທຳລາຍເຂດຕ່າງໆຂອງປະເທດລາວເຊັ່ນ: ທົ່ງໄຫຫີນ, ເມືອງພັນ, ບ້ານນາໂຄ້, ທ່າວຸ່ງ ແລະທ່າໂທມ. ຢ່າງບ້ຽອາດເປີດແປນ ນັບມື້ນັບຮ້າຍແຮງ ແລະໃນປີ 1964 ນີ້ ອາເມຣິກາກໍ່ເລີ່ມໃຊ້ຍົນຖິ້ມລະເບີດ ເບ 52 ໃສ່ພາກເໜືອຫວຽດນາມ.

ວັນທີ 5/6/1964 ກອງພັນທີ 2 ຝ່າຍແນວລາວຮັກຊາດ ຈຳນວນໜຶ່ງໄດ້ປະສານສົມທົບ ກັບກອງພັນ15 ກຳລັງເປັນກາງຮັກຊາດ ຕີຍຶດເອົາສາຍພູງຸດຈຸດສູງຍຸດທະສາດ ເພື່ອປົກປັກຮັກສາປະຕູເຂົ້າ-ອອກທາງທິດຕາເວັນຕົກຂອງທົ່ງໄຫຫີນ-ຊຽງຂວາງ.

**ວັນທີ 6/6/1964 ເຮືອບິນຮົບຂອງອາເມຣິກາໄດ້ຖິ້ມລະເບີດ ແລະຍິງທຳລາຍຕົວເມືອງໂພນສະຫວັນ-ຄັງໄຂ ແລະໂຕເມືອງຄູນ.** ກອງຮ້ອຍປ້ອງກັນອາກາດ 37 ມມ (ປຕອ.) ຂອງກອງພັນປ້ອງກັນອາກາດ 601 ຍິງເຮືອບິນສອດແນມຊະນິດແອເລີ (L19)ຕົກ 1 ລຳ[37]ໃກ້ວັດທາດຫຼວງບ້ານນາໄຊເມືອງຄູນ.

ວັນທີ 7/6/1964 ເຮືອບິນອາເມຣິກາສືບຕໍ່ບິນໄປສອດແນມເຂດທ້ອງຟ້າໂພນສະຫວັນ-ຄັງໄຂ ກໍ່ຖືກກອງຮ້ອຍປືນ 37 ມມ. ຂອງກອງພັນປ້ອງກັນອາກາດແນວລາວຮັກຊາດ ສົມທົບກັບກອງຮ້ອຍປືນກົນໜັກ 14,5 ມມ. ຂອງທະຫານອາສາສະໝັກຫວຽດນາມ ຍິງເຮືອບິນຊະນິດແອັຟອາ 8 ຕົກ 1 ລຳ, ຈັບນັກບິນໄດ້ 1 ຄົນ. ວັນທີ 8/6/1964 ກອງບັນຊາການເຂດທົ່ງໄຫຫີນໄດ້ມອບໃຫ້ກຳລັງທະຫານຝ່າຍແນວລາວຮັກຊາດ ຜັດປ່ຽນກັນຮັກສາພູງຸດ; ສືບຕໍ່ໃຊ້

.....

*37.ໃນການສູ້ຮົບຕ້ານຈັກກະພັດອາເມຣິກາ 1955-1975 ກອງທັບ ແລະປະຊາຊົນລາວໄດ້ຍິງຍົນຕົກ 2.519 ລຳ, ຍຶດແລະທຳລາຍປືນຊະນິດຕ່າງ 77.359 ກະບອກ, ເຄື່ອງມືສື່ສານ 6.760 ເຄື່ອງ, ເຮືອຈັກ 249 ລຳ,ລົດຊະນິດຕ່າງໆ 1.885 ຄັນ, ທຳລາຍສາງອາວຸດ 112 ແຫ່ງ, ຈັກຮາດາ 12 ແຫ່ງ, ພາຫະນະສົ່ງຄາມ 199.000 ກວ່າໂຕນ. (ປະຫວັດສາດກອງທັບ 1945-1995 ໜ້າ 642-643)*

ກຳລັງພາກສ່ວນໜຶ່ງຂອງເຂດ ສົມທົບກັບກຳລັງທາງດິນ ບຸກຕີປົດປ່ອຍເຂດ ສອງຮັກ-ເມືອງເຄິງ ທະຫານຝ່າຍວຽງຈັນໄດ້ຮັບຂ່າວ ພາກັນແລ່ນປົບໜີໄປ ທາງເມືອງສູຍ, ສາມາດຍຶດອາວຸດຍຸດໂທປະກອນທັງໝົດ.

ທິດທ່າວຽງ-ທ່າໂທມກອງພັນ 701 ແລະກອງພັນ 24 ແນວລາວຮັກຊາດ ໄດ້ສົມທົບກັບທະຫານອາສາສະໝັກຫວຽດນາມບຸກໂຈມຕີທີ່ຕັ້ງເບເອ 25 ແລະ ເບອີ 29 ຂອງຝ່າຍວຽງຈັນຢູ່ເມືອງທ່າໂທມ, ໄລ່ຕີພວກເຂົາແລ່ນໄປທາງທິດ ສາລາແດນດິນ, ເມືອງເຫືອງ, ໃນເວລານີ້ກອງທະຫານຂອງກອງແລຢູ່ທ່າໂທມ ໂດຍແມ່ນຮ້ອຍໂທ ຄຳໄຜ່ ເປັນຜູ້ບັນຊາກໍ່ໄດ້ອ່ອາຍໜ້າເຂົ້າຮ່ວມມືກັບກຳລັງ ຮັກຊາດ. ຢູ່ສະໜາມຮົບທິດນີ້ ຝ່າຍວຽງຈັນຖືກຂ້າຕາຍ 106 ຄົນ, ຖືກຈັບເປັນ ຊະເລີຍເສິກ 70 ຄົນ ແລະອາວຸດຖືກຍຶດຫຼາຍພໍສົມຄວນ.

ວັນທີ 8/6/1964 ບັ້ນຮົບປົດປ່ອຍທົ່ງໄຫຫີນໄດ້ສິ້ນສຸດລົງ, ຕະຫຼອດ 24 ວັນ ແລະຄືນທີ່ສູ້ຮົບ ຝ່າຍແນວລາວຮັກຊາດ ແລະກຳລັງເປັນກາງຮັກຊາດ ຍາດໄດ້ໄຊຊະນະອັນໃຫຍ່ຫຼວງ, ດັບສູນສັດຕູ 696 ຄົນ, ຈັບເປັນຊະເລີຍເສິກ 912 ຄົນ ເຮັດໃຫ້ທະຫານກອງແລ 454 ຄົນ ແຍກຕົວອອກໄປຮ່ວມມືກັບແນວ ລາວຮັກຊາດ, ຍຶດປືນໃຫຍ່ 30 ກະບອກ, ປືນບາໂຊກາ ແລະເດກາແຊັດ 195 ກະບອກ, ປືນກົນໜັກ ແລະກົນກາງ 240 ກະບອກ, ປືນເຫຼັກຍາວ ແລະ ປືນກົນມື 2.741 ກະບອກ, ລົດຕັງ 19 ຄັນ, ລົດຫຸ້ມເກາະ 13 ຄັນ, ລົດຂົນສົ່ງຊະນິດຕ່າງໆ 81 ຄັນ, ທຳລາຍລົດຕັງ 15 ຄັນ, ລົດຫຸ້ມເກາະ 9 ຄັນ, ຍິງເຮືອບິນອາຍພົ່ນ ສູ້ຮົບຕົກ 3 ລຳ, ຍົນເຕ 28 ຕົກ 6 ລຳ, ປົດປ່ອຍປະຊາຊົນແຂວງຊຽງຂວາງ 18 ຕາແສງ ມີພົນລະເມືອງ 30.000 ກ່ວາຄົນ.

ດ້ວຍຄວາມປ່ວງບ້າກະຫາຍສົງຄາມ 12/6/1964 ເຈົ້າສຸວັນນະພູມາ ນາຍົກລັດຖະມົນຕີລັດຖະບານຫຸ່ນວຽງຈັນ ພ້ອມກັບທູດອາເມຣິກາປະຈຳລາວ ເປີດຖະແຫຼງຂ່າວຕໍ່ສື່ມວນຊົນວ່າ ***" ໃນນາມນາຍົກລັດຖະມົນຕີແຫ່ງລາຊະອາ ນາຈັກລາວ ອະນຸຍາດໃຫ້ກຳລັງທະຫານອາເມຣິກາເຂົ້າມາຍິງທຳລາຍເປົ້າໝາຍ ຕ່າງໆຂອງຝ່າຍກົງກັນຂ້າມໃນທົ່ວແຜ່ນດິນລາວ "*** ໂຄສົກປະຈຳສະຖານທູດ

ອາເມຣິກາກໍ່ໄດ້ແຈ້ງວ່າ: ***ເຮືອບິນອາຍພົ່ນສູ້ຮົບຂອງອາເມຣິກາທີ່ປະຕິບັດງານຢູ່ລາວໄດ້ຮັບຄຳສັ່ງໃຫ້ຍິງທຳລາຍເປົ້າໝາຍການທະຫານ ຂອງຝ່າຍປະເທດລາວ"***

ວັນທີ 13/7/1964 ຢູ່ທີ່ວໍຊິງຕັນ **ໂຢນເຊີນ ປະທານາທິບໍດີອາເມຣິກາ ໄດ້ຕົກລົງເຫັນດີນຳແຜນການຂອງກົມໃຫຍ່ ເສນາທິການກອງທັບອາກາດອາເມຣິກາ ກ່ຽວກັບການກະກຽມເອົາກຳລັງທະຫານອາກາດ ແລະ ທະຫານເຮືອເຂົ້າດຳເນີນສົງຄາມທຳລາຍຢູ່ລາວ ແລະ ພາກເໜືອຫວຽດນາມ.** ສະພາບສົງຄາມຢູ່ລາວຜັນແປໄປຢ່າງດຸເດືອດ, ໃບໜ້າການຮຸກຮານລາວ ແລະຫວຽດນາມ ຂອງຈັກກະພັດອາເມຣິກາໄດ້ສະແດງອອກຢ່າງໂຫດຮ້າຍປ່າເຖື່ອນ.

ວັນທີ 31/7/1964 - 1/8/1964 ເຮືອບິນເຕ 28 ໄດ້ຖິ້ມລະເບີດ ແລະ ຍິງທຳລາຍເສັ້ນທາງເລກ 7 ບໍລິເວນນ້ຳກັ່ນ (ຊຽງຂວາງ) ຕິດຊາຍແດນລາວ-ຫວຽດນາມ.

ວັນທີ 7/8/1964 ດິນເຮິດສ ລັດຖະມົນຕີກະຊວງການຕ່າງປະເທດອາເມຣິກາໄດ້ສົ່ງຈົດໝາຍເຖິງ ອັນເກີ ທູດອາເມຣິກາປະຈຳລາວທີ່ວຽງຈັນ, ໃນບາງຕອນຂຽນວ່າ *" ອາເມຣິກາຢາກໃຫ້ສະຖານະການຢູ່ລາວຄ່ອຍໆເປັນປົກກະຕິຂຶ້ນ, ຖ້າວ່າໄດ້ຄືແນວນັ້ນ ຈະສ້າງເງື່ອນໄຂເຮັດໃຫ້ສະຖານະການຢູ່ລາວກັບຄືນສະໄໝເຊັນສັນຍາເຊີແນວ 1962, ແຕ່ວ່າບັນຫາສຳຄັນເພື່ອໃຫ້ສະຖານະການເປັນປົກກະຕິໄດ້ຕ້ອງແມ່ນການສ້າງທ່າກຳລັງທະຫານລະຫວ່າງສອງຝ່າຍໃຫ້ດຸ່ນດ່ຽງກັນ. ຖ້າຫາກວ່າມີການຢຸດຍິງໃນປັດຈຸບັນນີ້ເລີຍກໍ່ຈະເປັນຜົນດີໃຫ້ແກ່ຝ່າຍຄອມມູນິດເທົ່ານັ້ນ ".*

ວັນທີ 17/8/1964 ໂຄສົກຂອງກະຊວງການຕ່າງປະເທດອາເມຣິກາໄດ້ຖະແຫຼງການຢູ່ວໍຊິງຕັນວ່າ: *" ລັດຖະບານອາເມຣິກາ ກຽມພ້ອມປະຕິບັດທຸກມາດຕະການທີ່ຈຳເປັນເພື່ອເຮັດໃຫ້ສະຖານະການຢູ່ລາວເຂົ້າສູ່ປົກກະຕິ ...".*

ຍ້ອນໄດ້ຮັບການຊ່ວຍເຫຼືອ ໂດຍກົງຈາກອາເມຣິກາ, ພູມີ ໜໍ່ສະຫວັນ ຈຶ່ງລະດົມ 4 ກອງພັນໃຫຍ່ຄື: ກອງພັນ 11, 15, 16, 17 ແລະ 4 ກອງພັນຄື: ເບເອ 12, 52, 53, 55 ກັບ 2 ກອງພັນ ເບແອເຣ 160, 190 ເປີດບັ້ນຮົບ **"ສາມສອນ"** ເຂົ້າກວາດລ້າງເຂດເໜືອວຽງຈັນຄື: ວັງວຽງ, ການີ ແລະສາລາພູຄູນ ເພື່ອໄຂເສັ້ນທາງຍຶດເອົາທົ່ງໄຫຫີນ-ຊຽງຂວາງ, ອີກປີກໜຶ່ງບຸກເຂົ້າທ່າໂທມ ທ່າວຽງ ທາງທິດໃຕ້ແຂວງຊຽງຂວາງ ໂດຍເລີ່ມເປີດສາກແຕ່ວັນທີ 19/7/1964.

ໄປພ້ອມກັບການເປີດບັ້ນຮົບນັ້ນ ຝ່າຍວຽງຈັນກໍ່ທຳທ່າເຂົ້າຮ່ວມກອງປະຊຸມສຸດຍອດ 3 ຝ່າຍ ທີ່ເປີດຂຶ້ນຢູ່ປາຣີ (ຝຣັ່ງເສດ) 21/8/1964 ເພື່ອພິຈາລະນາຊອກທຸກວິທີແກ້ໄຂບັນຫາລາວໂດຍສັນຕິ, ກອງປະຊຸມແກ່ຍາວໄປຫຼາຍຮອບແຕ່ບໍ່ໄດ້ຮັບຜົນສຳເລັດຫຍັງໝົດ. ກອງປະຊຸມຈຶ່ງຍຸຕິລົງໃນ 29/11/1964 ໂດຍຝ່າຍວຽງຈັນໄດ້ໜີຈາກກອງປະຊຸມກ່ອນ.

ຂະນະດຽວກັນນັ້ນ 26/8/1964 ດີນເຣັດສ ລັດຖະມົນຕີກະຊວງການຕ່າງປະເທດອາເມຣິກາ ກໍ່ໄດ້ສົ່ງໂທລະເລກເຖິງ ອັນເກີ ທູດອາເມຣິກາປະຈຳລາວ ທີ່ວຽງຈັນ ຊຶ່ງມີເນື້ອໃນບາງຕອນວ່າ *"ຂ້າພະເຈົ້າເຫັນດີນຳແຜນການເກັບເກນເອົານັກບິນລາວເຂົ້າປະຕິບັດງານໃນນາມພະນັກງານອາກາດອາເມຣິກາ. ໃຫ້ໃຊ້ອາເມຣິກາ, ໄທ ແລະລາວ ຢ່າງບໍ່ຈຳກັດ, ອະນຸຍາດ ໃຫ້ນັກບິນອາເມຣິກາ ໃຊ້ຍົນເຕ 28, ຈຶ່ງຮັບຮູ້ວ່າເຕ 28 ມີຄວາມສຳຄັນໃນການທະຫານ ແລະ ສາມາດຊ່ວຍໃຫ້ແກ່ເຈົ້າສຸວັນນະພູມາ ມີທ່າດີໃນການເຈລະຈາ ສຳລັບເປົ້າໝາຍສຳຄັນໃຫ້ໃຊ້ນັກບິນໄທ, ຢ່າໃຊ້ນັກບິນລາວເພາະພວກເຂົາມັກຫຼົບຫຼີກຄຳສັ່ງ"*

ບັ້ນຮົບ "ສາມສອນ" ນີ້ ຝ່າຍວຽງຈັນແບ່ງເປັນ 3 ໄລຍະຄື: ໄລຍະທີ 1 ວັນທີ 19/7-6/8/1964 ໄລຍະທີ 2 ວັນທີ 20/8-20/9/1964 ແລະໄລຍະທີ 3 19/9-16/10/1964. ແຕ່ການບຸກຕີທຸກເທື່ອກໍ່ຖືກກຳລັງປະກອບອາວຸດທ້ອງຖິ່ນ ແລະ ທະຫານກອງໜອນສະກັດຕີຢ່າງລຸນຕິດ, ກຳລັງຝ່າຍວຽງຈັນຖືກອ່ອນເພຍທັ້ງສູນເສຍໄປເທື່ອລະໜ້ອຍ ພ້ອມທັ້ງຖືກກຳລັງໜວງຝ່າຍແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດຢູ່ພູກູດຕີຕ້ານຄືນຢ່າງໜັກ. ແຈ້ງຂ່າວ

ກ່ຽວກັບການປະລາໄຊຂອງການເຄື່ອນທັບຄັ້ງນີ້, ສະຖານີວິທະຍຸກະຈາຍສຽງ ແຫ່ງປະເທດລາວໄດ້ວິຈານວ່າ: *" 3 ລູກສອນ ຫຼື 100 ລູກສອນຂອງອາເມຣິກາ ແລະ ລູກມື ກໍ່ພຽງແຕ່ເປັນການນຳເອົາລູກສອນໄປຍິງໃສ່ຜາຫີນເທົ່ານັ້ນ ".*

ວັນທີ 30/11-7/12/1964 ກອງພັນ 13 ຂອງຝ່າຍແນວລາວຮັກຊາດ ໄດ້ສົມທົບກັບກອງພັນ 51 ທະຫານອາສາສະໝັກຫວຽດນາມດັບສູນສັດຕູ 1 ກອງຮ້ອຍ ແລະທຳລາຍປືນໃຫຍ່ 155 ມມ. 2 ກະບອກ, ເວລາດຽວກັນນັ້ນ ຝ່າຍອຽງຈັນໄດ້ເຄື່ອນກຳລັງບຸກຂຶ້ນຕີພູກູດ,ຝ່າຍແນວລາວຮັກຊາດກໍ່ໄດ້ຈັ້ງທ່າ ຮັກສາທີ່ໝັ້ນໄວ້ໄດ້ ໂດຍສົມທົບກັບກອງປ້ອງກັນອາກາດອ້ອມຂ້າງພູກູດ ຍິງ ເຮືອບິນເຕ 28 ຕົກ 7 ລຳ ແລະເຮືອບິນແອັຟ 105 ຂອງອາເມຣິກາຕົກ 1 ລຳ.

ວັນທີ 12/12/1964 ສະເດັດເຈົ້າສຸວັນນະພູມາ ໄດ້ເຫັນດີໃຫ້ໂຢນເຊີນ ປືນຂັ້ນໄດສົງຄາມຢູ່ລາວຂຶ້ນຕື່ມອີກ ເຊິ່ງເລີ່ມຕົ້ນດ້ວຍບັ້ນຮົບ **ກົ້ງກະຖັ່ງ** ນຳໃຊ້ ທະຫານອາກາດ ເຂົ້າຕີທຳລາຍຕາມສາຍທາງຂົນສົ່ງ ແຕ່ພາກກາງໄປພາກໃຕ້ ຢ່າງລຸນຕິດ, ພ້ອມກັນນັ້ນຝ່າຍອຽງຈັນຍັງໄດ້ລະດົມກຳລັງທະຫານເຖິງ 4 ເຢ ແອັມ ຄື: ເຢແອັມ 12, 14, 15, 16 ແລະ 4 ກອງພັນທະຫານທ້ອງຖິ່ນເປີດ ບັ້ນຮົບ **" ສອນໄຊ 1 "** ຢູ່ເຂດເໜືອ ແລະໃຕ້ຂອງສາຍທາງເລກທີ 9, ແຕ່ຖືກ ກອງພັນ 14,18 ຂອງເຂດກາງສົມທົບກັບທະຫານທ້ອງຖິ່ນ ແລະກອງຫຼອນໃນ

---

*38. ລາວເປັນປະເທດທີ່ຖືກໂຈມຕີດ້ວຍລະເບີດທາງອາກາດຫຼາຍທີ່ສຸດໃນໂລກ ເມື່ອທຽບໃສ່ ພົນລະເມືອງໃນເວລານັ້ນ. ໃນໄລຍະເວລາ 9 ປີແຫ່ງການຖິ້ມລະເບີດ (1964 – 1973), ມີຍົນ ຖິ້ມລະເບີດໃສ່ລາວຫຼາຍກວ່າ 580,000 ຄັ້ງ (8 ນາທີ/ເທື່ອ ) ລວມມີຈຳນວນລະເບີດ 270 ລ້ານ ລູກ, ສະເລ່ຍ 12 ໂຕນ/ກິໂລຕາແມັດ ຫຼື 1 ໂຕນ/ຄົນ ໃນນັ້ນປະມານ 30% ຫຼືຈຳນວນ 80 ລ້ານ ລູກຍັງບໍ່ທັນແຕກແລະຖືກຝັງຢູ່ໃນດິນລາວ ພາຍຫຼັງສົງຄາມສິ້ນສຸດລົງ. ພື້ນທີ່ຊຶ່ງຖືກລະເບີດ ຫຼາຍທີ່ສຸດແມ່ນແຂວງ ຊຽງຂວາງ ແລະທິດຕາເວັນອອກຂອງແຂວງ ສະຫວັນນະເຂດ ສາລະວັນ ແລະອັດຕະປື. ທັງໝົດ 17 ແຂວງ ໄດ້ຮັບຜົນກະທົບຈາກສານເຄມີຈາກລະເບີດ ບໍ່ທັນແຕກນີ້, ມີຄົນຫຼາຍກວ່າ 50,000 ຄົນ ເສຍຊີວິດ ຫຼືໄດ້ຮັບບາດເຈັບຈາກລູກລະເບີດ ດັ່ງກ່າວນີ້ນັບແຕ່ປີ 1964 ເປັນຕົ້ນມາ. ບ່ອນທີ່ມັກເກີດລະເບີດແຕກແມ່ນຢູ່ກາງບ້ານ ຫຼື ບ່ອນທີ່ມີຄົນຢູ່ອາໄສກວມເອົາ 39%, ຮອງມາແມ່ນໄຮ່- ທົ່ງນາ, ປ່າ ແລະຫົນທາງ (ຂໍ້ມູນຈາກ ອົງການເກັບກູ້ລະເບີດລາວ)*

ແຂວງສະຫວັນນະເຂດຕີຕ້ານຄືນ ເຮັດໃຫ້ພວກເຂົາເສຍຫາຍຢ່າງໜັກໜ່ວງ ຢູ່ບ້ານນະຄອນ, ໜອງບົວລາວ, ທ້ອຍຫຍ້າພືດ ແລະຕັ່ງຫວາຍ ແຂວງສະຫວັນນະເຂດ. ກຳລັງຖືກປັດເຂ່ຍອອກຈາກວົງສູ້ຮົບ 500 ກວ່າຄົນ.

**14/12/1964 ອາເມຣິກາ ໄດ້ມີຄຳສັ່ງໃຫ້ຍົນຮົບອາເມຣິກາຖິ້ມລະເບີດທຳລາຍໄດ້ທຸກໆຈຸດໃນລາວ.**[38]

13/1/1965 ອາເມຣິກາເພີ່ມທະວີໃຊ້ຍົນຍິງທຳລາຍເຂດປົດປ່ອຍ: ບ້ານບານ ເມືອງຄຳ ຊຽງຂວາງ. ວັນທີ 31/1/1965 ເພື່ອຍູ້ແຮງສົງຄາມຮຸກຮານລາວ ພວກຈັກກະພັດອາເມຣິກາໄດ້ນຳເອົາພວກລູກແຫຼ້ງຕີນມືຊຸດໃໝ່ ຂຶ້ນປ່ຽນແທນຊຸດເກົ່າ ໂດຍໃຫ້ **ບຸນເລີດ ສານິຈັນ ແລະ ສີໂທ ລານພຸດທະກຸນ** ເຮັດລັດຖະປະຫານຢູ່ວຽງຈັນ ໂຄ່ນລົ້ມລັດຖະບານເຈົ້າສຸວັນນະພູມາ, ເຮັດໃຫ້ ພູມີ ໜໍ່ສະຫວັນ ພ້ອມພັກພວກຟ້າວໂຕນໄປລີ້ໄພຢູ່ປະເທດໄທຍ໌.

ໂດຍປະຕິບັດຕາມທິດນຳ 3 ດ້ານຄື: **"ເອົາການເມືອງເປັນພື້ນຖານ, ເອົາການທະຫານເປັນກຳລັງໜູນໜີບ, ເອົາເສດຖະກິດເປັນໄມ້ງັດ"** ເລີ່ມແຕ່ວັນທີ 17/1/1965 ເພື່ອແກ້ໄຂພວກປຸ້ນທີ່ເຄື່ອນໄຫວຢູ່ແຂວງຫົວພັນ ແນໃສ່ສ້າງເຂດທີ່ໝັ້ນໃຫ້ມີຄວາມສະຫງົບ, ສູນກາງພັກ ແລະ ຄະນະພັກການທະຫານສູນກາງຈຶ່ງໄດ້ຕົກລົງເປີດປັ້ນກວາດລ້າງພວກປຸ້ນ; ຄະນະບັນຊາດ້ານຮົບໂດຍມີ ສະຫາຍ ທິດມ່ວນ ສາວຈັນທະລາ, ສະຫາຍ ສີສະຫວາດ ແກ້ວບຸນພັນ, ສະຫາຍ ສະໝານ ວິຍະເກດ ແລະ ສະຫາຍ ມາ ໄຂຄຳພິທູນ ເປັນຜູ້ບັນຊາໂດຍກົງ. ກຳລັງທີ່ນຳໃຊ້ເຂົ້າໃນປັ້ນຮົບຄັ້ງນີ້ມີ ກອງພັນ 705, ກອງພັນ 585, ກອງພັນ 613, ກອງພັນ 14 ຕີພິເສດຂອງສູນກາງ, ກອງຮ້ອຍເອກະລາດຂອງແຂວງ, ໜວດທະຫານເມືອງ ປະສານສົມທົບກັບກອງທະຫານອາສາສະໝັກຫວຽດນາມ; ນອກນັ້ນຍັງມີກອງຂົນຂວາຍ 200 ກວ່າຄົນ ເຂົ້າຮ່ວມປຸກລຸກຂົນຂວາຍປະຊາຊົນ, ມີພາກສ່ວນພະນັກງານ 50 ກວ່າຄົນ ເຮັດໜ້າທີ່ຮັບຜິດຊອບວຽກງານເສດຖະກິດຮັບປະກັນຊີວິດການເປັນຢູ່.

ກອງທະຫານກອງທັບປົດປ່ອຍປະຊາຊົນລາວ ໄດ້ຕີພວກປຸ້ນຢູ່ເຂດຫົວເມືອງ, ເມືອງເປີນ, ໂຮງນິນ, ປ່າຄາ, ໜອງຄ້າງ ແຂວງຫົວພັນ ແຕກທະລາຍ ເຮັດໃຫ້ພວກປຸ້ນຕ້ອງຫົດເຂົ້າປ້ອງກັນຢູ່ເຂດໂຮງນິນ, ຫ້ວຍມ້າ ແລະຜາຖີ່.ຈາກນັ້ນ ພວກເຮົາໄດ້ເປີດບັ້ນຮົບຕີພວກປຸ້ນຢູ່ເຂດໂຮງນິນ, ຫ້ວຍມ້າ ແລະ ຜາຖີ່ ເຊິ່ງເປັນເຮືອນຮັງສຸດທ້າຍຂອງພວກເຂົາຢູ່ແຂວງຫົວພັນ ໂດຍການຊີ້ນຳບັນຊາຂອງສະຫາຍ ສະໝານ ວິຍະເກດ, ສະຫາຍ ໄອ່ ສຸລິຍະແສງ ສາມາດກວາດລ້າງກຸ່ມກອງປຸ້ນໄດ້ຢ່າງສົມບູນ ແລະອອກມາຍອມ 79 ຄົນ.

ຜ່ານການປະຕິບັດໜ້າທີ່ໂຄສະນາຊົນຂວາຍ ແລະ ຮຽກຮ້ອງຕ່າງໆ ພວກປັ້ນກໍ່ອອກມາຍອມຕື່ມອີກ 39 ຄົນພ້ອມອາວຸດ 39 ກະບອກ ແລະດັບສົນ ພວກຫົວໂປ່ດື້ດ້ານ 127 ຄົນ.

ພາຍໃຕ້ການຊີ້ນຳຂອງຄະນະປະຈຳສູນກາງພັກ ແລະກອງບັນຊາການສູງສຸດກອງທັບແນວລາວຮັກຊາດ ໄດ້ມີຄຳສັ່ງແນະນຳໃຫ້ກົມກອງຕ່າງໆ ແລະ ທະຫານທ້ອງຖິ່ນແຂວງຫົວພັນ ສະຫຼຸບຖອດຖອນບົດຮຽນ ຜ່ານບັ້ນຊົນຂວາຍ ພວກກອງປຸ້ນຜ່ານມານັ້ນ, ພົ້ນດວ່າ ທິດທາງໃນການຊົນຂວາຍພວກກອງປຸ້ນ ທີ່ສູນກາງພັກໄດ້ກຳນົດອອກແມ່ນຖືກຕ້ອງທີ່ສຸດ ແລະ ກໍ່ໄດ້ຜັນຂະຫຍາຍບົດຮຽນ ດັ່ງກ່າວ ໄປສູ່ແຂວງຊຽງຂວາງ ຫຼວງນ້ຳທາ ແລະຜົ້ງສາລີ.

ນັບແຕ່ນັ້ນມາໂຄງການອົບຮົມ ການເມືອງແນວຄິດຢູ່ໃນກອງທະຫານຕ່າງໆ ໄດ້ນຳເອົາເນື້ອໃນນະໂຍບາຍຊົນເຜົ່າຂອງສູນກາງພັກ, ວຽກງານກໍ່ສ້າງຮາກຖານ ແລະການຊົນຂວາຍພວກກອງປຸ້ນເຂົ້າໃນວຽກງານສຶກສາການເມືອງແນວຄິດ. ຢູ່ຕາມແຂວງຕ່າງໆໃຫ້ມີການຈັດຕັ້ງ ໜ່ວຍກໍ່ສ້າງຮາກຖານເຊິ່ງລວມມີທັງກຳລັງທະຫານ, ພະນັກງານການເມືອງ ແລະເສດຖະກິດຢູ່ທ້ອງຖິ່ນ. ມາຮອດວັນທີ 1/10/1965 ສູນກາງພັກ, ກອງບັນຊາການສູງສຸດກຳລັງປະກອບອາວຸດປະເທດລາວໄດ້ປ່ຽນຊື່ເປັນ **ກອງທັບປົດປ່ອຍປະຊາຊົນລາວ.**

1/4/1965 ອາເມຣິກາໄດ້ເພີ່ມທະວີໃຊ້ຍົນຍິງ ທຳລາຍເຂດປົດປ່ອຍ (1966 ໃຊ້ຍົນ B52 ຍິງທຳລາຍເຂດປົດປ່ອຍໂດຍຂໍ້ອ້າງວ່າ ຍິງຕາມເສັ້ນທາງ ໂຮ່ຈິມິນ) ສະເພາະແຕ່ໃນລະດູແລ້ງປີ 1965 ອາເມຣິກາໄດ້ລະດົມຍົນເຖິງ 11.578 ຖ້ຽວຍິງທຳລາຍເຂດປົດປ່ອຍ ໂດຍສະເພາະເຂດລຽບຕາມສາຍທາງ ຕ່າງໆເຊັ່ນ: ທາງເລກທີ 42 ແຕ່ເມືອງຂວາ (ຜົ້ງສາລີ) ຫາໄຕຈ່າງ (ຫວຽດນາມ), ສາຍທາງເລກ 6 ແລະ 217 (ຫົວພັນ): ນາແມວ ພູບ່ອງ ຖ້ຳໝາຫຼົງ ຜາແດງ ນາໄກ່ (ເມືອງວຽງໄຊ)ເມືອງງາ ນາແທ່ນ ນ້ຳນົວ ທາງລ້ອງ ເມືອງລຽດ ພູໝໍ້ຕ່ອມ, ເສັ້ນທາງເລກ 7A ແລະ 7B (ຊຽງຂວາງ): ເຂດພູບ່ອງ ຫາດເຢ ສາມແຍກ ໜອງເປັດ, ບ້ານສ້ອມ ທ່າວຽງ ທ່າໂທມ, ຕາມເສັ້ນທາງເລກ 8 ແລະ 12 (ຄຳມ່ວນ), ທາງເລກ 9 (ສະຫວັນນະເຂດ) ດົງເຫັນ ພະລານ ເມືອງພີນ ເຊໂປນ, ແລະທາງເລກທີ 23 (ສາລະວັນ-ຈຳປາສັກ) ໂດຍໃຊ້ລູກໂບມຂະໜາດໜັກ 500-3.000 ກິໂລກຼາມ ແລະຫຼາຍຊະນິດເຊັ່ນ: ໂບມນາປານ, ຟົດສະຟໍ, ໂບມບີ້, ລະເບີດ ສາຍໃຍ, ຢາພິດເຄມີ, ລະເບີດເວລາ...

ຕໍ່ໜ້າສະພາບການດັ່ງກ່າວນັ້ນ ເດືອນ 5/1965 ກອງປະຊຸມຄະນະ ບໍລິຫານງານສູນກາງພັກຄັ້ງທີ 13 ໄດ້ໄຂຂຶ້ນຕີລາຄາສະພາບການ ແລະວາງມະຕິ ກ່ຽວກັບທິດທາງໜ້າທີ່ໃໝ່ ຕໍ່ການເພີ່ມທະວີສົງຄາມຮຸກຮານ ຂອງຈັກກະພັດ ອາເມຣິກາຢູ່ລາວ ແລະ ທົ່ວແຫຼມອິນດູຈີນ. ສູນກາງພັກຍັງໄດ້ກຳນົດແຈ້ງ: ຊຸກຍູ້ ການຕໍ່ສູ້ດ້ານການທະຫານ, ປຸກລະດົມສົງຄາມປະຊາຊົນໃຫ້ກວ້າງຂວາງ, ດັບສູນ ແລະ ຕີບັ່ນທອນກຳລັງຄົນຂອງສັດຕູ, ຮັກສາ ແລະ ເປີດກວ້າງເຂດປົດປ່ອຍຢ່າງ ມີຈຸດສຸມ, ອອກແຮງປັບປຸງ ແລະ ເພີ່ມທະວີກໍ່ສ້າງກຳລັງປະກອບອາວຸດປະຊາ ຊົນໃຫ້ເຂັ້ມແຂງ, ຖືເອົາບັນຫານີ້ ເປັນໜ້າທີ່ແຖວໜ້າຂອງທົ່ວພັກ, ທົ່ວກອງທັບ ແລະທົ່ວປວງຊົນ; ຕ້ອງຄົ້ນຄວ້າຊາບຊຶມຢ່າງເລິກເຊິ່ງກ່ຽວກັບທັດສະນະສົງຄາມ ປະຊາຊົນ, ກຳລັງປະກອບອາວຸດປະຊາຊົນ ແລະ ບັນດາຈຸດພິເສດຕົວຈິງໃນ ທຸກດ້ານຂອງສະໜາມຮົບຢູ່ລາວໃຫ້ດີ.

ທິດທາງແລະຄາດໝາຍໃນການປັບປຸງກໍ່ສ້າງກຳລັງປະກອບອາວຸດແມ່ນ: ເພີ່ມທະວີຖືເອົາຄຸນນະພາບດ້ານການເມືອງ, ຮັບປະກັນການນຳພາຂອງພັກ

ຢ່າງເດັດຂາດ, ໂດຍກົງ ແລະຮອບດ້ານຕໍ່ກຳລັງປະກອບອາວຸດ ເຊິ່ງໄປຄຽງຄູ່ກັບການປັບປຸງການຈັດຕັ້ງ ແລະ ແກ້ໄຂບັນຫາທີ່ຍັງບໍ່ທັນແທດເໝາະກັບ 3 ປະເພດກຳລັງ (ກຳລັງຫຼວງ, ກຳລັງທ້ອງຖິ່ນ ແລະ ທະຫານລາດກອງຫຼອນ).

ກ່ຽວກັບທະຫານຫຼວງຕ້ອງອອກແຮງປັບປຸງກໍ່ສ້າງໃນທຸກດ້ານ ເພື່ອໃຫ້ກາຍເປັນກອງທະຫານທີ່ສູ້ຮົບເກັ່ງ, ຂົນຂວາຍມະຫາຊົນເກັ່ງ, ເພີ່ມພູນຜະລິດຜົນເກັ່ງ ແລະມີກຳລັງແຮງພຽງພໍເພື່ອຕີເອົາຊະນະສັດຕູ, ແຕ່ລະພາກສ່ວນຕ້ອງບຳລຸງສ້າງກຳລັງພົນໃຫ້ຫຼວງຫຼາຍພໍສົມຄວນ, ເອົາໃຈໃສ່ກໍ່ສ້າງຂັ້ນກອງພັນນ້ອຍ ເພື່ອກ້າວຂຶ້ນເປັນກອງພັນໃຫຍ່ ຢູ່ຕາມເຂດຍຸດທະສາດສຳຄັນ ຄື: ຊຳເໜືອ, ຊຽງຂວາງ, ເຂດກາງ ແລະເຂດໃຕ້. ທະຫານຫຼວງຕ້ອງກະທັດຮັດ, ແຕ່ຕ້ອງເຂັ້ມແຂງໃນທຸກດ້ານ ແລະເຄື່ອນໄຫວໄດ້ດີ. ທະຫານທ້ອງຖິ່ນໃນແຕ່ລະແຂວງ, ແຕ່ລະເມືອງ ແລະ ເຂດຊົນເຜົ່າຕ່າງໆຕ້ອງໄດ້ຈັດຕັ້ງໃຫ້ແທດເໝາະກັບສະໜາມຮົບ ແລະສະພາບການຕົວຈິງຂອງເຂດປິດປ່ອຍ ຢູ່ແຕ່ລະແຫ່ງໃນປັດຈຸບັນໂດຍອີງໃສ່ສະພາບການຕົວຈິງ ແລະຄວາມສາມາດ, ສະນັ້ນຄາດໝາຍຂອງແຕ່ລະທ້ອງຖິ່ນຈຶ່ງໃຫ້ຈັດຕັ້ງເປັນກອງຮ້ອຍ, ເປັນໝວດ ຫຼື ແບ່ງເປັນພາກສ່ວນນ້ອຍ ເຊິ່ງມີກຳລັງພົນແຕ່ 20-30 ຄົນ, ໜ້າທີ່ຂອງທະຫານທ້ອງຖິ່ນແມ່ນຈັດຕັ້ງ ແລະຊີ້ນຳທະຫານກອງຫຼອນ, ເປັນຫຼັກແຫຼ່ງໃຫ້ແກ່ສົງຄາມກອງຫຼອນຢູ່ທ້ອງຖິ່ນ, ຕີສັດຕູກວາດລ້າງພວກປຸ້ນ, ປົກປັກຮັກສາທ້ອງຖິ່ນເພື່ອຮັບປະກັນການຕໍ່ສູ້ທາງດ້ານການເມືອງ ແລະການຕໍ່ສູ້ດ້ວຍອາວຸດ.

ອອກແຮງກໍ່ສ້າງກອງຫຼອນໃຫ້ຂະຫຍາຍຢ່າງກວ້າງຂວາງ, ພ້ອມດຽວກັນນັ້ນ ຕ້ອງຈັດຕັ້ງໃຫ້ມີຈຸກອງຫຼອນແກ່ນສານ, ໜ້າທີ່ແມ່ນສະກັດລັດຕີສັດຕູ, ປົກປັກຮັກສາບ້ານຊ່ອງຂອງຕົນ, ປົກປັກຮັກສາພະນັກງານ, ອຳນາດການປົກຄອງແລະການຈັດຕັ້ງປະຕິວັດ ຂອງປະຊາຊົນທັງເຂົ້າຮ່ວມຕໍ່ສູ້ດ້ານການເມືອງ, ເພີ່ມທະວີການຮ່ຳຮຽນການເມືອງ, ເຝິກແອບວິຊາການທະຫານໃຫ້ກອງຫຼອນ, ເອົາໃຈໃສ່ບຳລຸງສ້າງພະນັກງານ ແລະ ນຳເອົາສະມາຊິກພັກເຂົ້າໃນຖັນແຖວກອງຫຼອນ, ຕ້ອງເຮັດໃຫ້ກອງຫຼອນຂະຫຍາຍຕົວຢ່າງກວ້າງຂວາງນັບທັງເຂດປິດປ່ອຍ ແລະຢູ່ເຂດແນວຫຼັງຂອງສັດຕູ .

3-13/10/1965 ກອງປະຊຸມປະສົມການເມືອງທົ່ວປະເທດຂອງແນວລາວຮັກຊາດ ແລະກຳລັງເປັນກາງຮັກຊາດໄດ້ໄຂຂຶ້ນທີ່ຊຳເໜືອ. ມີຜູ້ແທນຂັ້ນສູງຂອງຝ່າຍແນວລາວຮັກຊາດ 16 ທ່ານ ແລະຝ່າຍເປັນກາງຮັກຊາດ10 ທ່ານ. ກອງປະຊຸມໄດ້ຕີລາຄາສະພາບການໃນອິນດູຈີນ ໃນລາວ ແລະການຮ່ວມສຳພັນສູ້ຮົບລະຫວ່າງສອງກຳລັງໃນການຕໍ່ສູ້ກູ້ຊາດ ຕ້ານການຮຸກຮານຂອງຈັກກະພັດອາເມຣິກາ ແລະລູກມື ນັບແຕ່ປີ 1960-1965. ກອງປະຊຸມໄດ້ວາງນະໂຍບາຍຫຼັກໝັ້ນ 4 ຂໍ້ ແລະວິທີການແກ້ບັນຫາລາວ 5 ຂໍ້.

ເຖິງທ້າຍປີ 1965 ຝ່າຍແນວລາວຮັກຊາດ ມີທະຫານຫຼວງປະມານ 7.950 ຄົນ, ທະຫານທ້ອງຖິ່ນ 8.965 ຄົນ ແລະທະຫານກອງຫຼອງ 32.000 ຄົນ (ບໍ່ນັບກຳລັງເປັນກາງທີ່ຢູ່ຊຽງຂວາງ ແລະ ຜົ້ງສາລີ) ກຳລັງກອງຫຼອນໄດ້ຮັບການປັບປຸງ ແລະເພີ່ມຈຳນວນພົນຂຶ້ນຕື່ມ ທັງຄົບຖ້ວນ, ເຝິກແອບຕິດພັນກັບການສູ້ຮົບຕົວຈິງ,ຖືເປັນສຳຄັນໃນການຕີໃກ້,ຕີກາງຄືນ,ສະກັດຕີເຮັດໃຫ້ກຳລັງກອງຫຼອນນັບມື້ນັບຫຼາຍຂຶ້ນ: ປີ 1963 ມີ 2 ກອງຮ້ອຍ, ມາຮອດປີ 1965 ເພີ່ມຂຶ້ນເປັນ 3.685 ຄົນ, ໃນນັ້ນສະເພາະກອງຫຼອນເມືອງແປກມີ 700 ຄົນ, ທະຫານເມືອງແປກ ມີ 120 ຄົນ, ພ້ອມນັ້ນຍັງປຸກລະດົມຂະບວນການຍິງຍົນບິນຕ່ຳ, ແນະນຳໃຫ້ກອງຫຼອນກ່ຳຄືປະຊາຊົນ ຮູ້ວິທີຫຼົບຫຼີກລູກແຕກ-ລູກໂບມຈາກໂຈນອາກາດອາເມຣິກາ.

ທ້າຍປີ 1965 ຝ່າຍອຸງຈັນໄດ້ເປີດບັ້ນຮົບ **"ສອນໄຊ 2"** ບຸກຕີເຂົ້າທາງເລກ 9 (ສະຫວັນນະເຂດ) ແລະ 12 (ຄຳມ່ວນ) ໂດຍມີກຳລັງທະຫານເລວຮັບຈ້າງໄທຍ໌ ແລະກຳລັງທາງອາກາດສົມທົບ. ຄຽງຄູ່ກັນນັ້ນ ພວກເຂົາກໍ່ເປີດບັ້ນຮົບ **ທະນົງກຸດ** ທວັງບຸດຍຶດຊຽງຂວາງອີກເທື່ອໃໝ່ ບຸກຕີຫຼາຍ 10 ຄັ້ງດ້ວຍກຳລັງທີ່ເໜືອກວ່າຫຼາຍສິບເທົ່າ ມີທັງທະຫານຮາບ ປືນໃຫຍ່ໜ້າດິນ. ການຖິ້ມລະເບີດທາງອາກາດທັງເວັນ ແລະ ຄືນ ໃສ່ພູກວດຈອມເຫຼັກ ຈົນວ່າຈອມພູເຈື່ອນທະລາຍລົງຫຼາຍແມັດ.

ຜ່ານ 100 ວັນປ້ອງກັນພູກວດ ກຳລັງຝ່າຍແນວລາວຮັກຊາດສາມາດປ້ອງກັນພູກວດໄວ້ຢ່າງໝັ້ນຄົງ. ກອງທັບ ແລະປະຊາຊົນຊາວຊຽງຂວາງ ໂດຍ

ສະເພາະກອງພັນ 13, 701 ແລະ ກອງປະສານເຫຼົ່າເຂດຊຽງຂວາງໄດ້ສະແດງ ຄວາມພິລະອາດຫານ ຈົນໄດ້ຮັບນາມະຍົດ " **ພູກູດອາດຫານ** " ຈາກສູນກາງ ແນວລາວຮັກຊາດ ແລະກອງບັນຊາການສູງສຸດ. ບັນດາພໍ່ແມ່ປະຊາຊົນ ຊາວ ໜຸ່ມ ແມ່ຍິງເມືອງແປກ ໄດ້ສະໝັກໃຈປະກອບສ່ວນລຳລຽງວັດຖຸສິ່ງຂອງອາວຸດ ຍຸດທະພັນໄປໃຫ້ກອງປ້ອງກັນພູກູດຢ່າງເປັນຂະບວນຟົດຟື້ນ ພາຍໃຕ້ຄຳຂວັນ ***"ທຸກສິ່ງທຸກຢ່າງ ເພື່ອຮັກສາພູກູດ ທຸກສິ່ງທຸກຢ່າງ ເພື່ອພະນັກງານນັກຮົບ ຢູ່ພູກູດວິລະຊົນ"***

ກ້າວເຂົ້າ ປີ 1966 ຈັກກະພັດອາເມຣິກາໄດ້ລະດົມກຳລັງທັບອາກາດ ຖິ້ມລະເບີດໃສ່ເຂດປົດປ່ອຍກໍ່ຄືທົ່ງໄຫຫີນ-ຊຽງຂວາງ ແຕ່ 80-100 ຖ້ຽວລຳຕໍ່ ວັນ. ຕໍ່ໜ້າສະຖານະການທີ່ຜັນແປໄປຢ່າງເຄັ່ງຮ້ອນນັ້ນ 25/5/1966 ຄະນະ ບໍລິຫານງານສູນກາງພັກໄດ້ເປີດກອງປະຊຸມຄັ້ງທີ 15 ຂຶ້ນ, ຄົ້ນຄວ້າກ່ຽວກັບ ການສ້າງ ແລະ ປັບປຸງເຂດປົດປ່ອຍໃນທຸກດ້ານໃຫ້ໄດ້ຕາມລັກສະນະລັດໜຶ່ງ ເພື່ອກາຍເປັນບ່ອນອີງເຂັ້ມແຂງ, ແໜ້ນໜາໃຫ້ແກ່ການຕໍ່ສູ້ຍາວນານ, ໃນນັ້ນ ບັນຫາສຳຄັນອັນໜຶ່ງແມ່ນການກໍ່ສ້າງເສດຖະກິດ ແລະການເງິນສະເພາະຂອງ ເຂດປົດປ່ອຍ.

ວັນທີ 21/10/1966 **ນາຍພົນທ້າວມາ**[39] ຜູ້ບັນຊາການທະຫານອາກາດ ເກີດຂັດແຍ່ງກັບກຸ່ມ ຜຸຍ ຊະນະນິກອນ ແລະ ກຸປະສິດ ອະໄພ ໄດ້ເອົາຍົນເຕ 28 ຖິ້ມລະເບີດໃສ່ກອງບັນຊາການທະຫານສູງສຸດທີ່ໂພນເຄັງ ແລະ ຄ້າຍຈີນາຍໂມ້ ຊຶ່ງເປັນສູນບັນຊາການທະຫານພາກ 5 ທີ່ ກຸປະສິດ ເປັນຜູ້ບັນຊາ ຈາກນັ້ນ ນາຍພົນ ທ້າວມາ ກໍ່ປົບໄປຢູ່ປະເທດໄທ.

.....

*39. ເພື່ອຂັດຂວາງການລວມລາວຄັ້ງທີ 3 ມ້າງເພສັນຕິພາບ ແລະ ຄວາມຖືກຕ້ອງປອງດອງຊາດ, ນາຍພົນທ້າວມາ ລູກມືຊັ້ນຈຳຂອງພູມີ ໜໍ່ສະຫວັນ, ດ້ວຍການບັນຊາຂອງອາເມຣິກາ, ການສະໜັບສະໜູນຂອງໄທ, ແລະຝ່າຍຂວາວຽງຈັນ ໄດ້ກັບມາພະຍາຍາມກໍ່ລັດຖະປະຫານອີກເທື່ອໜຶ່ງ ໃນວັນທີ 20/9/1973, ແຕ່ບໍ່ສຳເລັດ ຍ້ອນລັດຖະບານປະສົມຮູ້ທັນເລ່ລ່ຽມກົນອຸບາຍ ແລະ ຖືກນາຍພົນ ກຸປະສິດ ອະໄພ ທີ່ຕົກລົງ ກັນວ່າຈະຮ່ວມມືນັ້ນຫັກຫຼັງ . ຍົນເຕ 28 ທີ່ນາຍພົນທ້າວມາຂີ່ໄປຖິ້ມລະເບີດໃສ່ຄ້າຍຈີນາຍໂມ້ ໄດ້ຖືກຍິງຕົກ ທ້າວມາກໍ່ຈົບຊີວິດລົງ.*

30/7/1967 ຄະນະກອງບັນຊາການສູງສຸດ ກອງທັບປົດປ່ອຍປະຊາຊົນລາວ ໄດ້ໄຂກອງປະຊຸມພະນັກງານການທະຫານ ແລະການເມືອງ ທົ່ວກອງທັບຂຶ້ນທີ່ວຽງໄຊ ມີຜູ້ແທນເຂົ້າຮ່ວມ 143 ຄົນ. ກອງປະຊຸມໄດ້ພ້ອມກັນສົນທະນາ ແລະຕີລາຄາໄຈ້ແຍກກ່ຽວກັບທິດທາງ, ໜ້າທີ່ກໍ່ສ້າງພັກ, ວຽກງານການເມືອງ, ປຸກລະດົມຂະບວນການແຂ່ງຂັນຕີເອົາຊະນະຈັກກະພັດອາເມຣິກາ ແລະລູກມືຂາຍຊາດ ພ້ອມນັ້ນຍັງໄດ້ສູ້ຊົນກໍ່ສ້າງຂະບວນການ "ກົມກອງ 3 ເກັ່ງ", "ນັກຮົບ 3 ເກັ່ງ" (ສູ້ຮົບເກັ່ງກໍ່ສ້າງຮາກຖານມະຫາຊົນເກັ່ງ ແລະເພີ່ມພູນຜະລິດຜົນເກັ່ງ).

ກອງປະຊຸມກໍ່ໄດ້ກຳນົດແຈ້ງ: ການເຄື່ອນໄຫວຊອກຄົ້ນຕີສັດຕູດ້ວຍກຳລັງໜ້ອຍ, ສະກັດຕີ, ຫຼອນຕີ, ຕີມີການປະສານສົມທົບຊ່ວຍໜູນຈາກຫຼາຍພາກສ່ວນນັບທັງກຳລັງພາຍໃນຂອງສັດຕູ, ໃຊ້ກຳລັງຕີພິເສດ, ຕີຂັບໄລ່, ຊອກຄົ້ນລັດຕີພວກແຕກທັບ.

ກ່ຽວກັບທິດນຳຍຸດທະສາດມີຄື: ສາມັກຄີ ແລະ ເສີມຂະຫຍາຍສິດເປັນເຈົ້າລວມໝູ່ຂອງປະຊາຊົນບັນດາເຜົ່າໃນທົ່ວປະເທດ, ໜູນໃຊ້ກຳລັງແຮງສັ່ງລວມຂອງລະບົບຜະເດັດການປະຊາທິປະໄຕປະຊາຊົນ ເພື່ອດຳເນີນສົງຄາມປະຊາຊົນຮອບດ້ານຂອງໝົດຊາດຕີສັດຕູ.

ເຊື່ອມຊຶມທິດນຳຍຸດທະສາດ, ສົມທົບແໜ້ນການຕໍ່ສູ້ດ້ວຍອາວຸດກັບການຕໍ່ສູ້ດ້ວຍການເມືອງ, ດ້ານກົດໝາຍ ແລະການຕ່າງປະເທດເພື່ອບຸກຕີສັດຕູຢ່າງຮອບດ້ານຍາດເອົາໄຊຊະນະມາໃຫ້ການປະຕິວັດເຮົາ. ສົມທົບແໜ້ນໃນການເສີມຂະຫຍາຍກຳລັງແຮງສັ່ງລວມກັບທີ່ຂອງທ້ອງຖິ່ນກັບສະໜາມຮົບໃນທົ່ວປະເທດເພື່ອເດັດດ່ຽວຕີເອົາຊະນະສັດຕູໃນທຸກໆກໍ່ລະນີ ແລະ ທຸກໆສະພາບການ. ສົມທົບແໜ້ນລະຫວ່າງການປົກປັກຮັກສາ ກັບການສ້າງສາພັດທະນາປະເທດຊາດ ກັບການປ້ອງກັນຊາດ ກັບການສ້າງເສດຖະກິດໃຫ້ສອດຄ່ອງກັນ, ເພື່ອຮັບປະກັນໃຫ້ແກ່ສົງຄາມ, ທັງຜະລິດ ທັງຮັບປະກັນໃນການສ້າງພະລາທິການກັບທີ່ ເຮັດໃຫ້ຊີວິດການເປັນຢູ່ທາງດ້ານວັດຖຸ ແລະວັດທະນະທຳຂອງ

ປະຊາຊົນເປັນປົກກະຕິ, ປັບປຸງແນວຫຼັງຍຸດທະສາດໃຫ້ແໜ້ນແກ່ນເຂັ້ມແຂງ ຂຶ້ນເລື້ອຍໆ.

ກ່ຽວກັບແນວຄິດຊີ້ນຳສູ້ຮົບ, ອີງໃສ່ບົດຮຽນໃນການຕໍ່ສູ້ຕົວຈິງຜ່ານຫຼາຍ ປີ ກອງປະຊຸມໄດ້ກຳນົດໄວ້ ຄື:

- ຕັ້ງໜ້າເປັນເຈົ້າການບຸກໂຈມຕີຢ່າງລຸນຕິດ.
- ດັບສູນສັດຕູ ຕ້ອງຕິດພັນກັບການປ້ອງກັນປະຊາຊົນ, ຮັກສາພື້ນທີ່, ເປັນເຈົ້າຂອງເຂດປົດປ່ອຍ.
- ສູ້ຮົບຕ້ອງສົມທົບກັບການຂົນຂວາຍມະຫາຊົນ, ກໍ່ສ້າງຮາກຖານ.
- ສູ້ຮົບຕ້ອງສົມທົບຂົນຂວາຍທະຫານສັດຕູ, ຂົນຂວາຍພວກປຸ້ນ.
- ເສີມຂະຫຍາຍທ່າດີດ້ານການເມືອງຢ່າງເລິກເຊິ່ງ,ຈິດໃຈເອົາໜ້ອຍ ຊະນະຫຼາຍ, ຕີນໍ່ ຕີທັ້ງເຂົ້າແນວຫຼັງຂອງສັດຕູ.
- ປະສານສົມທົບຢ່າງແໜ້ນແຟ້ນລະຫວ່າງ 3 ປະເພດກຳລັງ, ສົມທົບ ຢ່າງແໜ້ນແຟ້ນ ລະຫວ່າງສະໜາມຮົບຕ່າງໆ.
- ຕີແຮງ, ຕີໄວ, ແກ້ໄຂໄວ, ຖອຍຢ່າງມີແຜນການ.
- ປິດລັບຢ່າງເດັດຂາດ, ຮັບປະກັນການຕີໂດຍບັງເອີນ ແລະຮູ້ຫຼອກ ສັດຕູ.
- ຕີໜ້ອຍແຕ່ຮັບປະກັນໄຊຊະນະ.

ກ່ຽວກັບວິທີ: ຕີລວມແມ່ນການກໍ່ສ້າງທ່າສະໜາມສົງຄາມປະຊາຊົນ ແລະ ສະພາບພູມີປະເທດທີ່ມີຜົນໃຫ້ພວກເຮົາເພື່ອຈັດຕັ້ງສະໜາມຈັ້ງທ່າ ຫຼື ສະໜາມບຸກໂຈມຕີ.

- ຮູບການສູ້ຮົບ: ສູ້ຮົບແບບຈັ້ງທ່າ, ສູ້ຮົບແບບບຸກຕີ.
- ວິທີຕີ: ຕີສັດຕູຢູ່ນອກຂຸມຄອງ, ຕີສັດຕູຢູ່ໃນຂຸມຄອງ, ຕີສັດຕູດ້ວຍ ເຫຼົ່າຮົບວິຊາສະເພາະ, ຕີທາງດ້ານການເມືອງ ແລະການຕ່າງປະເທດ.
- ຍຸດທະວິທີຕີ: ສະກັດຕີ, ຫຼອນຕີ, ຕີປະທະ, ຍິງດ່ຽວ, ຕີບັ່ນທອນດ້ວຍ ອາວຸດພື້ນເມືອງ.

- ລ່ຽມລາຍຂອງຍຸດທະວິທີຕີ: ໃຊ້ການປ່າວຂ່າວຫຼອກລວງສັດຕູ, ລົບກວນ ດ້ວຍຂະໜາດຄື້ນສຽງສີ່ສານ, ລາດາ, ປິດລ້ອມຕີ, ຕີຕັດແບ່ງ ແທງເລິກ ຂະໜາດຂອງການສູ້ຮົບ: ສູ້ຮົບທຳມະດາດ້ວຍປືນຮາບ, ສູ້ຮົບປະສານ ເຫຼົ່າໂດຍມີຫຼາຍເຫຼົ່າທັບເຫຼົ່າຮົບເຂົ້າຮ່ວມ.




*ທ່ານ ພູມ ສີປະເສີດ ອະທິບາຍແຜນການສູ້ຮົບດັບສູນສັດຕູຜູ້ຮຸກຮານ*
*( ຜູ້ທີ່ສອງ ຊ້າຍຫາຂວາ ພັນເອກບຸນທັນ ສະຫວັນວິໄລ, ພັນຕີທຽບ ລິດທິເດດ,*
*ພັນເອກເດືອນ ສຸນນະລາດ, ທ່ານ ພູມ ສີປະເສີດ*
*ຄະນະບັນຊາການແນວລາວຮັກຊາດເຂດຊຽງຂວາງ )*




*ຄະນະລັດຖະບານລາວອິດສະລະ ແຖວໜ້າຈາກຊ້າຍຫາຂວາ*
*ທ່ານສີງ ຣັດຕະນະສະໄໝ, ທ່ານອຸ່ນເຮືອນ ນໍລະສີງ, ທ່ານກະຕ່າຍ ໂດນສະໂສລິດ*
*ພະຍາຄຳມ້າວ ວິໄລ, ສົມເດັດເຈົ້າ ເພັດຊະຣາດ, ສະເດັດເຈົ້າ ສຸວັນນະພູມາ,*
*ສະເດັດເຈົ້າສຸພານຸວົງ, ທ່ານເກື່ອງ ປະທຸມມະຊາດ ແລະເຈົ້າສົມສະໜິດ*



*ຄະນະລັດຖະບານລາວອິດສະລະ ເວລາໄປອາໄສຢູ່ເຮືອນພັກໄຊໂຍ*
*ຖະໜົນຣອງເມືອງ ກຸງເທບ (ໄທ) 1946 ນັ່ງຊາດຢູ່ເທິງໂຕະນ້ອຍຕໍ່ໜ້າ*
*ແຖວໜ້າຈາກຊ້າຍຫາຂວາ ສະເດັດເຈົ້າສຸວັນນະພູມາ, ພະຍາຄຳມ້າວ ວິໄລ,*
*ສະເດັດເຈົ້າສຸພານຸວົງ, ກະຕ່າຍ ໂດນສະໂສລິດ, ແຖວຫຼັງ ເກື່ອງ ປະທຸມມະຊາດ ແລະ*
*ເຈົ້າສົມສະໜິດ*



*ຄະນະລັດຖະບານລາວຕໍ່ຕ້ານ 1950 ຈາກຊ້າຍຫາຂວາ ທ່ານ ໜູຮັກ ພູມສະຫວັນ, ລັດຖະເສນາທະຊວງເສດຖະກິດ-ການເງິນ, ທ່ານ ໄກສອນ ພົມວິຫານ ລັດຖະເສນາທະຊວງປ້ອງກັນປະເທດ, ສະເດັດເຈົ້າສຸພານຸວົງ ມະຫາລັດຖະເສນາ (ນາຍົກ) ທ່ານເຈົ້າສຸກ ວົງສັກ ລັດຖະເສນາ ກະຊວງສຶກສາ, ທ່ານພູມີ ວົງວິຈິດ ຮອງມະຫາລັດຖະເສນາ, ລັດຖະເສນາທະຊວງມະຫາດໄທ*



*ຄະນະກຳມະການສູນກາງແນວລາວອິດສະລະ 1956*
*ແຖວໜ້າຈາກຊ້າຍຫາຂວາ: ທ່ານສີງກະໂປ ສີໂຄດຈຸນນະມາລີ, ທ່ານໄກສອນ ພົມວິຫານ, ສະເດັດເຈົ້າສຸພານຸວົງ, ທ່ານພູມີ ວົງວິຈິດ, ທ່ານໄຟດ່າງ ລໍເຢຍຢາວ, ທ່ານເຈົ້າສຸກ ວົງສັກ, ແຖວຫຼັງ: ທ່ານໜູຮັກ ພູມສະຫວັນ, ທ່ານມາ ໄຂຄຳພິທູນ,ທ່ານສີທົນ ກົມມະດຳ*



*ພິທີຕ້ອນຮັບ ສະເດັດເຈົ້າສຸພານຸວົງ ພ້ອມຄະນະນຳ ທີ່ເດີນທາງເຖິງຊຳເໜືອ ພາຍຫຼັງໂຕນອອກຈາກຄຸກ 1960*



*ແຖວໜ້າຊ້າຍຫາຂວາ: ທ່ານ ຄຳແສງ, ສະເດັດເຈົ້າ ສຸພານຸວົງ, ທ່ານໄກສອນ ພົມວິຫານ, ທ່ານສະໜັ່ນ ສຸດທິຈັກ, ທ່ານສີສະຫວາດ ແກ້ວບຸນພັນ, ທ່ານທິດມ່ວນ ສາວຈັນທະລາ, ທ່ານພູນ ສີປະເສີດ,ແຖວຫຼັງ ທ່ານພູມີ ວົງວິຈິດ,ທ່ານຄຳໄຕ ສີພັນດອນ,ທ່ານສີສົມພອນ ລໍວັນໄຊ,ທ່ານສາລີ ວົງຄຳຊາວ, ທ່ານໜູຮັກ ພູມສະຫວັນ*



*ท่านไกสอน พิมวิหาน กล่าวคำเห็น ในกองประชุมวีละชนแห่งชาด-นักธบแล่งฮันที่วกองทับ 15-20/1/1956 ที่ด่านบ้ำโสย แขวงห้วพัน*



*บันดาวีละชนแห่งชาด และ นักธบแล่งฮันที่วกองทับ เข้าร่วมกองประชุม 15-20/1/1956 ที่ด่านบ้ำโสย แขวงห้วพัน*



*ຊຸມນຸມສະເຫຼີມສະຫຼອງ ບັນດາວິລະຊົນແຫ່ງຊາດ ແລະ ນັກຮົບແຂ່ງຂັນທົ່ວກອງທັບ 15-20/1/1956 ທີ່ດ່ານນ້ຳໂສຍ ແຂວງຫົວພັນ*



*ພິທີເຊັນສັນຍາ ເອົາກຳລັງແນວລາວອິດສະລະ 1500 ຄົນ ເຂົ້າຮ່ວມກອງທັບແຫ່ງຊາດ ວັນທີ 2/11/1957 ທີ່ວຽງຈັນ*




ຮ້ອຍເອກ ກອງແລ ຫົວໜ້າຄະນະລັດຖະປະຫານ ພາຍຫຼັງເຮັດຖະປະຫານ
9/8/1960 ສຳເລັດ ໄດ້ຮັບຄວາມຮັກແພງ ແລະການສະໜູນຈາກມະຫາຊົນຫຼາຍ






*ຄະນະນຳແນວລາວຮັກຊາດ ຕ້ອນຮັບກຳລັງເປັນກາງ ທີ່ຊຳເໜືອ ທ້າຍ1960*
*ຈາກຊ້າຍຫາຂວາ ທ່ານສີທົນ ກົມມະດຳ, ທ່ານກິນິມ ພົນເສນາ,*
*ສະເດັດເຈົ້າສຸພານຸວົງ, ທ່ານຮ້ອຍເອກ ກອງແລ, ທ່ານໜູຮັກ ພູມສະຫວັນ*



*ທ່ານນາຍພົນ ສິງກະໂປ ສີໂຄດຈຸນນະມາລີ ແລະ ຮ້ອຍເອກ ກອງແລ*
*ຫົວໜ້າຄະນະລັດຖະປະຫານ 9/8/1960 ທີ່ທົ່ງໄຫຫີນ ຊຽງຂວາງ*




*ການພົບປະລະຫວ່າງຄະນະຜູ້ແທນລັດຖະບານລາວ ກັບຫວຽດນາມ ທີ່ຮ່າໂນ້ຍ ໃນທ້າຍ1960 ຊ້າຍ: ພັນເອກຫວໍຫງຽນຢາບ (ທີ2) ທ່ານນາຍົກຟາມວັນດົ່ງ (ທີ 3) ຂວາ: ທ່ານໄກສອນ ພົມວິຫານ, ປະທານສຸພານຸວົງ, ທ່ານກຶນີມ ພົນເສນາ ແລະ ທ່ານນາຍພົນ ກອງແລ*



*ຄະນະຜູ້ແທນລັດຖະບານລາວ (ຂວານັບແຕ່ຜູ້ທີ 2) ສະເດັດເຈົ້າສຸວັນນະພູມາ, ສະເດັດເຈົ້າສຸພານຸວົງ, ທ່ານກຶນີມ ພົນເສນາ ພົບປະກັບຜູ້ນຳຈີນ (ຂວາຜູ້ທີ 2) ທ່ານ ປະທານເໝົາເຈີຕຸງ, ນາຍົກລັດຖະມົນຕີໂຈວເອີນຫຼາຍ , ລັດຖະມົນຕີຕ່າງປະເທດເສີນຊີ (ຜູ້ທີ 4)*




*ການພົບປະເຈລະຈາ 3 ຝ່າຍ ໃນວັນທີ 11/5/1961 ທີ່ບ້ານນາມອນ (ວັງວຽງ) ແຂວງວຽງຈັນ*



*ທ່ານ ພູມ ສີປະເສີດ ແລະທ່ານ ສະໝານ ວິຍະເກດ ຄະນະພັກການທະຫານສູນກາງ ໂອ້ລົມທະຫານກ່ອນອອກສູ່ສະໜາມຮົບ*



*ການເຈລະຈາ 3 ຝ່າຍ ແຕ່ຊ້າຍຫາຂວາ ສະເດັດເຈົ້າບຸນອູ້ມ ນະຈຳປາສັກ (ຝ່າຍຂວາ) ສະເດັດເຈົ້າ ສຸວັນນະພູມາ (ເປັນກາງ) ສະເດັດເຈົ້າສຸພານຸວົງ (ແນວລາວຮັກຊາດ ) ທ່ານກຶນີມ ພົນເສນາ*



*ໃນໂອກາດການພົບປະ 3 ຝ່າຍ ແຕ່ຊ້າຍຫາຂວາ ສະເດັດເຈົ້າສຸພານຸວົງ, ສະເດັດເຈົ້າ ສຸວັນນະພູມາ, ທ່ານກຶນີມ ພົນເສນາ, ສະເດັດເຈົ້າບຸນອູ້ມ ນະຈຳປາສັກ, ພູມີ ໜໍ່ສະຫວັນ, ເຈົ້າສີສຸມັງ ສີສະເຫຼີມສັກ, ທ່ານຄຳສຸກ ແກ້ວລາ*




*ກອງປະຊຸມປະສົມການເມືອງ ລະຫວ່າງແນວລາວຮັກຊາດ*
*ກັບກຳລັງເປັນກາງຮັກຊາດ ທີ່ບ້ານຊຸງແມນ ແຂວງຫົວພັນ ວັນທີ 13/10/1965*
*ຮູບເທິງ ຈາກຊ້າຍ: ສະເດັດເຈົ້າສຸພານຸວົງ, ທ່ານຄຳສຸກ ແກ້ວລາ, .....*
*ຜູ້ສຸດທ້າຍ ທ່ານຄຳອ້ວນ ບຸບຜາ*





*ວ່າງປາວ ພ້ອມດ້ວຍທະຫານອາເມຣິກາ ແລະທະຫານໄທຍ໌ຮັບຈ້າງ ຢູ່ລ້ອງແຈ້ງ*




ປະຫວັດມູນເຊື້ອ ກອງລ້ຳລຽງແບກຫາບ ແລະກອງກ້ຳລັ່ງໄຟເພດຍິງ



"Upcountry Meeting"

ອ່ານປາວ ພ້ອມດ້ວຍທະຫານອາເມຣິກາ ຢູ່ລ້ອງແຈ້ງ
24 / VII
ຫ້ານຈຳໜ







*ບັນດາທະຫານພິເສດ ວ່າງປາວ ຖືກຈັບເປັນຊະເລີຍເສິກ*







# II. ການກຳເນີດ ແລະ ໂຄງປະກອບ ການຈັດຕັ້ງກອງລຳລ່ຽງແບກຫາບ 368

.....

ພາຍຫຼັງສຳເລັດກອງປະຊຸມ ພະນັກງານທະຫານ ແລະການເມືອງທົ່ວ ກອງທັບທີ່ວ່ຽງໄຊ 30/7/1967 ແລ້ວ ຜູ້ແທນແຕ່ລະກົມກອງ ໄດ້ກັບຄືນທ້ອງ ຖິ່ນ. ບັນດາກົມກອງຕ່າງໆ ໄດ້ປະເຊີນໜ້າກັບການປົ້ນຂັ້ນໄດສົງຄາມ ຂອງຈັກ ກະພັດອາເມຣິກາ ແລະລູກມື.

ດັ່ງນັ້ນ ເພື່ອຕ້ານກັບຈັກກະພັດອາເມຣິກາ ແລະ ລູກມືທີ່ບຸ່ງດຍຶດເຂົ້າ ເຂດປົດປ່ອຍຂອງ, ຄະນະພັກການທະຫານສູນກາງ ໄດ້ຮຽກຮ້ອງໃຫ້ກອງທັບ ແລະປະຊາຊົນບັນດາເຜົ່າ ທຸກຊັ້ນຄົນປະກອບສ່ວນຕ້ານຢັນສັດຕູ ພ້ອມນີ້ກໍ່ມີ ມະຕິຕົກລົງຮີບຮ້ອນປັບປຸງ ແລະຂະຫຍາຍກຳລັງປະກອບອາວຸດ ໃຫ້ພຽງພໍກັບ ຄວາມຮຽກຮ້ອງຕ້ອງການຂອງສະໜາມຮົບ ໂດຍສະເພາະແມ່ນເພີ່ມກຳລັງປະ ກອບອາວຸດຂຶ້ນຕື່ມ. ເພື່ອປະຕິບັດຕາມມະຕິຕົກລົງຂອງຄະນະພັກການທະຫານ ສູນກາງ, ກອງບັນຊາການທະຫານເຂດຊຽງຂວາງ ໄດ້ຮີບຮ້ອນປັບປຸງກຳລັງແຕ່ ຂັ້ນກອງບັນຊາການທະຫານແຂວງ ລົງເຖິງບ້ານ ເຮັດໃຫ້ກຳລັງທັງ 3 ປະເພດ ນັບມື້ນັບເຕີບໃຫຍ່ເຂັ້ມແຂງ.

ສົງຄາມຮຸກຮານຂອງພວກຈັກກະພັດອາເມຣິກາ ຢູ່ຊຽງຂວາງ ນັບມື້ນັບ ໜັກໜ່ວງຂຶ້ນບໍ່ວ່າ ທາງໜ້າດິນ, ທາງອາກາດ. ດັ່ງນັ້ນ ເພື່ອຮັບປະກັນໃຫ້ແກ່ ການຕໍ່ສູ້ຕ້ານຢັນການບຸ່ງດຍຶດຂອງສັດຕູ ຕ້ອງໄດ້ກຽມພ້ອມທັງກຳລັງພົນ ອາ ວຸດຍຸດທະພັນ ແລະສະບຽງອາຫານ, ກອງບັນຊາການເຂດທະຫານຊຽງຂວາງ

ຈຶ່ງໄດ້ເຕົ້າໂຮມບັນດາພະນັກງານຈາກບັນດາກົມກອງ ມາຄົ້ນຄວ້າວຽກງານການສູ້ຮົບ, ການກິນຢູ່, ພາຫະນະຮັບໃຊ້, ອາວຸດຍຸທະພັນ. ທີ່ປະຊຸມເຫັນວ່າ ເພື່ອແກ້ໄຂບັນຫາການຂາດເຂີນສະບຽງອາຫານ ຄວນແບ່ງກຳລັງທະຫານຫຼວງ ລົງສົມທົບກັບທະຫານທ້ອງຖິ່ນ, ທະຫານລາດກອງຫຼອນ ແລະ ອຳນາດການປົກຄອງປະຊາຊົນ ປຸກລະດົມເກັບເຂົ້າຊ່ວຍຊາດນຳປະຊາຊົນ, ແຕ່ວ່າ ກໍ່ເກີດມີຄຳຖາມ ທີ່ຕ້ອງຄົ້ນຄວ້າຄື:

ຖ້າເກັບເຂົ້າມາໄດ້ແລ້ວແມ່ນໃຜຈະເປັນຜູ້ຕຳ ຫຼື ໄປສີຢູ່ໃສ,

ໃຜຈະເປັນຜູ້ລຳລຽງ ເຖິງສະໜາມຮົບ,

ຖ້າຈະເອົາທະຫານໄປເກັບເຂົ້າ, ໄປຕຳ, ລຳລຽງແບກຫາບໄປສະໜາມຮົບ, ສັດຕູມາໃຜຈະສູ້ຮົບ, ຂະໜາດວ່າ ກ່ອນນີ້ມີລົດຂົນສົ່ງເຂົ້າມາແຕ່ຫວຽດນາມກໍ່ຍັງບໍ່ມີຄົນຂົນລົງລົດແລ້ວ, ມາຮອດດຽວນີ້ ເຂົ້າພັດຢູ່ນຳປະຊາຊົນ, ຈະລໍຖ້າແຕ່ການລຳລຽງສະບຽງອາຫານມາແຕ່ບ່ອນອື່ນໆ (ປະເທດຫວຽດນາມ, ຈີນ) ອ້າຍນ້ອງພວກເຮົາຕ້ອງອຶດເຂົ້າ(ບໍ່ມີເຂົ້າກິນ) ນັ້ນແມ່ນຄຳຄິດ-ຄຳເຫັນ ທີ່ທາງຄະນະພັກການທະຫານເຂດຊຽງຂວາງນຳມາຄົ້ນຄວ້າແລະປຶກສາຫາລື.

ຕໍ່ໜ້າສະພາບການດັ່ງກ່າວນັ້ນ ຄະນະພັກການທະຫານເຂດຊຽງຂວາງ ເຊິ່ງເວລານັ້ນ ປະກອບມີ:

ທ່ານ ພູນ ສີປະເສີດ ຫົວໜ້າກອງບັນຊາການທະຫານເຂດຊຽງຂວາງ
ທ່ານ ສະໜານ ວິຍະເກດ ເລຂາຄະນະພັກ ກອງບັນຊາການເຂດ
ທ່ານ ສົງກະໂປ ສີໂຄດຈຸນນະມາລີ ຮອງກອງບັນຊາການເຂດ
ທ່ານ ສີພອນ ຜາລີຂັນ ຫົວໜ້າຫ້ອງການເມືອງເຂດ
ທ່ານ ຈຳນຽນ ບຸນລອດ ເປັນເສນາທິການເຂດ
ທ່ານ ບຸນນຽນ ຄຳອ້ວນ ເປັນຫົວໜ້າພະລາທິການເຂດ

ຈຶ່ງໄດ້ຈັດຕັ້ງພະນັກງານລົງປຸກລະດົມຂົນຂວາຍ ເອົາຊາຍໜຸ່ມຍິງສາວໃນເຂດຕາແສງຄາຍ, ຕາແສງຄັງ ເບື້ອງຕົ້ນໄດ້ພຽງແຕ່ 37 ຄົນ ມາຈັດຕັ້ງ ເປັນ 2 ໝູ່ ຢູ່ໃຕ້ການຊີ້ນຳບັນຊາໂດຍກົງຂອງຫ້ອງການພະລາທິການເຂດ ທະຫານເຂດຊຽງຂວາງ.

ໝູ່ທີ 1 ບັນຊາໂດຍ
ສະຫາຍ ນາງ ທຸມມີ ທຳມະວົງ ເປັນຫົວໜ້າການທະຫານ (40)
ສະຫາຍ ນາງ ມຸນທາ ເປັນຫົວໜ້າການເມືອງ.

ໝູ່ທີ 2: ບັນຊາໂດຍ:
ສະຫາຍ ນາງ ສີສຸກ ແກ້ວບຸນລ້ອມ ເປັນຫົວໜ້າການທະຫານ (41)
ສະຫາຍ ນາງ ພິມພາ ເປັນຫົວໜ້າການເມືອງ

.....

*40. ສະຫາຍຮ້ອຍເອກ ນາງທຸມມີ ທຳມະວົງ*

*ເກີດວັນທີ 20/11/1953 ບ້ານຄາຍ ເມືອງແປກ ແຂວງຊຽງຂວາງ, ເຂົ້າການປະຕິວັດ / ເຂົ້າທະຫານ10/6/1967 ເຂົ້າສະມາຊິກຊາວໜຸ່ມ 20/10/1968 ເຂົ້າພັກສົມບູນ 20/10/1971 ເຂົ້າສະມາຄົມແມ່ຍິງ 5/6/1977 ແຕ່ງງານກັບ ພັນຕີ ທອງໃສ ທຳມະວົງ 1972, ປັດຈຸບັນ (2014) ເປັນພະນັກງານບຳນານ ຢູ່ບ້ານວຽງແກ້ວ ເມືອງກາສີ ແຂວງວຽງຈັນ. ຕະຫຼອດຊີວິດ ແຫ່ງການເຄື່ອນໄຫວປະຕິວັດໄດ້ຮັບ: ຫຼຽນໄຊ ພິລະອາດຫານ 2 ໜ່ວຍ, ຫຼຽນກາແຮງງານຊັ້ນ III ຈຳນວນ 2 ໜ່ວຍ, ຫຼຽນການັກຮົບແຂ່ງຂັນ 3 ເກັ່ງ 1 ໜ່ວຍ, ຫຼຽນກາຕ່າງ 5 ໜ່ວຍ ແລະ ໃບຍ້ອງຍໍຕ່າງໆຫຼາຍໃບ.*

*41. ສະຫາຍ ຮ້ອຍເອກນາງ ສີສຸກ ແກ້ວບຸນລ້ອມ*

*ເກີດປີ 1951 ທີ່ບ້ານຄາຍ ເມືອງແປກ ແຂວງຊຽງຂວາງ, ເຂົ້າການປະຕິວັດ 10/7/1965 ເປັນກອງຫຼວນຕາແສງ ຕໍ່ມາທະຫານເຂດຊຽງຂວາງໄປລະດົມ ໂດຍມີສະຫາຍ ບຸນນຽນ ຄຳອ້ວນ, ສະຫາຍ ຈັນດາ, ສະຫາຍ ບຸນຈັນ ( ຄົນຫວຽດນາມ ຊື່ວ່າ ອົງຕິກ ປັດຈຸບັນ ອອກພັກຜ່ອນຮັບເບ້ຍບຳນານທີ່ແຂວງວິ້ງຈີ້ຫງນ) ລະດົມໄດ້ 37 ຄົນ ເຂົ້າມາເປັນໜ່ວຍລຳລຽງ ແບກຫາບຊ່ວຍທະຫານເຂດ (ເບື້ອງຕົ້ນວ່າຢືມ ), ຕໍ່ມາສັດຕູບຸກຕີໜັກ ກອງບັນຊາການ ເຂດ ໄດ້ຕົກລົງ ເອົາພາກສ່ວນດັ່ງກ່າວ ເຂົ້າເປັນກອງລຳລຽງແບກຫາບຂອງເຂດ ຈາກນັ້ນໄດ້ລະດົມ ເອື້ອຍນ້ອງເຂົ້າຕື່ມສ້າງຕັ້ງເປັນ 2 ໝວດ, ຕໍ່ມາຮອດ ປີ 1968 ມີການສັບຊ້ອນ ສະຫາຍຖືກ ແຕ່ງຕັ້ງເປັນຫົວໜ້າໝວດ, ປີ 1969 ຖືກແຕ່ງຕັ້ງເປັນຫົວໜ້າກອງຮ້ອຍ 769 . ປີ 1972 ແຕ່ງງານກັບ ພົນຕີ ພູວອນ ແກ້ວບຸນລ້ອມ ປີ 1972, ມີລູກນຳກັນ 5 ຄົນ, ປີ 1973 ຍ້າຍໄປຢູ່ ໂຮງງານເຂົ້າໜົມຂອງເຂດທີ່ບ້ານລ່ອງ, ປີ 1974 ຍ້າຍມາຢູ່ວຽງຈັນ ເປັນຫົວໜ້າສະຫະພັນ ແມ່ຍິງກົມໃຫຍ່ພະລາທິການກອງທັບ, ປີ 1978 ເປັນຫົວໜ້າກຳມະບານ ກົມເຕັກນິກ ພະລາທິການ, ປີ 1990 ອອກພັກຜ່ອນຮັບບຳນານ ຂະນະມີຊັ້ນຮ້ອຍເອກ.*
*ຕະຫຼອດຊີວິດແຫ່ງການເຄື່ອນໄຫວ ປະຕິວັດໄດ້ຮັບນາມມະຍົດນັກຮົບແຂ່ງຂັນແຫ່ງຊາດ 1 ຄັ້ງ , ຫຼຽນໄຊ ອິດສະລະຊັ້ນ II ຈຳນວນ 1 ໜ່ວຍ, ຫຼຽນໄຊອິດສະລະຊັ້ນ III ຈຳນວນ 2 ໜ່ວຍ, ຫຼຽນໄຊພິລະອາດຫານ 1 ໜ່ວຍ, ຫຼຽນກາແຮງງານ 2 ໜ່ວຍ, ຫຼຽນກາຕໍ່ຕ້ານອາເມຣິກາ 1 ໜ່ວຍ, ໃບຍ້ອງຍໍ 20 ໃບ.*

ກອງນີ້ມີເຮືອນພັກຫຼັງໜຶ່ງຍາວປະມານ 20 ແມັດ ຢູ່ແຄມນ້ຳຍອນ, ໜ້າທີ່ເບື້ອງຕົ້ນກໍ່ແມ່ນສັບຊ້ອນເຄື່ອງໃນສາງເຊັ່ນ: ສາງເຄື່ອງອຸປະໂພກ-ບໍລິໂພກ, ສາງອາວຸດຍຸດໂທປະກອນສາງຢູ່ຄັງໄຂ, ບ້ານດ່ອງ, ບ້ານຕ້າຍ, ບ້ານລຸງ, ບ້ານອ່າງ... ໂດຍເຮັດວຽກຮ່ວມກັບພະນັກງານຮັບຜິດຊອບແຕ່ລະສາງ ກາງເວັນແມ່ນສັບຊ້ອນມ້ຽນເຄື່ອງໃນສາງ, ກາງຄືນຈຶ່ງໄດ້ຂົນເຄື່ອງລົງລົດ ໂດຍເລີ່ມແຕ່ຕົ້ນເດືອນ 8/1967 ເມື່ອຂະບວນລົດລຳລຽງຈາກຫວຽດນາມໄດ້ມາເຖິງ. ຖ້າລົດຂົນເຂົ້າມາກໍ່ໄປຂົນລົງສາງເຂົ້າ, ຖ້າລົດສະບຽງອາຫານເຄື່ອງນຸ່ງຫົ່ມ ກໍ່ໄປເອົາລົງສາງອຸປະໂພກ, ຖ້າອາວຸດຍຸດໂທປະກອນມາກໍ່ໄປເອົາລົງສາງຍຸດໂທ, ຖ້າລົດນ້ຳມັນ(ຟູຍ 200 ລິດ)ກໍ່ໄປເອົາລົງສາງນ້ຳມັນ. ພ້ອມນີ້ຖ້າມີຂະບວນລົດລາວມາຮັບເຄື່ອງ ກໍ່ໄດ້ຂົນເຄື່ອງຂຶ້ນລົດ ເພື່ອສົ່ງໄປພະລາທິການດ້ານຮົບເມືອງສູຍ, ພູງຸດຈອມເຫຼັກ. ນອກນີ້ຍັງໄດ້ປຸກສາງມ້ຽນເຄື່ອງທີ່ບ້ານເທີນ, ບ້ານຄາຍ, ບ້ານໜ້ຽງ ນາລາມ ແລະສ້ອມແປງຫົນທາງເຂົ້າສາງອີກດ້ວຍ.

ເດືອນ 10/1967 ກອງບັນຊາການສັ່ງໃຫ້ໝວດດັ່ງກ່າວໄປລຳລຽງຮັບໃຊ້ກອງພັນ 500 ໂດຍເອົາເຄື່ອງຈາກພະລາທິການດ້ານຮົບ ຢູ່ເຂດບ້ານສີພົມເມືອງຄູນ ເດີນທາງປີນຜ່ານສັນຫຼວງໄປທ່າວຽງ-ຊຽງຄໍ້ງ ພູຜາສູດ ເມື່ອລຳລຽງເຖິງທີ່ໝາຍກໍ່ເອົາເຄື່ອງເຂົ້າມ້ຽນສາງ ແລ້ວໄປພັກຜ່ອນຢູ່ສຳນັກແນວຫຼັງຂອງກອງພັນ 500 ດ້ວຍຄວາມດີໃຈ.

ແຕ່ວ່າບໍ່ໜໍ 10 ນາທີ ຍົນແອນເລ 19 ( L.19) ຊຶ່ງມີໜ້າທີ່ສອດແນມຂອງຝ່າຍຂວາວຽງຈັນ ກໍ່ຍິງລູກຄວັນລົງໃສ່ສາງ ເພື່ອຊີ້ຈຸດໝາຍ, ບໍ່ໜໍຄາວຍົນເຕ 28 ຝູງໜຶ່ງກໍ່ມາຖິ້ມລະເບີດລົງຈູດເຜົາທຳລາຍສາງນັ້ນໝົດກ້ຽງ. ເອ້ຍນ້ອງເຮັດໜ້າທີ່ລຳລຽງຮັບໃຊ້ແນວຮົບນີ້ເປັນເວລາ 1 ເດືອນ ແລ້ວຈຶ່ງກັບມາພັກຢູ່ພະລາທິການດ້ານຮົບທີ່ບ້ານສີພົມເມືອງຄູນ,ມີແພດມາກວດກາສຸຂະພາບແລະປີ່ນປົວພະຍາດ ເພາະວ່າຕະຫຼອດໄລຍະໄປລຳລຽງນັ້ນ ຫຼາຍຄົນກໍ່ມີພະຍາດຜິວໜັງເປັນຕຸ່ມ ເປັນຕໍ, ເປື່ອຍໂພງ. ນັບແຕ່ນັ້ນມາ ກໍ່ທັງເຮັດໜ້າທີ່ປະຈຳຢູ່ພະລາທິການດ້ານຮົບຂົນເຄື່ອງລົງລົດທີ່ມາຈາກຄັງໄຂ ແລະ ຂົນຂຶ້ນລົດທີ່ລຳລຽງໄປສູ່ແນວໜ້າ.

ພາຍຫຼັງການປະລາໄຊໃນລະດູແລ້ງ ປີ 1965-1966 ແລ້ວ, ຝ່າຍອຸງຈັນ ໄດ້ໃຊ້ກຳລັງທະຫານຫຸ່ນ 6 ກອງພັນ ພາຍໃຕ້ຊ່ວຍໜູນໂດຍກົງຂອງກອງທັບ ອາກາດອາເມຣິກາ ເຄື່ອນທັບບຸກບຸງດຍຶດເຂົ້າເຂດນ້ຳບາກ-ເຂດຍຸດທະສາດ ທາງພາກເໜືອ ເພື່ອທົດລອງຮູບແບບການສູ້ຮົບແບບໃໝ່ຄື: ທ້ອນໂຮມບັນດາ ເຢແອັມ ກອງພັນເຄື່ອນທີ່ເປັນກຳລັງບຸກຕີບຸງດຍຶດ ສົມທົບກັບກຳລັງພິເສດ ເຂົ້າຍຶດຈຸດສູງຕ່າງໆ ແລະຕີເລີກເຂົ້າໃນເຂດປົດປ່ອຍ, ຊຶ່ງພວກເຂົາເຄີຍນຳໃຊ້ ມາແລ້ວໃນບັ້ນຮົບ**ເທອະດາ 1 ແລະ ເທອະດາ 2** ຢູ່ພາກໃຕ້ ແຕ່ມີຂະໜາດ ນ້ອຍກວ່າ.

ພາຍຫຼັງຍຶດນ້ຳບາກໄດ້ແລ້ວ ພວກເຂົາກໍ່ເສີມກຳລັງຕື່ມເພື່ອຍຶດເຂດ ປົດປ່ອຍ ແລະ ສ້າງເງື່ອນໄຂນາບຂູ່ເຂດຕາເວັນຕົກສ່ຽງເໜືອຂອງຫວຽດນາມ. ເຖິງເດືອນ 12/1967 ຝ່າຍອຸງຈັນໄດ້ເສີມກຳລັງທະຫານຮາບເຖິງ 10 ກອງພັນ ທີ່ຂຶ້ນກັບເຢແອັມ 11, 12, 15, 23 ແລະທະຫານປືນໃຫຍ່ 1 ກອງພັນ. ກ່ອນມື້ ທີ່ບັ້ນຮົບຈະເລີ່ມຂຶ້ນ ຝ່າຍອຸງຈັນກໍ່ເສີມທະຫານໂດດຈ້ອງກອງພັນ 99 ອີກ 1, ແລະ 2 ເຢແອັມ. ບັ້ນຮົບນີ້ ອ້ອນ ລາຕີກຸນ, ກຸປະສິດ ອະໄພ ແລະວ່າງປາວ ຊຶ່ງ ຖືເປັນຫົວກະທິຂອງທະຫານຫຸ່ນອຸງຈັນ ພ້ອມທີ່ປຶກສາອາເມຣິກາຈຳນວນໜຶ່ງ ໄດ້ສຸມຫົວກັນວາງແຜນ ແລະບັນຊາການສູ້ຮົບ.

ຕໍ່ໜ້າສະພາບການນັ້ນ, ຄະນະພັກການທະຫານສູນກາງໄດ້ເປັນເອກະ ພາບກັບຄະນະພັກການທະຫານສູນກາງຫວຽດນາມເປີດບັ້ນຮົບຂຶ້ນເພື່ອ ດັບສູນກຳລັງຕົ້ນຕໍຂອງທະຫານຫຸ່ນອຸງຈັນ ແລະ ປົດປ່ອຍພື້ນທີ່ຍຸດທະສາດຢູ່ ນ້ຳບາກຄືນ. 12/1/1968 ກອງພັນ 409 ຂອງກອງທັບປົດປ່ອຍປະຊາຊົນລາວ, ກອງທະຫານທ້ອງຖິ່ນຫຼວງພະບາງ, ສົມທົບກັບກອງພົນ 316, ແລະກອງພັນ ໃຫຍ່ 335 ອາສາສະໝັກຫວຽດນາມໄດ້ບຸກຕີ ທັບມ້າງກຳລັງປ້ອງກັນສະໜາມ ຂອງຝ່າຍອຸງຈັນ ດ້ວຍຍຸດທະວິທີເຂົ້າເລິກ, ປິດລ້ອມຫຼາຍຊັ້ນ, ຫຼາຍຂັ້ນ, ຕີຂັບ ໄລ່ເຖິງວັນທີ 27/1/1968 ບັ້ນຮົບສິ້ນສຸດລົງ. ຝ່າຍແນວລາວຮັກຊາດປັດເຂ່ຍ ສັດຕູອອກຈາກວົງສູ້ຮົບໄດ້ 3.200 ຄົນ (ໃນນັ້ນຈັບເປັນຊະເລີຍ 2.000 ກວ່າ ຄົນ) ຍຶດ ແລະ ທຳລາຍອາວຸດຍຸດໂທປະກອນຫຼວງຫຼາຍ ໃນນັ້ນຍິງຍົນເຕ 28 ຕົກ 1 ລຳ, ເຮລິກອບແຕຕົກ 1 ລຳ.

ພ້ອມດຽວກັນນີ້ 13/1/1968 ຝ່າຍແນວລາວຮັກຊາດກໍ່ໄດ້ໂຈມຕີສະໜາມບິນ ແລະກອງປືນໃຫຍ່ຢູ່ຫຼວງພະບາງ, ທຳລາຍເຮືອບິນ 12 ລຳ ປືນໃຫຍ່ 105 ສອງກະບອກ. ຢູ່ຊຳເໜືອແຕ່ວັນທີ 18/11/1967-13/3/1968 ຝ່າຍແນວລາວຮັກຊາດໄດ້ປົດປ່ອຍຜາທີ່ ຊຶ່ງເປັນສະຖານີຣາດາ ທີ່ອາເມຣິກາສ້າງຂຶ້ນ 3/1967 ເພື່ອບັນຊາຊີ້ທິດໃຫ້ເຮືອບິນຖິ້ມລະເບີດໃສ່ພາກເໜືອລາວ ແລະ ຫວຽດນາມ.

ໄຊຊະນະນ້ຳບາກ ແລະ ຜາທີ ແມ່ນການປະກອບສ່ວນອັນສຳຄັນ ຂອງ ສະໜາມຮົບຢູ່ລາວ ກັບສະໜາມຮົບຢູ່ພາກໃຕ້ຫວຽດນາມຄື ນັບແຕ່ຄືນວັນທີ 30/1/1968 ຊຶ່ງເປັນຄືນຕ້ອນຮັບວັນຂຶ້ນປີໃໝ່ຫວຽດນາມ(ເຕັດ)ນັ້ນ ກອງທັບປະຊາຊົນພາກໃຕ້ຫວຽດນາມ ໄດ້ບຸກໂຈມຕີເຂົ້າເຮືອນຮັ່ງອາເມຣິກາ ແລະລູກມືໃນຫຼາຍໆແຫ່ງພາບດຽວກັນ. ຜ່ານ 200 ວັນສູ້ຮົບຢ່າງດຸເດືອດຂັ້ງຂາດ ເຖິງ ວັນທີ 30/9/1968 ກອງທັບແລະປະຊາຊົນພາກໃຕ້ຫວຽດນາມ ສາມາດຍາດ ໄດ້ໄຊຊະນະອັນໃຫຍ່ຫຼວງ ປັດເຂ່ຍສັດຕູອອກຈາກວົງສູ້ຮົບ 630.000 ຄົນ, ທຳ ລາຍລົດຂົນສົ່ງທາງການທະຫານຊະນິດຕ່າງໆ 13.000 ຄັນ, ທຳລາຍກຳປັ່ນ ຮົບ 1.000 ລຳ, ທຳລາຍປ້ອມຄ້າຍ 15.000 ແຫ່ງ, ທຳລາຍເຮືອນຮັ່ງຍຸດທະສາດ 1.200 ຫຼັງ.

ໄຊຊະນະນີ້ ເຮັດໃຫ້ຍຸດທະສາດ **"ສົງຄາມພາກສ່ວນ"** ຂອງອາເມຣິກາ ພັງທະລາຍລົງ. ອາເມຣິກາຈຳຕ້ອງຍອມເຈລະຈາທີ່ປາຣີ 11/1968 ແລະຍຸຕິ ການຖິ້ມລະເບີດທຳລາຍພາກເໜືອຫວຽດນາມ ທີ່ດຳເນີນມາແຕ່ຕົ້ນປີ 1964 .

ແຕ່ວ່າຢູ່ລາວກໍ່ຄືຢູ່ຊຽງຂວາງ ປີ 1968 ຈັກກະພັດອາເມຣິກາ ແລະລູກ ມືຍັງສືບຕໍ່ປະຕິບັດບຸດຍຶດ ແລະຖິ້ມລະເບີດທຳລາຍຢ່າງບໍ່ຫວ່າງເວັ້ນ. ກຳລັງ ທະຫານວ່າງປາວບຸກໂຈມຕີເຂົ້າເຂດພູຈີກ, ຫວັງຍຶດເອົາພູນົກຈີກ ແຕ່ຖືກ ກຳລັງຝ່າຍແນວລາວຮັກຊາດຕ້ານຄືນ. ບໍ່ພຽງທໍ່ນັ້ນ, ສັດຕູຍັງໄດ້ລະດົມກຳລັງ ທາງອາກາດໃຊ້ຍົນແອບ F.105, ເຕ 28 (T28) ຈຳນວນ 50 ລຳເຂົ້າມາຍິງ ທຳລາຍເຂດເມືອງງາມ ແລະ ເຂດອື່ນໆໃນຂອບເຂດຕາແສງຄັງ, ຕາແສງຄາຍ

ເມືອງແປກ ແຂວງຊຽງຂວາງ ເຮັດໃຫ້ວັດວາອາຮາມ ໂຮງໝໍ ໂຮງຮຽນເຮືອນຊານ ບ້ານຊ່ອງ ໄຮ່ນາ ສັດສາວາສິ່ງຂອງປະຊາຊົນຊາວຊຽງຂວາງຖືກເຜົາຜານວອດ ວາຍ ປະຊາຊົນຕ້ອງໄດ້ອົບພະຍົບຫຼົບລີ້ໄປຢູ່ຕາມຍອດຫ້ວຍ ຕີນເຂົາ ອາໄສຖ້ຳ ເຖື່ອນ ຜາຫີນ ຂຸດຂຸມເປັນທີ່ພັກພາອາໄສ ແຕ່ປານນັ້ນກໍ່ຍັງບໍ່ລອດພົ້ນຈາກ ການສັງຫານໂຫດຂອງພວກສັດຕູ.

ສະພາບການຢູ່ເຂດຊຽງຂວາງນັບມື້ນັບຮຸນແຮງ, ພວກຈັກກະພັດອາ ເມຣິກາ ແລະ ລູກແຫ້ງຕີນມືຂອງພວກເຂົາ ໄດ້ອອກແຮງບຸກໂຈມຕີດ້ວຍກຳລັງ ພົນທາງພາກພື້ນດິນ, ທາງອາກາດ, ພ້ອມກັບພາຫະນະອາວຸດຈຳນວນຫຼວງ ຫຼາຍເຂົ້າເຂດທົ່ງໄຫຫີນ-ຊຽງຂວາງ, ຫວັງຢຶດເອົາທົ່ງໄຫຫີນຊຽງຂວາງ. ສະນັ້ນ ມາເຖິງເດືອນ 3/1968 ມີເອື້ອຍນ້ອງແມ່ຍິງເມືອງແປກ 22 ຄົນ ໄດ້ສະໝັກເຂົ້າ ເປັນກອງຫຼອນ, ໃນໂອກາດນີ້ ທາງກອງບັນຊາການທະຫານເຂດຊຽງຂວາງ ໄດ້ປະກາດສ້າງຕັ້ງກອງກຳລັງໄຟເພດຍິງຂຶ້ນ 1 ກອງຮ້ອຍ ໃນເບື້ອງຕົ້ນເອີ້ນວ່າ **"ກອງຮ້ອຍ 12,8 ມມ. ກອງປ້ອງກັນອາກາດ"** [42]. ເຊິ່ງແມ່ນ ນາງປົວ ເປັນຜູ້ ບັນຊາ. ພາຍຫຼັງສ້າງຕັ້ງຂຶ້ນ ໄດ້ເຄື່ອນໄຫວເຮັດໜ້າທີ່ຕາມການມອບໝາຍຂອງ ຂັ້ນເທິງ.

ກອງຮ້ອຍນີ້ສາມາດຍິງຍົນ T28 ຂອງສັດຕູຕົກ 1 ລຳ (ນາງປົວສີ ບ້ານສ້ອນ). ຂະນະດຽວກັນກອງຫຼອນເພດຍິງຕາແສງຊຽງເມືອງຄູນຊຶ່ງນຳໂດຍ ນາງເຂັມຄຳ ບ້ານເພຍວັດ ກໍ່ໄດ້ຍິງຍົນເຕ 28 ຕົກທີ່ພູຈອງວອງ 1 ລຳ[43] ຈາກ ຜົນງານ ແລະ ຄວາມເກັ່ງກ້າສາມາດຂອງເພດຍິງເຮັດໃຫ້ຊື່ສຽງອິດທິພົນຂອງ ເອື້ອຍນ້ອງເພດຍິງສູງເດັ່ນຂຶ້ນ ແລະ ເອື້ອຍນ້ອງເພດຍິງທີ່ຢູ່ໃນບ້ານຕ່າງໆກໍ່ໄດ້ ສະໝັກໃຈເຂົ້າມາປະກອບສ່ວນເປັນກອງຫຼອນ, ເປັນກຳລັງສູ້ຮົບຮ່ວມກັບກອງ ທະຫານເພດຊາຍນັບມື້ນັບມີຈຳນວນພົນເພີ່ມຂຶ້ນ.

.....

*42. ມູນເຊື້ອຕໍ່ຕໍ່ສູ້ກຳລັງປະກອບອາວຸດ ແຂວງຊຽງຂວາງ, ພິມ 2010 ໜ້າ 212*

*43. ນາງເຂັມຄຳ ນັກຮົບແຂ່ງຂັນ ເປັນຜູ້ສັງເກດການເອົາທິດຍົນບິນ ແລະສັ່ງການ, ນາງ ຄຳອອນ, ບ້ານເພຍວັດ ເປັນຜູ້ຍັດລູກປືນ ແລະນາງຫ້າບຸນມີ ບ້ານນາໄຊ ເປັນຜູ້ເກາະໄກປືນ*

ດັ່ງນັ້ນ ທາງກອງບັນຊາການທະຫານເຂດຊຽງຂວາງ ຈຶ່ງເຫັນວ່າເອື້ອຍນ້ອງເພດຍິງ ກໍ່ມີຄວາມສາມາດເຮັດວຽກງານຮັບໃຊ້ສູ້ຮົບ ແລະ ສູ້ຮົບຮ່ວມກັບກອງທະຫານເພດຊາຍໄດ້ດີ, ກອງຮ້ອຍດັ່ງກ່າວຮ່ວມສູ້ຮົບບໍ່ດົນປານໃດ. ສະພາບການບຸກໂຈມຕີເຂົ້າເຂດທົ່ງໄຫຫີນ-ຊຽງຂວາງ ຂອງຝ່າຍຂວາວຽງຈັນນັບມື້ນັບຮ້າຍແຮງຂຶ້ນ.

ຢືນຕໍ່ໜ້າສະພາບການເຊັ່ນນັ້ນ, ກອງບັນຊາການທະຫານເຂດຈຶ່ງໄດ້ລົງປຸກລະດົມຂົນຂວາຍເອົາເອື້ອຍນ້ອງແມ່ຍິງຢູ່ຕາມສຳນັກງານອົງການ ໜ່ວຍຍຸວັນນາລີ, ໜ່ວຍສິລະປະວັນນະຄະດີ, ນັກຮຽນ ແລະ ພື້ນຖານປະຊາຊົນມາເຂົ້າປະກອບໃສ່ໜ່ວຍລຳລຽງອີກຕື່ມ ເຮັດໃຫ້ໜ່ວຍນີ້ມີກຳລັງເພີ່ມຂຶ້ນເລື້ອຍໆ ຈົນເຖິງເປັນ 120 ຄົນ.

ມາຮອດວັນທີ 6/3/68 ກອງບັນຊາການທະຫານເຂດຊຽງຂວາງ ຈຶ່ງຕົກລົງຈັດຕັ້ງກຳລັງດັ່ງກ່າວຂຶ້ນເປັນກອງຮ້ອຍ ເອີ້ນຊື່ວ່າ **"ກອງຮ້ອຍລຳລຽງແບກຫາບ 368"** ຫຼື **"ຂ 368"** [44] (ເອີ້ນຊື່ຕາມເດືອນປີທີ່ສ້າງຕັ້ງ) ຂຶ້ນກັບກອງບັນຊາການທະຫານເຂດຊຽງຂວາງໂດຍທຳອິດຂັ້ນເທິງໄດ້ມອບໃຫ້:

| | |
|---|---|
| ສະຫາຍ ທິດອຸ່ນຫຼ້າ | ເປັນຫົວໜ້າການທະຫານ |
| ສະຫາຍ ຄຳມູນ | ເປັນຮອງຫົວໜ້າການທະຫານ |
| ສະຫາຍ ນາງໄມຈັນ | ຫົວໜ້າການເມືອງ |
| ສະຫາຍ ນາງຄຳພັດ | ຮອງຫົວໜ້າການເມືອງ |

ກອງຮ້ອຍນີ້ ປະກອບມີ 3 ໝວດຄື:
ໝວດທີ 1 ບັນຊາໂດຍ:
ສະຫາຍ ນາງ ທຸມມີ ທຳມະວົງ ເປັນຫົວໜ້າການທະຫານ.
ສະຫາຍ ນາງ ມຸນທາ ເປັນຫົວໜ້າການເມືອງ.

.....

*44. ການເລົ່າຄືນຂອງຮ້ອຍເອກ ນາງສີສຸກ ແກ້ວບຸນລ້ອມ ອະດີດຄະນະບັນຊາກອງລຳລຽງ 368, 769*

ໝວດ ທີ 2 ບັນຊາໂດຍ:
ສະຫາຍ ນາງ ສີສຸກ ແກ້ວບຸນລ້ອມ ເປັນຫົວໜ້າການທະຫານ.
ສະຫາຍ ນາງ ພິມພາ ເປັນຫົວໜ້າການເມືອງ.

ໝວດທີ 3: ບັນຊາໂດຍ:
ສະຫາຍ ນາງ ອ່ອນສີ ເປັນຫົວໜ້າການທະຫານ (45)
ສະຫາຍ ນາງ ຈັນທະລາ ເປັນຫົວໜ້າການເມືອງ.

ແຕ່ລະໝວດແບ່ງອອກເປັນ 3 ໝູ່ ແລະໝູ່ສຳນັກ. ສະພາບເອື້ອຍນ້ອງສ່ວນຫຼາຍແມ່ນລູກຫຼານຂອງຊາວຊຽງຂວາງ, ອາຍຸຍັງນ້ອຍ ພຽງແຕ່ 12-20 ປີ ໃນນີ້ລວມທັງຄະນະບັນຊາກອງຮ້ອຍຄື: ເຂົາເຈົ້າມາຈາກຄອບຄົວທຸກຍາກ, ລະດັບການສຶກສາບໍ່ສູງ, ບາງຄົນຍັງກືກໜັງສື, ບໍ່ເຄີຍເຮັດວຽກໜັກໜ່ວງ ແລະ ອັນຕະລາຍ, ສະພາບແນວຄິດ ກໍ່ຄັບແຄບເຫັນແກ່ໂຕ. ທັງໝົດນີ້ຊ້ຳພັດຢູ່ໃນສະພາບສົງຄາມກຳລັງດຸເດືອດ ຂັ້ງຂາດ ອັນຕະລາຍເຖິງຕາຍມີຢູ່ໃນທຸກຍ່າງກ້າວ, ແຕ່ຄວາມຮຽກຮ້ອງຕ້ອງການ ແລະຄວາມຮັບຜິດຊອບພັດສູງສົ່ງ, ຄະນະບັນຊາ ກໍ່ຕ້ອງອອກແຮງຢ່າງໜັກໃນການສຶກສາອົບຮົມ ຈັດຕັ້ງນຳພາ ນັບແຕ່ການດຳລົງຊີວິດ, ການກິນຢູ່ລວມໝູ່, ມີລະບຽບວິໄນ, ປະຕິບັດວຽກງານ, ໃນ

.....

*45. ນາງ ອ່ອນສີ ມະນີວົງ*

*ເກີດປີ 1952 ບ້ານຊົນ ເມືອງແປກ ແຂວງຊຽງຂວາງ ເປັນລູກພໍ່ຊຽງນອນ ແລະ ແມ່ຫຼ້າມາ, ໄດ້ສ້າງຄອບຄົວກັບ ພັນຕີ ສົມບູນ ມີລູກ 5 ຄົນ ປັດຈຸບັນຢູ່ ບ້ານຄຳຮຸ່ງ ເມືອງໄຊທານີ ນະຄອນຫຼວງວຽງຈັນ. ໃນປີ1965 ສະຫາຍນາງ ອ່ອນສີເປັນຄູສອນ ປະຊາສຶກສາ ຢູ່ໃນເຂດບ້ານ, ເມື່ອມີອ້າຍນ້ອງທະຫານລົງໄປຂົນຂວາຍເອົາຊາວໜຸ່ມ ຈຶ່ງສະໝັກໃຈເຂົ້າເປັນທະຫານ ສັງກັດກອງລຳລຽງ ໃນວັນທີ 8/3/1968. ວັນທີ 5/7/1968 ຖືກແຕ່ງຕັ້ງເປັນຮອງຫົວໜ້າການເມືອງກອງຮ້ອຍ, 1973 ໄປຢູ່ໂຮງງານສ້ອມແປງລົດຜ່າດ້ານ ເມືອງວຽງໄຊ ແຂວງຫົວພັນ, 1976 ຍ້າຍມາຢູ່ຫ້ອງການເມືອງ ກົມພະລາທິການກອງທັບ, 1983 ໄປຢູ່ໂຮງງານສ້ອມແປງ ລົດມິດຕະພາບລາວ-ຫວຽດນາມ ຫຼັກ 9. ປີ 2000 ພັກຜ່ອນຮັບບຳນານ. ສະຫາຍໄດ້ຮັບການຍ້ອງຍໍ ຫຼຽນໄຊຊະນະເລີດ 1 ໜ່ວຍ, ຫຼຽນກາແຮງງານ 1 ໜ່ວຍ, ຫຼຽນກາຕ້ານ ອາເມຣິກາ 1 ໜ່ວຍ, ຫຼຽນກາລະນຶກ 5 ປີ 1 ໜ່ວຍ, ຫຼຽນກາ 50 ປີ 1 ໜ່ວຍ, ຫຼຽນກາ 60 ປີ 1 ໜ່ວຍ ແລະ ໃບຍ້ອງຍໍ 10 ກວ່າໃບ.*

ນັ້ນໄດ້ຈັດຕັ້ງການສຶກສາຮ່ຳຮຽນຜູ້ຮູ້ສອນຜູ້ບໍ່ຮູ້, ຈັດຕັ້ງການຮ້ອງລຳເພງໂດຍມີພະນັກງານຈາກກອງສິລະປະກອນແຂວງຄື: ນາງຄຳແສ່ວ ສອນສິດທິສັກ[46], ນາງບົວວັນ ຈັນທະສອນ, ນາງຄຳເມິງ, ນາງຄຳຕາ, ນາງສົມມາ ມາເປັນຜູ້ນຳພາ, ການຫຼິ້ນກິລາການະກຳ, ຈັດຕັ້ງໜ່ວຍຊາວໜຸ່ມ, ແມ່ຍິງ, ສະມາຊິກພັກ, ເອົາວຽກດີຄົນເດັ່ນ, ຜູ້ເປັນແບບຢ່າງ, ເອົາການສຳຫຼວດ ກວດກາຕຳນິກໍ່ສ້າງກັນປັບປຸງກັນໄປເທື່ອລະກ້າວຈຶ່ງມີຄວາມກ້າວໜ້າ ສາມັກຄີກັນຊ່ວຍເຫຼືອໃນການດຳລົງຊີວິດ ແລະເຮັດໜ້າທີ່ດ້ວຍຄວາມຕື່ນຕົວ ແລະເປັນເຈົ້າການ.

ສຳນັກກອງລຳລຽງແບກຫາບ 368 ເວລານັ້ນ ຕັ້ງຢູ່ຕີນພູແຮ້ຄັ້ງໄຂ. ພາຍຫຼັງຈັດຕັ້ງປັບປຸງໝວດໝູ່ເປັນທີ່ຮຽບຮ້ອຍແລ້ວ, ໜ້າທີ່ຕົ້ນຕໍຂອງກອງ 368 ຄື: ປັບປຸງມຸ້ງນເຄື່ອງໃນສາງ. ຕັ້ງສາງມຸ້ງນເຄື່ອງ ເພື່ອລໍຮັບການຂົນສົ່ງເຂົ້າປາອາຫານ ມາຈາກຫວຽດນາມ, ອະນາໄມຜັດເຊັດປືນ ແລະລູກປືນ, ເຮັດແນວນັ້ນເປັນປະຈຳຢູ່ໄດ້ປະມານ 2 ອາທິດ.

ໃນເວລາດຽວກັນນີ້ ສະເພາະແຂວງຊຽງຂວາງເອງ ກໍ່ໄດ້ຈັດຕັ້ງກອງລຳລຽງແບກຫາບຂອງແຂວງຊຽງຂວາງຂຶ້ນຄືກັນ ຊຶ່ງປະກອບດ້ວຍເອື້ອຍນ້ອງ 97 ຄົນບັນຊາໂດຍ:

ສະຫາຍ ຄຳປານ ເປັນຫົວໜ້າການທະຫານ
ສະຫາຍ ນາງ ສີພັນ ເປັນຮອງການທະຫານ

.....

*46. ນາງຄຳແສ່ວ ສອນສິດທິສັກໃຫ້ຮູ້ວ່າ:*

*ທ່ານ ສີທົນມະໂນລາ ທ່ານນາງສີສຸກ ແລະທ່ານຄຳສີ ໄດ້ລົງສົມທົບກັບ ພະນັກງານຂົນຂວາຍແຂວງ ຄືທ່ານພູໄຊ ວົງສີພາ ຂົນຂວາຍເອົາຍິງສາວໃນເຂດເມືອງຄູນ ແຂວງຊຽງຂວາງ ເຮັດໃຫ້ຕົນເອງ, ນາງຈັນສົດ ບ້ານເພຍວັດ ຕັດສິນໃຈໄປເຂົ້າເປັນທະຫານກອງ 368, ໂດຍມີທ່ານຈັນດາ ສຸກຈະເລີນ, ທ່ານສາຍຄຳໄປຮັບເອົາຢູ່ບ້ານ ແລ້ວຍ່າງອອກຈາກ ບ້ານນາໄຊ ໄປ-ບ້ານນ້ຳຕົ້ນ-ບ້ານນົກ-ບ້ານຄູ. ລໍຖ້າຢູ່ບ້ານຄູ 10 ວັນ ກໍມີໝູ່ຈາກກອງສິລະປະກອນແຂວງ ມາຕື່ມຄື: ນາງບົວວັນ, ນາງຈັນທະສອນ, ນາງຄຳເມິງ, ນາງສົມມາ, ນາງຄຳຕາ. ເມື່ອໄປເຖິງກອງ ພວກເຮົາໄດ້ສ້າງໜ່ວຍສິລະປະວັນນະຄະດີຂຶ້ນ ໂດຍຄັດເລືອກເອົາເອື້ອຍນ້ອງຜູ້ມີແວວມາເປັນນັກຮ້ອງ ນັກລຳ, ນັກຟ້ອນ ແລ້ວກໍສະແດງເມື່ອມີໂອກາດ ເພື່ອສ້າງບັນຍາກາດໃນກົມກອງ.*

สะหาย นาง จอม เป็นหัวหน้ากานเมือง
สะหาย บุนทัน ธองกานเมือง

นอกนี้ก่ยังมีกองร้อยลำลงอื่นอีกเช่น:กองร้อย โธงธงมัดทะยืม, กองซาวหนุ่ม-แม่ยิงแขวง

จัดตั้งเป็น 3 หมวดคือ:
หมวดที1: สะหาย นาง คำหมั้น เป็นหัวหน้าหมวด
สะหาย นาง คำพอน เป็นธองหมวด
หมวดที 2: สะหาย นาง บัวคำ เป็นหัวหน้าหมวด.
สะหาย นาง บัวพอน เป็นธองหมวด.
หมวดที 3: สะหาย นาง พิมมะลิ เป็นหัวหน้าหมวด.
สะหาย นาง บัวพา เป็นธองหมวด
ทั้งสองกองนี้ มิพาละหน้าที่คือกัน, ต่างแต่บ่อนสังกัด, และขอบเขดความรับผิดชอบ.

เถิงอันที 5/7/1968 กองลำล฽ง 368 ได้มีกานปับปุงกานจัดตั้ง ฮั้นกองร้อยคืนใหม่โดยให้แต่เพดยิงบันซาคือ:
สะหาย นาง ทุมมี ทำมะวง เป็นหัวหน้ากานทะหาน
สะหาย นาง ทองดี เป็นธองหัวหน้ากานทะหาน
สะหาย นาง อันดี เป็นหัวหน้ากานเมือง[47].
สะหาย นาง อ่อนสี เป็นธองหัวหน้ากานเมือง

.....

*47. สะหาย พันโท นาง อันดี*

*เกิดอันที 4/5/1949, ที่บ้านด่อง เมืองแปก แขวงซ฽ง ขวาง, เป็นบุดของพ่อนาม และแมคึง ทำมะวง, มิเอื้อยน้องร่วมอุทอม 4 คน, สร้างครอบครัวกับ พันเอก สุดใจ ทำมะสิด, แล้วใส่นามสะกุน ทำมะสิด, มิลูกนำกัน 6 คน, ปัดจุบันยู่ บ้านโนนพะเม็า, เมืองไซเสดถา, นะครอมห฽วงว฽งจัน. เข้ากานปะติวัดปี 5/8/1960 โดย*

ເພື່ອເປັນການຕອບຕ້ານ ແລະຕ່າວໂຈມຕີ ສັດຕູໃນວັນທີ 16/3/1968 ກອງທັບ ແລະປະຊາຊົນຊຽງຂວາງ ໄດ້ບຸກໂຈມຕີທະຫານພິເສດວ່າງປາວ ຢູ່ ຂອບເຂດທ່າໂທມ, ທ່າວຽງ ສາມາດປົດປ່ອຍບໍລິເວນດັ່ງກ່າວ ຈາກນີ້ໃນລະດູ ແລ້ງປີ 1968 ກອງທັບ ແລະປະຊາຊົນສືບຕໍ່ຕ່າວໂຈມຕີ 68 ຄັ້ງດັບສູນໄດ້ 1.163 ຄົນ, ຍຶດອາວຸດໄດ້ 202 ກະບອກ, ຍິງຍົນຕົກ 14 ລຳ, ສາມາດປົດປ່ອຍ ດິນແດນໄດ້ກວ້າງຂວາງແລະກີດກັ້ນຄວາມຫວັງຂອງອາເມຣິກາທີ່ຢາກສ້າງທົ່ງ ໄຫຫີນ-ຊຽງຂວາງ ໃຫ້ເປັນຖານທີ່ໝັ້ນໃຫຍ່ນັ້ນໃຫ້ປະລາໄຊລົງ.

ວັນທີ 8/4/1968 ທະຫານພິເສດວ່າງປາວ 1 ກອງພັນນ້ອຍ ຕີຍຶດເອົາ ພູຈອງວອງ ແລະ 2 ກອງພັນນ້ອຍເບແອດ ( BS) 204, 205 ຍຶດເອົານ້ຳໂປງ ແຕ່ພວກມັນກໍ່ຖືກທະຫານທ້ອງຖິ່ນ ສົມທົບກັບກຳລັງເປັນກາງຮັກຊາດຕ່າວ ໂຈມຕີຄືນ. ສັດຕູຖືກຂ້າຕາຍກັບທີ່ 15 ຄົນ, ບາດເຈັບ 4 ຄົນ, ຈັບໄດ້ 10 ຄົນ, ຍຶດອາວຸດ ໄດ້ 23 ກະບອກ ເຖິງແມ່ນພວກເຂົາຈະຖືກກອງທະຫານຝ່າຍ ແນວ ລາວຮັກຊາດ ຕ່າວໂຈມຕີຕໍ່ເນື່ອງກໍ່ຕາມ ແຕ່ພວກເຂົາກໍ່ຍັງດື້ດ້ານເພື່ອບຸງດຍຶດ ເຂດປົດປ່ອຍຢ່າງບໍ່ລົດລະ.

.....

*ການເປັນກອງຫຼອນ ພະນັກງານຂົນຂວາຍປົດລັບ ເຂົ້າຊາວໜຸ່ມ 18/5/1966 ເຂົ້າກຳມະບານ 1/5/1967, ເຂົ້າສະມາຊິກພັກ 32/1/1968 ແລະເຂົ້າສັງກັດກອງ 368 ໃນວັນທີ 2/5/1968 ເປັນຫົວໜ້າ ການເມືອງ ກອງຮ້ອຍ, 5/7/1971 ຖືກບ່ຽໂຕຂຶ້ນໄປຈັດຕັ້ງ ຊີ້ນຳ ສ້າງກອງລຳລຽງ ແບກຫາບ 37 ເມືອງວຽງ ໄຊ ແຂວງຫົວພັນ ພ້ອມກັບ ນາງສຸດຕາ, ນາງຄຳພາ ແລະນາງບົວຄອນ,*
*5/6/1976 ຖືກຍົກຍ້າຍມາເປັນຮອງອຳນວຍການໂຮງານເກັບກອງທັບ ທີ່ນາໄຊ ນະຄອນຫຼວງ ວຽງຈັນ 1/1/1996 ຍົກຍ້າຍໄປຢູ່ກະຊວງປ້ອງກັນຄວາມສະຫງົບ ຮັບໃຊ້ຄອບຄົວການນຳ, ປີ 1977 ອອກພັກຜ່ອນຮັບເບ້ຍບຳນານ ໃນຊັ້ນພັນໂທ. ຕະຫຼອດໄລຍະເຄື່ອນໄຫວເຮັດການ ປະຕິວັດໄດ້ຮັບການຍ້ອງຍໍ: ຫຼຽນໄຊພິລະອາດ ຫານຊັ້ນ III ຈຳນວນ 2 ໜ່ວຍ, ຫຼຽນໄຊອິດສະລະຊັ້ນ II ຈຳນວນ 1 ໜ່ວຍ, ຫຼຽນໄຊອິດສະລະຊັ້ນ III ຈຳນວນ 1 ໜ່ວຍ, ຫຼຽນໄຊແຮງງານຊັ້ນ I ຈຳ ນວນ1 ໜ່ວຍ, ຫຼຽນໄຊແຮງງານຊັ້ນ II ຈຳນວນ 2 ໜ່ວຍ, ຫຼຽນໄຊແຮງງານຊັ້ນ III ຫຼຽນກາ 5 ປີ 1 ໜ່ວຍ, ຫຼຽນກາ 45 ປີ 1 ໜ່ວຍ , ໃບຍ້ອງຍໍ ປະເພດຕ່າງໆ 15 ໃບ, ໃບຍ້ອງຍໍແມ່ຍິງ 3 ດີ 2 ໜ້າທີ່ 4 ໃບ.*

ທ້າຍເດືອນ 7 ຕໍ່ຕົ້ນເດືອນ 8 ປີ1968 ຂະບວນລົດລຳລຽງຂົນສົ່ງເຂົ້າປາອາຫານ, ເຄື່ອງອຸປະໂພກ-ບໍລິໂພກ, ອາວຸດ ແລະລູກກະສຸນຈາກຫວຽດນາມ ໄດ້ມາເຖິງ. ສະນັ້ນ ໜ້າທີ່ຕົ້ນຕໍຂອງ ກອງລຳລຽງແບກຫາບ 368 ເວລານີ້ ແມ່ນຂົນເຂົ້າ, ອາຫານການກິນ, ເຄື່ອງອຸປະໂພກ-ບໍລິໂພກ, ອາວຸດຍຸດໂທປະກອນ ລົງລົດໄປມ້ຽນໃນສາງ. ໃນແຕ່ລະມື້ພໍຮອດເວລາປະມານ 18 ໂມງແລງ ເອື້ອຍນ້ອງກອງ 368 ຈະລົງໄປລໍຖ້າຂະບວນລົດຢູ່ຕູບແຄມນ້ຳຍວນ, ເມື່ອຂະບວນລົດມາເຖິງກໍ່ເລີ່ມເຮັດວຽກທັນທີ. ຖ້າລົດຂະບວນນັ້ນຂົນເຂົ້າມາ, ເອື້ອຍນ້ອງກອງ 368 ກໍ່ຈະແບກເຂົ້າເຂົ້າໄປມ້ຽນໃນສາງ, ຖ້າແມ່ນລົດຂົນພາຫະນະອາວຸດ ກະສູນ, ເອື້ອຍນ້ອງກອງ 368 ກໍ່ຂົນພາຫະນະອາວຸດກະສູນລົງລົດແລ້ວເອົາເຂົ້າມ້ຽນໃນສາງ, ຖ້າແມ່ນລົດຂົນສົ່ງອຸປະໂພກ-ບໍລິໂພກ ເຄື່ອງນຸ່ງຫົ່ມ, ອາຫານການກິນ ເປັນຕົ້ນປະເພດກະປ໋ອງ ເອື້ອຍນ້ອງກອງ 368 ກໍ່ຕ້ອງໄດ້ ຂົນເຄື່ອງເຫຼົ່ານັ້ນເຂົ້າມ້ຽນສາງ ຕາມການຊີ້ນຳຂອງ ຄະນະພັກການທະຫານເຂດໄດ້ກຳນົດໃຫ້.





# III. ທີ່ຕັ້ງ-ຂອບເຂດການເຄື່ອນໄຫວ ຂອງກອງກຳລຽງແບກຫາບ 368 ແລະກອງກຳລັງໄຟ 769

.....

ຊຽງຂວາງເປັນແຂວງໜຶ່ງຂອງລາວ ຕັ້ງຢູ່ຫ່າງຈາກນະຄອນຫຼວງວຽງຈັນ ໄປທາງທິດຕາເວັນອອກສ່ຽງເໜືອປະມານ 400 ກມ, ມີເນື້ອທີ່ 17.315 ກິໂລ ຕາແມັດ ຫຼື ເທົ່າກັບ 6,7% ຂອງເນື້ອທີ່ທົ່ວປະເທດ, ຊາຍແດນທິດເໜືອຕິດກັບ ແຂວງຫົວພັນ 168 ກມ; ທິດໃຕ້ຕິດກັບແຂວງບໍລິຄຳໄຊ 76 ກມ; ທິດຕາເວັນ ອອກ ຕິດກັບ ສສ. ຫວຽດນາມ 163 ກມ ແລະ ທິດຕາເວັນຕົກຕິດກັບແຂວງ ຫຼວງພະບາງ ແລະແຂວງວຽງຈັນ 272 ກມ.

ພູມສັນຖານຂອງແຂວງ ມີທັງເຂດພູສູງທີ່ຢູ່ອ້ອມຮອບ ແລະພູພຽງຢູ່ ໃຈກາງ. ພູພຽງຊຽງຂວາງເປັນໜຶ່ງໃນ 3 ພູພຽງສຳຄັນໃນລາວ (ພູພຽງນາກາຍ ແຂວງຄຳມ່ວນ ແລະ ພູພຽງ ບໍລະເວນແຂວງຈຳປາສັກ) ທົ່ງໄຫຫີນ-ຊຽງຂວາງ ເປັນທົ່ງຫຍ້າທີ່ມີທັດສະນີຍະພາບ ທຳມະຊາດສວຍສົດງົດງາມ ທີ່ສະຫຼັບຊັບ ຊ້ອນດ້ວຍພູປ່າແປກ, ມີທົ່ງຫຍ້າກວ້າງຂວາງປະມານ 200 ກິໂລຕາແມັດ.

ພູພຽງຊຽງຂວາງມີຄວາມຍາວກວ່າ 70 ກິໂລແມັດນັບແຕ່ເຂດຍອດງື່ມ ເຖິງ ສາມແຍກສາລາພູຄູນ. ມີເຂດພູຜາປ່າດົງທີ່ຕຶບໜາທຸລະກັນດານລຽບຕາມຊາຍ ແດນລາວ-ຫວຽດນາມ ແລະມີທົ່ງພຽງແຄບໆລຽບຕາມຮ່ອມພູ. ຂະນະດຽວກັນ ກໍ່ມີສາຍນ້ຳທີ່ສຳຄັນ ໄຫຼອອກຈາກພູພຽງຊຽງຂວາງຄື: ນ້ຳງື່ມ ນ້ຳງຶບ ນ້ຳງື້ວ ນ້ຳຊັນ, ນ້ຳຍອນ ແລະສາຍນ້ຳອື່ນໆ ແລະມີໜອງສຳຄັນເຊັ່ນ: ໜອງເປັດ ຍອດ ນ້ຳງື່ມ ເມືອງແປກ, ໜອງຕັ່ງ ເມືອງສູຍ, ໜອງຢອນ ໂພນສະຫວັນ.

ແຂວງຊຽງຂວາງແມ່ນເຂດພູດອຍ ມີຄວາມສູງແຕ່ 1.200-1.500 ແມັດ ທຽບກັບໜ້ານ້ຳທະເລ, ໃນນັ້ນສູງກ່າວໝູ່ແມ່ນພູເບ້ຍ 2.820 ແມັດ ຊຶ່ງຢູ່ທາງ ທິດໃຕ້ຂອງທົ່ງໄຫຫີນ. (ປັດຈຸບັນຢູ່ໃນແຂວງຕັ້ງໃໝ່ໄຊສົມບູນ ສ້າງຕັ້ງວັນທີ 13/12/2013 ວັນຄ້າຍວັນເກີດ ທ່ານໄກສອນ ພົມວິຫານ) ໃນສົງຄາມຕ້ານ ຈັກກະພັດອາເມຣິກາ ແລະລູກມື ຢູ່ບົນດິນແດນພູພຽງຊຽງຂວາງ ນອກຈາກທົ່ງ ໄຫຫີນທີ່ຢູ່ໃຈກາງພູພຽງແລ້ວ ຍັງມີຫຼາຍພື້ນທີ່ ແລະ ຫຼາຍປ້ອມພູທີ່ເປັນຈຸດ ຍຸດທະສາດ ເຊັ່ນ: ເມືອງສູຍ ທາງທິດຕາເວັນຕົກ, ທ່າໂທມ, ທ່າວຽງ ທາງທິດໃຕ້, ພູຄ້ວ ພູສັນ ທາງທິດເໜືອ. ນອກນັ້ນຍັງມີ: ພູສູງ, ພູຄູນ, ພູເກົ້ງ, ພູຊະບົດ, ພູລຸ້ງມາດ, ພູຜາໄຊ, ພູໄກ່ຂັນ... ແລະອື່ນໆ.

ພິເສດແມ່ນພູກູດໃນເຂດເມືອງສູຍ ( 87 ກມ.ຈາກພູຄູນ ແລະ 49 ກມ. ຈາກໂພນສະຫວັນ) ມີ 3 ປ້ອມຕິດຕໍ່ກັນ, ສູງກວ່າໝູ່ 1960 ແມັດ ແມ່ນປ້ອມ A, ເປັນປະຕູດ່ານສຳຄັນບົນເສັ້ນທາງເລກ 7 ເພື່ອເຂົ້າສູ່ທົ່ງໄຫຫີນດ້ານທິດຕາເວັນ ຕົກ ດັ່ງນັ້ນ ໃນສະໄໝສົງຄາມ ຈຶ່ງເກີດການຍາດແຍ່ງຈຸດຍຸດທະສາດດັ່ງກ່າວນີ້ ຢ່າງດຸເດືອດຫຼາຍຄັ້ງ. ຂະນະທີ່ຝ່າຍແນວລາວຮັກຊາດຈັ້ງທ່າຢ່າງໝັ້ນໜຽວເທິງ ຈອມພູກູດນີ້ ກຳລັງຂອງຝ່າຍຂວາວຽງຈັນ ແລະໂຈອາກາດອາເມຣິກາ ໄດ້ຍິງ ປືນໃຫຍ່ ແລະ ຖິ້ມລະເບີດຖະຫຼົ່ມພູກູດຢ່າງໜັກໜ່ວງຈົນຈອມພູເຈື່ອນລົງ 7 ແມັດ ແຕ່ພວກເຂົາກໍ່ບໍ່ສາມາດບັນລຸຈຸດປະສົງ. ພູກູດຈຶ່ງໄດ້ຮັບນາມະຍົດເປັນ **"ພູກູດອາດຫານ"** ຢູ່ເທິງປ້ອມພູແຫ່ງນີ້ມີຫຼາຍສະໜາຍໃນກອງທັບ ແລະ ປະຊາ ຊົນຊາວຊຽງຂວາງໄດ້ເສຍສະຫຼະເພື່ອປົກປັກຮັກສາປ້ອມພູກູດ ຈົນຫຼາຍສະໜາຍ ໄດ້ກາຍເປັນນັກຮົບແຂ່ງຂັນ ແລະ ວິລະຊົນແຫ່ງຊາດໃນສະໄໝຕໍ່ຕ້ານຈັກກະ ພັດອາເມຣິກາ.

ສະໄໝຕໍ່ສູ້ຕ້ານການຮຸກຮານຂອງພວກລ່າເມືອງຂຶ້ນຝຣັ່ງ ແລະສະໄໝຕໍ່ສູ້ຕ້ານການຮຸກຮານຂອງຈັກກະພັດອາເມຣິກາ ຫຼາຍເຂດໃນແຂວງຊຽງຂວາງ ກາຍເປັນເຂດທີ່ໝັ້ນຂອງການປະຕິວັດເຊັ່ນ: ເຂດພູເລີຍ, ພູແດງ, ບ້ານທ້າວຕັ້ງ, ເຂດພູຄາ, ເຂດພູຜາເດີນ ທີ່ຕັ້ງຢູ່ທິດເໜືອຊຽງຂວາງ; ເຂດພູຈອມຈິກ, ພູຈອມແລງ, ເຂດສູງກວານ, ເຂດລາວຫວານ ແລະ ເຂດລຽບຕາມເສັ້ນທາງເລກ 7 ອາ, 7 ເບ, ທິດເໜືອທາງເລກ 4.

ຊຽງຂວາງ ມີອາກາດໜາວເຢັນຕະຫຼອດປີ ບາງປີກໍ່ໜາວແຮງຈົນອຸນຫະພູມລົດລົງເຖິງ 0 ອົງສາ, ມີລົມພັດຜ່ານໃນທຸກລະດູການ, ແຕ່ກໍ່ມີພື້ນທີ່ເຂດເມືອງຄຳ (53 ກມ. ຈາກໂພນສະຫວັນ) ເປັນເຂດທີ່ມີອາກາດອົບອຸ່ນກວ່າເຂດອື່ນໆ. ດັ່ງນັ້ນເມືອງນີ້ ຈຶ່ງເປັນອູ່ເຂົ້າອູ່ປາ ທີ່ອຸດົມສົມບູນແຫ່ງໜຶ່ງຂອງແຂວງ.

ທົ່ງໄຫຫີນ-ຊຽງຂວາງ ມີ 3 ເສັ້ນທາງຫຼັກເຊື່ອມຕໍ່ກັບເຂດແຂວງອື່ນໆຄື

ທາງເລກ 7 ເປັນເສັ້ນທາງຍຸດທະສາດເຊື່ອມຕໍ່ທາງເລກ 13 ເໜືອ ໂດຍເນ້ັງແຕ່ສາລາພູຄູນ (257 ກມ.ຈາກວຽງຈັນ)-ນ້ຳຈັດ-ເມືອງສູຍ-ໂພນສະຫວັນ 131 ກມ. ໂພນສະຫວັນ-ໜອງເປັດ-ບ້ານບານ (ເມືອງຄຳ) 53 ກມ. ແລະ ເມືອງຄຳ-ໜອງແຮດ-ນ້ຳກັ່ນ[48] 79 ກມ. (ຊາຍແດນລາວ-ຫວຽດນາມ) ລວມ 263 ກມ.

ເສັ້ນທາງ ເລກ 1 C. ແລະທາງເລກ 6 ເຊື່ອມ ຕໍ່ລະຫວ່າງທົ່ງໄຫຫີນ-ຊຽງຂວາງກັບແຂວງຫົວພັນ, ໂດຍທາງ 1 C. ເລີ່ມແຕ່ບ້ານບານ(ເມືອງຄຳ)-ນ້ຳເນີນ(86ກມ)-ພູເລົ້າ 91 ກມ. (ຈາກສາມແຍກພູເລົ້າຕໍ່ໄປເຖິງປາກມອງ, ຫຼວງພະບາງ 254) ແລ້ວຕໍ່ໃສ່ທາງເລກ 6 ທີ່ສາມແຍກພູເລົ້າ-ຫົວເມືອງ-ຊຳເໜືອ 97 ກມ. ແລະຊຳເໜືອ-ທາງລ້ອງ-ວຽງໄຊ-ນ້ຳໂສຍ 82 ກມ. (ຊາຍ ແດນລາວ-ຫວຽດນາມ) ສຳລັບໄລຍະຊຳເໜືອ-ນ້ຳເນີນ ສ້າງໃນລະຫວ່າງເດືອນ 4-9/1945 ໂດຍການຄວບຄຸມຂອງທະຫານຍີ່ປຸ່ນ [49]

.....

*48. ສ້າງໃນປີ 1916-20, ປະຫວັດສາດ ເມືອງພວນ ໂດຍພູມີ ວົງວິຈິດ 1994 ໜ້າ 61*

*49. ຄວາມຊົງຈຳຂອງຊີວິດເຮົາ ໃນຂະບວນວິວັດແຫ່ງປະຫວັດສາດຂອງປະເທດລາວ, ພູມີ ວົງວິຈິດ, ສະຖາບັນຄົ້ນຄວ້າວິທະຍາສາດສັງຄົມ ກະຊວງສຶກສາ 1987 ໜ້າ 31*

ເສັ້ນທາງເລກ 1D ເນ່ງແຕ່ໂພນສະຫວັນ-ເມືອງຄູນ-ທ່າໂທມ-ທ່າສີ 150 ກມ (ທ່າສີ-ບ້ານປ່າຄຳ-ມ.ຄຳເກີດ 150 ກມ. ຕໍ່ໃສ່ທາງເລກ 8A) ແລ້ວຕໍ່ໃສ່ ເສັ້ນທາງທ່າສີ-ປາກຊັນປະມານ 81 ກມ. ມີເດີ່ນບິນລະດັບຂັ້ນ 3 ຢູ່ 4 ຈຸດ (ເມື່ອກ່ອນ) ສາມາດຮັບຮອງຍົນທຸກຊະນິດ ບິນຂຶ້ນ-ລົງໄດ້ ຄື: ເດີ່ນບິນໂພນ ສະຫວັນ, ເດີ່ນບິນທົ່ງໄຫຫີນ, ເມືອງເຄິ່ງ, ເມືອງສູຍ.

ເທິງພູພຽງຊຽງຂວາງ ມີຜູ້ຄົນອາໄສຢູ່ຕັ້ງແຕ່ດົນນານບໍ່ຕ່ຳກວ່າ 3,000 ປີ ໂດຍມີວັດຖຸບູຮານປາກົດເປັນຫຼັກຖານສຳຄັນຄື ໄຫຫີນ ຊຶ່ງມີຢູ່ທົ່ວໄປເທິງພູພຽງແຫ່ງນີ້ຄາດວ່າມີປະມານ1,000 ໜ່ວຍຢາຍກັນຢູ່ 60 ແຫ່ງເຊັ່ນທີ່: ບ້ານສ່ວງ ບ້ານບານ, ເມືອງສູຍ, ເມືອງຄຳ ນາມອນ... ໃນນັ້ນລວມກັນຢູ່ໃນ 3 ຈຸດໃຫຍ່ຄື: ທົ່ງໄຫຫີນ 1 (ບ້ານສ່ວງ) ຢູ່ຫ່າງຈາກໂພນສະຫວັນລົງໃຕ້ 8 ກມ. ມີໄຫຫີນ 334 ໜ່ວຍຢາຍຢູ່ເທິງເນື້ອທີ່ປະມານ 25 ເຮັກຕາໃນນີ້ມີໜ່ວຍໜຶ່ງໃຫຍ່ກວ່າໝູ່ໝົດ ເສັ້ນຜ່າກາງປາກໄຫ 3 ແມັດ, ຮອບວົງ 8,76 ແມັດ, ໜັກປະມານ 15 ໂຕນ, ທົ່ງໄຫຫີນ2 ຢູ່ໃນເຂດບ້ານນາໂຄ້ ຫ່າງຈາກໂພນສະຫວັນໄປທາງທິດຕາເວັນຕົກປະມານ 20 ກມ. ມີໄຫຫີນ 93 ໜ່ວຍ ໃນນັ້ນມີໜ່ວຍໜຶ່ງສູງກວ່າໝູ່ໝົດ 3.24 ແມັດ ແລະ ທົ່ງໄຫຫີນ 3 ຢູ່ເຂດບ້ານຊຽງດີ ເມືອງຜາໄຊ ຫ່າງຈາກໂພນສະຫວັນໄປທາງທິດໃຕ້ 32 ກມ ມີໄຫຫີນ 292 ໜ່ວຍ ຊຶ່ງສະແດງວ່າຄົນໃນທີ່ນີ້ມີຄວາມຈະເລີນມີການປົກຄອງ ແລະສັງຄົມທີ່ໝັ້ນຄົງ. ນອກຈາກນີ້ ນັກປະຫວັດສາດ ແລະ ນັກບູຮານຄະດີຍັງພົບວັດຖຸບູຮານຫຼາຍຢ່າງ ລວມທັງມີວັດວາອາຮາມ ພະທາດເຈດີ ເຊັ່ນ: ທ່າພັງພາຍ, ວັດເພຍວັດ, ວັດສີພົມ, ທາດຈອມເພັດ, ພະທາດຝຸ່ນ, ທາດຫຼວງ ຢູ່ທີ່ເມືອງຄູນ ຊຶ່ງມີປະຫວັດສ້າງເມື່ອປະມານ ຄ.ສ. 1322 (50)

ແຂວງຊຽງຂວາງໃນສະໄໝບູຮານ ປາກົດຊື່ວ່າ **"ປະກັນ"** ຕໍ່ມາມີຊື່ວ່າ **"ຊ້າງຂວາງ"** ແລະພັ້ນເປັນ **"ຊຽງຂວາງ"**(51) ຂະນະດຽວກັນກໍ່ມີຊື່ໜຶ່ງຮຽກວ່າ **"ເມືອງພວນ"** ຍ້ອນວ່າຊາວເມືອງນີ້ສ່ວນຫຼາຍເປັນ**"ໄທພວນ"** ມີຕຳນານເລົ່າວ່າ:

.....

*50. 51,52 ປະຫວັດສາດ ເມືອງພວນ ໂດຍພູມີ ວົງວິຈິດ 1994 ໜ້າ 17, 9, 40*

ຊາວພວນສືບເຊື້ອສາຍມາຈາກ **ຂຸນເຈືອງ** (ລູກຊາຍຜູ້ທີ 7 ຂອງຂຸນບູຣົມຣາຊາ ທິຣາດຜູ້ປົກຄອງອານາຈັກໜອງແສ ເມື່ອ ຄ.ສ. 729-750) ຜູ້ປົກຄອງເມືອງນີ້ ເມື່ອ ຄ.ສ. 755.

ເມືອງພວນ ເປັນເມືອງເອກະລາດໜຶ່ງມີກະສັດປົກຄອງ ແລ້ວຈຶ່ງລວມເຂົ້າເປັນອານາຈັກລາວລ້ານຊ້າງ ໃນປີ 1300 ແຕ່ກໍ່ຍັງມີເຈົ້າຜູ້ຄອງນະຄອນສືບຕໍ່ມາຈົນເຖິງເຈົ້າຄຳເຮືອງ ສະໄໝຝຣັ່ງເຂົ້າຄອບຄອງ 1893. ເຈົ້າຄຳເຮືອງ ໄດ້ນຳພາຊາວພວນຕໍ່ຕ້ານຝຣັ່ງ ຈຶ່ງຖືກຝຣັ່ງປາບປາມ ແລະຖືກຈັບຂັງຄຸກ ເມື່ອອອກຈາກຄຸກໄດ້ພະອົງກໍ່ໜີໄປແຄວ້ນສິບສອງພັນນາ ແລະ ສິ້ນຊີວິດທີ່ນັ້ນ.[52] ນັບແຕ່ນັ້ນມາ ຊຽງຂວາງ ກໍ່ມີຖານະເປັນແຂວງໜຶ່ງຊື່ **"ຕຣັນນິນ"** ໃນສະຫະພັນອິນດູຈີນ ມີຄົນຝຣັ່ງເປັນຜູ້ປົກຄອງ, ຄົນລາວເປັນພຽງແຕ່ເຈົ້າເມືອງ, ເມື່ອລາວປະກາດເອກະລາດ 1945 ລວມລາວເປັນແຜ່ນດຽວ "ຕຣັນນິນ" (Tranninh) ກໍ່ມີຊື່ວ່າ"ຊຽງຂວາງ" ມາເຖິງປັດຈຸບັນ ໂດຍມີທ້າວເຫຼັກ ເປັນເຈົ້າແຂວງປົກຄອງຜູ້ທຳອິດ.

ເມືອງພວນໃນອະດີດມີຄວາມຈະເລີນຮຸ່ງເຮືອງ, ບ້ານເມືອງ ໄດ້ຮັບການສ້າງສາພັດທະນາ, ຊາວພວນ ມີເອກະລັກທາງດ້ານສິລະປະ ວັດທະນະທຳ, ມີປະເພນີອັນດີງາມ ຊຶ່ງແຕກຕ່າງຈາກເມືອງອື່ນເຊັ່ນ: ສຳນຽງສຽງປາກເວົ້າ, ການຂັບລຳ, ຄວາມເຊື່ອຖື, ຮີດຄອງປະເພນີ, ການນຸ່ງຖື, ອາຫານການກິນ, ເຮືອນຊານບ້ານຊ່ອງ/ສິ່ງກໍ່ສ້າງ... ພິເສດກວ່ານັ້ນຊາວພວນຍັງເປັນຜູ້ຮັກມັກ ໃນວັນນະກຳ ມັກກາບກອນໂຄງສາມເຊັ່ນ: ກາບເມືອງພວນ, ເລື່ອງທ້າວຮຸ່ງ ທ້າວເຈືອງ [53] ເປັນຕົ້ນ.

ແຕ່ເມື່ອປະເທດຊາດສູນເສຍເອກະລາດ ຄສ. 1779 ຊຽງຂວາງ ກໍ່ຖືກຕ່າງຊາດທີ່ມີກຳລັງແຮງເໜືອກວ່າຄື: ທັງສະຫຍາມ ແລະອານາມ (ດ້າຍຫວຽດ)

.....

*53. ວັນນະກຳເລື່ອງທ້າວຮຸ່ງ ທ້າວເຈືອງ ທີ່ມະຫາສິລາ ວິຣະວົງສ໌ ລິດຈະນາ ຈາກຕົ້ນສະບັບໃບລານ ທີ່ຫໍສະໝຸດກຸງເທບ ກໍແມ່ນສະຫຍາມເອົາໄປຈາກບ້ານບານເມືອງຄຳ, ແລະ ກາບເມືອງພວນ ກໍ່ແຕ່ງຂຶ້ນໂດຍ ຄົນພວນ ພາຍຫຼັງປີ ຄ.ສ. 1834*

ຕ່າງກໍ່ພາກັນຂົນກຳລັງ ເຂົ້າມາສູ້ຮົບຕົບຕີ ຍາດຊີງກັນຂຶ້ນຢູ່ບົນດິນແດນແຫ່ງນີ້ ໂດຍຝ່າຍໜຶ່ງ ຕ້ອງການໃຫ້ເປັນເມືອງຮ້າງ ອີກຝ່າຍຕ້ອງການຍຶດຄອງ. ຊ້ຳຮ້າຍກວ່ານັ້ນ ຍັງມີພວກຫໍ້ ເຂົ້າມາປຸ້ນສະດົມ ບ້ານເມືອງຕື່ມອີກຫຼາຍເທື່ອ, ທຳອິດ ໃນປີ 1874 ແລະ ຫຼ້າສຸດໃນປີ 1886.

ດັ່ງນັ້ນ ບ້ານເມືອງ ຈຶ່ງມີແຕ່ເສີກເໜືອເສືອໃຕ້ ແລະ ຖືກທຳລາຍມ້າງເພ ຈົນມຸ່ນມິນ, ເຄື່ອງຄ້ຳຂອງຄູນ ມີ່ງບ້ານ ຂວັນເມືອງ ຊັບສິນອັນມີຄ່າຂອງຊາວ ເມືອງ ກໍ່ຖືກເກັບກວາດເອົາໄປໝົດ, ຊາວເມືອງຈຶ່ງ ອົກສັ່ນຂວັນເສຍທຸກທໍລະ ມານສິ້ນເນື້ອໝົດຕົວ, ບໍ່ໄດ້ທຳມາຫາກິນສ້າງບ້ານແປງເມືອງຢ່າງປົກກະຕິສຸກ. ຂະນະດຽວກັນ ກໍ່ມີຄວາມຄຽດແຄ້ນແໜ້ນໃຈ ແລະ ເພີ່ມທະວີຄວາມສາມັກຄີ ຫາທາງຕໍ່ສູ້ຕ້ານຢັນບໍ່ຍອມຈຳນົນ.

ຊາວພວນ ຈຳນວນຫຼາຍໆພັນຄົນ ຖືກກອງທັບສະຫຍາມ ກວາດຕ້ອນ ອອກຈາກບ້ານເມືອງ ໃຫ້ໄປຢູ່ຝັ່ງຊ້າຍແມ່ນ້ຳຂອງເຖິງ 5 ຄັ້ງໃຫຍ່[54] ໃນເວລາ ຖືກກວາດຕ້ອນນັ້ນ, ຊາວພວນກໍ່ຖືກເຈັບປ່ວຍລົ້ມຕາຍເປັນຈຳນວນມາກ ຍ້ອນ ພະຍາດອະຫິວາ, ແລະຍ້ອນຖືກບັງຄັບຂົ່ມເຫັງທໍລະມານ ແລະສາເຫດອື່ນໆ. ປັດຈຸບັນໃນປະເທດໄທ ມີຊາວພວນຢູ່ ໃນຫຼາຍຈັງຫວັດເຊັ່ນ: ແພ່, ນ່ານ, ອຸຕະ ຣະດິດ, ພິດສະນຸໂລກ, ພິຈິດ, ສຸໂຂໄທ, ກຳແພງເພັດ, ນະຄອນສະຫວັນ, ເພັດຊະບູນ, ລົບບູລີ, ສິງບູລີ, ສຸພັນບູລີ, ສະລະບູລີ , ອຸໄທທານີ, ການຈະນະບູລີ, ກຸງເທບ, ເພັດຊະບູລີ, ຣາຊະບູລີ, ນະຄອນນາຍົກ, ປຣາຈີນບູລີ, ສະເຊີງເຊົາ, ອຸດອນທານີ, ໜອງຄາຍ ເປັນຕົ້ນ. ເພື່ອລະນຶກເຖິງບ້ານເກີດເມືອງນອນ ແລະ ຣາກເຫງົ້າປູ່ຢ່າຕາຍາຍຂອງຕົນ ຊາວພວນໄປຢູ່ໃສກໍ່ມັກຕັ້ງຊື່ບ້ານໃໝ່ຂອງຕົນ ຕາມຊື່ບ້ານເກົ່າເມືອງເດີມຂອງຕົນເຊັ່ນ: ບ້ານໜີ (ຣາຊະບູລີ), ບ້ານໄຜ່ (ຂອນ ແກ່ນ) ບ້ານຊຽງ (ອຸດອນທານີ) ເປັນຕົ້ນ.

.....

*54. ກາບເມືອງພວນ , ຄະນະຄົ້ນຄວ້າ ພາກວິຊາພາສາລາວ-ວັນນະຄະດີ ຄະນະອັກສອນສາດມະຫາວິທະຍາໄລແຫ່ງຊາດ 2001, ໜ້າ 14-20*

ຈຳນວນທີ່ລອດເຫຼືອຈາກການກວາດຕ້ອນ ກໍ່ຫຼົບລີ້ໄປຢູ່ຕາມປ່າເຂົາ ລຳເນົາໄພ ມີຊະຕາກຳທີ່ແສນທຸກຂະເວທະນາ ຍ້ອນບ້ານຮ້າງເມືອງເພ ພາກພື ພາກນ້ອງ. ຈຳນວນທີ່ຖືກກວາດຕ້ອນໄປສະຫຍາມນັ້ນ ຈຳນວນໜ້ອຍໜຶ່ງ ກໍ່ໜີ ຫຼົບລ່າວ ຕ່າວຄືນມາບ້ານເກີດເມືອງນອນ ແລະ ລົ້ມຫາຍຕາຍຈາກບົນເສັ້ນ ທາງກັບບ້ານ ຍ້ອນອຶດຫິວ, ກິນໝາກໜ້ອງ(ໝາກໄມ້ພິດ), ເປັນພະຍາດ ປ່ວຍໂຊ. ຜູ້ທີ່ລອດຕາຍຈຶ່ງຄ່ອຍແພ່ຜາຍຂະຫຍາຍເຊື້ອ ແລະ ສ້າງສາບ້ານ ແປງເມືອງຄືນໃໝ່.

ຊຽງຂວາງ ໃນອະດີດ ມີເມືອງຄູນເປັນເມືອງເອກ, (ນັບແຕ່ 1973 ເປັນ ຕົ້ນມາແມ່ນໂພນສະຫວັນ-ເມືອງແປກ) ປັດຈຸບັນຊຽງຂວງປະກອບມີ 8 ເມືອງຄື: ເມືອງແປກ, ເມືອງຄຳ, ເມືອງໜອງແຮດ, ເມືອງຄູນ, ເມືອງໜອກ, ເມືອງພູກູດ, ເມືອງຜາໄຊ ແລະເມືອງທ່າໂທມ. ແຕ່ກໍ່ມີຫຼາຍບ້ານ ທີ່ຍັງມີການເອີ້ນຊື່ວ່າ **"ເມືອງ"** ນຳໜ້າທັງໆທີ່ເປັນພຽງບ້ານເຊັ່ນ: ເມືອງພ່າງ ເມືອງງານ ເມືອງເກົ່າ, ເມືອງເຫືອງ ເມືອງເຄິງ ເມືອງໂມ້ ເມືອງເສັງ ເມືອງສູຍ ເມືອງພັ້ນ ເມືອງພານ, ເມືອງແທ ເມືອງຕັນ ເມືອງອອມ... ເປັນຕົ້ນ ຊຶ່ງສະແດງໃຫ້ເຫັນວ່າ ທີ່ນັ້ນອາດ ເປັນບ່ອນທີ່ມີປະຊາຊົນອາໄສຢູ່ຢ່າງໜາແໜ້ນມາກ່ອນ.

ຊາວຊຽງຂວາງເຂົາເຈົ້າດຳລົງຊີວິດ ສ້າງບ້ານແປງເມືອງຢ່າງໜາແໜ້ນ ຢູ່ໃນເຂດເມືອງຄູນ ທິດໃຕ້ຂອງທົ່ງໄຫຫີນ, ແລະເຂດເມືອງສູຍ ທິດຕາເວັນຕົກ ທົ່ງໄຫຫີນ, ໃນເຂດເມືອງແປກ ທິດເໜືອທົ່ງໄຫຫີນ, ແລະເມືອງຄຳທີ່ ຢູ່ທາງທິດ ຕາເວັນອອກສ່ຽງເໜືອຂອງທົ່ງໄຫຫີນ. ຄົນທ້ອງຖິ່ນຍັງ ມີຄຳໂຕງໂຕຍທີ່ບອກ ລັກສະນະພິເສດຂອງແຕ່ລະເມືອງເຊັ່ນ: ເມືອງຄູນ ຄົນຂຸນນາງ (ຄົນງາມມັກ ແຕ່ງເພດຈົບງາມ) ເມືອງແປກ ຮຽນເກັ່ງເປັນເຈົ້າຄົນ ເປັນນາຍຄົນ, ເມືອງຜາ ໄຊ ຄົນເກັ່ງຄົນກ້າ ຄ້າຂາຍ ອາດຫານ, ເມືອງເຄິງ, ເມືອງຄຳ ແຫ່ງພືດພັນ ທັນຍາຫານ [55]...

.....

*55. ຄຳບອກເລົ່າຂອງທ່ານ ພູມີ ທິບພະວອນ ອະດີດເຈົ້າແຂວ ງໆຊຽງຂວາງ*

ນອກນີ້ກໍ່ມີຄຳບອກເລົ່າເຖິງລັກສະນະພິເສດຂອງບ້ານຄືກັນເຊັ່ນບ້ານໃນເຂດເໜືອຂອງເມືອງແປກ: ບ້ານຮົ່ມຂາຍຕອງ (ກ້ວຍ) ບ້ານໜອງ ຂາຍຕ່ຳ (ໂຕຕ່ຳ) ຂາຍໝາກຄ້ຳ ບ້ານຫວດ-ບ້ານຕັນ, ຂາຍໜໍ່ສັນ ບ້ານລາວໂພນໝ້ຽງ, ຂາຍໝາກກ້ຽງ ບ້ານໝ້ຽງ-ສີຄູນ (ຄັ້ງວຽງ) ເປັນຕົ້ນ.

ເມື່ອຫວນຄືນຂະບວນວີລັດ 30 ກວ່າປີ ແຫ່ງການປົດປ່ອຍປະເທດຊາດຂອງກອງທັບ ແລະປະຊາຊົນລາວເວົ້າລວມ, ເວົ້າສະເພາະແມ່ນ ໃນການຕໍ່ສູ້ຕ້ານກັບສົງຄາມພິເສດເພີ່ມທະວີຂອງຈັກກະພັດອາເມຣິກາໃນຊຸມ 1968-1973 ເພື່ອປົດປ່ອຍດິນແດນທົ່ງໄຫຫີນຊຽງຂວາງນັ້ນ ພູພຽງຊຽງຂວາງແມ່ນສະໜໍລະພູມຮົບທີ່ສຳຄັນຢູ່ພາກເໜືອຂອງລາວ ແລະອິນດູຈີນ, ເປັນດິນແດນທີ່ມີຫຼາຍເຫດການເກີດຂຶ້ນ ທັງເປັນບ່ອນທົດສອບກຳລັງປະກອບອາວຸດ ແລະປະຊາຊົນລາວທີ່ຜ່ານຜ່າຄວາມຫຍຸ້ງຍາກ ໃນຂະບວນການຕໍ່ຕ້ານຈັກກະພັດອາເມຣິກາຜູ້ຮຸກຮານ ແລະບໍລິວານຂອງພວກເຂົາ.

ຕາມການສຳຫຼວດຂອງພວກລ່າເມືອງຂຶ້ນຝຣັ່ງ ແລະຈັກກະພັດອາເມຣິກາ, ພວກເຂົາຢັ້ງຢືນວ່າ ທົ່ງໄຫຫີນເປັນທີ່ຕັ້ງຍຸດທະສາດສຳຄັນ ເພາະເປັນພື້ນທີ່ຊຶ່ງສາມາດຮັບຄື້ນສັນຍານວິທະຍຸໄດ້ດີທີ່ສຸດທັງ4ທິດເໝາະ ໃນການສ້າງສະໜາມບິນຍຸດທະສາດທາງທະຫານ ທີ່ສາມາດຄວບຄຸມບັນດາປະເທດໃນອາຊີຕາເວັນອອກສ່ຽງໃຕ້ເວົ້າລວມ, ເວົ້າສະເພາະແມ່ນອິນດູຈີນ. ພວກຈັກກະພັດໄດ້ສົມທຽບປະເທດລາວ ຄືກັບໜ່ວຍກຸນແຈ, ທົ່ງໄຫຫີນ-ຊຽງຂວາງ ກໍ່ເປັນລູກກຸນແຈ...ໃຜຍຶດໄດ້ພູພຽງຊຽງຂວາງກໍ່ຈະກາຍເປັນເຈົ້າພາກເໜືອຂອງລາວ ແລະ ສາມາດຄຸມໄດ້ທົ່ວອາຊີຕາເວັນອອກສ່ຽງໃຕ້..

ພູພຽງ-ຊຽງຂວາງໄດ້ກາຍເປັນສູນກາງຂອງການຍາດແຍ່ງ ແລະຕໍ່ລອງລະຫວ່າງ 2 ກຳລັງ ຢ່າງດຸເດືອດຂ້ຽວຂາດ ເພາະວ່າ ພູມີປະເທດເຂດນີ້ແມ່ນຍຸດທະສາດສຳຄັນທາງດ້ານການທະຫານ ໃນສົງຄາມຜູ້ນຳຂອງແນວລາວຮັກຊາດເຄີຍໄດ້ໃຫ້ທັດສະນະວ່າ: **“ປະເທດລາວ ປຽບເໝືອນຊ້າງເຜືອກຕົວໜຶ່ງ ເຊິ່ງທົ່ງໄຫຫີນ-ຊຽງຂວາງກໍ່ຄືຫົວຊ້າງ, ສະນັ້ນໃຜໄດ້ຂີ່ຄໍຊ້າງ ຖືວ່າຜູ້ນັ້ນ ໄດ້ປົກຄອງ**

**ປະເທດລາວ"** ດ້ວຍເຫດຜົນທາງດ້ານຍຸດທະສາດທີ່ສຳຄັນດັ່ງກ່າວນັ້ນນັບແຕ່ ປີ1945 ເປັນຕົ້ນມາ ຈັກກະພັດຝຣັ່ງ-ອາເມຣິກາ ແລະລູກມືຈີ໋ງ ໄດ້ສຸມໃສ່ຍາດ ແຍ່ງເອົາທົ່ງໄຫຫີນ-ຊຽງຂວາງ ຢ່າງບໍ່ລົດລະ.

ໃນນີ້ ເພື່ອເປັນແປ້ນຢັນເຂົ້າສູ່ຊຽງຂວາງ ອາເມຣິກາ ໄດ້ທຸ່ມເທຢ່າງ ມະຫາສານສ້າງ **ກຳລັງພິເສດວ່າງປາວ ພ້ອມດ້ວຍຖານທີ່ໝັ້ນອັນແໜ້ນແກ່ນ ຄົບຊຸດຢູ່ລ້ອງແຈ້ງ**ທິດຕາເວັນຕົກສ່ຽງໃຕ້ຂອງທົ່ງໄຫຫີນ. ຕະຫຼອດໄລຍະເວລາ ແຫ່ງການຮານຮຸກຮານລາວ ຈັກກະພັດອາເມຣິກາ ແລະ ລູກມື ໄດ້ບຸດຢຶດເຂົ້າ ທົ່ງໄຫຫີນ-ຊຽງຂວາງ 5 ບັ້ນຮົບໃຫຍ່ດ້ວຍຫຼາຍຮູບແບບຍຸດທະວິທີ ແລະ ໃຊ້ທຸກ ຄວາມອາດສາມາດ ຫວັງເອົາເປັນບ່ອນສ້າງຖານທັບທາງທະຫານ, ເພື່ອປາບ ແລະ ດັບສູນກຳລັງປະຕິວັດທີ່ກຳລັງຕໍ່ສູ້ປົດປ່ອຍຊາດ ກໍ່ຄືບັນດາປະເທດສັງຄົມ ນິຍົມ ແລະບັນດາປະເທດທີ່ມີທ່າອ່ຽງກ້າວໜ້າເປັນຕົ້ນ ຫວຽດນາມເໜືອ, ຈີນ, ເກົາຫຼີເໜືອ ແລະສະຫະພາບໂຊວຽດ ແລະປະເທດສັງຄົມນິຍົມອື່ນໆ...


ແຕ່ດ້ວຍນ້ຳໃຈຮັກຊາດ ຮັກບ້ານເກີດເມືອງນອນ ນ້ຳໃຈຕໍ່ສູ້ກ້າຫານ ບໍ່ ຍອມຈຳນົນ ກອງທັບ ແລະປະຊາຊົນຊຽງຂວາງທຸກເພດເຜົ່າພົ້ງພັນ ພາຍໃຕ້ ການນຳພາຂອງພັກຈົ໋ງໄດ້ລຸກຂຶ້ນຕໍ່ສູ້ຕ້ານຢັນສັດຕູຜູ້ຮຸກຮານ ໂດຍມີການຮ່ວມ ສຳພັນສູ້ຮົບກັບກຳລັງເປັນກາງຮັກຊາດ ກຳລັງອາສາສະໝັກຫວຽດນາມ ການ ສົມທົບທຸກກຳລັງແຮງຂອງຍຸກສະໄໝ ແລະເຊື່ອໝັ້ນຕໍ່ໄຊຊະນະ.

ເຖິງແມ່ນວ່າ ສັດຕູຜູ້ຮຸກຮານ ຈະມີກຳລັງແຮງລົ້ນເຫຼືອຢ່າງທຽບກັນບໍ່ ໄດ້ໃນທຸກດ້ານເຊັ່ນ ທາງດ້ານການທະຫານ: ມີກຳລັງພົນມາກມາຍ, ລວມທັ ກຳລັງພິເສດ ມີພາຫະນະອາວຸດທຳລາຍລ້າງ ມ້າງຟ້າທະລາຍດິນ, ມີເສດຖະ ກິດຮັ່ງມີເຂັ້ມແຂງ, ມີສະຕິປັນຍາ, ມີພັນທະມິດທີ່ກະທາຍສົ່ງຄາມ, ມີອຳນາດ ແລະ ຄວາມໂຫດຫ້ຽມອຳມະຫິດ ປ່າເຖື່ອນ ລົ້ນຟ້າເຫຼືອແຜ່ນດິນ.

ແຕ່ປະຊາຊົນລາວ ກໍ່ຄືຊາວຊຽງຂວາງ ຜູ້ມີກຳລັງອ່ອນນ້ອຍ, ຂາດເຂີນ ອາວຸດຍຸດທະພັນ, ຂັດສົນດ້ານສະບຽງອາຫານ... ກໍ່ລຸກຂຶ້ນຕໍ່ສູ້ ຕ້ານຢັນຢ່າງອົ່ງ

ອາດກ້າຫານ ຍອມເສຍສະຫຼະທຸກສິ່ງທຸກຢ່າງ ເພື່ອປົກປັກ ຮັກສາບ້ານເກີດ ເມືອງນອນ ຮັກສາເຊື້ອຊາດ ແລະ ເຜົ່າພັນ ຖອກເທເລືອດເນື້ອເຊື້ອໄຂ ຫົວໃຈ ແລະຈິດວິນຍານ, ມີຄວາມເຊື່ອໝັ້ນຕໍ່ໄຊຊະນະ ແລະຄວາມເປັນທຳ. ຕໍ່ສູ້ຢູ່ບົນ ດິນແດນອັນເປັນທີ່ເຄົາລົບບູຊາ, ມີພະຄຸນພໍ່ແມ່ ປູ່ຍ່າ ຕາຍາຍ ບັນພະຊົນເປັນທີ່ ປົກປ້ອງຄຸ້ມຄອງ, ອາໄສພູຜາ ປ່າດົງ ປ່າແປກ ພູພຽງ ຖ້ຳເຖືອນພູຜາ, ແມ່ນ້ຳ ລຳທານ ເປັນທີ່ລີ້ຊ່ອນກຳບັງ ແລະ ລ້ຽງເກືອ ພ້ອມທັງເປັນຄ້າຍຄູ ປະຕູກົນ ເຮັດໃຫ້ສັດຕູຕົກສະທ້ານຢ້ານກົວ ອົກສັ່ນຂວັນເສຍ.

ແມ່ນວ່າສັດຕູຈະປະຕິບັດຍຸດທະການ3ກ້ຽງ, ແມ່ນວ່າສັດຕູຈະບຸກຍຶດ ເອົາໝົດທຸກປ້ອມພູ, ສຽງປືນດັງຟົດສະນັ່ນ, ໂຈນອາກາດອາເມຣິກາຈະຖອກ ເທລະເບີດນາໆຊະນິດ ແລະຫຼວງຫຼາຍພາຍນາກ ທັ້ງເວັນແລະຄືນ, ຜືນແຜ່ນ ດິນຊຽງຂວາງເຕັມໄປດ້ວຍຂຸມລະເບີດ ຄວັນໝື້ ແລະຄວາມຈິບຫາຍ, ປ້ອມ ພູກູດເຈື່ອນລົງເຖິງ 7 ແມັດ ເຮືອນຊານບ້ານຊ່ອງ ວັດວາອາຮາມ ພະທາດເຈດີ ຖືກມ້າງເພທຳລາຍ ຈົນມຸ່ນມິນສິ້ນຊາກ ບໍ່ເຫຼືອແມ່ນແຕ່ເສົາຊື້ຟ້າ... ຊາວ ຊຽງ ຂວາງ ລົ້ມຫາຍຕາຍຈາກ ນັບບໍ່ຖ້ວນ, ຜູ້ລອດເຫຼືອກໍ່ຈຳເປັນຕ້ອງພັດພາກຈາກ ແດນ... ແຕ່ວ່າຜ່ານການຕໍ່ສູ້ຢ່າງທໍລະຫົດ, ອົດທົນ, ເສຍສະຫຼະ, ລຳບາກ, ຍິ່ງສູ້ ກອງທັບແລະປະຊາຊົນຊຽງຂວາງຍິ່ງເຕີບໃຫຍ່ເຂັ້ມແຂງໄດ້ຮັບໄຊຊະນະ ໃນທຸກສະໜາມຮົບ ສັດຕູຜູ້ຮຸກຮານນັບມື້ປະລາໄຊ ສຸດທ້າຍກໍ່ຈຳເປັນຕ້ອງຍອມ ຖອຍໜີໄປ. ປະຊາຊົນຊາວຊຽງຂວາງ ໄດ້ເປັນເຈົ້າຂອງຜືນແຜ່ນດິນພູພຽງ ເມືອງພວນຢ່າງແທ້ຈິງ ແລະ ໄດ້ຮັບກຽດຈາກຂັ້ນເທິງຍົກຍ້ອງແຂວງຊຽງຂວາງ ເປັນ **"ແຂວງວິລະຊົນ"** ຢ່າງແສນເອກອ້າງທະນົງໃຈ...




ທິວທັດ ຈອມພູເກົ້າ




ພູມພາບພູພຽງຊຽງຂວາງ



ພູມພາບທົ່ງໄຫຫີນ 2 ເທິງພູພຽງຊຽງຂວາງ






*ພູມພາບທົ່ງໄຫຫີນ 1 ເທິງພູພຽງຊຽງຂວາງ ໄກໆພຸ້ນແມ່ນໂຕເມືອງໂພນສະຫວັນ*




*ພຸດທະຮູບໃຫຍ່ທີ່ວັດເພຍວັດ ເມືອງຄູນ ແຂວງຊຽງຂວາງ ຖືກສົງຄາມທຳລາຍ*




*ພະທາດຢູ່ວັດສີພົມ ເມືອງຄູນ ແຂວງຊຽງຂວາງ ຖືກສົງຄາມທຳລາຍ*




*ພະທາດຝຸ່ນ ທີ່ເມືອງຄູນ ຊຽງຂວາງ ຖືກຂຸດເຈາະທຳລາຍຕັ້ງແຕ່ ສະໄໝເສົາຫໍ້*




*ບາງສ່ຽວຂອງຂຸມລະເບີດເທິງແຜ່ນດິນຊຽງຂວາງ*




*ລູກລະເບີດໂບມບີ*




*ແຜນທີ່ສະແດງ ຂຸມລະເບີດເທິງທົ່ງໄຫຫີນ ພູພຽງຊຽງຂວາງ ບ່ອນທີ່ເມັດສີແດງ*

# Plain of Jars Cultural Heritage Mapping Project

## Map 3: Unexploded Ordnance







Jar field site
Village
Road
Cart track
River
Fighter bomber strikes
B52 bomber strikes

1000 0 1000 2000 3000 4000 5000 Meters

N

Bombing data supplied by UXO Lao:
location of known aerial bombardments
from de-classified US military records

Ministry of Information and Culture - UNESCO,
Lao PDR, August 2000

*ແມ່ນຂຸມລະເບີດ, ສ່ວນໃນວົງມົນນັ້ນ ແມ່ນຖືກໂຈມຕີຈາກຍົນເບ 52 (B 52)*




*ເທສະບານເມືອງຄູນ ເມືອງເອກຂອງແຂວງຊຽງຂວາງ ກ່ອນຖືກລະເບີດທຳລາຍ*




*ເທສະບານເມືອງຄູນ ພາຍຫຼັງຖືກລະເບີດທຳລາຍ ຣາບກ້ຽງຈົນບໍ່ມີເຮືອນຈັກຫຼັງ*






*ຮູບຈຳລອງ ຜູ້ຄົນທີ່ອາໄສຢູ່ໃນຖ້ຳປີວ ເມືອງຄຳແຂວງຊຽງຂວາງ*
*ກ່ອນຖືກດັບສູນກ້ຽງ 374 ຄົນ ໃນວັນທີ 24/11/1968*




*ຖ້ຳປ໋ອ ເມືອງຄຳ ບ່ອນທີ່ໂຈນອາກາດອາເມຣິກາຖິ້ມລະເບີດໃສ່*
*ເຮັດໃຫ້ມີຄົນຕາຍພາບດຽວ 374 ຄົນ ໃນເຊົ້າວັນທີ 24/11/1968*





*ເສດຊາກລະເບີດ ຂອງໂຈມຕາກອາກາດອາເມຣິກາ ທີ່ຖິ້ມລົງໃສ່ແຜ່ນດິນຊຸງງຂວາງ*




*ຮູບຈ້ຳລອງບັນດາລະເບີດທີ່ໂຈມອາກາດອາເມຣິກາຖິ້ມລົງໃສ່ແຜ່ນດິນລາວ*




*ຮູບຈຳລອງບັນດາລະເບີດທີ່ໂຈມອາກາດອາເມຣິກາຖິ້ມລົງໃສ່ແຜ່ນດິນລາວ*




*ບັນດາຈຸດໝາຍທີ່ພົບລູກລະເບີດບໍ່ທັນແຕກ ຈາກການສຳຫຼວດຂອງອົງການເກັບກູ້ລະເບີດ ທີ່ບ້ານໂຕນໃຕ້ ເມືອງແປກ ແຂວງຊຽງຂວາງ ປີ 2010 ໃນເນື້ອທີ່ 5350 ຕາແມັດ ມີລະເບີດ 116 ລູກ, ໂບມບີ 91 ລູກ*



*ພັນໂທ ບົວໄທ ໄຊຍະວົງ ຫົວໜ້າກົມປ້ອງກັນອາກາດ ຖ່າຍຮູບຮ່ວມ*
*ຄະນະບັນຊາກອງພັນປ້ອງກັນອາກາດ 456, 601, 603 ພາຍຫຼັງບັນຮົບບໍ່ແຕນ*
*( ໄຊຊະນະ ແລະຜົນງານທີ່ພົ້ນເດັ່ນ*
*ແມ່ນຍິງຍົນ OV 10 ຂອງສັດຕູຜູ້ຮຸກຮານ ຕົກ 1 ລຳ )*



*ຕົ້ນແປກກຳເນີດ ແລະ ເຕີບໃຫຍ່ ໃນຂຸມລະເບີດ ປາງສົງຄາມ*
*ສັນຍາລັກນີ້ ຢູ່ແຄມທາງລະຫວ່າງບ້ານເຫີນໄປຫາບ້ານຄາຍ*

# IV. ภาบจัดตั้งปะติบัดໜ้าที่ ຂອງกองลำล฽งแบกหาบ 368

.....

ນักຮົบกอง 368 จำนอบหายหาก่ำถืกละด์มมาใหม่, ทังฒ์ดยังฒุ่มน้อย อายุปะมาบ 13-15 ปี หาก่ำซอบสาว แต่ย้อบคอามธักซาด ธักบ้าน เกิดเมืองบอบ, ฦงดแล้บต่ำจักกะพัดอาเมธิกา และ พวกลูกแห้งตีบมือ ขายซาดที่มาเฮั่บข้าธาวิพ่แม่ปะซาฉ์บ,ทำลายบ้านเมือง,เห็บเถิงคอาม จำเป็บที่ต้องปุ้มลุมสามักคีกับ ปะกอบส่อบเหื่อแรงสะติปับยา ชีวิด อิบชิ ของตีบเข้าในกาบต่ำสู้ปิกปักธักสาชีวิดพ่แม่พี่น้อง บ้านเกิดเมือง บอบของตีบ และปะเทดซาด. เขิาเจ้าก่ำได้ติ้บต๊อห้าอหับสะห฼ักใจเธ็ด หน้าที่ลำล฽งแบกหาบ ย่างทำละหีดอีดทีบพิละอาดหาบ บ่หวาดหวั่บย้ามก๊อต่ำอุปะสัก และไพอับตะลายใดๆ.

หน้าที่ตั้บต๋ของกอง 368 คือปับปุงม้฽บเถื่องในสางที่มียู่ก่อบแล้อ, ตั้งสางม้฽บเถื่อง, ปับแปงทีบทางเข้าสาง เพื่อธับเข้าปาอาหาบ, อาอุด ยุดโหปะกอบ ลอมทังบ้ำมับที่ลำล฽งมาจากหอ฽ดบาม, ขีบเถื่องลังจาก ลีดเอิาเข้าม้฽บไอ้ในสาง หื ขีบออกจากสางใส่ลีดสำลับส่งไปแบอหน้า หื เป้หาบลำล฽งออกสู่แบอหน้าบ่อบที่ลีดบ่สามาดไปได้. เข้าที่ถืกลีด ลำล฽งมานับ(เข้าสาบ)เปาหึ่งหับ 50 กิโล, ในเบื้องต้บพวกเอื้อยบ้อง ต้องได้ซ่วยกับหาม 4 คีบต่ำเปาก่ำทังยากแต่ก่ำสามักคีกับเธ็ด, เธ็ดคืมีด คือปอก ปุ้มลุมเข้าใส่. เมื่อเธ็ดอ฽กได้หายอับก่ำล้งเถีย มีบิดธ฽บ, ลีดมา

ສົ່ງເຄື່ອງມີຫຼາຍຄັນ, ທັງຢ້ານບໍ່ທັນແລ້ວຟ້າແຈ້ງກ່ອນກໍ່ຈະເສຍລັບ ແລະຍົນຈະມາຍິງທຳລາຍ, ທັງດ້ວຍຈິດໃຈເຄັ່ງຮ້ອນ, ຍ້ອນແນວນັ້ນການຂົນເຂົ້າໃນໄລຍະຕໍ່ມາເປົ້າໜຶ່ງກໍ່ 2 ຄົນຫາມ, ຕໍ່ມາອີກກໍ່ເອົາ 1 ເປົ້າຕໍ່ 1 ຄົນ, ຜູ້ຢູ່ເທິງລົດແກ່ດຶງເປົ້າເຂົ້າອອກມາຮອດທ້າຍລົດ, ຜູ້ຢູ່ລຸ່ມກໍ່ກ່ອງຫຼັງແບກແລ່ນເຂົ້າໄປມ້ຽນໃນສາງໂລດ ເຮັດແບບນັ້ນຈົນສຳເລັດໝົດຂະບວນ.

ການຂົນແກັດລູກປືນກໍ່ເຊັ່ນດຽວກັນ, ແກັດລູກປືນກໍ່ມີນ້ຳໜັກແຕ່ 50 ກິໂລຂຶ້ນໄປ, ທັງແຂງທັງໜັກ, ສາງມ້ຽນເຄື່ອງພັດຢູ່ໄກ ຊຶ່ງເຕັມໄປດ້ວຍຄວາມອັນຕະລາຍ ຖ້າມີການຜິດພາດໃນພັບຕາດຽວກໍ່ເຖິງແກ່ຊີວິດ ແຕ່ເອື້ອຍນ້ອງກອງ 368 ກໍ່ຕັດສິນໃຈຜ່ານຜ່າ.

ການເຮັດວຽກໃນແຕ່ລະວັນ ກໍ່ໄດ້ແບ່ງໜ້າທີ່ກັນໄປປະຈຳຢູ່ຕາມແຕ່ລະຈຸດຕາມຄຳສັ່ງຂອງຄະນະບັນຊາ ແລະມີການຜັດປ່ຽນກັນໄປໃນແຕ່ລະຄ່ຳຄືນ ຄື: ຄືນນີ້ໝວດທີ 1 ຂົນເຂົ້າລົງລົດ-ເຂົ້າມ້ຽນສາງ, ໝວດທີ 2 ກໍ່ຂຶ້ນລົດນຳຂະບວນລົດອຸປະໂພກ-ບໍລິໂພກ ໄປຂົນເຄື່ອງລົງໄວ້ສາງອຸປະໂພກ-ບໍລິໂພກ. ໝວດທີ 3 ໄປນຳຂະບວນລົດຍຸດໂທ ໄປຂົນເຄື່ອງລົງສາງຍຸດໂທ, ຄ່ຳຄືນມື້ຕໍ່ມາໝວດ 1 ໄປນຳຂະບວນລົດອຸປະໂພກ-ບໍລິໂພກ, ໝວດທີ 2 ໄປນຳລົດຍຸດໂທ, ໝວດທີ 3 ໄປ ນຳຂະບວນລົດຂົນສົ່ງເຂົ້າ. ແຕ່ລະຄືນກໍ່ຜັດປ່ຽນກັນໄປເຊັ່ນນັ້ນຕະຫຼອດ. ແຕ່ບໍ່ວ່າຈະເປັນການຂົນເຂົ້າ, ຂົນເຄື່ອງອຸປະໂພກ-ບໍລິໂພກ, ຂົນອາວຸດຍຸດໂທປະກອນ ກໍ່ລ້ວນແຕ່ໜັກໜ່ວງ, ອຶດເມື່ອຍເຄັ່ງຮ້ອນ ແລະອັນຕະລາຍທັງນັ້ນ.

ກາງຄືນເຮັດວຽກໝົດຄືນ ກາງເວັນຈຶ່ງໄດ້ພັກຜ່ອນຫຼັບນອນ. ມື້ໃດຍົນສັດຕູບໍ່ມາຖິ້ມລະເບີດກໍ່ໄຄແດ່ ຍັງໄດ້ແຂວນອູ່ຕາມຕົ້ນໄມ້ແລ້ວນອນ ຫຼື ບໍ່ກໍ່ຕັດໄມ້ມາເຮັດຕູບໄມ້ລຽນລຳ, ເອົາໃບໄມ້ມາປູຮອງນອນ, ແຕ່ຖ້າມື້ໃດຍົນມາຍິງກໍ່ແມ່ນລົງຂຸມຫຼົບໄພ ຊິນັ່ງກໍ່ນັ່ງບໍ່ໄດ້, ຊິນອນກໍ່ນອນບໍ່ເປັນ ເພາະຂຸມຫຼົບໄພກໍ່ທັງຄັບທັງແຄບ ຢ້ານກໍ່ຢ້ານກົວກໍ່ກົວ ທັງອຶດກັງວົນທັງຄຽດທັງແຄ້ນ.

ກອງ 368 ຍັງເຮັດໜ້າທີ່ລຳລຽງຂົນສົ່ງບັນດາເຂົ້າກິນ, ເຄື່ອງອຸປະໂພກ ບໍລິໂພກ, ພາຫະນະອາວຸດ ແລະລູກກະສຸນ ໄປໃຫ້ອ້າຍນ້ອງທີ່ເຮັດໜ້າທີ່ປະຈຳ ການສູ້ຮົບຢູ່ແນວໜ້າ ເປັນຕົ້ນ:

ໝວດທີ 1 ມີສະຫາຍ ນາງທຸມມີ (ທຳມະວົງ )ເປັນຫົວໜ້າ, ສະຫາຍນາງ ມຸນຫາ ເປັນຮອງ ມີໜ້າທີ່ປຸກສາງມ້ຽນເຄື່ອງ, ຮັບຕ້ອນຂະບວນລົດລຳລຽງເຄື່ອງ ມາແຕ່ຫວຽດນາມ ພ້ອມທັງສົ່ງລຳລຽງເຄື່ອງຂອງເຫຼົ່ານັ້ນ ໄປສູ່ສະໜາມຮົບທິດ ເມືອງສູຍ, ພູກູດຈອມເພັກ ຊຶ່ງຢູ່ທິດຕາເວັນຕົກຂອງທົ່ງໄຫຫີນ.

ໝວດທີ 2 ມີນາງ ສີສຸກ (ແກ້ວບຸນລ້ອມ) ເປັນຫົວໜ້າ, ສະຫາຍ ນາງ ພິມພາ ເປັນຮອງ, ໝວດນີ້ມີໜ້າທີ່ແບກເຂົ້າ ແລະອາຫານການກິນ, ພາຫະ ນະ ອາວຸດ ແລະລູກກະສຸນລົງລົດແລ້ວເປ້ເຂົ້າມ້ຽນສາງ, ໝວດນີ້ຈະແບ່ງກັນອອກ ເປັນໝູ່ເພື່ອໄປນຳຂະບວນລົດ, ຖ້າຂະບວນລົດເຂົ້າມາຮອດແບ່ງໃຫ້ 1ໝູ່ ອອກ ໄປນຳລົດເຂົ້າເພື່ອເອົາເຂົ້າລົງລົດສັບຊ້ອນມ້ຽນໄວ້ສາງ. ຖ້າຂະບວນລົດຍຸດໂທ ມາຮອດ ແບ່ງໃຫ້ໝູ່ 2 ໄປນຳຂະບວນລົດເພື່ອຂົນປືນ ແລະກະສຸນລົງຈາກລົດ ເພື່ອເຂົ້າມ້ຽນຢູ່ສາງຍຸດໂທ. ຖ້າລົດຂົນສົ່ງເຄື່ອງອຸປະໂພກ-ບໍລິໂພກ ມາ ໃຫ້ໝູ່ 3 ຂຶ້ນລົດນຳຂະບວນລົດອຸປະໂພກໄປ ເພື່ອເອົາເຄື່ອງເຫຼົ່ານັ້ນລົງລົດມ້ຽນໄວ້ ສາງ ຊຶ່ງຕັ້ງຢາຍຢູ່ບໍລິເວນຄັງໄຂ, ພູແຮ້, ບ້ານຄາຍ, ບ້ານເທີນ, ບ້ານໜ້ຽງ, ນາລາມ ຢູ່ທິດເໜືອທົ່ງໄຫຫີນ.

ໝວດທີ 3 ມີນາງ ອ່ອນສີ ເປັນຫົວໜ້າ, ນາງຈັນທະລາ ເປັນຮອງ. ໝວດນີ້ປະຈຳຢູ່ຖ້ຳມາດຖ້ຳກາບເມືອງຄູນລໍຖ້າເພື່ອຕ້ອນຮັບຂະບວນລົດມາສົ່ງ ເຄື່ອງແລ້ວ ສັບຊ້ອນເຂົ້າມ້ຽນສາງ ພ້ອມທັງລຳລຽງຂົນສົ່ງອອກສູ່ແນວໜ້າຮັບ ໃຊ້ສະໜາມຮົບ ດ້ານພູຈອງວອງ, ເມືອງພ່າງ-ເມືອງງາມ, ທ່າໂທມ, ທ່າວຽງ ຊຽງຄໍ້ງ.

ທ້າຍເດືອນ 8 ປີ 1968 ໝວດທີ 3 ເຊິ່ງບັນຊາ ໂດຍສະຫາຍ ນາງ ອ່ອນສີ ໄດ້ນຳກຳລັງໄປປະຈຳຢູ່ດ້ານຮົບເມືອງງາມ ເພື່ອລຳລຽງບັນດາເຄື່ອງ,

ເຂົ້າກິນ, ສະບຽງອາຫານ ແລະ ເຄື່ອງຍຸດໂຫປະກອນໄປສູ່ດ້ານຮົບທາງທິດໃຕ້ ຊຽງຂວາງ, ເມືອງງານ, ເມືອງພ່າງ, ໄປໃຫ້ອ້າຍນ້ອງກອງພັນ 24 ທີ່ປະຈຳຢູ່ ເຂດທ່າໂທມ, ເມືອງເກົ່າ, ເມືອງເຫືອງ.

ການເດີນທາງສຸດທີ່ຫຍຸ້ງຍາກ ຕ້ອງໄດ້ໄປກາງຄືນ, ຝົນຕົກໜັກເພາະ ເປັນຍາມຝົນ. ຂັ້ນເທິງພັດສັ່ງໃຫ້ເດີນທາງດ່ວນທີ່ສຸດ 7 ວັນໃຫ້ຮອດຈຸດໝາຍ ເພາະເວລານີ້ສັດຕູໄດ້ລະດົມກຳລັງຂະໜາດໃຫຍ່ ບຸກເຂົ້າເຂດທົ່ງໄຫຫີນເວົ້າ ສະເພາະແມ່ນເຂດພູກູດ, ພູເກົ້ງ, ເມືອງແປກ, ທ່າໂທມ, ທ່າວຽງ, ຊຽງຄົ້ງ, ເມືອງ ຄຳ, ໜອງແຮດ ແລະແຫ່ງອື່ນໆ... ມີກຳລັງທາງໜ້າດິນ, ກຳລັງປືນໃຫຍ່, ກຳລັງ ໄຟຊ່ວຍໜູນທາງອາກາດ, ພວກເຂົາໄດ້ພະຍາຍາມປົ້ນຂັ້ນໄດສົງຄາມ.

ບໍ່ພຽງທ່ໍນັ້ນ, ສັດຕູຍັງໄດ້ລະດົມກຳລັງທາງອາກາດໃຊ້ຍົນແອບ F105, ເຕ 28(T28) ຈຳນວນ 50 ລຳ ເຂົ້າມາຍິງທຳລາຍເຂດເມືອງງານ ແລະເຂດອື່ນໆ ໃນຂອບເຂດຕາແສງຄັ້ງ, ຕາແສງຄາຍ(ເມືອງແປກໃນປັດຈຸບັນ) ແຂວງຊຽງ ຂວາງ ເຮັດໃຫ້ວັດວາອາຮາມ ໂຮງໝໍ ໂຮງຮຽນ ເຮືອນຊານບ້ານຊ່ອງ ໄຮ່ນາ ສັດສາວາສິ່ງຂອງປະຊາຊົນ ຊາວຊຽງຂວາງຖືກເຜົາຜານວອດວາຍ ປະຊາຊົນ ຕ້ອງໄດ້ອົບພະຍົບຫຼົບລີ້ໄປຢູ່ຕາມຍອດທ້ອຍ ຕີນເຂົາ ອາໄສຖ້ຳ ເຖື່ອນ ຜາຫີນ ເປັນທີ່ພັກພາ ແຕ່ປານນັ້ນກໍ່ຍັງບໍ່ລອດພົ້ນ ຈາກການສັງຫານໂຫດຂອງພວກ ສັດຕູ.

ห้ามจำหน่าย

ໃນເຊົ້າວັນທີ 24/11/1968 ຍົນຖິ້ມລະເບີດ F105 ຂອງອາເມຣິກາ ໄດ້ ຖິ້ມລະເບີດນາປານລົງໃສ່ຖ້ຳປ໋ອ ເມືອງຄຳ ແຂວງຊຽງຂວາງ (53 ກມ. ຈາກໂພນ ສະຫວັນ) ເຮັດໃຫ້ປະຊາຊົນຜູ້ບໍລິສຸດ ຊຶ່ງມີທັງຜູ້ເຖົ້າ ເດັກນ້ອຍ ແມ່ຍິງທີ່ອາໄສ ຢູ່ໃນຖ້ຳນັ້ນ ຕາຍລົງພາບດຽວ 374 ຄົນ ໃນນັ້ນມີຫຼາຍຄອບຄົວຖືກດັບສູນ [56].

56. *ໃນຈຳນວນ 374 ຄົນນັ້ນ ມີຊາວບ້ານນ້ຳໝຶ້ນ 40 ຫຼັງຄາເຮືອນ, ບ້ານຝາຍ 15 ຫຼັງຄາ, ບ້ານນາອຸ 6 ຫຼັງຄາ, ບ້ານຫ້ວຍ 5 ຫຼັງຄາ ແລະບ້ານອື່ນໆ (ຮ້ອຍເອກນາງປ໋ວຄຳບອກເລົ່າ)*

ເຖິງວ່າຍຸດທະສາດ "ສົງຄາມພິເສດ" ຢູ່ລາວ ແລະ "ສົງຄາມພາກສ່ວນ" ຢູ່ພາກໃຕ້ຫວຽດນາມ ຂອງເຢັນໂຊນ ພັງທະລາຍລົງໃນທ້າຍປີ 1968 ແຕ່ ອາເມຣິກາກໍ່ຍັງດື້ດ້ານ ບໍ່ຍອມປະລະກົນອຸບາຍຮຸກຮານອິນດູຈີນ. **ນິກເຊີນ** ໄດ້ ຂຶ້ນເປັນປະທານາທິບໍດີອາເມຣິກາ(20/1/1969)ແທນໂຢນເຊີນ ແລະ ໄດ້ວາງ ຍຸດທະສາດກອມໂລກໃໝ່ອອກມາຊຶ່ງຮຽກວ່າ **"ທິດສະດີນິກເຊີນ"** ໂດຍອີງໃສ່ 3 **ຫຼັກການໃຫຍ່ຄື: 1. ກຳລັງແຮງຂອງຈັກກະພັດອາເມຣິກາ, 2. ແບ່ງປັນຄວາມ ຮັບຜິດຊອບ ແລະ** 3. **ກຽມພ້ອມເຈລະຈາເມື່ອມີທ່າແຮງໄດ້ປຽບ** ເຊິ່ງແມ່ນຍຸດ ທະສາດປັ້ນຂັ້ນໄດສົງຄາມ.

ນິກເຊີນ ຖືວ່າສະໜາມຮົບລາວມີຄວາມສຳຄັນຕໍ່ໄຊຊະນະ ຫຼື ການ ປະລາໄຊ ຂອງການປະຕິບັດຍຸດທະສາດຂອງເຂົາໃນຄັ້ງນີ້, ຈິດໃຈຕົ້ນຕໍຂອງ ທິດສະດີນິກເຊີນ ແມ່ນໃຊ້ທຸກມາດຕະການເຂັ້ມແຂງ ແລະສ່ຽງໄພ ທາງດ້ານ ການທະຫານ,ເລິກແລບດ້ານການເມືອງແລະການຕ່າງປະເທດແນໃສ່ສ້າງເປັນ ທ່າແຮງຢູ່ໃນສະໜາມຮົບລາວ ກໍ່ຄືອິນດູຈີນ, ເຮັດໃຫ້ສົງຄາມແຜ່ລາມອອກ, ໃຊ້ຄົນອິນດູຈີນຂ້າຄົນອິນດູຈີນ, ໃຊ້ຄົນລາວຂ້າຄົນລາວ ແລະ ອາໄສການ ເຈລະຈາ ເພື່ອຫຼອກລວງສາຍຕາຊາວໂລກ.

ອາເມຣິກາໄດ້ຊຸ້ນຊ້ຽວຂະຫຍາຍສົງຄາມພິເສດຂຶ້ນສູ່ລະດັບສູງ ດ້ວຍ ການເພີ່ມທະວີການຊ່ວຍເຫຼືອແກ່ພວກລູກມື ໃນພາກໃຕ້ຫວຽດນາມ ແລະ ລາວ ດ້ວຍເງິນ ອາວຸດຍຸດທະພັນ ແລະທີ່ປຶກສາ.

ສຳລັບຢູ່ລາວ ນິກເຊີນ ໄດ້ທຸ່ມເທເງິນໃຫ້ພວກຫຸ່ນອຽງຈັນ ໃນປີ 1969 ເຖິງ 540 ລ້ານໂດລາ, ໃນນີ້ຊ່ວຍແບບເປີດເຜີຍມີ 290 ລ້ານໂດລາ, ປີ 1971-72 ເພີ່ມຂຶ້ນເຖິງ 400 ກວ່າລ້ານໂດລາ ໃນນີ້ເປັນການຊ່ວຍດ້ານການທະຫານ 350-370 ລ້ານໂດລາ. (ເພີ່ມຂຶ້ນ 3 ເທົ່ອທຽບກັບສະໄໝໂຢນເຊີນ) ພ້ອມກັນນີ້ ກໍ່ໄດ້ເພີ່ມກຳລັງທະຫານຫຸ່ນອຽງຈັນຈາກ 60.000ຄົນ ເປັນ 70.000 ຄົນ ກຳລັງ ພິເສດວ່າງປາວ ເພີ່ມຈາກ 17.000 ໃນປີ 1969 ເປັນ 30.000 ໃນປີ 1972, ຈັດຕັ້ງອົງການຕ່າງໆຂຶ້ນເພື່ອເປັນລະບົບເຄືອຂ່າຍບັນຊາສົງຄາມຢູ່ລາວ,

สะเพาะจำนอนที่ปึกสาถะนะบับชา " **กำลังพิเสด** " [57] เพิ่มขึ้นจาก 3.000 เป้น 4.000 คึน. พ้อมนี้ปะติบัดตามอันที่เอิ้นว่า **"แบ่งปันความรับผิดชอบ"** เซิ่งเนื้อแท้แม่นสำพันด้านการทะหารอาเมธิกา กั่ได้ดึงเอิาทะหารธับจ้างไทย์ เข้ามาช่วยพวกหุ่นอ฽งจัน (เถิงต้นปี 1973 มี 15.000 คึน, ทะหารธาบ 29 กองพัน, ทะหารปืนใหย่ 3 กองพัน.

ปะติบัดตามยุดทะสาดปืนขั้นไดสิ้งคาม ของทิดสะดินิกเซิน, อาเมธิกา และ พวกหุ่นอ฽งจันกั่ธิบร้อมนำใช้กำลังพิเสดว่างปาว เป้นกำลังเคื่องมือตะลุมบอนปะจันบาน แทนทะหารฝ่ายขวาอ฽งจัน เดือน 3/1969 อาเมธิกา และ ลูกมือ ได้ไขขั้นธ์บ**โอเดแอน (ODN)** ด้วยกำลังพิเสดว่างปาว 6 กองพัน 3 กุ่มปืนใหย่, 3 กองร้อยล็ดตั้ง, ทะหารฝ่ายขวาที่มาแต่อ฽งจันสะหวันนะเขด,ทะหารปืนใหย่เลอธับจ้างไทย์โดยการนช่วยพูนของกองทับอากาดอาเมธิกาบุกติเข้าต๊อเมืองฆ฽งขวาง.

สำลับด้านธ์บเมืองสูย พวกเขาได้นำใช้ 2 กองพันปืนใหย่ 105 มม. และ 155 มม. ของกำลังทะหารเลอธับจ้างไทย์. ทางอากาดพวกเขาก่ได้ละดมเธือบินทุกชะนิด ถิ่มละเบิดถะหุ่มแต่ละอันปะมาน 200 -250 ถังอลำ ลังใส่จุดต่างๆที่พวกเขาสิ้งไส ในนั้นมิทั้งโบมนาปานเธ็ดให้เกิดไฟไหม้, ทั้งธั้อสอน, ทั่งนา, เล้าเข้า, เธือนชานบ้านช่อง, สัดสาอาสิ่ง, อัดอาอาธาม แม่นกะทั้งชิวิดคึนก่ถืกสูนเสยบ่จักว่าเท่าใด.

ไลยะนี้ คะนะบับชาการมิคำสั่งด่วนให้หอด 3 ของกอง 368 กับคืนสำนัก เพื่อลำล฽งธับใช้การต่าอโจมติ **บั้นธ์บโอเดแอน** ด้านธ์บพูกูดจอมเพ็ก ตามแผนการที่ทางคะนะพักการทะหารเขดได้ตัดสินใจเปิดบั้นต่าอโจมติสัดตู. เอื้อยน้องกอง 368 จำนอนหึ่ง นำโดยนาง

---

*57. กำลังพิเสด มิหลายปะเพดเช่น: เบแอ้ส (กองพันพิเสด) อาเซ (กำลังใต้ดิน) อาเดเซ (กำลังกองธ์บพิเสด) แอ้สเยอุย (กองจู่โจมพิเสด) เยแอ้ม (กึมเคื่อนที่) เปแอ้สแอ้ส (กึมเคื่อนที่พิเสด)*

ອ່ອນສີ ໄດ້ຮັບຄຳສັ່ງໃຫ້ເຂົ້າຮັບໃຊ້ສະໜາມຮົບຕ່າວໂຈມຕີບັ້ນ ຮົບໂອເດແອນ ທາງທິດພູແຄ ລາດຮ້ອງ. ໂດຍເຮັດໜ້າທີ່ລຳລຽງເຂົ້າປາອາຫານ ອາວຸດຍຸດ ທະພັນ ແຕ່ຖ້ຳຜາຂໍ ດົງດ່ານ ໄປສູ່ດ້ານຮົບພູແຄ. ໃນເວລາທີ່ກຳລັງກອງ 368 ພວມເດີນທາງໄປນັ້ນ ເວລາ 7 ໂມງເຊົ້າ ໄດ້ຖືກໂຈມອາກາດອາເມຣິກາຫຼອນ ຕີເຮັດໃຫ້ເສຍກຳລັງ 3 ສະຫາຍ. ການທີ່ຈະນຳເອົາຊາກສົບຂອງ 3 ສະຫາຍ ອອກ ຈາກເຂດນັ້ນກໍ່ບໍ່ແມ່ນຂອງງ່າຍໆ ຕ້ອງລໍຖ້າເຖິງ 6 ໂມງແລງ ຈົນສຽງຍົນ ງຽບຫາຍໄປ ເອື້ອຍນ້ອງຈຶ່ງສາມາດເຂົ້າເກັບເອົາຊາກສົບຂອງຜູ້ເສຍຊີວິດນັ້ນ ອອກມາແລ້ວ ນຳໄປຄົບງັນ ແລະ ຈັດພິທີສົ່ງສະການ ຢູ່ສຳນັກພະລາທິການ ດ້ານຮົບທີ່ບ້ານຕ້າຍ. ອີກຄັ້ງໜຶ່ງທີ່ຖືກຍົນຫຼອນຕີ ແມ່ນເວລາຢູ່ຕີນພູເລັ່ງກໍ່ມີຜູ້ ເສຍຊີວິດ 2 ຄົນ, ບາດເຈັບ1 ຄົນ.[58]

ກຳລັງອີກສ່ວນໜຶ່ງຂອງກອງຮ້ອຍ 368 ໄດ້ຮັບໜ້າທີ່ຈາກຂັ້ນເທິງໃຫ້ ລຳລຽງແບກຫາບຂົນສົ່ງອາວຸດ, ລູກກະສຸນ, ສະບຽງອາຫານ, ເຄື່ອງນຸ່ງຫົ່ມໃຫ້ ແກ່ທະຫານທີ່ກຳລັງສູ້ຮົບຢູ່ແນວໜ້າເຊັ່ນວ່າ: ພູແຄ, ບ້ານຖ້ຳ, ບ້ານຫອຍ ແລະ ສົ່ງໃຫ້ອ້າຍນ້ອງກອງພັນ 116 ເຮັດໜ້າທີ່ສູ້ຮົບປົດປ່ອຍເມືອງງາມ, ຈາກນັ້ນ ໄດ້ຕັ້ງທັບຢູ່ຖ້ຳຜາໂຖນ ເມືອງຄູນ, ແຕ່ລະມື້ ສັດຕູໄດ້ໃຊ້ປືນໃຫຍ່ 105 ມມ. ຍິງ ໃສ່ບໍລິເວນບ່ອນຕັ້ງທັບບໍ່ຂາດສາຍ ເຮັດໃຫ້ເອື້ອຍນ້ອງມີຄວາມຢ້ານກົວ ແລະ ວິຕົກກັງວົນ. ມື້ໜຶ່ງປາກຖ້ຳບ່ອນພັກທັບນັ້ນເຈື່ອນລົງ ອັດເສັ້ນທາງເຂົ້າ-ອອກ ຍິ່ງເຮັດໃຫ້ເອື້ອຍນ້ອງບາງຄົນບໍ່ທຸ່ນທ່ຽງ, ຂະນະດຽວກັນ ພວກທະຫານຝ່າຍ ລຽງຈັນກໍ່ປິດລ້ອມເຂົ້າມາໃກ້, 2 ມື້ຕໍ່ມາກໍ່ມີກອງທະຫານໄປຕ້ອນເອົາເອື້ອຍນ້ອງ ອອກຈາກຖ້ຳຜາໂຖນດ້ວຍຄວາມປອດໄພ.

ວັນທີ 4-8/6/1969, ຝ່າຍລຽງຈັນນຳໃຊ້ກອງພັນ 14B ແລະ15B ຕີ ຍຶດເອົາພູຫົວຊ້າງ, ພູແຊວ, ພູຂຽວ, ພູໜູສາວ, ເອົາກຳລັງເຄື່ອນຕາມເສັ້ນທາງ ເລກ 7 ນັບແຕ່ 3 ແຍກສາລາພູຄູນ ເຖິງເມືອງສູຍ ພ້ອມດຽວກັນນີ້ກໍ່ໃຊ້ຍົນເຮລິ ກົບແຕ ມາໂຢດທະຫານລົງຍຶດເອົາຫຼາຍຈຸດທີ່ສຳຄັນ ເທິງພູພຽງຊຽງຂວາງ.

.....

*58 ຄຳບອກເລົ່າຂອງ ນາງອ່ອນສີ ມະນີວົງ*

ວັນທີ 14/6/1969 ເພື່ອປົກປັກຮັກສາຈຸດຍຸດທະສາດທີ່ສຳຄັນ ຢູ່ຂອບເຂດທົ່ງໄຫຫີນໄວ້ ຄະນະພັກການທະຫານສູນກາງ ຕົກລົງເປີດບັ້ນຮົບທົ່ງໄຫຫີນ-ເມືອງສູຍ ແນໃສ່ເພື່ອດັບສູນກຳລັງດິບຂອງສັດຕູຈຳນວນໜຶ່ງ, ປົດປ່ອຍເມືອງສູຍ ພູວົງ ກ້າວໄປປົດປ່ອຍພູຄູນ ເພື່ອຮັກສາເສັ້ນທາງເລກ 7 ແນໃສ່ຮັບປະກັນແຜນສູ້ຮົບ ແລະ ຊ່ວຍໜູນໃຫ້ແກ່ການສູ້ຮົບໄດ້ຮັບໄຊຊະນະ.

ເຖິງວັນທີ 4/7/1969 ກອງທັບປົດປ່ອຍປະຊາຊົນລາວສາມາດປົກປັກຮັກສາຊຸງຂວາງ-ເມືອງສູຍຢ່າງສົມບູນ. ໃນທົ່ວບັ້ນຮົບຊຸງຂວາງ-ເມືອງສູຍ ເທື່ອນີ້ ສາມາດປັດເຂ່ຍສັດຕູອອກຈາກວົງສູ້ຮົບ 1.312 ຄົນ ຈັບເປັນຊະເລີຍ 287 ຄົນ ຍຶດປືນຊະນິດຕ່າງໆ 226 ກະບອກ, ລົດຂົນສົ່ງ 25 ຄັນ, ລົດຕັງ 4 ຄັນ, ທຳລາຍປືນໃຫຍ່ (155 ມມ. ແລະ 105 ມມ.) 13 ກະບອກ, ຍິງຍົນຕົກ 8 ລຳ .

ແຕ່ວ່າ ດ້ວຍສັນດານເຈັບບໍ່ຫຼາບ ຕາຍບໍ່ຈື່ ພາຍຫຼັງປັບປຸງກຳລັງຄືນໃໝ່ ເຖິງ ທ້າຍເດືອນ 8/1969 ອາເມຣິກາ ແລະລູກມືກໍ່ເລີ່ມປະຕິບັດ **ບັ້ນຮົບກູ້ກຸງດ ຊຶ່ງເປັນບັ້ນເຄື່ອນທັບຂະໜາດໃຫຍ່ທີ່ສຸດບໍ່ເຄີຍມີຈັກເທື່ອໃນການດຳເນີນຍຸດທະສາດ "ສົງຄາມພິເສດເພີ່ມທະວີ"ຂອງອາເມຣິກາໃນລາວ** ເພື່ອຍຶດເອົາ ທົ່ງໄຫຫີນໃຫ້ໄດ້. ພວກເຂົາໃຊ້ກຳລັງ 18 ກອງພັນ 52 ກອງຮ້ອຍກຳລັງພິເສດ, ແລະ ທະຫານໄທຍ 5.000 ຄົນໂດຍມີອາເມຣິກາ 100 ຄົນບັນຊາໂດຍກົງບຸກຕິເຂົ້າຊຸງຂວາງ 3 ປີກຄື: ປີກ 1 ຈາກຊຳທອງ ລ້ອງແຈ້ງ ບຸກທັ່ງເຂົ້າທົ່ງໄຫຫີນ, ປີກ 2 ຈາກທິດເໜືອຕີເຂົ້າພູນົກກົກ ທິດຕາເວັນອອກໜອງເປັດ (27 ກມ. ຈາກທົ່ງໄຫຫີນ) ເພື່ອປິດເສັ້ນທາງເລກ 7 ທີ່ມາຈາກຫວຽດນາມ ແລະ ຊຳເໜືອ ແລະປີກທີ 3 ຈາກທິດໃຕ້ ຕີເຂົ້າສັນນ້ອຍແທ່ນພູນ (30 ກມ. ຈາກທົ່ງໄຫຫີນ). ເກືອບເວົ້າໄດ້ວ່າບັນດາປ້ອມພູ ແລະຈຸດສຳຄັນຖືກພວກເຂົາຢຶດໄດ້ໝົດ. ຂະນະທີ່ກຳລັງກອງທັບປົດປ່ອຍປະຊາຊົນລາວ ກຳລັງທ້ອງຖິ່ນ ແລະ ກຳລັງກອງໜອນແມ່ນຕົກຢູ່ໃນວົງລ້ອມຂອງພວກເຂົາ.

ໃນບັ້ນເຄື່ອນທັບນີ້ ພວກເຂົາປະຕິບັດຍຸດທະການ 3 ກັ່ງຄື: **ຈູດກັ່ງ, ທຳລາຍກັ່ງ ຂ້າກັ່ງ"** ພ້ອມໆກັບການໃຊ້ທະຫານບຸກບຸງດຍຶດທາງພາກພື້ນດິນນັ້ນ

ພວກເຂົາກໍ່ລະດົມປືນໃຫຍ່ ແລະຍົນ ລວມທັງຍົນຍຸດທະສາດເບ 52 ຖິ້ມລະເບີດ 200 ກວ່າຖ້ຽວຕໍ່ມື້, ບາງມື້ກໍ່ເພີ່ມຂຶ້ນເປັນ 400 ຖ້ຽວລຳ ຖອກເທລະເບີດຊະນິດຕ່າງໆ ທັງອາຍພິດເຄມີລົງທຳລາຍ ອັນໄດ້ສ້າງຄວາມເສຍຫາຍແກ່ຜືນແຜ່ນດິນ ຫ້ວຍນ້ຳອັງປາ ໄຮ່ນາຮົ້ວສວນເຮືອນຊານບ້ານຊ່ອງ ວັດວາອາຮາມ ຈົນບໍ່ເຫຼືອຫຼໍ. ເຂດທີ່ຖືກທຳລາຍໜັກໜ່ວງສຸດແມ່ນ: ລາດບອກ, ບ້ານວຽງ, ບ້ານຄອນ, ຄັງໄຂ, ໂພນສະຫວັນ, ບ້ານຢອນ, ບ້ານໂຕນ, ບ້ານສີ, ນາຊູ, ເມືອງແປກ, ເມືອງພ່າງ, ເມືອງງາມ, ບ້ານກົ່ງ, ບ້ານກົ້ວ, ເມືອງຄູນ, ບ້ານບານ, ນ້ຳມັດ, ນ້ຳຕຽນ, ຫ້ວຍຊ່ວງ, ເມືອງຄຳ...

ບັນດາເຮືອນຊານບ້ານຊ່ອງ ວັດວາອາຮາມ ໂຮງຮຽນ ໄຮ່ນາ ລ້ວນຖືກຈູດເຜົາທຳລາຍ ງົວຄວາຍສັດສາວາສິ່ງລົ້ມຕາຍກາງທົ່ງໄຮ່ທົ່ງນາ. ປະຊາຊົນໃນເຂດເມືອງຄຳ ເມືອງແປກ ເມືອງຄູນ ແຂວງຊຽງຂວາງຫຼາຍກວ່າ 16.000ຄົນ ຈຳເປັນຕ້ອງອົບພະຍົບໄປຢູ່ເມືອງແສນ ເຫງະອານ (ຫວຽດນາມ) ແລະແຫ່ງອື່ນໆທີ່ປິດລັບ. ສ່ວນປະຊາຊົນອີກຈຳນວນຫຼາຍພັນຄອບຄົວ ກໍ່ຖືກຝ່າຍວຽງຈັນ ປະຕິບັດຕາມອຸບາຍ **"ສະນ້ຳເພື່ອເອົາປາ"** ກວາດຕ້ອນເອົາຂຶ້ນຍົນລົງໄປຢູ່ໃນ **"ສູນອົບພະຍົບ"** ທີ່ຕັ້ງຢູ່ລຽບຕາມແມ່ນ້ຳຂອງເຂດປາກຊັນ-ວຽງຈັນ.

ເຖິງວ່າຈະຖືກປິດລ້ອມ ແລະຊ້ອນແຂ້ວຫວີກັນຢູ່ ແລະພົບກັບຄວາມລຳບາກຫຼາຍປະການຍ້ອນເປັນລະດູຝົນ ແຕ່ກອງກຳລັງປະກອບອຸດ ແລະປະຊາຊົນຊາວຊຽງຂວາງກໍ່ໄດ້ຕ້ານຢັນການບຸກຍຶດ ແລະກໍ່ຄວາມເສຍຫາຍແກ່ພວກເຂົາບໍ່ໜ້ອຍ ສະເພາະ 3 ເດືອນທຳອິດໄດ້ຕີສັດຕູ 200 ຄັ້ງປັດເຂ່ຍພວກເຂົາອອກຈາກວົງສູ້ຮົບ 2.000 ກວ່າຄົນ, ຍິງຍົນຕົກ 2 ລຳ ແລະຍຶດອາວຸດຊະນິດຕ່າງໆ.

ຕໍ່ໜ້າສະພາບການດັ່ງກ່າວ, ຄະນະພັກການທະຫານສູນກາງໄດ້ອອກຄຳສັ່ງຮຽກຮ້ອງໃຫ້ທຸກພາກສ່ວນເຊັ່ນ: ນັກຮຽນຮູ້ ນັກສຶກສາ, ພໍ່ແມ່ປະຊາຊົນ, ຂ້າລາຊະການໃນທົ່ວປະເທດເວົ້າລວມ, ສະເພາະແມ່ນຊາວຊຽງຂວາງ ຈົ່ງລຸກຂຶ້ນຈັບອາວຸດ ເພື່ອຕໍ່ສູ້ປົດປ່ອຍປະເທດຊາດ ພາຍໃຕ້ຄຳຂວັນ ***"ທຸກສິ່ງທຸກຢ່າງເພື່ອແນວໜ້າ ທຸກສິ່ງທຸກຢ່າງເພື່ອຕີເອົາຊະນະຈັກກະພັດອາເມຣິກາ"***

ຕອບສະໜອງຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ ແລະ ເງື່ອນໄຂສະພາບການໃນເວລານັ້ນ, ປະຊາຊົນຊາວຊຽງຂວາງ ບໍ່ວ່ານ້ອຍ ຫຼື ໃຫຍ່, ເພດຊາຍ ແລະເພດຍິງ ໄດ້ພ້ອມກັນສະໝັກໃຈເຂົ້າປະກອບສ່ວນເປັນ ທະຫານ, ໃນນັ້ນມີເອື້ອຍນ້ອງຈຳນວນຫຼວງຫຼາຍໄດ້ສະໝັກເຂົ້າມາສັງກັດກອງ ລຳລຽງແບກຫາບ 368 ນັບມື້ຫຼາຍຂຶ້ນ ເຮັດໃຫ້ມີຈຳນວນພົນເຖິງ 200 ກ່ວາຄົນ.

ກອງລຳລຽງ 368 ເຮັດໜ້າທີ່ຢູ່ບັນດາເຂດເຫຼົ່ານັ້ນ ເປັນເວລາຫຼາຍເດືອນ ທາງກອງບັນຊາການທະຫານເຂດ ຈຶ່ງເອີ້ນກອງ 368 ກັບຄືນທີ່ຕັ້ງເກົ່າ ຕົມພູແຮ້ ເພື່ອປັບປຸງກຳລັງ ແລະປະກອບເອື້ອຍນ້ອງທີ່ໄປລະດົມມາໄດ້ຈຳນວນໜຶ່ງເຂົ້າ ຕົມແລ້ວ ກອງບັນຊາການທະຫານເຂດຊຽງຂວາງຈຶ່ງຕົກລົງຈັດຕັ້ງກອງລຳລຽງ ແບກຫາບເພດຍິງຂຶ້ນຕື່ມອີກ 1 ກອງຮ້ອຍ ຊຶ່ງມີການປະກາດສ້າງຕັ້ງ ໃນວັນທີ 15/7/1969 ຢູ່ຕົມພູແຮ້ ເມືອງແປກ ໂດຍມີທ່ານສີທົນ ມະໂນລາ, ແລະ ທ່ານ ຈຳນຽນ ບຸນລອດ ຄະນະຫ້ອງພະລາທິການທະຫານເຂດຊຽງຂວາງເຂົ້າຮ່ວມ ໂດຍຮຽກຊື່ກອງຮ້ອຍໃໝ່ນີ້ວ່າ ***" ກອງຮ້ອຍ 769 "*** (ຕາມເດືອນປີທີ່ສ້າງຕັ້ງ) ຂັ້ນເທິງໄດ້ແຕ່ງຕັ້ງຄະນະຮັບຜິດຊອບກອງຮ້ອຍໃໝ່ຄື:

ສະຫາຍ ນາງ ສີສຸກ ແກ້ວບຸນລ້ອມ ເປັນຫົວໜ້າການທະຫານ
ສະຫາຍ ນາງ ບົວພອນ [59] ເປັນຮອງຫົວໜ້າການທະຫານ
ສະຫາຍ ນາງ ຄຳໝັ້ນ ທາວົງລາດ ເປັນຫົວໜ້າການເມືອງ
ສະຫາຍ ນາງ ຈັນທະລາ ເປັນຮອງຫົວໜ້າການເມືອງ

ສ່ວນກອງລຳລຽງແບກຫາບ 368 ຍັງຮັກສາຮູບຮ່າງການຈັດຕັ້ງຄືເກົ່າ, ມີແຕ່ປ່ຽນແປງຄະນະບັນຊາຈຳນວນໜຶ່ງຄື:

ສະຫາຍ ນາງ ສີທົນ ເປັນຫົວໜ້າການທະຫານ
ສະຫາຍ ນາງ ທອງດີ ເປັນຫົວໜ້າການເມືອງ [60]
ກຳລັງພົນໃນກອງແບ່ງອອກເປັນ 3 ໜວດ ຄື:

.....

*59. ສະຫາຍ ຮ້ອຍໂທ ນາງບົວພອນ ພິມມະສອນ ເກີດປີ 1950 ບ້ານໂພນທອງ ເມືອງແປກ ແຂວງຊຽງຂວາງ, ຢູ່ບ້ານນາເຫຼົ້າ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ, ເຂົ້າການປະຕິວັດ 5/10/1963, ເຂົ້າພັກ 6/12/1968, ເຂົ້າສະມາຄົມແມ່ຍິງ 12/3/1968, ອອກພັກຜ່ອນຮັບບຳນານ ວັນທີ 30/1/1981 ເສຍຊີວິດແລ້ວ.*

ໝວດທີ 1 ບັນຊາໂດຍ ນາງ ບົວພາ.
ໝວດທີ 2 ບັນຊາໂດຍ ນາງ ບົວອັນ.
ໝວດທີ 3 ບັນຊາໂດຍ ນາງ ສີພາ.

ພາຍຫຼັງສັບຊ້ອນປັບປຸງການຈັດຕັ້ງແລ້ວ, ກອງ 368 ໄດ້ອອກຮັບໃຊ້ດ້ານຮົບແນວໜ້າ ເວົ້າສະເພາະແມ່ນເຂດພູກວຈອມເຫຼັກ, ໂດຍຈັດວາງກຳລັງຢູ່ບັນດາຈຸດຕາມການມອບໝາຍຄື:

ໝວດທີ 1 ຕັ້ງທັບຢູ່ເຂດບ້ານນາສົມ, ຮັບຜິດຊອບຂົນເຄື່ອງ ເຂົ້າປາອາຫານ, ເຄື່ອງນຸ່ງຫົ່ມ, ພາຫະນະອາວຸດ ແລະລູກກະສຸນ ໄປຮັບໃຊ້ສະໜາມຮົບທິດເມືອງສູຍ ບ້ານຫວດ ບ້ານຕັນ ແລະທິດນ້ຳຄານ ສົ່ງໃຫ້ກອງພັນທີ 1 ກອງພັນທີ 2, ກອງພັນ 13.

.....

*60. ສະຫາຍ ນາງ ທອງດີ ແກ້ວມຸງຄຸນ*

*ເກີດປີ 1947 ທີ່ບ້ານຍາບສີ ເມືອງແປກ ແຂວງຊຽງຂວາງ ບ້ານຢູ່ປັດຈຸບັນ ບ້ານແກ້ວກູ່ ເມືອງແກ້ວອຸດົມ ແຂວງວຽງຈັນ, ເປັນບຸດຂອງພໍ່ຊຽງອ່ອນ ແລະແມ່ຊົມ, ມີອ້າຍ-ເອື້ອຍນ້ອງ ຮ່ວມອຸທອນທັງໝົດ 9 ຄົນ. ເຂົ້າການປະຕິວັດວັນທີ 1/1/1963 ເບື້ອງຕົ້ນ ເຂົ້າເປັນພະນັກງານຂົນຂວາຍຂອງເມືອງ, ປີ1964 ເຂົ້າເປັນກອງຫຼອນຕາແສງ ສົມທົບກັບກອງພັນ 601 ປ້ອງກັນອາກາດເຮັດໜ້າທີ່ຕໍ່ສູ້, ປີ1965ເຂົ້ຳເປັນທະຫານເມືອງແປກຢູ່ໜ່ວຍຍິງຍົນຮ່ວມກັບກອງພັນ 601 ແລະ 605, ຕົ້ນປີ1968 ສູນກາງໄດ້ມາລະດົມເອື້ອຍນ້ອງ ໄປເຮັດໜ້າທີ່ລຳລຽງສະບຽງອາຫານອອກສູ່ແນວໜ້າ ສະຫາຍກໍແມ່ນຜູ້ໜຶ່ງທີ່ໄດ້ສະໝັກໃຈໄປເປັນກອງລຳລຽງແບກຫາບ. ຈາກນັ້ນເຂົ້າສັງກັດຢູ່ກອງລຳລຽງແບກຫາບ 368 ຕະຫຼອດໄລຍະສະຫາຍເຄື່ອນໄຫວຢູ່ກອງລຳລຽງແບກຫາບ 368 ສະຫາຍໄດ້ຊີ້ນຳ ນຳພາເອື້ອຍນ້ອງ ພະນັກງານ-ນັກຮົບເຄື່ອນໄຫວເຮັດໜ້າທີ່ຮ່ວມກັບກົມກອງອື່ນໆ ເຮັດສຳເລັດໜ້າທີ່ທີ່ການຈັດຕັ້ງ ຂັ້ນເທິງມອບໝາຍໃຫ້, ວັນທີ 26/2/1969 ເຂົ້າພັກສຳຮອງ, ວັນທີ 25/7/1970 ເຂົ້າພັກສົມບູນ, ປີ 1984 ຂັ້ນເທິງລະດົມໃຫ້ລົງກໍ່ສ້າງຮາກຖານຢູ່ເຂດລ່ອງລິ ສະຫາຍນາງ ທອງດີ ໄດ້ຖືກຕົກລົງຈາກສະຫາຍ ສີພອນ ຜາລີຂັນ ໃຫ້ລົງຂົນຂວາຍກໍ່ສ້າງຮາກຖານຢູ່ ແຂວງວຽງຈັນ, ຈາກນັ້ນ ປີ 1996 ຖືກຍົກຍ້າຍມາຢູ່ ຫ້ອງການຈັດຕັ້ງພັກ ພະນັກງານເມືອງແກ້ວອຸດົມ, ປີ1998 ພັກຜ່ອນຮັບເບ້ຍບຳນານ. ຕະຫຼອດໄລຍະແຫ່ງການ ເຄື່ອນໄຫວໄດ້ຮັບການຍ້ອງຍໍ: ຫຼຽນໄຊ ອິດສະລະ ຊັ້ນ II ຈຳນວນ 3 ໜ່ວຍ, ຫຼຽນໄຊພິລະອາດ ຫານຊັ້ນ II ຈຳ ນວນ 2 ໜ່ວຍ, ຫຼຽນໄຊ ຊະນະເລີດ 1 ໜ່ວຍ, ຫຼຽນກາຕໍ່ຕ້ານອາເມຣິກາ 1 ໜ່ວຍ, ຫຼຽນກາ 50 ປີ 1 ໜ່ວຍ, ໃບຍ້ອງຍໍຕ່າງໆຈຳນວນ 15 ໃບ.*

ໝວດທີ 2 ຕັ້ງທັບຢູ່ບ້ານຍົ່ມ, ໝວດນີ້ຂົນເຄື່ອງຂຶ້ນລົດ-ລົງລົດຈາກນັ້ນ ຍັງມີໜ້າທີ່ລຳລຽງເຄື່ອງຂອງ ສະບຽງອາຫານ, ອາວຸດ ແລະລຸກກະສຸນ ໄປສົ່ງ ໃຫ້ອ້າຍນ້ອງທະຫານກອງ 701 ກອງພັນທີ 1, ກອງພັນ 705 ທີ່ຈັ້ງທ່າ ຮັກສາ ພູກູດຈອມເຫຼັກ.

ໝວດທີ 3 ຕັ້ງທັບຢູ່ນາກູດ ມີໜ້າທີ່ລຳລຽງຂົນສົ່ງ ສະບຽງອາຫານ ອາ ວຸດ ກະສຸນໄປຮັບໃຊ້ແນວໜ້າ ເຂດໜອງຕັ່ງ, ນ້ຳປາຍ, ຄັງມະໂນ.

ນອກຈາກ ລຳລຽງໄປແນວໜ້າແລ້ວ, ກອງ 368 ຍັງປຸກຕັ້ງສາງມຽນ ເຄື່ອງ, ຂົນເຂົ້າລົງລົດແລ້ວເອົາໄປມຽນຢູ່ສາງ, ແຕ່ລະວັນເອື້ອຍນ້ອງກອງ 368 ຕ້ອງໄດ້ຂົນເຄື່ອງລົງລົດ ຄືນໜຶ່ງບໍ່ຕ່ຳກ່ວາ 10-20 ຄັນລົດ.

ທ້າຍເດືອນ 9/1969 ກອງປະຊຸມວາງແຜນເພື່ອເປີດບັ້ນຮົບຕ່າວໂຈມຕີ ສັດຕູໄດ້ໄຂຂຶ້ນ. **ບັນຫາສຳຄັນພິເສດຊຶ່ງທີ່ປະຊຸມໄດ້ພິຈາລະນາແມ່ນ ການຮັບ ປະກັນດ້ານພະລາທິການໃຫ້ກຳລັງພົນທີ່ເຂົ້າຮ່ວມສູ້ຮົບ ຊຶ່ງຢູ່ໃນສະໜາມຮົບທີ່ ກວ້າງຂວາງ ແລະການສູ້ຮົບອາດຈະແກ່ຍາວ ຂະນະທີ່ສັດຕູພ້ອມທີ່ຈະທຳລາຍ ດ້ວຍກຳລັງທາງອາກາດ ແລະກອງກຳລັງພິເສດ.**

ກອງບັນຊາການທະຫານເຂດຊຽງຂວາງ ພາຍໃຕ້ການຊີ້ນຳຂອງກອງ ບັນຊາການສູງສຸດກອງທັບປົດປ່ອຍປະຊາຊົນລາວ ໄດ້ຕົກລົງເປີດບັ້ນຮົບ 193 ຢູ່ບໍລິເວນທົ່ງໄຫຫີນ-ຊຽງຂວາງ, ຊຶ່ງປະກອບມີ ກອງພັນທີ 1, ທີ 2, 13, 24, 701, ກອງປັດໄຈ, ກອງພັນປືນໃຫຍ່ປ້ອງກັນອາກາດ, ກອງພັນປືນໃຫຍ່ໜ້າ ດິນ, ກອງຮ້ອຍລົດຕັງ, ກອງຮ້ອຍຕີພິເສດ, ກອງຊ່າງແສງ, ກອງສື່ສານ, ກອງ ລຳລຽງ, ເສນາທັກ ຂອງກອງທັບປົດປ່ອຍປະຊາຊົນລາວ, ກອງພັນ 15, 46, 48, ແລະບາງກອງທີ່ຮັບໃຊ້ສູ້ຮົບ ກຳລັງເປັນກາງຮັກຊາດ, ປະສານສົມທົບກັບ ທະຫານອາສາສະໝັກຫວຽດນາມ ແລະ ທະຫານທ້ອງຖິ່ນເຂດຊຽງຂວາງ ເຊິ່ງ ປະກອບມີທະຫານລາດກອງຫຼອນຕາແສງຄັງ-ຕາແສງຄາຍ(ເມືອງແປກ), ກອງ ລຳລຽງຂອງແຂວງ, ກອງລຳລຽງແບກຫາບ 368 ເຂົ້າຮ່ວມ.

ກ່ອນການເປີດ " **ບັ້ນຮົບ 139** " ປົດປ່ອຍຊຽງຂວາງນີ້ ທ່ານ ຄຳໄຕ ສີພັນດອນ ຜູ້ບັນຊາການສູງສຸດ ກອງທັບປົດປ່ອຍປະຊາຊົນລາວ ໄດ້ລົງມາຊີ້ນຳ ແລະໃຫ້ຄຳເຫັນຕໍ່ກອງປະຊຸມພະນັກງານ-ນັກຮົບວ່າ: *"ຍ້ອນທີ່ຕັ້ງ ແລະ ຍຸດທະສາດສຳຄັນ, ສັດຕູຈຶ່ງດິ້ດ້ານຮັກສາ ແລະຍາດແຍ່ງກັບພວກເຮົາ, ດັ່ງນັ້ນ ເພື່ອເອົາຊະນະສັດຕູ ພວກເຮົາຕ້ອງມີແຜນການລ່ວງໜ້າ, ແຜນການລະອຽດ ຕົວຈິງ, ເພື່ອປົກປັກຮັກສາບໍລິເວນທີ່ໄດ້ຮັບການປົດປ່ອຍໄວ້ໃຫ້ໄດ້ ຕ້ອງເບິ່ງ ບົດຮຽນຕົວຈິງຈາກໄຊຊະນະປົດປ່ອຍເມືອງສູຍ ໃນ 6 ເດືອນຜ່ານມາ"*

ສະນັ້ນການກະກຽມແກ່ກຳລັງຕ່າງໂຈມຕີແຕ່ລະຄັ້ງ, ສູນກາງພັກ, ກອງບັນຊາການສູງສຸດ ຝ່າຍປະເທດລາວ ໄດ້ເຕົ້າໂຮມທຸກກຳລັງທຸກຄວາມສາມາດ ທັງດ້ານວັດຖຸ ແລະຈິດໃຈ. ກອງທັບປົດປ່ອຍປະຊາຊົນລາວ ແລະ ກຳລັງເປັນກາງຮັກຊາດ ພ້ອມພໍ່ແມ່ປະຊາຊົນ ໄດ້ຕີສັດຕູດ້ວຍຄວາມພິລະອາດຫານ ເຖິງແມ່ນຈະດຳລົງຊີວິດຢູ່ກັບຂຸມລີ້ໄພ, ຢູ່ກັບຂຸມຄອງຕັ້ງທ່າປະເຊີນກັບການ ບຸກໂຈມຕີທາງໜ້າດິນ ແບບໜ້າຕໍ່ໜ້າກັບສັດຕູພາຍໃຕ້ທ່າລູກປືນ ໃຫຍ່ໜ້າ ດິນ, ລູກລະເບີດ, ລູກສອນໄຟຈາກການຍິງຄຸ້ມກັນຂອງຮູບແຖວສູ້ຮົບຂອງ ອາເມຣິກາ ບໍ່ເວັ້ນແຕ່ລະວັນ, ວັນລະ 100-150 ຖ້ຽວລຳ.

ແຕ່ນັກຮົບປະຕິວັດກໍ່ຕໍ່ສູ້ຢ່າງບໍ່ຮູ້ອິດ ຮູ້ເມື່ອຍ ປະເຊີນໜ້າກັບສັດຕູ ຢ່າງດຸເດືອດ ດ້ວຍຄວາມກ້າຫານຊານໄຊ, ເອົາເປັນ, ເອົາຕາຍ, ທົນແດດ, ທົນ ຝົນ, ທົນກັບຄວາມໜາວເຢັນຂອງລົມໜາວໃນລະດູຂອງພູພຽງເມືອງພວນ. ມີ ບາງມື້ອຸນຫະພູມລົດລົງເຖິງສູນອົງສາເຊ, ເຮັດໃຫ້ການຈັ້ງທ່າການເຄື່ອນທັບ, ການລຳລຽງຂົນສົ່ງສະບຽງອາຫານ ພົບກັບຄວາມຫຍຸ້ງຍາກທີ່ສຸດ. ສິ່ງທ້າທາຍ ທີ່ກ່າວມານັ້ນ ມັນບໍ່ສາມາດຈະເປັນອຸປະສັກໃຫ້ແກ່ກອງທັບ ແລະປະຊາຊົນ ຊາວເມືອງພວນຢ້ານກົວ, ຄອນແຄນ, ໄຫວຫວັ່ນ ແຕ່ຢ່າງໃດ, ກົງກັນຂ້າມສິ່ງ ຄາມຮຸກຮານຂອງອາເມຣິກາຍິ່ງດຸເດືອດ ຍິ່ງເຮັດໃຫ້ຄວາມຄຽດແຄ້ນເພີ່ມທະວີ ຂຶ້ນ, ຍິ່ງກ້າແກ່ນ, ຍິ່ງເດັດດ່ຽວ, ຍິ່ງທົນທານຄື "ພ້າທີ່ຊຸບແລ້ວ" ດັ່ງຄຳສຸພາສິດ ທີ່ວ່າ"ໄຟທົດລອງຄຳ-ນ້ຳໃຈທົດລອງແຮງ"ເທິງດິນແດນຂອງແຂວງຊຽງຂວາງ, ບົນທົ່ງຫຍ້າປ່າແປກບໍລິເວນທົ່ງໄຫຫີນໄດ້ເຮັດໃຫ້ເກີດມີຄົນໃຈກ້າ, ສູ້ແດດທົນ

ຝົນ, ສູ້ກັບຄວັນໝື້ລູກລະເບີດຂອງຈັກກະພັດອາເມຣິກາຜູ້ຮຸກຮານທີ່ຮັ່ງມີ ແລະ ຮ້າຍກາດກວ່າໝູ່ຢູ່ໃນໂລກຂອງສະຕະວັດທີ 20.

ວັນທີ 25/10/1969 ບັ້ນຮົບຕ່າວໂຈມຕີ ໂດຍໃສ່ຊື່ວ່າ **" ບັ້ນຮົບ 139 "** ໄລຍະທີ 1 ຂອງກຳລັງກອງທັບປົດປ່ອຍ ແລະ ປະຊາຊົນຊຽງຂວາງ ສົມທົບກັບ ກອງອາສາສະໝັກຫວຽດນາມ ໄດ້ເລີ່ມຕົ້ນຈາກເຂດສັນນ້ອຍ, ແທ່ນພູນ, ພູເພິ້ງ ລາດບວກ ແລະ ເຂດບ້ານສ້ອມ ເຮັດໃຫ້ພວກສັດຕູແຕກຖອຍມາຮັກສາຢູ່ເຂດ ສາມແຍກໜອງເປັດ. ຂະນະດຽວກັນກໍ່ຕີພູນົກກົກ ກໍ່ລວງ, ແທ່ນພູນ ພູຈອງວອງ ແກ່ວທ້ອມແລະບາງຈຸດໃນໃຈກາງເມືອງຊຽງຂວາງ...ເຮັດໃຫ້ພວກເຂົາແຕກໜີ ຄືນໄປຊຳທອງ-ລ້ອງແຈ້ງ. ບັ້ນຮົບໄລຍະທີ 1 ສິ້ນສຸດລົງໃນວັນທີ10/ 2/1970.

ອີກ 6 ວັນຕໍ່ມາ 16/10/1969 ກອງທັບ ແລະປະຊາຊົນຊາວຊຽງຂວາງ ກໍ່ໄຂໄລຍະທີ 2 ຂອງບັ້ນຮົບ ແຕ່ກໍ່ຕ້ອງຜະເຊີນກັບກຳລັງສັດຕູທີ່ເພີ່ມຂຶ້ນ ຍ້ອນ ພວກເຂົາໄດ້ສົ່ງກຳລັງເສີມ ໃນນັ້ນມີກຳລັງຝ່າຍຂວາວຽງຈັນ 18 ກອງພັນ, ແລະ 50 ກອງພັນອາເຊ ຂອງວ່າງປາວ, ກອງທະຫານໄທ ພ້ອມທັງກຳລັງທຳລາຍ ທາງອາກາດທີ່ໜັກໜ່ວງຮຸນແຮງກວ່າເກົ່າ. ເຖິງຢ່າງໃດກໍ່ຕາມ 13 ປ້ອມທີ່ຕັ້ງຢູ່ ໃຈກາງທົ່ງໄຫຫີນກໍ່ຖືກຕີພາບດຽວ, ບັນດາທີ່ຕັ້ງສຳຄັນເຊັ່ນ: ພູນົກກົກ, ກໍ່ລວງ, ພູຫວດ, ສາມແຍກໜອງເປັດ, ພູເຕີ່ງ ນ້ຳໂຄ້ ຈຸດສູງ 1.505 ກໍ່ສີ... ລ້ວນຖືກ ຍຶດຄືນໝົດ, ບັນດາກອງກຳລັງທີ່ຕັ້ງດັກສະກັດຢູ່ຕາມເສັ້ນທາງ ເລກ 7A ແລະ 7B ກໍ່ແຕກໜີ ເຮັດໃຫ້ລົດຕັງ ແລະການລຳລຽງຂົນສົ່ງຈາກເບື້ອງຫຼັງໄດ້ເຂົ້າເຖິງ ສະໜາມຮົບ.

ຕໍ່ຈາກນັ້ນກໍ່ຕີເຂົ້າພູຄ້ວ, ພູສັນ, ພູສະຖານີວິທະຍຸກະຈາຍສຽງ, ພູແຮ້, ແລະ ຕີເຂົ້າທົ່ງໄຫຫີນ, ລ້ອງແຈ້ງ ທີ່ເປັນເຮືອນຮັ່ງ ຂອງກຳລັງພິເສດວ່າງປາວ ທຳລາຍຍົນ 12 ລຳ ໃນນັ້ນເຕ 28 ມີ 5 ລຳ, ບ້ານອ່າງ, ບ້ານໂປດ, ເມືອງປານ, ແສນຫຼວງ, ພູຂີ້ມິດ, ບ້ານນາ, ພູຫ້ວຂ້າງ ແລະເມືອງສູຍ.

ໄລຍະທີ 3 ນັບແຕ່ວັນທີ 26/2-25/4/1969 ໄດ້ຫຼອນຕີພວກສັດຕູຢູ່ ພູຜາຊາດ, ສັນຫຼວງ, ຫີນຕັ້ງ, ຖ້ຳຕຳລຶງ, ຫີນດຳ, ຊຳທອງ, ບວມຫຼົ້ງ, ພູຫົ້ງຊີ້ງ, ນ້ຳແຈ້ງ, ເດີ່ນບິນແສນຫຼວງ, ເດີ່ນບິນຫ້ວຍຊັນ.

ສຳເລັດບັ້ນທີ 3 ນີ້ ສາມາດປັດເຂ່ຍສັດຕູອອກຈາກວົງສູ້ຮົບ 60.668 ຄົນ, ດັບສູນກ້ຽງ 5 ກອງພັນ, ເສຍຫາຍໜັກ 10 ກອງພັນ, ຍິງຍົນຕົກ ແລະເປ່ເພ 117 ລຳ, ຍຶດ ແລະທຳລາຍປືນຊະນິດຕ່າງໆ 579 ກະບອກ ແລະອຸປະກອນສົ່ງ ຄາມອື່ນໆ ປົດປ່ອຍດິນແດນ 60.000 ຕາຮາງກິໂລແມັດ, ປະຊາຊົນ 16.000 ຄົນ ເຮັດໃຫ້ເຂດປົດປ່ອຍເຊື່ອມຕໍ່ແຕ່ທົ່ງໄຫຫີນ-ຊ່ຽງຂວາງ ເມືອງສູຍ, ຊຳທອງ ທິດໃຕ້ກາງແສນ, ສັນຈໍ-ຊຳເໜືອ ແລະ 4 ແຂວງພາກເໜືອ.

ການປະລາໄຊໃນ " ບັ້ນຮົບກ້ຽງດ " ເປັນການໂມ່ງບາດຄ້ອນອັນໜັກ ໜ່ວງເຂົ້າໃສ່ " ກຳລັງພິເສດ " ກໍ່ຄືທິດສະດີ " ນິກເຊີນ " ຢູ່ລາວ ອັນໄດ້ເຮັດໃຫ້ ອາເມຣິກາ ແລະພວກຫຸ່ນວຽງຈັນນັບມື້ຕົກເຂົ້າໃນທ່າປະລາໄຊ.

ໃນບັ້ນຮົບນີ້ ບັນດາເອື້ອຍນ້ອງກອງ 368 ໄດ້ອອກແຮງປະກອບສ່ວນ ລຳລຽງຂົນສົ່ງແບກຫາບເຂົ້າປາອາຫານ, ອາວຸດຍຸດໂທປະກອນ ໃຫ້ກຳລັງທະຫານ ຢູ່ແນວໜ້າ ເຖິງວ່າເສັ້ນທາງການລຳລຽງນັ້ນຈະຫຍຸ້ງຍາກ, ທຸລະກັນດານ, ຍາວ ໄກ, ຂຶ້ນພູລົງຫ້ວຍ, ບຸ່ປ່າລຽບໄປຕາມຮ່ອມຫ້ວຍ, ຕົນໂຕປຽກຊຸ່ມ, ມີຫາກກັດ ຍຸງກິນ, ມີບາງຄັ້ງນຸ່ງເຄື່ອງຊຸດດຽວກຸ້ມເປັນອາທິດ, ນ້ຳບໍ່ໄດ້ອາບ, ຫົວເຕັມແຕ່ ເຫົາ, ຕີນ-ມື ມີແຕ່ຕຸ່ມຄັນຄາຍ, ຂີ້ຫິດ-ຂີ້ກາກ, ເຄື່ອງນຸ່ງເກີດມີໂຕໝັດໂຕເມັນ.

ທ້າຍປີ 1969 ກອງລຳລຽງແບກຫາບ 368 ໄດ້ອອກຮັບໃຊ້ດ້ານຮົບ ພູກູດ ເຊິ່ງມີກອງພັນ 13, ກອງພັນ 701 ຮັກສາຢູ່ປ້ອມດັ່ງກ່າວ, ອ້າຍນ້ອງທີ່ຢູ່ ເທິງປ້ອມເຄື່ອນໄຫວຫຍັງບໍ່ໄດ້ ເພາະສັດຕູປິດລ້ອມທັງ 4 ດ້ານ: ທາງໜ້າດິນ, ທາງອາກາດພວກເຂົາໃຊ້ເຮືອບິນສອດແນມ ແລະເຮືອບິນສູ້ຮົບບິນມາ ຄືຝູງມົດ ຝູງປອກ ແລ້ວຫ່ານລູກແຕກລູກໂບມລົງແບບປ່ວງບ້າ ເຮັດໃຫ້ຕົ້ນໄມ້ໃນຂອບ ເຂດນັ້ນລົ້ມໄຂ່ວ່ຂົນກັນແລ້ວເກີດໄຟໄໝ້, ເຮັດໃຫ້ກາຍເປັນພູປອກໂຫຼ້ນ.

ການລຳລຽງທິດນີ້ ບັນຊາໂດຍສະຫາຍ ນາງ ບົວພາ ຫົວໜ້າໝວດທີ 1 ກຳລັງໄດ້ຕັ້ງທັບຢູ່ເຂດບ້ານຍົ່ມ ການລຳລຽງຂົນສົ່ງຄັ້ງນີ້ ສ່ວນໃຫຍ່ແມ່ນລູກປືນ ແຕ່ລະຄົນເປ້ເຄື່ອງຂອງໜັກປະມານ 20 ກິໂລ ບວກໃສ່ແກັດລູກປືນໜັກປະມານ 50 ກິໂລຕື່ມອີກ, ສະແດງວ່າຄົນໜຶ່ງຕ້ອງເປ້ເຄື່ອງແຕ່ 50-80 ກິໂລ.

ໝວດທີ 2 ບັນຊາໂດຍ ນາງບົວວັນ, ມີສຳນັກງານຕັ້ງຢູ່ບ້ານຍົ່ມ ມີໜ້າທີ່ກໍ່ສ້າງສາງມຸ້ງນເຄື່ອງ, ຂົນເຄື່ອງລົງລົດ ແລະຈັດມຸ້ງນເຂົ້າສາງ, ໂດຍສະເພາະແມ່ນເຂົ້າກິນ, ສະບຽງອາຫານ, ອາວຸດຍຸດໂທປະກອນລົງຈາກຂະບວນລົດ ທີ່ບັນດາປະເທດສັງຄົມນິຍົມ ແລະເພື່ອນມິດ ໃຫ້ການຊ່ວຍເຫຼືອທີ່ຜ່ານມາ ທາງທ່ຽງດນາມແລ້ວເຂົ້າສູ່ລາວ.

ແຕ່ລະຄືນພໍເຖິງເວລາປະມານ 20ໂມງ ຂະບວນລົດຈາກສສ. ທ່ຽງດນາມ ຈະມາຮອດທີ່ຕັ້ງສາງມຸ້ງນເຄື່ອງແຕ່ລະຈຸດ ໝວດ 2 ຂອງກອງລຳລຽງແບກຫາບກໍ່ຈະເລີ່ມເຮັດວຽກໂລດ, ຂະບວນລົດລຳລຽງຂົນສົ່ງນັ້ນ ແຕ່ລະເທື່ອມາກໍ່ຫຼາຍຄັນບໍ່ຕ່ຳກ່າວ 50-100 ຄັນ. ສະນັ້ນ ສະເລ່ຍແລ້ວເອ້ຍນ້ອງຄົນໜຶ່ງຕ້ອງແບກເຂົ້າ, ເຄື່ອງຂອງພາຫະນະອາວຸດ ລົງລົດປະມານ 5-10 ຄັນລົດ, ຄວາມໜັກ ຄວາມເມື່ອຍບໍ່ໃຫ້ເວົ້າ ຊ້ຳບໍ່ພໍໃນຂະນະທີ່ພວມຂົນເຄື່ອງລົງຈາກລົດນັ້ນ ໂຈນອາກາດອາເມຣິກາພັດບິນເວີ່ນມາຍິງລູກຈ້ອງໄຟ ເຮັດໃຫ້ເຂດນັ້ນແຈ້ງປານກາງເວັນ, ສະນັ້ນ ຈ່ຶງຕ້ອງຮີບຮ້ອນຂຸ້ນຂ້ຽວຂົນລົງຈາກລົດໄວເທົ່າໃດຍິ່ງດີ ເພາະຢ້ານໂຈນອາກາດອາເມຣິກາຈະຖິ້ມລະເບີດລົງໃສ່.

ໝວດທີ 3 ບັນຊາໂດຍ ນາງອ່ອນສີ ນຳກຳລັງໄປປະຈຳຢູ່ດ້ານຮົບພູລາດໄຕ ບ້ານແລ ເມືອງເສ້ງ, ພະລາທິການດ້ານຮົບຕັ້ງຢູ່ເຂດບ້ານຮົ່ມ, ບ້ານໜອງ ໂດຍມີທ່ານ ສີພອນ ພາລີຂັນ ຄະນະບັນຊາການດ້ານຮົບພັກທັບຢູ່ຫັ້ນ. ໝວດນີ້ເຮັດໜ້າທີ່ລຳລຽງຂົນສົ່ງສະບຽງອາຫານ, ອາວຸດ ແລະລູກກະສຸນ ຈາກບ້ານແຫ້ວ ເມືອງເຄິ່ງໄປທ່ຽງທິດນາກູດ, ນ້ຳປາຍ, ຄັ້ງມະໂນ. ເພື່ອໃຫ້ກອງພັນທີ 2, ກອງພັນ 15.

ເວລາໄປລຳລ່ຽງນັ້ນ ມື້ໜຶ່ງ ມີໜຶ່ງສະຫາຍບາດເຈັບຍ້ອນຖືກໜາກມິນຂອງສັດຕູແຕກໃສ່ ແລະໃນເວລາອ້າຍນ້ອງຕີສັດຕູຢູ່ພູລາດໄຕ ບ້ານແລ ເມືອງເສັງນັ້ນ ໄດ້ນຳເອົາເດັກນ້ອຍ 2 ຄົນທີ່ຕົ້ນໂຕຈ່ອຍເຫຼືອງ ຜິວໜັງມີແຕ່ຕຸ່ມຕໍ ມາໃຫ້ພວກເອື້ອຍນ້ອງຊ່ວຍລ້ຽງດູ, ເອື້ອຍນ້ອງໄດ້ເອົາໃຈໃສ່ລ້ຽງດູ ດ້ວຍຄວາມຮັກແພງເປັນເວລາ 2 ເດືອນແລ້ວຈຶ່ງສົ່ງເດັກນັ້ນໄປສູ່ແນວຫຼັງທີ່ປອດໄພກວ່າ.

ການລຳລ່ຽງແບກຫາບແຕ່ລະທິດຂອງກອງ 368 ເອື້ອຍນ້ອງແຕ່ລະຄົນເວົ້າໄດ້ວ່າ ເຮັດວຽກເທົ່າກັບຜູ້ຊາຍ, ຂົນເຂົ້າລົງລົດກໍ່ບໍ່ແມ່ນຂອງງ່າຍ, ຂະບວນລົດມາຮອດສາງເຂົ້າ ເອື້ອຍນ້ອງກໍ່ຟ້າວດຶງເຂົ້າລົງຈາກລົດກອງໄວ້ ເພື່ອໃຫ້ຂະບວນລົດຟ້າວກັບໄປ ເພື່ອຫຼົບຫຼີກການຖິ້ມລູກລະເບີດຂອງໂຈນອາກາດອາເມຣິກາ, ຈາກນັ້ນ ຈຶ່ງພາກັນຂົນເຂົ້າມ້ຽນສາງ.

ການຂົນເບື້ອງຕົ້ນ (ໂດຍສະເພາະຜູ້ເຂົ້າມາໃໝ່) ເຂົ້າເປົ້າໜຶ່ງ 4 ຄົນຫາມ ແຕ່ເນື່ອງຈາກໂຈນອາກາດອາເມຣິກາມາຍິງທຳລາຍ ທັງກາງເວັນ ແລະກາງຄືນ. ເຮັດວຽກຕ້ອງຮີບຮ້ອນ ການຫາມ 4 ຄົນນັ້ນ ບໍ່ຄ່ອງແຄ້ວ ທັງຢ້ານຍົນຫວ່ານລູກລະເບີດລົງໃສ່ ແລະທັງຢ້ານບໍ່ແລ້ວວຽກກ່ອນຟ້າແຈ້ງ, ສະນັ້ນ ເອື້ອຍນ້ອງຈຶ່ງລົດຈາກ 4 ຄົນມາຫາມ 2, ຫຼາຍມື້ຕໍ່ມາກໍ່ເອົາຜູ້ລະເປົ້າແບກໃສ່ຫຼັງ(ເອົາກາງຫຼັງເຮັດບ່າເພື່ອແບກ) ຂົນແບບນັ້ນຈົນສຳເລັດຕາມການມອບໝາຍ.

ຂະບວນລົດ ທີ່ມາສົ່ງເຂົ້າແຕ່ລະຄັ້ງມີຫຼາຍຄັນ. ພາກສ່ວນຂົນເຄື່ອງອຸປະໂພກ-ບໍລິໂພກກໍ່ເໜືອນກັນ, ແກັດປ່ອງປາ, ປອງຊີ້ນງົວ, ຊີ້ນປາ, ຊີ້ນແກະ, **ເຂົ້າໜົມເລືອງໂຄ**[61] ແລະເຄື່ອງຂອງຕ່າງໆ ແກັດໜຶ່ງໆກໍ່ບໍ່ຕ່ຳກ່ວາ 30-50 ກິໂລ, ຖ້າຜູ້ໃດເປັນຄົນນ້ອຍ ແນມໄປເຫັນແຕ່ແກັດເຄື່ອງກໍ່ເຫຼືອໂຕຄົນແລ້ວ, ການຂົນເຄື່ອງແຕ່ລະຄັ້ງເກືອບເວົ້າໄດ້ວ່າໃຊ້ເວລາ 8-10 ຊົ່ວໂມງ ( ຂົນແຕ່ 7 ໂມງແລງຈົນເຖິງ 5 ໂມງເຊົ້າ ). ສຳລັບແກັດລູກປືນ, ຖ້າເປັນລູກປືນອາກາ, ລູກປືນກຣາບິນ ເປັນແກັດນ້ອຍກໍ່ໄຄແນ່ ໜັກພຽງແຕ່ 20-30 ກິໂລ, ແຕ່ຖ້າແມ່ນ

.....

*61. ກ້ອນອາຫານແຫ້ງ ປ່ຽງກວ້າງປະມານ 3-4 ຊມ. ໜາປະມານ 1,5 ຊມ ຍາວປະມານ 10 ຊມ. ສຳລັບໃຫ້ທະຫານກິນໃນປາງສົງຄາມ, ກິນແລ້ວອີ່ມຄ້າຍຄືໄດ້ກິນເຂົ້າ*

ແກ້ດລູກປືນໃຫຍ່ ຫຼື ແກ້ດປືນ, ບາງແກ້ດຫາມ 4 ຍັງບໍ່ຂຶ້ນ, ຖ້າຈະງັດແກ້ດແບ່ງກັນຂົນ ພັດຢ້ານລູກປືນເສຍຄຸນ ແລະບໍ່ຮັບປະກັນຄວາມປອດໄພ, ແຕ່ປານນັ້ນ ເອື້ອຍນ້ອງກອງລ່ຳລຽງແບກຫາບ 368 ກໍ່ໄດ້ຕັດສິນໃຈ ພ້ອມກັນຫາບ ພ້ອມກັນແກ່ ພ້ອມກັນດຶງພ້ອມກັນກຸມປ່ຳ ເຮັດຄືປອກຄືມົດຈົນສຳເລັດຫຼ້ອນໜ້າທີ່.

ສຳລັບພາກສ່ວນລ່ຳລຽງຂົນສົ່ງອອກສູ່ສະໜາມຮົບ ກໍ່ບໍ່ແມ່ນຂອງງ່າຍໆຄືກັນ, ຜູ້ໜຶ່ງໆແບກຫາບປະມານ 50 ກິໂລຂຶ້ນໄປ, ແຕ່ລະຄົນເປ້ບາໂລກົ້ນກອກ (ບາໂລປູມຄວາຍ ຫຼື ບາໂລຖົ່ງ ) ບາໂລ 1 ໜ່ວຍ ບັນຈຸເຂົ້າສານ 20 ກິໂລ, ປົດງົ່ນ້ຳ 1 ໜ່ວຍ, ຫໍ່ເຂົ້າແຫ້ງ (ເຂົ້າຈ້າວທຸງສຸກດີ ເອົາແພສະອາດຫໍ່ ແລ້ວປົບ ຫຼື ທຸບໃຫ້ນ້ຳທີ່ເຮົາທຸງເຂົ້ານັ້ນອອກໃຫ້ໝົດ ເພື່ອບໍ່ໃຫ້ມັນບູດ ຈຶ່ງສາມາດເອົາໄວ້ກິນດົນໄດ້) ໄຫ່ເຂົ້າ 10-15 ກິໂລ ມັດແປະຢ່ອນລົງຕາມສອງຟາກຂ້າງບາໂລ, ອີກ 1 ໄຫ່ບັນຈຸເຂົ້າ 10-15 ກິໂລກ່າຍໃສ່ເທິງບາໂລ ແລ້ວເອົາສົ້ນໄຫ່ເຂົ້າທັງສອງຟາດລົງຕາມບ່າທັງສອງເອົາມາທາງໜ້າ, ມີໝໍ້ທຸງຕົ້ມ 1 ໜ່ວຍ, ຖ້ວຍ, ບ່ວງ, ພິເສດຍັງມີປືນອາກາ ຫຼື ບໍ່ກໍ່ແມ່ນປືນ ເຊກາເຊ (CKC) 1 ກະບອກ ພ້ອມດ້ວຍລູກປືນເຕັມບັ້ງ. ຖ້າແມ່ນພາກສ່ວນຂົນອາວຸດ ແລະລູກກະສຸນ, ທາງຫຼັງເປ້ບາໂລມີເຄື່ອງຄົບຊຸດ, ບ່າແບກແກ້ດລູກປືນ ຍ່າງໄປຕາມທາງສູ່ຈຸດໝາຍເສັ້ນທາງກໍ່ນ້ອຍໆ (ທາງງົ່ວ-ຄວາຍ) ຊ້ຳພັດຍ່າງຕອນກາງຄືນ, ຕ້ອງໄດ້ຕັດເອົາຂອນໄມ້ຕາຍທີ່ມີເຫັດແສງ ຫຼື ຈັບແມງຫິ່ງຫ້ອຍມາຕິດໃສ່ບາໂລຂອງຜູ້ຍ່າງກ່ອນ ເພື່ອໃຫ້ແນມເຫັນກັນ, ສ່ວນຕອນກາງເວັນຕ້ອງລົງຂຸມຫຼົບໄພລີ້ຍົນ.

ໄລຍະນີ້ແມ່ນຍາມຝົນ ບາງມື້ຝົນກໍ່ຕົກແຮງ, ໄປລ່ຳລຽງຍ່າງລຸບໄປນ່ຳ ຫ້ວຍ, ນ່ຳຮ່ອງ, ຕົນຢ່ຳແຕ່ນ້ຳຕົນໂຕປຸງກຊຸ່ມ, ບາງເທື່ອບາງຄົນເປັນໄຂ້, ເຈັບທ້ອງ, ລົງເລືອດເປັນປະຈຳເດືອນ, ຢາກອາບນ້ຳ ນ້ຳຫ້ວຍ, ນ້ຳຮ່ອງກໍ່ເປື້ອນ, ອາບບໍ່ໄດ້ບໍ່ມີເຄື່ອງປ່ຽນຖ່າຍ, ບາງຄົນເກີບກໍ່ຂາດ, ຕົນເປັນຫໍເປື່ອຍ, ຢາຈະໃສ່ປົ່ນປົວກໍ່ຂາດເຂີນ, ໃຜມີຄວາມຮູ້ເລື່ອງຢາພື້ນເມືອງ ກໍ່ຫາມາປົ່ນປົວກັນເອງ ເຊັ່ນ: ເກັບເອົາຮາກໄມ້ ເຄືອເຂົາ, ໃບສີດາ, ຜັກແພວ, ຫົວສີໄຄ, ເຄືອເຂົາຮໍ... ເປັນຕົ້ນ. ບາງມື້ອາກາດກໍ່ໜາວເຢັນ, ນ້ຳໝອກກ້າມ ຈະດັງໄຟຝົ່ງກໍ່ບໍ່ໄດ້, ບາງມື້ຍົນຖິ້ມລະເບີດລົງໃກ້ບ່ອນພັກບາງຄົນກໍ່ຢ້ານກົວທັ້ງຮ້ອງທັ້ງໄຫ້ ເຫຼືອອົກເຫຼືອໃຈ

ຄິດຮອດພໍ່ແມ່ອ້າຍເອື້ອຍນ້ອງ ບໍ່ຮູ້ຂ່າວຄາວວ່າໃຜຢູ່ໃສ ເປັນແນວໃດ, ໄດ້ແຕ່ຍໍ ມືນິບຢຸບເອົາດິນມາໂຮຍໃສ່ຫົວໄຫວ້ວອນເຖິງຄຸນພໍ່ແມ່ ແລະ ສິ່ງສັກສິດ, ຄວາມ ຕາຍມີຢູ່ທຸກບາດຍ່າງ, ທາງດິນແມ່ນທະຫານສັດຕູ ເລັ່ງປືນມາໃສ່, ທາງອາກາດ ກໍ່ແມ່ນຍົນຖິ້ມລະເບີດລົງມາ ຊີວິດນີ້ບໍ່ຮູ້ວ່າຈະຈົບລົງມື້ໃດ ຮູ້ແຕ່ວ່າຕ້ອງຕໍ່ສູ້. ຜູ້ ບັນຊາ ແລະ ໝູ່ຄູ່ກໍ່ໄດ້ແຕ່ລະດົມໃຫ້ກຳລັງໃຈຊຶ່ງກັນ ແລະ ກັນ. ຂະນະນັ້ນກໍ່ມີທັງ ຄຽດທັງແຄ້ນ ປ້ອຍດ່າສາບແຊ່ງສັດຕູຜູ້ຮຸກຮານ ແລະ ລູກມືຜູ້ຂາຍຊາດ ຕັດສິນ ໃຈເດັດດ່ຽວຕໍ່ສູ້ບໍ່ຍອມຈຳນົນ ແລະ ເຊື່ອໝັ້ນວ່າຈະໄດ້ ຮັບໄຊຊະນະ.(61)

ເດືອນ 11/1969 ກອງລຳລຽງແບກຫາບ 368 ໄດ້ຮັບຄຳສັ່ງໃຫ້ໄປ ຕ້ອນຮັບຂະບວນລົດລຳລຽງເຂົ້າ, ອາຫານການກິນ, ອາວຸດລູກກະສຸນມາແຕ່ ຫວຽດນາມ ຊຶ່ງຈະມາລົງໄວ້ຢູ່ຖ້ຳແອ້ວ ເວລານັ້ນໂຈນອາກາດອາເມຣິກາກໍ່ຍິງ ທຳລາຍຢ່າງບໍ່ເລືອກເປົ້າໝາຍ ເວລາດຽວກັນນັ້ນ ທາງໜ້າດິນສັດຕູໄດ້ລະດົມ ກຳລັງທະຫານຫຸ່ນອຽງຈັນ ນັບທັງກຳລັງທະຫານເລວຮັບຈ້າງໄທຍ໌, ທະຫານ ພິເສດວ່າງປາວ ບຸກຕີເຂົ້າເຂດທົ່ງໄຫຫີນ-ຊຽງຂວາງຢ່າງໜັກ ຈຶ່ງເຮັດໃຫ້ຂະ ບວນລົດລຳລຽງຫຼ້າຊ້າ. ລໍຖ້າຫຼາຍມື້ ກອງລຳລຽງແບກຫາບ 368 ກໍ່ໝົດເຂົ້າກິນ ໄລຍະທາງກັບມາຫາກົມກອງພັດໄກ, ເອື້ອຍນ້ອງ 368 ຈຳຕ້ອງກິນໝາກໄມ້ ຕາງເຂົ້າຫຼາຍຄາບເປັນຕົ້ນແມ່ນໝາກສີດາ. ມີບາງເທື່ອເຫັນ ງົວ, ຄວາຍ ປະຊາຊົນຕາຍຍ້ອນລູກລະເບີດ ຍ້ອນຫົວເຂົ້າເອື້ອຍນ້ອງຈຶ່ງໃຊ້ກະບີ່ປືນ ເຈາະ ທ້ອງງົວ, ຄວາຍເອົາເຄື່ອງໃນ ແລະປາດເອົາຊີ້ນ ມາຕົ້ມ ຫຼື ຫຼາມກິນ ໂດຍບໍ່ມີ ເຄື່ອງປຸງ ແມ່ນກະທັ່ງເກືອກໍ່ບໍ່ມີ.

ເອື້ອຍນ້ອງ ຈຳຕ້ອງໄດ້ອອກເຄື່ອນໄຫວຊອກຫາເຂົ້າກິນໂດຍສວຍໂອ ກາດຕອນກາງຄືນ ເວລາທີ່ຍົນມາຖິ້ມຈ້ອງອາໄສແສງສະຫວ່າງຂອງລູກຈ້ອງ ເຂົາເຈົ້າເລັດລອດອອກໄປ ໂດຍເອົາຟົດໄມ້ແຊມກາຍ ເພື່ອໄປຊອກເກັບເຂົ້າທີ່ ພວກສັດຕູນຳເອົາເຂົ້າແຫ້ງມາຖິ້ມລົງໃຫ້ກຳລັງຂອງພວກເຂົາ (ເພາະເວລານັ້ນ ກຳລັງທັງສອງຝ່າຍຊ້ອນແອ້ວຫວີກັນຢູ່ ກຳລັງພວກເຮົາແນມເຫັນພວກສັດຕູ,

62. ຕາມການເລົ່າຂອງ ພັນໂທ ນາງອັນດີ ທຳມະສິດ

ພວກສັດຕູກໍ່ແນມເຫັນພວກເຮົາ), ເຮັດແນວນັ້ນ ກອງ 368 ຈຶ່ງມີເຂົ້າກິນ, ຫຼື ເວລາໄປພົບກັບອ້າຍນ້ອງເພື່ອນບ້ານຫວຽດນາມພວກເພິ່ນກໍ່ເອົາເຂົ້າໜົມເລືອງໂຄໃຫ້ ຫຼື ແບ່ງປັນເຂົ້າປາ-ອາຫານໃຫ້ເອື້ອຍນ້ອງຂອງພວກເຮົາພໍໄດ້ສິບມື້ໄປ.

ນອກນັ້ນ ເອື້ອຍນ້ອງ ກໍ່ອອກໄປຊອກເກັບເອົາຫົວເຜືອກຫົວມັນຫຼື ເຂົ້າສຸກເຫຼືອງຕາມຂອບເຂດໄຮ່-ນາ ທີ່ໂຈນອາກາດອາເມຣິກາຖິ້ມລະເບີດລົງໃສ່ເກີດໄຟໄໝ້ແຕ່ບໍ່ທັນໝົດ, ໄຮ່-ນາ ຂອງພໍ່ແມ່ປະຊາຊົນທີ່ພວກເພິ່ນປະໄວ້ຍ້ອນເຈົ້າຂອງໄດ້ອົບພະຍົບຫຼົບໜີໄປບ່ອນປອດໄພ ຫຼື ຖືກຝ່າຍອ່ຽງຈັນກວາດຕ້ອນລົງໄປຢູ່ເຂດຄວບຄຸມຂອງເຂົາ. ໄດ້ເຂົ້າເປືອກມາ ແລ້ວກໍ່ໃຊ້ແພ ຫຼື ເສື່ອຫໍ່, ຂຸດດິນໃຫ້ເປັນຂຸມ ແລ້ວເອົາຫໍ່ເຂົ້ານັ້ນ ຍັດລົງຂຸມດິນເອົາທ້າຍ ປືນຕຳຈາກນັ້ນ ເອົາມາເປົ່າ ຫຼື ວິ ໃຫ້ເປືອກມັນອອກ ຈຶ່ງມາຕົ້ມໃສ່ຊີ້ນງົວ-ຄວາຍ ທີ່ຄົວເອົາເວລາທີ່ມັນຕາຍຍ້ອນທ່າລູກແຕກ-ລູກໂບມ ຂອງໂຈນອາກາດອາເມຣິກາຫວ່ານລົງມານັ້ນ. ເຖິງວ່າສະພາບຫຍຸ້ງຍາກທີ່ສຸດ, ແຕ່ເອື້ອຍນ້ອງ ກໍ່ຍັງລໍຖ້າລຳລຽງຂົນເຄື່ອງລົງຈາກລົດຢູ່ນັ້ນປະມານ 2 ເດືອນກວ່າ.

ພາຍຫຼັງການປະລາໄຊ ຂອງສັດຕູຢູ່ບັ້ນຮົບກຸ້ງດ ທ້າຍປີ 1969-70 ກອງບັນຊາການທະຫານເຂດຊຽງຂວາງໄດ້ໄຂກອງປະຊຸມ ສະຫຼຸບຖອດຖອນບົດຮຽນວຽກງານການທະຫານຂຶ້ນ ທີ່ຖ້ຳເງິນ ຕາແສງທ້າຍ ເມືອງແປກ. ກອງລຳລຽງແບກຫາບ 368 ໄດ້ສົ່ງຕົວແທນເຂົ້າຮ່ວມ ມີນາງທອງດີ ຫົວໜ້າການເມືອງກອງຮ້ອຍ ພ້ອມກັບເອື້ອຍນ້ອງ 3 ຄົນ, ໃນເວລາພັກຜ່ອນ ທ່ານ ສີພອນ ພາລີຂັນ ຫົວໜ້າຫ້ອງການເມືອງ ເຂດທະຫານຊຽງຂວາງ ໄດ້ເວົ້າລົມກັບນາງທອງດີ ແລະເອື້ອຍນ້ອງ ແບບຢອກແກມອີຫຼີວ່າ:

*ເອື້ອຍນ້ອງກອງລຳລຽງແບກຫາບ 368 ເຮົາມີຊູ້-ມີແຟນແລ້ວບໍ່? ຢ່າຟ້າວຄິດເຖິງເດີ, ສັດຕູຍັງບຸກຕີພວກເຮົາແຮງ, ພວກເຮົາຕ້ອງອົດທົນຕໍ່ສູ້ເພື່ອຍາດເອົາເອກະລາດເສຍກ່ອນ, ມື້ໃດປະເທດຊາດໄດ້ຮັບການປົດປ່ອຍ ມື້ນັ້ນຈຶ່ງຄ່ອຍເອົາຜົວ, ປັດຈຸບັນນີ້ ຜູ້ຍິງກໍ່ຂໍໃຫ້ມີພຽງແຕ່ແຟນ ແຕ່ບໍ່ທັນໃຫ້ມີຜົວ, ສ່ວນຜູ້ຊາຍກໍ່ໃຫ້ມີພຽງແຕ່ຊູ້ ແຕ່ບໍ່ໃຫ້ມີເມຍ, ຂໍໃຫ້ແຂ່ງຂັນກັນສ້າງຜົນງານ,*

*ຕໍ່ສູ້ກູ້ຊາດ ຍາດເອົາເອກະລາດ ອິດສະລະພາບ ປົດປ່ອຍປະເທດກ່ອນ. ເມື່ອ ປະເທດຊາດໄດ້ຮັບການປົດປ່ອຍ ພວກເຮົາຈຶ່ງຈະເຫັນໜ້າພໍ່-ແມ່ອ້າຍເອື້ອຍ ນ້ອງໄດ້ໄຊຊະນະແລ້ວ ບ້ານເມືອງມີສັນຕິພາບ ພວກເຮົາກໍ່ຈະໄດ້ສ້າງບ້ານ ແປງເມືອງ ມີເຮືອນງາມຢູ່, ຕີສັດຕູປະລາໄຊແລ້ວ ພວກເອື້ອຍນ້ອງເຮົາຈຶ່ງຄ່ອຍ ເອົາຜົວຈຶ່ງຊິມີຄວາມສຸກ, ເອົາຜົວມີລູກມີເຕົ້າໄດ້ຢູ່ຮ່ວມກັນຢ່າງມີຄວາມສຸກ* (63)

ຢູ່ເຂດທົ່ງໄຫຫີນ-ຊຽງຂວາງ ເຖິງວ່າຈັກກະພັດອາເມຣິກາ ຈະປະລາໄຊ ໃນແຕ່ລະບັ້ນຮົບທີ່ພວກເຂົາກໍ່ຂຶ້ນກໍ່ຕາມ ແຕ່ພວກເຂົາກໍ່ຍັງດື້ດ້ານ ສືບຕໍ່ປົ້ນ ຂັ້ນໄດສົງຄາມອີກຄັ້ງໃໝ່ ພວກເຂົາພະຍາຍາມເກັບເກນ, ບີບບັງຄັບເອົາ ຊາວ ໜຸ່ມ-ຊາຍສະກັນລາວເຂົ້າເປັນທະຫານຕາຍແທນພວກເຂົາ, ໄດ້ລະດົມເອົາ ທະຫານຮັບຈ້າງຈາກຕ່າງປະເທດ, ເພີ່ມຈຳນວນງົບປະມານດ້ານການທະຫານ ຂຶ້ນຈາກ 252 ລ້ານໂດລາ ມາເປັນ 350 ລ້ານໂດລາສະຫະລັດ(64) ກຳລັງສູ້ຮົບ ເພີ່ມຂຶ້ນເຖິງ 60.000 ຄົນ, ໃນນັ້ນ 1.200 ຄົນ ແມ່ນທະຫານໝວກອ່ອນຂຽວ, ທະຫານອາກາດຂອງອາເມຣິກາເພີ່ມຂຶ້ນເປັນ 2.000 ຄົນ ຈາກນັ້ນ ພວກເຂົາ ເປີດບັ້ນຮົບຕ່າວໂຈມຕີ ເຂົ້າເຂດປົດປ່ອຍຂະໜາດໃຫຍ່ອີກເທື່ອໜຶ່ງ.

ເວລານັ້ນ ທາງກອງບັນຊາການທະຫານເຂດຊຽງຂວາງ ໄດ້ມີຄຳສັ່ງໃຫ້ ກອງລຳລຽງແບກຫາບ 368 ຍ້າຍອອກຈາກສຳນັກພູເລັ່ງດ່ວນ ພາຍໃນເວລາ 7 ວັນໃຫ້ສຳເລັດ. ແຕ່ວ່າເວລານັ້ນເອື້ອຍນ້ອງ 368 ຊ້ຳພັດຍັງປະຕິບັດໜ້າທີ່ ລຳລຽງເຂົ້າ, ສະບຽງອາຫານ ແລະລູກກະສຸນໄປສູ່ດ້ານຮົບ. ເມື່ອໄດ້ຮັບຄຳສັ່ງ ກອງ 368 ໄດ້ອອກເດີນທາງ, ການເດີນທາງຄັ້ງນີ້ ບໍ່ຄືຄັ້ງອື່ນໆເພາະທຸກຍາກ ລຳບາກກວ່າທຸກໆຄັ້ງທີ່ຜ່ານມາ, ເອື້ອຍນ້ອງມີແຕ່ເຄື່ອງຄາຄີງ (ເຄື່ອງຊຸດດຽວ ນຸ່ງຢູ່) ພ້ອມກັບບາໂລເຂົ້າ ແລະໄທ່ເຂົ້າຜູ້ລະ 20 ກິໂລ ພ້ອມກັບແກັດ ລູກປືນ ອອກສູ່ສະໜາມຮົບຊ້ຳພັດເປັນຊ່ອງລະດູໜາວ, ໂຈມອາກາດອາເມຣິກາບິນມາ

.....

*63. ຕາມການເລົ່າຂອງ ນາງທອງດີ*

*64. ຕາມຂ່າວສານ ອາເປ ວັນທີ 3/8/1971*

ຖິ້ມລະເບີດລົງໃສ່ປ່ານທ່າຝົນ, ເຮັດໃຫ້ເອື້ອຍນ້ອງຕາຍຄາສະໜາມຮົບ ເປັນຕົ້ນ: ນາງອຸມມາ, ນາງບຸນລ້ອນ, ນາງບົວສີ...

ຢືນຕໍ່ໜ້າສະພາບການອັນດຸເດືອດ ຄັບຂັນນັ້ນ ເດືອນ 8 ປີ 1970 ກອງບັນຊາການທະຫານເຂດຊຽງຂວາງ ໄດ້ຕົກລົງໃຫ້ກຳລັງເອື້ອຍນ້ອງ ທັງ 2 ກອງ, 368 ແລະກອງ 769 ໄປປັບປຸງກຳລັງ ແລະພັກຜ່ອນຢູ່ເຂດຖ້ຳນ້ຳຕຸງນ, ນ້ຳກັ່ນ (ຊາຍແດນລາວ-ຫວຽດນາມ) ເວລານັ້ນກຳລັງຂອງກອງລຳລຽງແບກຫາບ 368 ໄດ້ມາເຕົ້າໂຮມກັນຢູ່ສຳນັກພູເລັງ ໂດຍມີທະຫານກອງທັບປົດປ່ອຍປະຊາຊົນລາວ ແລະຫວຽດນາມ ເປັນຜູ້ພາທາງ, ການເດີນທາງຄັ້ງນີ້ລຳບາກທີ່ສຸດ ເພາະສັດຕູນຳກຳລັງຍິງຖະຫຼົ່ມເວົ້າໄດ້ວ່າຫູດັບ-ຕັບໄໝ້ພຸ້ນລະ, ການເດີນທາງອາໄສແຕ່ຕອນກາງຄືນ, ສ່ວນກາງເວັນຕ້ອງໄດ້ຫຼົບຫຼີກລີ້ຊ່ອນຢ້ານຍົນຍິງ.

ຂະບວນກອງ 368, 769 ໄປໄດ້ໄລຍະໜຶ່ງໄດ້ພົບກັບຂະບວນອົບພະຍົບຢູ່ກາງທົ່ງນາ,ທຳອິດບໍ່ຮູ້ວ່າໃຜເປັນໃຜ,ຍ້ອນເດືອນມືດ,ຍ່າງໄຕ່ຕາມຄັນນາ ບາງຄົນກໍ່ຕົກຄັນນາລົ້ມຟຸບ, ລົ້ມຟາບ. ນາງ ທອງດີ ກໍ່ແມ່ນຜູ້ໜຶ່ງ ທີ່ລົ້ມຕົກຄັນນາ, ເມື່ອໄດ້ຍິນສຽງເວົ້າຈາຈຶ່ງຮູ້ວ່າຂະບວນນັ້ນ ມີທັງພໍ່ແມ່ປະຊາຊົນ, ນັກຮຽນ, ຊາວໜຸ່ມ ແລະຄູບາອາຈານ. ທ່ານອາຈານ ອຸປາລີ ແລະທ່ານອາຈານ ຈັນສົມ ກໍ່ລົ້ມລຸກຂຶ້ນມາໄດ້ຍິນສຽງປາກ ນາງທອງດີ ຈຶ່ງຮູ້ວ່າມີຍາທ່ານ ອຸປາລີ ເຊິ່ງເປັນເຈົ້າອະທິການວັດທີ່ນາງຮູ້ຈັກດີ. ນອກນັ້ນກໍ່ມີ ພະອາຈານ ມະຫາ ຄຳຕັນ ເທບບົວລີ ກໍ່ໄດ້ອອກມານຳຂະບວນ.

ຄວາມທຸກໃນຊີວິດນີ້ຄື ຈະບໍ່ມີຄັ້ງໃດປຽບປານໄດ້, ການເດີນທາງແມ່ນອາໄສລຽບແຄມຫ້ວຍ-ແຄມຮ່ອງ, ບຸປ່າ, ຜ່າຫ້ວຍ, ບັງເອີນມື້ນັ້ນ ນາງທອງດີ ຫົວໜ້າການເມືອງກອງ ພັດບໍ່ສະບາຍ(ເປັນປະຈຳເດືອນ) ເຄື່ອງປ່ຽນກໍ່ບໍ່ມີ, ສະຫາຍເຊີນ ຊ່ຽວຊານຫວຽດນາມເຫັນສະພາບຄືແນວນັ້ນ, ກໍ່ເຫຼືອອົດອີຕົນສົງສານ ໄດ້ແກ້ສົ້ງຊ້ອນຂອງຕົນໃຫ້ນາງທອງດີ. ສະຫາຍ ນາງທອງດີ ກໍ່ໄດ້ເອົາມານຸ່ງໂດຍທີ່ບໍ່ຄິດຫົວຊານຳອັນໃດອີກເລີຍ, ເພາະຈະເຮັດແນວໃດໄດ້ ທົ່ວຕົນຕົວຂອງນາງກໍ່ປຽກຊຸ່ມ,ໂຕຕົນເຕັມແຕ່ຕຸ່ມຂີ້ຫີດ-ຂີ້ກາກຢູ່ແລ້ວ. ໃນປາງສົງຄາມ

ອ້າຍເອື້ອຍນ້ອງທະຫານ ລ້ວນແຕ່ຮັກແພງນັບຖືກັນຄື ອ້າຍເອື້ອຍນ້ອງຄົງໆ ຖ້າຈະເວົ້າເຖິງການນັ່ງ,ການນອນກໍ່ແມ່ນນັ່ງ-ນອນໃນຂຸມຄອງອັນດຽວກັນເປັນ ຂອງທຳມະດາ, ແນວຄິດທີ່ວ່າຈະລ່ວງເກີນຮີດຄອງປະເພນີຮັກມັກແບບຊູ້ສາວ ບ່າວແພວນັ້ນບໍ່ຄິດເຖິງເລີຍ, ໃນສະໝອງຂອງອ້າຍເອື້ອຍນ້ອງເວລານັ້ນ ມີແຕ່ ຄວາມຮັກຊາດ, ຄຽດແຄ້ນສັດຕູ, ຄວາມເສຍສະຫຼະເພື່ອຊາດ, ເພື່ອປະຊາຊົນ ເຮັດສຳເລັດໜ້າທີ່ ທີ່ຊາດ ແລະຂັ້ນເທິງມອບໝາຍໃຫ້ທໍ່ນັ້ນ (65).

ຍ້ອນສັດຕູໃຊ້ກຳລັງບຸກໂຈມຕີໜັກຄືແນວນັ້ນ ສົມທົບໃສ່ກັບຄວາມອິດ ເມື່ອຍ ແລະອ່ອນລ້າ, ກອງລຳລຽງແບກຫາບ 368 ໃຊ້ເວລາອາທິດກວ່າຈຶ່ງໄປ ຮອດຈຸດໝາຍ. ກອງ 368 ໄປພັກຢູ່ທີ່ນັ້ນ ເປັນເວລາ 1 ເດືອນ, ພ້ອມກັບ ການພັກຜ່ອນນັ້ນ ບັນດາພະນັກງານນັກຮົບ ກໍ່ແມ່ນຮຽນໜັງສື ຮຽນທິດສະດີ ການເມືອງ, ຮຽນການທະຫານ, ສິລະປະຍຸດ-ຍຸດທະວິທີ, ເພີ່ມພູນຜະລິດຜົນ, ປັບປຸງກໍ່ສ້າງສະຖານທີ່ພັກເຊົາ ແຕ່ສຳລັບຄະນະກອງຮ້ອຍ ໂດຍສະເພາະແມ່ນ ນາງທອງດີ ແລະນາງວັນດີ ຂັ້ນເທິງໄດ້ຮຽກເຂົ້າປະຊຸມດ່ວນທີ່ ພູຜາຫວາຍ ເພື່ອ ຮ່ວມກອງປະຊຸມສະຫຼຸບລາຍງານ ແລະຖອດຖອນບົດຮຽນໃນການເຄື່ອນໄຫວ ສູ້ຮົບ ພ້ອມທັງຮ່ວມວາງແຜນການ ທິດທາງຕໍ່ໜ້າເພື່ອປົດປ່ອຍທົ່ງໄຫຫີນ-ຊຽງ ຂວາງ ໃນລະດູແລ້ງ 1970 ທີ່ຈະມາເຖິງນີ້. ໃນກອງປະຊຸມນີ້ ກອງ 368 ໄດ້ຮັບ ການຍ້ອງຍໍຊົມເຊີຍຈາກຂັ້ນເທິງ ພ້ອມດຽວກັນນີ້ ຫຼາຍສະຫາຍກໍ່ໄດ້ຮັບການ ເລື່ອນຊັ້ນເລື່ອນຂັ້ນ.

ເມື່ອສຳເລັດກອງປະຊຸມແລ້ວ ກອງບັນຊາການທະຫານເຂດແຂວງຊຽງ ຂວາງໄດ້ເອີ້ນກອງ 368 ກັບຄືນທົ່ງໄຫຫີນ-ຊຽງຂວາງ. ກອງ 368 ໄດ້ພັກທັບ ຢູ່ຜາແອ່ນ, ຜາບຸນ ປະມານ 1 ເດືອນ ແລະໄປລຳລຽງສະບຽງອາຫານ, ພາຫະນະ ອາວຸດຮັບໃຊ້ສະໜາມຮົບ ທາງສັນຈໍ່, ປ່າຄາ ບວມດາວ, ເມືອງແປກ, ເມືອງສູຍ. ໄລຍະນີ້ສັດຕູບຸກເຂົ້າຊຽງຂວາງອີກເທື່ອໃໝ່, ພວກເຂົາຄືບຄານເຂົ້າມາ ເກືອບ ຢຶດເມືອງແປກໄດ້. ພວກເຂົາບຸກເຂົ້າມາທາງ ສັນຈໍ່,ປ່າຄາ ເມືອງ ສູຍ, ພ້ອມນີ້ ກໍ່

---

*65. ຕາມການເລົ່າຂອງນາງ ທອງດີ ອະດີດຫົວໜ້າການເມືອງກອງລຳລຽງແບກຫາບ 368.*

ລະດົມກຳລັງທາງອາກາດມາຖິ້ມໝາກໂບມ ລົງໃສ່ເຂດປົດປ່ອຍ ບໍ່ຈັກວ່າໂບມ ສາຍໃຍ, ໂບມຈັກຈັ່ນ, ໂບມນາປານ, ໂບມບີ....

ມາຮອດເວລານີ້ ຄະນະກອງຮ້ອຍລຳລຽງແບກຫາບ 368 ໄດ້ມີການ ປ່ຽນແປງ ເພາະສູນກາງແນວລາວຮັກຊາດທີ່ຕັ້ງຢູ່ນາໄກ່ ເມືອງວຽງໄຊ ໄດ້ມີ ຄຳສັ່ງໃຫ້ຄະນະພັກການທະຫານເຂດຊຽງຂວາງ ຄັດເລືອກເອົາເອື້ອຍນ້ອງທີ່ມີ ບົດຮຽນໃນການຊີ້ນຳ-ບັນຊາກອງລຳລຽງແບກຫາບ 368 ແລະກອງກຳລັງໄຟ 769 ຈຳນວນ 6 ສະຫາຍ ຂຶ້ນໄປກໍ່ສ້າງກອງລຳລຽງແບກຫາບຂອງສູນກາງ. ແຕ່ຍ້ອນສະພາບການສູ້ຮົບຢູ່ທາງທົ່ງໄຫຫີນ-ຊຽງຂວາງຍັງດຸເດືອດ, ການລຳລຽງ ແບກຫາບເຄື່ອງໄປໃຫ້ແນວໜ້າຍັງໜັກໜ່ວງ ສະນັ້ນທາງກອງບັນຊາການເຂດ ຊຽງຂວາງຈຶ່ງຕົກລົງໃຫ້ພຽງແຕ່ 4 ສະຫາຍຂຶ້ນໄປຊີ້ນຳ ແລະການຈັດຕັ້ງກອງໃໝ່ **"ກອງລຳລຽງແບກຫາບ 37"** ຕາມການຕົກລົງຂອງສູນກາງ ເຊິ່ງປະກອບມີ:

ສະຫາຍ ນາງ ອັນດີ ທຳມະສິດ.

ສະຫາຍ ນາງ ບົວຄອນ ສາຍພາສິດ.

ສະຫາຍ ນາງ ສຸດຕາ.

ສະຫາຍ ນາງ ຄຳພາ ອິນທະມາລີ [66]

ສະນັ້ນ ຄະນະບັນຊາກອງຮ້ອຍ 368 ຈຶ່ງຍັງເຫຼືອພຽງ 2 ສະຫາຍຄື:

.....

*66. ສະຫາຍພັນໂທ ນາງ ຄຳພາ ອິນທະມາລີ*

*ເກີດປີ 1954 ທີ່ບ້ານປັນ ຕາແສງຄັງ ເມືອງແປກ ແຂວງຊຽງຂວາງ ເປັນບຸດຂອງ ພໍ່ຊຽງ ດວງດີ ແລະແມ່ດຳດວນ ມີອ້າຍເອື້ອຍນ້ອງ 9 ຄົນ, ປີ 1967 ເຂົ້າການປະຕິວັດ ແລະທັງເຂົ້າ ທະຫານຢູ່ກອງ 368 , ປີ 1962 ເຂົ້າອົງການຈັດຕັ້ງ ແມ່ຍິງ, ປີ 1968 ເຂົ້າ ຊາວໜຸ່ມ, ປີ 1971 ເຂົ້າພັກ, ປີ 1970 ຂັ້ນເທິງຕົກລົງໃຫ້ສະຫາຍ ພ້ອມກັບພະນັກງານ ການນຳຢູ່ກອງ 368 ແລະ ກອງ 769 ຂຶ້ນໄປສ້າງຕັ້ງກອງລຳລຽງແບກຫາບ 37 ຊ່ວຍສູນກາງ ທີ່ນາໄກ່, ສະຫາຍ ໄດ້ຖືກແຕ່ງຕັ້ງໃຫ້ເປັນຮອງຫົວໜ້າການເມືອງກອງຮ້ອຍ, 28/7/1972 ສ້າງຄອບຄົວກັບຮ້ອຍເອກ ອິນຄຳ ອິນທະມາລີ ມີລູກຮ່ວມກັນ 3 ຄົນ, ປີ 1976 ຍົກຍ້າຍໄປ ຢູ່ກະຊວງປ້ອງກັນຄວາມສະຫງົບ, ປີ 2007 ອອກພັກຜ່ອນຮັບເບ້ຍບຳນານ, ຜ່ານການ ເຄື່ອນໄຫວປະກອບສ່ວນສະຫາຍ ໄດ້ຮັບການຍ້ອງຍໍ: ຫຼຽນໄຊຊະນະເລີດຊັ້ນ III ຈຳນວນ 1 ໜ່ວຍ, ຫຼຽນໄຊແຮງງານຊັ້ນ II ຈຳນວນ1 ໜ່ວຍ, ຫຼຽນໄຊແຮງງານຊັ້ນ III ຈຳນວນ 5 ໜ່ວຍ, ຫຼຽນກາແຮງງານຈຳນວນ 11 ໜ່ວຍ, ຫຼຽນກາ ຕ້ານອາເມຣິກາ1 ໜ່ວຍ, ຫຼຽນກາລະນຶກ 5 ປີ 1 ໜ່ວຍ, ຫຼຽນກາລະນຶກ 50 ປີກອງທັບ, ຫຼຽນກາລະນຶກ 50 ປີຕຳຫຼວດ, ຫຼຽນກາລະນຶກ 60 ປີ ກອງທັບ ແລະໃບຍ້ອງຍໍປະເພດຕ່າງໆ 26 ໃບ.*

ສະຫາຍ ນາງ ທອງດີ ເປັນຫົວໜ້າການເມືອງ
ສະຫາຍ ນາງ ສີທົນ ເປັນຫົວໜ້າການທະຫານ.

ຈາກນັ້ນກອງລຳລຽງແບກຫາບ 368 ໄດ້ກັບຄືນມາຢູ່ຖ້ຳແຫ້ງ ເມືອງຄຳ ແຂວງຊຽງຂວາງ ໄປລຳລຽງທາງເມືອງແປກ ແລ້ວແຈກກຳລັງອອກເປັນ 3 ປີກ ແຕ່ລະປີກມີ 1 ໝວດ:

ປີກທີ 1 ໝວດທີ 1 ໄປປະຈຳຢູ່ ເຂດບ້ານນາສາລາ.
ປີກທີ 2 ໝວດທີ 2 ໄປປະຈຳຢູ່ ເຂດບ້ານຜັກກາດ.
ປີກທີ 3 ໝວດທີ 3 ໄປປະຈຳຢູ່ ເຂດບ້ານນາສົມ.

ເພື່ອລຳລຽງຂົນສົ່ງຮັບໃຊ້ແນວໜ້າ ເປັນຕົ້ນແມ່ນສະໜາມຮົບພູກູດ, ສະໜາມຮົບເມືອງສູຍ, ສະໜາມຮົບເຂດສັນຈໍ່, ເມືອງແປກ. ຍ້ອນກຳລັງຈຳນວນໜຶ່ງຖືກສົ່ງໄປປັບປຸງກອງລຳລຽງກອງ 37 ຊຳເໜືອ, ສ່ວນນາງສີທົນ ສຸຂະພາບບໍ່ຄ່ອຍແຂງແຮງ, ສະນັ້ນຄະນະເຂດ ກໍ່ຄືຄະນະກອງຈຶ່ງແຕ່ງໃຫ້ຮັບຜິດຊອບ 1 ໝວດ ຢູ່ແນວຫຼັງເຝົ້າສຳນັກ, ກຽມພ້ອມຮັບໃຊ້ສະໜາມຮົບ ເມື່ອດ້ານຮົບຕ້ອງການ, ສ່ວນນາງທອງດີ ໃຫ້ນຳພາເອື້ອຍນ້ອງ 1 ໝວດ ມາທາງໜອງຕັ່ງ, ນາກ່ອມ, ນາຄ່າ ລຳລຽງເຂົ້າປາ-ອາຫານ ແລະພາຫະນະອາວຸດລົງລົດ ແລ້ວເອົາເຂົ້າມ້ຽນໄວ້ສາງ, ເພື່ອຮັບໃຊ້ສະໜາມຮົບເຂດໜອງຕັ່ງ. 1 ໝວດ ໄປຂົນເຂົ້າ-ປາອາຫານ ແລະພາຫະນະອາວຸດ ລົງລົດຢູ່ທາງເຂດຖ້ຳແອ້ວ. ສ່ວນ 1 ໝູ່ ສະຫາຍນາງທອງດີ ບັນຊາໄປທິດຫຼວງພະບາງ ເພື່ອປຸກລະດົມຂົນຂວາຍເອົາເອື້ອຍນ້ອງມາປະກອບກຳລັງຕື່ມ. ການໄປຄັ້ງນີ້ບໍ່ພຽງແຕ່ໄປລະດົມກຳລັງເຂົ້າເປັນທະຫານຮັບໃຊ້ຊາດເທົ່ານັ້ນ, ຍັງມີໜ້າທີ່ລະດົມປະຊາຊົນ ປະກອບສ່ວນເຂົ້າ, ອາຫານການກິນ, ເຄື່ອງຮັບໃຊ້ຕ່າງໆເພື່ອຊ່ວຍແນວໜ້າ.

ຜ່ານນັ້ນລົງຂົນຂວາຍ ເປັນເວລາ 3 ເດືອນກອງ 368 ສາມາດລະດົມກຳລັງໄດ້ທັງໝົດ 80 ຄົນ, ເຂົ້າປາອາຫານຈຳນວນຫຼວງຫຼາຍ, ຈາກນັ້ນກຳລັງຊຶ່ງປະຕິບັດໜ້າທີ່ຂົນຂວາຍຈຶ່ງກັບຄືນສຳນັກເຂດທີ່ພູເລັງ ເພື່ອລາຍງານສະພາບການ ແລະ ດ້ານຈຳນວນພົນ ຕໍ່ກອງບັນຊາການທະຫານເຂດ, ຄະນະເຂດໄດ້

ຕົກລົງມອບຈຳນວນເອື້ອຍນ້ອງ ທີ່ໄປລະດົມໄດ້ນັ້ນເຂົ້າປະກອບສ່ວນໃນກອງ ລຳລຽງ 368 ສ່ວນອ້າຍນ້ອງຜູ້ຊາຍ ມອບໃຫ້ຫ້ອງເສນາທິການເຂດເປັນຜູ້ນຳ ໃຊ້, ເຂົ້າປາອາຫານມອບໃຫ້ກອງບັນຊາການເຂດເປັນຜູ້ແບ່ງປັນ.

ລະດູຝົນ ປີ 1970 ຝ່າຍອຽງຈັນໄດ້ເປີດບັ້ນເຄື່ອນທັບທີ່ເອີ້ນວ່າບັ້ນຮົບ **" ທະນົງກຽດ "** ມີກຳລັງເຖິງ 32 ກອງພັນ ບຸກໂຈມຕີເຂົ້າເຂດສັນຈໍ, ແທ່ນພູນ ຢ່າງໜັກໜ່ວງ, ຕໍ່ໜ້າສະພາບການເຊັ່ນນັ້ນ, ຄະນະພັກການທະຫານສູນກາງ ໄດ້ສັ່ງໃຫ້ກອງບັນຊາການທະຫານເຂດຊຽງຂວາງ ປະສານສົມທົບກັບກອງ ທະຫານອາສາສະໝັກຫວຽດນາມ ເປີດບັ້ນຕ່ານໂຈມຕີສັດຕູແຕ່ເດືອນ 8 ເຖິງ ເດືອນ 10/1970. ໜ້າທີ່ຂອງກອງ 368 ເວລານັ້ນແມ່ນລຳລຽງແບກຫາບຂົນ ສົ່ງເຂົ້າປາ, ອາຫານ ແລະລູກກະສຸນເພື່ອຮັບໃຊ້ດ້ານຮົບດັ່ງກ່າວ.

ກຳລັງ 368 ສ່ວນໜຶ່ງບັນຊາໂດຍ ນາງອ່ອນສີ ໄດ້ໄປປະຈຳຢູ່ຖ້ຳແຫ້ງ ເມືອງຄຳ ລຳລຽງເຂົ້າ ລູກກະສຸນ ໄປສົ່ງໃຫ້ອ້າຍນ້ອງປະຈຳຢູ່ທິດເມືອງຄຳ ບ້ານຊຽງກຽວ ຈອມທອງ ໄດ້ໄລຍະໜຶ່ງກໍ່ຍ້າຍໄປຢູ່ຕາດຫວີງ, ຈາກນັ້ນກໍ່ໄປ ປະຈຳຢູ່ເມືອງແທ້ ຂົນເຂົ້າ ລູກປືນຢູ່ເມືອງຄຳ ໄປໃຫ້ທະຫານກອງພັນ 701 ປະຈຳຢູ່ສະໜາມຮົບສັນຈໍ ເສັ້ນທາງໄປແມ່ນລຳບາກຫຼາຍ, ເມື່ອສຳເລັດ ໄດ້ນຳ ກຳລັງກັບຄືນເມືອປະຈຳຢູ່ຜາຕອງຈີງ. ຢູ່ບ່ອນນີ້ ຖ້ຳທີ່ພັກຄັບແຄບ ໄດ້ຕັດໄມ້ ມາລຽນລຳເຮັດບ່ອນນອນເປັນສອງຊັ້ນ.

ພາຍຫຼັງບັ້ນຮົບທະນົງກຽດສິ້ນສຸດລົງ ດ້ວຍໄຊຊະນະຂອງກຳລັງກອງ ທັບປົດປ່ອຍ, ກອງບັນຊາການທະຫານເຂດສັ່ງໃຫ້ກອງ 368 ຄັດເລືອກເອົາ ຜູ້ແຂງແຮງຈຳນວນ 10 ຄົນໄປສົມທົບກັບອ້າຍນ້ອງກອງລຳລຽງຮັບໃຊ້ດ້ານຮົບ ພູລານ ປ່າໄຜ່ ( ເຂດຜາລະແວກ, ທ່າອຽງ, ຊຽງຄົ້ງ ) ທາງກອງມອບໃຫ້ນາງວັນສີ ແລະ ນາງພຽງ ເປັນຜູ້ຮັບຜິດຊອບ, ສ່ວນຄະນະກອງລຳລຽງ ແບກຫາບ 368 ນຳພາເອື້ອຍນ້ອງອອກຮັບໃຊ້ດ້ານຮົບເມືອງສູຍ.

ແຕ່ປານນັ້ນ ພວກເຂົາກໍ່ຍັງບໍ່ປະລະເຈດຈຳນົງຢາກປຸງດຍຶດເອົາທົ່ງໄຫຫີນ-ຊຽງຂວາງ ເຖິງ 27/8/1971 ຝ່າຍວຽງຈັນ ໄດ້ລະດົມພົນ 21 ກອງພັນ ພ້ອມກຳລັງພິເສດ ແລະທະຫານເລວຮັບຈ້າງໄທ 10 ກອງພັນ ບຸກຕີເຂົ້າທິດໃຕ້ ທົ່ງໄຫຫີນ ບ້ານໂຕນ ພູເຕີ່ງ ພູເກ້ົ ແລະທົ່ງໄຫຫີນ. ເວລາດຽວກັນນັ້ນອີກ 2 ກອງພັນກໍ່ບຸກເຂົ້າເມືອງສູຍ, ແຕ່ກອງທັບປະຊາຊົນລາວ ເຂດຊຽງຂວາງ ແລະ ກອງກຳລັງເປັນກາງຮັກຊາດ, ທະຫານທ້ອງຖິ່ນກອງຫຼອນໄດ້ສະກັດກັ້ນສາມາດ ຮັກສາຕົວເມືອງຊຽງຂວາງ ໂພນສະຫວັນ ຄັງໄຂໄວ້ໄດ້, ສາມາດປັດເຂ່ຍສັດຕູ ອອກຈາກວົງສູ້ຮົບ 718 ຄົນ, ຍິງຍົນຊະນິດຕ່າງໆຕົກ 9 ລຳ.

ຈາກນັ້ນ ກໍ່ເປີດບັ້ນຕ່ອໂຈມຕີພວກເຂົາຄືນໃໝ່ **"ບັ້ນຮົບຟ້າຜ່າ"** ຊຶ່ງ ນັບແຕ່18/12/1971-5/4/1972 ຕະຫຼອດ 110 ວັນແລະຄືນ ສູ້ຮົບລຽນຕິດນັ້ນ ສາມາດປັດເຂ່ຍສັດຕູອອກຈາກວົງສູ້ຮົບກວ່າ 6.000 ຄົນ (ໃນນັ້ນມີທະຫານ ຮັບຈ້າງໄທຍ 3.532 ຄົນ) ປົດປ່ອຍທົ່ງໄຫຫີນ ເມືອງສູຍ ສາລາພູຄູນ ກົ່ວກະຈຳ, ກາສີ, ບ້ານນາ, ຖ້ຳຕຳລຶງ ຜາໄຊ ແລະ ຕີຂົ່ມຫົ່ວພວກສັດຕູຢູ່ຊຳຫອງ-ລ້ອງແຈ້ງ.

ໄຊຊະນະນີ້ ເປັນການທັບມ້າງຍຸດທະສາດ ຂອງອາເມຣິກາທີ່ວ່າ **"ເອົາ ທະຫານເລວຮັບຈ້າງໄທຍ໌ເປັນເສົາຄ້ຳ ສົມທົບກັບກຳລັງພິເສດວ່າງປາວ ບວກ ກັບການຊ່ວຍໜູນດ້ານພະລາທິການ ແລະ ກຳລັງທາງອາກາດໂດຍກົງຂອງອາ ເມຣິກາ"** ນັກໜັງສືພິມຕາເວັນຕົກ ໄດ້ໃຫ້ການສັງເກດວ່າ: ***ທິດສະດີຍຸດທະສາດ ອາເມຣິກາ ທີ່ທົດສອບຢູ່ເຂດເໜືອຂອງລາວແມ່ນບໍ່ໄດ້ຮັບຜົນອີກແລ້ວ"***

ຕໍ່ໜ້າສະພາບການເຊັ່ນນັ້ນ, ຄະນະບັນຊາກອງ 368 ຈຶ່ງໄດ້ແບ່ງ ກຳລັງອອກເປັນ 2 ພາກສ່ວນ: ພາກສ່ວນທີ 1 ບັນຊາໂດຍ ນາງທອງດີ ນຳພາ ເອ້ືອຍນ້ອງ 2 ໝວດ ລົງໄປລຳລຽງຂົນສົ່ງພາຫະນະອາວຸດ ແລະສະບຽງອາຫານ ຢູ່ທິດກົ່ວລັນ. ພາກສ່ວນທີ 2 ບັນຊາໂດຍ ນາງ ສີທົນ ນຳພາເອ້ືອຍນ້ອງ 1 ໝວດ ໄປສັບຊ້ອນເຂົ້າ ແລະເຄ່ືອງອຸປະໂພກ-ບໍລິໂພກ, ພາຫະນະອາວຸດລົງຈາກລົດ ແລ້ວເອົາເຂົ້າມ້ຽນຢູ່ສາງ ບ້ານໜ້ຽງ, ນາລາມ, ນາໜອງ, ຄັງວຽງ.

ໃນຂະນະທີ່ກອງ 368 ພວມປະຕິບັດໜ້າທີ່ຢູ່ນັ້ນ ທາງກອງບັນຊາການ ທະຫານເຂດຊຽງຂວາງໄດ້ມີຄຳສັ່ງໃຫ້ ນາງທອງດີ ຂຶ້ນໄປຊຳເໜືອເພື່ອໄປຮຽນ ການເມືອງເປັນເວລາ 6 ເດືອນ, ພາຍຫຼັງຮຽນການເມືອງສຳເລັດ ນາງທອງດີ ກັບຄືນກອງເກົ່າ ເວລານັ້ນກອງ 368 ໄດ້ມາເຕົ້າໂຮມຢູ່ສຳນັກກອງບັນຊາການ ທະຫານເຂດຊຽງຂວາງ ພູເລັງ ໝົດແລ້ວ ເພື່ອລໍຖ້າຄຳສັ່ງໃໝ່.

ປີ 1971 ສະພາບການຢູ່ເຂດຊຽງຂວາງຍັງສືບຕໍ່ສັບສົນ, ສັດຕູຍັງ ລະດົມກຳລັງບຸກຕີເຂົ້າເຂດທົ່ງໄຫຫີນ-ຊຽງຂວາງຢ່າງບໍ່ລົດລະ, ເພື່ອປະຕິບັດ ທິດສະດີຫວັງຢຶດຄອງລາວເວົ້າລວມ, ເຂດທົ່ງໄຫຫີນ-ຊຽງຂວາງ ເວົ້າສະເພາະ, ສັດຕູໄດ້ຈັດຕັ້ງປະຕິບັດຄວາມຫວັງຂອງພວກເຂົາທີ່ວ່າ:ຍິງປືນນັດດຽວສາມາດ ຂ້ານົກໄດ້ 3 ໂຕ ໂດຍເປີດບັ້ນຮົບລາມເຊີນ 719 ຂຶ້ນຢູ່ສະຫວັນນະເຂດ, ສ່ວນ ຢູ່ພາກໃຕ້ ພວກເຂົາໄດ້ໃຊ້ກຳລັງບຸກເຂົ້າແຂວງສາລະວັນດ້ວຍ "ບັ້ນຮົບສີງດຳ" ຢູ່ເຂດພາກເໜືອ ພວກເຂົາເປີດ "ບັ້ນຮົບແດນດິນ 1" ແລະ "ແດນດິນ 2" ຂຶ້ນທີ່ ແຂວງຫຼວງພະບາງ, ເພື່ອແບ່ງແຍກກຳລັງຂອງຝ່າຍແນວລາວຮັກຊາດອອກເປັນ ຫຼາຍພາກສ່ວນ.

ຕໍ່ໜ້າສະພາບການນັ້ນ ລະດູແລ້ງ 1971- 1972 ກອງບັນຊາການ ທະຫານເຂດຊຽງຂວາງ ໄດ້ເປີດບັ້ນຮົບປົດປ່ອຍເມືອງສູຍ, ສາລາພູຄູນ ແນໃສ່ ເປີດກ້ວາງເຂດປົດປ່ອຍປັບປຸງຮາກຖານເຂດ ບ້ານຈຽງ, ບ້ານລ້ອງປົດ, ແລະ ຫຼາຍບ້ານໃນເມືອງຄູນ. ດ້ານຮົບນີ້ບັນຊາໂດຍ ທ່ານເຂັມພອນ ຜຸຍປະເສີດ, ຮອງກອງບັນຊາການທະຫານເຂດຊຽງຂວາງ, ທ່ານ ຈູມມະລີ ໄຊຍະສອນ ເປັນ ຫົວໜ້າເສນາທິການດ້ານຮົບ ທ່ານບຸນນຽນ ຄຳອ້ອນ ຮັບຜິດຊອບວຽກງານ ພະລາທິການ; ກອງລຳ ລຽງ 368 ໄດ້ລຳລຽງແບກຫາບສະບຽງອາຫານ, ເຂົ້າ, ປາ, ອາວຸດຍຸດໂທປະກອນອອກຮັບໃຊ້ດ້ານຮົບດັ່ງກ່າວ.

ກຳລັງ 368 ຈຳນວນໜຶ່ງໄດ້ປະຈຳຢູ່ບ້ານຍົ່ມ ເມືອງເຄິງ ລຳລຽງເຂົ້າ ລູກປືນ ໄປໃຫ້ທະຫານກອງພັນ 13 ຢູ່ພູກູດຈອມເຫຼັກ, ຜາຫຼັງໝູ ຊຶ່ງເສັ້ນທາງ ຍາວໄກໃຊ້ເວລາ 2 ມື້ ຈຶ່ງໄປຮອດແລະຕ້ອງຜ່ານບວມຫຼົ້ງເຂດຍຸດທະສາດສຳຄັນ

ຂອງສັດຕູ, ລຳລຽງໄປເມືອງສູຍ, ນ້ຳຮາງ ນ້ຳບາກ ເມືອງງອຍ. ຫຼັງຈາກສັດຕູ ແຕກຈາກເມືອງສູຍແລ້ວ ກໍ່ໄປປະຈຳຢູ່ຖ້ຳຈອມສີ ເມືອງສູຍ ລຳລຽງເຂົ້າ ອາວຸດ ຍຸດໂທປະກອນໄປສະໜາມຮົບສາລາພູຄູນ.

ກອງ 368 ເຮັດໜ້າທີ່ເປ້, ແບກ, ຫາມຜູ້ໜຶ່ງເທົ້າ 5 ເທົ້າ 10 ເປ້ເຂົ້າ, ປາ, ອາຫານ ແລະ ອາວຸດ, ລູກກະສຸນລັດປ່າ ຜ່າດົ່ງລຽບຫ້ວຍເລາະຕາມຫ້ວຍນ້ຳ ທາກກັດ-ຍູງກິນ, ເຄື່ອງນຸ່ງຊຸດດຽວ ຕີນ-ມືເປື່ອຍຄັນ, ອອກໄປລຳລຽງເປັນ ອາທິດ, ເປັນເດືອນ ອີງຕາມໄລຍະທາງ ແລະສະພາບຂອງເສັ້ນທາງ, ເສັ້ນທາງ ມໍ່ ສັດຕູພັດໃຊ້ຍົນສອດແນມ ແລະມາຍິງທຳລາຍບໍ່ຂາດໄລຍະ, ຈຳເປັນຕ້ອງ ໄດ້ເດີນທາງເອັ້ນ(ແນມເຫັນຈຸດໝາຍ ແຕ່ໄປເປັນຫຼາຍວັນຈຶ່ງຮອດ) ຍ້ອນໄປ ໄດ້ແຕ່ກາງຄືນ, ສ່ວນມື້ສວາຍຕ້ອງໄດ້ຢູ່ໃນຂຸມຄອງ ບໍ່ເຮັດຄືແນວນັ້ນ ແມ່ນຖືກ ລູກແຕກ-ລູກໂບມຂອງພວກໂຈນອາກາດອາເມຣິກາ, ຂະໜາດວ່າມີສະຕິປານ ນັ້ນ ເອື້ອຍນ້ອງກອງ 368 ຍັງເສຍຊີວິດຍ້ອນຖືກລູກແຕກ-ລູກໂບມຂອງໂຈນ ອາກາດອາເມຣິກາຕາຍເຊັ່ນ: ນາງວ໋ງ, ນາງສີສະຫ້ວນ...

ທ້າຍປີ 1972 ຈັກກະພັດອາເມຣິກາ ຖືກປະລາໄຊໜັກຢູ່ສະໜາມຮົບ ອິນດູຈີນ, ຢູ່ລາວເຮົາພວກເຂົາກໍ່ເຮັດຟ້າເຮັດໄຟບໍ່ໄດ້ ເວົ້າສະເພາະແມ່ນ ຢູ່ທົ່ງ ໄຫຫີນ-ຊຽງຂວາງ, ພວກເຂົາຕ້ອງປະຕິບັດຕາມສັນຍາວຽງຈັນ ຄັ້ງວັນທີ 21/3/ 1973 ກ່ຽວກັບການຟື້ນຟູສັນຕິພາບ ແລະປະຕິບັດຄວາມຖືກຕ້ອງປອງດອງ ຊາດຢູ່ລາວ, ໃນສັນຍາປະກອບມີ 5 ພາກ, ມີ 14 ມາດຕາ, ມາດຕາທີ 2 ຂອງ ພາກທີ 2 ໄດ້ເວົ້າເຖິງວຽກງານການທະຫານ ໄດ້ລະບຸແຈ້ງວ່າ: ເລີ່ມຕັ້ງແຕ່ເວລາ 12 ໂມງຂອງວັນທີ 22 ກຸມພາ 1973 (ຕາມເວລາວຽງຈັນ) ໃຫ້ທຸກຝ່າຍປະຕິບັດ ການຢຸດຍິງໃນທົ່ວປະເທດ.

ພາຍຫຼັງປະຕິບັດການຢຸດຍິງໃນທົ່ວປະເທດ ກອງບັນຊາການທະຫານ ສູງສຸດ ຈຶ່ງມີຄຳສັ່ງໃຫ້ກອງລຳລຽງ 368 ຂຶ້ນປັບປຸງກຳລັງຢູ່ເມືອງວຽງໄຊ ແຂວງ ຫົວພັນ, ທີ່ບ້ານຊຽງຊື ທັງແຕ່ງຕັ້ງໃຫ້ເປັນກອງກຳລັງໄຟເພດຍິງ ຮ່ວມກັບກອງ 769 ເປັນກອງກຽດຕິຍົດ ເພື່ອສະແດງກຳລັງຕ້ອນຮັບແຂກຕ່າງປະເທດທີ່ເຂົ້າ ມາຢ້ຽມຢາມເຂດປົດປ່ອຍ.

ພ້ອມນັ້ນຕົວແທນເອື້ອຍນ້ອງ ຍັງໄດ້ໄປຮ່ວມງານມະໂຫລານຢູ່ປະເທດນອກແວ ກອງລຳລຽງແບກຫາບ 368 ມີນາງທອງດີ, ກອງ 769 ແມ່ນນາງ ບົວພອນ, ຜູ້ພາໄປແມ່ນທ່ານ ໄມຈັນຕານ ແສງມະນີ, ທ່ານ ຄູນຈັນແດງ ເຂົ້າຮ່ວມກອງປະຊຸມຕໍ່ສູ້ການເມືອງ ເຊິ່ງມັນເປັນບັນຫາທີ່ຍາກສຳລັບພວກເຮົາທີ່ຫາກ່ອອກຈາກຂຸມຄອງ, ອອກຈາກປ່າ, ຈາກພູໄປຂຶ້ນເວທີຕໍ່ສູທາງດ້ານການເມືອງ. ເອກະສານທີ່ນຳໄປເຜີຍແຜ່ແມ່ນເອົາເນື້ອໃນໂຄງການການເມືອງ 12 ຂໍ້ ຂອງສູນກາງພັກ, ແນວທາງການຕໍ່ສູ້ຂອງພັກໄປສະເໜີຕໍ່ສາກົນ ເຊິ່ງມີ 130 ປະເທດເຂົ້າຮ່ວມ, ທັງຕໍ່ສູທວງໃຫ້ຈັກກະພັດອາເມຣິກາທີ່ມີອາວຸດຮ້າຍແຮງ ຈົ່ງຍຸຕິການຮຸກຮານລາວ, ຍຸຕິການເຂັ່ນຂ້າປະຊາຊົນລາວ.

ພາຍຫຼັງກັບມາແຕ່ເຂົ້າຮ່ວມກອງປະຊຸມຕໍ່ສູການເມືອງໃນເວທີສາກົນ, ກັບຄືນກອງ 368 ຈາກນັ້ນຂັ້ນເທິງໄດ້ຕົກລົງໃຫ້ກອງ 368 ຫັນລົງໄປສ້າງນິຄົມຢູ່ບ້ານຝາຍ ເມືອງຄຳ ແລະສ້າງນິຄົມລາດຫຼວງ, ຄະນະບັນຊານິຄົມບ້ານຝ້າຍ ແມ່ນທ່ານໝື່ນ ສົມວິຈິດ, ນິຄົມລາດຫຼວງ ແມ່ນທ່ານ ບຸນນຸ່ນ ຄຳອ້ວນ ເຊິ່ງເປັນຂອງເຂດຊຽງຂວາງ, ນິຄົມບ້ານຝ້າຍ ເປັນນິຄົມຂອງສູນກາງ, ກອງ 368 ເຮັດວຽກຢູ່ເຂດນັ້ນ ເປັນເວລາ 2 ປີ.

ກ້າວເຂົ້າປີ 1975 ເພື່ອກະກຽມໃຫ້ແກ່ການຢຶດອຳນາດ ແລະສະແດງກຳລັງ ສະນັ້ນ ຂັ້ນເທິງຈຶ່ງມີຄຳສັ່ງໃຫ້ຄະນະກອງ 368 ແລະກອງບັນຊາການທະຫານເຂດຊຽງຂວາງ ລົງມາສັບຊ້ອນ ແລະຄັດເລືອກເອົາເອື້ອຍນ້ອງ 368 ຜູ້ແຂງແຮງ, ໜຸ່ມນ້ອຍ ຫ້າວຫັນຈຳນວນໜຶ່ງ ແລ້ວຈັດຕັ້ງເປັນ**ກອງ 875** ທີ່ຄັງໄຂ ເພື່ອກະກຽມເຂົ້າຢຶດອຳນາດທີ່ວຽງຈັນ ທັງເຮັດໜ້າທີ່ສະແດງກຳລັງ ແລະທັງເປັນກອງກຽດຕິຍົດຕ້ອນຮັບແຂກຕ່າງປະເທດມາຢ້ຽມຢາມລາວ, ໃນນັ້ນຂັ້ນເທິງປະກອບປືນເດກາເບ ໃຫ້ໂດຍມີ:

ສະຫາຍ ນາງ ວັນຄຳ ທິບພະວົງ ເປັນຫົວໜ້າການທະຫານ [67]

ສະຫາຍ ນາງ ສີພາ ຫົວໜ້າການເມືອງ.

ສ່ວນກຳລັງກອງລຳລຽງແບກຫາບ 368 ທີ່ຍັງເຫຼືອ ສືບຕໍ່ໄປສ້າງໂຮງງານເຂົ້າໜົມ ຢູ່ຄັງໄຂ, ໜ້າທີ່ແມ່ນຜະລິດສະບຽງອາຫານແຫ້ງ ເປັນຕົ້ນແມ່ນ

ເຂົ້າປຸ້ນແທ້ງ, ເສັ້ນເຝີ... ຄະນະບັນຊາຍັງແມ່ນຊຸດເກົ່າເປັນຕົ້ນ:

ສະຫາຍ ນາງ ທອງດີ ເປັນຫົວໜ້າການເມືອງ

ສະຫາຍ ນາງ ສີທົນ ເປັນຫົວໜ້າການທະຫານ [68]

.....

*67. ສະຫາຍ ພັນເອກ ນາງ ວັນຄຳ ທິບພະວົງ*

*ເກີດ 1/10/1950, ທີ່ບ້ານແກ່ວ ເມືອງແປກ ແຂວງຊຽງຂວາງ ເຂົ້າການປະຕິວັດວັນທີ 1/1/1967 ສັງກັດຢູ່ໜ່ວຍຍຸວັນນາລີ, ເຂົ້າທະຫານ1/10/1969 ສັງກັດຢູ່ຫ້ອງເສນາທິການ ເຂດຊຽງຂວາງ, ຈາກນັ້ນໄປຍົກລະດັບຢູ່ ບ້ານຫົວນາ ແຂວງເຫງ້ອານ ສສ.ຫວຽດນາມ, ພາຍຫຼັງຮຽນຈົບວັດທະນະທຳແລ້ວ ຂັ້ນເທິງສົ່ງໄປ ຢູ່ກອງລຳລຽງແບກຫາບ 368 (ເປັນຕິດຕໍ່) ຂອງ ຄະນະກອງ, ເຂົ້າພັກ 25/11/1974, ປີ 1975 ເພື່ອປະຕິບັດຕາມຄຳສັ່ງຂອງສູນກາງ, ຂັ້ນເທິງໄດ້ຈັດຕັ້ງກອງກຳລັງໄຟຂຶ້ນຕື່ມ 1 ກອງຮ້ອຍ ເອີ້ນວ່າ ກອງ 875 ເພື່ອກະກຽມ ເຂົ້າຍຶດອຳນາດທີ່ນະຄອນຫຼວງວຽງຈັນ ທັງເປັນການສະແດງກຳລັງ, ປີ 1980 ໄດ້ຮັບການ ແຕ່ງຕັ້ງເປັນຫົວໜ້າການເມືອງໂຮງໝໍທະຫານອາກາດ, 1982 ຍົກຍ້າຍໄປຢູ່ໂຮງຮຽນ ປະສານເຫຼົ່າຊັ້ນກາງ ບ້ານແປນ ( ເປັນຮອງຫົວໜ້າສະຫະພັນແມ່ຍິງ ), 1988 ຖືກຍົກຍ້າຍໄປ ເປັນຫົວໜ້າກອງຮັບແຂກທັງຮັບຜິດຊອບສະຫະພັນແມ່ຍິງຫ້ອງວ່າການ, ປີ 1998 ຖືກຍົກຍ້າຍ ໄປເປັນຮອງອຳນວຍການໂຮງງານຕັດຫຍິບເລກ I ກອງທັບ, ຮອດປີ 2003 ໄດ້ຮັບແຕ່ງຕັ້ງ ເປັນອຳນວຍການໂຮງງານຕັດຫຍິບເລກ I ກອງທັບຈົນຮອດປີ 2014 ອອກພັກຜ່ອນຮັບເບ້ຍບຳນານ.*

*ນາງວັນຄຳ ແຕ່ງງານກັບ ພັນເອກ ສົມຈິດ ທິບພະວົງ ມີລູກນຳກັນ 3 ຄົນ. ຕະຫຼອດ ໄລຍະເຄື່ອນໄຫວປະກອບສ່ວນໃຫ້ແກ່ປະເທດຊາດສະຫາຍໄດ້ຮັບ:ນາມມະຍົດເປັນນັກຮົບ ແຂ່ງຂັນ ແລະໄດ້ເຄື່ອນໄຫວລັບ ທັງໄດ້ຮັບຫຼຽນໄຊອິດສະລະຊັ້ນ III ຈຳນວນ 1 ໜ່ວຍ, ຫຼຽນໄຊອິດສະລະຊັ້ນ II ຈຳນວນ 1 ໜ່ວຍ, ຫຼຽນໄຊປະຕິວັດຊະນະເລີດຊັ້ນ I ຈຳນວນ1 ໜ່ວຍ, ຫຼຽນໄຊແຮງງານຊັ້ນ IIIຈຳ ນວນ 4 ໜ່ວຍ, ຫຼຽນໄຊແຮງງານຊັ້ນ II ຈຳນວນ 3 ໜ່ວຍ, ຫຼຽນກາແຮງງານ 1 ໜ່ວຍ, ຫຼຽນກາຕໍ່ຕ້ານ ອາເມຣິກາ 1 ໜ່ວຍ, ຫຼຽນລະນຶກ 5 ປີ 1 ໜ່ວຍ ແລະ ໃບຍ້ອງຍໍ 4 ໃບ.*

.....

*68. ສະຫາຍ ຮ້ອຍຕີ ນາງ ສີທົນ ຈຸນລະມະນີ*

*ເກີດ10/10/1939 ທີ່ບ້ານຢາຍ ເມືອງພູກູດ ແຂວງ ຊຽງຂວາງ, ເຂົ້າການປະຕິວັດ 30/6/1960 ເປັນກອງຫຼອນໄດ້ 1 ປີ ຈາກນັ້ນຂັ້ນເທິງແຕ່ງຕັ້ງໃຫ້ລົງກໍ່ສ້າງຮາກຖານ, ປີ 1966 ຖືກໄປຮຽນແພດ ກັບມາຢູ່ໂຮງໝໍແຂວງ ຊຽງຂວາງ (ຖ້ຳການ) ຈາກນັ້ນໄດ້ເຄື່ອນໄຫວເປັນ ແພດຮັບໃຊ້ ດ້ານຮົບຈົນຮອດ 1969 ຂັ້ນເທິງຕົກລົງຍົກຍ້າຍ ສະຫາຍນາງ ສີທົນ ມາຢູ່ກອງ 769 ໃນວັນທີ 25/8/1969, ເຂົ້າພັກ 13/10/1970, ປີ 1972 ສ້າງຄອບຄົວກັບສະຫາຍ ຮ້ອຍເອກ ພົມມີ ໄຊຍະວົງ (ຕ) ມີລູກນຳກັນ 4 ຄົນ, ປີ 1990 ອອກພັກຜ່ອນຮັບເບ້ຍບຳນານ. ຕະຫຼອດຊີວິດ ການ ເຄື່ອນ ໄຫວ ນາງສີທົນໄດ້ຮັບຫຼຽນໄຊພິລະອາດຫານ 2 ໜ່ວຍ, ຫຼຽນກາ ຕໍ່ຕ້ານອາເມຣິກາ 1 ໜ່ວຍ, ຫຼຽນກາລະນຶກ 5 ປີ 1 ໜ່ວຍ,ຫຼຽນກາລະນຶກ 60 ປີ 1 ໜ່ວຍ ແລະໃບຍ້ອງຍໍ 11 ໃບ.*

ເດືອນ 1/1984 ຂັ້ນເທິງໄດ້ສັ່ງຍົກຍ້າຍກຳລັງກອງ 368 ຢູ່ໂຮງງານເຂົ້າໜົມແຫ້ງແຫ່ງດັ່ງກ່າວ ລົງມາຕັ້ງຢູ່ (ຫຼັກ 4) ວຽງຈັນ, ມາຮອດນີ້ເອີ້ຍນ້ອງ 368 ຜູ້ມີຄອບຄົວ ກໍ່ອອກຈາກວຽກໄປຢູ່ນຳຄອບຄົວ, ຈຳນວນໜຶ່ງກໍ່ສືບຕໍ່ເຮັດວຽກຢູ່ໂຮງງານເຂົ້າໜົມນັ້ນ. ເປັນອັນວ່າມາຮອດປີ 1984 ກອງ 368 ໄດ້ແຍກຕົວອອກໄປສູ່ການສ້າງເສດຖະກິດຄອບຄົວ, ຈຳນວນໜຶ່ງໄປຮັບໜ້າທີ່ໃໝ່ຕາມເງື່ອນໄຂ ແລະ ສະພາບຕົວຈິງ



# V. ສະພາບການຄຸ້ມຄອງລັ່ງດູທັບ ( ພະລາທິການ )

ອັນທີ 3/10/1893 ລ່າເມືອງຂຶ້ນຝຣັ່ງ ແລະ ສະຫຍາມ ໄດ້ເຊັນສົນທິສັນຍາສະບັບໜຶ່ງໂດຍຕົກລົງກັນແບ່ງປະເທດລາວອອກເປັນ 2 ຕອນຄື: ຝັ່ງຊ້າຍແມ່ນ້ຳຂອງຂຶ້ນກັບລ່າເມືອງຂຶ້ນຝຣັ່ງ, ສ່ວນຝັ່ງຂວາແມ່ນ້ຳຂອງ(ພາກອີສານຂອງໄທຍ໌ປັດຈຸບັນ) ຂຶ້ນກັບສະຫຍາມ ໂດຍບໍ່ເອົາຕາມເສັ້ນຊາຍແດນຂອງອານາຈັກລ້ານຊ້າງໃນເມື່ອກ່ອນ, ຖືວ່າຂັດກັບມະນຸດສະທຳ ແລະຂັດກັບຄວາມເປັນຈິງຂອງປະຫວັດສາດ. ແຕ່ນັ້ນມາແຜ່ນດິນລາວ ໄດ້ຖືກຕັດແບ່ງອອກຈາກກັນ ເຊິ່ງເປັນການທຳລາຍ ແລະກໍ່ຄວາມຫຍຸ້ງຍາກໃຫ້ແກ່ຄົນລາວທີ່ເຄີຍດຳລົງຊີວິດມາແຕ່ບູຮານນະການ.

ພາຍໃຕ້ແອກປົກຄອງຂອງພວກລ່າເມືອງຂຶ້ນຝຣັ່ງ, ປະເທດລາວເຖິງວ່າຈະມີຊັບພະຍາກອນທຳມະຊາດອັນອຸດົມສົມບູນ,ປະຊາຊົນດຸໝັ່ນໃນການອອກແຮງງານ, ແຕ່ຊີວິດການເປັນຢູ່ຂອງເຂົາເຈົ້າ ຍັງພົບຄວາມຫຍຸ້ງຍາກຫຼາຍປະການ, ເສດຖະກິດຫຼ້າຫຼັງ, ດິນປູກຝັງທີ່ໄດ້ບຸກເບີກແລ້ວມີພຽງ 1,5 ລ້ານເຮັກຕາ ແລະ 11 ລ້ານເຮັກຕາ ແມ່ນປ່າດົງພົງໄພທີ່ມີຄຸນຄ່າສູງ, ມີແຮ່ທາດຫຼາຍຊະນິດຢູ່ໃນພື້ນດິນ. ພື້ນຖານເສດຖະກິດ ຍັງແມ່ນກະສິກຳແບບທຳມະຊາດ, ຫາກຸ້ມຕົນເອງພໍໃຜພໍລາວ, ສະມັດຖະພາບການຜະລິດກະສິກຳຍັງຕ່ຳ, ປະລິມານການຜະລິດສະບຽງອາຫານບໍ່ພຽງພໍ. ແຕ່ຊ້ຳພັດຖືກລ່າເມືອງຂຶ້ນ ແລະ ຈັກກະພັດຝຣັ່ງ ແລະ ອາເມຣິກາຜູ້ທີ່ມີເສດຖະກິດເຂັ້ມແຂງເຂົ້າມາຮຸກຮານ ແລະ ຍຶດຄອງ.

ຕໍ່ໜ້າສະພາບການດັ່ງກ່າວນັ້ນ, ໂດຍພາຍໃຕ້ການຊີ້ນຳ-ນຳພາຂອງ ພັກຄອມມູນິດອິນດູຈີນໃນເມື່ອກ່ອນ, ຄະນະພັກແຄ້ວນລາວໃນໄລຍະຕໍ່ມາ, ພັກປະຊາຊົນປະຕິວັດລາວໃນປັດຈຸບັນ ປະຊາຊົນລາວ ບັນດາເຜົ່າໄດ້ລຸກຂຶ້ນ ຕໍ່ສູ້ລະອິດລະອ້ຽວ, ຍຶດເຍື້ອ-ຍາວນານ ລຳບາກມີໄຊ,

ນັບແຕ່ມີການຈັດຕັ້ງ ກຳລັງປະກອບອາວຸດຕໍ່ຕ້ານ ເປັນຕົ້ນມາ ເຖິງວ່າ ຂະບວນການຕໍ່ສູ້ ຂອງປະຊາຊົນລາວຈະເຕີບໃຫຍ່ຂຶ້ນເລື້ອຍໆຈົນມາເຖິງ ວັນທີ 20/1/1949 ໄດ້ມີການປະກາດສ້າງຕັ້ງກອງທັບລາວອິດສະລະກໍ່ຕາມ, ແຕ່ ສຳລັບວຽກງານດ້ານພະລາທິການ, ການກິນຢູ່, ເຄື່ອງນຸ່ງຫົ່ມ, ນຸ່ງຖື, ເຄື່ອງມືໃນ ການຜະລິດອາວຸດ ແມ່ນກະທັ່ງບ່ອນຢູ່ບ່ອນນອນ, ຫ້ອງການ ແລະ ທີ່ພັກພາອາ ໄສ ໃນເວລານັ້ນ ລ້ວນແຕ່ອີງໃສ່ປະຊາຊົນ. ປະຊາຊົນເປັນສາງເຂົ້າ, ສາງ ເຄື່ອງນຸ່ງຫົ່ມ ແລະເປັນບ່ອນຜະລິດອາວຸດເພື່ອຕໍ່ສູ້ກັບສັດຕູ ຜູ້ທີ່ມີກຳລັງແຮງ ລົ້ນຫຼາຍເທົ່າ. ພວກສັດຕູມີທັງສາງເຂົ້າ, ມີທັງສາງເຄື່ອງນຸ່ງ-ຫົ່ມ, ມີຮອດໂຮງ ງານຜະລິດອາວຸດທີ່ທັນສະໄໝ.

ດັ່ງນັ້ນ ນັບແຕ່ມື້ກຳເນີດເປັນຕົ້ນມາ ໜ້າທີ່ຂອງພະນັກງານ-ນັກຮົບຕໍ່ສູ້ ກູ້ຊາດ ຈຶ່ງບໍ່ແມ່ນມີແຕ່ເຮັດໜ້າທີ່ສູ້ຮົບພຽງຢ່າງດຽວ, ຍັງໄດ້ອອກແຮງເພີ່ມພູນ ຜະລິດຜົນຫາລ້ຽງກຸ້ມຕົນເອງ ເພື່ອລ້ຽງດູທັບເຊິ່ງສະແດງອອກຄື: ບໍ່ວ່າຈະຕັ້ງ ທັບຢູ່ບ່ອນໃດ ເວລາໃດ ກໍ່ມີການແບ່ງກຳລັງອອກເປັນຈຸ ເປັນໝູ່ ເປັນໝວດ ເປັນກົມກອງ (ຕາມລະດັບກອງກຳລັງ) ເພື່ອຮັບຜິດຊອບດ້ານພະລາທິການ ເຊັ່ນ: ຈັດຕັ້ງຈຸລ່າເນື້ອ, ຊອກຫາເກັບຜັກຫັກໜໍ່ມາກິນ, ຈຸຂົນຂວາຍ ຫຼືແລກປ່ຽນ ຊື້ຂາຍ ຫຼືເວລາທີ່ສະຖານະການອຳນວຍ ກໍ່ຈັດຕັ້ງການຊ່ວຍເຫຼືອປະຊາຊົນທຳ ການຜະລິດ ຫຼືຈັດຕັ້ງກົມກອງຜະລິດ. ປະຕິບັດຄຳຂວັນຂອງສູນກາງພັກທີ່ວ່າ: ສັດຕູມາເຮົາຕີ ສັດຕູໜີເຮົາປັບປຸງກຳລັງ ແລະທຳການຜະລິດເພື່ອປົກປ້ອງ ປະຊາຊົນ ແລະປະເທດຊາດ, ປົກປ້ອງປະຊາຊົນ ໃຫ້ພວກເພີ່ນຢູ່ດີມີແຮງ, ພວກເພີ່ນກໍ່ຍູທ່າງທຳມາຫາກິນ, ທຳການຜະລິດໄດ້ຫຼາຍສົ່ງໄປລ້ຽງອ້າຍນ້ອງ ທະຫານທີ່ເຮັດໜ້າທີ່ສູ້ຮົບຢູ່ແນວໜ້າ.

ກົມກອງຕັ້ງຢູ່ບ່ອນໃດ, ບ້ານໃດ, ກໍ່ຈັດຕັ້ງກັນອອກແຮງງານ ເຮັດໄຮ່-ເຮັດນາ, ປູກຝັງ-ລ້ຽງສັດ, ປະຕິບັດຕາມຄຳຂວັນທີ່ວ່າ: ກອງທະຫານຢູ່ບ່ອນໃດໃຫ້ປະຊາຊົນອຸ່ນໃຈ, ກອງທະຫານໜີໄປປະຕິບັດໜ້າທີ່ໃຫ້ປະຊາຊົນຈົ່ມຫາຄິດຮອດ, ເວລາທະຫານບໍ່ມາປະຊາຊົນຄິດຮອດ. ບັນດາກົມກອງທີ່ຕັ້ງທັບຢູ່ເຂດແນວຫຼັງເປັນຕົ້ນກະຊວງ, ສຳນັກງານ-ອົງການ, ເຂດຍ່ອຍຖ້າມີເງື່ອນໄຂກໍ່ຈັດຕັ້ງກັນເຮັດນາ, ປູກຝັງ-ລ້ຽງສັດ, ເພີ່ມພູນຜະລິດຜົນ ແລ້ວສົ່ງໄປໃຫ້ອ້າຍນ້ອງທະຫານທີ່ພວມປະຕິບັດໜ້າທີ່ຢູ່ສະໜາມຮົບ.

ນອກນັ້ນ, ບ່ອນມີເງື່ອນໄຂ ກອງທັບເຮົາຍັງໄດ້ຈັດຕັ້ງກັນຊອກຫາແຫຼ່ງລາຍຮັບມາໃຫ້ຕົນ ເປັນຕົ້ນຢູ່ເຂດພາກໃຕ້ (ເຊຄຳພໍ)ເຂດນັ້ນມີບໍ່ເກືອ ທະຫານເຮົາໄດ້ຈັດຕັ້ງກອງຜະລິດເກືອຂຶ້ນ, ບາງປີສາມາດຜະລິດໄດ້ 60 ໂຕນ, ຈັດຕັ້ງໜ່ວຍຜະລິດເຄື່ອງມື, ບ່ອນສ້ອມແປງອາວຸດ, ບ່ອນຜະລິດໝາກມິນ, ໝາກແຕກ ແລະ ອາວຸດແບບປະຖົມ-ປະຖານ ຢູ່ເຂດໂພນໂຮງ, ນ້ຳຕອນ ແຂວງວຽງຈັນ ແລະເຂດດັກທ່າງ, ຫາດຮ້າຍ (ພາກໃຕ້), ພິເສດຢູ່ເຂດພາກໃຕ້ ກອງທະຫານເຮົາຍັງໄດ້ຈັດຕັ້ງໜ່ວຍລ່າສັດ, ຫາປາ, ລ້ຽງສັດ ເພື່ອເຮັດຊີ້ນຕ່ອງ, ປາແຫ້ງ, ປາແດກ. ລຳລຽງຂົນສົ່ງໃຫ້ກົມກອງທະຫານຢູ່ແນວໜ້າ.

ຢູ່ຂັ້ນຮາກຖານ ກຳລັງປະກອບອາວຸດ ໄດ້ຈັດຕັ້ງພະນັກງານລົງກໍ່ສ້າງຮາກຖານລະດົມຂົນຂວາຍມະຫາຊົນປະກອບສະບຽງອາຫານໄປໃຫ້ແນວໜ້າ, ສົມທົບໃສ່ກັບຕີສັດຕູ, ສັດຕູປະລາໄຊແລ້ວຢຶດເອົາເຄື່ອງສຶນເສິກມາປະກອບໃຫ້ທະຫານເຮົາ ແລະລ້ຽງດູກອງທັບ, ຂົນຂວາຍພາຫະນະອາວຸດ, ອາຫານ ການກິນນຳທະຫານສັດຕູ ຜູ້ທີ່ມີນ້ຳໃຈຮັກຊາດ ແລ້ວມາປະກອບໃຫ້ກຳລັງປະຕິວັດຂອງພວກເຮົາ, ພິເສດມາຮອດຊຸມປີ 60 ຂອງສະຕະວັດທີ 20 ກອງທະຫານພວກເຮົາໄດ້ຮັບການຊ່ວຍເຫຼືອຈາກກອງທັບ ລັດຖະບານ ແລະ ປະຊາຊົນ ໃນຄ້າຍສັງຄົມນິຍົມ ເປັນຕົ້ນແມ່ນ ຫວຽດນາມ ສະຫະພາບໂຊວຽດ ແລະ ສປປ ຈີນ ແລະປະເທດອື່ນໆ.

ກ້າວເຂົ້າປີ 1964 ສະພາສູງຂອງອາເມຣິກາ ໄດ້ຕົກລົງໃຫ້ການຊ່ວຍເຫຼືອແກ່ລາຊະອານາຈັກລາວ ເປັນຈຳນວນເງິນ 150 ລ້ານໂດລາສະຫະລັດ ໃນວົງເງິນງົບປະມານປີ 1963-1964 ເພື່ອນຳໃຊ້ເຂົ້າໃນການກໍ່ສ້າງກອງທັບ ລາຊະອານາຈັກລາວ, ເປັນຕົ້ນແມ່ນການເພີ່ມກຳລັງພົນຂຶ້ນເຖິງ 62.000 ຄົນ, ເພີ່ມດ້ານອາວຸດ ແລະອຸປະກອນສົງຄາມທີ່ທັນສະໄໝຕື່ມເຊັ່ນ: ເຮືອບິນສູ້ຮົບ, ລົດຕັງ, ປືນໃຫຍ່ 155 ມມ... ພ້ອມນັ້ນຈັກກະພັດອາເມຣິກາ ຍັງສັ່ງໃຫ້ທະຫານ ພູມີ ໜໍ່ສະຫວັນ ແລະທະຫານກອງແລ ບຸກຕີບຸງດຍຶດເຂົ້າເຂດພູພຸງນາກາຍ (ແຂວງຄຳມ່ວນ) ທີ່ຂຶ້ນກັບເຂດປົດປ່ອຍພາກກາງ, ໂດຍມີຈຸດປະສົງເພື່ອຕັດເສັ້ນທາງຂົນສົ່ງລະຫວ່າງພາກໃຕ້ ແລະພາກເໜືອ. ຢູ່ທີ່ບ້ານກອກຄະນະປະຈຳຂອງກຸ່ມຊີອາໂຕ ໄດ້ໄຂກອງປະຊຸມ ເພື່ອຄົ້ນຄວ້າສະພາບການຕ່າງໆຢູ່ລາວ ແລະວາງແຜນການແຊກແຊງເຂົ້າລາວ ເພື່ອຕໍ່ຕ້ານກັບຄອມມູນິດ. ຈາກນັ້ນ ພວກເຂົາໄດ້ສັ່ງເຢແອັມ ທີ 13 ໂຈມຕີຍຶດເອົາຈຸດສູງພູໜອງ ແນໃສ່ນາບຂູ່ ແລະ ຕັດເສັ້ນທາງເລກທີ 7 ທີ່ຕິດຕໍ່ກັບຫວຽດນາມ. ຕໍ່ຈາກນັ້ນ ພວກເຂົາໄດ້ສົ່ງ ທະຫານໄປບຸກໂຈມຕີເຂົາເຂດນ້ຳຕຽນ, ນ້ຳມັດ, ພ້ອມທັງໃຊ້ເຮືອບິນສູ້ຮົບ ຂອງ ພວກເຂົາບິນຈາກຖານທັບເຮືອທີ 7 ເຂົ້າມາຍິງທຳລາຍເຂດຕ່າງໆເຊັ່ນ: ທົ່ງ ໄຫຫີນ, ເມືອງພັ້ນ, ບ້ານໂຄ້ງ, ທ່າວຽງ ແລະ ທ່າໂທມ.

ພາຍຫຼັງການປະລາໄຊໃນລະດູແລ້ງປີ 1965-1966 ກ້າວເຂົ້າປີ 1967 ສັດຕູໄດ້ໃຊ້ກຳລັງທະຫານຫຸ່ນວຽງຈັນ 6 ກອງພັນ ພາຍໃຕ້ການຊ່ວຍໜູນໂດຍ ກົງຂອງກອງທັບອາກາດອາເມຣິກາ ເປີດການເຄື່ອນທັບບຸກໂຈມຕີບຸງດຍຶດເຂົ້າ ເຂດປົດປ່ອຍນ້ຳບາກ, ພວກເຂົາທ້ອນໂຮມບັນດາເຢແອັມ ເຄື່ອນທີ່ທະຫານ ຫຸ່ນວຽງຈັນ ບຸກໂຈມຕີບຸງດຍຶດສົມທົບກັບກຳລັງພິເສດເຂົ້າຍຶດຈຸດສູງຕ່າງໆ ແລະຕີເລິກເຂົ້າໄປໃນເຂດປົດປ່ອຍ, ພວກເຂົາສັງເກດຕີລາຄາວ່າ: ລະບົບການ ຈັດຕັ້ງ ແລະ ການສູ້ຮົບຂອງທະຫານປະເທດລາວຢູ່ໃນລະດັບກອງພັນນ້ອຍ, ທະຫານຫຸ່ນວຽງຈັນ ຢູ່ໃນລະດັບກອງພັນໃຫຍ່, ມີການສະໜັບສະໜູນຈາກຍົນ ສູ້ຮົບທີ່ທັນສະໄໝ ແລະມີປືນໃຫຍ່ຊ່ວຍໜູນ.

ແຕ່ກົງກັນຂ້າມ ກຳລັງພວກເຮົາສາມາດຕີໃຫ້ພວກເຂົາປະລາໄຊ, ສາມາດ ປັດເຂ່ຍພວກສັດຕູອອກຈາກວົງສູ້ຮົບໄດ້ເຖິງ 3.200 ກວ່າຄົນ (ໃນນັ້ນຖືກຈັບ ເປັນຊະເລີຍເສິກໄດ້ 2.000 ກ່ວາຄົນ ), ຍຶດ ແລະທຳລາຍປືນເດກາ ແຊັດ 34 ກະບອກ, ປືນຄົກ 47 ກະບອກ, ປືນກົນກາງ 25 ກະບອກ, ປືນໃຫຍ່ 105 ມມ 9 ກະບອກ, ປືນໃຫຍ່ 75 ມມ. 2 ກະບອກ, ລົດຂົນສົ່ງ 20 ຄັນ, ຍິງເຮືອບິນເຕ 28 ຕົກ 1 ລຳ ແລະເຮືອບິນເຮລິກົບແຕ 1 ລຳ. ຈາກນັ້ນພວກ ເຂົາໄດ້ເປີດບັ້ນຮົບຕ່າງໆ ເຂົ້າທົ່ງໄຫຫີນຊ່ຽງຂວາງເປັນຕົ້ນ: ບັ້ນຮົບເມືອງສູຍ, ບັ້ນຮົບພູກຸດຈອມເຫຼັກ,

ບັ້ນຮົບປົດປ່ອຍທົ່ງໄຫຫີນ-ຊ່ຽງຂວາງ... ແຕ່ລະບັ້ນຮົບກອງລຳລ່ຽງ ແບກຫາບ 368 ກໍ່ໄດ້ປະກອບສ່ວນ, ໃນນັ້ນຕົ້ນຕໍແມ່ນການກະກຽມປຸກ, ແປງ ສາງມ້ຽນເຄື່ອງ, ກຽມພ້ອມແບກຫາບລຳລ່ຽງ ຂົນເຂົ້າປາ-ອາຫານ, ພາຫະນະ ອາວຸດ ແລະລູກກະສຸນ ທີ່ຂະບວນລົດຂົນສົ່ງມາແຕ່ຫວຽດນາມເຊັ່ນ: ບັ້ນຮົບ ໂອເດແອນ, ບັ້ນຮົບນ້ຳບາກ, ບັ້ນຮົບພູກຸດ, ບັ້ນຮົບເມືອງສູຍ, ບັ້ນຮົບພູລານ ປ່າໄຜ່, ບັ້ນຮົບທົ່ງໄຫຫີນ-ຊ່ຽງຂວາງ, ບັ້ນຮົບສາລາແດນດິນ 1, 2, ບັ້ນຮົບ ສາລາພູຄູນ... ເວົ້າລວມແລ້ວທຸກໆສະໜາມຮົບທີ່ພວກຈັກກະພັດກໍ່ຂຶ້ນຢູ່ເຂດ ທົ່ງໄຫຫີນ-ຊ່ຽງຂວາງ ເວົ້າໄດ້ວ່າມີໜ້າກອງລຳລ່ຽງແບກຫາບ 368 ເຂົ້າຮ່ວມ ເພື່ອລຳລ່ຽງສະບຽງອາຫານ ແລະອາວຸດຍຸດທະພັນ.

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ ສູນກາງໄດ້ມີຄຳສັ່ງທັນທີດ ເອົາກອງລຳລ່ຽງ 368 ໂດຍການເຫັນດີເປັນເອກະພາບຂອງຂັ້ນເທິງ ກອງລຳລ່ຽງ 368 ໄດ້ຍົກຍ້າຍລົງມາສ້າງສອນນິຄົມຢູ່ບ້ານຝາຍ, ເມືອງຄຳ ແຂວງຊ່ຽງຂວາງ ແລະສ້າງສອນນິຄົມລາດຮ້ອງ. ວຽກທີ່ກອງ 368 ເຮັດໃນແຕ່ລະວັນ ກໍ່ແມ່ນ ຖາງປ່າເຮັດສວນ, ການຖາງປ່າກໍ່ຕ້ອງໄດ້ລະມັດລະວັງເພາະຢ້ານຖືກລະເບີດທີ່ ໂຈນອາກາດອາເມຣິກາມາຖິ້ມໃສ່ຍັງບໍ່ທັນແຕກ, ການຂຸດດິນປູກຝັງ ກໍ່ເຊັ່ນດຽວ ກັນ, ບໍ່ກ້າທີ່ຈະສັບຊ່າວ ແລະຂຸດລົງເລິກ ເພາະຢ້ານຂຸດລົງຖືກລູກລະເບີດ. ສະນັ້ນ ການສ້າງນິຄົມທັງສອງແຫ່ງນີ້ ປູກໄດ້ພຽງແຕ່ຜັກກາດ, ກະລຳປີ, ໝາກ ອຶ, ໝາກເຂືອ, ໝາກເຜັດ, ກ້ວຍ ແລະອ້ອຍ, ເວົ້າລວມແມ່ນພືດລົ້ມລຸກ, ປານນັ້ນ ມີຫຼາຍໆຄັ້ງທີ່ເອື້ອຍນ້ອງຈູດສວນ ແລະຖາງປ່າ ກໍ່ມີລູກລະເບີດແຕກໃສ່.

ຍ້ອນສະພາບການສ້າງນິຄົມບໍ່ຮັບປະກັນແກ່ຊີວິດ ແລະຊັບສິນ ຄືແນວ ນັ້ນ, ມາຮອດປີ 1975 ສູນກາງກໍ່ຄືຄະນະບັນຊາການທະຫານເຂດຊຽງຂວາງ ຈຶ່ງຫັນເອົາກຳລັງກອງ 368 ໄປສ້າງໂຮງງານເຂົ້າໜົມເພື່ອຜະລິດເຂົ້າປຸ້ນແຫ້ງ, ເຂົ້າໜົມ, ເສັ້ນລ້ອນ, ເສັ້ນເຝີ... ຢູ່ທີ່ຄັງໄຂ

ແລະກໍ່ແມ່ນປີດຽວກັນນັ້ນ ທາງສູນກາງໄດ້ມີຄຳສັ່ງໃຫ້ກອງບັນຊາການ ທະຫານເຂດຊຽງຂວາງ ສົມທົບກັບຄະນະກອງ 368 ຄັດເລືອກເອົາພະນັກ ງານ-ນັກຮົບ ທີ່ຍັງໂສດ ສຸຂະພາບແຂງແຮງ ຈຳນວນໜຶ່ງມາຈັດຕັ້ງເປັນກອງ 875 ເພື່ອນຳກຳລັງເຂົ້າຍຶດອຳນາດ ແລະ ສະແດງກຳລັງທີ່ນະຄອນຫຼວງວຽງຈັນ ນຳໂດຍ: ສະຫາຍ ນາງ ອັນຄຳ ທິບພະວົງ ແລະສະຫາຍ ນາງ ສີພາ, ພ້ອມນັ້ນ ຂັ້ນເທິງໄດ້ແຕ່ງຕັ້ງມອບໝາຍໜ້າທີ່ໃຫ້ທັງສອງສະຫາຍ ນີ້ເປັນຄະນະກອງ ຄື:

ນາງ ອັນຄຳ ທິບພະວົງ ເປັນຫົວໜ້າການທະຫານ

ນາງ ສີພາ ເປັນຫົວໜ້າການເມືອງ.

ພາກສ່ວນຢູ່ກໍ່ໄດ້ອອກແຮງຜະລິດເຂົ້າໜົມ, ເສັ້ນເຝີ, ເສັ້ນເຂົ້າປຸ້ນ, ເສັ້ນລ້ອນ ວັດຖຸດິບທີ່ນຳມາປ້ອນໂຮງງານແມ່ນເກັບຊື້ຈາກພໍ່ແມ່ປະຊາຊົນ ແລະ ນິຄົມເຊັ່ນ: ມັນຕົ້ນ, ສາລີ ແລະແປ້ງເຂົ້າ, ແປ້ງສາລີ ມາແຕ່ຕ່າງປະເທດ. ຈາກນັ້ນກອງ 368 ໄດ້ຍົກຍ້າຍມາຢູ່ໂຮງງານເຂົ້າໜົມຫຼັກ 4 ນະຄອນຫຼວງ ວຽງຈັນ ຢູ່ທີ່ນີ້ການຈັດຕັ້ງຍັງຮັກສາຄືເກົ່າໂດຍມີ:

ສະຫາຍ ນາງ ທອງດີ ເປັນຫົວໜ້າການເມືອງ

ສະຫາຍ ນາງ ສີທົນ ເປັນຫົວໜ້າການທະຫານ

ທັງສອງສະຫາຍໄດ້ນຳພາເອື້ອຍນ້ອງກອງ 368 ອອກແຮງຕັ້ງໜ້າ ປະຕິບັດໜ້າທີ່ຜະລິດເຂົ້າໜົມ, ເສັ້ນລ້ອນ, ເສັນໝີ່ແຫ້ງ, ເສັ້ນເຝືອອກຮັບໃຊ້ ກອງທັບ ກໍ່ຄືຮັບໃຊ້ສັງຄົມ, ສະເລ່ຍແລ້ວແຕ່ລະປີນຳລາຍໄດ້ເຂົ້າສູ່ກອງທັບ ຫຼາຍພໍສົມຄວນ.

# VI
# ຜົນງານຕ່າງໆ ທີ່ກອງລຳລຽງແບກຫາບ 368 ສ້າງມາໄດ້





# 1.ຜົນງານໃນການປະຕິບັດໜ້າທີ່

ນັບແຕ່ມື້ກຳເນີດເປັນຕົ້ນມາ ກອງລຳລຽງແບກຫາບ 368 ໄດ້ປະກອບສ່ວນຜົນງານຢ່າງຫຼວງຫຼາຍໄວ້ປະດັບເອ້ປຶ້ມຄຳປະຫວັດສາດຂອງຊາດລາວ, ເປັນການຢັ້ງຢືນເຖິງບົດບາດ ຍິງ-ຊາຍ ການປະກອບສ່ວນຕໍ່ສູ້ ກູ້ເອກະລາດ ປົດປ່ອຍປະເທດຊາດ, ແລະ ທັງເປັນການສະແດງເຖິງກຽດສັກສີຂອງແມ່ຍິງລາວໃນຍຸກສະໄໝ. ບັນດາຜົນງານເຫຼົ່ານັ້ນ ບໍ່ສາມາດນຳມາບັນລະຍາຍໄດ້ໝົດ, ເພາະເກືອບເວົ້າໄດ້ວ່າທຸກໆສະໜາມຮົບຢູ່ທົ່ງໄຫຫີນ-ຊຽງຂວາງ ນັບແຕ່ປີ 1968 ເປັນຕົ້ນມາ ລ້ວນແຕ່ມີການປະກອບສ່ວນຂອງກອງລຳລຽງແບກຫາບ 368.

ເວົ້າສະເພາະແມ່ນການຂົນເຂົ້າລົງລົດ ໄປມຸ້ງນຢູ່ສາງ ຫຼື ການຂົນເຂົ້າຂຶ້ນລົດ ໄປສົ່ງໃຫ້ອ້າຍນ້ອງທະຫານຢູ່ແນວໜ້າ, ໃນໄລຍະສົງຄາມໜັກໜ່ວງ (1968-1973) ເຊິ່ງເກີດມີບັ້ນຮົບທີ່ດຸເດືອດທີ່ສຸດ ສຳລັບປະເທດລາວ, ຄົນລາວທີ່ຖືກເຂັ່ນຂ້າຮາວີ ຜືນແຜ່ນດິນຖືກຈູດເຜົາທຳລາຍຢ່າງໜັກໜ່ວງຈາກລູກລະເບີດຂອງພວກຈັກກະພັດ ແລະປະຕິການຂາຍຊາດ. ສະເລ່ຍເອື້ອຍນ້ອງຜູ້ໜຶ່ງໆເຮັດວຽກເທົ່າ 10 ເທົ່າ 20 ຄົນ. ແບກຫາບແຕ່ 20-50 ກິໂລ ບາງຄົນລື່ນນັ້ນເຊັ່ນ: ນາງລີລາ ແບກໄດ້ 80 ກິໂລ, ເຖິງແມ່ນນາງບໍ່ໄດ້ ສັງກັດຢູ່ກອງລຳລຽງແບກຫາບ 368 ແຕ່ການແບກຫາບຂອງນາງ ກໍ່ເປັນບົດຮຽນອັນສຳຄັນໃຫ້ແກ່ເອື້ອຍນ້ອງກອງລຳລຽງແບກຫາບ 368 .

ເມື່ອສົງຄາມຍຸຕິລົງກອງ 368 ກໍ່ເປັນກອງທຳອິດ ທີ່ຫັນເຂົ້າສູ່ການເພີ່ມພູນຜະລິດຜົນ ບຸກເບີກສ້າງສອນນິຄົມຢູ່ 2 ແຫ່ງ, ຢູ່ລາດຮ້ວ ແລະ ຢູ່ເມືອງຄຳ. ເອື້ອຍນ້ອງກອງ 368 ໄດ້ຫັນລົງກໍ່ສ້າງແລະທຳການຜະລິດເຂົ້າໜົມ, ເສັ້ນລ້ອນ, ເສັ້ນໝີ່, ເສັ້ນເຂົ້າປຸ້ນ ແລະອື່ນໆເພື່ອຮັບໃຊ້ໃນກອງທັບກໍ່ຄືສັງຄົມ.

# 2. ຜົນງານການຍ້ອງຍໍກົມກອງລວມໝູ່

ຕະລອດໄລຍະແຫ່ງການຮັບໃຊ້ບັນດາສະໜາມຮົບ ຄຽງບ່າ-ຄ່ຽງໄຫຼ່ ກັບອ້າຍນ້ອງເພດຊາຍ ກອງລ້ຳລຽງແບກຫາບ 368 ມີຜົນງານໄດ້ຮັບການຍ້ອງຍໍຄື:

- ນາມມະຍົດກອງວິລະຊົນແຫ່ງຊາດ.
- ໝຽນໄຊອິດສະລະຊັ້ນ I ໄດ້ 1 ໜ່ວຍ
- ໝຽນໄຊອິດສະລະຊັ້ນ II ໄດ້ 1 ໜ່ວຍ
- ໝຽນໄຊອິດສະລະຊັ້ນ III ໄດ້ 2 ໜ່ວຍ
- ໝຽນກາແຮງງານ 1 ໜ່ວຍ
- ທຸງໄຊ 1 ຜືນ

ນອກນັ້ນຍັງມີໃບຍ້ອງຍໍຂັ້ນສູນກາງ, ເຂດ ແລະກົມກອງ ອີກຫຼາຍໃບ ພິເສດຍັງມີຫຼາຍສະຫາຍໄດ້ຮັບນາມມະຍົດເປັນບຸກຄົນດີເດັ່ນ ໄດ້ຮັບການຍ້ອງຍໍຈາກຂັ້ນຕ່າງໆເປັນຕົ້ນ:

- ນາມມະຍົດນັກຮົບແຂ່ງຂັ້ນ
- ໝຽນໄຊພິລະອາດຫານ ຊັ້ນ I, ຊັ້ນ II, ຊັ້ນ III
- ໝຽນໄຊອິດສະລະ ຊັ້ນ I, ຊັ້ນ II, ຊັ້ນ III
- ໝຽນໄຊແຮງງານ ຊັ້ນ I, ຊັ້ນ II, ຊັ້ນ III
- ໝຽນກາແຮງງານ
- ໝຽນກາຕໍ່ສູ້ຕ້ານຈັກກະພັດອາເມຣິກາ
- ໝຽນກາລະນຶກ 5 ປີ
- ໃບຍ້ອງຍໍປະເພດຕ່າງໆຈຳນວນຫຼວງຫຼາຍ

# 3. ບັນດາບົດຮຽນ ໃນການຊີ້ນຳນຳພາ ແລະຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງຄະນະກອງລຳລ່ຽງແບກຫາບ 368


ດ້ວຍຄວາມເອົາໃຈໃສ່ ຂອງຄະນະພັກ ຄະນະບັນຊາ ໄດ້ສຶກສາອົບຮົມ ນຳພາແນວຄິດເປັນປະຈຳ ຄະນະນຳກອງລຳລ່ຽງແບກຫາບ 368 ກຳໄດ້ທາດ ແທ້ ແລະລັກສະນະຈຸດພິເສດຂອງສົງຄາມຢູ່ລາວ ແມ່ນສົງຄາມປະຊາຊົນ, ສະນັ້ນ ລັກສະນະຂອງສົງຄາມຢູ່ລາວ ຈາກສົງຄາມແຊກແຊງກາຍມາເປັນສົງ ຄາມພິເສດ ແລະສົງຄາມພິເສດເພີ່ມທະວີ ຍ້ອນແນວນັ້ນ ພັກຊີ້ນຳກຳລັງປະກອບ ອາວຸດປະຊາຊົນ ໃນນັ້ນລວມທັງກອງລຳລ່ຽງແບກຫາບ 368. ພັກໄດ້ໄຈ້ແຍກ, ຊີ້ນຳ ແລະກຳນົດຢ່າງຈະແຈ້ງ ແລະຖືກຕ້ອງກ່ຽວກັບສະພາບການທັງຢູ່ໃນ ພາກພື້ນ ແລະໃນໂລກ, ກຳນົດຢ່າງຈະແຈ້ງເປົ້າໝາຍຂອງການປະຕິວັດ, ເປົ້າ ໝາຍບຸກໂຈມຕີສັດຕູ, ກໍ່ຄືກຳນົດແນວທາງ ແຜນຍຸດທະສາດອັນລະອຽດເພື່ອ ນຳພາ ແລະດຳເນີນການຕໍ່ສູ້.

ຄວາມສາມັກຄີ ແມ່ນບໍ່ເກີດແຫ່ງຄວາມສຳເລັດ, ເຖິງແມ່ນວ່າເອື້ອຍ ນ້ອງກອງ 368 ຈະຖືກລະດົມມາ, ເປັນລູກຄົນລະພໍ່ ລະແມ່ດັ່ງບູຮານເພີ່ນກ່າວ ໄວ້ວ່າ "ລູກຫຼາຍພໍ່ ຕໍ່ຫຼາຍຮັ່ງ" ແຕ່ຄະນະບັນຊາ ກໍ່ສາມາດເຕົ້າໂຮມຄວາມສາ ມັກຄີ, ຄວາມເປັນເອກະພາບ, ເປັນຈິດໜຶ່ງໃຈດຽວກັນ "ວ່າໜຶ່ງ ກໍ່ຄືໜຶ່ງ ບໍ່ມີ ສອງ" ໝາຍຄວາມວ່າສັ່ງເອື້ອຍນ້ອງເຮັດສິ່ງໃດ ກໍ່ແມ່ນຕະລຸມບອນກັນເຮັດ, ເຮັດຈົນສຸດຄວາມສາມາດ, ສະແດງອອກເວລາເຈັບເປັນເລັກໆນ້ອຍໆ (ປະຈຳ ເດືອນມາ) ເອື້ອຍນ້ອງຍັງຂານອາສາຮ່ວມກັບໝູ່ເພື່ອນໄປລຳລ່ຽງຂົນສົ່ງ ແບກ ຫາບ ຕາມເງື່ອນໄຂຕົວຈິງ ແລະຊົດຊ່ອຍກັນ ເຊິ່ງເຄື່ອງທີ່ແບກຫາບນັ້ນບໍ່ແມ່ນ ຂອງທຳມະດາ, ຖ້າແມ່ນເຂົ້າກໍ່ແມ່ນເປົ້າ 50 ຫຼື 100 ກິໂລ, ຖ້າແມ່ນລູກກະສຸນ ແກັດໜຶ່ງໆບໍ່ຕ່ຳກວ່າ 20 ຫຼື 50-80 ກິໂລ, ຖ້າແມ່ນປືນ ແລະລູກປືນໃຫຍ່ ກໍ່ແມ່ນແຕ່ 15-50 ກິໂລ, ໄລຍະທາງພັດໄກ, ຂຶ້ນພູ ລົງຫ້ວຍ, ຂ້ວາມນ້ຳລຸຍຕົມ.

ຍ້ອນຮູ້ປະສານສົມທົບ ແລະກຳໄດ້ໂອກາດ; ຮູ້ກຳໄດ້ພູມີປະເທດ, ເຮັດໃຫ້ການລຳລຽງແບກຫາບແຕ່ລະເທື່ອອອກສູ່ສະໜາມ ຂອງເອື້ອຍນ້ອງສາມາດຮັບປະກັນໄດ້ຄວາມປອດໄພ, ເວົ້າເຖິງການກິນຢູ່ ບາງໂອກາດກໍ່ອຶດຫີວ ແຕ່ຍ້ອນຮູ້ປະສານສົມທົບ ແລະ ຄວາມມີໄຫວພິບຂອງຄະນະກອງ ແລະເອື້ອຍນ້ອງສະແດງອອກໃນເວລາອຶດເຂົ້າ ຄະນະກອງໄດ້ຈັດຕັ້ງ ຫຼື ນຳພາເອື້ອຍນ້ອງອອກລະດົມເຂົ້າກິນ ເປັນຕົ້ນ ໄປຫາພໍ່ແມ່ປະຊາຊົນ, ກຳລັງເປັນກາງຮັກຊາດ, ອ້າຍນ້ອງທະຫານແນວລາວຮັກຊາດ ແລະ ທະຫານອາສາສະໝັກຫວຽດນາມ ຫຼື ບໍ່ກໍ່ສວຍໂອກາດຍາມກາງຄືນທີ່ໂຈມຕາດອາເມຣິກາ ມາຫວ່ານເຂົ້າປາອາຫານໃຫ້ທະຫານຂອງພວກເຂົາ ( ເຂົາມາຫວ່ານກາງຄືນບໍ່ຖືກເປົ້າໝາຍ ) ຄະນະກອງໄດ້ຈັດຕັ້ງກັນ ອອກໄປຊອກເກັບເອົາມາກິນ [69]

ທັງໝົດນັ້ນຍ້ອນຄວາມເປັນເອກະພາບ ແລະຄວາມຕັດສິນໃຈສູງຂອງເອື້ອຍນ້ອງພະນັກງານ-ນັກຮົບທ່ວກອງ 368 ດັ່ງຄຳເວົ້າຂອງທ່ານຜູ້ນຳ ເຄີຍເວົ້າວ່າ: **ຖ້າມີຄວາມສາມັກຄີກັນແລ້ວ ຂຸດພູຖົມທະເລ ກໍ່ຍັງໄດ້.**

24 / VII



69. *ຕາມການເລົ່າຂອງ ນາງ ທອງດີ ອະດີດຫົວໜ້າການເມືອງກອງ 368.*







# VII. ກອງ 37

ກອງ 37 ແມ່ນກອງລຳລຽງແບກຫາບຂອງສູນກາງ ຊຶ່ງສ້າງຕັ້ງຂຶ້ນຢູ່ນາໄກ່ ເມືອງວຽງໄຊ ແຂວງຫົວພັນ, ຖານທີ່ໝັ້ນຂອງການປະຕິວັດ ຫຼື ທີ່ຕັ້ງສຳນັກງານອົງການ ຂອງສູນກາງພັກມາແຕ່ດົນນານແລ້ວ.

ເມືອງວຽງໄຊ ຕັ້ງຢູ່ເທິງບໍລິເວນທີ່ຮຽກວ່າ ທົ່ງນາໄກ່ ອ້ອມຮອບໄປດ້ວຍພູຜາຫີນ ແລະປ່າໄມ້ດົກໜາ ລຽບຕາມສາຍທາງເລກ 6 ທີ່ເນັ່ງແຕ່ 3 ແຍກບ້ານທາງລ້ຽງອອກໄປສູ່ຊາຍແດນຫວຽດນາມ(ດ່ານນ້ຳໂສຍ), ຈຸດພິເສດຂອງພື້ນທີ່ແມ່ນເຕັມໄປດ້ວຍຜາຫີນທີ່ມີຖ້ຳ ຊຶ່ງເໝາະເປັນບ່ອນກຳບັງ ແລະ ຫ້ອງການບ່ອນເຮັດວຽກຂອງບັນດາທ່ານຜູ້ນຳສູນກາງພັກເຊັ່ນ: ຖ້ຳທ່ານໄກສອນ ພົມວິຫານ, ຖ້ຳປະທານສຸພານຸວົງ, ຖ້ຳທ່ານພູມີ ວົງວິຈິດ, ຖ້ຳທ່ານໜູຮັກ ພູມສະຫວັນ, ຖ້ຳທ່ານຄຳໄຕ ສີພັນດອນ, ແລະ ຖ້ຳທ່ານຜູ້ນຳອື່ນໆ...

ນອກຈາກນັ້ນຍັງມີບັນດາຖ້ຳອື່ນໆອີກເຊັ່ນ: ຖ້ຳນາແທ່ນ, ຖ້ຳນາໄກ່, ຖ້ຳໝາຫຼົງ, ຖ້ຳຜາແດງ, ຖ້ຳນາຫວ້ຽ, ຖ້ຳຄວາຍ ຖ້ຳຊ້າງລອດ ແລະຖ້ຳອື່ນໆເຊິ່ງບັນດາຖ້ຳເຫຼົ່ານີ້ ເໝາະສົມແກ່ການເກັບມ້ຽນອາວຸດ-ລູກກະສຸນ, ເຄື່ອງອຸປະໂພກ-ບໍລິໂພກ ແລະພາຫະນະຮັບໃຊ້ຕ່າງໆ ເພື່ອສະໜອງໃຫ້ແກ່ການຕໍ່ສູ້ປົດປ່ອຍປະເທດຊາດ. ຍ້ອນແນວນັ້ນ ສູນກາງພັກຈຶ່ງຕົກລົງໃຫ້ເຂດຖ້ຳເຫຼົ່ານັ້ນເປັນຄັງສາງ ເພື່ອຮອງຮັບເຂົ້າປາ-ອາຫານ, ເຄື່ອງອຸປະໂພກ-ບໍລິໂພກ, ບ່ອນເກັບມ້ຽນພາຫະນະ ອາວຸດ ແລະລູກກະສຸນ. ແຕ່ກຳລັງລຳລຽງແບກຫາບ ພັດມີຈຳກັດ ແລະບົດຮຽນປະສົບການຍັງມີໜ້ອຍ, ຍ້ອນແນວນັ້ນ, ສູນກາງພັກຈຶ່ງ

ຕົກລົງຂໍເອົ້ອຍນ້ອງ ຈຳນວນ 6 ຄົນ ຈາກກອງບັນຊາການທະຫານເຂດຊຽງຂວາງ ເພື່ອມາຊີ້ນຳ-ນຳພາຈັດຕັ້ງກອງລຳລຽງແບກຫາບ ຂອງສູນກາງ ທີ່ນາໄກ່ ເມືອງວຽງໄຊ ແຂວງຫົວພັນ. ແຕ່ເນື່ອງຈາກວ່າສະໜາມຮົບ ຢູ່ທາງເຂດທົ່ງໄຫຫີນ-ຊຽງຂວາງ ຍັງດຸເດືອດຢູ່ ການລຳລຽງແບກຫາບຍັງຕ້ອງການກຳລັງ ສະນັ້ນ ທາງກອງບັນຊາການທະຫານເຂດຊຽງຂວາງ ຈຶ່ງຕົກລົງໃຫ້ພຽງ 4 ສະຫາຍ ໃນນັ້ນມີ:

ສອງສະຫາຍຈາກກອງ 368 ຄື:
ສະຫາຍ ນາງ ອັນດີ
ສະຫາຍ ນາງ ສຸດຕາ

ແລະ ສອງສະຫາຍຈາກກອງ 769 ຄື:
ສະຫາຍ ນາງ ບົວຄອນ [70]
ສະຫາຍ ນາງ ຄຳພາ

.....

*70. ສະຫາຍ ຮ້ອຍຕີ ນາງ ບົວຄອນ ສາຍຜາສິດ*

*ເກີດເມື່ອປີ 1953 ທີ່ບ້ານມ່ວງໂພນສະຫວັນ ເມືອງແປກ ແຂວງຊຽງຂວາງ, ບ້ານຢູ່ປັດຈຸບັນບ້ານ ຈັດສັນ 194 ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ, ເຂົ້າການປະຕິວັດ 6/6/1966, ມາຢູ່ກອງ 368 ປີ1968, ຈາກນັ້ນປີ 1970 ຂັ້ນເທິງ ຕົກລົງໃຫ້ ສະຫາຍ ຂຶ້ນຊ່ວຍສ້າງຕັ້ງກອງລຳລຽງແບກຫາບສູນກາງ ທີ່ນາໄກ່ ເມືອງວຽງໄຊ ແຂວງຫົວພັນ ແລະຖືກແຕ່ງຕັ້ງໃຫ້ເປັນຫົວໜ້າການທະຫານກອງລຳລຽງແບກຫາບ 37, ປີ1974 ຂັ້ນເທິງຕົກລົງໃຫ້ກອງ 37 ຈຳນວນໜຶ່ງເຂົ້າປະສົມຍຶດອຳນາດຢູ່ນະຄອນຫລວງວຽງຈັນ, ສະຫາຍໄດ້ນຳພາ ເອື້ອຍນ້ອງ ຈຳນວນດັ່ງກ່າວເຂົ້າຍຶດອຳນາດຢູ່ນະຄອນຫລວງວຽງຈັນ. ປີ1977 ຖືກຂັ້ນເທິງສົ່ງໄປຍົກລະດັບ ແລະ ຮຽນການທະຫານຊັ້ນຕົ້ນ ທີ່ຄ້າຍຈິນາຍໂມ້, ພາຍຫຼັງຮຽນຈົບ ຖືກສັບຊ້ອນໄປປະຕິບັດໜ້າທີ່ຢູ່ ໂຮງແຮມເຂດຊຽງຂວາງ (ຂຶ້ນກັບກະຊວງປ້ອງກັນປະເທດ), ປີ 1981 ສ້າງຄອບຄົວກັບ ສະຫາຍ ອິນຝາດ ສາຍຜາສິດ, ມີລູກ 4 ຄົນ ຈາກນັ້ນຍ້າຍໄປຢູ່ກົມພະລາທິການກອງທັບ, ບໍລິສັດພັດທະນາເຂດພູດອຍ ຫຼັກ 20 ຄຳເກີດ, ປີ 1995 ອອກພັກຜ່ອນ ຮັບເບ້ຍບຳນານ, ຕະຫຼອດໄລຍຊີ້ນຳ-ນຳພາ ແລະ ເຂົ້າຮ່ວມຂະບວນການປະຕິວັດ, ໄດ້ຮັບການຍ້ອງຍໍ: ຫຼຽນໄຊ ອິດສະລະຊັ້ນ III ຈຳນວນ 1 ໜ່ວຍ, ຫຼຽນໄຊພິລະອາດ ຫານຊັ້ນ III ຈຳນວນ 1 ໜ່ວຍ, ຫຼຽນ ກາແຮງງານຈຳນວນ 1 ໜ່ວຍ, ຫຼຽນກາຕໍ່ຕ້ານອາເມຣິກາ 1 ໜ່ວຍ. ຫຼຽນກາລະນຶກ 50 ປີກອງທັບ1 ໜ່ວຍ, ຫຼຽນກາລະນຶກ 60 ປີ 1 ໜ່ວຍ.*

ທ້າຍ 8/1970 ກອງບັນຊາການທະຫານເຂດຊຽງຂວາງໄດ້ເປີດກອງປະຊຸມຢູ່ຜາຫວາຍ ສະຫຼຸບຖອດຖອນບົດຮຽນ ພາຍຫຼັງສຳເລັດບັ້ນຕ່າວໂຈມຕີ "ບັ້ນຮົບກູ້ກຽດ" ເຖິງວັນທີ 2/9/1970 ທັງ 4 ສະຫາຍ ໄດ້ຂຶ້ນເມືອຮັບໜ້າທີ່ໃໝ່ຢູ່ຊຳເໜືອ, ເມືອຮອດນາໄກ່ ພວກສະຫາຍໄປພັກຢູ່ຖ້ຳຫ້ອງການເມືອງ, ຈາກນັ້ນໄດ້ລົງກວດກາສະຖານທີ່ ແລະເກັບກຳສະຖິຕິ, ຮັບຟັງການລາຍງານສະພາບການຈາກຫ້ອງການເມືອງ ແລະພາກສ່ວນກ່ຽວຂ້ອງ ແລະພ້ອມກັນຄົ້ນຄວ້າປຶກສາຫາລື, ວາງແຜນການໃນການຈັດຕັ້ງປະຕິບັດວຽກງານ. ເບື້ອງຕົ້ນເຫັນເປັນເອກະພາບກັນວ່າ ຄະນະກະກຽມຕ້ອງໄດ້ລົງຫາປະຊາຊົນ ປຸກລະດົມຂົນຂວາຍເອົາເອື້ອຍນ້ອງແມ່ຍິງເຂົ້າມາຮ່ວມ, ຂະນະທີ່ກຽມການຈັດຕັ້ງ ປະຕິບັດວຽກງານຢູ່ນັ້ນ ຄະນະກະກຽມໄດ້ຮັບຄຳສັ່ງໃຫ້ເອົາ 1 ສະຫາຍ ເຂົ້າຮ່ວມກອງປະຊຸມນຳສູນກາງທີ່ນາຄາວ ແລະເອົາ 1 ສະຫາຍ ໄປຮ່ວມກອງປະຊຸມນັກຮົບແຂ່ງຂັນຢູ່ປະເທດຈີນ, ສະນັ້ນຄະນະກະກຽມໄດ້ຕົກລົງໃຫ້ສະຫາຍ ນາງ ວັນດີ ເຂົ້າຮ່ວມກອງປະຊຸມນັກຮົບແຂ່ງຂັນ ຢູ່ນາຄາວ, ສະຫາຍ ນາງສຸດຕາ ໃຫ້ໄປຮ່ວມກອງປະຊຸມນັກຮົບແຂ່ງຂັນຢູ່ປະເທດຈີນ ສະນັ້ນ ຄະນະກະກຽມຈຶ່ງຍັງເຫຼືອພຽງ 2 ສະຫາຍ: ສະຫາຍ ນາງບົວຄອນ ສາຍຜາສິດ ສະຫາຍ ນາງຄຳພາ ອິນທະມາລີ.

ເດືອນ 12/1970 ຄະນະກະກຽມໄດ້ພ້ອມກັບຜູ້ຕາງໜ້າຫ້ອງການເມືອງ (ບຸນມີ), ຫ້ອງເສນາ(ຄຳສຸກ), ຫ້ອງພະລາເຂດ(ບົວທອງ), ລົງໄປລະດົມຂົນຂວາຍເອົ້ອຍນ້ອງແມ່ຍິງ ຢູ່ທິດເມືອງແອດ ໄດ້ 25 ຄົນ, ຈາກນັ້ນ ຈັດຕັ້ງສຶກສາອົບຮົມຮ່ຳຮຽນການທະຫານ, ການເມືອງຢູ່ສົບສານ. ເຂດລ້ອງມ້າ ເມືອງຊຽງຄໍ້. ການຮ່ຳຮຽນແມ່ນເຊີນຄູການທະຫານມາແຕ່ຫ້ອງເສນາມາສອນ, ການຮຽນມີທັງທິດສະດີ ແລະພາກປະຕິບັດຕົວຈິງ, ເຮັດແບບຢູ່ສະໜາມຮົບ, ມີການສອບເສັງ ແລະໃຫ້ຄະແນນຄັກແນ່, ຜ່ານການຮ່ຳຮຽນເປັນເວລາ 3 ເດືອນ.

ເຖິງເດືອນ 3/1971 ຄະນະໄດ້ລົງຂົນຂວາຍເອົາເອື້ອຍນ້ອງ ຢູ່ເຂດເມືອງຊຽງຄໍ້ ເຂົ້າມາຕື່ມອີກ ສາມາດຂົນຂວາຍໄດ້ 20 ກວ່າຄົນ, ມາຈັດຕັ້ງຝຶກ

ແອບຮ່ຳຮຽນຄືຊຸດກ່ອນ ຜ່ານການຮ່ຳຮຽນ 3 ເດືອນ ຈຶ່ງເອົາກຳລັງມາເຕົ້າ ໂຮມ ຢູ່ບ້ານນາແທ່ນ ເມືອງວຽງໄຊ ແຂວງຫົວພັນ ໃກ້ສາຍນ້ຳນົວ ແຄມທາງເລກ 6 ຫ່າງຈາກນາໄກ່ ປະມານ 5-6 ກິໂລ ແມັດ, ຕັ້ງເຮືອນລໍຖ້າກຳລັງມາຕື່ມ.

ເດືອນ 5/1971 ໄດ້ໄປລະດົມຢູ່ກັບເຂດເມືອງວຽງໄຊ ບ້ານຊຽງຊື ຊຽງລວງ ຊຳເໜືອ ໄດ້ກຳລັງມາຕື່ມ ອີກ 20 ກວ່າຄົນ ແລ້ວຈັດຕັ້ງຮ່ຳຮຽນການ ທະຫານໃຫ້ເຂົາເຈົ້າຢູ່ທີ່ບ້ານບັກ ເມືອງວຽງໄຊ.

ພາຍຫຼັງຮຽນຈົບ ແລ້ວກໍ່ເອົາມາໂຮມກັນຢູ່ບ້ານນາແທ່ນ ລວມກຳລັງ ໄດ້ 130 ຄົນ ; ປຸກເຮືອນນອນ 4 ຫຼັງ ສະໂມສອນ 1 ຫຼັງ. ມາຮອດເວລານີ້ເປັນ ອັນວ່າສາມາດຈັດຕັ້ງເປັນກອງຮ້ອຍໄດ້ແລ້ວ ສະນັ້ນຂັ້ນເທິງຈຶ່ງຕົກລົງຈັດຕັ້ງ ແລະ ປະກາດສ້າງກອງລຳລຽງແບກຫາບຂອງສູນກາງຂຶ້ນເອີ້ນວ່າ **"ກອງລຳ ລຽງແບກຫາບ 37 "** ໂດຍມີ:

ສະຫາຍ ນາງ ບົວຄອນ ສາຍຜາສິດ ເປັນຫົວໜ້າການທະຫານ.
ສະຫາຍ ນາງ ສຸດຕາ ເປັນຮອງຫົວໜ້າການທະຫານ.
ສະຫາຍ ນາງ ວັນດີ ທຳມະສິດ ເປັນຫົວໜ້າການເມືອງ
ສະຫາຍ ນາງ ຄຳພາ ອິນທະມາລີ ເປັນຮອງຫົວໜ້າການເມືອງ.
ແບ່ງອອກເປັນ 3 ໝວດ 10 ໝູ່ແລະ (ໃນນັ້ນ 1 ໝູ່ສຳນັກ)

ໝວດທີ 1. ສະຫາຍ ນາງຄຳພາ ອິນທະມາລີ ເປັນຫົວໜ້າ
ສະຫາຍ ນາງມະນີວອນ ຮອງ
ໝວດທີ 2 ສະຫາຍ ນາງ ສຸດຕາ ເປັນຫົວໜ້າ
ສະຫາຍ ນາງຈັນເພັງ ຮອງ
ໝວດທີ 3 ສະຫາຍ ນາງລຸນ ເປັນຫົວໜ້າ
ສະຫາຍ ນາງໂດຍ ເປັນຮອງ

ສະພາບເອື້ອຍນ້ອງສ່ວນຫຼາຍຍັງນ້ອຍ ອາຍຸ 12-20 ປີ ມາຈາກຄອບ ຄົວຊາວໄຮ່ນາ ຫ່າງໄກສອກຫຼີກ ລະດັບການສຶກສາຕ່ຳ ບາງຄົນຍັງກືກໜັງສື,

ສະພາບແນວຄິດກໍ່ຄັບແຄບ ເຫັນແກ່ໂຕ, ຄະນະບັນຊາ ກໍ່ຕ້ອງອອກແຮງຢ່າງໜັກ ໃນການສຶກສາ ອົບຮົມ ຈັດຕັ້ງ ນຳພາ ນັບແຕ່ການດຳລົງຊີວິດ, ການກິນ ຢູ່ ລວມໝູ່, ມີລະບຽບວິໄນ, ປະຕິບັດວຽກງານ, ໃນນັ້ນໄດ້ຈັດຕັ້ງການສຶກສາ ຮຳຮຽນ ຜູ້ຮູ້ສອນຜູ້ບໍ່ຮູ້, ຈັດຕັ້ງໜ່ວຍສິລະປະວັນນະຄະດີ ຮ້ອງລຳທຳເພງ, ການຫຼິ້ນກິລາການຍະກຳ, ຈັດຕັ້ງໜ່ວຍຊາວໜຸ່ມ ແມ່ຍິງ, ສະມາຊິກພັກ, ເອົາວຽກດີ ຄົນເດັ່ນ, ຜູ້ເປັນແບບຢ່າງ, ເອົາການສຳຫຼວດການ ຕຳນິ ກໍ່ສ້າງກັນ ປັບປຸງ ກັນໄປເທື່ອລະກ້າວ ຈຶ່ງມີຄວາມກ້າວໜ້າ ສາມັກຄີກັນຊ່ວຍເຫຼືອໃນການດຳລົງ ຊີວິດ ແລະເຮັດໜ້າທີ່.

ໜ້າທີ່ຕົ້ນຕໍແມ່ນຮັບຜິດຊອບແບກຫາບເຄື່ອງຂອງ ຈາກຂະບວນລົດ ລຳລຽງຂົນສົ່ງເຄື່ອງອຸປະໂພກ, ບໍລິໂພກ, ເຄື່ອງຍຸດໂທ, ນ້ຳມັນລົດ ລົງຈາກຂະ ບວນລົດແລ້ວຂົນເຂົ້າມ້ຽນສາງ ເປັນຕົ້ນ: ສາງນ້ຳມັນ ຢູ່ຊຽງລວງ, ສາງເຂົ້ານາ ແທ່ນ, ສາງຖ້ຳຫ້ອງການເມືອງ ສາງຖ້ຳນາໄກ່, ສາງອາວຸດຍຸດໂທ ຢູ່ນາແທ່ນ-ຈັ່ງແມ່ນມັນສູງມີຂັ້ນໄດຂຶ້ນປະມານ 200 ກວ່າຂັ້ນ ເອື້ອຍນ້ອງ ກອງ 37 ແບກແກ້ດລູກປືນຂຶ້ນມ້ຽນໃນຖ້ຳ. ນອກນັ້ນ ມີຫຼາຍມື້ ກໍ່ໄດ້ໄປຊ່ວຍທະຫານ ຊ່າງແສງ ເຮັດວຽກໃນການເຈາະຖ້ຳ ຢູ່ເຂດນາໄກ່.

ລະດູແລ້ງປີ 1971-1972 ສູນກາງພັກ ຕົກລົງໃຫ້ກຳລັງປະກອບອາວຸດ ເຮົາເປີດບັ້ນກວດລ້າງກຸ່ມກອງປຸ້ນຢູ່ດ້ານຮົບກຸ່ມພູວຽງ ກອງລຳລຽງແບກຫາບ 37 ໄດ້ຕະລຸມບອນລຳລຽງ ແກ້ດລູກປືນ, ສະບຽງອາຫານ ເຂົ້າຮັບໃຊ້ດ້ານຮົບດັ່ງ ກ່າວ,ການລຳລຽງຮັບໃຊ້ດ້ານຮົບດັ່ງກ່າວກໍ່ບໍ່ແມ່ນຂອງງ່າຍຄືກັນ, ເອື້ອຍນ້ອງ ຕ້ອງໄດ້ເປ້, ແບກ ແລະຫາມຂຶ້ນພູລົງຫ້ວຍ, ລັດປ່າຜ່າດົງ. ຖ້າມື້ໃດບໍ່ໄດ້ໄປລຳ ລຽງແບກຫາບຂົນເຄື່ອງ ກໍ່ແມ່ນໄປເຮັດທາງ, ປົວແປງ ກໍ່ຕັ້ງເຮືອນຢູ່, ອະນາໄມ ຄ້າຍຄູ, ອອກແຮງງານເອົາຟືນ, ເຮັດສວນຄົວ, ປູກຝັງ ແລະລ້ຽງສັດ.

ທ້າຍປີ 1975 ເອື້ອຍນ້ອງຈຳນວນໜຶ່ງໄດ້ສ້າງຄອບຄົວ ແລະອອກໄປຢູ່ ນຳຜົວຂອງຕົນ ສະເພາະແມ່ນຄະນະກອງພວກເຮົາ; ຄະນະກອງຍັງເຫຼືອພຽງ ນາງ ບົວຄອນ ສາຍຜາສິດ ສະນັ້ນ ຂັ້ນເທິງຈຶ່ງແຕ່ງຕັ້ງໃຫ້ສະຫາຍ ນາງໂດຍ

ເຮືອງ ມາຮັບຜິດຊອບການເມືອງ, ໜ້າທີ່ເວລານັ້ນ ຍັງເຮັດຄືເກົ່າຄື ຂົນເຄື່ອງ ລົງລົດ- ຂຶ້ນລົດທີ່ມາຮັບໄປສົ່ງໃຫ້ແຕ່ລະກົມກອງຢູ່ອ້ອມຂ້າງສູນກາງ.

ຈາກນັ້ນ ທາງຂັ້ນເທິງໄດ້ຍົກຍ້າຍອ້າຍນ້ອງກອງເສຍອົງຄະ ມາໄວ້ທີ່ ກອງປະຊຸມນາແທ່ນ (ຄົນລະຟາກນ້ຳນ້ອ ກົງກັນຂ້າມກັບກອງ 37) ເອື້ອຍນ້ອງ ຈຳນວນໜຶ່ງກໍ່ຖືກລະດົມ ໃຫ້ສ້າງຄອບຄົວກັບພະນັກງານເສຍອົງຄະ ໃນນັ້ນມີ 5 ຄົນ ໄດ້ຕົກລົງແຕ່ງງານເຊັ່ນ: ນາງ ທອງເສີຍ, ນາງ ສີງ, ນາງຄຳມີ, ນາງ ບຸນມາ, ນາງຈັນເພັງ(ນ້ອຍ) ເປັນຕົ້ນ.

ເດືອນ 1/1976 ກອງລຳລຽງແບກຫາບ 37 ໄດ້ຮັບຄຳສັ່ງໃຫ້ນຳກຳລັງ ເຂົ້ານະຄອນຫຼວງວຽງຈັນ. ກອງ 37 ເດີນທາງດ້ວຍຍົນມາລົງທີ່ເດີ່ນບິນອັດໄຕ ຈາກນັ້ນມາພັກຢູ່ໂພນຕ້ອງເຮືອນເກົ່ານາຍພົນເອຕ່ຳ ທີ່ໂຕນໜີໄປຕ່າງປະເທດ (ສະຖາບັນກັນພະຍາດໂພນຕ້ອງໃນປັດຈຸບັນ), ໜ້າທີ່ຂອງກອງ 37 ເວລານັ້ນ ແມ່ນເຮັດໜ້າທີ່ປ້ອງກັນຕາມສຳນັກງານ-ອົງການຕ່າງໆເຊັ່ນ: ປ້ອງກັນເຂດຫຼັກ 5 (ກົມພະລາ ແລະເຂດປ່າແປກໃນປັດຈຸບັນ ) ປ້ອງກັນເຂດຫຼັກ 9 ( ເຂດສາງຫຼັກ 9 ດົງໂດກໃນປັດຈຸບັນ ).

ພາຍຫຼັງ ກຳລັງຂອງພວກເຮົາຕີຢຶດໄດ້ດອນຊີງຊູ້ຄືນແລ້ວ, ອີງໃສ່ ເງື່ອນໄຂ ແລະ ສະພາບຕົວຈິງຂອງປະເທດເຮົາ ໂດຍການເຫັນດີຂອງຂັ້ນເທິງ ສະຫາຍ ບຸນເຮັງ ບັນຊາລິດ ຫົວໜ້າຫ້ອງການເມືອງໃຫຍ່ກົມພະລາທິການກອງ ທັບ ໄດ້ປະກາດຍຸບກອງ 37 ແລະ ສັບຊ້ອນບັນດາພະນັກງານນັກຮົບໃນກອງ ດັ່ງກ່າວໄປເຮັດໜ້າທີ່ອື່ນໆ ຕາມເງື່ອນໄຂຄວາມຮູ້ຄວາມສາມາດ ແລະສະພາບ ຕົວຈິງ.



ນາງສີສຸກ
ນັກຮົບແຂ່ງຂັນ



ນາງບົວຄຳ
ວິລະຊົນແຫ່ງຊາດ

ຄະນະບັນຊາກອງ 368 ແລະ 769 ກຳລັງໄຟເພດຍິງ ປີ 1968-78



ສະຫາຍ ນາງ ບົວອັນ ຈັນດະວົງ ຫົວໜ້າໝວດ 2 ກອງ. 368 ທັງເປັນສິລະປະ ປະຈຳກອງ
ສະຫາຍນາງ ທອງດີ ແກ້ວມຸງຄຸນ ຫົວໜ້າການເມືອງ ກອງຮ້ອຍ 368 ຮຸ່ນທຳອິດ



*ເອື້ອຍນ້ອງກອງ 368-769 ລຳລຽງເຂົ້າປາອາຫານໃຫ້ອ້າຍນ້ອງແນວຮົບກົ່ວລັນ (ສາລາພູຄູນ 1971) ຄາດໝາຍ 7ວັນໃຫ້ໄດ້ເຂົ້າ 7 ໂຕນ*



*ເອື້ອຍນ້ອງກອງ 368-769 ລຳລຽງລູກປືນໄປໃຫ້ອ້າຍນ້ອງແນວຮົບບ້ານແລ ເມືອງເສັ່ງ (ເມືອງພູກູດ)*



*ສະຫາຍນາງຄຳພາ ອິນທະມາລີ*



*ສະຫາຍນາງ ວັນດີ ທຳມະສິດ*



*ເອື້ອຍນ້ອງກອງ 368-769 ລຳລຽງລູກປືນໄປໃຫ້ອ້າຍນ້ອງແນວໜ້າ*




*ບັນດາເອື້ອຍນ້ອງໃນໂຮງງານເສັ້ນໝີ່ ກອງທັບ ຫຼັກ 4 ວຽງຈັນ ປີ 1982*



# ตอนที่ III

# มูนเชื้อกองกำลังไพเพดยิง 769





# I. ການເຄື່ອນໄຫວປະຕິບັດໜ້າທີ່ສູ້ຮົບ ຂອງກອງກຳລັງໄຟເພດຍິງ 769

ນັບແຕ່ກອງບັນຊາການທະຫານເຂດຊຽງຂວາງ ໄດ້ປະກາດສ້າງຕັ້ງ ກອງລຳລຽງແບກຫາບ 2 ກອງຮ້ອຍຄື: ກອງຮ້ອຍລຳລຽງແບກຫາບຂອງແຂວງ ຊຽງຂວາງ ແລະ ກອງລຳລຽງແບກຫາບຂອງທະຫານເຂດຊຽງຂວາງ, ເດືອນ ມີນາ 1968 ເປັນຕົ້ນມາ ກໍ່ເຫັນວ່າທັງສອງກອງຮ້ອຍ ສາມາດເຄື່ອນໄຫວໄດ້ດີ ມີຜົນງານອັນສຳຄັນ ປະກອບສ່ວນໃຫ້ແກ່ການຕໍ່ສູ້ປົກປັກຮັກສາເຂດປົດປ່ອຍ. ໂດຍສະເພາະ ແມ່ນການປະກອບສ່ວນລຳລຽງເຂົ້າປາອາຫານ ອາວຸດຍຸດໂທປະກອນໃຫ້ແກ່ສະໜາມຮົບຈັ້ງທ່າເມືອງສູຍ ແລະ ພູກູດຈອມເຫຼັກ ຕ້ານບັ້ນຮົບ ໂອເດແອນ.

ເຖິງວ່າຈະປະລາໄຊຢ່າງເຈັບແສບໃນບັ້ນຮົບ "ໂອເດແອນ" ທີ່ສິ້ນສຸດ ລົງໃນເດືອນ 5/1969 ປານໃດກໍ່ຕາມ ແຕ່ຍ້ອນຄວາມດື້ດ້ານຈອງຫອງຂອງ ຈັກກະພັດອາເມຣິກາ ແລະລູກມື, ເພື່ອກອບກູ້ເອົາສະຖານະການທີ່ເສຍໄປນັ້ນ ກັບຄືນມາ, ເຖິງເດືອນ 6/1969 ພວກເຂົາກໍ່ໄດ້ເປີດບັ້ນຮົບບຸກໂຈມຕີ ເພື່ອຍຶດ ເອົາທົ່ງໄຫຫີນ-ຊຽງຂວາງຄັ້ງໃໝ່ອີກໃນຊື່ **"ບັ້ນຮົບກູ້ກຽດ"** ໂດຍໃຊ້ທະຫານເຖິງ 18 ກອງພັນ, 52 ກອງຮ້ອຍພິເສດ, ທະຫານເລວຮັບຈ້າງໄທ 5.000 ຄົນ ໂດຍມີທີ່ປຶກສາອາເມຣິກາ 100 ຄົນ ບັນຊາໂດຍກົງ ແລະມີການຊ່ວຍໜູນຈາກ ກອງທັບອາກາດຂອງອາເມຣິກາຖິ້ມລະເບີດທຳລາຍແບບ 3 ກ້ຽງ: ຈູດກ້ຽງ, ຂ້າ ກ້ຽງ ທຳລາຍກ້ຽງ ສະເລ່ຍແຕ່ລະວັນ 200-250 ຖ້ຽວລຳ ບິນຂຶ້ນຈາກຖານທັບ ທີ່ຕັ້ງຢູ່ໄທ ແລະ ເທິງກຳປັ່ນບັນທຸກຍົນຂອງກອງເຮືອທີ 7 ເພື່ອຍິງທຳລາຍ ບັນດາເປົ້າໝາຍຢູ່ແຂວງຊຽງຂວາງ ແລະຫົວພັນ. ນີ້ນັບເປັນບັ້ນຮົບທີ່ໃຫຍ່ທີ່ສຸດ ໂຫດຫ້ຽມອຳມະຫິດທີ່ສຸດເທົ່າທີ່ອາເມຣິກາເຄີຍເຮັດມາໃນລາວ.

ຈຸດປະສົງ ຂອງພວກເຂົາແມ່ນຕີຍຶດເອົາທົ່ງໄຫຫີນ (ຊຽງຂວາງ) ເພື່ອເປັນແປ້ນຍັນແລ້ວຕີເລີກເຂົ້າເຂດປົດປ່ອຍແຂວງຫົວພັນ ເພື່ອປະຕິບັດຍຸດທະສາດຂອງພວກເຂົາທີ່ວ່າ "ຈັ້ງທ່າແຕ່ໄກ" ເພື່ອປ້ອງກັນແນວແມ່ນ້ຳຂອງ ຂອງຈັກກະພັດອາເມຣິກາ-ໄທ ແລະ ກັ້ງບັງໃຫ້ເຂດຊຳທອງ-ລ້ອງແຈ້ງ ເຊິ່ງເປັນເຮືອນຮັ້ງຂອງກຳລັງພິເສດວ່າງປາວ. ພ້ອມນັ້ນອາເມຣິກາໄດ້ຍູ້ແຮງສົງຄາມໃຫ້ຂຶ້ນສູ່ລະດັບສູງ ປະຕິບັດຍຸດທະສາດ **"ສົງຄາມພິເສດເພີ່ມທະວີ"** ແລະທັງເປັນການຂົ່ມຂູ່ຕໍ່ພາກເໜືອຫວຽດນາມອີກດ້ວຍ.

ຕົ້ນເດືອນ 7 ພວກເຂົາໄດ້ນຳໃຊ້ກອງພັນ ເບອີ 6, ເບອີ 54 ແລະເບເອ 57 ບຸກຕີຍຶດເອົາເຂດສາມແຍກສາລາພູຄູນ ແລະພູສູງຄືນ, ດ້ານໜຶ່ງ ພວກເຂົາເອົາກຳລັງຈາກຊຳທອງ-ລ້ອງແຈ້ງ ແລະວັງວຽງ ແບ່ງເປັນ 3 ປີກ ບຸກເຂົ້າທົ່ງໄຫຫີນ. ປີກທີ 1 ຈາກຊຳທອງ-ລ່ອງແຈ້ງ (ທິດຕາເວັນຕົກສ່ຽງໃຕ້) ຕີທັ່ງເຂົ້າທົ່ງໄຫຫີນ, ປີກທີ 2 ໃຊ້ຍົນໂຢດພົນລົງທິດເໜືອທົ່ງໄຫຫີນ ຕີເຂົ້າໃສ່ພູນົກກົກ ທິດຕາເວັນອອກໜອງເປັດ, ປີກທີ 3 ຕີຂຶ້ນມາຈາກສັນນ້ອຍ-ແທ່ນພູນ ທິດຕາເວັນອອກສ່ຽງທົ່ງໄຫຫີນ 30 ກມ.

ຍ້ອນວ່າເປັນລະດູຝົນ ບັນດາປ້ອມຈັ້ງທ່າ ຂອງຝ່າຍແນວລາວຮັກຊາດທີ່ມີໃນເມື່ອກ່ອນກໍ່ຖືກເປ່ເພ່ ຈາກບັ້ນຮົບໂອເດແອນທີ່ຫາກໍ່ສິ້ນສຸດລົງກ່ອນໜ້ານີ້ ແລະ ພະລາທິການຍັງບໍ່ຮັບປະກັນ, ດັ່ງນັ້ນດ້ວຍກຳລັງທີ່ເໜືອກວ່າ, ມີຄວາມພ້ອມຫຼາຍກວ່າ ພຽງ 3 ເດືອນ ສັດຕູກໍ່ສາມາດຍຶດໄດ້ຫຼາຍພື້ນທີ່ ແລະ ປ້ອມພູສຳຄັນເຊັ່ນ: ບັນດາກອງພັນເບແອັດ 201, ແອັດແຢກອູທີ 3, ທີ 5 ແລະ 3 ກອງຮ້ອຍອາເຊຍຶດເອົາພູໜູສາວ, ພູຂຽວ, ພູສັນ, ກອງພັນເບແອັດ 201, 204, ເບເອ 21, ເບເອ 101 ຍຶດເອົາພູສັນຫຼວງ, ພູຂີ້ມິດ, ພູຫົວຊ້າງ, ເຂດກາງແສນ, ພູຊາວ, ບ້ານໂຕນ, ດົງດ່ານ ທັງໝົດນັ້ນເປັນການໜີບຮັດບັນດາຈຸດສູງ ຢູ່ທາງທິດໃຕ້ ແລະທາງທິດຕາເວັນອອກສ່ຽງໃຕ້ທົ່ງໄຫຫີນ, ຕັດເສັ້ນທາງໄປເຂົ້າສູ່ຊຽງຂວາງ. ຮອດທ້າຍເດືອນ 9/1969 ສັດຕູໄດ້ເພີ່ມກອງພັນເບແອັດ 205, 206, 210 ບຸກຕີຍຶດເອົາເມືອງພັ້ນ ໃຈກາງທົ່ງໄຫຫີນ, ເດີ່ນບິນໂພນສະຫວັນ, ພູແຮ້, ພູຍອນ ແລະຕໍ່ເມືອງຊຽງຂວາງ. ແລະວັນທີ 30/10/1969 ກອງພັນເບແອັດ

208, 209, 12, ກອງພັນເບອີ ຍຶດເອົາພູກູດ, ພູຫວດ, ພູເພີ້ງ (ສູງກວ່າໝູ່ໃນເຂດ ລາດບວກ), ແລະສົ່ງກອງພັນອາເຊເພີ່ມໃຫ້ ແລະເຄື່ອນໄຫວໄປທາງທິດບ້ານ ບານ, ເມືອງຄຳ, ໜອງແຮດ ເພື່ອກຸກກວນແນວຫຼັງຂອງຝ່າຍແນວລາວຮັກຊາດ.

ຕໍ່ໜ້າການບຸກໂຈມຕີອັນຮ້າຍແຮງແລະການປິດລ້ອມຂອງສັດຕູຄືແນວ ນັ້ນ ມັນໄດ້ສ້າງຄວາມຫຍຸ້ງຍາກສັບສົນໃຫ້ແກ່ຝ່າຍແນວລາວຮັກຊາດ ໃນການ ປົກປັກຮັກສາເຂດປົດປ່ອຍ, ປົກປັກຮັກສາປະຊາຊົນໃຫ້ປອດໄພ, ເຖິງວັນທີ 11/10/1969 ກອງບັນຊາການສູງສຸດກອງທັບປົດປ່ອຍປະຊາຊົນລາວໄດ້ອອກ ຖະແຫຼງການກ່າວປະນາມຝ່າຍວຽງຈັນ ແລະອາເມຣິກາທີ່ສົ່ງກຳລັງເຂົ້າໄປຍຶດ ຊຽງຂວາງວ່າ: **ເປັນການລ່ວງລະເມີດຢ່າງຮ້າຍແຮງຕໍ່ສັນຍາ 3 ຝ່າຍທີ່ເຊັນກັນ ຢູ່ຊູລິກ ແລະ ສັນຍາທົ່ງໄຫຫີນ, ແລະສ້າງໂທດກຳອັນໜັກໜ່ວງແກ່ປະຊາຊົນ ໃນເຂດປົດປ່ອຍ.**

ວັນທີ 19/9/1969 ບັນດາສະມາຊິກສະພາສູງອາເມຣິກາ ທີ່ສັງກັດພັກ ປະຊາທິປັດ ໄດ້ທວງໃຫ້ກະຊວງການປ້ອງກັນປະເທດອາເມຣິກາ ຕ້ວງລາຍງານ ກ່ຽວກັບການແຊກແຊງດ້ານການທະຫານໃນລາວຕໍ່ສະພາສູງ ຊຶ່ງຈະໄດ້ໄຂຂຶ້ນ ໃນວັນທີ 14/10/1969 ແຕ່ວ່າວັນທີ 28/9/1969 ກະຊວງການຕ່າງປະເທດ ອາເມຣິກາຊ້ຳພັດອອກຖະແຫຼງການວ່າ: ***ນັບແຕ່ນີ້ເປັນຕົ້ນໄປ, ກອງທັບອາກາດ ອາເມຣິກາຈະເພີ່ມທະວີການຖິ້ມລະເບີດ ແລະ ຍິງທຳລາຍຢູ່ລາວ ຮ້າຍແຮງ ກວ່າເກົ່າ.***

ເພື່ອສະກັດກັ້ນການບຸກໂຈມຕີຂະໜານໃຫຍ່ຂອງສັດຕູ ກອງບັນຊາການ ສູງສຸດກອງທັບປົດປ່ອຍປະຊາຊົນລາວ ໄດ້ຕົກລົງເປີດບັ້ນຕ່ານໂຈມຕີຄືນໃນ ຊື່ "ບັ້ນຮົບ139" ໂດຍໄດ້ມີຄຳສັ່ງເຖິງບັນດາທ້ອງຖິ່ນ, ກົມກອງໃຫ້ສະກັດກັ້ນ ກຳລັງສັດຕູທຸກພາກສ່ວນທີ່ຫັນໜ້າມາສູ່ທົ່ງໄຫຫີນ ແລະ ດັບສູນເທື່ອລະໜ້ອຍ ໂດຍສະເພາະແມ່ນກຳລັງພິເສດວ່າງປາວ. ຟື້ນຟູ ປັບປຸງເຂດປົດປ່ອຍ, ເປີດ ກວ້າງເຂດປົດປ່ອຍໂດຍມີຈຸດໜັກ, ທັບມ້າງບັນດາແປ້ນຢັນຂອງສັດຕູ ທີ່ໃຊ້ ເປັນບ່ອນບຸກໂຈມຕີບຽດຍຶດເຂົ້າເຂດປົດປ່ອຍ.

ເພື່ອຕ່ຳວໂຈມຕີເອົາຊະນະສັດຕູ ແລະ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງສະໜາມຮົບ ຕ້ານການບຸກຍຶດຂອງສັດຕູດັ່ງກ່ຳວນັ້ນ ກອງບັນຊາການທະຫານສູງສຸດກອງທັບປົດປ່ອຍປະຊາຊົນລາວ ແລະ ຄະນະກອງບັນຊາການທະຫານເຂດຊຽງຂວາງ ຈຶ່ງໄດ້ລະດົມເອົາເອື້ອຍນ້ອງແມ່ຍິງ ຈາກສຳນັກງານອົງການ ຈາກກອງຫຼອນ ໂຮງຮຽນ ແລະພື້ນຖານປະຊາຊົນມາເພີ່ມໃສ່ກອງຮ້ອຍ 368 ຈຳນວນ 200 ກວ່າຄົນ, ຈາກນັ້ນ ທາງກອງບັນຊາການທະຫານເຂດຊຽງຂວາງ ຈຶ່ງໄດ້ປະກາດສ້າງຕັ້ງກອງຮ້ອຍ 769 ຂຶ້ນ ໃນວັນທີ 15 / 7 / 1969, ທີ່ຢູ່ຕີນພູແຮ້ຄັ້ງໄຂ, ໂດຍແມ່ນທ່ານ ສີທົນ ມະໂນລາ ເປັນຜູ້ປະກາດສ້າງຕັ້ງ, ຈຳນວນພົນປະກອບ 90 ສະຫາຍ, ມີຄະນະບັນຊາ 4 ສະຫາຍຄ:

ສະຫາຍ ນາງ ສີສຸກ ແກ້ວບຸນລ້ອມ ເປັນຫົວໜ້າການທະຫານ
ສະຫາຍ ນາງ ຈັນທະລາ ຮອງການທະຫານ.
ສະຫາຍ ນາງ ຄຳໝັ້ນ ທາວົງລາດ ຫົວໜ້າການເມືອງ[71]
ສະຫາຍ ນາງ ບົວຄອນ ຮອງການເມືອງ

.....

*71. ສະຫາຍ ນາງ ຄຳໝັ້ນ ທາວົງລາດ*

*ເກີດ 1/12/1952 ທີ່ບ້ານຍອດງື່ມ, ເມືອງແປກ ແຂວງຊຽງຂວາງ, ບ້ານຢູ່ຂຸນຕາ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ, ເຂົ້າການປະຕິວັດ 7/2/1966 ທະຫານແຂວງຊຽງຂວາງ, ປີ 1968 ລົງຂົນຂວາຍຢູ່ເຂດເມືອງຄູນ, ປີ 1969 ເຂົ້າສັງກັດຢູ່ກອງລ້ຳລຽງ ແບກຫາບ 368 ຕໍ່ມາຖືກສັບຊ້ອນໄປຢູ່ກອງ769 ຈົນເຖິງປີ 1971 ແຕ່ງງານກັບພັນຕີ ອິນຕັ້ງ ທາວົງລາດ ມີລູກນຳກັນ 6 ຄົນ ປີ 1972 ຖືກຍົກຍ້າຍໄປຢູ່ຫ້ອງພະລາທິການ, ປີ 1978 ລົງມາວຽງຈັນມາເປັນຫົວໜ້າສະຫະພັນແມ່ຍິງ ທະຫານອາກາດ ເດີ່ນບິນວັດໄຕ, ປີ 1984 ຍົກຍ້າຍມາຮັບໜ້າທີ່ເປັນຄະນະບໍລິຫານງານ ສູນກາງສະຫະພັນແມ່ຍິງລາວ ປີ 2007 ອອກພັກຜ່ອນຮັບເບ້ຍບຳນານ, ປີ 2009 ເປັນນາຍບ້ານ ບ້ານຂຸນຕາ ຈົນຮອດປີ 2012, ປີ 2013 ເປັນຫົວໜ້າໜ່ວຍນັກຮົບເກົ່າຂອງບ້ານຈົນເຖິງປັດຈຸບັນນີ້. ຕະຫຼອດໄລຍະ ແຫ່ງການເຄື່ອນໄຫວ ໄດ້ຮັບການຍ້ອງຍໍ: ຫຼຽນໄຊ ຊະນະເລີດຊັ້ນ III ຈຳນວນ 1 ໜ່ວຍ, ຫຼຽນໄຊພິລະອາດຫານ ຊັ້ນ III ຈຳນວນ 2 ໜ່ວຍ, ຫຼຽນໄຊອິດສະລະຊັ້ນ II ຈຳນວນ 1 ໜ່ວຍ, ຫຼຽນໄຊແຮງງານ ຈຳນວນ 3 ໜ່ວຍ, ຫຼຽນໄຊແຮງ ງານຊັ້ນ III ຈຳນວນ 1 ໜ່ວຍ, ຫຼຽນກາແຮງງານ ຈຳນວນ 4 ໜ່ວຍ, ຫຼຽນກາຕ້ານອາເມຣິກາ 1 ໜ່ວຍ, ຫຼຽນກາລະນຶກ 5 ປີ 1 ໜວ່ຍ, ຫຼຽນກາ 50 ປີ 1 ໜ່ວຍ, ຫຼຽນກາ 60 ປີ 1 ໜ່ວຍ ແລະໃບຍ້ອງຍໍ 18 ໃບ.*

ກ້ຳລັ່ງພົນໝົດກອງຮ້ອຍ ໄດ້ແບ່ງອອກເປັນ 3 ໝວດຄື:

ໝວດທີ 1: ໝວດສຳນັກ ສະຫາຍ ນາງ ສີທົນ ເປັນຫົວໜ້າ
ສະຫາຍ ນາງ ເຄນ ເປັນຮອງ

ໝວດທີ 2: ສະຫາຍ ນາງ ບົວຄຳ ເປັນຫົວໜ້າໝວດ.
ສະຫາຍ ນາງ ບົວພອນ ເປັນຮອງໝວດ

ໝວດທີ 3: ສະຫາຍ ນາງ ຄຳພາ ເປັນຫົວໜ້າໝວດ
ສະຫາຍ ນາງພາສີ ເປັນຮອງໝວດ

ນອກຈາກນີ້ແລ້ວ ແຕ່ລະໝວດຍັງແບ່ງອອກເປັນ 3 ໝູ່, ແຕ່ລະໝູ່ແມ່ນ ມີຫົວໜ້າໝູ່, ຮອງໝູ່ ແລະສະມາຊິກ. ກອງຮ້ອຍ 769 ພາຍໃຕ້ການຊີ້ນຳບັນຊາ ໂດຍກົງຈາກກອງບັນຊາການທະຫານເຂດຊຽງຂວາງ, ໂດຍມີສະຫາຍ **ບຸນອຽນ ຫຼວງຍອດ** [72] ເປັນທີ່ປຶກສາ.

.....

*72. ພັນໂທ ບຸນອຽນ ຫຼວງຍອດ*
*ເກີດທີ່ ບ້ານໂລຍ ເມືອງກະລຶມ ແຂວງເຊກອງ 1.12.1920, ຊົນເຜົ່າ ກຣຽງ ເຂົ້າການປະຕິວັດ ແລະເຂົ້າທະຫານ 15/5/1954, ເຂົ້າສະມາຊິກພັກ 14/7/1959, ນັກຮົບກອງພັນ 13 ຜູ້ເຄີຍຜ່ານບັ້ນຮົບປົດປ່ອຍເມືອງພ່າງ ເມືອງງາຍ ທ່າວຽງ ທ່າໂທມ ປີ 1960, ຈັ້ງທ່າຢູ່ພູຫຍ້າຍຽງ ສາລາແດນດິນ, ຈັ້ງທ່າພູຄົ້ວ ພູສັນ ພູລາດໄຕ, ພູເພີ ລາດບອກ ປີ 1964, ຈັ້ງທ່າຢູ່ປ້ອມ A ພູກຸດຈອມເຫຼັກ ຕັ້ງແຕ່ປີ 1964-66, ຜ່ານການສູ້ຮົບນ້ອຍໃຫຍ່ 97 ຄັ້ງ, ຖືກບາດເຈັບຍ້ອນຖືກປືນ ສັດຕູ 6 ຄັ້ງ ຈົນເສຍຂາຂ້າງໜຶ່ງ, 1967-69 ເປັນຄະນະ ອຳນວຍການໂຮງໝໍ 02 ຮັບຜິດຊອບວຽກງານການເມືອງ, ເປັນທີ່ປຶກສາກອງ 368 ແລະ 769, 1970-71 ຮຽນນາຍທະຫານກົມມະດຳຊັ້ນສູງ ທີ່ວຽງໄຊ-ຈົບແລ້ວ ເປັນຄູການເມືອງ ຢູ່ໂຮງຮຽນກົມມະດຳຊັ້ນຕົ້ນ , 1973-76 ຮຽນທິດສະດີ ທີ່ຫວຽດນາມ, 1976-82 ເປັນອຳການໂຮງຮຽນທິດສະດີ ຈົນາຍໂມ້, 1982-85 ເປັນຮອງຫົວໜ້າກົມໂຄສະນາອົບຮົມ ກົມໃຫຍ່ການເມືອງກອງທັບ, 1985-87 ຮຽນທິດສະດີ ຢູ່ສະຖາບັນການ-ມານ ປະເທດ ເຢຍລະມັນ, 1987-93 ຊັ້ນພັນໂທ ເປັນຄະນະອຳນວຍການ, ຫົວໜ້າການເມືອງ ວິທະຍາຄານ ນາຍທະຫານຊັ້ນສູງ, 1993-2004 ເປັນຮອງຫົວໜ້າກົມນັກຮົບເກົ່າ ກະຊວງແຮງງານ ສະຫວັດດີການສັງຄົມ, 1/10/2004 ພັກຜ່ອນຮັບບຳນານ, 2001-2007 ເປັນຮອງປະທານ ສະມາຄົມຄົນພິການລາວ, 2008-ປັດຈຸບັນ ໄດ້ຮັບເລືອກຕັ້ງ ເປັນປະທານສະມາຄົມ ຄົນພິການລາວ. ຕະຫຼອດໄລຍະຜ່ານມາໄດ້ຮັບການຍ້ອງຍໍ: ໄດ້ຮັບນາມະຍົດນັກຮົບແຂ່ງຂັນ, ນັກຮົບ 3 ເກົ່ງ, ຫຼຽນໄຊອິດສະລະຊັ້ນ II ຈຳນວນ 5 ໜ່ວຍ, ຫຼຽນໄຊອິດສະລະຊັ້ນ III ຈຳນວນ 6 ໜ່ວຍ, ຫຼຽນໄຊຊະນະເລີດຊັ້ນ II ຈຳນວນ 1 ໜ່ວຍ, ຫຼຽນໄຊແຮງງານ ຊັ້ນ II ຈຳນວນ 2 ໜ່ວຍ, ຫຼຽນໄຊອິດສະລະຊັ້ນ III ຈຳນວນ 1 ໜ່ວຍ, ຫຼຽນໄຊພິລະອາດຫານ ຊັ້ນ II ຈຳນວນ 1 ໜ່ວຍ, ຫຼຽນໄຊມິດຕະພາບ ສສ. ຫວຽດນາມ 1 ໜ່ວຍ, ຫຼຽນກາຕ່າງໆ14 ໜ່ວຍ ໃບຍ້ອງຍໍຂັ້ນຕ່າງໆ 21 ໃບ.*

ຕາມປົກກະຕິແລ້ວການປະກອບອາວຸດປືນສັ້ນໃຫ້ແກ່ນາຍທະຫານນັ້ນ ຂັ້ນນາຍຮ້ອຍແມ່ນຖືປືນ ເຊເປ (CP), ຂັ້ນນາຍພັນແມ່ນປືນ 59, ແຕ່ສຳລັບ ຜູ້ບັນຊາກອງຮ້ອຍກຳລັງໄຟເພດຍິງແມ່ນໄດ້ຮັບນະໂຍບາຍພິເສດ ຄືໃຫ້ຖືປືນ 59 ຄືກັບຂັ້ນນາຍພັນ.

ພາຍຫຼັງຈັດຕັ້ງກອງຮ້ອຍແລ້ວ ກອງບັນຊາການທະຫານເຂດຊຽງຂວາງ ໄດ້ມີຄຳສັ່ງໃຫ້ກອງຮ້ອຍ 769 ເອົາກຳລັງ 1 ໝູ່ໄປຂົນເຂົ້າລົງຈາກລົດທີ່ມາແຕ່ ຫວຽດນາມ ເກັບມ້ຽນໄວ້ສາງຢູ່ບ້ານນາສາລາ ຕາດເປີບ (ຕາມເສັ້ນທາງ ເລກ 7 ລະຫວ່າງໂພນສະຫວັນ-ເມືອງຄຳ).

ຄະນະບັນຊາກອງຮ້ອຍໄດ້ຈັດຕັ້ງໃຫ້ 1 ໝູ່ ໄປເຮັດໜ້າທີ່ໂດຍມີສະຫາຍ ນາງບົວທອງ ເປັນຫົວໜ້າໝູ່ ແລະສະຫາຍນາງບົວພັນ ເປັນຮອງ ນຳພາເອື້ອຍ ນ້ອງຈຳນວນ 12 ສະຫາຍໄປປະຈຳຢູ່ສາງເຂົ້າ. ພໍເວລາ 8 ໂມງແລງຂອງ ມື້ທີ່ ໄປຮອດນັ້ນ ນາຍສາງ ແລະສະຫາຍຊຽງສົມພັນ ທີ່ເປັນແຜນການຮັບຜິດຊອບ ສາງ ກໍ່ໄດ້ພ້ອມຂົນເຂົ້າລົງລົດທີ່ມາຈອດລໍຢູ່ແລ້ວຈຳນວນ 40 ຄັນລົດ, ສະເລ່ຍ ແຕ່ລະຄັນລົດ ມີເຂົ້າຢູ່ປະມານ 4-5 ໂຕນ. ຖ້າທຽບໃສ່ນ້ຳໜັກຕົວຂອງເອື້ອຍ ນ້ອງແມ່ຍິງກັບເປົ້າເຂົ້າແມ່ນເປົ້າເຂົ້າມີໜັກກວ່າ, ເພາະສ່ວນຫຼາຍ ເອື້ອຍນ້ອງ ແມ່ຍິງກອງຮ້ອຍ 769 ມີອາຍຸລະຫວ່າງ 12-22 ປີ, ບາງຄົນກໍ່ຮູບຮ່າງນ້ອຍ ແຕ່ ດ້ວຍນ້ຳໃຈມານະອົດທົນ ແລະ ຄວາມຮັບຜິດຊອບເພື່ອເຮັດຫຼ້ອນໜ້າທີ່ ທີ່ ການຈັດຕັ້ງມອບໝາຍໃຫ້. ຮອດ 1 ໂມງກາງຄືນການຂົນເຂົ້າຈຶ່ງສຳເລັດລົງ. ໃຜໆກໍ່ດີອົກດີໃຈທີ່ສຳເລັດໜ້າທີ່.

.....

*ຈາກການເລົ່າຂອງນາງ ຄຳໝັ້ນ ບັນດາເອື້ອຍນ້ອງໃນກອງທີ່ຈື່ໄດ້ມີຄື: ນາງສີທົນ (ຮູ້ເປົ້າແຄນ, ລຳ) ນາງບຸນລ້ອມ (ເມືອງຄຳ) ນາງສີພັນ (ບ້ານຄັງວຽງ) ນາງທັນດາ (ບ້ານຄາຍ) ນາງທຸມມີ (ບ້ານຖ້ຳ-ບ້ານຫອຍ), ນາງຄຳຕາ (ບ້ານສີຄູນ) ນາງຄຳຜາຍ (ບ້ານແລເມືອງເສົ້າ) ນາງບົວລາ (ອາຍຸ 10 ປີ ເຜົ່າຂະມຸ ຫວງພະບາງ) ນາງທອງດີ, ນາງອູມມາ... ນ. ແສງ (ຢູ່ບ້ານ.ໜອງຫາ) ນ. ບົວທອງ (ບ.ໜອງຫາ ) ນ. ບຸນລ້ອມ (ບ.ໜອງໜ້ຽວ) ນ. ສີພັນ (ບ.ໜອງແຕ່ງ ນ. ທັນດາ (ບ. ເກົ້າລ້ຽວ) ນ. ຄຳເມິງ (ບ.ເກົ້າລ້ຽວ) ນ. ບົວພາ (ບ.ຄຳຮຸ່ງ) ນ. ພັນສີ (ບ.ຄຳຮຸ່ງ) ນ. ບົວວັນ (ບ.ຄຳຮຸ່ງ ) ນ. ບົວສອນ (ບ.ຄຳຮຸ່ງ) ນ. ອ່ອນສີ (ບ.ຄຳຮຸ່ງ )*

ແຕ່ວ່າຫຼັງຈາກສຳເລັດຈຳນວນ 40 ຄັນລົດແລ້ວ, ລົດຂະບວນທີ 2 ຈຳນວນ 25 ຄັນກໍ່ມາຮອດ, ມັນແມ່ນຂະບວນລົດຂົນບັນທຸກເຄື່ອງຍຸດໂທ, ດັ່ງນັ້ນ ສະຫາຍນາງບົວທອງ ຫົວໜ້າໝູ່ ແລະນາງບົວພັນ ຮອງໝູ່ໄດ້ປຸກລະດົມເອື້ອຍນ້ອງສືບຕໍ່ເຮັດໜ້າທີ່ຂົນອາວຸດ ລູກກະສຸນປືນລົງຈາກລົດລົງມາໄວ້ສາງອີກຕື່ມ, ແຕ່ລະສະຫາຍຕ່າງກໍ່ພ້ອມພຽງຮຽງໜ້າກັນເຮັດໜ້າທີ່ ດ້ວຍຄວາມຫ້າວຫັນ, ເຖິງວ່າຮ່າງກາຍຈະອິດເມື່ອຍ, ເຫື່ອໄຫຼອາບທົ່ວຕົນຕົວ ແຕ່ທຸກຄົນກໍ່ຍັງມີຄວາມເບີກບານມ່ວນຊື່ນ ພໍດີຮອດ 4 ໂມງເຊົ້າເອື້ອຍນ້ອງພວກເຮົາຈຶ່ງຂົນເຄື່ອງລົດຈາກລົດທັງໝົດຈຳນວນ 65 ຄັນ ສຳເລັດໜ້າທີ່ຕາມການມອບໝາຍຈາກຂັ້ນເທິງ.

ນີ້ແມ່ນຄັ້ງທຳອິດທີ່ກອງຮ້ອຍ 769 ໄດ້ເຮັດສຳເລັດໜ້າທີ່ການເມືອງຂອງຕົນ. ພາຍຫຼັງສຳເລັດແລ້ວຮຸ່ງເຊົ້າ ເອື້ອຍນ້ອງກໍ່ໄດ້ນອນພັກຜ່ອນເອົາແຮງ ແລ້ວຜູ້ບັນຊາການກອງ ກໍ່ໄດ້ມີຄຳສັ່ງໃຫ້ເອື້ອຍນ້ອງກັບຄືນທີ່ຕັ້ງຢູ່ພູແຮ້.

ຕໍ່ມາກອງບັນຊາການທະຫານເຂດຊຽງຂວາງ ໄດ້ມີຄຳສັ່ງໃຫ້ເຮັດໜ້າທີ່ລຳລຽງສະບຽງອາຫານ ແລະອາວຸດຍຸດທະພັນໄປໃຫ້ອ້າຍນ້ອງກອງພັນ 701 ແລະທະຫານເມືອງຢູ່ເມືອງແທ້, ລຳລຽງອາວຸດກະສຸນໄປທາງທິດຕາດເປີບ ໃຫ້ກອງພັນປັດໄຈ ແລະກອງພັນ 15 ເປັນກາງຮັກຊາດ ທີ່ປະຈຳຢູ່ເຂດພູຄົ້ວ ພູສັນ ພູຮັກ ພູໂຮຍ ພູນົກກົກ ເມືອງແປກ, ເມືອງຄຳ ເພື່ອຕີປົດປ່ອຍເອົາພູນົກກົກຄືນ.

ໃນເວລາເຄື່ອນກຳລັງກັບຄືນ ເອື້ອຍນ້ອງໄດ້ຕົກເຂົ້າວົງປິດລ້ອມສັດຕູຢູ່ພູລາດໄຕ ພວກທະຫານສັດຕູໄດ້ລົງພູມາໄລ່ຈັບເອົາ ເຮັດໃຫ້ຕົກຢູ່ໃນສະຖານະການຄັບຂັນ ແຕ່ຍ້ອນຄວາມເດັດດ່ຽວ, ສະຫຼາດ ຫຼັກແຫຼມ ຂອງບັນດາເອື້ອຍນ້ອງແມ່ຍິງກອງຮ້ອຍ 769 ໄດ້ຕີຜ່າວົງປິດລ້ອມຂອງສັດຕູ ແລ້ວກັບມາບ້ານນາສາລາຢ່າງປອດໄພ, ພັກທັບຢູ່ບ່ອນນັ້ນເພື່ອປັບປຸງກຳລັງ, ລຳລຽງຢູ່ທິດນີ້ເປັນເວລາ 2 ເດືອນ. ຫຼັງຈາກນັ້ນ ທາງກອງບັນຊາການທະຫານເຂດຊຽງຂວາງຈຶ່ງ ໄດ້ມີຄຳສັ່ງໃຫ້ກອງຮ້ອຍ 769 ກັບຄືນມາພູແຮ້,

ວັນທີ 6-7/9/1969 ສັດຕູບຸກຕີພູເລັ້ງ, ພູສະຖານີວິທະຍຸກະຈາຍສຽງທີ່ ຄັ້ງໄຂ ແລະທີ່ອື່ນໆແມ່ນຖືກສັດຕູຍຶດໄດ້ໝົດແລ້ວ, ລວມທັ້ງເມືອງແປກ, ຄັ້ງ ໄຂ, ເມື່ອສະພາບການຕົກຢູ່ໃນຄວາມຫຍຸ້ງຍາກສັບສົນ. ບັນດາກອງພັນຄື: 701, 46, 48 ແລະກອງພັນ 15 ກ້ຳລັງເປັນກາງ ໄດ້ເຄື່ອນໄຫວສູ້ຮົບສະກັດ ດັບສູນສັດຕູຢູ່ທິດຕາເວັນອອກຊຽງຂວາງ ແລະ ທິດຕາເວັນອອກສ່ຽງເໜືອຕົວ ເມືອງຊຽງຂວາງ, ພິເສດກອງຮ້ອຍ 769 ກໍ່ໄດ້ເດັດດ່ຽວເຮັດໜ້າທີ່ຮັບໃຊ້ບັນດາ ກົມກອງສູ້ຮົບ ທັງລ້ຳລຽງອາວຸດ ກະສຸນ ລ້ຳລຽງສະບຽງອາຫານ ເພື່ອຮັບໃຊ້ ແນວໜ້າ ຮັບໃຊ້ດ້ານຮົບຮ່ວມກັບບັນດາກອງເພດຊາຍ ທີ່ເຄື່ອນໄຫວສູ້ຮົບຕ້ານ ສັດຕູຢ່າງທະນົງອົງອາດ.

ວັນທີ 9/9/1969 ເພື່ອຮັບປະກັນ ຄວາມປອດໄພໃຫ້ແກ່ແນວຫຼັງ ເຮັດ ໃຫ້ບັ້ນຮົບຕ່າວໂຈມຕີຢູ່ທົ່ງໄຫຫີນ(ຊຽງຂວາງ)ນີ້ ໃຫ້ໄດ້ຮັບໄຊຊະນະ ທາງສູນ ກາງ, ກອງບັນຊາການເຂດຊຽງຂວາງ ໄດ້ລະດົມເອົາປະຊາຊົນລາວບັນດາເຜົ່າ ເຂດຊຽງຂວາງ ໃຫ້ເຂົ້າຮ່ວມລ້ຳລຽງອາວຸດກະສຸນ ສະບຽງອາຫານຕ່າງໆ ເພື່ອ ຮັບໃຊ້ສະໜາມຮົບໃຫ້ທັນເວລາ ແລະທົ່ວເຖິງ, ຮັບປະກັນໃຫ້ກອງທະຫານ ຕີ ເອົາຊະນະສັດຕູຢ່າງພິລະອາດຫານ. ສະເພາະກອງຮ້ອຍ 769 ແມ່ນໄດ້ຮັບ ຄ້ຳສັ່ງຜູ້ບັນຊາການເຂດໃຫ້ປະຕິບັດໜ້າທີ່ພ້ອມກັບພະນັກງານແພດຈ້ຳນວນ ໜຶ່ງ ລ້ຳລຽງເອົາຄົນເຈັບອອກຈາກຫ້ອງການເສນາທັກ ພູແຮ້ ແລະໂຮງໝໍ 01, 02 ໄປສູ່ເຂດແນວຫຼັງທີ່ປອດໄພ.

ພາຍຫຼັງໄດ້ຮັບຄ້ຳສັ່ງດັ່ງກ່າວ ຄະນະບັນຊາການກອງຮ້ອຍ 769 ໄດ້ ເອີ້ນເອ້ຍນ້ອງທັງໝົດມາເຕົ້າລວມກັນ ເພື່ອລາຍງານສະພາບການ ແລະມອບ ໝາຍກັບທີ່ລະອຽດໃຫ້ແຕ່ລະພາກສ່ວນ, ພ້ອມທັງສຶກສາອົບຮົບ ການເມືອງ ແນວຄິດ ໃຫ້ແຕ່ລະສະຫາຍໃຫ້ມີຄວາມອົດທົນ, ທຸ່ນທ່ຽງ ສາມັກຄີຊ່ວຍເຫຼືອ ເຊິ່ງກັນ ແລະກັນ ເພື່ອນ້ຳເອົາຄົນເຈັບໄປສູ່ຈຸດໝາຍດ້ວຍຄວາມປອດໄພ.

ເມື່ອກະກຽມທຸກຢ່າງສ້ຳເລັດແລ້ວ ຄະນະບັນຊາກອງຮ້ອຍ ກໍ່ໄດ້ອອກ ຄ້ຳສັ່ງໃຫ້ເອ້ຍນ້ອງຂົນເອົາຄົນເຈັບອອກຈາກເສນາທັກຄື: ກາລະທອນ ປະຈ້ຳ

ຢູ່ກອງພັນ 13 ຂາກຸດ, ວຽງທອງ ຖືກສະເກັດລະເບີດທີ່ຫົວລຳຕົວ, ແລະຄົນເຈັບຈາກໂຮງໝໍ 01 ຄົນເຈັບມີ 10 ຄົນ ໃນນັ້ນມີອ້າຍບົວລາ ໂອບແປ້ງຢູ່ຂາສອງເບື້ອງ, ອ້າຍໝື່ນ ກອງພັນທີ 1 ເປັນຄົນສູງໃຫຍ່, ອ້າຍບົວລຽນ... ແບ່ງໃສ່ຫາມລະ 4 ຄົນ, 2 ຄົນຫາມເອົາຄົນເຈັບ ຜູ້ໜຶ່ງຄົນ, ອີກ 2 ຄົນແມ່ນເປ ເອົາເຄື່ອງຂຶ້ງມີ: ເຂົ້າສານ, ເຂົ້າໜົມ, ຜ້າຫົ່ມ, ປ່ອງຊຶ້ນໝູ. ເອື້ອຍນ້ອງຫຼາຍຄົນຍັງນ້ອຍ ມີອາຍຸພຽງແຕ່ 12 ປີກໍ່ມີ, ຮ່າງກາຍກໍ່ບໍ່ສູງ, ຄົນເຈັບບາງຄົນ ກໍ່ເຈັບໜັກບໍ່ສາມາດຊ່ວຍເຫຼືອຕົນເອງໄດ້, ບາງຄົນກໍ່ຮ່າງກາຍໃຫຍ່ສູງ ມີຫຼາຍນ້ຳໜັກ (60-70 kg) ດັ່ງນັ້ນການຫາມກໍ່ລຳບາກ ໂດຍສະເພາະເວລາຍ່າງຂ້າມຫ້ວຍ ຂ້າມຮ່ອງ ຂ້າມຂອນໄມ້ ທາງມື່ນ, ບາງເທື່ອຫຼັງຂອງຄົນເຈັບທີ່ນອນໃນເປ ໃນອູ່ ກໍ່ຖືກຖູໄຖໄປກັບຂອນໄມ້ ກ້ອນຫີນທີ່ຢູ່ກາງທາງ,

ການເດີນທາງ ອອກລຽບຕີນພູແຮ້-ລັດໃສ່ບ້ານໜອງຫຍ້າມ້າ-ບ້ານເກາະ-ລ່ອງໄກ່-ເມືອງແທ້-ສັນນ້ອຍ-ແທ່ນພູນ. ການເດີນຫຍຸ້ງຍາກຍ້ອນເສັ້ນທາງຍາວໄກ, ຝົນຕົກລົນຕະຫຼອດທາງ ໄປຕາມດົງຕາມປ່າ, ໄປທາງລັດຜ່ານຮ່ອມຫ້ວຍພູເຂົາ, ໄປແຕ່ຍາມກາງຄືນ, ກາງເວັນແມ່ນພັກຜ່ອນ ເພື່ອຫຼີກລ່ຽງສັດຕູ ທີ່ຢູ່ເທິງປ້ອມພູ ແລະໃຊ້ຍົນບິນເວີ້ນສອດແນມຢູ່ຕະຫຼອດເວລາແລ້ວກໍ່ຖິ້ມລະເບີດລົງໃສ່ບ່ອນໃດທີ່ພວກເຂົາສົງໄສ, ສຽງລະເບີດດັງກຶກກ້ອງ ແລະ ເຜົາຜານໄປທົ່ວ. ເອື້ອຍນ້ອງທຸກຄົນອິດເມື່ອຍ ເຈັບບ່າ ເຈັບຕີນ ຈຳນວນຄົນເຈັບພັດຫຼາຍຜ່ານໄປຫຼາຍມື້ ເຂົ້າທີ່ກຽມມານັ້ນກໍ່ບົກບາງລົງເລື້ອຍໆ ເມື່ອເຫັນວ່າຈະບໍ່ພຽງພໍ, ຄະນະບັນຊາການ ແລະ ເອື້ອຍນ້ອງທຸກຄົນ ກໍ່ເລີຍຕົກລົງຈົ່ງເຂົ້າໄວ້ໃຫ້ຄົນເຈັບ, ສ່ວນເອື້ອຍນ້ອງແມ່ນຫັນໄປກິນໜໍ່ໄມ້, ກິນຕົ້ມຜັກ ໝາກອຶ ໝາກໂຕ່ນ ຢວກກ້ວຍ ໝາກແໜ່ງ ທີ່ເກັບເອົາຕາມຫົນທາງ ແລະ ໄຮ່ສວນຂອງ ປະຊາຊົນແທນ.

ເຖິງວ່າຈະພົບກັບຄວາມຫຍຸ້ງຍາກມາກຫຼາຍປະການ ປານໃດກໍ່ຕາມ ແຕ່ດ້ວຍນ້ຳໃຈທໍລະຫົດອົດທົນອັນສູງສົ່ງຂອງເອື້ອຍນ້ອງກອງຮ້ອຍ 769 ທຸກສະຫາຍໄດ້ພ້ອມກັນຕັດສິນໃຈບຸກບືນ, ຜ່ານຜ່າ, ທັງເດີນທາງ ທັງຫຼີກເວັ້ນຈາກກອງທະຫານສັດຕູ, ພ້ອມນັ້ນຍັງຮັກສາຄົນເຈັບເປັນຢ່າງດີ.

5 ວັນຜ່ານໄປຈຶ່ງຮອດສັນນ້ອຍແທ່ນພູນ. ມາຮອດນີ້, ຄະນະກອງຮ້ອຍ ແລະທີ່ປຶກສາຕົກລົງພັກທັບຢູ່ແຄມຫ້ວຍຕົນພູ, ເພາະເອື້ອຍນ້ອງຫຼາຍຄົນກໍ່ອິດເມື່ອຍຫຼາຍ ເນື່ອງຈາກສອງວັນແລ້ວທີ່ອາຫານກາມກິນບໍ່ພຽງພໍ. ມີຫຼາຍພາກສ່ວນທີ່ອອກສູ່ແນວຫຼັງ ກໍ່ພັກທັບຢູ່ບ່ອນນັ້ນຄືກັນ. ກອງ 769 ແບ່ງກຳລັງອອກເປັນ 2 ສ່ວນ, ຜູ້ໃດຍັງນ້ອຍ ແລະສຸຂະພາບບໍ່ແຂງແຮງ ໃຫ້ພັກລໍຖ້າ ແລະເບິ່ງແຍງຄົນເຈັບ ໃນນີ້ມີສະຫາຍ ນາງ ສີສຸກ ຫົວໜ້າການທະຫານກອງຮ້ອຍ ຢູ່ນຳພາເອື້ອຍນ້ອງເບິ່ງແຍງຄົນເຈັບ. ຜູ້ທີ່ຍັງມີສຸຂະພາບແຂງແຮງກວ່າ ໃຫ້ໄປຊອກເຂົ້າ, ໃນຈຳນວນທີ່ໄປຊອກເຂົ້າມີ 10 ສະຫາຍ, ນຳພາໂດຍສະຫາຍນາງ ຄຳໝັ້ນ ຫົວໜ້າການເມືອງກອງຮ້ອຍ, ສະຫາຍນາງບົວທອງ ສະຫາຍ ນາງ ຄຳພາ ແລະສະຫາຍອື່ນໆ. [73]

ກ່ອນກອງຮ້ອຍ 769 ຈະເດີນທາງມາຮອດສັນນ້ອຍແທ່ນພູນນີ້ 3 ວັນ ກອງພັນ 48 (ກຳລັງເປັນກາງຮັກຊາດ)ໄດ້ຕີປົດປ່ອຍເອົາພູຜອມແລ້ວ. ເອື້ອຍນ້ອງ 10 ສະຫາຍໄດ້ອອກເດີນທາງແຕ່ 6 ໂມງເຊົ້າໄປຮອດຕົນພູຜອມໃນເວລາ 8 ໂມງ, ອ້າຍນ້ອງກອງພັນ 48 ກຳລັງເປັນກາງກໍ່ມາຕ້ອນຮັບເອົາ ແລະເຂົາເຈົ້າກໍ່ລາຍງານສະພາບການໃຫ້ຟັງ. ເມື່ອຮູ້ວ່າເອື້ອຍນ້ອງຫິວເຂົ້າ ເຂົາເຈົ້າກໍ່ເອົາເຂົ້າແຫ້ງແຊ່ນ້ຳໃຫ້ກິນກ່ອນ ແລ້ວຈຶ່ງພາກັນເດີນທາງຂຶ້ນພູ ເຖິງຕອນທ່ຽງຈຶ່ງຂຶ້ນຮອດຈອມພູ, ສືບຕໍ່ເດີນທາງລົງພູອີກຟາກໜຶ່ງ ໄປຫາບ້ານແກ່ວຫ້ອມ, ນ້ຳສອງ, ນ້ຳເກງ (ເຜົ່າລາວເທິງທີ່ແຕກໜີປະບ້ານ). ໂດຍໄດ້ຮັບການຊ່ວຍເຫຼືອຈາກອ້າຍນ້ອງກອງພັນ 48 ເອື້ອຍນ້ອງໄດ້ຕຳເອົາເຂົ້າຈາກເລົ້າຂອງປະຊາຊົນ ແລະເກັບເອົາໝາກອຶ, ໝາກໂຕ່ນ ເທົ່າທີ່ແຮງມີຕາມເຮືອນຂອງປະຊາຊົນ.

ກ່ອນຈະເດີນທາງໄປຊອກເອົາເຂົ້ານັ້ນ ມີການຄາດກະໄວ້ວ່າ ຄົງຈະກັບຄືນເຖິງສັນນ້ອຍແທ່ນພູນບ່ອນພັກທັບ ໃນຕອນແລງຂອງມື້ຕໍ່ມາ. ເອື້ອຍນ້ອງແຕ່ລະຄົນຈຶ່ງມີເຄື່ອງນຸ່ງພຽງແຕ່ຊຸດດຽວ, ຮຸ່ງເຊົ້າມື້ໃໝ່ມາ ກໍ່ຈະພາກັນເດີນ

.....

*73. ຈາກການເລົ່າຂອງນາງ ຄຳໝັ້ນ ນາງບົວທອງ ແລະນາງຄຳພາ ຈຳນວນທີ່ໄປນຳກັນເທົ່າທີ່ຈື່ໄດ້ຄື: ນາງບົວຄຳ (ເບ) ນາງບົວອັນ (ບ.ນ້ຳຕົ້ມ) ນາງຈັນໄຊ (ບ. ສີພົມ) ນາງແສງ (ບ. ສີພົມ) ນາງບົວທອງ, ນາງຄຳພາ.*

ທາງກັບ, ແຕ່ວ່າມາເຖິງຕອນນີ້ສະພາບການໄດ້ປ່ຽນໄປແລ້ວອ້າຍນ້ອງກອງພັນ 48 ໄດ້ມາແຈ້ງໃຫ້ຮູ້ວ່າ ພວກເຈົ້າກັບຄືນໄປຫາຈຸດພັກທັບຂອງກົມກອງບໍ່ໄດ້ແລ້ວ ຍ້ອນວ່າທະຫານສັດຕູໄດ້ມາບຸກຕີຍຶດເອົາສັນນ້ອຍແທ່ນພູນ ແລະບຸກຕີກອງຮ້ອຍ 769 ແລ້ວ.

ໃນເວລາທີ່ກຳລັງ 769 ສ່ວນໜຶ່ງພວມເດີນທາງໄປຫາເຂົ້າຍັງບໍ່ທັນກັບມານັ້ນ, ໃນວັນທີ 15/9/1969 ເວລາປະມານ 9-10 ໂມງເຊົ້າ ຂະນະທີ່ຝົນຕົກແຮງ, ເອື້ອຍນ້ອງກອງ 769 ກຳລັງກຽມຊີກິນເຂົ້າ ດ້ວຍການປີ້ງຊີ້ນຄວາຍທີ່ບໍ່ມີຮອດເກືອໃສ່, ຂະບວນອົບພະຍົບຂອງປະຊາຊົນຂະບວນໜຶ່ງກໍ່ໄດ້ເດີນທາງມາຮອດສັນນ້ອຍແທ່ນພູນ ແລະກໍ່ພໍດີຕົກເຂົ້າວົງປິດລ້ອມຂອງສັດຕູ. ພວກສັດຕູໄດ້ຍິງປືນຄົກ 60 ມມ. ປືນແອັມ 16 ແລະຖິ້ມໝາກແຕກລົງມາໃສ່ເອື້ອຍນ້ອງພວກເຮົາ. ຫຼັງຈາກນັ້ນພວກສັດຕູກໍ່ຄືບຄານເຂົ້າໃກ້ທັງຮ້ອງບອກກັນວ່າ: ຈັບເອົາ! ຈັບເອົາ! ໃຫ້ໝົດ.

ສະຫາຍ ບຸນອ່ຽນ ທີ່ປຶກສາກອງຮ້ອຍ, ສະຫາຍ ນາງສີສຸກ, ນາງບົວພອນ ພ້ອມເອື້ອຍນ້ອງຈຳນວນໜຶ່ງ ຮີບຮ້ອນເອົາຄົນເຈັບ 2 ຄົນ, ສະຫາຍນາງ ບົວຄຳ ນາງຈັນທະລາ ພ້ອມເອື້ອຍນ້ອງ 4-5 ຄົນ ຮັບຜິດຊອບຄົນເຈັບອີກ 2 ຄົນອັນມີ ອ້າຍໝື່ນ, ອ້າຍບົວລາ. ຕໍ່ໜ້າສະພາບການໄດ້ຜັນແປໄປຢ່າງໄວວາ ແລະ ເປັນຕາຍນັ້ນ ສະຫາຍນາງ ບົວຄຳ ຫົວໜ້າໝວດ 2 ໄດ້ຕັດສິນໃຈນຳພາເອື້ອຍນ້ອງໄປຫາມເອົາອ້າຍໝື່ນ ຂ້ວາມຫ້ວຍນ້ຳໄປກ່ອນ, ແລ້ວຈຶ່ງກັບໄປຫາອ້າຍ ບົວລາ ແລະ ເອື້ອຍນ້ອງອີກ 3 ຄົນທີ່ຂ້ວາມນ້ຳຍັງບໍ່ໄດ້ ເພາະນ້ຳຫ້ວຍຍິ່ງນອງຂຶ້ນ ແລະໄຫຼແຮງ.

ສັດຕູພັດເຄື່ອນກຳລັງໃກ້ເຂົ້າມາ, ສະຫາຍ ບົວລາ ໄດ້ເວົ້າກັບນາງບົວຄຳວ່າ: ***"ບົວຄຳອີຍ ຢ່າຫ່ວງອ້າຍເລີຍ ຂໍໃຫ້ນ້ອງເອົາອ້າຍໝື່ນ ແລະເອື້ອຍນ້ອງອອກໄປໃຫ້ຫວິດ ຈາກວົງລ້ອມຂອງສັດຕູ, ຖ້າບໍ່ດັ່ງນັ້ນ ສັດຕູໄລ່ທັນ ພວກເຂົາຈະຈັບພວກເຮົາໄດ້ໝົດ"*** ສະຫາຍນາງບົວຄຳໄດ້ຍິນຄຳເວົ້າຂອງອ້າຍ ບົວລາ ແນວນັ້ນ ກໍ່ທັງອີຕົນ ທັງເປັນຫ່ວງຜູ້ບາດເຈັບ ທັງຄິດນຳເອື້ອຍນ້ອງ ຫາກສັດຕູ

ມາທັນຕ້ອງຖືກຈັບໝົດແທ້ໆ. ດ້ວຍສະຖານະການຄັບຂັນແນວນັ້ນ ສະຫາຍ ນາງບົວຄຳ ຈຶ່ງຕັດສິນໃຈເວົ້າກັບອ້າຍບົວລາ ດ້ວຍນ້ຳຕານອງໜ້າວ່າ *"ອ້າຍ ບົວລາເອີຍ ອັນນີ້ບໍ່ແມ່ນພວກນ້ອງຖິ້ມປະອ້າຍ ພຽງແຕ່ວ່າເພື່ອຄວາມປອດໄພ ລວມ ນ້ອງປະອ້າຍໄວ້ນີ້ ກໍ່ຍ້ອນວ່າເມື່ອສັດຕູມັນມາເຫັນ ພວກເຂົາອາດຈະ ເອົາອ້າຍໄປປິ່ນປົວຢູ່ໂຮງໝໍ ເດີອ້າຍເດີ"*

ຫຼັງຈາກສັ່ງຄວາມສຸດແລ້ວສະຫາຍນາງບົວຄຳພ້ອມດ້ວຍເອື້ອຍນ້ອງກໍ່ ຫາມເອົາອ້າຍບົວລາໄປໄວ້ບ່ອນທີ່ຄິດວ່າຈະປອດໄພທີ່ສຸດ ແລ້ວກໍ່ຮີບຮ້ອນນຳພາ ເອື້ອຍນ້ອງຂ້າມນ້ຳ ແລ້ວຫາມເອົາອ້າຍໝື່ນອອກໄປໃຫ້ຫວິດຈາກສັດຕູ. ໄປ ໄດ້ປະມານ 20 ນາທີ ນາງບົວຄຳ ກໍ່ຂຶ້ນຕົ້ນໄມ້ສັງເກດການເຫັນສັດຕູ ໄດ້ເອົາ ຍົນເຕ 28, ຈຳນວນ 4 ລຳມາຖິ້ມລະເບີດໃສ່ບ່ອນທີ່ກອງ 769 ພັກທັບຢູ່ຢ່າງ ຮ້າຍແຮງ, ແລະຕໍ່ມາສັດຕູກໍ່ໄດ້ເອົາຍົນເຮລິກົບເຕີ 3 ລຳ ມາຮັບເອົາປະຊາຊົນ ທີ່ອົບພະຍົບ ແລະອ້າຍບົວລາຂຶ້ນຍົນໄປລ້ອງແຈ້ງ. ໃນບັ້ນສັດຕູຫຼອນຕີ ເທື່ອນີ້ ເຮັດໃຫ້ເອື້ອຍນ້ອງ 769 ຈຳນວນ 1 ຄົນບາດເຈັບ, 1 ຄົນເສຍຊີວິດ ແລະ 1 ຄົນ (ອ້າຍບົວລາ) ຖືກສັດຕູຈັບໄດ້.[74]

ພາຍຫຼັງເອື້ອຍນ້ອງກອງຮ້ອຍ 769 ໄດ້ນຳເອົາຄົນເຈັບອອກຈາກວົງ ປິດລ້ອມຂອງສັດຕູປອດໄພແລ້ວ ກໍ່ໄດ້ສືບຕໍ່ເດີນທາງໄປອີກ 3 ມື້ ຈຶ່ງຮອດບ້ານ ສັນປ່າຄ້ຳ(ບ້ານລາວສູງ)ຄະນະບັນຊາຈຶ່ງໄດ້ພາຄົນເຈັບ ແລະ ເອື້ອຍນ້ອງພັກ ຢູ່ແຄມບ້ານ. ເວລານີ້ບໍ່ມີເຂົ້າກິນ, ເອື້ອຍນ້ອງກໍ່ອິດເມື່ອຍຫຼາຍຍ້ອນເດີນທາງ ໄກ ບົນເສັ້ນທາງທຸລະກັນດານ, ຊ້ຳບໍ່ພໍຝົນຊ້ຳພັດຕົກຕະຫຼອດທາງ ເຄື່ອງນຸ່ງ ກໍ່ມີພຽງຊຸດດຽວ ທັງປຽກທັງເປື້ອນ, ເອື້ອຍນ້ອງນອນພັກຢູ່ແຄມບ້ານ, ສະຫາຍ ນາງບົວຄຳ ໄດ້ນຳພາເອື້ອຍນ້ອງ 2 ສະຫາຍ ເຂົ້າໄປຫາປະຊາຊົນລາວສູງ, ເພື່ອຂໍສາລິນຳປະຊາຊົນ ແລະຂໍໄດ້ 10 ມານຈີ່ປັນກັນກິນພໍມີແຮງ.

.....

*74. ອ້າຍບົວລາ ໄດ້ຮັບການປິ່ນປົວ ຈົນມີສຸຂະພາບດີ ແລ້ວຝ່າຍຂວາວຽງຈັນ ຈຶ່ງເອົາໄປ ຂັງຄຸກ ແລະປ່ອຍຕົວໃນພາຍຫຼັງ. ອ້າຍບົວລາຍັງໄດ້ຂຽນຈົດໝາຍສົ່ງຂ່າວ ໄປໃຫ້ເອື້ອຍ ນ້ອງກອງ 769 ຊາບເຖິງເລື່ອງລາວຂອງຕົນພາຍຫຼັງທີ່ຖືກສັດຕູຈັບໄປ.*
*(ຕາມການເລົ່າຂອງນາງບົວຄຳ)*

ຕໍ່ມາພາກສ່ວນທີ່ໄປຊອກເອົາເຂົ້າ, ມີສະຫາຍນາງ ຄຳໝັ້ນ, ນາງບົວ ທອງ ນາງຄຳພາ ແລະຈຸສະຫາຍນາງສີສຸກ ທີ່ພາເອື້ອຍນ້ອງເດີນທາງໄປກ່ອນ ນັ້ນກໍ່ມາພົບກັນແລ້ວ ກໍ່ສືບຕໍ່ເດີນທາງໄປທິດຈ່າໝີ້ນ ໄປບ້ານສາມແຈ ອອກໄປ ໃສ່ບ້ານແກ້ງຄວາຍ ມາຊາຍແດນນ້ຳກັ່ນແລ້ວ ກອງຮ້ອຍ 769 ກໍ່ໄດ້ມອບຄົນ ເຈັບໃຫ້ແພດໝໍນຳເອົາໄປປິ່ນປົວຕໍ່ຢູ່ປະເທດຫວຽດນາມ.

ພາຍຫຼັງປະຕິບັດໜ້າທີ່ ຕາມການມອບໝາຍຈາກຂັ້ນເທິງສຳເລັດແລ້ວ ກອງຮ້ອຍ 769 ໄດ້ກັບມາພັກຜ່ອນ ຢູ່ຫ້ອງການພະລາທິການເຂດ ຢູ່ນ້ຳກັ່ນ ເພື່ອປັບປຸງກຳລັງປິ່ນປົວສຸຂະພາບ (ໃນນີ້ມີຜູ້ໜຶ່ງເປັນໄຂ້ຍູງເຖິງຂັ້ນເສຍຊີວິດ) ແລະລໍຖ້າຮັບເອົາເຄື່ອງນຸ່ງຫົ່ມ, ໃນເວລາລໍຖ້າຢູ່ຫ້ອງການພະລາທິການນີ້ ກອງ ຮ້ອຍກໍ່ໄດ້ສຳເລັດໜ້າທີ່ລຳລຽງຂົນເຂົ້າຂຶ້ນລົດ ຢູ່ສາງພະລາທິການດ້ານຮົບ.

ຮອດເດືອນ 10/1969 ກອງບັນຊາການເຂດຊຽງຂວາງໄດ້ມີຄຳສັ່ງໃຫ້ ກອງຮ້ອຍ 769 ເຄື່ອນກຳລັງມາຕັ້ງຄ້າຍຢູ່ຖ້ຳແກ້ງຄວາຍ, ເມືອງໜອງແຮດ ເພື່ອເຮັດໜ້າທີ່ລຳລຽງອາວຸດ, ສະບຽງອາຫານ ລູກກະສຸນຮັບໃຊ້ດ້ານຮົບເຊັ່ນ: ລຳລຽງໄປທາງທິດໜອງແຮດ, ໄປທິດສັນນ້ອຍແທ່ນພູນ, ບ້ານສາມແຈ, ຜາຫຼັງ ໝູ ແລະໄປທາງທິດຜາລະແອກ ໃຫ້ອ້າຍນ້ອງກອງພັນ 16, ກອງພັນ 24, ກອງ ພັນ 701.

ເຖິງເດືອນ 12/1969 ຂັ້ນເທິງມີຄຳສັ່ງໃຫ້ກອງຮ້ອຍ769 ເຄື່ອນກຳລັງ ຈາກຖ້ຳແກ້ງຄວາຍ ມາຕັ້ງຄ້າຍຢູ່ຖ້ຳນ້ຳຕຽນ ເພື່ອລຳລຽງອາວຸດກະສຸນ ແລະ ສະບຽງອາຫານ ຮັບໃຊ້ດ້ານຮົບຄືເກົ່າ. ກອງຮ້ອຍ 769 ໄດ້ປະຕິບັດໜ້າທີ່ ທີ່ ຂັ້ນເທິງມອບໝາຍໃຫ້ເຊັ່ນ: ລຳລຽງອາວຸດກະສູນ ແລະສະບຽງອາຫານແຕ່ຖ້ຳ ຕອງຈິງ ໄປບ້ານນ້ຳຮົ່ມ ລ່ອງໄກ ແລ້ວລຳລຽງໄປເມືອງແທ ໃຫ້ກອງພັນ 15 ກອງພັນ 601 ກອງພັນປັດໄຈ.

ການສູ້ຮົບຍັງດຸເດືອດຂ້ຽວຂາດ ສັດຕູໄດ້ໂຈມຕີຢ່າງຮ້າຍແຮງ, ພວກເຂົາ ນຳໃຊ້ກຳລັງຢ່າງຫຼວງຫຼາຍ ນັບທັງກຳລັງພິເສດວ່າງປາວ ແລະ ທະຫານເລວ

ຮັບຈ້ຳງໄທອີກຫຼາຍສິບກອງພັນ ເຄື່ອນທັບບຸກບຸງດຍຶດເອົາຈຸດຍຸດທະສາດຢ່ຳງ ຕໍ່ເນື່ອງ, ທຳງອຳກຳດພວກເຂົ້ຳໃຊ້ຍົນບົນເວີ້ນ, ສອດແນມຕຳມເສັ້ນທຳງ, ຕຳມ ບ້ຳນປະຊຳຊົນ ແລ້ວຖິ້ມລະເບີດລົ້ງໃສ່ບ່ອນທີ່ພວກເຂົ້ຳສົ້ງໄສ, ໃນນັ້ນມີທັ້ງ ລະເບີດແຕກຊ້ຳ ເຊິ້ງມີຫຼຳຍຊະນິດ ເຊັ່ນ: ຊະນິດໃບໄມ້, ປຳກກຳ, ລະເບີດ ສຳຍໃຍ, ລະເບີດບົກຊຸ່ນ (ຖ້ຳຜູ້ໃດບໍ່ຮູ້ຈັບເອົຳມັນກໍ່ຈະແຕກ).

ເວລຳກອງຮ້ອຍ 769 ຕັ້ງທັບຢູ່ຖ້ຳບ້ຳນນຳສຳລຳ ນ້ຳຕຸ່ນ ຂັ້ນເທິງໄດ້ມີ ຄຳສັ່ງໃຫ້ໄປລຳລຸ່ງເອົຳເຂົ້ຳຈຳກຜຳແຕກໄປເມືອງຄຳ, ຄະນະກອງຮ້ອຍ 769 ໄດ້ຕົກລົ້ງໃຫ້ສະຫຳຍນຳງ ຄຳໝັ້ນ ຫົວໜ້ຳກຳມເມືອງກອງຮ້ອຍ ນຳພຳເອ້ຶ້ອຍ ນ້ອງຈຳນວນໜຶ່ງໄປເຮັດໜ້ຳທີ່. ພຳຍຫຼັງສຳເລັດບັ້ນລຳລຸ່ງເຂົ້ຳ ໄປໄວ້ສຳງ ເມືອງຄຳ ແລ້ວກໍ່ເດີນທຳງກັບຄືນມຳກົມກອງ, ແຕ່ຖືກເຮືອບົນຂອງສັດຕູຫຼວມ ຕິຖິ້ມລະເບີດໃສ່ຢ່ຳງຮ້ຳຍແຮງ, ພໍໄດ້ຍິນສຽງຍົນຄຳວໜຶ່ງກໍ່ໄດ້ຍິນສຽງໂບມບີ ແຕກ, ສະຫຳຍ ນຳງຄຳໝັ້ນໄດ້ມີຄຳສັ່ງໃຫ້ເອ້ຶ້ອຍນ້ອງທຸກຄົນຕັ້ງສະຕິ ໃຫ້ດີ ແລະໃຫ້ໝູບລົ້ງດິນ ແລ້ວຫຼັງຈຳກນັ້ນປະມຳນ 30 ນຳທີສຽງລະເບີດມິດລົ້ງແລ້ວ ສະຫຳຍ ນຳງຄຳໝັ້ນ ກໍ່ສັ່ງໃຫ້ເອ້ຶ້ອຍນ້ອງຟ້ຳວແລ່ນໄປຫຳບ່ອນຕັ້ງທັບຢ່ຳງໄວ ວຳ. ເອ້ຶ້ອຍນ້ອງທັ້ງແລ່ນ ທັ້ງຊອກບ່ອນກັ້ງບັ້ງ ເພື່ອບໍ່ໃຫ້ຖືກສະເກັດລະເບີດ. ເມື່ອກັບມຳຮອດຄ້ຳຍແລ້ວ ກວດກຳເບິ່ງຈຳນວນພົນ ຍັງຄົບຖ້ວນປອດໄພ, ມີ ພຽງບຳງຄົນເຈັບຕີນຍ້ອນໄມ້ບຳດ, ບຳງຄົນເຈັບຂຳຍ້ອນຕຳກ້ອນຫີນ.

ພຳຍຫຼັງປັບປຸງກຳລັງແລ້ວ ພັກຜ່ອນຢູ່ຖ້ຳນ້ຳຕຸ່ນໄດ້ໄລຍະໜຶ່ງ ກອງ ບັນຊຳກຳນທະຫຳນເຂດຊຽງຂວຳງ ໄດ້ມີຄຳສັ່ງໃຫ້ກອງຮ້ອຍ 769 ເຄື່ອນກຳ ລັງມຳຕັ້ງຄ້ຳຍຢູ່ຖ້ຳແກບ ເພື່ອລຳລຸ່ງອຳວຸດ ແລະສະບຽງອຳຫຳນແຕ່ເມືອງຄຳ ໄປນຳສຳລຳ ແລະທ່ຳລິນນ້ອຍ ເພື່ອຮັບໃຊ້ອ້ຳຍນ້ອງທະຫຳນຢູ່ບ່ອນນັ້ນ, ເຖິງ ແມ່ນວ່ຳສະພຳບກຳນເວລຳນັ້ນ ຈະມີຄວຳມຫຍຸ້ງຍຳກ ແຕ່ຄະນະກອງຮ້ອຍ 769 ທີ່ນຳພຳໄປຄື: ສະຫຳຍນຳງ ຄຳໝັ້ນ ພ້ອມດ້ວຍທີ່ປຶກສຳຄື ລຸງຄຳຜຸຍ ໄດ້ ຕົກລົ້ງ ແລະກະກຽມອຳວຸດຍຸດໂທປະກອນ ແລະສະບຽງອຳຫຳນໄປໃຫ້ກອງ ບັນຊຳກຳນຢູ່ສັນນ້ອຍ.

ພໍກະກຽມ, ມ້ຽນມັດອາວຸດຍຸດໂທປະກອນຕ່າງໆສຳເລັດແລ້ວ, ເວລາ 5 ໂມງແລງ ກໍ່ອອກເດີນທາງແຕ່ເມືອງຄຳ ໄປພັກທັບຢູ່ຕີນພູຕາດຫວີງ ເພື່ອວ່າຕື່ນເຊົ້າມື້ໃໝ່ ກໍ່ຈະໄດ້ເດີນທາງຂຶ້ນພູ. ພໍໄປຮອດບ່ອນໝາຍກໍ່ພໍດີ 8 ໂມງກາງຄືນ, ຈຶ່ງຕົກລົງໃຫ້ເອື້ອຍນ້ອງພັກທັບຢູ່ບ່ອນນີ້ເພື່ອເອົາແຮງ. ໃນບໍລິເວນນັ້ນກໍ່ພໍດີມີລຸ້ງ ມີຕູບບ່ອນຫຼົບໄພຂອງປະຊາຊົນທີ່ປຸກໄວ້. ດັ່ງນັ້ນ ບາງຄົນກໍ່ນອນຕູບ ບາງຄົນກໍ່ນອນອູ່. ຮອດ 11 ໂມງກາງຄືນ ໃນຂະນະທີ່ເອື້ອຍນ້ອງກຳລັງນອນທັງຫຼັບທັງຝັນນັ້ນ ກໍ່ໄດ້ຍິນສຽງໂບມບີສາຍໃຍແຕກດັງຂຶ້ນ ໃນບໍລິເວນທີ່ພັກທັບຢູ່, ພໍສຽງລະເບີດມິດລົງກໍ່ໄດ້ຍິນສຽງຮ້ອງຂໍຄວາມຊ່ວຍເຫຼືອ, ສະຫາຍນາງຄຳໝັ້ນ ພ້ອມດ້ວຍເອື້ອຍນ້ອງຈຳນວນໜຶ່ງແລ່ນໄປເບິ່ງ, ປາກົດແມ່ນ ທ່ານຄຳຜຸຍ ຜູ້ນຳພາທາງໄປ ຖືກສະເກັດລະເບີດທີ່ກົກຂາ(ຫຼັງຈາກນັ້ນສົ່ງໄປປົວຢູ່ໂຮງໝໍ 01), ສ່ວນເອື້ອຍນ້ອງບໍ່ມີໃຜໄດ້ຮັບບາດເຈັບມີແຕ່ປົກເສື້ອຂອງສະຫາຍນາງຄຳໝັ້ນ ຖືກສະເກັດລະເບີດຕັດຂາດໄປທໍ່ 3 ນິ້ວມື.

ພໍຕື່ນເຊົ້າ ພາຍຫຼັງໜຶ້ງເຂົ້າສຸກແລ້ວ ຂະບວນລຳລຽງກໍ່ອອກເດີນທາງຂຶ້ນພູແຕ່ 7 ໂມງເຊົ້າ, ແຕ່ລະຄົນເປ້ເຂົ້າແຕ່ 15-20kg ແລະອາວຸດກະສຸນອີກສະເລ່ຍຜູ້ໜຶ່ງປະມານ 40-50 kg ການເດີນທາງຜ່ານພູຕາດຫວີງ, ພົບຄວາມຫຍຸ້ງຍາກທີ່ສຸດ ຍ້ອນເສັ້ນທາງກໍ່ບໍ່ມີ, ໄດ້ບຸປ່າໄປ, ພູຊັນ, ເອື້ອຍນ້ອງແຕ່ລະສະຫາຍພັດເປ້ເຄື່ອງໜັກ ຫຼາຍຄົນກໍ່ໄດ້ຈ່ອງດຶງເຄືອໄມ້ຄ່ອຍໆໄຕ່ຂຶ້ນ, ບາງຄົນກໍ່ເຟືອຂຶ້ນນຳຕົ້ນໄມ້ເພື່ອຊ່ວຍແຮງໃນການປີນຜ່ານໜ່ວຍພູທີ່ສູງຊັນ, ຂຶ້ນແຕ່ເຊົ້າ ເຖິງບ່າຍ 2 ໂມງຈຶ່ງຫວິດພູ ແລ້ວເດີນທາງຕໍ່ 6 ໂມງແລງຈຶ່ງຮອດຈຸດທີ່ໝາຍຄືທີ່ສັນນ້ອຍ. ຕອນຂາກັບກໍ່ອອກແຕ່ເຊົ້າ ເວລາລົງພູຫຼາຍຄົນຕະລູດລົງເລີຍ ເທື່ອນີ້ນັບວ່າລຳບາກຫຼາຍ ແຕ່ເອື້ອຍນ້ອງແຕ່ລະຄົນກໍ່ຍັງຍິ້ມແຍ້ມແຈ່ມໃສ ບັນຍາກາດເບີກບານມ່ວນຊື່ນທ້າວທັນຕໍ່ໜ້າທີ່ວຽກງານ.

ພາຍຫຼັງລຳລຽງຂົນສົ່ງອາວຸດກະສຸນ ແລະ ສະບຽງອາຫານໄປສັນນ້ອຍສຳເລັດ, 4/1970 ຂັ້ນເທິງກໍ່ມີຄຳສັ່ງໃຫ້ຄະນະກອງຮ້ອຍ 769 ຈັດຕັ້ງເອື້ອຍນ້ອງໄປລຳລຽງອາວຸດລູກກະສຸນ ແລະສະບຽງອາຫານ ແຕ່ຖ້ຳແກບເມືອງຄຳມາບ້ານສ້ອນ ບ້ານເສືອ ບ້ານຊົ່ມ ໄປໄວ້ສາງຢູ່ສາມແຍກໜອງເປັດ.

ການລຳລຽງຄັ້ງນີ້ກໍ່ມີຄວາມຫຍຸ້ງຍາກທີ່ສຸດຍ້ອນວ່າສັດຕູໄດ້ເພີ່ມທະວີການບຸກຕີທາງໜ້າດິນ ແລະທາງອາກາດ, ການເດີນທາງແມ່ນອາໄສແຕ່ຕອນກາງຄືນ, ສ່ວນກາງເວັນແມ່ນພັກຜ່ອນ ເພາະຢ້ານສັດຕູເຫັນ, ສະເພາະແຕ່ກາງຄືນ ພວກສັດຕູຍັງໃຊ້ລູກຈ້ອງໄຟຍິງຕິດຕາມຢູ່ທຸກຊົ່ວໂມງ ໂດຍສະເພາະແມ່ນຕາມເສັ້ນທາງ, ສ່ວນກາງເວັນພວກເຂົາໃຊ້ຍົນແອນເລ 19 (L19) ບິນເວີ້ນໝົດມື້. ການເຄື່ອນກຳລັງແຕ່ລະເທື່ອ ຄະນະບັນຊາກອງຮ້ອຍໄດ້ມີຄຳສັ່ງໃຫ້ເອື້ອຍນ້ອງຢ່າງເວລາທີ່ສັດຕູຍິງລູກຈ້ອງໄຟ ເພື່ອອາໄສເຍື້ອງທາງ ບ່ອນໃດບໍ່ມີແສງລູກຈ້ອງ ເອື້ອຍນ້ອງກໍ່ເອົາໄມ້ໂດກມັດໃສ່ບາໂລແຕ່ລະຄົນເປັນເຄື່ອງໝາຍ ໃຫ້ເບິ່ງເຫັນກັນເພື່ອບໍ່ໃຫ້ແຕກແຖວຫຼົງທິດ. ການເດີນທາງໃຊ້ເວລາຫຼາຍວັນ, ແຕ່ເອື້ອຍນ້ອງທຸກຄົນກໍ່ມີຈິດໃຈເບີກບານມ່ວນຊື່ນເພື່ອເຮັດສຳເລັດໜ້າທີ່ອັນມີກຽດ ທີ່ພັກແລະການຈັດຕັ້ງມອບໝາຍໃຫ້ສຳເລັດ ແລະສາມາດນຳເອົາເຄື່ອງລຳລຽງມາເຖິງຈຸດໝາຍຄື ສາງທີ່ສາມແຍກໜອງເປັດທັນເວລາ.

ເດືອນ 9/1970 ຂັ້ນເທິງໄດ້ມີຄຳສັ່ງໃຫ້ກອງຮ້ອຍ 769 ເຄື່ອນຍ້າຍກຳລັງຈາກເມືອງຄຳ ມາປະຈຳຢູ່ເມືອງແປກ ເຮັດໜ້າທີ່ລຳລຽງອາວຸດກະສຸນ, ສະບຽງອາຫານ ແລະເຄື່ອງຂອງຮັບໃຊ້ດ້ານຮົບຕ່າງໆ ຕາມເສັ້ນທາງເລກທີ 5, ສາມແຍກໜອງເປັດໄປຄັງໄຂ ໄປລາດບອກ, ເວລາກອງຮ້ອຍ 769 ປະຈຳຢູ່ເມືອງແປກ ເອື້ອຍນ້ອງພວກເຮົາແມ່ນໄດ້ເຮັດໜ້າທີ່ຂົນເຄື່ອງຂຶ້ນລົດ-ລົງລົດ, ເວລາບໍ່ມີຂະບວນລົດມາ ກໍ່ໄດ້ສາມັກຄີກັນກັບເພດຊາຍຄື ກອງຮ້ອຍເຝົ້າສາງຕັດໄມ້ມາປຸກສາງມຸ້ງນເຄື່ອງໄວ້ຢູ່ປ່າ.

ພໍຕອນຄ່ຳ ກໍ່ອອກມາຮັບຂະບວນລົດຂົນເຄື່ອງ, ມີບາງຄັ້ງກໍ່ເອົາເຄື່ອງຂຶ້ນລົດ ບາງຄັ້ງກໍ່ເອົາເຄື່ອງລົງລົດ, ໃນເວລາລຳລຽງເຄື່ອງລົງລົດ ຂຶ້ນລົດ ແຕ່ລະຄັ້ງ ສັດຕູໄດ້ໃຊ້ເຮືອບິນຍິງລູກຈ້ອງໄຟຢູ່ຕາມເສັ້ນທາງ ເປັນຕົ້ນແມ່ນຢູ່ສາມແຍກໜອງເປັດ, ເພື່ອຕິດຕາມຊອກຫາຂະບວນລົດລຳລຽງ ຖ້າພວກເຂົາເຫັນກໍ່ຖິ້ມລູກໂບມລົງໃສ່ເພື່ອກີດກັ້ນຂະບວນລົດ. ມີບາງຄັ້ງເອື້ອຍນ້ອງກອງ 769 ຜູ້ໜຶ່ງຮັບຜິດຊອບຂົນເຂົ້າລົງລົດ 1 ຄັນ ເຖິງຈະອິດເມື່ອຍແຕ່ດ້ວຍນ້ຳໃຈປະຕິວັດອັນສູງສົ່ງ, ແຕ່ລະຄົນໄດ້ຮັບການສຶກສາອົບຮົມຮ່ຳຮຽນການເມືອງ ຈາກຄະນະ

ກອງຮ້ອຍ ເຮັດໃຫ້ເອື້ອຍນ້ອງມີຈິດໃຈຫ້າວຫັນ, ເຂັ້ມແຂງເຮັດສຳເລັດໜ້າທີ່ຂອງຕົນ.

ພາຍຫຼັງສ້າງໄດ້ຜົນງານ ໃນການລຳລຽງຂົນສົ່ງອາວຸດກະສຸນ ແລະ ສະບຽງອາຫານຮັບໃຊ້ດ້ານຮົບ, ຮັບໃຊ້ກອງທະຫານຢູ່ແນວໜ້າຕະຫຼອດໄລຍະ ເກືອບ 1 ປີເຕັມ ມາເຖິງເດືອນ 6/1970 ກອງບັນຊາການທະຫານເຂດ ຊຽງ ຂວາງໄດ້ມີຄຳສັ່ງໃຫ້ກອງຮ້ອຍ 769 ແລະກອງຮ້ອຍ 368 ກັບຄືນແນວຫຼັງຢູ່ ຖ້ຳນ້ຳຕຽນເພື່ອມາປັບປຸງກຳລັງ ຮ່ຳຮຽນການເມືອງທິດທາງຂອງພັກ, ຂອງ ກອງທັບ. ໄລຍະໜຶ່ງຫຼັງຈາກນັ້ນ ທາງກອງບັນຊາການທະຫານເຂດໄດ້ຄັດ ເລືອກເອົາເອື້ອຍນ້ອງຈຳນວນໜຶ່ງໃນກອງຮ້ອຍ 769 ແລະ 368 ລວມເປັນ 85 ຄົນ ໄປຮຽນວິຊາປືນໃຫຍ່ຢູ່ປະເທດຫວຽດນາມ, ສ່ວນທີ່ເຫຼືອແມ່ນໄປເຮັດໜ້າທີ່ ລຳລຽງອາວຸດສະບຽງອາຫານຢູ່ແນວຫຼັງຄືເກົ່າ.

ຄະນະທີ່ນຳພາເອື້ອຍນ້ອງ ໄປຮຽນຢູ່ບ້ານທາຍເຊີນ ແຂວງເຫງະອານ ປະເທດຫວຽດນາມມີ:

ສະຫາຍ ນາງ ສີສຸກ ເປັນຫົວໜ້າການທະຫານ
ສະຫາຍ ນາງ ບົວຄອນ ເປັນຮອງການທະຫານ
ສະຫາຍ ນາງ ຄຳໝັ້ນ ເປັນຫົວໜ້າການເມືອງ
ສະຫາຍ ນາງ ບົວຄຳ ເປັນຮອງການເມືອງ

ການໄປຮຽນຄັ້ງນີ້ ມີຄວາມຫຍຸ້ງຍາກຫຼາຍ ເພາະບໍ່ມີບ່ອນພັກເຊົາ ສະເພາະ, ນັກຮຽນກໍ່ໄດ້ພັກຢູ່ເຮືອນຄູອາຈານ, ໄດ້ຮຽນຢູ່ຕາມຮົ່ມໄມ້, ແຕ່ການ ຮຽນກໍ່ໄປໄດ້ດີ ພາຍຫຼັງຈົບແລ້ວກໍ່ກັບຄືນມາປະຈຳຢູ່ຊຽງຂວາງຄືເກົ່າ. ສຳລັບ ກອງຮ້ອຍ 769 ພາຍຫຼັງຮຽນຈົບກໍ່ກັບມາ ແລ້ວເອື້ອຍນ້ອງຈຳນວນໜຶ່ງກໍ່ອອກ ໄປຢູ່ກອງຮ້ອຍ 368 ສ່ວນສະຫາຍນາງ ຄຳໝັ້ນ ຫົວໜ້າການເມືອງກອງຮ້ອຍ ຂັ້ນເທິງໄດ້ສົ່ງໄປຮຽນການເມືອງ 6 ເດືອນ ຢູ່ເມືອງວຽງໄຊແຂວງຫົວພັນ ເມື່ອ ຮຽນຈົບແລ້ວກໍ່ກັບມາກອງ 769 ໄດ້ພຽງ 2 ເດືອນແລ້ວກໍ່ສ້າງຄອບຄົວ ພ້ອມ ທັງຍ້າຍໄປເຮັດວຽກຢູ່ກົມກອງໃໝ່.

ໃນເດືອນ 6 /1970 ນີ້ ພາຍຫຼັງກອງຮ້ອຍ 368 ແລະກອງຮ້ອຍ 769 ສ້າງໄດ້ຜົນງານອັນໂດດເດັ່ນ, ມີບົດຮຽນໃນການນຳພາບົດຮຽນການລຳລຽງຂົນສົ່ງອາວຸດກະສຸນ ແລະ ສະບຽງອາຫານຮັບໃຊ້ແນວໜ້າຢ່າງຈູບຈ້າວທ້າວທັນ, ມີຊື່ສຽງໂດ່ງດັງ. ດັ່ງນັ້ນທາງສູນກາງຈຶ່ງໄດ້ມີຄຳສັ່ງໃຫ້ກອງບັນຊາການທະຫານເຂດຊຽງຂວາງສັບຊ້ອນເອົາເອື້ອຍນ້ອງ 6 ສະຫາຍ ຈາກກອງຮ້ອຍ 769 ແລະ ກອງ 368 ໄປກໍ່ສ້າງກອງຮ້ອຍລຳລຽງແບກຫາບໃໝ່ ຢູ່ເມືອງວຽງໄຊແຂວງ ຫົວພັນ, ແຕ່ທາງກອງບັນຊາການທະຫານເຂດຊຽງຂວາງ ຕົກລົງໃຫ້ສູນກາງ ພຽງ 4 ສະຫາຍຄື: ສະຫາຍ ນາງອັນດີ, ສະຫາຍ ນາງສຸດຕາ ກອງຮ້ອຍ 368, ສ່ວນກອງຮ້ອຍ 769 ແມ່ນສະຫາຍ ນາງບົວຄອນ ແລະນາງຄຳພາ.

ອີງໃສ່ສະພາບການ ແລະໜ້າທີ່ການເມືອງໃນສະເພາະໜ້າ, ດັ່ງນັ້ນຂັ້ນເທິງຈຶ່ງໄດ້ຕົກລົງສັບຊ້ອນເອົາພະນັກງານກອງຮ້ອຍ 368 ແລະກອງຮ້ອຍ 769 ຈຳນວນ 80 ຄົນ, ແລ້ວປະກາດ **ເປັນກອງກຳລັງໄຟເພດຍິງ 769** ຂຶ້ນໃນວັນທີ 15/7/1970 ຢູ່ຖ້ຳນ້ຳຕຽນ ເມືອງຄຳ ແຂວງຊຽງຂວາງ, ຂັ້ນເທິງໄດ້ແຕ່ງຕັ້ງ:

ສະຫາຍ ນາງ ສີສຸກ ເປັນຫົວ ໜ້າການທະຫານ
ສະຫາຍ ນາງ ທຸມມີ ເປັນຫົວໜ້າການເມືອງ
ສະຫາຍ ນາງ ບົວຄຳ ຮອງຫົວໜ້າການເມືອງ
ແລະຈັດຕັ້ງເປັນ 3 ໝວດຂຶ້ນກັບຄື:
ໝວດທີ 1 ສະຫາຍ ນາງ ບົວພອນ ເປັນຫົວໜ້າໝວດ.
ສະຫາຍ ນາງ ບົວພາ ເປັນຮອງໝວດ.
ໝວດທີ 2 ສະຫາຍ ນາງ ບົວທອງ ເປັນຫົວໜ້າໝວດປືນ
ສະຫາຍ ນາງ ດວງແກ້ວ ເປັນຮອງ.
ໝວດທີ 3 ສະຫາຍ ນາງ ສີພາ ເປັນ ຫົວໜ້າໝວດ.
ສະຫາຍ ນາງ ອັນດີ ເປັນຮອງ

ແຕ່ລະໝວດແບ່ງເປັນ 4 ໝູ່, ປະກອບປືນຄົກ 82,5 ມມ. 4 ກະບອກ., ປືນຄົກ 60 ມມ. 2 ກະບອກ. ຫຼັງຈາກນັ້ນ, ກອງບັນຊາການເຂດໄດ້ມີຄຳສັ່ງໃຫ້

ຍົກຍ້າຍຈາກຖ້ຳນ້ຳຕຽນ ມາປະຈຳຢູ່ຖ້ຳຜາຫວາຍ ເມືອງໜອງແຮດ ເຮັດໜ້າທີ່ ລ່ຳລຽງຄືເກົ່າ; ຫຼັງຈາກເດືອນໄຫວປະຕິບັດໜ້າທີ່ໄດ້ໄລຍະໜຶ່ງ ຂັ້ນເທິງໄດ້ມີ ຄຳສັ່ງໃຫ້ກອງຮ້ອຍ 769 ກຳລັງໄຟເພດຍິງ ໄປຮຽນວິຊາການທະຫານປືນໃຫຍ່ ໜ້າດິນຕື່ມອີກຢູ່ກອນກວາງ ປະເທດຫວຽດນາມ ເປັນເວລາ 4 ເດືອນ, ພາຍຫຼັງ ກັບຄືນມາ ໄດ້ຍ້າຍໄປຢູ່ບ້ານນ້ຳຮົ່ມ ເມືອງຄຳ ແຂວງຊຽງຂວາງ.

ຕົ້ນປີ 1971 ກອງບັນຊາການທະຫານເຂດຊຽງຂວາງ ໄດ້ມີຄຳສັ່ງໃຫ້ ກອງກຳລັງໄຟເພດຍິງ 769 ເຄື່ອນກຳລັງຈາກບ້ານນ້ຳຮົ່ມເຂົ້າເມືອງສູຍ ເພື່ອ ປະສານສົມທົບກັບກອງພັນປືນໃຫຍ່ 605 ແລະກອງພັນ 13 ເຂົ້າຕີພູຈຸດສູງ 116 ຢູ່ບໍລິເວນໜອງຕັ່ງ. ຫຼັງຈາກທີ່ປົດປ່ອຍໄດ້ຈຸດສູງ116 ແລ້ວກອງກຳລັງໄຟ ເພດຍິງ 769 ໄດ້ກັບຄືນທີ່ຕັ້ງເກົ່າຢູ່ບ້ານນ້ຳຮົ່ມ, ຫຼັງຈາກນັ້ນຂັ້ນເທິງມີຄຳສັ່ງ ໃຫ້ກອງຮ້ອຍກຳລັງໄຟເພດຍິງ 769 ເຮັດໜ້າທີ່ລ່ຳລຽງອາວຸດກະສຸນ ແລະ ສະບຽງອາຫານໄປໃຫ້ກອງພັນ 701 ແລະກອງຮ້ອຍສື່ສານຢູ່ສັນຈໍ່ບວມດາວ.

ຢູ່ທິດເມືອງສູຍ ເດືອນ 2 ປີ 1971 ກອງບັນຊາການທະຫານເຂດໄດ້ ມອບໝາຍໜ້າທີ່ໃຫ້ກອງຮ້ອຍກຳລັງໄຟເພດຍິງກອງ 769 ເຄື່ອນກຳລັງໄປສົມ ທົບກັບກອງພັນ 701, ກອງພັນ 46 ກຳລັງເປັນກາງຮັກຊາດ ແລະກອງພັນ 213 ທະຫານອາສາສະໝັກຫວຽດນາມ ປະຈຳຢູ່ເຂດຊຽງຂວາງ ເພື່ອເປີດບັ້ນບຸກ ໂຈມຕີສັດຕູຢູ່ເຂດເມືອງສູຍ. ບັ້ນຮົບຄັ້ງນີ້ ໂດຍການປະສານສົມທົບຫຼາຍພາກ ສ່ວນ, ຫຼາຍກຳລັງສາມາດຕີເອົາຊະນະສັດຕູປົດປ່ອຍເອົາເມືອງສູຍຄືນມາໄດ້, ພ້ອມນັ້ນ ກໍ່ຍັງສືບຕໍ່ໄລ່ຕີສັດຕູໄປເຖິງພູສູງ (ທິດຕາເວັນອອກສາລາພູຄູນ), ບັ້ນ ຮົບນີ້ ສາມາດຍາດໄດ້ໄຊຊະນະໃຫຍ່ຫຼວງ, ເຮັດໃຫ້ສັດຕູນັບມື້ຕົກຢູ່ໃນທ່າຮັບ.

ຮອດວັນທີ 2/2/1971 ຂັ້ນເທິງໄດ້ມອບໝາຍໜ້າທີ່ໃຫ້ກອງກຳລັງໄຟ ເພດຍິງ 769 ເຄື່ອນກຳລັງມາສົມທົບກັບກອງພັນ 605 (ກອງພັນປືນໃຫຍ່ໜ້າ ດິນຂອງແນວລາວຮັກຊາດ), ກອງພັນ 15 ກຳລັງເປັນກາງຮັກຊາດຢູ່ເມືອງສູຍ ເພື່ອຕີນາ່ນ ແລະກຳລັງພິເສດວ່າງປາວ ເພື່ອປົດປ່ອຍເອົາປະຊາຊົນ ຂັບໄລ່ ກຳລັງກອງປຸ້ນວ່າງປາວອອກຈາກເຂດດັ່ງກ່າວໄດ້ສຳເລັດ.

ພາຍຫຼັງບັ້ນຮົບສິ້ນສຸດລົງ 3/1971 ຂັ້ນເທິງມີຄຳສັ່ງໃຫ້ກອງຮ້ອຍກຳລັງໄຟເພດຍິງ 769, ຖອນກຳລັງມາຕັ້ງຄ້າຍຢູ່ພູເລັງ ນາມີ ເພື່ອປັບປຸງກຳລັງ, ແລະເຮັດໜ້າທີ່ລຳລຽງອາວຸດ ກະສູນ. ຄະນະກອງຮ້ອຍໄດ້ແບ່ງເອື້ອຍນ້ອງອອກເປັນ 2 ພາກສ່ວນ. ຜູ້ໃດສຸຂະພາບບໍ່ແຂງແຮງແບກຫາບບໍ່ໄດ້ ແມ່ນໃຫ້ຢູ່ແນວຫຼັງໂດຍແມ່ນສະຫາຍນາງ ທຸມມີ ຫົວໜ້າການເມືອງກອງຮ້ອຍຮັບຜິດຊອບຮັກສາສຳນັກພ້ອມເອື້ອຍນ້ອງຈຳນວນໜຶ່ງ, ສ່ວນສະຫາຍນາງ ສີສຸກ, ສະຫາຍນາງບົວຄຳ ໄດ້ບັນຊາເອື້ອຍນ້ອງແຕ່ລະໝວດ ເຄື່ອນກຳລັງໄປເຮັດໜ້າທີ່ລຳລຽງອາວຸດ ກະສຸນ ແລະສະບຽງອາຫານໄປຮັບໃຊ້ດ້ານຮົບເຊັ່ນ: ລຳລຽງໄປທາງຕາແສງຝາດ ບ້ານໂຕນ, ບ້ານໝີ ທິດທ່ຽງໄຫຫີນ, ນອກນັ້ນຍັງໄດ້ລຳລຽງໄປທາງທິດບ້ານໝັ້ນ ບ້ານຊົ່ມ ແລະໄປທາງທິດເມືອງເຄິ່ງ.

ເດືອນ 8/1971 ຝ່າຍຂວາອຽງຈັນໄດ້ລະດົມກຳລັງທະຫານເລວຮັບຈ້າງໄທ ໂດຍໄດ້ຮັບການຊ່ວຍໜູນຈາກທັບອາກາດອາເມຣິກາ ບຸກຕີເຂົ້າເຂດປົດປ່ອຍແຂວງຊຽງຂວາງຢ່າງຮ້າຍແຮງທັງເວັນ ແລະຄືນ. ເມື່ອສະພາບການຜັນແປໄປຢ່າງສັບສົນ ຂັ້ນເທິງໄດ້ມີຄຳສັ່ງໃຫ້ກອງຮ້ອຍ 769 ເຄື່ອນກຳລັງມາປະສານສົມທົບກັບກອງພັນ 605, ກອງພັນທີ 1, ກອງພັນ 13 ເຂົ້າໄປຕີພູວຽງໃຫຍ່ ແລະພູສູງທາງທິດສາລາພູຄູນໄດ້ຮັບໄຊຊະນະ, ແລ້ວກົມກອງໄດ້ເຄື່ອນກຳລັງມາຕັ້ງທັບຢູ່ກ້ອລັນ ເຮັດໜ້າທີ່ລຳລຽງອາວຸດກະສູນໄປພູຜາໄດໃຫ້ກອງພັນປັດໄຈ, ກອງພັນທີ 2. ຈຸດທີ 2 ລຳລຽງໄປທິດນ້ຳທີ, ຫ້ວຍເລີກ, ທິດນ້ຳເງິນ, ທິດສາລາພູຄູນ.

ໃນການລຳລຽງໄປແຕ່ລະທິດເອື້ອຍນ້ອງ 769 ແມ່ນພົບຄວາມຫຍຸ້ງຍາກເພາະໄດ້ເດີນທາງລັດປ່າລັດດົງ, ຜ່ານຮ່ອມຫ້ວຍພູເຂົາສຸດແສນກັນດານ, ມີບາງຄັ້ງກໍ່ຖືກສັດຕູໃຊ້ເຮືອບິນມາຖິ້ມລະເບີດໃສ່ເພື່ອກີດກັ້ນການລຳລຽງ. ເອື້ອຍນ້ອງເດີນທາງໄກ ຜູ້ໃດສຸຂະພາບບໍ່ແຂງແຮງກໍ່ເຈັບໄຂ້ ຍ້ອນບໍ່ໄດ້ພັກຜ່ອນ, ມີບາງຄັ້ງເມື່ອລຳລຽງໄປກໍ່ປະທະກັບກອງທະຫານຂອງສັດຕູ, ແຕ່ເອື້ອຍນ້ອງທຸກຄົນກໍ່ໄດ້ພ້ອມກັນຕັດສິນໃຈຜ່ານຜ່າດ້ວຍຄວາມອົງອາດກ້າຫານ, ເດັດດ່ຽວໜຽວແໜ້ນ ບໍ່ຍອມຈຳນົນ ເພື່ອເຮັດສຳເລັດໜ້າທີ່ການມອບໝາຍ.

ອັນທີ 27/8/1971 ຢູ່ສະໜາມຮົບທົ່ງໄຫຫີນ-ຊຽງຂວາງ ສັດຕູໄດ້ນຳເອົາກຳລັງພິເສດວ່າງປາວ 21 ກອງພັນ ແລະທະຫານເລວຮັບຈ້າງໄທອີກ 10 ກອງພັນບຸກໂຈມຕີບ້ງດຍຶດເຂົ້າເຂດຕາເວັນຕົກສ່ຽງໃຕ້ທົ່ງໄຫຫີນ, ບ້ານໂຕນ, ພູເຕີ່ງ, ພູເກ້ົ່ງ ແລະເດີ່ນບິນທົ່ງໄຫຫີນ. ໃນເວລາດຽວກັນນັ້ນທະຫານຫຸ່ນວຽງຈັນ 2 ກອງພັນ ທີ່ຂຶ້ນກັບທະຫານພາກ 1 ກ່ຳມາບຸກຕີແຕ່ສາມແຍກສາລາພູຄູນ ຕີຍຶດເຂົ້າເມືອງສູຍ.

ຕໍ່ກັບເຫດການດັ່ງກ່າວ ບັນດາກຳລັງຝ່າຍແນວລາວຮັກຊາດຢູ່ ໃນແຕ່ລະຈຸດໄດ້ຕີຕ້ານສັດຕູຢ່າງແຂງແຮ່ງໃນທຸກສະໜາມຮົບ ສາມາດປັດເຂ່ຍສັດຕູອອກຈາກວົງສູ້ຮົບໄດ້ 718 ຄົນ, ຍິງຍົນຊະນິດຕ່າງໆຕົກ 9 ລຳ, ຮັກສາຕົວເມືອງຊຽງຂວາງ, ຄັງໄຂ ແລະໂພນສະຫວັນ ໄວ້ຢ່າງໝັ້ນຄົງ, ຝ່າຍສັດຕູຈຳຕ້ອງຢຸຕິການບຸກຕີ ແຕ່ພວກເຂົາກ່ຳພະຍາຍາມຈັດຕັ້ງການປ້ອງກັນທີ່ຕັ້ງທົ່ງໄຫຫີນໄວ້ເພື່ອໃຫ້ໄດ້ຕາມຈຸດປະສົງຂອງຈັກກະພັດອາເມຣິກາ.

ພາຍໃຕ້ການຊີ້ນຳຈາກສູນກາງ ກອງບັນຊາການສູງສຸດກອງທັບປົດປ່ອຍປະຊາຊົນລາວ ໄດ້ມີຄຳສັ່ງໃຫ້ບັນດາກົມກອງ ທີ່ປະຈຳຢູ່ເຂດດັ່ງກ່າວ ກະກຽມກຳລັງ ອັດຖຸສະບຽງອາຫານແລ້ວ ເປີດປັ້ນຕ່າວໂຈມຕີໂດຍໃສ່ຊື່ວ່າ **"ປັ້ນຮົບຟ້າຜ່າ"** ແນໃສ່ດັບສູນພາກສ່ວນໜຶ່ງທີ່ສຳຄັນຂອງພວກເຂົາ ເປັນຕົ້ນ ແມ່ນກຳລັງທະຫານເລວຮັບຈ້າງໄທ ແລະຕ້ອງຍຶດເອົາທີ່ຕັ້ງທົ່ງໄຫຫີນ, ເມືອງສູຍໃຫ້ໄດ້, ປົດປ່ອຍຊຳທອງ ລ້ອງແຈ້ງ ແລະສາລາພູຄູນ.

ກຳລັງທີ່ເຂົ້າຮ່ວມປັ້ນຮົບຄັ້ງນີ້ ຝ່າຍກອງທັບປົດປ່ອຍປະຊາຊົນລາວມີ: ກອງພັນທີ 1, ກອງພັນ2, ກອງພັນທີ 13, ກອງພັນ 701, ກອງປັດໄຈ, ກອງພັນປືນໃຫຍ່ໜ້າດິນ, ກອງຮ້ອຍກຳລັງໄຟເພດຍິງ 769, ກອງຮ້ອຍລົດຕັ້ງ, ກອງຊ່າງແສງ, ກຳລັງເປັນກາງຮັກຊາດມີ ກອງພັນ 15, ກອງພັນ 48 ແລະກອງພັນ 116, ທະຫານອາສາສະໝັກຫວຽດນາມ ແລະທະຫານທ້ອງຖິ່ນ ເມືອງແປກ, ທະຫານລາດກອງຫຼອນເຂົ້າຮ່ວມ.

ບັ້ນຮົບໄດ້ເລີ່ມຕົ້ນແຕ່ 18/12/1971 ໄປສິ້ນສຸດ ວັນທີ 5/4/1972, ຕະຫຼອດ 110 ກວ່າວັນທີ່ກອງ ກຳລັງໄຟເພດຍິງ 769 ໄດ້ຕໍ່ສູ້ຍຽງບ່າຍຽງໄຫຼ່ກັບ ກົມກອງອື່ນໆ ທີ່ກຳລັງສູ້ຮົບປະຈັນບານນັ້ນ. ກອງ 769 ທັງລ້ຳລຽງອາວຸດ ກະສຸນ ແລະ ລ້ຳລຽງສະບຽງອາຫານຮັບໃຊ້ກົມກອງທະຫານທີ່ສູ້ຮົບຢ່າງພິລະ ອາດຫານ, ທັງສູ້ຮົບຫຍຸ້ງຍາກລ້ຳບາກ ແລະດຸເດືອດ, ແຕ່ກອງທະຫານເພດຍິງ ພວກເຮົາໄດ້ຮ່ວມສູ້ຮົບຢ່າງເດັດດ່ຽວ, ອາດຫານບໍ່ຍອມຈຳນົນສັດຕູ ເຖິງຈະ ອິດເມື່ອຍ, ບາດເຈັບ ແຕ່ເອື້ອຍນ້ອງກອງກຳລັງໄຟເພດຍິງ 769 ກໍ່ຍອມເສຍ ສະຫຼະເລືອດເນື້ອເພື່ອປະເທດຊາດ, ເພື່ອປະຊາຊົນ, ຊ່ວຍໃຫ້ອ້າຍນ້ອງກອງ ທະຫານເຮົາໃຫ້ໄດ້ຮັບອາວຸດ, ກະສຸນ, ສະບຽງອາຫານ, ສູ້ຮົບສັດຕູຢ່າງມີໄຊ ສາມາດປັດເຂ່ຍ ພວກເຂົາອອກຈາກວົງສູ້ຮົບເຖິງ 6.000 ຄົນ, ໃນນັ້ນມີທະຫານ ເລວຮັບຈ້າງໄທ 3.532 ຄົນ, ປົດປ່ອຍດິນແດນໄດ້ຢ່າງກວ້າງຂວາງ, ເຮັດໃຫ້ ທິດສະດີຂອງອາເມຣິກາທີ່ວ່າ *" ເອົາທະຫານໄທເປັນເສົາຄ້ຳ ສົມທົບກັບ ທະຫານພິເສດວ່າງປາວ "* ຖືກປະລາໄຊຢ່າງໜັກ ບໍ່ໄດ້ຮັບຜົນສົມປາດຖະໜາ ແຕ່ປະການໃດ.

ເດືອນ 1/1972 ທາງກອງບັນຊາການທະຫານເຂດຊຽງຂວາງ ໄດ້ສັ່ງໃຫ້ ກອງຮ້ອຍກຳລັງໄຟເພດຍິງ 769 ກັບຄືນມາເພື່ອເຮັດໜ້າທີ່ລ້ຳລຽງຂົນສົ່ງໃຫ້ ແກ່ກອງພັນທະຫານຣາບ ທີ່ເຮັດໜ້າທີ່ສູ້ຮົບຢູ່ທິດພູເຕີ່ງ, ນ້ຳຮາງ, ນ້ຳຄານເພື່ອ ປົດປ່ອຍເຂດນີ້ຕາມຄຳສັ່ງຂອງກອງບັນຊາການທະຫານເຂດຊຽງຂວາງ.

ເດືອນ 5/1972 ທາງກອງບັນຊາການໄດ້ສັ່ງໃຫ້ກອງຮ້ອຍ 769 ເຮັດ ໜ້າທີ່ຂົນຂວາຍປະຊາຊົນຢູ່ບ້ານນາງອຍ, ບ້ານນາມາດ ເມືອງຊຽງເງິນ ແຂວງ ຫຼວງພະບາງ, ການເຮັດໜ້າທີ່ນີ້ກໍ່ແມ່ນໜ້າທີ່ໜຶ່ງທີ່ກອງຮ້ອຍ 769 ພົບຄວາມ ຫຍຸ້ງຍາກ ເພາະເອື້ອຍນ້ອງຢູ່ໃນກອງບໍ່ເຄີຍເຮັດວຽກນີ້ມາກ່ອນ, ແຕ່ກໍ່ຕັດສິນ ໃຈເຮັດສຳເລັດໜ້າທີ່ຕາມການມອບໝາຍຂອງຂັ້ນເທິງໄດ້ເປັນຢ່າງດີ.

ໃນເດືອນ 7/1972 ກອງບັນຊາການທະຫານເຂດຊຽງຂວາງ ໄດ້ສັ່ງໃຫ້ ກອງຮ້ອຍ 769 ກັບຄືນແຕ່ເມືອງຊຽງເງິນ ແຂວງຫຼວງພະບາງ ມາຕັ້ງທັບຢູ່ຖ້ຳ

ນ້ຳຮາງ ເພື່ອເຮັດໜ້າທີ່ລຳລຽງສະບຽງອາຫານ ຮັບໃຊ້ກອງປະຊຸມໃຫຍ່. ກອງປະຊຸມສະຫຼຸບຜົນງານຂອງສູນກາງພັກໄດ້ມອບ**ນາມມະຍົດກອງຮ້ອຍວິລະຊົນໃຫ້ແກ່ກອງ 769 ແລະບຸກຄົນຈຳນວນໜຶ່ງກໍ່ໄດ້ຮັບນາມມະຍົດນັກຮົບແຂ່ງຂັນ,** ອັນນັ້ນ ຍິ່ງເຮັດໃຫ້ບົດບາດຂອງແມ່ຍິງລາວໄດ້ຖືກເຊີດຊູສູງຂຶ້ນເວົ້າລວມ, ເວົ້າສະເພາະແມ່ນເອື້ອຍນ້ອງກອງກຳລັງໄຟເພດຍິງ 769. ນີ້ເປັນພຽງແຕ່ຜົນງານເບື້ອງຕົ້ນເທົ່ານັ້ນ ແຕ່ມັນກໍ່ເປັນກຳລັງໃຈ ເພື່ອກ້າວຂຶ້ນສືບຕໍ່ຕີສັດຕູປົດປ່ອຍທັງໝົດດິນແດນຂອງພູພຽງເມືອງພວນ ແລະປົດປ່ອຍທົ່ວປະເທດ.

ໃນເດືອນ 8/1972 ຝ່າຍຂວາວຽງຈັນ ໄດ້ສືບຕໍ່ບຸກຕີເຂົ້າທົ່ງໄຫຫີນ-ຊຽງຂວາງອີກຄັ້ງໃໝ່, ພວກເຂົາລະດົມກຳລັງເຖິງ 49 ກອງພັນ ເພື່ອບຸກຕີຢ່າງຮ້າຍແຮງເຂົ້າພູພຽງ-ຊຽງຂວາງດ້ວຍຫຼາຍທິດ, ໂດຍສະເພາະ ແມ່ນທິດສາລາພູຄູນ ຕາມສາຍທາງເລກທີ 13 ແລະທາງເລກ 7, ສະນັ້ນ ເພື່ອເປັນການຕ່າວໂຈມຕີສັດຕູເພື່ອຮັກສາເຂດປົດປ່ອຍທົ່ງໄຫຫີນ-ຊຽງຂວາງ. ໃນເດືອນ 8/1972 ກອງບັນຊາການດ້ານຮົບເຂດຊຽງຂວາງໄດ້ສັ່ງກອງຮ້ອຍກຳລັງໄຟເພດຍິງ 769 ສືບຕໍ່ເຮັດໜ້າທີ່ສົມທົບກັບກອງພັນ 605 ກອງພັນປືນໃຫຍ່ເພື່ອຍິງຊ່ວຍໜູນແກ່ທະຫານຮາບກອງພັນ 15, ກອງພັນ 48 ກຳລັງເປັນການຮັກຊາດ ແລະທະຫານທ້ອງຖິ່ນເມືອງແປກບຸກໂຈມຕີສັດຕູຢູ່ພູວຽງນ້ອຍ ເພື່ອສະກັດກັ້ນສັດຕູທີ່ບຸກຂຶ້ນມາຕາມສາຍທາງເລກ 7. ເຮັດສຳເລັດໜ້າທີ່ແລ້ວ, ກອງຮ້ອຍ 769 ໄດ້ຄືນເມືອຕັ້ງທັບຢູ່ບ້ານຢາຍ (ເມືອງພູກູດໃນປັດຈຸບັນ) ສົມທົບກັບກອງພັນ 605 ຍິງຊ່ວຍໜູນແກ່ທະຫານຮາບກອງພັນທີ 2, ກອງພັນປັດໄຈ ແລະ ກອງພັນ 48 ບຸກຕີສັດຕູຢູ່ພູຜາແຕກ. ພາຍຫຼັງປົດປ່ອຍສຳເລັດກອງຮ້ອຍ 769 ໄດ້ຕັ້ງທັບຮ່ວມກັບກອງພັນ 605 ຢູ່ບ້ານຢາຍ.

ເດືອນ 10/1972 ກອງຮ້ອຍ 769 ໄດ້ເຄື່ອນທັບຮ່ວມກັບກອງພັນ 13, ກອງພັນ 701 ອອກໄປທາງທິດຫ້ອຍເລິກ, ຖ້ຳເງິນ ເພື່ອຍິງຊ່ວຍໜູນທະຫານຮາບປົດປ່ອຍສາລາພູຄູນ, ໃນບັ້ນຕີເທື່ອນີ້ ທາງກອງບັນຊາການດ້ານຮົບເຂດຊຽງຂວາງ ໄດ້ຈັດວາງກຳລັງຢ່າງລະອຽດ ເພື່ອຮັບປະກັນໃຫ້ໄດ້ຮັບໄຊຊະນະ, ສະນັ້ນ ມີການຈັດວາງກຳລັງອອກແຕ່ລະປົກຄື: ກອງພັນ 13 ຮ່ວມກັບກອງ

ກ້ຳລັ້ງໄຟເພດຍິງ 769 ຕີເຂົ້າທາງເບື້ອງຫຼັງສາລາພູຄູນ, ກອງພັນທີ 2 ແລະ ກອງພັນ 701 ຕີເຂົ້າສາມແຍກບ້ັງກາໂລ ແລະໄລ່ຕີສັດຕູຕາມສາຍທາງ ເລກທີ 13 ເຖິງເມືອງກາສີ.

ການເປີດບັ້ນບຸກໂຈມຕີສັດຕູຢູ່ສາລາພູຄູນຄັ້ງນີ້ ແກ່ຍາວເຖິງ 2 ວັນ 2 ຄືນ ກໍ່ຍັງບໍ່ສາມາດປົດປ່ອຍໄດ້. ມາເຖິງເວລາທ່ຽງຂອງມື້ທີ 3 ຂອງການສູ້ຮົບ ພໍສັດຕູໄດ້ຮູ້ຂ່າວວ່າມີກອງກ້ຳລັ້ງໄຟເພດຍິງ 769 ເຂົ້າຮ່ວມໃນການສູ້ຮົບນີ້ ເຮັດໃຫ້ພວກເຂົາເກີດຄວາມສະທ້ານຢ້ານກົວທີ່ສຸດ ເພາະພວກເຂົາເຊື່ອວ່າ ເມື່ອແມ່ຍິງປືນປາຍປືນໄປໃສ່ຜູ້ໃດ ເຖິງແມ່ນວ່າຜູ້ນັ້ນ ຈະມີຂອງດີປ້ອງກັນຕົວ ປານໃດກໍ່ຕາມ ກໍ່ຈະບໍ່ສາມາດປ້ອງກັນລູກກະສຸນໄດ້. ສະນັ້ນທະຫານສັດຕູ ຈຳນວນໜຶ່ງຈຶ່ງຖອນອອກຈາກສາລາພູຄູນລົງມາກາສີ ແລະຈຳນວນໜຶ່ງກໍ່ຖອຍ ເມືອຕາມເສັ້ນທາງເລກທີ 13 ເໜືອ ທາງທິດຜາເກ້ງ, ກອງຮ້ອຍ 769 ແລະ ກອງພັນ13 ໄລ່ຕີສັດຕູຈົນເຖິງຜາເກ້ງ.

ພາຍຫຼັງການສູ້ຮົບໄດ້ສິ້ນສຸດລົງ ກອງບັນຊາການດ້ານຮົບໄດ້ສັ່ງໃຫ້ ກອງຮ້ອຍກ້ຳລັ້ງໄຟ 769 ກັບຄືນມາຕັ້ງທັບຊົ່ວຄາວຢູ່ພູຈອມຖໍ່ວ. ໃນເວລານີ້ ກອງຮ້ອຍໄດ້ແບ່ງກ້ຳລັ້ງອອກເປັນສອງພາກສ່ວນຄື: ໝວດທີ 1 ບັນຊາໂດຍ ສະຫາຍນາງ ບົວພອນ ໄດ້ເອົາປືນຄົກ 12,8 ມມ. ຂຶ້ນຕັ້ງຢູ່ພູຈອມຖໍ່ວເຮັດເພື່ອ ເຮັດໜ້າທີ່ປ້ອງກັນດ້ານຮົບ. ພາກສ່ວນທີ 2 ບັນຊາໂດຍສະຫາຍນາງ ບົວຄຳ ພ້ອມກັບເອື້ອຍນ້ອງຂອງໝວດທີ 2 ເຮັດໜ້າທີ່ລ້ຳລຽງຂົນສົ່ງສະບຽງອາຫານ ໃຫ້ກອງທະຫານຮາບທີ່ກ້ຳລັ້ງເຮັດໜ້າທີ່ຢູ່ຂອບເຂດສາລາພູຄູນ.

ເດືອນ 12/1972 ເຖິງປີ 1973 ພວກຈັກະພັດອາເມຣິກາ ແລະ ລູກມື ໄດ້ໃຊ້ຍົນທັ້ງ F 105 ແລະ B.52 ຍິງທ້ຳລາຍຢ່າງຮ້າຍແຮງທີ່ສຸດຕາມສາຍທາງ ເລກ 7 ນັບແຕ່ສາລາພູຄູນຫາເມືອງໜອງແຮດ ແຂວງຊຽງຂວາງ ໂດຍສະເພາະ ແມ່ນຍິງໜັກຢູ່ເຂດຈອມຖໍ່ວ ເມືອງສູຍ ເຮັດໃຫ້ຕົ້ນໄມ້ໃຫຍ່ຫັກລົ້ງທັບປືນພ້ອມ ກັບນາງບົວທອງ ແລະນ້ອງຈຳນວນໜຶ່ງກໍ່ຖືກບາດເຈັບ. ເມື່ອເປັນເຊັ່ນນັ້ນ ກອງ ບັນຊາການດ້ານຮົບ ໄດ້ສັ່ງໃຫ້ກອງກ້ຳລັ້ງໄຟ 769 ເຄື່ອນກ້ຳລັ້ງອອກຈາກພູ

ຈອມຖ໋ວພ້ອມທັ້ງເອົາຄົນເຈັບກັບຄືນມາຕັ້ງທັບຢູ່ບ້ານວັງຄຳ ເມືອງສູຍ, ຮ່ວມກັບ ສຳນັກງານຂອງດ້ານຮົບ. ໃນເວລານີ້ກອງຮ້ອຍ 769 ໄດ້ຖືກມອບໝາຍໜ້າທີ່ ໃຫ້ລຳລ່ຽງຂົນສົ່ງອາວຸດກະສຸນ ແລະ ສະບ່ຽງອາຫານໃຫ້ກອງທະຫານຣາບທີ່ ກຳລັ້ງເຮັດໜ້າທີ່ສູ້ຮົບກັບສັດຕູຢູ່ເຂດພູຜາໄດ.

ມາຮອດ ວັນທີ 21/1/1973 ກອງບັນຊາການດ້ານຮົບໄດ້ສັ່ງກອງຮ້ອຍ 769 ສົມທົບກອງພັນ 605 ຍິງຊ່ວຍໜູນໃຫ້ກອງທະຫານຣາບກອງພັນ 15, ກອງພັນ 48 ບຸກໂຈມຕີທະຫານເລວຮັບຈ້າງໄທ ຢູ່ບ້ານສອດ ເມືອງສູຍ ເພື່ອ ປົດປ່ອຍເຂດໜອງຕັ່ງ ເມືອງສູຍສຳເລັດ, ຫຼັງຈາກນັ້ນກອງຮ້ອຍ 769 ໄດ້ ເຄື່ອນຍ້າຍໄປຕັ້ງທັບຢູ່ຖ້ຳນາລວງ ຖ້ຳພະ ຢູ່ຮ່ວມກັບກຳລັງເປັນກາງຮັກຊາດ ເຊິ່ງບັນຊາໂດຍທ່ານ ກອງສີ ແລະທ່ານແຈ້ງ ໄຊຍະວົງ. ໃນເວລາຕັ້ງທັບຢູ່ທີ່ນີ້ ກອງຮ້ອຍ 769 ໄດ້ເຮັດໜ້າທີ່ລຳລ່ຽງອາວຸດກະສຸນ ແລະສະບ່ຽງອາຫານໃຫ້ ແກ່ກອງພັນທະຫານທີ່ເຮັດໜ້າທີ່ສູ້ຮົບກັບສັດຕູຢູ່ຂອບເຂດຊຽງຈ-ນາຕໍ.

ວັນທີ 25/2/1973 ກອງບັນຊາການດ້ານຮົບໄດ້ມີຄຳສັ່ງໃຫ້ກອງຮ້ອຍ 769 ກັບຄືນມາຕັ້ງທັບຢູ່ພູເລັ້ງ, ກອງຮ້ອຍ 769 ໄດ້ປັບປຸງການຈັດຕັ້ງຄືນໃໝ່ ເນື່ອງຈາກສະຫາຍນາງ ສີສຸກ ແລະ ສະຫາຍນາງ ທຸມມີ ພ້ອມກັບເອື້ອຍນ້ອງ ຈຳນວນໜຶ່ງໄດ້ຍົກຍ້າຍໄປເຮັດໜ້າທີ່ຢູ່ບ່ອນໃໝ່. ສະນັ້ນຂັ້ນເທິງຈຶ່ງໄດ້ແຕ່ງຕັ້ງ ຄະນະບັນຊາຊຸດໃໝ່ຄື:

ສະຫາຍ ນາງ ບົວພອນ ເປັນຫົວໜ້າການທະຫານ.
ສະຫາຍ ນາງ ພາສີ ເປັນຮອງການທະຫານ.
ສະຫາຍ ນາງ ບົວຄຳ ພົມມະຈັນ ເປັນຫົວໜ້າການເມືອງ [75]
ສະຫາຍ ນາງ ບົວທອງ ເປັນຮອງການເມືອງ.

ໝວດທີ 1: ສະຫາຍ ນາງ ບົວພາ ເປັນຫົວໜ້າໝວດ.
ສະຫາຍ ນາງ ສີພາ ເປັນຮອງໝວດ.
ໝວດທີ 2: ສະຫາຍ ນາງ ວັນດີ ເປັນຫົວໜ້າໝວດ.
ສະຫາຍ ນາງ ບຸນທັນ ເປັນຮອງໝວດ.

ໝວດທີ 3: ສະຫາຍ ນາງ ດວງແກ້ວ ເປັນຫົວໜ້າໝວດ.
ສະຫາຍ ນາງ ທອງດີ ເປັນຮອງໝວດ.

ເຖິງເດືອນ 3/1973 ກອງບັນຊາການດ້ານຮົບ ໄດ້ສັ່ງໃຫ້ກອງຮ້ອຍ 769 ຂຶ້ນເມືອເມືອງວຽງໄຊແຂວງຫົວພັນ, ເມື່ອເຖິງເມືອງວຽງໄຊ ຂັ້ນເທິງໄດ້ປະກອບອາວຸດໃຫ້ກອງຮ້ອຍ 769 ຕື່ມ ຄື: ປືນຫັດ12 (H12), ຈຳນວນ 4 ກະບອກ, ເດກາເບ(DKB) 4 ກະບອກ ແລະເພື່ອເຮັດໃຫ້ການນຳໃຊ້ອາວຸດທີ່ປະກອບໃຫ້ໃໝ່ມີປະສິດທິພາບ ຂັ້ນເທິງໄດ້ສັ່ງໃຫ້ກອງຮ້ອຍ 769 ໄປຝຶກແອບຮ່ຳຮຽນເປັນເວລາ 3 ເດືອນຢູ່ເຂດລ່ອງມ້າ. ພາຍຫຼັງສຳເລັດການຮ່ຳຮຽນກອງຮ້ອຍ 769 ໄດ້ກັບຄືນເມືອເມືອງວຽງໄຊ ແລະຕັ້ງທັບຢູ່ບ້ານຊຽງຂີ້ ແລະ ສືບຕໍ່ເຝຶກແອບການທະຫານ ແລະຮ່ຳຮຽນການເມືອງ, ພ້ອມທັງໄດ້ຮັບໜ້າທີ່ເປັນກອງກຽດຕິຍົດ ເພື່ອກຽມຕ້ອນຮັບແຂກພາຍໃນ ແລະ ຕ່າງປະເທດທີ່ມາຢ້ຽມຢາມເມືອງວຽງໄຊ ພ້ອມທັງເຮັດໜ້າທີ່ກໍ່ສ້າງຮາກຖານການເມືອງຢູ່ຂອບເຂດກົມກອງຕັ້ງທັບ.

.....

*75. ຮ້ອຍເອກ ນາງບົວຄຳ ພົມມະຈັນ*

*ເກີດປີ 1944 ທີ່ບ້ານຫ້ວຍກ໋ (ນ້ຳເນີນ) ແຂວງຫົວພັນ, ບ້ານຢູ່ ບ້ານໂພນພະເນົາ ເມືອງໄຊເສດຖາ ແຂວງກຳແພງນະຄອນ, ເຂົ້າການປະຕິວັດປີ 1960 ເຂົ້າພັກປີ 1966, ເຂົ້າຊາວໜຸ່ມປີ 1965, ເຂົ້າແມ່ຍິງ 1967. ເຂົ້າການປະຕິວັດສັງກັດຢູ່ກອງຮ້ອຍ 22 ເຄື່ອນທີ່ແຂວງຫົວພັນ ລົງເຄື່ອນໄຫວເຂດເມືອງຄຳ ແຂວງຊຽງຂວາງ, ປີ 1965 ຢູ່ສະຫະພັນແມ່ຍິງແຂວງຊຽງຂວາງ ລົງຂົນຂວາຍເຂດເມືອງຄຳ, ເດືອນ 2 ປີ 1969 ຍົກຍ້າຍມາຢູ່ກອງລຳລຽງຂອງແຂວງຊຽງຂວາງ, ເດືອນ6/1969 ຍົກຍ້າຍມາຢູ່ກອງລຳລຽງຂອງເຂດຊຽງຂວາງ, ປີ 1978 ເປັນຫົວໜ້າການເມືອງໂຮງງານຕັດຫຍິບກອງທັບ, ປີ 1984 ເປັນຫົວໜ້າພະແນກນະໂຍບາຍກົມໃຫຍ່ການເມືອງກອງທັບ, ປີ 1986 ເປັນຮອງຫົວໜ້າຫ້ອງການກຳມະບານກອງທັບ, ປີ 1989 ອອກພັກຜ່ອນຮັບເບ້ຍບຳນານ, ປີ 2002 ຖືກແຕ່ງຕັ້ງໃຫ້ມາຊ່ວຍວຽກຢູ່ສະຫະພັນນັກຮົບເກົ່າແຫ່ງຊາດເຖິງປີ 2010. ຕະຫຼອດໄລຍະເຄື່ອນໄຫວສະຫາຍໄດ້ຮັບການຍ້ອງຍໍ: ນາມມະຍົດວິລະຊົນແຫ່ງຊາດ, ຫຼຽນໄຊອິດສະລະຊັ້ນ I ຈຳນວນ 1 ໜ່ວຍ, ຫຼຽນໄຊອິດສະລະຊັ້ນ II ຈຳນວນ 2 ໜ່ວຍ, ຫຼຽນໄຊອິດສະລະຊັ້ນ III ຈຳນວນ 3 ໜ່ວຍ, ຫຼຽນ ໄຊພິລາອາດຫານຊັ້ນ II ຈຳນວນ 2 ໜ່ວຍ, ຫຼຽນໄຊແຮງງານຊັ້ນ II ຈຳ ນວນ 2 ໜ່ວຍ, ຫຼຽນໄຊແຮງງານຊັ້ນ III ຈຳນວນ 2 ໜ່ວຍ,ຫຼຽນໄຊຊະນະເລີດຊັ້ນ II ຈຳ ນວນ 1 ໜ່ວຍ, ຫຼຽນກາຕ້ານອາເມຣິກາ 1 ໜ່ວຍ, ຫຼຽນກາ 50 ປີ 1 ໜ່ວຍ, ຫຼຽນກາ 60 ປີ 1 ໜ່ວຍ, ຫຼຽນກາລະນຶກ 50 ປີນັກຮົບເກົ່າ1 ໜ່ວຍ, ຫຼຽນກາລະນຶກປົດປ່ອຍຊຳເໜືອ 1 ໜ່ວຍ, ຫຼຽນການັກຮົບເກົ່າ 1 ໜ່ວຍ ແລະໃບຍ້ອງຍໍ 16 ໃບ.*

ເວລາ 9 ໂມງຂອງວັນທີ 14/5/1973 ກອງຮ້ອຍ 769 ມີຄວາມປິຕິຊົມຊື່ນເປັນຢ່າງຍິ່ງຫາສິ່ງປຽບບໍ່ໄດ້ ເຊິ່ງໄດ້ກຽດຕ້ອນຮັບທ່ານ ໄກສອນ ພົມວິຫານ ພ້ອມຄະນະນຳສູນກາງແນວລາວຮັກຊາດທີ່ແສນເຄົາລົບຮັກໄດ້ລົງມາຢ້ຽມຢາມ ຖາມຂ່າວຄວາມສຸກທຸກ.

ທ່ານ ໄກສອນ ພົມວິຫານ ໄດ້ກ່າວຍ້ອງຍໍຊົມເຊີຍນ້ຳໃຈອາດຫານ ຂອງ ແມ່ຍິງລາວເວົ້າລວມ, ເວົ້າສະເພາະກໍ່ແມ່ນບັນດາເອື້ອຍນ້ອງໃນກອງຮ້ອຍ 769 ທີ່ໄດ້ເສີມຂະຫຍາຍມູນເຊື້ອພິລະອາດຫານຂອງຊາດລາວ ແລະ ຂອງແມ່ຍິງ ລາວ, ຜ່ານການສູ້ຮົບຄຽງບ່າຄຽງໄຫຼ່ກັບເພດຊາຍ ແມ່ຍິງລາວກໍ່ມີຄວາມພິລະອາດຫານ, ມີຄວາມສາມາດ ແລະຄວາມເຂັ້ມແຂງບໍ່ຫຼຸດໂຕນກັບເພດຊາຍ, ໃນຂະບວນວິວັດຂອງການຕໍ່ສູ້ຕ້ານກັບຈັກກະພັດຜູ້ຮຸກຮານ ແມ່ຍິງລາວກໍ່ສາມາດຍິງຍົນຕົກ, ຂ້າສັດຕູ, ສົ່ງອາຫານໃຫ້ພະນັກງານ-ນັກຮົບທີ່ເຄື່ອນໄຫວເຮັດໜ້າທີ່. ເຮັດໃຫ້ແມ່ຍິງຫຼາຍສະຫາຍ ກາຍເປັນນັກຮົບແຂ່ງຂັນ, ເປັນວິລະຊົນ ແລະ ໄດ້ຮັບການຍ້ອງຍໍຈາກການຈັດຕັ້ງຂັ້ນເທິງ.

ບາງຕອນ ທ່ານໄກສອນໄດ້ກ່າວວ່າ *"...ຊົມເຊີຍນ້ຳໃຈພິລະອາດຫານ ຂອງເອື້ອຍນ້ອງແມ່ຍິງລາວພວກເຮົາ, ໂດຍສະເພາະພວກລູກຫຼານພະນັກງານ ນັກຮົບ ໃນກອງກຳລັງໄຟເພດຍິງ ຊຶ່ງໄດ້ຮັກສາ ແລະເສີມຂະຫຍາຍມູນເຊື້ອຕໍ່ສູ້ ພິລະອາດຫານ, ມູນເຊື້ອບໍ່ຍອມຈຳນົນ, ຈົ່ງຮັກສາມູນເຊື້ອອັນດີງາມນີ້ໃຫ້ຍືນຍົງ ຕະຫຼອດໄປ..."*

ນອກຈາກນີ້ ປີ 1974 ກອງຮ້ອຍ 769 ຍັງໃຫ້ກຽດຕ້ອນຮັບການມາຢ້ຽມຢາມ ຂອງທ່ານນາງ ຫງຽນທິດິງ ຮອງຜູ້ບັນຊາການທະຫານສູງສຸດກອງທັບປົດປ່ອຍພາກໃຕ້ຫວຽດນາມ, ໃນໂອກາດຢ້ຽມຢາມກອງ 769 ທ່ານກໍ່ໄດ້ສະແດງຄວາມຍ້ອງຍໍຊົມຊື່ນຜົນງານທີ່ຍິ່ງໃຫຍ່, ໃນການຕໍ່ສູ້ຕ້ານກັບຈັກກະພັດອາເມຣິກາຜູ້ຮຸກຮານ ແລະລູກມື, ແມ່ຍິງລາວເວົ້າລວມ, ເວົ້າສະເພາະແມ່ນເອື້ອຍນ້ອງ ແມ່ຍິງກອງຮ້ອຍ 769 ໄດ້ປະກອບສ່ວນສຳຄັນແກ່ໄຊຊະນະໃນພາລະກິດປະຕິວັດຂອງຊາດລາວ ກໍ່ຄືພາລະກິດຕໍ່ສູ້ຕ້ານອາເມຣິກາ ແລະລູກມືໃນລາວ.

ໃນເດືອນ 1/1975 ກອງບັນຊາການໄດ້ມີຄຳສັ່ງໃຫ້ກອງຮ້ອຍ 769 ຍົກຍ້າຍຈາກບ້ານຊຸງຊີ ເມືອງວຸງໄຊ ແຂວງຫົວພັນ ກັບຄືນມາແຂວງຊຸງຂວາງ ມາຕັ້ງທັບຢູ່ບ້ານຝາຍ ເມືອງຄຳ ແຂວງຊຸງຂວາງ ໄດ້ສ້າງເປັນນິຄົມກະເສດຂຶ້ນ ເຊິ່ງແມ່ນທ່ານ ນະຄອນ ສີສະນິນ ເປັນຜູ້ຊີ້ນຳ. ເອື້ອຍນ້ອງກອງຮ້ອຍ 769 ໄດ້ປະຈຳຢູ່ນິຄົມປະມານ 5 ເດືອນກ່ວາເພື່ອທຳການຜະລິດກະສິກຳ.

ວັນທີ 5/5/1975 ທາງຂັ້ນເທິງໄດ້ສັ່ງໃຫ້ກອງຮ້ອຍ 769 ເຄື່ອນກຳລັງ ເຂົ້າເມືອງວຸງຈັນເພື່ອກະກຽມແກ່ການຍຶດອຳນາດທົ່ວປະເທດ, ພາຍຫຼັງໄດ້ຮັບ ຄຳສັ່ງແລ້ວກໍ່ມີການສັບຊ້ອນກຳລັງ ມີເອື້ອຍນ້ອງຈຳນວນໜຶ່ງສຸຂະພາບບໍ່ແຂງ ແຮງ ບໍ່ສາມາເຮັດວຽກງານສູ້ຮົບໄດ້ ກໍ່ຕົກລົງໃຫ້ຢູ່ນິຄົມບ້ານຝາຍເມືອງຄຳ ເພື່ອສືບຕໍ່ທຳການຜະລິດຕໍ່ໄປ. ສ່ວນຜູ້ແຂງແຮງຫ້າວຫັນ ເມື່ອກະກຽມສຳເລັດ ແລ້ວ, ກົມກອງໄດ້ເຄື່ອນທັບຈາກບ້ານຝາຍ ເມືອງຄຳ ເຊິ່ງແມ່ນ ສະຫາຍນາງ ບົວຄຳ ພົມມະຈັນ ແລະສະຫາຍນາງ ພາສີ ເປັນຜູ້ນຳພາ-ບັນຊາ, ເອື້ອຍນ້ອງ ເຄື່ອນທັບມາຕັ້ງຢູ່ກາສີ. ໃນໄລຍະທີ່ພັກທັບຢູ່ກາສີເປັນເວລາ 1 ເດືອນ ເອື້ອຍ ນ້ອງໄດ້ຮ່ຳຮຽນການເມືອງ ແລະເຮັດໜ້າທີ່ກໍ່ສ້າງຮາກຖານການເມືອງ ຢູ່ຂອບ ເຂດຕັ້ງທັບ.

ທ້າຍເດືອນ 7/1975 ຂັ້ນເທິງໄດ້ມີຄຳສັ່ງໃຫ້ກອງຮ້ອຍ 769 ເຄື່ອນ ກຳລັງມາຕັ້ງທັບຢູ່ເຂດທີ່ໝັ້ນດ່ານສູງ, ນາຍາ ເມືອງນາຊາຍທອງ ກຳແພງ ນະຄອນວຽງຈັນ. ຢູ່ບ່ອນນີ້ມີຫຼາຍພາກສ່ວນເຂົ້າມາກະກຽມກຳລັງແລ້ວ, ມີທັງ ກອງພັນລົດຫຸ້ມເກາະ, ລົດອາແອັມ, ກຳລັ້ງປະສົມ, ກຳລັ້ງທະຫານຮາບ ແລະ ກຳລັ້ງອື່ນໆ ເພື່ອກຽມເຂົ້າຍຶດອຳນາດຢູ່ວຽງຈັນໃນວັນທີ 23 ສິງຫາ 1975, ສະເພາະກອງຮ້ອຍກຳລັ້ງໄຟ 769 ເວລາທີ່ລໍຖ້າກຽມເຂົ້າຍຶດອຳນາດນັ້ນ ເອື້ອຍນ້ອງໄດ້ຮ່ຳຮຽນການເມືອງຫັດແອບການທະຫານ ຈາກນັ້ນພາກສ່ວນໜຶ່ງ ແມ່ນລົງພື້ນຖານປະຊາຊົນ. ພາກສ່ວນໜຶ່ງກໍ່ຮຽນຍິງປືນໃຫຍ່ ແລະບົວລະບັດ ຜັດເຊັດອາວຸດເພາະກ່ອນຈະລົງມາແຕ່ຊຸງຂວາງຂັ້ນເທິງໄດ້ລະດົມເອື້ອຍນ້ອງ ຢູ່ຜົ້ງສາລີ ຈຳນວນ 45 ສະຫາຍ ມາປະກອບຕື່ມ.

ຮອດເວລາ 3 ໂມງແລງຂອງວັນທີ 20 ສິງຫາ 1975 ກອງຮ້ອຍກຳລັງໄຟເພດຍິງ 769 ໄດ້ເຄື່ອນກຳລັງຈາກດ່ານສູງ ມາເຕົ້າໂຮມກັນຢູ່ບ້ານຫ້ວຍຂ໋ວ ເມືອງ ນາຊາຍທອງ ກະກຽມ, ລ້າງລົດ, ຜັດປັ່ນໃຫ້ສະອາດແລ້ວເຄື່ອນກຳລັງມາລີ້ຢູ່ ວັດດົງປ່າຍາງຫ້ວຍເດີ່ນຍົນວັດໄຕເພື່ອບໍ່ໃຫ້ເສຍລັບເຊິ່ງຢູ່ບ່ອນນີ້ມີພາກສ່ວນອື່ນ ໄດ້ນຳກຳລັງເຂົ້າມາລໍຖ້າຢູ່ກ່ອນແລ້ວ. ຮອດເວລາ 6 ໂມງແລງ ກອງຮ້ອຍກຳລັງ ໄຟເພດຍິງ 769 ໄດ້ເຄື່ອນຂະບວນເຂົ້າມາຕາມເສັ້ນທາງຫຼວງພະບາງ ໂດຍມີ ການແກ່ລາກປືນໃຫຍ່ 12 ເລົາ(H 12) ອັນເປັນເໝືອນກາໝາຍຂອງກອງກຳລັງ ໄຟເພດຍິງເຂົ້າມາຢ່າງສະຫງ່າຜ່າເຜີຍ ແລະອົງອາດກ້າຫານ. ເມື່ອມາເຖິງບໍລິເວນ ຂ້າງສາມຫ້ວ. (ອະນຸສາວະລີເຈົ້າຟ້າງຸ່ມ) ກອງຮ້ອຍກຳລັງໄຟເພດຍິງ 769 ກໍ່ ໄດ້ຮັບການຕ້ອນຮັບຈາກປະຊາຊົນຊາວນະຄອນຫຼວງວຽງຈັນຢ່າງອົບອຸ່ນ ທີ່ ອອກມາຢືນເຕັມທັງສອງຟາກທາງພ້ອມທັງສົ່ງສຽງຮ້ອງໂຮ ແລະ ໂບກມືສະແດງ ຄວາມຕ້ອນຮັບຊົມເຊີຍ. ນີ້ເປັນຄັ້ງປະຫວັດສາດທີ່ກອງກຳລັງໄຟເພດຍິງ ໄດ້ ເຜີຍໂສມໜ້າຕໍ່ສາຍຕາຂອງປະຊາຊົນຊາວນະຄອນຫຼວງວຽງຈັນ ແລະ ຊາວ ໂລກ ເພາະທີ່ຜ່ານມາໄດ້ຍິນແຕ່ຊື່ສຽງ.

ຂະບວນໄດ້ເຄື່ອນມາຮອດນ້ຳພຸ ແລ້ວເຂົ້າຮ່ວມພິທີບາສີສູ່ຂວັນ ຊຶ່ງ ອຳນາດການປົກຄອງ ແລະປະຊາຊົນຊາວນະຄອນຫຼວງວຽງຈັນ ໄດ້ຈັດຂຶ້ນເພື່ອ ຕ້ອນຮັບຢູ່ທີ່ເຮືອນຂອງ ທ່ານເຈົ້າແຂວງແລະກຳແພງນະຄອນວຽງຈັນ ຢູ່ຄຸ້ມ ທາດດຳ, ພາຍຫຼັງສຳເລັດພິທີບາສີສູ່ຂວັນແລ້ວ ກອງຮ້ອຍ 769 ໄດ້ເຄື່ອນກຳລັງ ໄປພັກຢູ່ບ້ານນາໄຮ່ດຽວ(ຂ້າງສຳນັກງານນາຍົກໃນປັດຈຸບັນ) ໂດຍມີການຮັກສາ ກຳລັງຢ່າງເຂັ້ມງວດ.

ອີກດ້ານໜຶ່ງໃນຕົ້ນເດືອນ 8/1975 ພາຍຫຼັງກອງ 368 ໄດ້ຮ່ວມປັກ ຫຼັກໝາຍຊາຍແດນຢູ່ສາລາພູຄູນແລ້ວ, ຂັ້ນເທິງໄດ້ເອີ້ນກັບຄືນຄັງໄຂ ມາຕັ້ງ ສຳນັກງານຢູ່ບ້ານຕ້າຍ ແລ້ວສັບຊ້ອນເອົາເອື້ອຍນ້ອງກອງຮ້ອຍ 368 ຈຳນວນ 40 ສະຫາຍ ແລະເອື້ອຍນ້ອງແມ່ຍິງຂຶ້ນມາແຕ່ວຽງຈັນ (ທີ່ເປັນຊາວອົບພະຍົບ ລົງໄປຢູ່ວຽງຈັນ)ຈຳນວນໜຶ່ງແລ້ວ ຂັ້ນເທິງໄດ້ປະກາດສ້າງຕັ້ງ **"ກອງຮ້ອຍກຳລັງ ໄຟເພດຍິງ 875"** ຂຶ້ນໃນວັນທີ 8/7/1975 ມີຈຳນວນພົນ 115 ສະຫາຍ,

ປະກອບປືນ DKB 4 ກະບອກ, ຈັດຕັ້ງຄະນະກອງຮ້ອຍ ມີດັ່ງນີ້:

ສະຫາຍ ນາງ ສີພາ ຫົວໜ້າການທະຫານກອງຮ້ອຍ.

ສະຫາຍ ນາງ ວັນຄຳ ທິບພະວົງ ຫົວໜ້າການເມືອງກອງຮ້ອຍ.

ແບ່ງອອກເປັນ 4 ໝວດ:

ໝວດບັນຊາ ສະຫາຍ ນາງ ບົວພອນ ເປັນຫົວໜ້າ.

ໝວດສີ່ສານ ສະຫາຍ ນາງ ທອງຈັນ ເປັນຫົວໜ້າ.

ໝວດປືນ ສະຫາຍ ນາງ ທັນດາ ເປັນຫົວໜ້າ.

ໝວດສຳນັກ ສະຫາຍ ນາງ ອອດ ເປັນຫົວໜ້າ.

ທັງນີ້ກໍ່ເພື່ອກຽມລົງມາຍຶດອຳນາດ, ຜູ້ປະກາດແມ່ນສະຫາຍ ບຸນອຽນ, ສະຫາຍ ທົງໄຊ, ສະຫາຍ ຈັນສີ. ພາຍຫຼັງປະກາດສ້າງຕັ້ງ ແລະຈັດຕັ້ງສັບຊ້ອນໜ້າທີ່ບັນຊາກອງຮ້ອຍ ແລ້ວ ວັນທີ 21/8/1975 ກອງຮ້ອຍ 875 ໄດ້ເຄື່ອນກຳລັງລົງມາວຽງຈັນດ້ວຍຍົນ C.123 ຈຳນວນ 2 ລຳ ແລ້ວມາພັກທັບຢູ່ເຂດບ້ານປາກທ້າງເພື່ອລໍຖ້າຄຳສັ່ງ.

ຮອດເວລາປະມານ 4 ໂມງເຊົ້າ ວັນທີ 23 ສິງຫາ 1975 ກອງຮ້ອຍກຳລັງໄຟ 769 ໄດ້ລາກແກ່ປືນ H12 ມມ. ເຄື່ອນເຂົ້າເດີ່ນຫາດຫຼວງພ້ອມດ້ວຍກອງຮ້ອຍກຳລັງໄຟເພດຍິງກອງ 875 ປືນ DKB ມີທັງກອງພັນທະຫານຮາບທີ 1 ກຳລັງປະສົມ, ຂະບວນລົດຕັ້ງຍາມເກາະ ແລະກຳລັງອື່ນໆເຊິ່ງມີປະຊາຊົນເປັນໝື່ນໆຄົນ ເພື່ອສະແດງກຳລັງຍຶດອຳນາດການປົກຄອງຈາກພວກລັດຖະບານຫຸ່ນວຽງຈັນດ້ວຍໄຊຊະນະຢ່າງສົມບູນ.

ພາຍຫຼັງສຳເລັດການຍຶດອຳນາດ ຂັ້ນເທິງໄດ້ມີຄຳສັ່ງໃຫ້ກອງກຳລັງໄຟເພດຍິງ 769 ມາຕັ້ງຄ້າຍຢູ່ດົງປ່າແລບ ໂດຍເຮັດໜ້າທີ່ລົງພື້ນຖານ, ຈັດສະຖິຕິ, ລົງໂຄສະນາຊົນຂວາຍປະຊາຊົນ, ຂຶ້ນຫ້ອງຮ່ຳຮຽນການເມືອງຮ່ວມກັບກອງພັນທີ 1 ເປັນເວລາ 6 ເດືອນ. ກ້ອງຮ້ອຍກຳລັງໄຟເພດຍິງກອງ 875 ກໍ່ໄດ້ມາຕັ້ງຢູ່ດົງປາແລບຮ່ວມກັບກອງຮ້ອຍ 769 ໄດ້ໄປຝຶກແອບຍິງປືນ H12, DKB ຢູ່ທົ່ງຮາບ(ແຂວງວຽງຈັນປັດຈຸບັນ), ຫຼັງຈາກນັ້ນກອງຮ້ອຍ 875 ໄດ້ມາປະຕິບັດ

ໜ້າທີ່ປ້ອງກັນຕົວເມືອງ ວຽງຈັນ, ຈັດຕັ້ງສະໜາມປືນໃຫຍ່ລຽບຕາມແຄມຂອງ ເພື່ອປົກປັກຮັກສາສະພາບລຽບຕາມຊາຍແດນໃຫ້ມີຄວາມສະຫງົບ.

ຮອດປີ 1977 ເຖິງວ່າສັດຕູຈະປະລາໄຊຢ່າງໜັກໜ່ວງຢູ່ບັນດາປະເທດ ອິນດູຈີນ, ເວົ້າສະເພາະຢູ່ລາວ. ຈຳຕ້ອງຖອນກຳລັງອອກຈາກ 3 ປະເທດ ອິນດູຈີນ(ລາວ-ຫວຽດນາມ-ກຳປູເຈຍ)ໃຫ້ໝົດ ແຕ່ອາເມລິກາພັດຍັງຮັກສາ ກຳລັງ ແລະທີ່ໝັ້ນການທະຫານໄວ້ຢູ່ປະເທດໄທ ແລະຟີລິບປິນ, ພ້ອມກັນນັ້ນ ກໍ່ຜັນຂະຫຍາຍແຜນການຊ່ວຍໜູນເຊິ່ງແນໃສ່ສືບຕໍ່ທຳລາຍການປະຕິວັດຂອງ 3 ຊາດ, ອາເມຣິກາໄດ້ຈັດຕັ້ງແກ່ດຶງເອົາລູກແຫຼ້ງຕີນມື ທີ່ຍັງເຫຼືອຈຳນວນ ຫຼວງຫຼາຍໂຕນໜີໄປຕ່າງປະເທດ ພ້ອມຈັດຕັ້ງເປັນກຳລັງຝືນປະຕິວັດແລ້ວເຂົ້າ ມາສົມທົບກັບທະຫານແຕກທັບ ທີ່ຍັງຄົງຄ້າງຢູ່ຕາມບໍລິເວນຕ່າງໆ ເພື່ອເຄື່ອນ ທັບມ້າງເພທຳລາຍລະບອບໃໝ່ຂອງປະຊາຊົນ. ກຳລັງຂອງສັດຕູຊຶ່ງເອີ້ນວ່າ **"ປະຕິການ"** ໄດ້ເຄື່ອນໄຫວສະກັດລັດຕິ ເຂົ້າຕາມຊາຍແດນເຂົ້າຕາມເສັ້ນທາງ ຄົມມະນາຄົມ, ຫຼອນຕີ ແລະທຳລາຍສາງຕ່າງໆ, ນອກນັ້ນຍັງບຸກຍຶດເອົາບາງ ບ່ອນ ຢູ່ຕາມຂອບເຂດຕ່າງໆເຊັ່ນ: ວຽງພູຄາ, ນາແລ(ຫຼວງນ້ຳທາ), ກ໊ວກະຈຳ, ສາລາພູຄູນ, ພູເບ້ຍ, ຜາຂາວ, ເມືອງຫຼ້າ, ພູທ້າວມາ, ນ້ຳສັງ, ໜອງບົກ ແລະ ບ່ອນອື່ນໆ.

ສະເພາະຢູ່ວຽງຈັນປີ 1977 ປະຕິການພັດຖິ່ນ ໄດ້ເຂົ້າມາຍຶດຕັ້ງທັບຢູ່ ດອນຊີງຊູ້. (ດອນກາງແມ່ນ້ຳຂອງຕັ້ງຢູ່ດ້ານເໜືອເມືອງວຽງຈັນ ມີຄວາມຍາວ 800 ແມັດ ຢູ່ຫ່າງຈາກຝັ່ງໄທ 100 ແມັດ) ເພື່ອເປັນບ່ອນເຄື່ອນໄຫວສ້າງຄວາມ ບໍ່ສະຫງົບຕາມຊາຍແດນນະຄອນຫຼວງວຽງຈັນ,ຫຼັງຈາກຍຶດເອົາດອນຊີງຊູ້ແລ້ວ ສັດຕູຍັງເອົາກຳລັງມາຍຶດເອົາດອນສັງຄີ ຢູ່ເຂດເມືອງຫາດຊາຍຟອງອີກ (ໃຕ້ ເມືອງວຽງຈັນ).

ຕໍ່ສະພາບການດັ່ງກ່າວ ພັກ ແລະລັດຖະບານໄດ້ມີຄຳສັ່ງອອກວ່າ ຕ້ອງ ດັບສູນສັດຕູຢ່າງທັນການ, ຟື້ນຟູສອງດອນນີ້ໃຫ້ຄືນສູ່ສະພາບເດີມ, ຮັບປະກັນ ຄວາມປອດໄພດ້ານການເມືອງໃຫ້ແກ່ນະຄອນຫຼວງ ເຊິ່ງກ່ອນອື່ນໝົດແມ່ນຕ້ອງ

ແກ້ໄຂບັນຫາທາງດ້ານການທະຫານຕໍ່ສັດຕູຢູ່ດອນຊີງຊູ້ຢ່າງວ່ອງໄວ, ທິດທາງການສູ້ຮົບຕ້ອງໄດ້ກຳນົດຢ່າງຊັດເຈນຈະແຈ້ງ **" ຕີເຂົ້າເປົ້າໝາຍຢ່າງຊັດເຈນ, ແກ້ໄຂຢ່າງວ່ອງໄວ, ກະທັດຮັດ, ຂອບເຂດສູ້ຮົບຕ້ອງຈຳກັດ ແລະ ບໍ່ໃຫ້ລ່ວງລ້ຳໄປເຖິງດິນແດນໄທ ເພື່ອຫຼີກເວັ້ນບັນຫາຕ່າງໆທີ່ຕາມມາ ".**

ກຳລັງທະຫານທີ່ສັ່ງຂຶ້ນຂຶ້ນຕີດອນຊີງຊູ້ມີກອງຮ້ອຍທີ 3 ເຊິ່ງເປັນກຳລັງໄຟຂອງກອງພັນທີ 1 ສົມທົບກັບກອງພັນນ້ອຍທະຫານຮາບ 705 (ກອງພັນ11), ສະເພາະຢູ່ຝັ່ງວຽງຈັນກົງກັນຂ້າມກັບດອນຊີງຊູ້ໄດ້ຈັດຕັ້ງໃຫ້ກອງປືນ 12.8 ມມ, 14.5 ມມ. ກອງກຳລັງໄຟເພດຍິງກອງ 769 ນຳໃຊ້ປືນ H12 ມາຕັ້ງສະໜາມຢູ່ບ້ານໃໝ່ ເຊິ່ງໜ້າກັບດອນຊີງຊູ້ເພື່ອກຽມຍິງຊ່ວຍໜູນໃຫ້ທະຫານຮາບ ທີ່ກຽມຂຶ້ນດອນ, ນອກນີ້ຍັງມີກອງພັນປືນໃຫຍ່ 598, ກອງຮ້ອຍກຳລັງໄຟເພດຍິງກອງ 769, ກອງ 875 ນຳເອົາປືນໃຫຍ່ DKB ມາຕັ້ງສະໜາມຢູ່ບ້ານຫ້ວຍໝໍ້, ໜອງເທວະດາ ເພາະປືນຊະນິດນີ້ແມ່ນຕ້ອງໄດ້ຍິງໄລຍະໄກ.

ພາຍຫຼັງກະກຽມຢ່າງຮຽບຮ້ອຍແລ້ວ, ຮອດເວລາ 5 ໂມງເຊົ້າຂອງ ວັນທີ 11/4/1977 ກຳລັງທະຫານຮາບ ກອງທັບປົດປ່ອຍປະຊາຊົນລາວ ໄດ້ນຳໃຊ້ເຮືອທີ່ຍຶດໄດ້ຢູ່ຈີນາຍໂມ້ ໃນປີ 1975 ຂ້າມໄປດອນຊີງຊູ້ຢ່າງວ່ອງໄວ ແລະ ບຸກຕີຍຶດເອົາຢ່າງຄ່ອງແຄ້ວ ບວກໃສ່ກຳລັງໄຟປືນໃຫຍ່ກອງ 769, ກອງ 875 ຍິງຊ່ວຍໜູນຢ່າງຊັດເຈນ, ຖືກເປົ້າໝາຍ. ຍ້ອນຖືກຫຼອນຕີຢ່າງກະທັນຫັນ ພວກສັດຕູບໍ່ສາມາດຕອບໂຕ້ຄືນໄດ້, ການສູ້ຮົບໄດ້ດຳເນີນໄປພຽງ 15 ນາທີ ກອງທັບປົດປ່ອຍປະຊາຊົນລາວ ກໍ່ສາມາດຍຶດໄດ້ດອນຊີງຊູ້ຄືນ. ຜ່ານການສູ້ຮົບສັດຕູຖືກຍິງຕາຍຄາສະໜາມ 1 ຄົນ ຈັບເປັນຊະເລີຍໄດ້ 2 ຄົນ, ຍຶດອາວຸດຊະນິດຕ່າງໆໄດ້ຈຳນວນໜຶ່ງ, ສ່ວນກຳລັງເຮົາແມ່ນປອດໄພ, ຫຼັງຈາກນັ້ນກອງພັນທີ 1 ແລະກອງພັນ 705 ໄດ້ເຂົ້າກວດສະໜາມ, ວັດແທກ ແລະ ປະຈຳຢູ່ດອນຊີງຊູ້, ສ່ວນກອງ 769 ແລະ 875 ໄດ້ຖອນກັບໄປຢູ່ສຳນັກຢູ່ດົງປາແລບ.

ນີ້ກໍ່ເປັນອີກຄັ້ງໜຶ່ງທີ່ກອງຮ້ອຍກຳລັງໄຟເພດຍິງກອງ 769 ໄດ້ປະຕິບັດໜ້າທີ່ອັນມີກຽດທີ່ພັກ-ລັດມອບໝາຍໃຫ້, ສ້າງໄດ້ຜົນງານອັນສະຫງ່າງາມ,

ຮັກສາໄດ້ມູນເຊື້ອຕໍ່ສູ້ອັນພິລະອາດຫານ, ບໍ່ຍອມຈຳນົນ, ເດັດດ່ຽວໜຽວແໜ້ນ, ກ້າແກ່ນ ຂອງແມ່ຍິງລາວ, ສ້າງໄດ້ຄວາມໄວ້ເນື້ອເຊື່ອໃຈຈາກພັກ-ລັດ ແລະ ຄວາມຮັກແພງຈາກພໍ່ແມ່ປະຊາຊົນຢ່າງແທ້ຈິງ.

ພາຍຫຼັງສຳເລັດການເຂົ້າຮ່ວມສູ້ຮົບປົ້ນປ່ອຍດອນຊີງຊ້ ກັບກົມກອງ ຕ່າງໆແລ້ວ, ກອງກຳລັ້ງໄຟເພດຍິງ 769 ກໍ່ໄດ້ກັບຄືນມາປັບປຸງກຳລັ້ງ, ຮ່ຳຮຽນ ການເມືອງຢູ່ດົງປ່າແລບນະຄອນຫຼວງວຽງຈັນ,ເຮັດໜ້າທີ່ຮັບແຂກພາຍໃນແລະ ຕ່າງປະເທດເຊັ່ນ: ແຂກຈາກໂຊຫວຽດ, ແຂກຈາກ ສ ສ. ຫວຽດນາມ ແລະ ບັນດາປະເທດສັງຄົມນິຍົມອື່ນໆ.

ເວລານີ້ ຈຳນວນພົນປະກອບຢູ່ກອງຮ້ອຍ769 ມີສະຫາຍຈຳນວນໜຶ່ງ ໄດ້ຍົກຍ້າຍໄປຢູ່ກົມກອງໃໝ່ ເປັນຕົ້ນ: ຈຳນວນໜຶ່ງໄປຮຽນຢູ່ຕ່າງປະເທດ, ຈຳ ນວນໜຶ່ງອອກໄປຢູ່ຫ້ອງການຕ່າງໆຂອງກະຊວງ, ຈຳນວນໜຶ່ງກໍ່ອອກໄປຢູ່ໂຮງ ງານນ້ຳປາເກົ້າລ້ຽວ, ໂຮງງານເຂົ້າໜົມ, ໂຮງງານໝີ່ກອງທັບຫຼັກ 4, ຈຳນວນໜຶ່ງ ກໍ່ໄປຢູ່ນິຄົມໜອງຫາ, ຈຳນວນໜຶ່ງກໍ່ໄປຢູ່ໂຮງງານຕັດຫຍິບເລກ 1 ກອງທັບ, ຈຳນວນໜຶ່ງກໍ່ຖືກແບ່ງໃຫ້ກອງຮ້ອຍ 875 ແລະອີກຈຳນວນໜຶ່ງແມ່ນຜູ້ທີ່ແຕ່ງ ງານກໍ່ອອກໄປຢູ່ນຳລູກ-ນຳຜົວເພື່ອສ້າງເສດຖະກິດຄອບຄົວ.

ດັ່ງນັ້ນ ມາຮອດເດືອນ 7/1977 ຂັ້ນເທິງຈຶ່ງມີມະຕິຕົກລົງລວມກອງ ຮ້ອຍກຳລັ້ງໄຟ 769 ແລະ ກອງຮ້ອຍກຳລັ້ງໄຟ 875 ເຂົ້າກັນ ແລ້ວປ່ຽນຊື່ໃໝ່ ເອີ້ນວ່າ “ **ກອງຮ້ອຍກຳລັ້ງໄຟເພດຍິງ 369** ” ແທນ, ຂັ້ນເທິງໄດ້ປະກອບ ປືນໃຫຍ່ລາກແກ່ 85 ແທນປືນ H12, DKB ການບັນຊາຂຶ້ນກັບກົມປືນໃຫຍ່ ກົມໃຫຍ່ເສນາທິການກອງທັບ, ປະກອບມີຈຳນວນພົນ 145 ສະຫາຍ ມີຄະນະ ບັນຊາດັ່ງນີ້:

ສະຫາຍ ນາງ ວຽງແກ້ວ ເປັນຫົວໜ້າການທະຫານ
ສະຫາຍ ນາງ ແກ້ວຕາ ເທບພະວົງ ຫົວໜ້າການເມືອງ (76)
ສະຫາຍ ນາງ ທອງຈັນ ວິໄລວົງ ຮອງການເມືອງ (64)
ສະຫາຍ ນາງ ສີພາ ວົງຄຳມີ ຮອງວຽການພະລາທິການ.

ແບ່ງອອກເປັນ 4 ໝວດຄື: ໝວດສຳນັກ, ໝວດປືນ, ໝວດຄົດໄລ່ ວັດແທກ ແລະໝວດສື່ສານ.

ພາຍຫຼັງກອງຮ້ອຍກຳລັງໄຟເພດຍິງ 369 ໄດ້ປະກາດສ້າງຕັ້ງຂຶ້ນ ກອງ ຮ້ອຍກໍ່ໄດ້ເຮັດໜ້າທີ່ຄືເກົ່າຮຽນການເມືອງ, ຮຽນການທະຫານ, ຮຽນຍິງປືນໃຫຍ່ ຈົນຮອດ ປີ 1979 ສະພາບການເຄື່ອນໄຫວຂອງສັດຕູຢູ່ລຽບຕາມຊາຍແດນ ທາງຫຼັກ 36 ດ້ານຕາເວັນອອກຂອງເມືອງວຽງຈັນ ໄດ້ມີພວກປະຕິການພັດຖິ່ນ ເຄື່ອນໄຫວກໍ່ຄວາມບໍ່ສະຫງົບ, ພວກເຂົາໂຄສະນາໃສ່ຮ້າຍປ້າຍສີລະບອບໃໝ່, ຊື້ຈ້າງຈອບອອຍເອົາປະຊາຊົນໂຕນໄປປະເທດໄທ ເຊິ່ງພວກເຂົາໄດ້ຕັ້ງສູນຮັບ ຕ້ອນເອົາໄວ້.

ດັ່ງນັ້ນ ເພື່ອບໍ່ໃຫ້ປະຊາຊົນຕົກເຂົ້າກົນອຸບາຍຂອງສັດຕູ ແລະ ສະກັດ ກັ້ນການເຄື່ອນໄຫວຂອງພວກປະຕິການຢູ່ເຂດດັ່ງກ່າວ ຂັ້ນເທິງຈຶ່ງມີຄຳສັ່ງໃຫ້ ກອງຮ້ອຍກຳລັງໄຟເພດຍິງ 369 ຍ້າຍສຳນັກງານຈາກດົງປ່າແລບ ມາຕັ້ງຢູ່ ບໍລິເວນຫຼັກ 23 ທາງໄປປາກຊັນ ເພື່ອເຮັດໜ້າທີ່ເຄື່ອນໄຫວຊອກຄົ້ນພວກ

.....

*76. ສະຫາຍ ພັນໂທ ນາງແກ້ວຕາ ເທບພະວົງ*

*ເກີດປີ1952 ທີ່ບ້ານໄຮ່ ເມືອງວິລະບູລີ ແຂວງສະຫວັນນະເຂດ, ເຂົ້າການປະຕິວັດ ປີ1972, ເຂົ້າທະຫານ ປີ1972 ຢູ່ຫ້ອງເສນາ ເມືອງວຽງໄຊ ແຂວງຫົວພັນ, ເຂົ້າພັກ ປີ1979, ເຂົ້າຊາວໜຸ່ມ ປີ1975, ເຂົ້າແມ່ຍິງ ປີ1984, ເຂົ້າກຳມະບານ ປີ 1985, ປີ 1973ໄປຮຽນສື່ສານ ຈາກນັ້ນຂັ້ນເທິງສົ່ງເຂົ້າຢູ່ກອງກຳລັງໄຟເພດຍິງ ຮັບຕຳແໜ່ງເປັນຮອງໜ່ວຍສື່ສານ, ປີ1975 ໝົດກອງ769 ລົງມາວຽງຈັນ ເພື່ອສະແດງກຳລັງແລະຍຶດອຳນາດແລ້ວມາຕັ້ງທັບຢູ່ດົງປ່າແລບ, ປີ 1980 ສູນກາງພັກໄດ້ຕົກລົງໂອນກອງ 769 ແລະ875 ເຂົ້າເປັນໜຶ່ງກອງ 369, ປີ1983 ໄປຮຽນຄຸ້ມຄອງໂຮງງານຢູ່ ສສ. ຫວຽດນາມ, ປີ 1989 ຢູ່ສາງໂພນໄຊ ເປັນຮອງການເມືອງ ໂຮງງານ, ປີ1999 ຢູ່ໂຮງງານຕັດຫຍິບເລກ I ກອງທັບ ເຖິງປີ 2012 ຊັ້ນພັນໂທ, ປີ 2013 ອອກ ພັກຜ່ອນຮັບເບ້ຍບຳນານ ແລະສ້າງເສດຖະກິດຄອບຄົວ. ຕະຫຼອດໄລຍະເຄື່ອນໄຫວເຮັດການ ປະຕິວັດສະຫາຍໄດ້ຮັບຍ້ອງຍໍ: ຫຼຽນກາທອງແດງຈາກປະເທດເຢຍລະມັນ ໃນນາມຕົວແທນ ກອງກຳລັງໄຟເພດຍິງ ຂອງຂະບວນຊາວໜຸ່ມ, ຮັບຫຼຽນໄຊອິດສະຫະຊັ້ນ III ຈຳນວນ 2 ໜ່ວຍ, ຮັບຫຼຽນໄຊແຮງງານຊັ້ນ III ຈຳນວນ 4 ໜ່ວຍ, ຮັບ ຫຼຽນໄຊແຮງງານ ຊັ້ນ II ຈຳ ນວນ 1 ໜ່ວຍ, ຫຼຽນກາແຮງງານ 1 ໜ່ວຍ, ຫຼຽນກາຕ້ານອາເມຣິກາ 1 ໜ່ວຍ, ຫຼຽນກາ 50 ປີ 1 ໜ່ວຍ, ຫຼຽນກາ 60 ປີ 1 ໜ່ວຍ ແລະໃບຍ້ອງຍໍ 14 ໃບ.*

ພັດຖິ່ນ, ພວກປະຕິການ, ຊ່ວຍເຫຼືອປະຊາຊົນຮັກສາຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະຫງົບຕາມຊາຍແດນ, ຜ່ານການປະຕິບັດໜ້າທີ່ເປັນເວລາ 3 ປີ ກອງຮ້ອຍກຳລັງໄຟເພດຍິງ 369 ສາມາດຈັບພວກປະຕິການພັດຖິ່ນໄດ້ 2 ຄັ້ງ. ຄັ້ງທີ 1 ຈັບໄດ້ 4 ຄົນ, ຄັ້ງທີ 2 ຈັບໄດ້ 6 ຄົນ. ນອກນັ້ນ ເອື້ອຍນ້ອງຍັງໄດ້ລົງພື້ນຖານຕາມບ້ານພໍ່ແມ່ປະຊາຊົນລຽບຕາມແຄມຂອງ, ຊ່ວຍເຫຼືອປະຊາຊົນທຳການຜະລິດເຮັດນາ, ເຮັດສວນ, ສ້າງຄວາມຮັກແພງກັບປະຊາຊົນຢ່າງ ແໜ້ນແຟ້ນ. ການປະຕິບັດໜ້າທີ່ຢູ່ເຂດຕັ້ງທັບແຕ່ຫຼັກ 23 ຮອດຫຼັກ 40 ຂອງ ກອງຮ້ອຍ 369 ເຮັດໃຫ້ສະພາບການມີຄວາມສະຫງົບ.

ຮອດປີ 1982 ຂັ້ນເທິງໄດ້ມີຄຳສັ່ງໃຫ້ກອງຮ້ອຍກຳລັງໄຟ 369 ກັບຄືນມາສຳນັກງານຢູ່ດົງປ່າແລບຄືເກົ່າ. ຮອດປີ 1985 ຂັ້ນເທິງມີຄຳສັ່ງໃຫ້ກອງຮ້ອຍກຳລັງໄຟ 369 ຍ້າຍທີ່ຕັ້ງສຳນັກງານໄປຕັ້ງຢູ່ໜອງຫາ, ສຳນັກງານເກົ່າກອງພົນທີ 1 (ປັດຈຸບັນແມ່ນສຳນັກຂ່າວສານປະເທດລາວ) ແລະໄດ້ຈັດຕັ້ງສັບຊ້ອນຄະນະບັນຊາກອງຮ້ອຍໃໝ່ໂດຍແຕ່ງຕັ້ງສະຫາຍ:

ສະຫາຍ ຮ້ອຍໂທ ນາງ ວຽງແກ້ວ ເປັນຫົວໜ້າກອງຮ້ອຍ.
ສະຫາຍ ຮ້ອຍຕີ ນາງ ທອງຈັນ ວິໄລວົງ ເປັນຮອງ ການເມືອງ [77]
ສະຫາຍ ນາງ ບົວລາ ຫຼ້າບຸນເພງ ເປັນຮອງຮັບຜິດຊອບພະລາທິການ.

ຈັດຕັ້ງອອກເປັນ 4 ໝວດ:
ໝວດທີ 1 ສິບເອກ ຄຳແຫວນ ເປັນຫົວໜ້າ.
ໝວດທີ 2 ອາທິ ນາງ ແພງສີ ຈັນທະລັງສີ ເປັນຫົວໜ້າ.
ໝວດທີ 3 ອາທິ ນາງບົວອັນ ເປັນຫົວໜ້າ.
ໝວດທີ 4 ໝວດສຳນັກ ອາທິ ນາງ ນອນຈັນ ເປັນຫົວໜ້າ.

ກອງຮ້ອຍໄດ້ປະຕິບັດໜ້າທີ່ ຕາມຄຳສັ່ງຂອງຂັ້ນເທິງຢູ່ບ່ອນນີ້ ເປັນເວລາ 2 ປີ ມາຮອດປີ 1987 ເວລານີ້ສະພາບການຢູ່ນະຄອນຫຼວງວຽງຈັນ ແລະທົ່ວປະເທດກໍ່ມີຄວາມສະຫງົບຂັ້ນພື້ນຖານ, ດັ່ງນັ້ນຂັ້ນເທິງຈຶ່ງມີມະຕິຕົກລົງໃຫ້ຍຸບກອງຮ້ອຍກຳລັງໄຟເພດຍິງ 369 ໃນວັນທີ 27/11/1987 ໂດຍແມ່ນສະຫາຍ

ພັນໂທ ຄຳອ່ອນ ຈາກກົມປືນໃຫຍ່ ເປັນຜູ້ອ່ານຄຳປະກາດຍຸບກອງຮ້ອຍ 369 ຢ່າງເປັນທາງການ. ສ່ວນບັນດາພະນັກງານ ນັກຮົບ ເອື້ອຍນ້ອງໃນກອງຮ້ອຍນີ້ ຂັ້ນເທິງກໍ່ໄດ້ສັບຊ້ອນ ເຂົ້າເຮັດວຽກໃໝ່ຕາມຄວາມຮູ້ ຄວາມສາມາດຢູ່ຕາມກົມ ກອງສຳນັກງານຕ່າງໆ.

ຈາກນັ້ນສະຫາຍຮ້ອຍຕີນາງ ທອງຈັນ ວິໄລວົງ ໄດ້ນຳເອົາທຸງໄຊ ຫຼຽນໄຊຫຼຽນກາ ໃບຍ້ອງຍໍຕ່າງຂອງກົມກອງໄປມອບໃຫ້ຜູ້ອຳນວຍການ ຫໍພິພິທະພັນ ກອງທັບເປັນຜູ້ເກັບກຳປົກປັກຮັກສາໄວ້ ເປັນສັນຍະລັກພະຍານຫຼັກຖານແຫ່ງ ມູນເຊື້ອພິລະອາດຫານ ກຽດປະຫວັດອັນສະຫງ່າງາມຂອງກອງກຳລັງໄຟເພດ ຍິງ 368, 769, 37, 875, 369 ແລະເປັນສົມບັດຂອງກອງທັບ ກໍ່ຄືຂອງ ຊາດຕະຫຼອດໄປ.

24 / VII

.....

*77. ສະຫາຍ ຮ້ອຍຕີ ນາງ ທອງຈັນ ວິໄລວົງ*

*ເກີດປີ 1955 ທີ່ບ້ານນາສົມ ເມືອງຜາໄຊ ແຂວງຊຽງຂວາງ, ປັດຈຸບັນຢູ່ບ້ານນາມອນໃຕ້ ເມືອງວັງວຽງ ແຂວງວຽງຈັນ, ເຂົ້າການປະຕິວັດ ປີ1975, ເຂົ້າຊາວໜຸ່ມ1975, ເຂົ້າແມ່ຍິງ 1988, ເຂົ້າພັກ 1977, ເດືອນ 8/1975 ເຂົ້າສັງກັດຢູ່ກອງກຳລັງໄຟເພດຍິງ 875 ທີ່ຕັ້ງຢູ່ ບ້ານຕ້າຍ ແຂວງຊຽງຂວາງ, ຈາກນັ້ນຂົ້ນມາວຽງຈັນ ໃນວັນທີ 21/8/1975 ດ້ວຍທາງຍົນ ພ້ອມ ກັບປືນ DKB ຈຳນວນ 4 ກະບອກ, ປີ 1982 ເປັນຮອງການເມືອງກອງຮ້ອຍ 369, ປີ 1988 ພາຍຫຼັງຍຸບກອງກຳລັງໄຟເພດຍິງ ຖືກສັບຊ້ອນໄປຢູ່ກອງພົນທີ I ເຖິງປີ 2012 ອອກພັກ ຜ່ອນຮັບເບ້ຍບຳນານ, ຕະຫຼອດໄລຍະເຄື່ອນໄຫວປະຕິວັດສະຫາຍໄດ້ຮັບຍ້ອງຍໍ: ຫຼຽນໄຊ ພິລະອາດຫານຊັ້ນ III ຈຳນວນ 1 ໜ່ວຍ, ຫຼຽນໄຊອິດສະລະ ຊັ້ນ III ຈຳນວນ 5 ໜ່ວຍ, ຫຼຽນໄຊ ແຮງງານຊັ້ນ II ຈຳນວນ 1 ໜ່ວຍ, ຫຼຽນໄຊແຮງງານຊັ້ນ III ຈຳນວນ 3 ໜ່ວຍ, ຫຼຽນກາແຮງງານ ຈຳນວນ 3 ໜ່ວຍ, ຫຼຽນກາຕໍ່ຕ້ານອາເມຣິກາ 1ໜ່ວຍ, ຫຼຽນກາລະນຶກ 50 ປີ, ຫຼຽນກາລະນຶກ 60 ປີກອງທັບ ແລະໃບຍ້ອງຍໍ 12 ໃບ, ໄດ້ຮັບໃບຢັ້ງຢືນ ເປັນຄອບຄົວ 3 ດີ 1 ສະໄໝ, ໃບຢັ້ງຢືນ ແມ່ຍິງ 3 ດີ 2 ໃບ.*

# II. ຜົນງານຕ່າງໆທີ່ກອງຮ້ອຍ ກຳລັງໄຟເພດຍິງ 769 ສ້າງມາ



*ທຸກຢາດເລືອດ ແລະຢາດເຫື່ອ ອຸທິດເພື່ອ*
*ປະເທດຊາດມີເອກະລາດ ປະຊາຊົນມີຄວາມສະເໝີພາບ*
*ແລະມີຄວາມສົມບູນພູນສຸກ*

ປະຫວັດມູນເຊື້ອ ກອງລຳລຽງແບກຫາບ ແລະກອງກຳລັງໄຟເພດຍິງ



# 1. ຜົນງານໃນການປະຕິບັດໜ້າທີ່

ນັບແຕ່ໄດ້ຮັບການສ້າງຕັ້ງຂຶ້ນ ໃນວັນທີ 15/7/1969 ກອງຮ້ອຍກຳລັງໄຟເພດຍິງ 769 ໄດ້ຜ່ານຂະບວນວິວັດແຫ່ງການຕໍ່ສູ້ ແລະກໍ່ສ້າງກຳລັງທີ່ຫຍຸ້ງຍາກລຳບາກ, ຍືດເຍື້ອຍາວນານ ໄດ້ຜ່ານການທົດສອບໃນແປວໄຟສົງຄາມທີ່ດຸເດືອດຂັ້ງຂາດ ເອື້ອຍນ້ອງຍອມເສຍສະຫຼະທຸກສິ່ງທຸກຢ່າງເພື່ອປະກອບສ່ວນຕໍ່ສູ້ກູ້ເອກະລາດ ປົດປ່ອຍປະເທດຊາດ. ດັ່ງນັ້ນ ກອງຮ້ອຍ 769 ຈຶ່ງສ້າງໄດ້ຜົນງານຢ່າງສະຫງ່າງາມ ສົມກັບເປັນກອງກຳລັງໄຟເພດຍິງຂອງກອງທັບປະຊາຊົນລາວ, ສົມກັບຄວາມເຊື່ອໝັ້ນ ແລະໄວ້ວາງໃຈຂອງພັກ, ຂອງປະຊາຊົນລາວບັນດາເຜົ່າ.

ກອງຮ້ອຍກຳລັງໄຟເພດຍິງ 769 ພາຍຫຼັງສ້າງຕັ້ງຂຶ້ນກໍ່ໄດ້ຮັບການປັບປຸງກາຍເປັນກອງຮ້ອຍທີ່ມີການເຕີບໃຫຍ່, ຂະຫຍາຍຕົວ, ມີຄວາມເຂັ້ມແຂງກາຍເປັນກອງຮ້ອຍກຳລັງໄຟ, ກາຍເປັນກອງແບກຫາບເຄື່ອນທີ່ຂອງກອງບັນຊາການເຂດຊຽງຂວາງ ແລະຂອງກອງທັບປົດປ່ອຍປະຊາຊົນລາວ, ໄດ້ຄຽງບ່າຄຽງໄຫຼ່ ກັບກົມກອງອື່ນໆ ຕີຕ້ານສັດຕູຂອງຊາດຈົນໄດ້ຮັບໄຊຊະນະ, ປະກອບສ່ວນເຂົ້າໃນພາລະກິດປະຕິວັດຂອງພັກຂອງປະຊາຊົນ. ການຕໍ່ສູ້, ການປະຕິບັດໜ້າທີ່ຂອງກອງກຳລັງໄຟເພດຍິງ 769 ໃນເບື້ອງຕົ້ນແມ່ນໄດ້ເຮັດໜ້າທີ່ລຳລຽງແບກຫາບອາວຸດ-ກະສຸນ ແລະເຄື່ອງອຸປະໂພກໄປໃຫ້ກອງທະຫານທີ່ສູ້ຮົບຢູ່ແນວໜ້າເຊັ່ນ:

ເດືອນ 8/1969 ຂັ້ນເທິງໄດ້ມີຄຳສັ່ງໃຫ້ກອງຮ້ອຍກຳລັງໄຟເພດຍິງໄປເຮັດໜ້າທີ່ຂົນເຂົ້າລົງຈາກລົດໄປໄວ້ສາງບ້ານໜ້ຽງ-ນາລາມ ຈຳນວນ 40 ຄັນລົດ ແລະຂົນອາວຸດລົງລົດຈຳນວນ 25 ຄັນໃນມື້ດຽວສຳເລັດ.

ເດືອນ 9/1969 ກອງຮ້ອຍກຳລັງໄຟເພດຍິງ ໄດ້ຮັບມອບໝາຍຈາກກອງບັນຊາການທະຫານເຂດຊຽງຂວາງ ໄດ້ເອົາຄົນເຈັບອອກຈາກໂຮງໝໍ 01, 02 ອອກໄປໄວ້ໂຮງໝໍແນວຫຼັງ, ກໍ່ໄດ້ເຮັດໜ້າທີ່ສຳເລັດຜົນ ແລະປອດໄພ.

ເດືອນ 10/1969 ກອງຮ້ອຍກຳລັງໄຟ 769 ໄດ້ປະຕິບັດໜ້າທີ່ລຳລຽງ ອາວຸດ-ກະສຸນ ແລະສະບຽງອາຫານໄປໃຫ້ກອງທະຫານຮາບ ຊຶ່ງປະຕິບັດໜ້າທີ່ ຕີສັດຕູຢູ່ທິດຜາຫຼັງໝູ ແລະຜາລະແວກ ຈົນເຖິງເດືອນ 12, ຈາກນັ້ນກໍ່ມາລຳລຽງ ອາວຸດ-ກະສຸນ ໃຫ້ອ້າຍນ້ອງທະຫານ ຊຶ່ງປະຕິບັດໜ້າທີ່ຢູ່ທິດລ່ອງໄກ່ ເມືອງຄຳ ຈົນເຖິງເດືອນ 4/1970 ກອງຮ້ອຍກຳລັງໄຟເພດຍິງ 769 ໄດ້ມາຕັ້ງສຳນັກ ຢູ່ ບ້ານນາສາລາ ເພື່ອມາເຮັດໜ້າທີ່ລຳລຽງອາວຸດ-ກະສຸນ ແລະ ສະບຽງອາຫານ ແຕ່ຖ້ຳແກບ ເມືອງຄຳ ໄປທາງທິດບ້ານສ້ອມ ເຂດຍອດງື່ມ ເມືອງແປກ.

ເດືອນ 6/1970 ກອງຮ້ອຍກຳລັງໄຟເພດຍິງ 769 ໄດ້ມາຕັ້ງທັບຢູ່ຖ້ຳ ນ້ຳຕຽນ ຂັ້ນເທິງໄດ້ປະກອບປືນຄົກ 82 ມມ. ໃຫ້ 4 ກະບອກ, ຮອດເດືອນ 8 ຂັ້ນເທິງໄດ້ສົ່ງໄປເຝິກອົບຮົບການນຳໃຊ້ປືນຄົກຢູ່ກອນກວາງ ແຂວງເຫງະອານ ສສ. ຫວຽດນາມເປັນເວລາ 4 ເດືອນ.

ເດືອນ 12/1970 ກອງຮ້ອຍກຳລັງໄຟເພດຍິງໄດ້ກັບມາຕັ້ງທັບຢູ່ບ້ານ ນ້ຳຮົ່ມ ເມືອງຄຳ ເພື່ອລໍຖ້າຮັບໜ້າທີ່ຈາກຂັ້ນເທິງ. ວັນທີ 1/1/1971 ຂັ້ນເທິງໄດ້ ມີຄຳສັ່ງໃຫ້ກອງຮ້ອຍກຳລັງໄຟເພດຍິງ 769 ເຄື່ອນກຳລັງໄປສົມທົບກັບກອງ ພັນ 605 ເພື່ອຍິງຊ່ວຍໜູນໃຫ້ກອງທະຫານຮາບທີ 13 ຕີສັດຕູຢູ່ຈຸດສູງ 116 ແລະບໍລິເວນໜອງຕັ່ງ, ເມືອງສູຍ. ພາຍຫຼັງສຳເລັດ ກອງຮ້ອຍກຳລັງໄຟເພດ ຍິງ769ໄດ້ມາເຮັດໜ້າທີ່ລຳລຽງອາວຸດ-ກະສຸນ, ສະບຽງອາຫານໄປໃຫ້ກອງພັນ ທະຫານຮາບທີ 701 ຢູ່ທິດເມືອງແທ້, ສັນຈໍ່ ປ່າຄາ ບວມດາວ...

ວັນທີ 2/2/1971 ກອງຮ້ອຍກຳລັງໄຟເພດຍິງ 769 ໄດ້ຮັບຄຳສັ່ງຈາກ ກອງບັນຊາການທະຫານເຂດຊຽງຂວາງ ໄດ້ເຄື່ອນທັບກັບຄືນເມືອງສູຍ ເພື່ອ ມາສົມທົບກັບກອງພັນ 605 ຍິງຊ່ວຍໜູນໃຫ້ກອງພັນ 15, ກຳລັງເປັນກາງ ຮັກຊາດຕີສັດຕູຢູ່ທິດນາມ່ານຈົນສຳເລັດ.

ຮອດເດືອນ 3/1971 ກອງຮ້ອຍ 769 ໄດ້ມາຕັ້ງທັບຢູ່ພູເລັງ ຕາມຄຳສັ່ງ ຂອງກອງບັນຊາການທະຫານເຂດ ເພື່ອລຳລຽງຂົນສົ່ງອາວຸດ-ກະສຸນ ແລະ ສະ ບຽງອາຫານໃຫ້ແກ່ກອງພັນທະຫານຮາບ ທີ່ກຳລັງສູ້ຮົບຢູ່ທິດລາດບອກ, ບ້ານ ໂຕນ, ກາງແສນ, ເມືອງເຄິງ.

ເດືອນ 8/1971 ສັດຕູໄດ້ໃຊ້ກຳລັງຢ່າງຫຼວງຫຼາຍ ບຸກຕີເຂົ້າພູພຽງຊຽງ ຂວາງຢ່າງໜັກອີກເທື່ອໃໝ່. ກອງບັນຊາການເຂດຊຽງຂວາງ ໄດ້ມີຄຳສັ່ງໃຫ້ ກອງຮ້ອຍກຳລັງໄຟເພດຍິງ 769 ກັບຄືນມາເມືອງສູຍ ເພື່ອສົມທົບກັບກອງພັນ 605 ຍິງຊ່ວຍໜູນໃຫ້ກອງພັນທີ 1 ແລະກອງພັນ 13 ຕີສັດຕູຢູ່ພູວຽງໃຫຍ່, ພູສູງ ເພື່ອສ້າງເງື່ອນໄຂປົດປ່ອຍເອົາສາລາພູຄູນໃຫ້ສຳເລັດຕາມແຜນການຂອງ ຂັ້ນເທິງ.

ເດືອນ 1/1972 ກອງຮ້ອຍ 769 ໄດ້ກັບຄືນພູເລັງ ເພື່ອເຮັດໜ້າທີ່ລຳລຽງ ອາວຸດກະສຸນໃຫ້ກອງພັນທະຫານຮາບທີ່ກຳລັງສູ້ຮົບຢູ່ທິດນ້ຳຮາງ, ນ້ຳຄານ.

ເດືອນ 5/1972 ກອງຮ້ອຍ 769 ໄດ້ຮັບຄຳສັ່ງໃຫ້ເຄື່ອນທັບແຕ່ຊຽງ ຂວາງ ມາເຮັດໜ້າທີ່ຂົນຂວາຍປະຊາຊົນຢູ່ບ້ານນາງອມ, ບ້ານນານາດ ເມືອງ ຊຽງເງິນ ແຂວງຫຼວງພະບາງ ສາມາດຂົນຂວາຍໄດ້ 80 ຄົນ, ຫຼັງຈາກນັ້ນ ຂັ້ນເທິງ ໄດ້ມີຄຳສັ່ງໃຫ້ກັບຄືນຊຽງຂວາງ ໃນເດືອນ 7/1972 ເພື່ອເຂົ້າຮ່ວມກອງ ປະຊຸມສະຫຼຸບຜົນງານ ໃນການສູ້ຮົບປົດປ່ອຍທົ່ງໄຫຫີນຊຽງຂວາງ, ໃນກອງ ປະຊຸມນີ້ **ກອງຮ້ອຍກຳລັງໄຟ 769 ໄດ້ຮັບນາມມະຍົດ ເປັນກອງຮ້ອຍວິລະຊົນ ແລະ ເອື້ອຍນ້ອງຈຳນວນໜຶ່ງ ໄດ້ຮັບນາມມະຍົດເປັນນັກຮົບແຂ່ງຂັນ.**

ເດືອນ 8/1972 ກອງກຳລັງໄຟເພດຍິງ769 ໄດ້ສືບຕໍ່ເຮັດໜ້າທີ່ສົມທົບ ກອງພັນ 605 ຍິງຊ່ວຍໜູນໃຫ້ແກ່ກອງພັນ 15 ກຳລັງເປັນກາງຮັກຊາດ ເພື່ອ ບຸກຕີສັດຕູຢູ່ພູວຽງນ້ອຍ, ພູລັງຈັ່ງ ແລະຕາມເສັ້ນທາງເລກທີ 7. ພາຍຫຼັງສຳເລັດ ກອງຮ້ອຍ 769 ສົມທົບກັບກອງພັນ 605 ຍິງຊ່ວຍໜູນໃຫ້ແກ່ກອງພັນທີ 2,

ກອງພັນປັດໄຈ, ກອງພັນ 48 ຕີສັດຕູຢູ່ພູຜາແຕກ. ພາຍຫຼັງສຳເລັດຂັ້ນເທິງໄດ້ມີຄຳສັ່ງໃຫ້ມາຕັ້ງທັບຢູ່ບ້ານຝາຍ ເມືອງຄຳ.

ເດືອນ 10/1972 ກອງຮ້ອຍກຳລັງໄຟເພດຍິງ 769 ໄດ້ເຄື່ອນທັບຮ່ວມກັບກອງພັນທີ 13, ກອງພັນ701ເຮັດໜ້າທີ່ຍິງຊ່ວຍໜູນຕີປົດປ່ອຍສາລາພູຄູນ. ການຕີສັດຕູຄັ້ງນີ້ ແກ່ຍາວເຖິງ 3 ວັນ 3 ຄືນ ແຕ່ສັດຕູກໍ່ຍັງບໍ່ແຕກ. ເຖິງຕອນທ່ຽງຂອງມື້ທີ 3 ສັດຕູຮູ້ຂ່າວວ່າ ມີກອງຮ້ອຍກຳລັງໄຟເພດຍິງ 769 ມາຕີສົມທົບ, ສັດຕູກໍ່ຂວັນອ່ອນ ຢ້ານກົວ ແລະປົບໜີຈາກສາລາພູຄູນ. ພາຍຫຼັງສຳເລັດ, ກອງຮ້ອຍໄດ້ກັບຄືນມາຕັ້ງທັບຢູ່ພູຈອມຖໍ່ ເພື່ອເຮັດໜ້າທີ່ປ້ອງກັນດ້ານຮົບ.

ເດືອນ 12/1972-1973 ສັດຕູໄດ້ຕ່າວໂຈມຕີຄືນຢ່າງຮ້າຍແຮງ ນັບແຕ່ສາລາພູຄູນ ມາຕາມເສັ້ນທາງເລກ 7 ເຖິງທົ່ງໄຫຫີນ-ຊຸງຂວາງ, ເມື່ອສະພາບເປັນຄືແນວນັ້ນ ວັນທີ 21/11/1973 ກອງບັນຊາການສັ່ງໃຫ້ກອງຮ້ອຍກຳລັງໄຟ 769 ສົມທົບກັບກອງພັນ 605 ຍິງຊ່ວຍໜູນໃຫ້ແກ່ກອງພັນ 15 ກອງພັນ 48, ບຸກໂຈມຕີສັດຕູຢູ່ບ້ານສອດ ຕີນພູໂສ້ ເມືອງສູຍ.

ນອກຈາກວຽກງານລຳລຽງອາວຸດກະສຸນ, ການສູ້ຮົບຊ່ວຍເຫຼືອກົມກອງອື່ນໆແລ້ວ ກອງຮ້ອຍກຳລັງໄຟເພດຍິງ 769 ຍັງໄດ້ເຮັດໜ້າທີ່ລົງຮາກຖານປະຊາຊົນ, ຂົນຂວາຍເອົາເອື້ອຍນ້ອງແມ່ຍິງໄດ້ຈຳນວນຫຼວງຫຼາຍ ເພື່ອມາປະກອບ ແລະສ້າງຕັ້ງເປັນກອງຮ້ອຍລຳລຽງແບກຫາບເຊັ່ນ: ກອງ 37 ກອງລຳລຽງຢູ່ຊຳເໜືອ, ຂົນຂວາຍເອົາເອື້ອຍນ້ອງແມ່ຍິງຢູ່ທິດເມືອງຊຽງເງິນໄດ້ຈຳນວນ 80 ຄົນ ມາເຂົ້າຮ່ວມຂະບວນລຳລຽງອາວຸດກະສຸນຮັບໃຊ້ແນວໜ້າ, ນອກນີ້ ໃນໄລຍະກຽມເຂົ້າຍຶດອຳນາດ ກອງຮ້ອຍກຳລັງໄຟເພດຍິງ 769 ຍັງໄດ້ລົງຮາກຖານປະຊາຊົນເຂດນາຍາງ ເມືອງນາຊາຍທອງ ນະຄອນຫຼວງວຽງຈັນ.

ນອກຈາກວຽກງານຂົນຂວາຍ ກໍ່ສ້າງຮາກຖານແລ້ວ ກອງຮ້ອຍກຳລັງໄຟເພດຍິງ 769 ຍັງໄດ້ເຮັດໜ້າທີ່ຢູ່ແນວຫຼັງເຊັ່ນ: ຜູ້ໃດຫາກບໍ່ໄດ້ໄປປະຕິບັດໜ້າທີ່ຢູ່ແນວໜ້າ, ຜູ້ທີ່ຢູ່ກົມກອງກໍ່ປັບປຸງຄ້າຍຄູເຮືອນຊານ ແລະທຳການຜະລິດ

ປູກຝັງລ້ຽງສັດ ເພື່ອລ້ຽງກົມກອງເຮັດສອນຄົວປູກຜັກ, ລ້ຽງເປັດ, ລ້ຽງໄກ່ ຕາມ ສະພາບເງື່ອນໄຂເຊັ່ນ: ປີ 1975 ພາຍຫຼັງທີ່ກັບມາແຕ່ວຽງໄຊ ກອງຮ້ອຍ 769 ກໍ່ໄດ້ມາຕັ້ງທັບ ຢູ່ນິຄົມກະເສດບ້ານຝາຍ ເມືອງຄຳ ເຂົ້າຮ່ວມຂະບວນການ ຜະລິດກະສິກຳຮ່ວມກັບບັນດາກົມກອງອື່ນໆ...

ຈາກຜົນງານຂອງການປະຕິບັດ ໜ້າທີ່ຂອງກອງຮ້ອຍກຳລັງໄຟເພດ ຍິງ 769 ໄດ້ສ້າງມາໃນໄລຍະການຕໍ່ສູ້ປົດປ່ອຍຊາດ ຈົນປະເທດຊາດໄດ້ຮັບ ການປົດປ່ອຍຢ່າງສົມບູນ, ຈາກຂະບວນວິວັດດັ່ງກ່າວ ແລະຈາກພຶດຕິກຳຕົວຈິງ ຂອງກອງຮ້ອຍກຳລັງໄຟ 769 ທຸກຄົນຍອມເສຍສະຫຼະທຸກສິ່ງທຸກຢ່າງ ເພື່ອ ພາລະກິດປະຕິວັດຂອງພັກ, ຂອງປະຊາຊົນ ແລະໄດ້ຮັບການເຊື່ອໝັ້ນຈາກ ພັກ, ຄວາມໄວ້ເນື້ອເຊື່ອໃຈຈາກປະຊາຊົນລາວ ເປັນຕົ້ນແມ່ນປະຊາຊົນ ແຂວງ ຊຽງຂວາງ. ຜ່ານການປະຕິບັດໜ້າທີ່ວຽກງານ ເຮັດການປະຕິວັດຈົນສຸດກຳສຸດ ປາຍ, ປະເທດຊາດໄດ້ຮັບການປົດປ່ອຍ ແລະປົກປັກຮັກສາລະບອບໃໝ່, ກອງ ຮ້ອຍກຳລັງໄຟເພດຍິງ 769 ໄດ້ສ້າງຜົນງານອັນໂດດເດັ່ນ ແລະສະຫງ່າງາມ ໄດ້ຮັບການຍ້ອງຍໍຈາກພັກ ແລະລັດຖະບານ ເຊັ່ນ:

- ໄດ້ຮັບໜຽນໄຊອິດສະລະຊັ້ນ I ຈຳນວນ 1 ໜ່ວຍ
- ໄດ້ຮັບໜຽນການາມມະຍົດກົມກອງວິລະຊົນ 1ໜ່ວຍ
- ໄດ້ຮັບໜຽນໄຊອິດສະລະຊັ້ນ II 1 ໜ່ວຍ
- ໄດ້ຮັບໜຽນໄຊພິລະອາດຫານຊັ້ນ III 1 ໜ່ວຍ
- ໄດ້ຮັບໜຽນໄຊແຮງງານ 1 ໜ່ວຍ
- ໄດ້ຮັບທຸງໄຊ 1 ຜືນ
- ໄດ້ຮັບບົດມູນເຊື້ອກົມກອງ 1 ສະບັບ
- ໄດ້ຮັບການຍ້ອງຍໍ ກອງນັກຮົບ 3 ເທື່ອ

ນອກຈາກນີ້ ກອງຮ້ອຍ 769 ຍັງໄດ້ຮັບນາມມະຍົດວິລະຊົນ 1 ສະຫາຍ ຄື:

ສະຫາຍ ຮ້ອຍເອກ ນາງບົວຄຳ ພົມມະຈັນ

ນັກຮົບແຂ່ງຂັນກອງຮ້ອຍກຳລັງໄຟ 769 ມີ:

ສະຫາຍ ຮ້ອຍເອກ ນາງ ສີສຸກ.
ສະຫາຍ ຮ້ອຍເອກ ນາງບົວທອງ
ສະຫາຍ ນາງ ພາສີ
ສະຫາຍ ນາງ ທຸມມີ
ສະຫາຍ ນາງ ບົວສີ

- ນັກຮົບແຂ່ງຂັນຕາງໜ້າກົມກອງ ຜົນງານລວມໝູ່ມີ ສະຫາຍ ພັນເອກ ນາງວັນຄຳ ທິບພະວົງ

ບັນດາ ທຸງໄຊ ໝຸ່ງນໄຊ ແລະໝຸ່ງນກາຕ່າງໆ ທີ່ເປັນຂອງກົມກອງລວມໝູ່ ພາຍຫຼັງປະກາດຍຸບກົມກອງແລ້ວ ສະຫາຍ ນາງ ທອງຈັນ ວິໄລວົງ ຮອງການ ເມືອງກອງຮ້ອຍ ໄດ້ນຳໄປມອບໃຫ້ຜູ້ອຳນວຍການ ຫໍພິພິທະພັນກອງທັບ ເປັນຜູ້ເກັບກຳ ປົກປັກຮັກສາໄວ້ ເປັນສັນຍະລັກ ພະຍານຫຼັກຖານແຫ່ງມູນເຊື້ອ ພິລະອາດຫານ ກຽດປະຫວັດອັນສະຫງ່າງາມຂອງກອງກຳລັ້ງໄຟເພດຍິງ 368, 769, 37, 875, 369 ແລະ ເປັນ ສົມບັດຂອງກອງທັບ ກໍ່ຄືຂອງຊາດຕະຫຼອດໄປ.



# ພາກສະຫຼຸບ



24/VII

ຫຼາຍຊ່ວຍດິນຫຼາຍຊ່ວຍຟ້າ
ບ່ໄດ້ເບົາບາງບ່ົ
ຂຸມແຄ້ນໃນໃຈນີ້
ຂຸມລະເບີດຍິ່ງຕື້ນຂຶ້ນ

ຝົນລ້ານໆຫ່າທີ່ເທລົງ
ເພື່ອດຟາຍຄວາມແຄ້ນ
ບ່ໍຫາຍເບົາບາງສວ່າງ
ຂຸມແຄ້ນຍິ່ງເລິກລົງ ພີ່ນ້ອງເອີ !

ສົງຄາມໄດ້ຜ່ານກາຍມາເປັນເວລາຫຼາຍຫຼາຍສິບປີແລ້ວກໍ່ຕາມ ແຕ່ມັນກໍ່ປະຮ່ອງຮອຍທີ່ເປັນປະຫວັດສາດ ແລະຄວາມຊົງຈຳທີ່ເຈັບປວດໃຫ້ປະຊາຊົນລາວບໍ່ແມ່ນໜ້ອຍ ໂດຍສະເພາະແມ່ນສົງຄາມຕ້ານພວກຈັກກະພັດອາເມຣິກາ.

ພາຍໃຕ້ການນຳພາຂອງພັກ ແລະ ແນວລາວຮັກຊາດ, ກອງທັບ ແລະ ປະຊາຊົນໄດ້ຕ້ານທານກັບການບຸກໂຈມຕີຂອງສັດຕູເຂດທົ່ງໄຫຫີນ-ຊຽງຂວາງ ນັບເປັນຫຼາຍສິບຄັ້ງ ເພື່ອຮັກສາພູພຽງຊຽງຂວາງໄວ້ໃຫ້ໝັ້ນຄົງ. ມີລູກຫຼານຂອງປະຊາຊົນນັບເປັນໝື່ນໆຄົນ ຈາກຜືນແຜ່ນດິນທົ່ງໄຫຫີນ-ຊຽງຂວາງອອກຮັບໃຊ້ສະໜາມຮົບມີຄວາມສາມັກຄີເປັນປຶກແຜ່ນໜຽວແໜ້ນເພື່ອຕໍ່ສູ້ກັບສັດຕູດ້ວຍຄວາມອາດຫານ.

ຫຼັງຈາກສັນຍາເຊີແນວ 23 ກໍ່ລະກົດ 1954 ຢູ່ພູພຽງຊຽງຂວາງກຳລັງຂອງແນວລາວອິດສະລະ ໄດ້ປະຕິບັດການຢຸດຍິງ ຢ່າງເຂັ້ມງວດ, ຊາວໜຸ່ມຍິງໜຸ່ມ ເຊິ່ງແມ່ນລູກຫຼານຂອງຊາວພວນ ໄດ້ສະໝັກຕື່ນຕົວເຂົ້າຮ່ວມກຳລັງປະຕິວັດນັບເປັນຮ້ອຍໆກວ່າຄົນ ພ້ອມກັບທະຫານຂຶ້ນເມືອເຕົ້າໂຮມຢູ່ທີ່ໝັ້ນຊຳເໜືອ ແລະ ຜົ້ງສາລີ ໃນເວລາດຽວກັນນີ້ສູນກາງໄດ້ຈັດຕັ້ງກອງພັນ 593 ຂຶ້ນ, ເພື່ອເຮັດໜ້າທີ່ເຕົ້າໂຮມຮ່ວມກັບກົມກອງອື່ນໆ ໃນກຳລັງປະກອບອາວຸດຂອງແນວລາວຮັກຊາດ.

ຕະຫຼອດໄລຍະຕໍ່ສູ້ປະຕິວັດ ສັດຕູໄດ້ເອົາໃຈໃສ່ກວາດລ້າງຢ່າງລຽນຕິດ ແນໃສ່ເພື່ອສ້າງໃຫ້ເປັນເຂດປອດກຳລັງປະຕິວັດ, ເຮັດໃຫ້ເຂດນີ້ກາຍເປັນເຂດຍາດແຍ່ງທີ່ດຸເດືອດ, ຂ້ຽວຂາດ. ໃນວັນທີ 27/12/1960 ກຳລັງປະກອບອາວຸດແນວລາວຮັກຊາດ ແລະ ກຳລັງເປັນກາງຮັກຊາດປົດປ່ອຍສາລາພູຄູນ ເມືອງສູຍ, ວັນທີ 30/12/1960 ປົດປ່ອຍເມືອງໜອງແຮດ, ວັນທີ 31/12/1960 ປົດປ່ອຍບ້ານບານ ເມືອງຄຳ, ວັນທີ 1/1/1961 ແຂວງຊຽງຂວາງໄດ້ຮັບການປົດປ່ອຍ ແລະ ເປັນສູນກາງສຳນັກງານລັດຖະບານປະສົມ ແຫ່ງຊາດຄັ้ງທີ 2 (23/7/1962).

ນັບແຕ່ປີ 1964-1973 ພາຍຫຼັງລັດຖະບານປະສົມແຫ່ງຊາດຄັ້ງທີ 2 ຖືກລົ້ມລະລາຍ ພວກຈັກກະພັດອາເມຣິກາ ແລະ ກຸ່ມປະຕິການຂາຍຊາດໄດ້ເພີ່ມທະວີສົງຄາມຢູ່ລາວຂຶ້ນຢ່າງຮ້າຍແຮງ. ພວກເຂົາໄດ້ເຕົ້າໂຮມເອົາທຸກກຳລັງທະຫານຣາບ, ທະຫານອາກາດ, ປືນໃຫຍ່, ລົດຫຸ້ມເກາະ ແລະ ພາຫະນະສົງຄາມບຸກຍຶດເອົາດິນແດນທົ່ງໄຫຫີນ-ຊຽງຂວາງຢ່າງໜັກໜ່ວງ, ແນ່ໃສ່ສ້າງທົ່ງໄຫຫີນ-ຊຽງຂວາງ ໃຫ້ເປັນທີ່ຕັ້ງທາງດ້ານການທະຫານໃຫຍ່ທີ່ສຸດ ໃນປະເທດລາວ ຕົ້ນຕໍແມ່ນເພື່ອຫວັງທຳລາຍເຂດທີ່ໝັ້ນຂອງການປະຕິວັດ ຢູ່ພາກເໜືອລາວ ແລະ ຂະຫຍາຍທຸກຍຸດທະສາດບຸກຕີເຂົ້າພາກເໜືອຫວຽດນາມ ແລະ ປະເທດສັງຄົມນິຍົມຢູ່ອາຊີຕາເວັນອອກສ່ຽງໃຕ້.

ຢູ່ສະໜາມຮົບທົ່ງໄຫຫີນ-ຊຽງຂວາງ ຕະຫຼອດໄລຍະແຫ່ງການຕໍ່ສູ້ທີ ດຸເດືອດ, ຂ້ຽວຂາດນັ້ນ, ຝ່າຍຂວາອ້ຽງຈັນ ໄດ້ລະດົມກຳລັງເຖິງ 21 ກອງພັນ ທະຫານພິເສດວ່າງປາວ, ທະຫານເລວຮັບຈ້າງໄທເຖິງ 33 ກອງພັນ, ພ້ອມການຊ່ວຍໜູນຈາກທັບອາກາດອາເມຣິກາແລະພາຫະນະສົງຄາມນັບຫຼາຍສິບໂຕນ, ຕີບຸກຍຶດເຂົ້າພູພຽງຊຽງຂວາງໃນທຸກທິດທາງ ຈະເອົາເຂດພູພຽງຊຽງຂວາງແຫ່ງນີ້ເປັນສະໜາມຈັ້ງທ່າທີ່ມີຄວາມແໜ້ນແກ່ນ, ໃນນີ້ບັ້ນຮົບທີ່ພົ້ນເດັ່ນກ່ວາໝູ່ທີ່ພວກເຂົາກໍ່ຂຶ້ນແມ່ນ: ບັ້ນຮົບກູ້ກຽດ, ທະນົງກຽດ, ໂອເດແອນ, ບັ້ນຮົບສາມສອນ ແລະອື່ນໆ.

ໃນຊຸມປີ 1968-1772 ຈັກກະພັດອາເມຣິກາ ແລະ ພວກຫຸ່ນອ້ຽງຈັນ ໄດ້ປະຕິບັດຍຸດທະສາດ 3 ກ້ຽງ: **ຈູດກ້ຽງ ຂ້າກ້ຽງ ທຳລາຍກ້ຽງ** ເຊິ່ງສ້າງຄວາມເສຍຫາຍແກ່ຊີວິດ ແລະ ຊັບສິນຂອງປະຊາຊົນຊາວເມືອງພອນຢ່າງໃຫຍ່ຫຼວງ, ເພື່ອຕ້ານກັບການຮຸກຮານບຸກຍຶດເອົາພູພຽງຊຽງຂວາງຢູ່ຊຽງຂວາງ, ບັນດາຊາວໜຸ່ມຍິງສາວ ຊາວພວນໄດ້ສະໝັກໃຈເຂົ້າໃນກອງກຳລັງຕ່າງໆ ເປັນຕົ້ນໃນໜ່ວຍລຳລຽງຂົນສົ່ງ ເພື່ອຮັບໃຊ້ສະໜາມຮົບ ໂດຍສະເພາະແມ່ນຢູ່ເມືອງແປກ. ໃນປີ 1968 ມີເອື້ອຍນ້ອງແມ່ຍິງ 22 ຄົນໄດ້ສະໝັກເຂົ້າເປັນກອງຫຼວນ. ນາງ ບົວສີ ກອງຫຼວນບ້ານສ້ອນ ເມືອງແປກ ແຂວງຊຽງຂວາງ ໃຊ້ປືນ 12.8 ມມ ຍິງຍົນອາເມຣິກາຕົກ 1 ລຳ, ນາງເຂັມຄຳ ບ້ານເພຍວັດ, ນາງຫຼ້າບຸນມີ ບ້ານນາໄຊ

ແລະ ນາງຄຳອອນ ບ້ານເພຍວັດ ກອງຫຼອນຕາແສງຊຸ່ງເມືອງຄູນ ຍິງຍົນ T 28 ຕົກ1ລຳ,ແມ່ເຖົ້າຍິງກາຍກອງຫຼອນເມືອງໜອງແຮດໃຊ້ປືນເຫຼັກຍາວຍິງຍົນຕົກ 1 ລຳເຊັ່ນດຽວກັນ.

ພ້ອມນັ້ນກໍ່ຍັງມີແມ່ຍິງທີ່ສາມາດ ແບກຫາບເຄື່ອງຂອງ ເຂົ້າປາອາຫານ, ອາວຸດ ແລະລູກກະສູນ ທີ່ມີນ້ຳໜັກເກີນໂຕເອງ ໃນນັ້ນເດັ່ນກວ່າໝູ່ແມ່ນ ນາງ ລີລາ ອຸດທະພອນ ສາມາດແບກຫາບເຂົ້າສານ ສົ່ງໄປແນວໜ້າໄດ້ເຖິງເທື່ອລະ 80 ກິໂລ ດ້ວຍໄລຍະທາງ 50 ກວ່າກິໂລແມັດ. ນີ້ມັນໄດ້ສ້າງຊື່ສຽງແກ່ເອື້ອຍ ນ້ອງແມ່ຍິງສູງເດັ່ນຂຶ້ນ, ຫຼາຍສະຫາຍ ໄດ້ກາຍເປັນແມ່ຍິງ 3 ເກັ່ງ, ນັກຮົບ 3 ດີ.

ເມື່ອເຫັນວ່າເອື້ອຍນ້ອງແມ່ຍິງ ມີຄວາມສາມາດເຮັດໄດ້ທຽບທັນກັບ ເພດຊາຍ ມາເຖິງເດືອນ 3/1968 ກອງບັນຊາການທະຫານເຂດຊຸ່ງຂວາງ ໄດ້ ເຕົ້າໂຮມເອົາເອື້ອຍນ້ອງແມ່ຍິງຂອງກອງລ່ຳລຽງເຂດ ແລະຂອງແຂວງມາເຕົ້າ ໂຮມກັນສ້າງເປັນກອງລ່ຳລຽງແບກຫາບ 368 ຂຶ້ນ, ເພື່ອເຮັດໜ້າທີ່ລ່ຳລຽງ ອາວຸດກະສູນ ແລະເຄື່ອງອຸປະໂພກ-ບໍລິໂພກເພື່ອຮັບໃຊ້ໃຫ້ແກ່ກອງທະຫານ ທີ່ເຮັດໜ້າທີ່ຕີສັດຕູຢູ່ສະໜາມຮົບ, ບົນເສັ້ນທາງລ່ຳລຽງຂົນສົ່ງຂອງເອື້ອຍນ້ອງ ສຸດທີ່ພົບກັບຄວາມຫຍຸ້ງຍາກຫຼາຍຢ່າງ, ມີບາງຄັ້ງເອື້ອຍນ້ອງກໍ່ຕົກເຂົ້າຢູ່ໃນວົງ ປິດລ້ອມຂອງສັດຕູ ຖືກຍົນຂອງອາເມຣິກາຖິ້ມລະເບີດ ເຂົ້າໃສ່ຮູບແຖວເຄື່ອນ ທັບ ແຕ່ເອື້ອຍນ້ອງກໍ່ສາມາດເຮັດສຳເລັດໜ້າທີ່.

ມາເຖິງຕົ້ນປີ 1969 ນິກເຊິນ ຂຶ້ນເປັນປະທານາທິບໍດີຂອງອາເມຣິກາ ຄົນໃໝ່ ແລະມັນອ້າງຍຸດທະສາດໃໝ່ອອກເອີ້ນວ່າ: " ທິດສະດີນິກເຊິນ " ກໍ່ຍິ່ງ ເຮັດໃຫ້ສົງຄາມພິເສດກາຍເປັນ **"ສົງຄາມພິເສດເພີ່ມທະວີ"** ນິກເຊິນໄດ້ລົງທຶນ ໃສ່ດ້ານການທະຫານຫຼາຍຂຶ້ນກວ່າເກົ່າ, ມາເຖິງ ປີ 1970 ອາເມຣິກາ ໄດ້ລະດົມ ທະຫານເລວຮັບຈ້າງໄທເຖິງ 15 ພັນກວ່າຄົນ, ໃນນີ້ທະຫານປືນໃຫຍ່ 3 ກອງ ພັນ, ທະຫານຮາບ 19 ກອງພັນ, ນອກນີ້ຍັງມີທະຫານພິເສດວ່າງປາວ 6 ກອງ ພັນເພື່ອບຸກຕີພວກເຂົ້າທົ່ງໄຫຫີນຊ່ຽງຂວາງຄັ້ງໃໝ່,

ສະນັ້ນ ເພື່ອຕອບຕ້ານກັບການຮຸກຮານທີ່ຫຼາກຫຼາຍໃຫຍ່ຄັ້ງ ຄືແນວນັ້ນ ກອງບັນຊາການສູງສຸດກອງທັບປົດປ່ອຍປະຊາຊົນລາວ ກໍ່ຄືກອງບັນຊາການເຂດທະຫານຊຽງຂວາງ ໄດ້ຮຽກຮ້ອງໃຫ້ເຖິງທຸກພາກສ່ວນ ທຸກກຳລັງແຮງ ເພື່ອສຸມໃສ່ສູ້ຮົບ ແລະ ຮັບໃຊ້ໃຫ້ແກ່ການສູ້ຮົບ, ສູນກາງພັກກອງບັນຊາການສູງສຸດ ແລະ ກອງບັນຊາການທະຫານເຂດຊຽງຂວາງໄດ້ຕົກລົງສ້າງຕັ້ງ ກອງກຳລັງໄຟເພດຍິງຂຶ້ນໃນວັນທີ 15/7/1969 ເຊິ່ງປະກອບມີ ຄະນະພັກ ຄະນະ ບັນຊາຢ່າງຄົບຖ້ວນ. ພາຍຫຼັງສ້າງຕັ້ງຂຶ້ນແລ້ວ ໃນເບື້ອງຕົ້ນທາງກອງບັນຊາການທະຫານເຂດຊຽງຂວາງ ໄດ້ມອບໝາຍໃຫ້ເປັນກອງລຳລຽງແບກຫາບເພື່ອລຳລຽງຂົນສົ່ງອາວຸດກະສຸນ ແລະ ເຄື່ອງຂອງຮັບໃຊ້ແກ່ກອງທະຫານທີ່ກຳລັງເຮັດໜ້າທີ່ສູ້ຮົບຢູ່ສະໜາມຮົບພ້ອມທັງປະກອບປືນ 12,8 ມມ ໃຫ້ 4 ກະບອກ.

ພາຍຫຼັງຈັດຕັ້ງສັບຊ້ອນແລະປະກອບການຈັດຕັ້ງເປັນທີ່ຮຽບຮ້ອຍແລ້ວ ທັງ 2 ກອງຄື ກອງລຳລຽງແບກຫາບ 368 ແລະກອງກຳລັງໄຟ 769 ໄດ້ພ້ອມກັນເຄື່ອນໄຫວປະຕິບັດໜ້າທີ່ຂອງແຕ່ລະກົມກອງ, ກອງລຳລຽງແບກຫາບ 368 ອອກໄປເຄື່ອນໄຫວຢູ່ທິດຕາເວັນຕົກ, ຮັບໃຊ້ດ້ານຮົບພູກູດ, ດ້ານຮົບທາງທິດເມືອງພ່າງ, ເມືອງງາມ, ພູຄູນ, ເມືອງສູຍ....

ສ່ວນກອງກຳລັງໄຟເພດຍິງ ພາຍຫຼັງໄດ້ຮັບການສ້າງຕັ້ງແລ້ວເດີນທາງໄປຫວຽດນາມເພື່ອເຝິກອົບຮົບການນຳໃຊ້ອາວຸດເປັນເວລາ 4 ເດືອນຈຶ່ງກັບມາເພື່ອຮັບໃຊ້ສະໜາມຮົບ ຢູ່ພູພຽງຊຽງຂວາງ, ພາຍຫຼັງກັບມາຮອດທົ່ງໄຫຫີນ-ຊຽງຂວາງ ກໍ່ພໍດີສົງຄາມຍາດແຍ່ງດິນແດນ ຢູ່ທົ່ງໄຫຫີນ-ຊຽງຂວາງ ຍິ່ງໜັກໜ່ວງ ສະນັ້ນ ໜ້າທີ່ຂອງກອງກຳລັງໄຟເພດຍິງ 769 ກໍ່ຍິ່ງໜັກໜ່ວງຂຶ້ນກວ່າເກົ່າ.

ລະດູແລ້ງ 1970-1971 ກອງຮ້ອຍກຳລັງໄຟເພດຍິງສົມທົບກັບກຳລັງປືນໃຫຍ່605ໄດ້ຍິງຊ່ວຍໜູນແກ່ກຳລັງທະຫານຮາບເພື່ອຕີປົດປ່ອຍເມືອງສູຍ, ສະນັ້ນທັງ 2 ກອງໄດ້ພ້ອມກັນອອກແຮງເຄື່ອນໄຫວຮັບໃຊ້ດ້ານຮົບຢ່າງຕັ້ງໜ້າ. ພາຍຫຼັງປົດປ່ອຍເມືອງສູຍສຳເລັດ ທັງ 2 ກອງກໍ່ສືບຕໍ່ເຮັດໜ້າທີ່ຍິງຊ່ວຍໜູນ

ກອງພັນ 701 ແລະກອງພັນທີ 13, ກອງພັນທີ 2 ຕີ ປົດປ່ອຍພູລັງຈັ່ງ ທີ່ຕັ້ງຢູ່ທາງ ທິດເໜືອຂອງພູຄູນ, ມາເຖິງເດືອນ 8/1971 ກອງກຳລັງໄຟ 769 ໄດ້ເຂົ້າຮ່ວມ ປົດປ່ອຍທົ່ງໄຫຫີນ. ໃນບັ້ນຮົບນີ້ສັດຕູມີກຳລັງເຖິງ 4 GM, ໃນນີ້ມີທັງກຳລັງ ທະຫານເລວຮັບຈ້າງໄທ ແລະທະຫານພິເສດວ່າງປາວ.

ເດືອນ 12/1971 ສູນກາງພັກ ກອງບັນຊາການສູງສຸດ ໄດ້ຕົກລົງເປີດ ບັ້ນຕ່າວໂຈມຕີສັດຕູທີ່ໃສ່ຊື່ວ່າ **" ບັ້ນຮົບສາຍຟ້າແມບ "** ເພື່ອປົດປ່ອຍທົ່ງໄຫ ຫີນ, ຊຳຫອງ, ລ້ອງແຈ້ງ, ການສູ້ຮົບໄດ້ດຳເນີນຢ່າງດຸເດືອດ, ເຖິງເດືອນ 4 ປີ 1972 ຈຶ່ງສິ້ນສຸດລົງດ້ວຍໄຊຊະນະທີ່ຍິ່ງໃຫຍ່ຂອງກຳລັງປະກອບອາວຸດແນວ ລາວຮັກຊາດ, ກອງກຳລັງໄຟເພດຍິງ ແລະກອງລຳລຽງແບກຫາບ 368 ແມ່ນ ນັກຍິງປືນທີ່ແມ່ນຍຳ, ທັງເປັນນັກແບກຫາບ ທີ່ບໍ່ຮູ້ອິດຮູ້ເມື່ອຍ ຄຽງບ່າຄຽງໄຫ່ ກັບເພດຊາຍໃນການສູ້ຮົບ ແລະຮັບໃຊ້ການສູ້ຮົບ, ຊຶ່ງບາງມື້ກໍ່ບໍ່ມີເວລາຮອດ ຈະກິນເຂົ້າ, ບໍ່ມີເວລາຫຼັບນອນ. ນີ້ມັນສະແດງເຖິງຄວາມແຂງແກ່ນ, ຄວາມ ພິລະອາດຫານ, ຄວາມເສຍສະຫຼະຂອງແມ່ຍິງລາວເວົ້າລວມ, ເວົ້າສະເພາະ ແມ່ນເອື້ອຍນ້ອງເພດຍິງກອງຮ້ອຍກຳລັງໄຟ 769.

ເດືອນສິງຫາ 1972 ພວກຈັກກະພັດອາເມຣິກາໄດ້ເຕົ້າໂຮມ ກຳລັງເປີດ ການບຸກໂຈມຕີຂະໜານໃຫຍ່ເຂົ້າເຂດພູກູດ, ພູສັນ, ພູເກົ້າ ເພື່ອຫວັງຍຶດເອົາ ທົ່ງໄຫຫີນຄືນ. ການສູ້ຮົບເຖິງເດືອນມັງກອນປີ 1973 ຈຶ່ງຍຸຕິລົງດ້ວຍໄຊຊະນະ ອັນໃຫຍ່ຫຼວງຂອງແນວລາວຮັກຊາດ ຕະຫຼອດໄລຍະການສູ້ຮົບທີ່ດຸເດືອດນັ້ນ ເອື້ອຍນ້ອງເພດຍິງກອງ 769 ກໍ່ໄດ້ ປະກອບ ສ່ວນຢ່າງຕັ້ງໜ້າ, ບໍ່ຮູ້ອິດຮູ້ເມື່ອຍ, ທຸກວິນາທີ ກຽມພ້ອມລັ່ນໄກ່ປືນໃສ່ສັດຕູ.

ພາຍຫຼັງທົ່ງໄຫຫີນ-ຊຽງຂວາງ ໄດ້ຮັບການປົດປ່ອຍ, ທາງຂັ້ນເທິງ ໄດ້ມີ ມະຕິຕົກລົງໃຫ້ 2 ກອງດັ່ງກ່າວ ກັບຄືນເມືອປັບປຸງກຳລັງຢູ່ເມືອງວຽງໄຊ ແຂວງ ຫົວພັນ, ເມື່ອເຖິງເມືອງວຽງໄຊ ແຂວງຫົວພັນ ທາງຂັ້ນເທິງໄດ້ມອບໜ້າທີ່ໃຫ້ລົງ ກໍ່ສ້າງຮາກຖານການເມືອງຢູ່ຂອບເຂດເມືອງຊຽງຂໍ ເມືອງວຽງໄຊ ແລະທັງຮັບ ໜ້າທີ່ເປັນກອງກຽດຕິຍົດ ເພື່ອຮັບຕ້ອນແຂກພາຍໃນ ແລະຕ່າງປະເທດເຂົ້າ ຢ້ຽມຢາມສູນກາງຢູ່ເມືອງວຽງໄຊ.

ປີ 1974 ສູນກາງພັກຕົກລົງໃຫ້ລຳລຽງແບກຫາບ 368 ຫັນລົງສ້າງ ເສດຖະກິດໃຫ້ແກ່ກອງທັບ (ເຂດຜະລິດນິຄົມບ້ານຝາຍ ເມືອງຄຳ ແຂວງຊຽງ ຂວາງ) ໂດຍມີສະຫາຍໜີ່ນ ສົມວິຈິດ ແລະສະຫາຍ ບຸນນຽນ ຄຳອ້ວນເປັນຜູ້ ຮັບຜິດຊອບ. ຈາກນັ້ນປີ 1975 ຂັ້ນເທິງໄດ້ຄັດເລືອກເອົາເອື້ອຍນ້ອງຈາກກອງ ລຳລຽງ 368 ຈຳນວນໜຶ່ງມີມີສຸຂະພາບແຂງແຮງ, ຈັດຕັ້ງເປັນກອງ 875 ປະກອບ ປືນເດກາເບໃຫ້ ເພື່ອເຂົ້າສະແດງກຳລັງ ແລະ ຢຶດອຳນາດ ທີ່ນະຄອນຫຼວງ ວຽງຈັນ.

ສຳລັບກອງກຳລັງໄຟເພດຍິງ, ເດືອນມັງກອນ 1975 ໄດ້ຮັບຄຳສັ່ງຈາກ ສູນກາງໃຫ້ກັບຄືນເມືອຊຽງຂວາງ ເມື່ອມາເຖິງຊຽງຂວາງກົມກອງໄດ້ຕັ້ງທັບຢູ່ ບ້ານຝາຍ ເມືອງຄຳ ແຂວງຊຽງຂວາງ, ໃນໄລຍະລໍຖ້າ ກົມກອງໄດ້ຮ່ຳຮຽນການ ເມືອງ, ການທະຫານ, ອອກແຮງງານທຳການຜະລິດກະສິກຳເຊັ່ນວ່າ: ເຮັດນາ, ເຮັດໄຮ່ເພື່ອປູກເຂົ້າ ແລະພືດລ້ົມລຸກອື່ນໆ ເພື່ອຮັບປະກັນໃຫ້ແກ່ຊີວິດປະຈຳ ວັນ, ພ້ອມກັນນີ້ ກໍ່ເຮັດໜ້າທີ່ກໍ່ສ້າງຮາກຖານການເມືອງຢູ່ຂອບເຂດກົມກອງ ຕັ້ງທັບ.

ເດືອນພຶດສະພາ ປີ 1975 ທາງຂັ້ນເທິງໄດ້ສັ່ງໃຫ້ກອງ 769 ເຄື່ອນທັບ ອອກຈາກຊຽງຂວາງເຂົ້ານະຄອນຫຼວງວຽງຈັນ, ໃນເວລານີ້ກົມກອງໄດ້ປະກອບ ອາວຸດຄື:H12ຈຳນວນ 4 ກະບອກ, ປືນ DKB ຈຳນວນ 4 ກະບອກ, ເຄື່ອນທັບ ຈາກຊຽງຂວາງລົງມາຕັ້ງທັບຢູ່ເມືອງກາສີ ແຂວງວຽງຈັນ ເປັນເວລາໜຶ່ງເດືອນ ກວ່າ ເພື່ອປັບປຸງກົມກອງເຊັ່ນວ່າ ຮຽນການເມືອງ, ຮຽນມະຕິຕ່າງໆຂອງສູນກາງ ພັກ, ພ້ອມດຽວກັນນີ້ ກໍ່ເຮັດວຽກງານກໍ່ສ້າງຮາກຖານການເມືອງເພື່ອໂຄສະນາ ໃຫ້ປະຊາຊົນຊາບຊຶມກ່ຽວກັບການຍຶດອຳນາດທົ່ວປະເທດ, ຈາກນີ້ກອງຮ້ອຍ 769 ກໍ່ຍົກຍ້າຍຈາກກາສີມາຕັ້ງທັບຢູ່ນາຍາງ ເມືອງນາຊາຍທອງ ກຳແພງ ນະຄອນຫຼວງວຽງຈັນ ເພື່ອກະກຽມເຂົ້າຍຶດອຳນາດທົ່ວປະເທດ.

ໃນຂະນະດຽວກັນນັ້ນ ກອງ 875 ໄດ້ຮັບຄຳສັ່ງໃຫ້ກະກຽມຈິດໃຈ ທັງ ກຳລັງ ແລະ ພາຫະນະອາວຸດ ຂຶ້ນຍົນຢູ່ທົ່ງໄຫຫີນ-ຊຽງຂວາງ ເພື່ອເຂົ້າຮ່ວມ ສະແດງກຳລັງ ແລະຍຶດອຳນາດ ທີ່ນະຄອນຫຼວງວຽງຈັນເຊັ່ນດຽວກັນ. ເປັນ ອັນວ່າ ມາຮອດປີ 1975 ກອງລຳລຽງແບກຫາບ 368 ໄດ້ແຕກທົ່ງຈ່າອອກເປັນ 5 ກົມກອງ ຕາມຄຳຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ກໍ່ຄືຕາມທິດຊີ້ນຳ ຂອງສູນກາງພັກ.

ໃນວັນທີ 23 ສິງຫາ ປີ 1975 ທັງ 2 ກອງຮ້ອຍກຳລັງໄຟເພດຍິງ 769 ແລະ 875 ໄດ້ພ້ອມກັບປະຊາຊົນຊາວນະຄອນຫຼວງວຽງຈັນ ເດີນເຂົ້າສູ່ເດີ່ນພະ ທາດຫຼວງ ເພື່ອທຳການຍຶດອຳນາດຈາກພວກຫຸ່ນຂາຍຊາດ, ພາຍຫຼັງສຳເລັດ ການຍຶດອຳນາດທົ່ວປະເທດແລ້ວ ກອງກຳລັງໄຟເພດຍິງຕັ້ງທັບຢູ່ດົງປ່າແລບ ເພື່ອສືບຕໍ່ເຮັດໜ້າທີ່ກໍ່ສ້າງຮາກຖານການເມືອງ.

ທ້າຍປີ 1976 ຕົ້ນປີ 1977 ກອງກຳລັງໄຟເພດຍິງໄດ້ປະກອບສ່ວນ ເພື່ອຂັບໄລ່ພວກປະຕິການລາວພັດຖິ່ນ ທີ່ກັບຄືນມາກໍ່ກວນຄວາມບໍ່ສະຫງົບຢູ່ ດອນຊີງຊູ້, ດອນສັງຄີ ແລະດອນຕ່ຳ ທີ່ຢູ່ກາງລຳແມ່ນ້ຳຂອງ, ກອງກຳລັງໄຟ ເພດຍິງ 769 ແລະ 875 ໄດ້ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລະກິດຕໍ່ສູ້ ເພື່ອປົດປ່ອຍປະເທດຊາດ. ມາເຖິງຊຸມປີ 1980 ບັນດາກົມກອງ ນັບທັງກອງ ລຳລຽງແບກຫາບ 368, ກອງ 37; ກອງກຳລັງໄຟເພດຍິງ 769, 875 ແລະມາ ໃນມໍ່ໆ ນີ້ກອງ 369 ໄດ້ກຳເນີດເກີດຂຶ້ນນັ້ນ ຈຶ່ງໄດ້ຮັບການຕົກລົງຈາກຂັ້ນເທິງ ໃຫ້ຈັດຕັ້ງກຳລັງດັ່ງກ່າວ ໄປປະຕິບັດໜ້າທີ່ຢູ່ບັນດາກົມກອງສຳນັກງານ ອົງການ ຕ່າງໆ ພ້ອມກັນນັ້ນມີພະນັກງານ-ນັກຮົບຈຳນວນໜຶ່ງເຖິງອາຍຸກະສຽນ ກໍ່ພັກ ຜ່ອນຮັບເບ້ຍບຳນານ ແລະ ອອກສ້າງເສດຖະກິດຄອບຄົວ ຕາມນະໂຍບາຍ ຂອງພັກ-ລັດວາງອອກ.

ຕະຫຼອດໄລຍະແຫ່ງການກໍ່ຕັ້ງ ການເຕີບໃຫຍ່ຂະຫຍາຍຕົວ ແລະ ປະຕິບັດໜ້າທີ່ ຊຶ່ງຂັ້ນເທິງມອບໝາຍໃຫ້, ກົມກອງດັ່ງກ່າວໄດ້ເຮັດສຳເລັດໜ້າ ທີ່ດ້ວຍດີຕະຫຼອດມາ, ພ້ອມດຽວກັນກອງຮ້ອຍກຳລັງໄຟເພດຍິງ 769 ກໍ່ໄດ້ມີ

ຜົນງານຫຼາຍດ້ານທີ່ເດັ່ນ, ມີສະຫາຍຈຳນວນໜຶ່ງກໍ່ໄດ້ຮັບນາມມະຍົດເປັນ ວິລະຊົນ, ນັກຮົບແຂ່ງຂັນແຫ່ງຊາດ ເຊິ່ງມັນສະແດງອອກຄື: ກົມກອງໄດ້ຮັບ ທຸງໄຊ 1 ຜືນ, ທຸງໄຊ 3 ເກັ່ງ 1 ຜືນ, ໝຸ່ນໄຊພິລະອາດຫານຊັ້ນ II ຈຳນວນ 1 ໜ່ວຍ, ສະຫາຍ ນາງບົວຄຳ ໄດ້ຮັບນາມຍົດວິລະຊົນແຫ່ງຊາດ, ທ່ານ ນາງສີສຸກ, ນາງ ວັນຄຳ, ນາງ ບົວທອງ ໄດ້ຮັບນາມມະຍົດເປັນນັກຮົບແຂ່ງຂັນ.

ນອກຈາກນີ້ ເອື້ອຍນ້ອງກອງຮ້ອຍ 769 ມີຫຼາຍສະຫາຍໄດ້ກາຍເປັນ ພະນັກງານຂອງພັກ, ມີຫຼາຍສະຫາຍກາຍເປັນພະນັກງານນຳພາ-ບັນຊາ, ເປັນ ນາຍທະຫານຊັ້ນສູງ, ຊັ້ນກາງ ແລະເປັນພະນັກງານຫຼັກແຫຼ່ງ ນັບແຕ່ຊັ້ນແຂວງ ລົງຮອດຊັ້ນບ້ານ, ພ້ອມດຽວກັນນີ້ ເອື້ອຍນ້ອງຈຳນວນໜຶ່ງກໍ່ໄດ້ກາຍເປັນນັກ ທຸລະກິດ ແລະນັກວິຊາການອື່ນໆ, ເປັນລູກທີ່ປະເສີດຂອງພໍ່ແມ່, ເປັນເມຍທີ່ດີ ຂອງຜົວ, ເປັນແມ່ທີ່ດີຂອງລູກ ແລະເປັນພົນລະເມືອງດີຂອງຊາດ.

ຜົນງານ ແລະມູນເຊື້ອທີ່ກ່າວມານັ້ນ ໄດ້ຢືນຢັນວ່າ ດິນແດນພູພຽງ ເມືອງພວນ ສົມກັບນາມມະຍົດເປັນດິນແດນວິລະຊົນ, ຜ່ານການພັດທະນາທີ່ ສືບເນື່ອງມາຫຼາຍສິບປີ ຈາກມູນເຊື້ອຈາກລັດທິວິລະຊົນຢ່າງເລິກເຊິ່ງກອງທັບ ແລະປະຊາຊົນຊາວຊຽງຂວາງ ໄດ້ສືບຕໍ່ສ້າງດິນແດນຍຸດທະສາດແຫ່ງນີ້, ໃຫ້ມີ ຄວາມຈະເລີນຮຸ່ງເຮືອງ. ຜ່ານຈາກການຕໍ່ສູ້ໄດ້ພາໃຫ້ເກີດບົດກະວີ, ບົດເພງ, ກອນຂັບລຳຕ່າງໆ ທີ່ສະແດງເຖິງນ້ຳໃຈ ຕໍ່ສູ້ຂອງປະຊາຊົນຊາວຊຽງຂວາງໃນນີ້ ກໍ່ມີບົດເພງ ທີ່ເວົ້າເຖິງນ້ຳໃຈພິລະອາດຫານຂອງເອື້ອຍນ້ອງແມ່ຍິງ.

ດ້ວຍໄຊຊະນະ ແລະຜົນງານການຕໍ່ສູ້ທີ່ແສນລຳບາກຍືດເຍື້ອຍາວນານ ຂອງພວກເຮົານັ້ນມາເຖິງປີ 1975 ປະເທດຊາດພວກເຮົາໄດ້ຮັບການປົດປ່ອຍ ຢ່າງສົມບູນ, ເຮັດໃຫ້ປະເທດຊາດມີການຫັນປ່ຽນຈາກສົງຄາມມາສູ່ສັນຕິພາບ, ກ້າວເຂົ້າສູ່ຍຸກສະໄໝແຫ່ງການສ້າງສາພັດທະນາປະເທດຊາດ ເຮັດໃຫ້ມີ ຄວາມສົມບູນພູນສຸກ ແລະຈະເລີນກ້າວໜ້າຈົນເຖິງທຸກວັນນີ້. ພວກເຮົາກໍ່ບໍ່ອາດ ຫຼົງລືມບຸນຄຸນອັນແສນຍິ່ງໃຫຍ່ລ້ຳເລີດຂອງບັນພະບຸລຸດ, ອະດີດຜູ້ນຳ, ວິລະກຳ ອັນປະເສີດ, ລ້ຳເລີດຂອງພະນັກງານ, ນັກຮົບປະຕິວັດທີ່ໄດ້ອຸທິດຊີວິດຂອງຕົນ

ເພື່ອພາລະກິດການຕໍ່ສູ້ ເພື່ອປົດປ່ອຍປະເທດຊາດ, ຜ່ານມານັ້ນມີຫຼາຍປັດໄຈ ແຕ່ປັດໄຈພື້ນຖານຄື: ມີພັກປະຊາຊົນປະຕິວັດລາວ ເປັນຜູ້ຈັດຕັ້ງນຳພາສຶກສາ ອົບຮົມ ແລະຄວາມຕື່ນຕົວສູງມີຄວາມພິລະອາດຫານ ຍອມເສຍສະຫຼະຜົນ ປະໂຫຍດສ່ວນຕົວເພື່ອພາລະກິດປົດປ່ອຍຊາດ, ກຳໄດ້ກາລະໂອກາດທີ່ເອື້ອ ອຳນວຍຄວາມສະດວກ ແລະ ມີບັນດາປະເທດເພື່ອນມິດໃຫ້ການສະໜັບສະ ໜູນ, ໃນນີ້ພວກເຮົາໄດ້ມີເພື່ອນມິດແບບພິເສດ ແລະຮ່ວມກັນຕີສັດຕູຕົວດຽວ ກັນ ແຕ່ສຳຄັນແມ່ນພວກເຮົາມີພັກປະຊາຊົນປະຕິວັດລາວ ທີ່ປີຊາສາມາດ ສະຫຼາດສ່ອງໃສນຳພາ, ມີກອງທັບ ແລະ ປະຊາຊົນບັນດາເຜົ່າ ທີ່ມີນ້ຳໃຈ ຮັກຊາດທີ່ສູງສົ່ງ, ມີຄວາມສາມັກຄີໜັກແໜ້ນ, ມີຄວາມເດັດດ່ຽວອົດທົນ, ມີ ການອຸ້ມຊູຊ່ວຍເຫຼືອຈາກເພື່ອນມິດປະເທດສັງຄົມນິຍົມເອີຣົບຕາເວັນອອກ.

ຜ່ານໄລຍະຕໍ່ສູ້ຕ້ານກັບຈັກກະພັດຜູ້ຮຸກຮານ ມັນໄດ້ກາຍເປັນເບົ້າຫຼໍ່ ນັກຮົບປະຕິວັດໃຫ້ມີຄວາມເຂັ້ມແຂງຂຶ້ນຢ່າງບໍ່ຢຸດຢັ້ງ, ມີລູກຫຼານຂອງປະຊາຊົນ ຈຳນວນບໍ່ໜ້ອຍ ເຂົ້າຮ່ວມຂະບວນການຕໍ່ສູ້ກູ້ຊາດຢູ່ເຂດປົດປ່ອຍ, ປະກອບ ສ່ວນເຂົ້າເປັນພະນັກງານ, ທະຫານ, ຕຳຫຼວດ ເຊິ່ງເຄື່ອນໄຫວໃຕ້ຫ່າລູກກະສຸນ, ລູກໂບມຂອງຈັກກະພັດອາເມຣິກາ.

ຈາກຂະບວນແປວໄຟດັ່ງກ່າວ, ຈາກຄວາມບຸກບືນຫຼໍ່ຫຼອມຕົນເອງ ຈຶ່ງ ເກີດມີພະນັກງານສະມະຊິກພັກຜູ້ເດັດດ່ຽວ, ໜຽວແໜ້ນ, ອົງອາດກ້າຫານ, ຈົ່ງ ຮັກພັກດີ, ມີະບຽບວິໄນເຂັ້ມງວດ, ຍາມໃດກໍ່ຢືນຢູ່ແຖວໜ້າສະເໝີ ເພື່ອກຽມ ພ້ອມຕໍ່ຄວາມຫຍຸ້ງຍາກ ແລະ ໄພອັນຕະລາຍຍອມເສຍສະຫຼະທຸກຢ່າງເພື່ອ ປະເທດຊາດ, ພະນັກງານເຫຼົ່ານີ້ເປັນແກ່ນສານໃຫ້ແກ່ການປົກປັກຮັກສາທ້ອງ ຟ້າ-ເຂດນ້ຳ, ດິນແດນທົ່ງໄຫຫີນຊ່ຽງຂວາງວິລະຊົນ ຕີໃຫ້ສົງຄາມຮຸກຮານຂອງ ຈັກກະພັດອາເມຣິກາ ແລະ ພວກຫຸ່ນຂາຍຊາດປະລາໄຊຢ່າງເຈັບແສບທີ່ສຸດ ແລະບໍ່ມີວັນຕ່າວຄືນມາອີກ.

ໄຊຊະນະໃນການປົດປ່ອຍທົ່ງໄຫຫີນ-ຊ່ຽງຂວາງເປັນໄຊຊະນະທີ່ໃຫຍ່ ຫຼວງ ແລະ ກາຍເປັນຜົນງານທີ່ຍິ່ງໃຫຍ່ໃນພາລະກິດປະຕິວັດ, ບັນດາກຳລັງ

ปะกอบอาอุด ແລะปะชาชินแຂวงชฺวงขวางได้สู้ธ์บทั้งน้อย ແລะ ใหย่ นับแต่ 1954-1975 มิ 1.191 ถั้ง, ข้าสัดตูตาย 31.791 ถ์น, บาดเจับ 3.524 ถ์น, จับเป้นซะเลียเสิก 22.983 ถ์น, ยิงยินติก 16 ลำ.

ต่ำกับผินงาน ແລะไซซะนะอันใหย่หวง ยู่สะหฟามธ์บชฺวงขวาง ในวันที่ 14 พืดสะพา, ปี 1973 ประทานไกสอนพิมวิหาน ผู้นำที่เค้าลับธักได้ลิงยั้งมยามถามข่าวถวามสุกทุกทองลำลฺงแบกหาบ 368, ท่านได้ก่าวย้องยໍชิมเชิย นำ้ใจพิละอาดหานของเอื๊อยน้องแม่ยิงลาว เว้ำลอม, สะเพาะแม่นเอื๊อยน้องทองกำลังไฟเพดยิง 769 ແລะ ทองแบกหาบ 368 ที่มีมูนเชื้อพิละอาดหาน บ่ยอมจำนิน, ยอมเสยสะหะผิน ปะโหยดทุกย่างเพื่อพาละกิดป์ดป่อยชาด.

ในไลยะแต่ปี 1969-1972 อำนาดการป์กลองนิกเชิน ได้หันยุดทะสาดสิงถามขึ้นสู่ละดับสูง เพิ่มทะวิสิงถามพิเสดยู่ลาวสู่ยอดสูง ไปคฺงคู่กับการดำเนินยุดทะสาด "หันสิงถามทองดนาม เป้นของค์น ทองดนาม" เป์ดกว้างสิงถามยู่กำปูเจย เธ็ดใหักไลยะนี้พาละกิดการต่ำสู้ ของกองทับ ແລะ ปะชาชินลาว ต้านสิงถามพิเสดเพิ่มทะวิของอาเมธิกา.

เพื่อป์กปักธักสาบ้านเกิดเมืองนอน, ป์กปักธักสาชับสิน ของ ปะชาชิน, ยาดชิงเอิาโมนพูแต่ละห่อย, ห้อยนำ้แต่ละสาย, ปะชาชิน ได้นำเอิาลูกกะสุนแต่ละลูก, เข้ำแต่ละเม็ดสิ่งเถิงแมอหน้าเพื่อติเอิาชะนะสัดตู, เพื่อเสิมขะหยายฟากผินของไซชะนะที่ยาดมาได้นั้น. กองทับ ແລะปะชาชินได้เป์ดบั้นบุกโจมติด้วยถวามเป้นเจ้าการยู่แต่ละห้องถิ่นในท่อปะเทด, ผาบแพ้กินอุบายธุกธามแบบใหม่ของสัดตู เท็อละก้าว กองทับ ແລะ ปะชาชินลาวได้บุกโจมติสัดตูยู่สะหฟามธ์บหายแห่ง, สำงวิละกำอันลำ้เลิด, ยาดได้ไซชะนะดังก้องกังวาน, ในนั้นผาบแพ้การเคื่อนทับบุกยึดทั่งไหหิน-ชฺวงขวาง ที่สัดตูใช้กำลังพิเสด

ວ່າງປາວ ແລະ ທະຫານເລວຮັບຈ້າງໄທເຖິງ 50 ກອງພັນ, ພາຍໃຕ້ການຊ່ວຍໜູນຈາກກອງທັບອາກາດຂອງອາເມຣິກາ ເຊິ່ງມີທັ້ງຍົນຍຸດທະສາດ B52.

ການປະລາໄຊທີ່ອັບອາຍຂາຍໜ້າທີ່ສຸດ ແມ່ນພວກເຂົາໄດ້ປະລາໄຊໃນບັ້ນຮົບກູ້ກຸງ ໃນປີ 1970, ກອງທັບ ແລະ ປະຊາຊົນລາວສາມາດປັດເຂ່ຍກຳລັງພິເສດວ່າງປາວ ແລະ ທະຫານຮັບຈ້າງໄທ ອອກຈາກທົ່ງໄຫຫີນ ຊຸ່ງ ຂວາງຢ່າງຮາບກ້ຽງ ຂັບໄລ່ພວກເຂົາໄປເຖິງເຮືອນຮັ້ງສຸດທ້າຍ ຢູ່ຊຳທອງ-ລ້ອງແຈ້ງ.

ດ້ວຍໄຊຊະນະດັ່ງກ່າວນີ້ ກອງທັບ ແລະ ປະຊາຊົນລາວໄດ້ໂມ່ງບາດຄ້ອນທີ່ໜັກໜ່ວງເຂົ້າໃສ່ກອງທະຫານຂອງຝ່າຍຂວາ ແລະ ເປັນການດັບສູນກຳລັງພິເສດວ່າງປາວ ເຊິ່ງເປັນບ່ອນອີງສຸດທ້າຍໃນກົນອຸບາຍຮຸກຮານຂອງຈັກກະພັດ ເຮັດໃຫ້ຍຸດທະສາດ "ສົງຄາມພິເສດເພີ່ມທະວີ" ຢູ່ລາວຂອງນິກເຊິນຖືກລົ້ມລະລາຍຢ່າງສິ້ນເຊີງ.

ໄຊຊະນະອັນໃຫຍ່ຫຼວງນີ້ ມັນໄດ້ກາຍເປັນວິລະກຳອັນລ້ຳເລີດ ຂອງກອງທັບ ແລະຂອງປະຊາຊົນ ທີ່ຜາບແພ້ທິດສະດີຂອງນິກເຊິນຢ່າງສິ້ນເຊີງ, ເຮັດໃຫ້ອຳນາດການປົກຄອງຫຸ່ນຝ່າຍຂວາຖືກອ່ອນເພຍເປ້ຍລ່ອຍ ແລະ ຊຸດໂຊມຢ່າງໜັກໜ່ວງ ເຮັດໃຫ້ຝ່າຍຂວາວຽງຈັນ ຍອມເຊັນສັນຍາກັບຝ່າຍແນວລາວຮັກຊາດ ເພື່ອປະຕິບັດຄວາມຖືກຕ້ອງປອງດອງຊາດ ໃນວັນທີ 21 ມີນາ 1973 ວ່າດ້ວຍການຟື້ນຟູສັນຕິພາບ ພ້ອມກັບການສ້າງຕັ້ງລັດຖະບານປະສົມຊ໋ວຄາວແຫ່ງຊາດ ດ້ວຍອັດຕາສ່ວນເທົ່າທຽມກັນລະຫວ່າງສອງຝ່າຍ, ນະຄອນຫຼວງວຽງຈັນ ແລະຫຼວງພະບາງ ໄດ້ກາຍເປັນສອງຕົວເມືອງ ເປັນກາງຕາມທີ່ສັນຍາລະບຸໄວ້ພາຍຫຼັງສັນຍາວຽງຈັນ ປີ 1973 ໄດ້ຖືກລ່ວງນາມ ສັນຕິພາບໄດ້ກັບຕ່າວຄືນມາອີກຄັ້ງໃໝ່, ການຕໍ່ສູ້ຕ້ານການຮຸກຮານ ຂອງອາເມຣິກາໄດ້ສິ້ນສຸດລົ່ງ. ດ້ວຍການລຸກຮື້ຂຶ້ນຢ່າງແຂງແຮງຂອງປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາອັນເດັດຂາດ ແລະສະຫຼາດສ່ອງໃສ ຂອງພັກປະຊາຊົນປະຕິວັດລາວ, ປະຊາຊົນໄດ້ໂຄ່ນລົ້ມລະບອບສັກດິນາທີ່ຄົ່ງຕົວຢູ່ປະເທດລາວລົ່ງຢ່າງ

ສົ້ນເຊິ່ງ, ຍຶດອຳນາດການປົກຄອງມາມືປະຊາຊົນ, ສຳເລັດພາລະກິດການປະຕິວັດຊາດ ປະຊາທິປະໄຕຢູ່ລາວ, ປະເທດລາວກ້າວສູ່ໄລຍະໃໝ່ແຫ່ງຍຸກສະໄໝ ທີ່ມີສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ແລະວັດທະນາຖາວອນ ດ້ວຍການສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍໃນວັນທີ 2 ທັນວາ 1975.



# ລາຍຊື່ ວີລະຊົນແຫ່ງຊາດ ເພດຍິງ 23 ຄົນ (1930-2012)

| ລຳດັບ | ຊື່-ນາມສະກຸນ | ໜ້າທີ່ | ບ່ອນເຄື່ອນໄຫວເຮັດວຽກ |
|---|---|---|---|
| 1 | ແມ່ຍິງກາຍ | ກຳມະການເມືອງໜອງແຮດ | ແຂວງຊຽງຂວາງ |
| 2 | ນ. ຫຼ້າແຫຼວ | ພະນັກງານພື້ນຖານ | ແຂວງຫຼວງນ້ຳທາ |
| 3 | ນ. ຫຼ້າຫຼວງ | ພະນັກງານພື້ນຖານ | ແຂວງຫຼວງນ້ຳທາ |
| 4 | ນ. ເສົາ | ພະນັກງານພື້ນຖານ | ແຂວງຫຼວງນ້ຳທາ |
| 5 | ນ. ຈັນ (ແມ່ທິດແພງ) | ພະນັກງານພື້ນຖານ | ແຂວງໄຊຍະບູລີ |
| 6 | ນ. ເຄນ | ພະນັກງານພື້ນຖານ | ແຂວງຜົ້ງສາລີ |
| 7 | ນ. ຈຳປາ | ພະນັກງານພື້ນຖານ | ແຂວງວຽງຈັນ |
| 8 | ນ. ພວງ (ແມ່ຫອມ) | ພະນັກງານພື້ນຖານ | ແຂວງວຽງຈັນ |
| 9 | ນ. ບົວຄຳ | ພະນັກງານພື້ນຖານ | ແຂວງວຽງຈັນ |
| 10 | ແມ່ແກ້ວ | ພະນັກງານພື້ນຖານ | ແຂວງວຽງຈັນ |
| 11 | ແມ່ພັນ | ພະນັກງານພື້ນຖານ | ແຂວງວຽງຈັນ |
| 12 | ນ. ມະນີວັນ ອຸດົມສັກ | ສະມາຄົມແມ່ຍິງ | ເມືອງສອງຄອນ ແຂວງສະຫວັນນະເຂດ |
| 13 | ນ. ບຸນຕາ ຫອມສົມບັດ | ພະນັກງານພື້ນຖານ | ເມືອງໜອງບົກ ແຂວງຄຳມ່ວນ |
| 14 | ນ.ຂຽວ (ແມ່ຂຽວ) | ພະນັກງານພື້ນຖານ | ແຂວງຈຳປາສັກ |
| 15 | ນ.ທຸມມາ ທັນໃຈ | ພະນັກງານພື້ນຖານ | ແຂວງຈຳປາສັກ |
| 16 | ນ. ແດງ ທອງໄຊ | ພະນັກງານພື້ນຖານ | ແຂວງຈຳປາສັກ |
| 17 | ນ. ຈັນ (ແມ່ຈັນ) | ພະນັກງານພື້ນຖານ | ແຂວງຈຳປາສັກ |
| 18 | ແມ່ແກ້ວ ພຸດທະພັນ | ພະນັກງານພື້ນຖານ | ແຂວງຈຳປາສັກ |
| 19 | ນ. ແຮ່ (ແຫ່ວ) | ກອງຫຼອນບ້ານລົມລາຍ | ແຂວງອັດຕະປື |
| 20 | ນ. ໄຕເພັດ ສີລາເພັດ | ແພດສະໜາມ | ກອງ 598 |
| 21 | ນ. ໄມວົງ ເທບທິລາດ | ແພດສະໜາມ | ໂຮງໝໍ 101 ຊຽງຂວາງ |
| 22 | ນ. ບົວຄຳ ພົມມະຈັນ | ຮອງໝວດ | ກອງກຳລັງໄຟເພດຍິງ |
| 23 | ນ. ແພງພອນ | ແພດໂຮງໝໍມະໂຫສົດ | ບໍ່ແຕນ, ໄຊຍະບູລີ 1988 |

ຂໍ້ມູນຈາກ ກົມແຂ່ງຂັນ ແລະຍ້ອງຍໍ, ກະຊວງພາຍໃນ ປີ 2012

# ລາຍຊື່ ນັກຮົບແຂ່ງຂັນ ທົ່ວປະເທດ (ເພດຍິງ 25 ຄົນ)

| ລຳດັບ | ຊື່-ນາມສະກຸນ | ໜ້າທີ່ | ບ່ອນເຄື່ອນໄຫວເຮັດວຽກ |
|---|---|---|---|
| 1 | ແມ່ໄມ | ພະນັກງານພື້ນຖານ | ແຂວງຫຼວງພະບາງ |
| 2 | ນ. ເຈີ | ພະນັກງານພື້ນຖານ | ແຂວງຫຼວງພະບາງ |
| 3 | ນ. ລຸນ | ພະນັກງານພື້ນຖານ | ແຂວງຜົ້ງສາລີ |
| 4 | ນ. ບຸດດີ | ພະນັກງານພື້ນຖານ | ແຂວງຜົ້ງສາລີ |
| 5 | ນ. ພັນ (ທອງພັນ) | ແພດທະຫານ | ແຂວງຫົວພັນ |
| 6 | ນ. ບົວສີ | ກອງຫຼອນ ບ້ານສ້ອນ | ແຂວງຊຽງຂວາງ |
| 7 | ນ. ກາບບົວ | ພະນັກງານພື້ນຖານ | ເມືອງໜອງບົກ ແຂວງຄຳມ່ວນ |
| 8 | ນ. ນາງ (ແມ່ເຮືອງ) | ພະນັກງານພື້ນຖານ | ເມືອງເຊບັ້ງໄຟ ແຂວງຄຳມ່ວນ |
| 9 | ແມ່ປານ | ພະນັກງານພື້ນຖານ | ແຂວງສາລະວັນ |
| 10 | ແມ່ທຸມມາ | ພະນັກງານພື້ນຖານ | ແຂວງຈຳປາສັກ |
| 11 | ນ. ສີສຸກ | ຫົວໜ້າການທະຫານ | ກອງກຳລັງໄຟເພດຍິງ 769 |
| 12 | ນ. ວັນຄຳ | ນັກຮົບ | ກອງກຳລັງໄຟເພດຍິງ 769 |
| 13 | ນ. ພາສີ | ນັກຮົບ | ກອງກຳລັງໄຟເພດຍິງ 769 |
| 14 | ນ.ບົວທອງ | ນັກຮົບ | ກອງກຳລັງໄຟເພດຍິງ 769 |
| 15 | ນ. ໂສພາ | ນັກຮົບ | ກອງກຳລັງໄຟເພດຍິງ 769 |
| 16 | ນ. ບົວສີ ແກ້ວມະນີ | ແພດປະຈຳກອງ | ກອງກຳລັງໄຟເພດຍິງ 769 |
| 17 | ແມ່ອິນປັນຍາ | ພະນັກງານພື້ນຖານ | ແຂວງວຽງຈັນ |
| 18 | ນ. ທອງວັນ ສີພັນດອນ | ກົມໃຫຍ່ການເມືອງກອງທັບ ກະຊວງປ້ອງກັນປະເທດ | |
| 19 | ນ. ອິນຄານ (ອິນຂານ) | ພະນັກງານພື້ນຖານ | ບ້ານສະເລີຍ ແຂວງຫົວພັນ |
| 20 | ແມ່ເຖົ້າມີ | ພະນັກງານພື້ນຖານ | ບ້ານສະເລີຍ ແຂວງຫົວພັນ |
| 21 | ນ. ໄມບຸນ | ແພດທະຫານ | ແຂວງຫົວພັນ |
| 22 | ນ. ວິເສີມ | ກຳມະກອນ | ໂຮງງານຕ່ຳແໜ 12 ຕຸລາ |
| 23 | ນ. ເຂັມຄຳ | ກອງຫຼອນ | ເມືອງຄູນ ແຂວງຊຽງຂວາງ |
| 24 | ນ. ລິລາ ອຸດທະພອນ | ນັກຮຽນສ້າງຄູ ຊັ້ນຕົ້ນ | ແຂວງຊຽງຂວາງ |
| 25 | ນ. ຄຳທອງ | ພະນັກງານພື້ນຖານ | ແຂວງວຽງຈັນ |



*(ຊ້າຍ) ຮ້ອຍເອກນາງ ສີສຸກ ແກ້ວບຸນລ້ອມແລະ ຮ້ອຍເອກນາງ ບົວຄຳ ພົມມະຈັນ (ຂວາ)ຄະນະບັນຊາກອງກຳລັງໄຟເພດຍິງ 769.*



*ຮູບນັ່ງ ຊ້າຍ ນາງອັນດີ, ຂວາ ນາງ ບົວຄຳ (ໂມະ)*
*ຮູບຢືນ ຊ້າຍ ນາງ ຈັນມີ , ຂວາ ນາງ ແສງຈັນ*




*ກອງກຳລັງໄຟເພດຍິງ 769 ເວລາຝຶກແອບຮຳຮຽນຢູ່ ສສ.ຫວຽດນາມ 1970*




*ກອງກຳລັງໄຟເພດຍິງ 769 ເວລາຝຶກແອບຮຳຮຽນຢູ່ ສສ.ຫວຽດນາມ 1970*



*ກອງກຳລັງໄຟເພດຍິງ769 ຝຶກແອບຮຳຮຽນ ຢູ່ເຂດລ່ອງມ້າ ແຂວງຫົວພັນ 1973*



*ກອງກຳລັງໄຟເພດຍິງ769 ຝຶກແອບຮຳຮຽນ ຢູ່ເຂດລ່ອງມ້າ ແຂວງຫົວພັນ 1973*



ປະຫວັດມູນເຊື້ອ ກອງລຳລຽງແບກຫາບ ແລະກອງກຳລັງໄຟເພດຍິງ



ຈະຢູ່ໃນໄລຍະໃດກໍ່ຕາມ ເອື້ອຍນ້ອງກໍ່ໄດ້ຕັ້ງໜ້າຜະລິດ ເພື່ອລ້ຽງດູທັບ





*ຂັ້ນເທິງໄດ້ປະດັບຫຼຽນໄຊໃຫ້ແກ່ບຸກຄົນ ແລະກົນກອງທີ່ມີຜົນງານ (ລຸ່ມແລະເທິງ)*





ເອື້ອຍນ້ອງກອງຮ້ອຍກຳລັງໄຟເພດຍິງ ເຄື່ອນທັບອອກສູ່ສະໜາມຮົບ





*ທ່ານ ປະທານສຸພານຸວົງ, ທ່ານໄກສອນ ພົມວິຫານ, ທ່ານ ຄຳໄຕ ສີພັນດອນ*
*ພ້ອມດ້ວຍຜູ້ນຳແນວລາວຮັກຊາດ ຢ້ຽມຢາມກອງກຳລັງໄຟເພດຍິງ 769*




*ພູມໃຈທີ່ໄດ້ອຸທິດຊີວິດທີ່ໜຸ່ມແໜ້ນ ປະກອບສ່ວນ ເຂົ້າໃນວຽກງານປ້ອງກັນຊາດ*
*ປ້ອງກັນຄວາມສະຫງົບ*



ပုဂ္ဂိုလ်ရေးဆိုင်ရာ အမှတ်တရများ ရေးသားသူ ဒေါ်ခင်ဖြူ ၁၉၇၄




(ซ้ายบน)สมาชิกสภาผู้แทนราษฎร 769 คนถ่ายรูปร่วมกันเป็นที่ระลึกในวันแรกที่ได้เข้าประชุมสภาฯ



*ທ່ານ ໝື່ນ ສົມວິຈິດ ປະກາດຍຶດອຳນາດການປົກຄອງທົ່ວປະເທດ ໃນວັນທີ 23 ສິງຫາ 1975 ທີ່ເດີ່ນພະທາດຫຼວງ ນະຄອນຫຼວງວຽງຈັນ*




ກອງກຳລັງໄຟເພດຍິງ 769 ເຄື່ອນທັບເຂົ້າຮ່ວມຍຶດອຳນາດການປົກຄອງ ໃນນະຄອນຫຼວງວຽງຈັນ ໃນວັນທີ 23/8/1975



*ກອງກ້ຳລັ່ງໄຟເພດຍິງ 769 ຝຶກແອບຮ່ຳຮຽນ ແລະປົກປັກຮັກສາປືນ H12*






ฝึกแอบส่องก้อง เล้งเป้า เลือกจุดที่หมายให้แม่นยำ







# ຄະນະບັນຊາໝວດລຳລຽງແບກຫາບ ຕອນເລີ້ມຕົ້ນ ປີ 1967



ຮ້ອຍເອກ ນາງ ສີສຸກ ແກ້ວບຸນລ້ອມ.



ຮ້ອຍເອກ ນາງ ທຸມມີ ທຳມະວົງ



ຮ້ອຍເອກ ນາງ ອ່ອນສີ ມະນີວົງ



ຮ້ອຍ ໂທ ນາງ ບົວພອນ ພິມມະສອນ

# ບັນດາຄະນະບັນຊາ ແລະ ພະຍາມປະຫວັດສາດ ກອງຮ້ອຍ 368, 769, 37, 875 ແລະ 369.



*ພັນໂທ ນາງ ອັນດີ ທຳມະສິດ.*



*ພັນໂທ ນາງຄຳພາ ອິນທະມາລີ.*



*ຮ້ອຍໂທ ນາງ ຄຳໝັ້ນ ທາວົງລາດ*



*ຮ້ອຍຕີ ນາງ ທອງດີ ແກ້ວມຸງຄຸນ*



ຮ້ອຍເອກ ນາງ ບົວຄຳ ພົມມະຈັນ



ຮ້ອຍຕີ ນາງ ສີທົນ ຈຸນລະມະນີ



ຮ້ອຍຕີ ນາງ ບົວຄອນ ສາຍຜາສິດ



ພັນເອກ ນາງ ອັນຄຳ ທິບພະວົງ



ພັນໂທ ນາງ ທອງຈັນ ວິໄລວົງ



ພັນໂທ ນາງ ແກ້ວຕາ ເທບພະວົງ



ຮ້ອຍເອກ ນາງ ບົວທອງ ໄຊຍະວົງ.



ຮ້ອຍໂທ ນາງ ວຽງໄຊ



ຮ້ອຍເອກ
ນາງ ສີພາ ຂຸນຈັນທະ



ຮ້ອຍຕີ
ນາງ ບົວຄຳ ສີສອນໄຊ



ພັນໂທ ນາງທັນດາ ພິຈິດ



ພັນໂທ ບຸນອຸ່ນ ຫຼວງຍອດ.



ຮ້ອຍຕີ ນາງ ອັນດີ
ຈັນສິດດາວົງ



ຮ້ອຍຕີ ນາງ ບົວຄຳ
ເມກສະຫວັນ.



ຮ້ອຍຕີ ນາງຄຳແສ່ວ
ສອນສິດທິສັກ

# ກຳລັງໄຟ ກຳລັງໃຈ



ໃນບັ້ນຮົບກອາດລ້ຳ ສັດຕູຢູ່ເມືອງສູຍ
ກອງບັນຊາການອ້ຽງແຜນ ໃຫ້ທຸກຄົນກຽມພ້ອມ
ກຳລັງໜວງລາຍລ້ອມ ຈຸດສຳຄັນແຕ່ລະແຫ່ງ
ລໍກຳລັງໄຟເພດຍິງມາຮອດແລ້ວ ຕະລຸມບອນພ້ອມພ່ຳກັນ

ຍາມນັ້ນ ໃນຈິດໃຈຂອງພວກອ້າຍ ເກີດງົ່ງງ່ຽງທາງຄວາມຄິດ
ເພາະທະຫານສັດຕູໜາຍ ເພີ່ນພົນມາເລ້ຍ
ມີຍົນຍານນັ້ນບິນເຂ້ົ້າ ເສີມກຳລັງປານແມງເມ່ົາ
ທາງໜ້າດິນຈາກກາສີວ້ັງວຽງ ກໍເຄື່ອນເຂ້ົ້າ ມ້ືຟ້າມືດດິນ

ຂັ້ນເທິງລຸລ່ວງຮູ້ ຢ່າງ້ົຫງ່ຽງສັດຕູ
ເຖິງວ່າມັນໜວງໜາຍ ກໍ່ຢ່າກ້ືອເກ່ງຢ້ານ
ສິ່ງສຳຄັນຮັກສາໄວ້ ຄວາມໄໝລະຫັດຈ້ີ
ເອົາສີມືແລະຍຸດທະວິທີບອກເຂ້ົ້າ ເຮົາຊິມ້ວງມຸ່ນມານ

ທຸກກົມກອງ ປຸກລະດົມອ້າຍນ້ອງ ໃຫ້ຕັ້ງທ່າກຽມບຸກ
ເພາະຜູ້ກ້ອງສີສຸກ ແລະກົມກອງ ມາຮອດແລ້ວອ້ານ້ີ
ມາຈ້ັງກຳລັງໄວ້ ທາງເໜືອຕາເວ້ັນອອກ
ຂ້ວງໜອງຕັ່ງແໜ້ນອ້ົງຕ້ົງ ກຽມພ້ອມຮ່ວມກັນ

ກອງ ປ.ຕ.ອ ພວກຂ້ອຍ ປະກອບເພີ່ມທ້ວງປືນຄ້ົກ
ທ້ັງສິບສອງ ມິນລິເຈ້ັດ (ປືນ 12.7 mm) ແລະອາກາຄົບຄົນກຽມຈ້ົ
ນ້ີນໍ ! ເຮົາເປ້ັນຊາຍສະກັນແທ້ ຢ່າເວ້ີແວ່ຄິດງ້ົຫງ່ຽງ
ກຳລັງໄຟ ເພດຍິງເຂົາເກ່ັງກ້າ ຢ່າເສຍໜ້າແກ່ເພດຍິງ ອ້າຍນ້ອງເຮ້ີຍ

ຈາກ: ເພື່ອນຮ່ວມສະໜາມຮົບ ພັນຕີ ຄຳສິງ ເພັດດາວເຮືອງ
ຫ້ົວໜ້າການເມືອງກອງພັນ ປ້ອງກັນອາກາດ 603



# ນ້ຳໃຈກຳລັງໄຟເພດຍິງ

ຂໍແຕ່ຊາດທ່ຽງໝັ້ນ
ນ້ຳໃຈສາວກຳລັງໄຟ
ພ້ອມກັນຂາມອາສາສູ
ຄວາມອາດຫານເກັ່ງກ້າ

ປະຊາຫົ ປະໄຕກໍ່ໃຫ້ໄດ້
ມັ້ນແມ່ນສົມງາມນາງ
ຄົ ຫານ ມີແລ້ວ
ຈົ່ງສາມາດຍາດໄດ້

ມັ້ນຄືໝູດອກໄມ້
ວ່າແຕ່ສາວກຳລັງໄຟ
ສັດຕູມາມກ້ອຢ້ານ
ສູ້ແມ່ຍິງບ່ໄດ້

ຍ້ອນເຫດນັ້ນແຫຼະອ້າຍ
ບ່ໄດ້ໄລວາງປະ
ໄດ້ພ້ອມກັນບຸກໜ້າ
ຝຶກແອບສິລະປະຍຸດ-ຍຸດທະວິທີຢູ່ເລື້ອຍ

ນອກຈາກຝຶກແອບແລ້ວ
ຄຸນສົມບັດສົນທຳ
ເອົາການເມືອງນຳໜ້າ
ເຊີດຊູການສຶກສາເທື່ອລະກ້າວ

ເອກະລາດທຸງມລາວ
ບ່ໜ່ວນ ໄໜ ອ ກ້ ອ ຢ ານ
ເອົາຊີວັງປະກັນຊາດ
ຊົ ມ ານ ມ ້ ວ ງ ມຸ ່ ນ ມ ານ

ມາສູ່ປະຊາຊົນ
ໄດ້ຄາດໝາຍເອົາໄວ້
ຈິດໃຈຈົ່ງອົງອາດ
ໄຂກ້າສະໜ່ານ

ພູ ກ ດ ແລະ ເ ມ ື ອ ງ ສ ູ ຍ
ເຄື່ອນໄປບຸກໜ້າ
ໄດ້ ຫ າ ທ າ ງ ຫ ຼ ິ ບ ຫ ຼ ິ ກ
ກຸ ງ ມ ພ ້ ອ ມ ແ ຕ ່ ທ ່ າ ຖ ອ ຍ ນັ ້ ນ ແ ລ ້ ວ

ຈິດໃຈຝ່າຍກຳລັງໄຟ
ໜ້າທີ່ນາງໝາຍໄວ້
ຂາມອາສາຢູ່ທຸກເມື່ອ
ພິ ບ ໄ ຫ ວ ສ ູ ຈ ົ ່ ງ ແ ມ ່ ນ ຢ ຳ

ພວກນ້ອງເລົ່າຝຶກຝົນ
ແລະ ຮ ິ ດ ຄ ອ ງ ປ ະ ເ ພ ນ ີ ພ ້ ອ ມ
ວິ ຊ າ ກ າ ນ ຄ ຽ ງ ຄ ູ ່
ຫ ັ ກ ໝ ັ ້ ນ ບ ່ ຫ ວ ັ ่ ນ ຄ ອ ນ ອ ้ า ย เ อ ี ย

ມາລີພອນ ດວງພຸດທາ

# ກັບຄືນເມືອງຊຽງ

ແຕ່ງໂດຍ: ສ. ສີເມືອງຊອງ (1975)

ຫຼາຍປີທ່າງລາ ຈຶ່ງໄດ້ກັບມາຊຽງຂວາງບ້ານເກົ່າ
ນ້ຳຕານອງເບ້ົາ ບໍ່ມີຄຳເວ້ົາອອກມາ
ອຶດອັ້ນຕັ້ນໃຈ ຈົນນ້ຳຕາໄຫຼສະອຶ້ນອຸລາ
ຄິດເຫັນຄວາມຫຼັງກາຍມາ
ຊາວຊຽງຮາຈຳລາໄກບ້ານ

ໄດ້ຫັນຕ່າວມາຄືນມາສ້າງສາບ້ານເດີມຄືນໃໝ່
ຄວາມຫວັງໝາຍໄວ້ ກັບກາຍມາເປັນຄວາມຈິງ
ຍ້ອນມີການນຳຂອງສູນກາງນັ້ນເປັນບ່ອນອີງ
ເໝືອນອາຍອຸ່ນໃຫ້ເຮົາຝັງ ຄວາມສຸກທຸກສິ່ງຈຶ່ງເກີດມີມາ

ກິ່ນຫອມດອກຈອງດອກຄາຍເຮົາລືມບໍ່ໄດ້
ທັ້ງໜອງປາໄນ ກ້ອງຮົ່ມໄຜ່ແຄມນາບ້ານເຮົາ
ເຖິງວ່າດຽວນີ້ຈະຫາຍໜີຍ້ອນລະເບີດໄຟເຜົ້າ
ບໍ່ຊ້ຳສອງມືຂອງເຮົາ ຈະສ້ຳງເອົາຄືນມາອີກໃໝ່

ຊາວຊຽງຂວາງເຮົາໂຮມແຮງກັນເຂົ້າສ້ຳງຊີວິດໃໝ່
ສິ້ນເວນເຂັນຮ້ຳຍ ບໍ່ມີຜູ້ໃດຮາວີ
ບ້ານເກີດເມືອງເຮົາ ໄດ້ສິ້ນຄວາມເທ່ົາໄປແລ້ວບັດນີ້
ຊີວິດຊາວຊຽງສຸກຂີ ຈະບໍ່ໄດ້ໜີໄກຈາກເມືອງຊຽງ



# ສາວຊຽງຂວາງທັງງາມທັງເກັ່ງ



*ແຕ່ງໂດຍ: ໄຊຍະສິນ ສີໂຄດຈຸນນະມາລີ (1972)*

*ເທິງແຜ່ນດິນອັນແສນຮັກແພງ*
*ຂອງປະຊາລາວຜູ້ອາດຫານ*
*ຍັງມີສາວ ສວຍງາມເຫຼືອເກີນ*
*ເຊີນແມເຊີນ ອ້າຍທະຫານ ພະນັກງານທົ່ວໜ້າ*
*ເຊີນມາແວ່ຢາມສາວຊຽງຂວາງ ມາແວ່ເບິ່ງຈັກມື້ຈັກວັນ*
*ເມື່ອຮອດຍາມເຂົ້າໃນນາຊຽວງາມອຸ່ມທຸ່ມ*
*ປ່າມັນຕົ້ນໄຮ່ສາລີຊຽວຫຸ້ມຫົ່ວໂນນພູ*
*ໃຜກໍຍ້ອງວ່າ ສາວບ້ານເຮົາສັ່ງມາເກັ່ງແທ້ນາ*
*ເຮັດນາກໍໄດ້ ໄປລຳລຽງກໍເກັ່ງ*
*ສາວຊຽງຂວາງຈິດໃຈປອດໃສ*
*ດັ່ງນ້ຳຍວນ ພວມລິນໄຫຼເຢັນ*
*ຢູ່ກ້ອງຮົ່ມແປກລົມພັດວີ້ວອນ*
*ໜ້າອອນຊອນແມ່ສາວຊຽງຂວາງ*
*ແມ່ນກອງຮ້ອຍສິບສອງມິນລີແປດ*
*ພວມຝຶກແອບວິຊາທະຫານ*
*ເພື່ອຕ້ານທານກັບໂຈນອາກາດອາເມຣິກາ*
*ໂອ້ສາວຊຽງຂວາງ ສາວບ້ານເຮົາ*
*ສົມຊື່ເປັນຍິງໜຸ່ມລາວພິລະອາດຫານ*
*ສົມເປັນເປັນລູກຫຼານຂອງປະຊາຊົນ*
*ເໝືອນນົກແອ່ນປົນເຈີດທົ່ວເມືອລາວ*
*ໜ້າຮັກແທ້ນາງສາວຊຽງຂວາງ*
*ໜ້າສວຍໆ ຕາດຳໆ ຄໍກົມຄີງບາງ*
*ບ່າພາຍປົນຍົ້ມແຍ້ມແຈ່ມໃສ*
*ພວມກ້າວໄປ ຕາມເສັ້ນທາງປົດປ່ອຍປະເທດຊາດ*

# ຂໍຂອບໃຈ

ແຕ່ງໂດຍ: ເພັດເມືອງພອນ

ສາວຊຸງຂວາງອົດບໍ່ໄດ້ ຈຶ່ງໄດ້ແຕ່ງແປງສານ
ຝາກມາຍັງຜູ້ປະພັນເພັງ ທີ່ໂດ່ງດັງດົນແລ້ວ
ສີ່ສິບປາຍປີໄດ້ ປະມານການຄາດວ່າ
ຍັງອຳມະຕະຮອດສູ່ມື້ນີ້ ຂໍຂອບໃຈ ແລະ ຍົກຍ້ອງຄຶນໃຫ້ ຜູ້ແຕ່ງເພັງ

ເພັງສາວຊຸງຂວາງເສບຂຶ້ນແລ້ວ ຊິອົດນັ່ງບໍ່ມີເປັນ ສາແລ້ວ
ຫົວໃຈຕີກອງເພນ ຢາກອອກມາຢືນເຕັ້ນ
ປະຈຸບັນດຸງອນີ້ ໄດ້ປັບປຸງແບບເຕັ້ນໃໝ່
ເພື່ອໃຫ້ຊາວຕ່າງດ້າວ ສາກົນໄດ້ມ່ວນນຳ ແທ້ນາ

ສຸງເພັງເສບຕຶ້ງຕຶ້ງ ຕະລຶງແລ່ນໂຮແຊວ
ທ້ຽຮ້ອງທ້ຽຕົບມື ແລະ ຍົກຍໍຍັງໂປ້
ປະຕິໂທຜົນງານນີ້ ໃຜເດບັນຍາຍອອກ
ບໍ່ແມ່ນຕັ້ງຍ້ອງລ້ານ ຕົວຈິງນັ້ນກໍ່ດັ່ງດຸງ ແທ້ໄດ

ຜູ້ປະພັນເນື້ອຮ້ອງ ປະສານສອດຄົນຕີ
ສັ່ງວ່າມີຈິນຕະນາການ ຊ່າງຊົມເຊີຍຍ້ອງ
ໄດ້ຍິນສຸງເພັງແລ້ວ ຢາກເປັນສາວອີກຄັ້ງໃໝ່
ຈະເຫລື້ອມໃສຢູ່ເລື້ອຍ ສົມຄຳຍ້ອງດັ່ງເພັງ ຕື່ມນາ

ເຖິງຈະກັບຕ່າວປີ້ນ ຄືນສູ່ຄວາມຫຼັງ ບໍ່ເປັນແລ້ວ
ເພາະກົດເກນທຳມະຊາດ ແລະ ສັງຄົມ ເຄື່ອນເປັນວົງລໍ້
ຂໍແຕ່ຈິດໃຈຍັ້ງ ຕິດພັນຜົນງານເກົ່າ
ເພື່ອເລົ່າລືຕໍ່ໜ້າ ຮຸ່ນຫຼັງໄດ້ຊື່ນຊົມ

24/vn ข้ามจำหน่าย

ຂໍໃຫ້ສາວສໍ່ານ້ອຍ
ເພື່ອຮັກສາຜົນງານ
ສາວຊຽງຂວາງກຽມພ້ອມ
ຈະຮັກສາຄຸນຄ່າຍ້ອງ

ສືຍຕໍ່ຄຸນຄວາມດີ
ແລະ ເຊີດຊູມູນເຊື້ອ
ຈະນຳຮອຍເພື່ອສືບຕໍ່
ຜອງເທົ້າຊົ່ວນິລັນ ພຸ້ນແລ້ວ

ຂໍຂອບໃຈຜູ້ຍ້ອງ
ທຸກໆປະການໃດຫວັງ
ໃຫ້ອຸດົມໄປດ້ວຍ
ສັງຄົມຈຳຈີ່ໄວ້

ປະຄອງຄູ່ຄວາມສຸກ
ຈົ່ງສົມໃນມະໂນແມ້ງ
ຈົນຕະນາການປະພັນເອກ
ໄປໜ້າຄ່າສູງ ແທ້ແລ້ວ




ຈາກຊ້າຍໄປຂວາ : ໄມວົງ ເທບທິລາດ, ພາສີ ພິລາວົງ, ຄຳເມີງ ວໍລະຈິດ, ບຸນເພັ່ງ ມູນໂພໄຊ, ອ່ອນຈັນ ທຳມະວົງ, ໂສພາ ສຣິດທິຣາດ, ຄຳອອນ ເພັດດາວເຮືອງ, ວິໄລຈັນ ສີຣິລັດ, ພູທອນ ເພັດສະລາດ ແລະ ຟອງສິດ ໄຊຍະເສນາ.



*ກອງປະຊຸມ ຄະນະກຳມະການໂຄງການ ຂຽນປຶ້ມປະຫວັດມູນເຊື້ອກອງລຳລຽງ ແບກຫາບ 368 ແລະກອງກຳລັງໄຟເພດຍິງ 769 (ໃນວັນທີ 3/10/2013).*





*ຈາກຊ້າຍໄປຂວາ ຄຳອອນ ເພັດດາວເຮືອງ, ພັນໂທ ນາງ ຄຳພາ ອິນທະມາລີ,*
*ພັນໂທ ອົມມະລີ ອຸດທະວົງ, ພັນໂທ ນາງ ວັນດີ ທຳມະສິດ*
*ແລະ ຮ້ອຍຕີ ນາງ ວັນດີ ຈັນສິດດາວົງ*
*ສົນທະນາກ່ຽວກັບຂໍ້ມູນການເຄື່ອນໄຫວຕ່າງໆ ຂອງ ກອງ 368, 769...*



*ທ່ານ ທົງເຫີນ ຂຸນພິທັກ ແລະ ນາງ ດວງມາລາ ລາດຊະວົງໄຊສືບຕໍ່ເກັບກຳຂໍ້ມູນ*

# ພຶດຕິກຳຄ້ຳປະກັນ ຄວາມສະເໜີພາບ



* ໄດ້ຍິນຄຳຊ່ຳຍ້ອງ ກອງສາມຫົກແປດໂດ່ງດັ່ງ
ອາໃສຫຼັງເປັນແມ່ແຮງ ແຂ່ງຂັນກັນເປ້
ເພື່ອຂົນເທສະບຸງຍ້າຍ ຢາຍໄປທຸກໝອດໝູ່
ທີ່ກຳລັງຕໍ່ສູ້ ມານຮ້າຍທີ່ຄຸກຄາມ ຍາມນັ້ນ

* ຕອນນັ້ນພວກໝູ່ນ້ອງ ຍັງຮຽນຢູ່ມັດທະຍົມ
ໄດ້ປະສົມກົມກຽວ ຊ່ວຍແຮງຊຸ່ມເອື້ອຍ
ຄູໄດ້ນຳພາເປ້ ເລື່ອງເຄຜູ້ລະປ່ອງສອງປ່ອງ
ບາງພ່ອງກໍ່ຄິດໄດ້ ປະດິດເປ້ແລະຫາບເອົາ

* ຊຸມນັກຮຽນພວກນ້ອງ ປະກອບສ່ວນຢ່າງພູມໃຈ
ເຂົ້າໃນຜົນງານລວມ ຮ່ວມຮັກສາແຜ່ນດິນໄວ້
ເພື່ອໃຫ້ຊາວຊຸງໄດ້ ປົກຄອງພວນໃຕ້ລະບອບໃໝ່
ຜູ້ຢູ່ໄກແລະໃກ້ ໃຜກໍ່ຍົກຍ້ອງ ວ່າຊຸ່ມເອື້ອຍອາດຫານ ແທ້ນາ

* ອີກບໍ່ນານກໍ່ໄດ້ ຂະຫຍາຍອອກກຳລັງພົນ
ສ້າງຕັ້ງກອງທີ່ສອງ ເອີ້ນວ່າກອງເຈັດຫົກເກົ້າ (769)
ສາມຫົກແປດເປັນມູນເຊື້ອ ບົດຮຽນດີດ້ານຂົນສົ່ງ
ຈຸດປະສົງສົ່ງສະບຸງໃຫ້ອ້າຍ ຊາຍກ້າຢູ່ສະໜາມ ພຸ້ມແລ້ວ

* ປະຫວັດສາດໄດ້ເລີ່ມຕົ້ນ ສາມຫົກແປດແລະກຳລັງໄຟ (368+769)
ໂຮມນ້ຳໃຈສາວພວນ ທີ່ພັກນຳພາຊີ້
ໃນເດືອນເຈັດປີຫົກເກົ້າ(769) ກຳລັງໄຟໄດ້ກຳເນີດ
ເປີດສັງກາດໜ້າງຶດງໍ້ ໃຜບໍ່ເຄີຍຄິດພໍ້ ຄວາມກ້າແຫ່ງແມ່ຍິງ

* ມາເຖິງໄລຍະນີ້ ລະບອບໃໝ່ສົດໃສ
ຍິງໄດ້ຮົ່ມໂພໄຊ ທີ່ພັກເຮົາພຽນສ້າງ
ມີສິດສຽງທຽບເທົ້າ ສະເໝີຊາຍດ້ວມດັ່ງ
ຄວາມຫວັງຄັ້ງກ່ອນກີ້ ໄດ້ມີຂຶ້ນເກີດຈິງ ແທ້ນາ

* ຜົນງານທີ່ເອື້ອຍສ້າງ ໄດ້ເປັນເອກ ສັນຍາລັກ
ພັກແລະປວງຊົນລາວ ບໍ່ຫຼົງລາລືມໄດ້
ຂໍຈົດຈຳເອົາໄວ້ ທັງຜັນຂະຫຍາຍໃຫ້ກ້ວາງກ່ວາ
ຜົນງານທີ່ຍອດຢ້ຽມ ຈົ່ງໃສເຫຼື້ອມຕະຫຼອດການ ນັ້ນທ້ອນ

* ຂໍອາວອນຢ່າງສຸດຊຶ້ງ ຄະນິງເຖິງຜູ້ໄກຫ່າງ
ຂໍເຄົາລົບນົບນ້ອມ ພະຄຸນເອື້ອຍຜູ້ຈາກໄປ
ຂໍອອຍພອນແດ່ເອື້ອຍໆ ຜູ້ຍັງຢູ່ຈົ່ງມີສຸກຂີ
ຂໍຈົ່ງເປັນຄັນທຸງນຳໜ້າ ປົວໄປໃຫ້ສະຫ່ວາງ (ສະໄຫວ)
ເປັນສັນຍາລັກເອກອ້າງ ປວງຊົນໄດ້ເຊີດຊູ ນັ້ນທ້ອນ

ຄຳຟອງ ພູມວົງໄຊ




*ບັນດາທ່ານຜູ້ນຳພັກລັດ ພ້ອມດ້ວຍແມ່ປ້ານ້າອາ ຕ່າງກໍຊື່ນຊົມ*
*ຕໍ່ຜົນສຳເລັດຂອງກອງປະຊຸມໃຫຍ່ ແມ່ຍິງລາວທົ່ວປະເທດ ຄັ້ງທີ VI ຢ່າງສຸດໃຈ*

• ຜູ້ໃຫ້ຂໍ້ມູນ

1. ຮ້ອຍເອກນາງ ບົວຄຳ ພົມມະຈັນ ອະດີດຄະນະບັນຊາກອງ 368, 769
2. ຮ້ອຍເອກ ນາງ ສີສຸກ ແກ້ວບຸນລ້ອມ ອະດີດຄະນະບັນຊາກອງ 368, 769
3. ພັນໂທ ນາງ ວັນດີ ທຳມະສິດ ອະດີດຄະນະນຳກອງ 368, 769
4. ພັນໂທ ນາງ ຄຳພາ ອິນທະມາລີ ອະດີດຄະນະນຳກອງ 368, 37
5. ຮ້ອຍໂທ ນາງ ຄຳໝັ້ນ ທາວົງລາດ ອະດີດຄະນະນຳກອງ 368, 769

6. ພັນເອກ ນາງວັນຄຳ ທິບພະວົງອະດີດຄະນະບັນຊາກອງ 368, 875, 369
7. ສະຫາຍ ນາງ ທອງດີ ອະດີດຄະນະບັນຊາກອງ 368
8. ຮ້ອຍເອກ ນາງ ທຸມມີ ອະດີດຄະນະນຳກອງ 368 ແລະ 369
9. ຮ້ອຍເອກ ນາງ ບົວທອງ ໄຊຍະວົງ ອະດີດຄະນະບັນຊາ 368, ແລະ 769
10. ຮ້ອຍຕີ ນາງບົວຄອນ ສາຍຜາສິດ ອະດີດຄະນະບັນຊາກອງ 368, 37

11. ຮ້ອຍຕີ ນາງ ສີທົນ ຈຸນລະມະນີ ອະດີດຄະນະບັນຊາກອງ 368
12. ພັນໂທ ນາງ ທັນດາ ພິຈິດ ອະດີດພະນັກງານ, ຄະນະນຳກອງ 368, ກອງ 875 ແລະກອງ 369
13. ສະຫາຍ ນາງ ບົວຄຳ ເມກສະຫວັນ ອະດີດພະນັກງານກອງ 368, 769
14. ຮ້ອຍຕີ ນາງ ບົວຄຳ ສີສອນໄຊ ອະດີດພະນັກງານກອງ 368, 769
15. ພັນໂທ ນາງແກ້ວຕາ ເທບພະວົງອະດີດຄະນະບັນຊາ ກອງ 769, 369
16. ນາງ ທອງຈັນ ອະດີດພະນັກງານ ແລະຄະນະນຳກອງ 769,369
17. ສະຫາຍ ນາງ ວົງໄຊ ອະດີດພະນັກງານ ກອງ 368, ກອງ 37

18. ສະຫາຍ ນາງແກ່ນ ອະດີດພະນັກງານ ແລະຄະນະນຳກອງ 368, ກອງ 37
19. ພັນໂທ ບຸນວົງ ຫຼວງຍອດ ອະດີດຜູ້ຊີ້ນຳ-ບັນຊາກອງ 368 ແລະ 769
20. ຮ້ອຍຕີ ນາງວັນຄຳ ຈັນສິດດາວົງ ພະນັກງານກອງ 368, 769
21. ນາງຄຳແສ່ວ ສອນສິດທິສັກ ຮອງໝູ່ 3 ຮັບຜິດຊອບວົງກງານ ສິລະປະ ວັນນະຄະດີ ຂອງ 368, 769

• ເອກະສານປະກອບການຄົ້ນຄວ້າ:

1. ປະຫວັດສາດການຕໍ່ສູ້ຂອງກຳລັງປະກອບອາວຸດ ແລະປະຊາຊົນ
   ເຂດທົ່ງໄຫຫີນ-ຊຽງຂວາງ (1945- 2005)
2. ປະຫວັດສາດມູນເຊື້ອການຕໍ່ສູ້ຂອງກຳລັງປະກອບອາວຸດ
   ແລະປະຊາຊົນບັນດາເຜົ່າ ແຂວງຊຽງຂວາງ (1945-2005)
3. ປະຫວັດສາດກອງທັບປະຊາຊົນລາວ (1945-2009)
4. ປະຫວັດສາດ ການຮ່ວມສຳພັນສາມັກຄີສູ້ຮົບພິເສດ ລະຫວ່າງກອງທັບ
   ປະຊາຊົນລາວ ແລະ ກອງທັບປະຊາຊົນຫວຽດນາມ (1945-1975)
   ສະພາວິທະຍາສາດການທະຫານ ພິມປີ 2011
5. ໄກສອນ ພົມວິຫານ ບາງບົດຮຽນຕົ້ນຕໍ ແລະບາງທິດທາງ
   ຂອງການປະຕິວັດລາວ ສຳນັກພິມຊື່ເທິດ ຮ່າໂນ້ຍ 1979
6. ປະຫວັດສາດລາວ ກະຊວງຖະແຫຼງຂ່າວ ແລະວັດທະນະທຳ 2000
7. ປະຫວັດສາດເມືອງພວນ ພູມີ ວົງວິຈິດ 1994
8. ການເມືອງພວນ ພາກວິຊາພາສາລາວ-ວັນນະຄະດີ
   ມະຫາວິທະຍາໄລແຫ່ງຊາດ 2001
9. ປະຫວັດສາດການພົວພັນການທູດລາວ ສະຖາບັນການຕ່າງປະເທດ 2009
10. ປະຫວັດສາດ ມູນເຊື້ອສະຫະພັນແມ່ຍິງລາວ 2010
11. ຄວາມຊົງຈຳຂອງຊີວິດເຮົາ ໃນຂະບວນວິວັດແຫ່ງປະຫວັດສາດ
    ຂອງປະເທດລາວ ພູມີ ວົງວິຈິດ 1987
12. ປະເທດລາວ ແລະການຕໍ່ສູ້ມີໄຊຂອງປະຊາຊົນລາວ ຕ້ານລັດທິລ່າເມືອງ
    ຂຶ້ນແບບໃໝ່ ຂອງອາເມຣິກາ ສຳນັກພິມລາວຮັກຊາດ 1968
13. ການຮ່ວມສຳພັນສູ້ຮົບ ລະຫວ່າງກຳລັງເປັນກາງຮັກຊາດ ໃນການຕໍ່ສູ້ຕ້ານ
    ຈັກກະພັດອາເມຣິກາ ໂດຍ: ຄຳອ້ວນ ບຸບຜາ
14. 60 ປີສູ້ຮົບມີໄຊ ໃຕ້ຮົ່ມທຸງຂອງພັກ ກອງປະຊຸມສຳມະນາວິທະຍາສາດ
    60 ປີກອງທັບປະຊາຊົນລາວ ສະຖາບັນວິທະຍາສາດສັງຄົມແຫ່ງຊາດ 2009
15. ຊີວິດ ແລະການເຄື່ອນໄຫວຂອງທ່ານ ກິນິມ ພົນເສນາ 2013
16. ບ້ານດົງບັງ ວິລະຊົນ ຄົນເກັ່ງກ້າອາດຫານ
    ສຳນັກພິມ ນັກປະພັນລາວ 2014

# ຢາດເຫື່ອເພື່ອປະເທດຊາດ



ຈັດພິມໂດຍ ກົມວິທະຍາສາດ ປະຫວັດສາດ

ກອງທັບປະຊາຊົນລາວ